ມາຣີອາ ປຣີເລຊາເອວາ

ຊີວິດ ຂອງ ເລນິນ

ມາຣີອາ ປຣີເລຊາເອວາ

ຊີວິດ ຂອງ ເລນິນ

ສຳນັກພິມ "ຣາດູກາ"
ມົດສະກູ

ແປໂດຍ: ບຸນກອງ ຜິວດາວເຮືອງ

М. Прилежаева

ЖИЗНЬ ЛЕНИНА

на лаосском языке

© ແປເປັນພາສາລາວ, ສຳນັກພິມ "ຣາດຸກາ", 1986

ISBN 5-05-000512-4

ຄຳນຳ

...ເຫດການນີ້ ເກີດຂຶ້ນເມື່ອຊຸມປີທີ່ຊາວ. ຕະຫລອດສອງປີ ຂ້າພະເຈົ້າໄດ້ເປັນຄູສອນ ຢູ່ທີ່ໂຮງຮຽນ ໃນຫມູ່ບ້ານນ້ອຍໆແຫ່ງຫນຶ່ງ ຄຸມ ເປເຣຍາສະລັບ. ໃກ້ຄຽງກັບຫມູ່ບ້ານດ່ຳ ກ່າວຍັງມີຫມູ່ບ້ານ ກອກກີ ເຊິ່ງຕັ້ງຢູ່ແຄມແມ່ນ້ຳສາຍຫນຶ່ງທີ່ມີຊື່ວ່າ ແມ່ນ້ຳ ຊາຄາ. ຢູ່ໃນ ຫມູ່ບ້ານກອກກີມີເຮືອນຫລັງຫນຶ່ງຂອງ ການຊີນ ເຊິ່ງເປັນເຈົ້າຂອງໂຮງງານ. ເມື່ອປີ ເຊິ ເ ເ ເ ຢູ່ແຫ່ງນີ້ ພວກປະຕິວັດ ໄດ້ພິມປຶ້ມຂອງ ເລນິນ ທີ່ມີຊື່ວ່າ "ເພື່ອນມິດຂອງປະຊາຊົນ ຄືແນວໃດ ແລະພວກເຂົາຕໍ່ສູ້ຕ້ານພວກປະຊາທິປະໄຕສັງຄົມຢ່າງໃດ?" ຢ່າງປິດລັບ.

ເລື່ອງເຫລົ່ານີ້ ແມ່ນຄູສອນອະວຸໂສຜູ້ຫນຶ່ງ ເປັນຜູ້ເລົ່າສູ່ຂ້າພະເຈົ້າຟັງ. ເມື່ອປີ ເຊິ ເ ເ, ຜູ້ກ່ຽວໄດ້ພົບກັບ ອະລາດີເມຍ ອີລີຊ ເຊິ່ງຕອນນັ້ນ ເພິ່ນມີອາຍຸຊາວສີ່ປີ ແລະໄດ້ ໄປຢ້ຽມຢາມຫມູ່ບ້ານ ກອກກີ. ຄູສອນອະວຸໂສຜູ້ນັ້ນໄດ້ເວົ້າວ່າ: "ພວກເຮົາເຄີຍ ໄດ້ຍ່າງ ເລາะຫລົ້ນໄປຕາມສວນຕົ້ນເປືອຍຂາວແຫ່ງນີ້, ຢູ່ເທິງແປ້ນພ້ານີ້ເອງ, ອະລາດີເມຍ ອີລີຊ ເຄີຍໄດ້ນັ່ງສົນທະນາກັບ ການຊີນ ເພື່ອນມິດຂອງເພິ່ນເຊິ່ງເປັນນັກສຶກສາ ແລະໄດ້ເປັນຜູ້ ຈັດພິມປຶ້ມຫົວດັ່ງກ່າວ.

ຢູ່ໃນປຶ້ມຫົວນັ້ນ ມີສິ່ງໃດແດ່ທີ່ເປັນຫນ້າສົນໃຈ? ທຸກສິ່ງທຸກຢ່າງລ້ວນແຕ່ເປັນ ຫນ້າສົນໃຈທີ່ສຸດ, ໂດຍສະເພາະຢ່າງຍິ່ງ ແມ່ນບົດສະຫລຸບທີ່ຂຽນວ່າ: "...ກຳມະກອນລັດ ເຊຍ ຈະລຸກຂຶ້ນເປັນຜູ້ນຳພາບັນດາກຳລັງປະຊາທິປະໄຕ ແລະ ຈະໂຄ່ນລົ້ມລະບອບປົກຄອງ ຂອງກະສັດລັດເຊຍ, ແລ້ວຈະນຳພາຊົນຊັ້ນກຳມະກອນລັດເຊຍ, ຄຽງບ່າຄຽງໄຫລ່ກັບກຳມະ

ກອນຂອງທຸກໆປະເທດ ເດີນຕາມເສັ້ນທາງການຕໍ່ສູ້ຢ່າງເປີດເຜີຍທາງດ້ານການເມືອງໄປ ສູ່ການປະຕິວັດຄອມມຸຍນິດຢ່າງນີ້ໄຊ".

ນັ້ນແມ່ນຄວາມປະທັບໃຈອັນເລິກເຊິ່ງ ແລະ ຫນ້າງຶດງໍ້ໃນໄວຫນຸ່ມຂອງຂ້າພະເຈົ້າ.

ຂ້າພະເຈົ້າໄດ້ສຶກສາຂໍ້ມູນເອກກະສານຕ່າງໆ ກ່ຽວກັບຊີວິດແລະການເຄື່ອນໄຫວຂອງ ວະລາດີເມຍ ອີລີຊ ໃນໄວຫນຸ່ມ ເປັນເວລາດົນນານ. ປຶ້ມຫົວທຳອິດຂອງຂ້າພະເຈົ້າທີ່ມີຊື່ວ່າ: "ການເລີ່ມຕົ້ນ" ໄດ້ເວົ້າກ່ຽວກັບໄວຫນຸ່ມຂອງ ເລນິນ ຕອນທີ່ເພິ່ນໄດ້ລົງມືຈັດຕັ້ງ "ສະຫະ ພັນການຕໍ່ສູ້ເພື່ອປົດປ່ອຍຊົນຊັ້ນກຳມະກອນ" ເຊິ່ງແມ່ນອົງການ ໃນໄລຍະຕໍ່ມາ ໄດ້ກາຍເປັນ ພັກປະຊາທິປະໄຕສັງຄົມຂອງລັດເຊຍ, ແລ້ວຈາກນັ້ນ ໄດ້ກາຍມາເປັນ ພັກຄອມມຸຍນິດ ຂອງ ລັດເຊຍ (ພັກໂບນເຊວິກ). ແນ່ນອນວ່າ ລັດກະບານຂອງພະເຈົ້າຊາ ຈະບໍ່ຍອມອະນຸ ຍາດໃຫ້ ເລນິນ ແລະບັນດາເພື່ອນມິດສະຫາຍຂອງເພິ່ນ ດຳເນີນການຕໍ່ສູ້ ຕ້ານກະສັດລັດ ເຊຍ ແລະລະບອບປົກຄອງຂອງພວກນາຍທຶນ. ເລນິນ ແລະບັນດາມິດສະຫາຍຂອງເພິ່ນ ເປັນຈຳນວນຫລວງຫລາຍ ໄດ້ຖືກຈັບກຸມຄຸມຂັງແລະຖືກເນລະເທດໄປຢູ່ເຂດ ຊິເບຣີ ທີ່ກວ້າງ ໄກ.

ຂ້າພະເຈົ້າໄດ້ເດີນທາງໄປຢ້ຽມຢາມຫມູ່ບ້ານ ຊູແຊນສະໂກຍເຍ ບ່ອນເຊິ່ງ ເລນິນເຄີຍ ໄດ້ອາໃສຢູ່ ໃນເວລາທີ່ເພິ່ນຖືກເນລະເທດເປັນໄລຍະສາມປີ. ຫມູ່ບ້ານດັ່ງກ່າວ ຕັ້ງຢູ່ແຄມ ແມ່ນ້ຳ ຊູຊາ ແລະຢູ່ໃກ້ໆທີ່ນັ້ນ ຍັງມີແມ່ນ້ຳອັນກ້ວາງໃຫຍ່ຂອງ ຊິເບຣີ ທີ່ມີຊື່ວ່າແມ່ນ້ຳເຍນີ ເຊ. ຈາກທີ່ນັ້ນສາມາດແນມເຫັນພູເຂົາ ຊາຍານ ທີ່ປົກຄຸມໄປດ້ວຍຫິມະ. ຂ້າພະເຈົ້າໄດ້ ຍ່າງເລາะໄປຕາມທາງຕ່າງໆ ເຊິ່ງ ເລນິນ ເຄີຍຍ່າງໄປໃນໄລຍະທີ່ຖືກເນລະເທດນັ້ນ, ແລະ ໄດ້ອ່ານປຶ້ມທຸກໆຫົວເຊິ່ງເລນິນ ໄດ້ຂຽນຢູ່ທີ່ຫມູ່ບ້ານ ຊູແຊນສະໂກຍເຍແລ້ວກໍເກີດມີຄວາມ ອັດສະຈັນໃຈ ທັ້ງນີ້ກໍເພາະວ່າ ເລນິນ ໄດ້ປະຕິບັດພາລະຫນ້າທີ່ອັນໃຫຍ່ຫລວງທີ່ສຸດ, ເພິ່ນ ໄດ້ອອກຫົວຄິດຈັດຕັ້ງພັກ. ກ່ອນຈະປະຕິບັດວຽກງານດັ່ງກ່າວກໍຕ້ອງໄດ້ລົງມືພິມຈຳຫນ່າຍ ຫນັງສືພິມຂອງພັກກຳມະກອນຢ່າງປິດລັບ.

ຂ້າພະເຈົ້າໄດ້ຂຽນປຶ້ມກ່ຽວກັບຊີວິດຂອງ ວະລາດີເມຍ ອີລີຊ ໃນໄລຍະເວລາທີ່ຖືກ

ເມລະເທດຢູ່ ຊູເຊນສະໂກຍເຍ ແຕ່ບໍ່ແມ່ນຕະຫລອດໄລຍະສາມປີ. ຂ້າພະເຈົ້າໄດ້ໃສ່ຊຸ່ມ ຫົວນີ້ວ່າ "ປີທີ່ຫນ້າອັດສະຈັນໃຈ" ເຊິ່ງໄດ້ບັນລະຍາຍເຖິງການກຶກເມລະເທດຂອງ ເລນິນ ໃນໄລຍະຫນຶ່ງປີ ທີ່ເປັນປີອັນຫນ້າອັດສະຈັນໃຈ, ເພາະວ່າ ໃນປີນັ້ນ ອະລາດີເມຍ ອີລີຊ ໄດ້ປະຕິບັດວຽກງານຢ່າງມີຫົວຄິດປະດິດສ້າງ, ໄດ້ສ້າງແຜນການວຽກງານຢ່າງຫລວງຫລາຍ. ນອກຈາກນັ້ນ ຍັງແມ່ນປີທີ່ມີຄວາມສຸກຍິ່ງ ຍ້ອນວ່າໃນປີນັ້ນ ຄິນຮັກຂອງ ອະລາດີເມຍ ອີລີຊ ໄດ້ມາທີ່ຫມູ່ບ້ານ ຊູເຊນສະໂກຍເຍ. ນາງກໍເປັນນັກປະຕິວັດແລະ ກຶກເມລະເທດມາເຊັ່ນດຽວກັນ. ນາງເປັນຜູ້ຍິງທີ່ສວຍງາມ ແລະຄ່ອນຄິມທີ່ມີຊື່ວ່າ ນາເດສະດາ ກົງສະຕັງຕິນິບນາ ກຣຸບສະກາຢາ.

ຂ້າພະເຈົ້າຈຶ່ງໄດ້ຂຽນກ່ຽວກັບເລື່ອງນີ້ເອງ.

ແນວຄິດການເຄື່ອນໄຫວປະຕິວັດອັນສູງສົ່ງ ໄດ້ດຶງດູດຈິດໃຈຂອງຂ້າພະເຈົ້າຢ່າງເລິກເຊິ່ງຈົນບໍ່ສາມາດເອົາໃຈອອກຫ່າງຈາກມັນໄດ້.

ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ຂຽນປຶ້ມອີກຫົວຫນຶ່ງ ກ່ຽວກັບເລື່ອງທີ່ ເລນິນ ໄດ້ກະກຽມການພິມຈຳຫນ່າຍຫນັງສືພິມ "ຫນັດໄຟ" ທີ່ມີຊື່ສຽງ, ຂ້າພະເຈົ້າໄດ້ໃສ່ຊຸ່ມຫົວນີ້ວ່າ: "ສາມອາທິດທີ່ງຽບສະຫງົບ" ຂ້າພະເຈົ້າໄດ້ຂຽນເຖິງຕອນທີ່ ອະລາດີເມຍ ອີລີຊ ໄດ້ໄປຢ້ຽມຢາມເມືອງ ອູຟາ ເພື່ອອຳລາ ນາເດສະດາ ກົງສະຕັງຕິນິບນາ ກຣຸບສະກາຢາ ເຊິ່ງໃນເວລານັ້ນ ນາງກຶກເມລະເທດໄປຢູ່ທີ່ນັ້ນ.

ຫມາຍຄວາມວ່າ ອະລາດີເມຍ ອີລີຊ ໄດ້ສະແຫວງຫາສະຖານທີ່ບ່ອນງຽບສະຫງົບແທ້ຫລໍ? ແຕ່ບໍ່ແມ່ນເລີຍ. ເພິ່ນໄດ້ພັກຜ່ອນ ກໍຕໍ່ເມື່ອໃນຍາມຫລັບນອນເທົ່ານັ້ນ, ຍາມໃດເພິ່ນກໍໄດ້ເຮັດວຽກໃຫ້ແກ່ພັກ, ປະຊາຊົນ ແລະການປະຕິວັດ. ບໍ່ວ່າຍາມໃດສະຖານທີ່ແຫ່ງໃດ ເພິ່ນກໍໄດ້ຕັ້ງຫນ້າເຮັດວຽກຢ່າງບໍ່ຢຸດຢັ້ງ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ຂຽນປຶ້ມສາມຫົວ ກ່ຽວກັບຊີວິດໄວຫນຸ່ມຂອງ ອະລາດີເມຍ ອີລີຊ ກ່ອນຫນ້າທີ່ຈະໄດ້ລົງມືຂຽນ ປຶ້ມຫົວທີ່ສຳຄັນຂອງຂ້າພະເຈົ້າ ທີ່ຊື່ວ່າ "ຊີວິດຂອງເລນິນ" ນັ້ນ.

ຂ້າພະເຈົ້າ ເກີດມີຄວາມສົງໄສ ແລະບໍ່ເຊື່ອແນ່ວ່າຂ້າພະເຈົ້າຈະມີຄວາມສາມາດພໍ
ພໍເພື່ອບັນລະຍາຍຊີວິດອັນຍິ່ງໃຫຍ່ນີ້ໄດ້ຫລືບໍ່?

ຂ້າພະເຈົ້າໄດ້ຮັບການແນະນຳຊ່ວຍເຫລືອຈາກບັນດາເພື່ອນມິດສະຫາຍ ຂອງຂ້າພະເຈົ້າ,
ໃນນັ້ນມີທັງບັນນາທິການ, ນັກປາດ ແລະນັກເຂົ່ນໄຫວຂອງພັກ. ຂ້າພະເຈົ້າໄດ້ຮັບການ
ສະໜັບສະໜູນອັນອົບອຸ່ນຈາກບັນດາເພື່ອນມິດສະຫາຍດັ່ງກ່າວ ແລະ ສິ່ງສຳຄັນທີ່ສຸດ,
ຂ້າພະເຈົ້າຮູ້ດີວ່າ ບັນດາຜູ້ອ່ານທັງຫລາຍ ຕ້ອງການຢາກມີປຶ້ມກ່ຽວກັບ ຊີວິດຂອງ ເລນິນ
ເຊິ່ງເຕັມໄປດ້ວຍຄວາມຮັກແພງທີ່ມີຕໍ່ເພິ່ນ. ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ຂຽນປຶ້ມຫົວນີ້ຂຶ້ນມາ.

ມາຣີອາ ປຣີເລຊາເອວາ

ເດືອນກຸມພາ ປີ ໑໙໗໑



ຄວາມຊຶ້ນຊົ

ຫມູ່ນົກໄດ້ພາກັນບິນເຈິດເຈົ້ຍ ພ້ອມທັ້ງສົ່ງສຽງຮ້ອງຢ່າງຫນ້າອອນຊອນຢູ່ຕາມທ້ອງຟ້າ ຂອງນະຄອນ ຊິນບງກ ທົ່ງນບເຫງົາຊົ່ງສຽງຮ້ອງດັ່ງກ່າວໄດ້ດັງກ້ອງໄປຈົນເຖິງບໍລິເວັນແມ່ນ້ຳ ໂວນກາ. ແມ່ນ້ຳສາຍນີ້ໄດ້ໄຫລເປັນສາຍຍາວຢ່ງດໄປຈົນເກືອບຈະອ້ອມຮອບຕົວເມືອງແລ້ວ ຈົ່ງໄຫລຄົດໂຄ້ງລົງສູ່ທາງພາກໃຕ້. ເຮືອກຳປັ່ນລຳຫນຶ່ງກຳລັງລ່ອງໄປຕາມແມ່ນ້ຳ ໂວນກາ.

"ເຮືອກຳປັ່ນສີຂາວລຳນີ້, ຊິໄປທາງໃດກັນເດ?"

ນະຄອນ ຊິນບງກ ພວມຢູ່ໃນລະຫວ່າງລະດູບານໃຫມ່.

ຢູ່ຕາມສາຍທາງທຸກແຫ່ງ ກໍຄືຢູ່ຕາມຮົ້ວຕາມສວນ, ລ້ວນແຕ່ໄດ້ເນືອງນັນໄປດ້ວຍສຽງ ນົກຮ້ອງ. ກະແສລົມພັດໄດ້ເຮັດໃຫ້ງ່າຕົ້ນເປືອຍຂາວສັ່ນສະເທືອນ. ຕາມເສັ້ນທາງຕ່າງໆ ໃນ ແຕ່ລະຄຸ້ມກໍ ລ້ວນແຕ່ເຈືອຈານໄປດ້ວຍຄວາມຊຶ້ນຊົ.

ໃນຄອບຄົວ ອຸລົອານົບ ກໍມີຄວາມຊຶ້ນຊົເຊັ່ນດຽວກັນ; ເຮືອນຫລັງດັ່ງກ່າວຕັ້ງຢູ່ບໍ່ຫ່າງ

ໃກຈາກແມ່ນ້ຳ ໂອນກາ ພໍປານໃດ. ແສງສະຫວ່າງຂອງດວງພະອາທິດ ໄດ້ສາດແສງອັນເຮືອງ
ຮຸ່ງຜ່ານເຂົ້າມາທາງປ່ອງຢ້ຽມ, ພ້ອມດ້ວຍກັນນັ້ນ ສຽງໂຫວດຂອງເຮືອກຳປັ່ນຢູ່ກາງແມ່ນ້ຳ ກໍ
ໄດ້ດັງກ້ອງເຂົ້າມາເຊັ່ນກັນ.

ຜູ້ເປັນແມ່ໄດ້ກົ້ມຫນ້າລົງເບິ່ງອູ; ໃນອູ່ດ້ງກ່າວ ມີເດັກນ້ອຍຜູ້ຊາຍກຳລັງນອນຢູ່. ແມ່
ແນມເບິ່ງລູກດ້ວຍຄວາມຮັກໃຄ່, ກະມຸກະຫນອມ: "ເມື່ອໃຫຍ່ຂຶ້ນມາ ລູກຈະໄດ້ເຮັດຫຍັງ
ເດ? -ຊາຕາກຳຂອງລູກນັ້ນຈະເປັນຈັ່ງໃດ?".
ອີລີອາ ນິກໂກລາຍເອວິດ, ຜູ້ເປັນພໍ່ໄດ້ຍ່າງເຂົ້າມາໃນຫ້ອງ.
-ມາເຊນກາ* ! -ເພິ່ນກ່າວໃນລະຫວ່າງທີ່ກຳລັງຍ່າງເຂົ້າມາ. -ສະບາຍດີ ມາຊາ ທີ່ຮັກ!
ລູກຜູ້ໃຫຍ່ທັງສອງຄົນຄື ອານີອຸຕາ ແລະສາຊາ, ກໍໄດ້ພາກັນເຂົ້າມາຫາແມ່ພ້ອມກັບພໍ່.

*ແມ່ນຊື່ຂອງ ມາຣີອາ ທີ່ເອີ້ນແບບສະນິດສະຫນົມຮັກແພງ.

ອານີອູຕາ ອາຍຸ ຜ ປີ, ນາງມີຫນ່ວຍຕາສີດຳ ແລະຜົມງາມ; ສ່ວນ ສາຊາ ຫາກໍໄດ້ ๔ ປີ. ເດັກ ນ້ອຍທັ້ງສອງພາກັນແລ່ນເຂົ້າໄປໃກ້ໆຢູ່ດ້ວຍທ່າທາງຕື່ນເຕັ້ນສຸດຂີດ.

-ພວກລູກເອີ້ຍ, -ອີລີອາ ນີກໂກລາຍເອວິດ ເອີ້ນໃສ່. -ພວກລູກໄດ້ນ້ອງຊາຍອີກຜູ້ຫນຶ່ງ ແລ້ວໃດ.

-ນ້ອງເປັນຫຍັງຄືມານ້ອຍແລະຫ່ວງແທ້! -ອານີອູຕາ ເວົ້າດ້ວຍຄວາມແປກໃຈ.

-ບາດແລ້ວມັນຫາກຊິໃຫຍ່ຂຶ້ນດອກ, - ຜູ້ເປັນພໍ່ຕອບ.

-ຊິໃສ່ຊື່ນ້ອງວ່າຈັ່ງໃດ? -ສາຊາທັ້ງກາມທັ້ງຢ້ຳຢັ້ນຂຶ້ນເບົ່ານ້ອງຄັກໆ.

-ໃສ່ຊື່ຫລິ້ນວ່າ ໂອໂລເດຍ ນໍ, -ຜູ້ເປັນແມ່ຕອບ.

ດ້ວຍສິ່ງທີ່ກ່າວມານັ້ນແລ້ວ, ໃນມື້ວັນທີ ๔ ເດືອນ ๔ ປີ ๑๙๗๐, ທີ່ນະຄອນຊິນຊນາ, ແຄມແມ່ນ້ຳໂອນກາແຫ່ງນີ້, ໄດ້ມີຄົນຜູ້ຫນຶ່ງກຳເນີດເກີດຂຶ້ນ. ຄົນຜູ້ນັ້ນກໍຄື ອະລາດີເມຍ ອຸລີອານົບ, ແລະໄດ້ກາຍມາເປັນເລນິນຜູ້ຍິ່ງໃຫຍ່ໃນບັ້ນຕໍ່ມາ.

ໃນຄ່ຳຄືນລະດູຫນາວ

ວັນເດືອນປີຜ່ານໄປ, ໂອໂລເດຍ ກໍໄດ້ເຕີບໃຫຍ່ຂຶ້ນຕາມລຳດັບ - ແລະ ມາຮອດຕອນນີ້ ເຂົາມີອາຍຸໄດ້ແປດປີພໍດີ. ໂອໂລເດຍ ບໍ່ແມ່ນລູກຫລ້າ ສຳລັບຄອບຄົວຂອງຕົນອີກແລ້ວ. ບາດ ນີ້ແມ່ນຜົນຂອງ ນານີອາຊາ ທີ່ໄດ້ເຂົ້າມານອນຢູ່ໃນອູ່ນັ້ນອີກ. ໂອລີອາ ແລະ ມີຈີອາ ເກີດລຸນ ໂອໂລເດຍ. ພວກເຂົາເຈົ້າມີອ້າຍນ້ອງນຳກັນທັ້ງຫມົດຄື: ອານີອູຕາ, ສາຊາ, ໂອໂລເດຍ, ໂອລີ ອາ, ມີຈີອາ, ນານີອາຊາ ແລະຮວມທັ້ງພໍ່ແລະແມ່, ແລ້ວເຫັນວ່າ ໃນຄອບຄົວດັ່ງກ່າວມີ ຫລາຍຄົນສົມຄວນ!

ອານີອູຕາ ແລະ ສາຊາ ນັ້ນ ໄດ້ເຂົ້າຮຽນຢູ່ໃນວິທະຍາໄລ. ສອງເອື້ອຍນ້ອງມັກໂອ້ລົມກັນ ກ່ຽວກັບເລື່ອງຕ່າງໆ, ກ່ຽວກັບເພື່ອນຝູງ, ແລະຕະຫລອດຮອດການຮ່ຳຮຽນນຳ. ສ່ວນ ໂອໂລ ເດຍ ນັ້ນກໍກຳລັງກະກຽມສອບເສັງເຂົ້າວິທະຍາໄລ. ຄູໄດ້ສອນໃຫ້ ໂອໂລເດຍ ຫັດອ່ານ, ຫັດ

ຂນ ແລະຫັດເຮັດເລກ. ນອກຈາກນັ້ນ ຜູ້ເປັນແມ່ກໍຍັງໄດ້ສອນໃຫ້ຕື່ມອີກ. ເພາະວ່າແມ່ກໍສາ ມາດເປັນຄູໄດ້ເຫມືອນກັນ. ແມ່ເອງກໍເຄີຍຮຽນແລະເຂົ້າໄດ້ຮອດໃບປະກາດສະນີຍະບັດ. ດັ່ງ ນັ້ນ ແມ່ຈຶ່ງຮູ້ຈັກຫລາຍໆເລື່ອງທີ່ເປັນຫນ້າສົນໃຈທີ່ສຸດ : ເປັນຕົ້ນແມ່ນເລື່ອງກ່ຽວກັບເຂດ ຮ້ອນ, ເຂດຫນາວ, ກ່ຽວກັບຫມາແຊ່ງແບກນັກ* ທີ່ສະຫລາດຕິວຫນ້ອຍ, ຊຶ່ງເຄີຍໄດ້ຊີດຊ່ອຍ ເອົາຊີວິດເພື່ອນຮ່ວມທາງທີ່ຫົກເຄາະຮ້າຍຢູ່ເທິງພູເຂົາ ທີ່ປົກຫຸ້ມດ້ວຍຫິມະ, ກ່ຽວກັບເລື່ອງ ນາໂປເລອົງ ທີ່ໄດ້ເຂົ້າມາຮຸກຮານປະເທດລັດເຊຍ ແລະ ບັ້ນຮົບ ໂບໂຣດິໂນ.

ອັນເລື່ອງລາວທີ່ແມ່ໄດ້ນໍາມາເລົ່າສູ່ພວກລູກຟັງຢູ່ອ້ອມພາເຂົ້າໃນຄໍ່າຄືນຂອງລະດູຫນາວ ນັ້ນ, ມີຢ່າງຫລວງຫລາຍຈົນບໍ່ອາດຈະກ່າວອອກມາໃຫ້ຫມົດໄດ້.

ນອກຈາກການເລົ່າເລື່ອງແລ້ວ, ພວກເຂົາເຈົ້າກໍພາກັນອ່ານປຶ້ມເປັນປະຈໍາທຸກຄືນເລີຍ.

ໂອໂລເດຍ ມັກຍາມຄໍ່າຄືນຄືແນວນີ້ຫລາຍທີ່ສຸດ. ມັກບານປະຕູປ່ອງຍ້ຽມ ທີ່ກົກຕົບແຕ່ງ ໃຫ້ສວຍງາມດ້ວຍເມັດຫິມະສີຂາວຂອງລະດູຫນາວ, ມັກສໍານຽງສຽງເວົ້າຂອງຜູ້ເປັນແມ່ ແລະ ສຽງເປີດປຶ້ມຄ່ອຍໆຊົ່ງດັງຄວາກໆຄຽກໆ!

ໃນຍາມຄໍ່າຄືນລະດູຫນາວ ໂດຍສະເພາະແມ່ນກ່ອນຫນ້າມື້ບຸນປີໃຫມ່ນັ້ນ, ຮູ້ສຶກວ່າມີ ຄວາມອົບອຸ່ນ ແລະ ມ່ວນຊື່ນເປັນພິເສດ. ຫ້ອງກິນເຂົ້ານັ້ນກໍໄດ້ວ່າແມ່ນສາງເກັບເຄື່ອງຫລິ້ນ. ເທິງໂຕະເຕັມໄປດ້ວຍເຈ້ຍທີ່ມີສີສັນຕ່າງໆນາໆ. ພວກເດັກນ້ອຍຈັບເອົາເຈ້ຍມາຕັດ, ແລ້ວຕິດ ເຮັດເປັນກັບນ້ອຍໆ, ເຮັດເປັນຮູບເຮືອນອັນສວຍງາມ, ແລະເຮັດເປັນພວງມະໄລ ເພື່ອເອົາ ໄປຫ້ອຍໃສ່ງ່າຕົ້ນແປກປີໃຫມ່.

ອີລີອາ ນິກໂກລາຍເອວິດ ກໍາລັງນັ່ງເຮັດວຽກ. ດັ່ງນັ້ນຜູ້ເປັນແມ່ຈຶ່ງອັດປະຕູເຂົ້າແຈບໆ ເພື່ອບໍ່ໃຫ້ມີສຽງດັງໄປຮອດບ່ອນທີ່ພໍ່ເຮັດວຽກ.

ອັນພວງມະໄລທີ່ຍາວ ແລະເປັນຂໍ້ງ້ອຍດ້ວຍໄສ້ອໍ່ທີ່ມີສີເຫລືອງສີຂນ, ແດງມ່ວງ ແລະ ຄໍາສະຫລັບກັນໄປນັ້ນ, ຟ້ອງສຽງມັນຕໍາກັນດັງຄວາກໆຄຽກໆ, ກ້ວນພັນກັນຫ້ອຍຕ່ອງແຕ່ງ ຢູ່ອ້ອມແຂນພວກເດັກນ້ອຍ ທີ່ກໍາລັງກະກຽມເພື່ອໄຕ້ທຽນໄຂ ຢູ່ເທິງຕົ້ນແປກປີໃຫມ່ນັ້ນ.

*ຫມາທີ່ຊ່ວຍຊີວິດຄົນຢູ່ຕາມເຂດຫນາວ.

ຕົ້ນແປກໄດ້ຖືກນຳເຂົ້າໄປຕັ້ງໄວ້ຢູ່ໃນຫ້ອງນຶ່ງ, ແລະພວມກຳລັງລໍຄອຍໃຫ້ນົກບິນມາຕົບແຕ່ງ.

-ພວກເຮົາພາກັນໄປເບິ່ງຕົ້ນແປກກັນເທາະ, - ໂວໂລເດຍ ຊັກຊວນ ແລະ ໂອລິອາ ກໍໄດ້ສະແດງຄວາມເຫັນດີກັບບ່ອນເລີຍວ່າ:

-ໄປ!

ນິຈິອາ ຜູ້ນ້ອງນ້ອຍ ໄດ້ໂດດລົງມາຈາກຕັ່ງ:

-ນ້ອງກະຊິໄປ.

-ພວກເຮົາມາຈັບແຂນກັນໄປເນາະ, -ອານີອູຕາ ເວົ້າ.

ພວກເດັກນ້ອຍພາກັນຍ່າງຍ່ອງໆເຂົ້າໄປໃນຫ້ອງ. ຢູ່ພາຍໃນຫ້ອງມີແສງສະຫວ່າງແຕ່ພໍນິວໆແບບພຶດສະດາມ. ດວງຈັນໄດ້ສາດແສງເຂົ້າມາໂດຍຜ່ານຫີມະທີ່ຕິດຢູ່ຕາມຝາປະຕູປ່ອງຢ້ຽມແກ້ວ, ລອດລົງສູ່ພື້ນເຮືອນເປັນຈຸດສີຂາວໆດ່າງດາວໄປທົ່ວ. ຢູ່ພາຍໃນຫ້ອງ ເພີ່ນສາມາດແນມເຫັນຕົ້ນແປກຕົ້ນຫນຶ່ງ. ກິ່ນຫອມຂອງໃບແປກໄດ້ພຸ່ງກະຈາຍໄປທົ່ວຫ້ອງ. ພວກເດັກນ້ອຍໄດ້ພາກັນຍ່າງອ້ອມຮອບຕົ້ນໄມ້ດົງກ່າວ, ເພື່ອຊຶມຊຶມກັບຄວາມຫອມຫວນອັນນັ້ນຢ່າງງົບໆ.

-ພວກເຮົາມາພາກັນໄປເລາະເບິ່ງທົ່ວເຮືອນກັນເທາະ, - ໂວໂລເດຍ ຊັກຊວນ. ທຸກຄົນນິດງົບ ແລະ ບໍ່ຮູ້ວ່າເປັນຫຍັງ. ຄ່ຳຄືນໝົ້ກ, ພາຍໃຕ້ສາຍຄາເຮືອນຫລັງໃຫມ່ນັ້ຈ່ຽງບສະຫງັດຜິດປົກກະຕິວາດໃດວາດຫນຶ່ງແທ້. ເຮືອນດົ່ງກ່າວແມ່ນເຮືອນທີ່ປຸກຂຶ້ນໃຫມ່, ທັ່ງນີ້ກໍເພາະວ່າ ຄອບຄົວນີ້ຫາກໍຍ້າຍມາຢູ່ທີ່ນີ້ຫວ່າງບໍ່ດົນນີ້ເອງ. ຫ້ອງຂອງແມ່ນັ້ນກັບເຮືອນເຊຍດ້ວຍຜ້ກັ້ງໄມ້ຊຶ່ງບໍ່ແມ່ນຂັ້ນດ້ວຍຝາແຕ່ຢ່າງໃດ. ຕະກ່ຽງທີ່ຕັ້ງຢູ່ເທິງຕູ້ໄດ້ເປັ່ງແສງສະຫວ່າງລົງມາພໍຣິບຮ່. ນານີອາຊາ ກຳລັງນອນຢູ່ໃນອູ່.

ຈາກນັ້ນ ພວກເຂົາກໍພາກັນປີນຂຶ້ນເມື່ອເທິງຫ້ອງນ້ອຍຢູ່ຊັ້ນເທິງ, ໂດຍຜ່ານທາງຂັ້ນໄດແຄບໆ. ຢູ່ທີ່ນີ້ ແສງສະຫວ່າງຂອງດວງຈັນສາມາດສາດສ່ອງເຂົ້າມາແຈ້ງສະຫວ່າງກ່ວາ. ພັດຫີມະທີ່ເກາະຢູ່ຕາມປະຕູປ່ອງຢ້ຽມເບິ່ງແລ້ວ ຄ້າຍຄືກັບຕົ້ນ ຜັກກູດທີ່ມີຍວງໄຍຢູ່ຢ່າງຫລວງ

ຫລາຍ. ພວກເດັກນ້ອຍຍັງຄົງເກາະແຂນກັນເປັນສາຍ, ຍ່າງເລາະທົ່ວຫ້ອງຊັ້ນເທິງ, ແລ້ວ ພວກເຂົາກໍ່ຈົ່ງກັບລົງມາທາງຂັ້ນໄດອັນແຄບໆນັ້ນອີກ.

ປະຕູ ຫ້ອງເຮັດວຽກທີ່ມືດງຽບຂອງຜູ້ເປັນພໍ່ໄດ້ເປີດຈ່າງປ່າງອອກ, ແລ້ວເພິ່ນກໍອອກມາ ປະກົດຕົວ ຢູ່ທີ່ປາກປະຕູ.

-ກອງພົນທັກຂອງພໍ່ຢູ່ຫນີ້ເອງດອກຫວະຊັ້ນ! -ຜູ້ເປັນພໍ່ເອີ້ຂຶ້ນ, ແລ້ວກໍກອດຕຸ້ມເອົາ ພວກລູກຫມົດທຸກຄົນພ້ອມກັນບາດດຽວ.

ແຕ່ໃນທັນໃດນັ້ນ ກໍປະກົດວ່າຜູ້ເປັນພໍ່ສໍານຶກຂຶ້ນມາໄດ້ວ່າ: ພວກເດັກນ້ອຍກໍາລັງຫ່ວງເຫງົາ. ພວກເຂົາຍືນຈັບແຂນກັນຢ່າງແຫນ້ນຫນຽວ. ຜູ້ເປັນພໍ່ຄິດບໍ່ເຖິງວ່າແມ່ນ ໂອໂລເດຍ ທີ່ເປັນຜູ້ອອກຫົວຄິດ: ເອົາມືເກາະກັນຍ່າງເລາະໄປທົ່ວເຮືອນ.

ແຕ່ພໍ່ຄົງສາມາດເດົາສິ່ງໃດສິ່ງຫນຶ່ງໄດ້ ແລະ ເວົ້າອອກມາດ້ວຍນໍ້າສຽງອັນສັ່ນສະເທືອນໃຈວ່າ: -ພວກລູກທີ່ຮັກຂອງພໍ່ເອີ, ພວກລູກຕ້ອງຢູ່ນໍາກັນຕະຫລອດໄປແລະຮັກເພງກັນຄືໃນຍາມນີ້ໃດເນີ!

ລະດູຮ້ອນ

ຍາມລະດູຮ້ອນ ແມ່ນຍາມທີ່ເປັນເງິນເປັນຄໍາ! ເມື່ອຮອດຍາມຮ້ອນມາ, ຢູ່ນະຄອນຊຶມບຽກ ນົກອາກາດຮ້ອນອົບເອົ້າແລະແຫ້ງແລ້ງທີ່ສຸດ, ຢູ່ໃນສວນ, ຫມາກໂປມ ໄດ້ສຸກແດງເຮື່ອ. ນະຄອນ ຊຶມບຽກ ເປັນເມືອງທີ່ມີສວນຫມາກໄມ້ ຢ່າງຫລວງຫລາຍ.

ຢູ່ທາງຫລັງບ້ານຂອງຄອບຄົວ ອຸລີອານິບ ກໍມີສວນຄືກັນ. ເຖິງວ່າຈະເປັນສວນນ້ອຍ, ແຕ່ ກໍມີຄົບບໍ່ຂາດ. ໃນສວນນັ້ນ ມີທາງຫນ້ອເສັ້ນຫນຶ່ງຜ່ານກາງ, ສອງຟາກແມ່ນປູກຕົ້ນແປກຂາວ ເຫລື້ອມງາມຄ້າຍດັ່ງສີເງິນຫລຽນ. ຕົ້ນບົກເບ້ຽບານແຜ່ກ້ານໃບຫນາອອກຢ່າງກ້ວາງຂວາງ, ແລະໃນຍາມລະດູຮ້ອນເຊົ້າຄືແນວນີ້ ເມື່ອໄດ້ມານັ່ງພັກຜ່ອນຢູ່ກ້ອງຮົ່ມໄມ້ຮູ້ສຶກວ່າເຢັນດີແທ້ໆ.

ບັນດາຕົ້ນດອກໄມ້ເຄືອແນມ ເບິ່ງແລ້ວ ຈັ່ງແມ່ນສະຫງ່າລາສີ, ດັ່ງນັ້ນລະ ເພິ່ນຈຶ່ງໄດ້ເອີ້ນມັນວ່າ "ປ່າໄມ້ຄໍ່ໍ".

ເຈັດໂມງເຊົ້າແລ້ວ; ແສງຕາເວັນໄດ້ສາດແສງອັນອົບອຸ່ນລົງໃສ່ເທິງຫມອນຫມູນຫົວ, ໂດຍຜ່ານເຂົ້າມາທາງປະຕູປ່ອງຢ້ຽມ; ພໍຊອາດຕື່ນ ໂວໂລເດຍ ກໍຟ້າວນຶ່ນຕາຂຶ້ນ, ແລ້ວທັນໃດກໍລຸກຂຶ້ນນັ່ງໂຈ້ໂກ້, ຫັດກາຍຍະບໍລິຫານ - ຫນຶ່ງ! ສອງ! ສາມ! ຈາກນັ້ນ ກໍໄປສວ່າຍຫນ້າ, ແລ້ວກໍແລ່ນລົບເຂົ້າໄປໃນສວນ, ຫາຕົ້ນຫມາກກະທັນນັ້ນໂລດ. ໂວໂລເດຍ ຮູ້ສຶກມີຄວາມມ່ວນຊື່ນເປັນພິເສດທີ່ໄດ້ແລ່ນອອກໄປກ່ອນພວກເອື້ອຍອ້າຍ ແລະນ້ອງໆ, ເພື່ອຈະໄດ້ເກັບເອົາຫມາກໂປມທີ່ຫລົ່ນລົງມາ ເພື່ອຕອນກາງເດືອນມາໄວ້ ແລ້ວຈຶ່ງເອົາມາສູ່ຫມົດທຸກຄົນກິນ.

ດີແຕ່ວ່າຢູ່ໃນຄອບຄົວຂອງ ອຸລົຍານົບ ນີ້ທຸກຄົນຕ່າງກໍພາກັນລຸກເດີກຕື່ນເຊົ້າ. ສາຊາ ແລະ ໂວໂລເດຍ ແມ່ນມີຫນ້າທີ່ : ຄືຕັກນ້ຳຂຶ້ນມາຈາກສ້າງກ່ອກໃສ່ຄຸໄມ້ແລ້ວເອົາໄປຫົດດອກໄມ້. ຄໍ່ວານີ້ ບໍ່ທັນໄດ້ຕັກຫົດດອກໄມ້ຊໍ້າ, ມາມີຕັກຫົດແທນກໍໄດ້. ບາງຄັ້ງ ກໍແມ່ນແມ່ເອງ ເປັນຜູ້ຕັກຂຶ້ນມາຫົດ ແລະ ບາງຄັ້ງກໍແມ່ນພວກເຂົາເປັນຜູ້ຫົດ.

ຫມໍ້ຕົ້ມນ້ຳ ຊາໂມວາ ທີ່ຕັ້ງໄວ້ເທິງໂຕະໄດ້ເລີ່ມຟົດແລ້ວ. ຕອນກິນເຂົ້າເຊົ້າຜູ້ເປັນແມ່ໄດ້ກ່າວຕໍ່ພວກລູກວ່າ : ມື້ນີ້ແມ່ນມື້ເວົ້າພາສາຝະລັ່ງ. ດັ່ງນັ້ນຫມາຍຄວາມວ່າ ຍາມເຂົ້ານັ່ງອ້ອມໂຕະກິນເຂົ້າ, ທຸກຄົນຕ້ອງເວົ້າພາສາຝະລັ່ງ, ມື້ອື່ນແມ່ນມື້ເວົ້າພາສາເຢຍລະມັນ.

ແນ່ນອນແລ້ວ, ອັນທີ່ງ່າຍທີ່ສຸດນັ້ນ ກໍແມ່ນມື້ໃດໄດ້ເວົ້າພາສາລັດເຊຍນັ້ນແລ້ວ. ແຕ່ຜູ້ເປັນແມ່ເຫັນວ່າ ພວກລູກຄວນຈະຕ້ອງຮູ້ພາສາຕ່າງປະເທດໄວ້ນຳ.

- ກິນເຂົ້າເຊົ້າແລ້ວ ອ້າຍຈະເຮັດຫຍັງ? - ໂອລິອາ ຖາມ ໂວໂລເດຍ.

- ກະເຮດຄ ສາຊາ ຫນໍ່ແລ້ວ.

ຕາມປົກກະຕິ, ສາຊາຈະຕ້ອງອ່ານປຶ້ມ. ສາຊາ ເປັນນັກອ່ານປຶ້ມຢ່າງຂະຫຍັນຫ້າວຫັນ: ສາຊາ ມັກວິຊາເຄມີ ແລະວິຊາທຳມະຊາດ. ສາຊາ ໄດ້ຈັດແຈງແປງສະຖານທີ່ໃຫ້ເປັນ ຫ້ອງທົດລອງເຄມີຢູ່ທາງແຈເຮືອນດ້ານຫນຶ່ງ.

ສາຊາ ໄດ້ຈັດແຈງບ່ອນລ້ຽງສັດທີ່ເຫມາະສົມທີ່ສຸດ: ຢູ່ທີ່ນັ້ນມີເຫມັ້ນນ້ອຍຄ້ວກເຂ່ຍຕາມ

ກອງໃບໄມ້, ແລະມີກະແຕ້ນໂຕນຢູ່ໃນຄອກ, ເທົ່ງປ່າຍໄມ້ສ້າວນ້ອຍ.

ຍາມລະດູຮ້ອນນີ້ ຈັ່ງແມ່ນມີແຕ່ຄວາມສະບາຍອົກສະບາຍໃຈ! ຕື່ນເຊົ້າຂຶ້ນມາ ກໍຊອກເອົາ ປຶ້ມຫົວໃດຫົວຫນຶ່ງມ່ວນໆ ແລ້ວຊອກບ່ອນທີ່ມີຮົ່ມເຢັນດີຢູ່ໃນສວນ, ແລ້ວກໍແມ່ນວ່າສາມາດ ລືມເລື່ອງລາວຕ່າງໆໃນຊີວິດ. ຈົນຮອດຍາມທ່ຽງ ກໍຄົງໄດ້ຍິນແຕ່ສຽງນົກຮ້ອງຢູ່ໃນສວນເທົ່າ

ນັ້ນ ແລະ ສຽງຫຍິບຈັກຂອງຜູ້ເປັນແມ່ ທີ່ດັງສົ່ງອອກມາຈາກໃນເຮືອນ : ສ່ວນຫລາຍແມ່ນັກ ຫຍິບ, ນັກຕາບສົ່ງເສື້ອໄວ້ໃຫ້ພວກລູກແລະສອນໃຫ້ລູກສາວເຮັດຕັດຫຍິບໄປນຳ.

ຫລັງຈາກກິນເຂົ້າງາຍແລ້ວ, ຍ້ອນວ່າອ່ານປຶ້ມຈືນເມື່ອຍ, ໂອລີ ຈົ່ງໄດ້ຊັກຊວນ ໂວໂລ ເດຍ ວ່າ:

- ໄປຫລິ້ນກັນເທາະ.

- ຫລິ້ນຫມາກລັ້ນເທາະ, ເອົ້າ, ກ່ຳມະລ່ຳກ່ຳກັບ, ອີ່ປູໄລ່ງັບ ຫມາກ້ອຍສອບກັບ. - ວ່າ ແລ້ວ ທຸກຄົນກໍແລ່ນແຍກກັນໄປລີ້ຢູ່ທົ່ວສວນ.

ເມື່ອເສງອາທິດໄດ້ເລື່ອນຫວິດອອກຈາກເດີ່ນບ້ານແລ້ວຍ້າຍມາສູ່ເດີ່ນຫລ້ົ ໂກຣເ*
ນັ້ນ ການຫລ້ົນຍ່ຳຟິດຟ້ົນຂ້ົນຕ່ົມອີກ. ແຕ່ວ່າການຫລ້ົນຕ້ອງກ໊ົກຕາມກິດລະບ່ຽບ, ຄ໊ົໃຫ້ກ໊ົກ
ຕ້ອງຕາມກິດເກນອ່ີຫລ. ໂອໂລເດຍ ກັບພ່ໍ້ນ້ັ ຍາມໃດ ກໍ່ມ້ັກກ່ຽງກັນແນວນ້ັນສະເຫມ ແລະ
ໃນເວລາຫລ້ົນກໍ່ມ້ັກຫ໋ວເຮຮາຂ້ົນພ້ອມກັນໂລດ.

ໃນເວລາທ່ີ່ດວງອາທິດຄ່ອຍໆຍ້າຍລ່ົງໄປສູ່ພາກຕາເວ້ັນຕົກນ້ັ, ແມ່ນຍາມທ່ີ່ທ້ອງຟ້າໃກ້
ຈະມ໊ົດແລ້ວ, ອາຍຮ້ອນກໍ່ໄດ້ຄາຍຄວາມຮ້ອນລ່ົງ. ຜູ້ເປ້ັນພ່ໍ້ເອ່ີຍຂ້ົນວ່າ:

- ພວກລູກເອ່ີຍ, ພວກເຮົາພາກ້ັນໄປອາບນ້ໍ ຊະວ໋ອກກາ ກ້ັນເທາະໄປ!

ຈາກນ້ັ ຄອບຄ໋ວ ອຸລ໋ອກ໋ນ ທ້ັງຫມ໊ົດ ກໍ່ພາກ້ັນລ່ົງໄປອາບນ້ໍ.

ຊະວ໋ອກກາ ແມ່ນແມ່ນ້ໍ້ສາຍຫນ໊ົ່ງທ່ີ່ໄຫລຜ່ານໄປຕາມສອງຟາກຝ່ັ່ງທ່ີ່ຂຽວງາມຢ່າງ໓ບ໐.
ໂອໂລເດຍ ໄດ້ແລ່ນຂ້ົນໄປເທ່ົງຂ໊ວນ້ອຍໆ ແລ້ວກໍ່ໂດດລ່ົງນ້ໍ, ເຮ໊ັດໃຫ້ນ້ໍ້ຟ້ົ້ງກະເດ້ນ
ຂ້ົ້ນ, ຈາກນ້ັ ກໍ່ລອຍແຂ່ງກ້ັນກ້ັບພ່ໍ ແລະ ສາຊາ.

ເທ່ົງແມ່ນວ່າ ທ້ອງຟ້າຍ້ັງແຈ້ງຢູ່ ແລະ ແສງສະຫວ່າງ໕ທ໋ອງໃນຍາມຄ່ໍ້ານ້ັ ຍ້ັງພຸ່ງກະຈາຍ
ຢູ່ກໍ່ຕາມ, ແຕ່ວ່າ ຢູ່ເທ່ົງຂອບຟ້າອ໊ກເບ໋ອງຫນ໊ົ່ງນ້ັ ໄດ້ມ໊ົດວງດາວຫນ່ວຍຫນ໊ົ່ງເປ່ັ້ງແສງ໕ຂຽວ
ເຫ໊ືອມຂ້ົ້ນເປ້ັນຫນ່ວຍໜ່ໍ້ອ໊ກແລ້ວ.

ເມ່ົ່ືອອາບນ້ໍ້ແລ້ວ, ໂອໂລເດຍ ແລະ ສາຊາ ກໍ່ຢ່າງຄ່ຽງຄູ່ກ້ັນອອກຫນ້າ.

- ສາຊາ, ອ້ຍ! ກໍ່ລ້ັງ໕ິດ໋ອ່ີຫຍ້ັງຢູ່ເບ໋ະ?

- ຄ໊ິດກ່ຽວກ້ັບຫມ໊ົດທຸກ໕ິ່ງຢ່າງ. ນ້ອງແນ່ມເຫ້ັນດາວນ້ັ້ນບໍ? ມ້ັນອອກມາຈາກໃສ? ເລ່ີ່ມ
ຕ້ົ້ນຂ້ົ້ນ໕ິ່ແນວໃດ? ຊ໋ີວ໕ິດການເປ້ັນຢູ່ເທ່ົງແຜ່ນດ໋ິນ, ເລ່ີ່ມຕ້ົ້ນຂ້ົ້ນມາ໕ິ່ແນວໃດ? ພວກເຮົາຢູ່
ເພ່ົ່ືອຫຍ້ັງ? ເປ້ົ້າຫມ໋ວຍຂອງພວກເຮົານ້ັ້ນຢູ່ໃສກ້ັນແທ້?

ໂອໂລເດຍ ຮ້ັບຟ້ັງດ້ວຍຄວາມສ໋ົນໃຈ. ຄວາມ໕ິດໄດ້ແລ່ນເຂ້ົ້າມາກະທ໋ບມ້ັນສະຫມ໋ອງ
ຢ່າງກະທ້ັນທ້ັນ. "ພວກເຮົາມ໋ີຊ໋ີວ໕ິດຢູ່ເພ່ົ່ືອຫຍ້ັງ? ເປ້ົ້າຫມ໋ວຍຂອງພວກເຮົານ້ັ້ນຢູ່ໃສກ້ັນ? ກ້ໍາ

---

*ກ໋ືລາປະເພດຫນ໊ົ່ງຄ້ັ້ຍດ໋ັ່ງ໕ິ໕ ຍາມຫລ້ົນນ້ັ້ນເຂ໋ົາໃຊ້ໄມ້ປ໋ອງເອ໋ົາລູກຫມາກຄ່ໍ້າເພ່ົ່ືອໃຫ້ມ້ັນຜ່ານເຂ້ົ້າປາກປະຕູ.

ເຮົາຫາກຮູ້ຈັກວິທີຢູ່, ຮູ້ຈັກຄິດ, ຊອກຮູ້ ແລະ ເຮັດອັນໃດອັນຫນຶ່ງຂຶ້ນມາໄດ້ນັ້ນ ແມ່ນຈະ ເປັນສິ່ງທີ່ຫນ້າຈັບໃຈທີ່ສຸດ. ສາຊາ ເປັນຄົນສະຫລາດແທ້ໆ. ເຮົາຕ້ອງມີຊີວິດຢູ່ຄື ສາຊາ".

ເທິງເຮືອກຳປັ່ນ

ເຮືອກຳປັ່ນສອງຊັ້ນ ໄດ້ມາຈອດຢູ່ທີ່ທ່າເຮືອ. ປະຕູປ່ອງຢ້ຽມນ້ອຍໆຂອງມັນ ໄດ້ສົ່ງແສງ ເຫລື້ອມແພບພາບຕອບກັບແສງສະຫວ່າງຂອງດວງອາທິດ. ຂອບເຮືອສີທອງເຫລື້ອມແວວ ວາວ ຄ້າຍດັ່ງເຄືອບດ້ວຍຄຳ. ທົ່ວທັງລຳເຮືອສະອາດສະອ້ານແລະເປັນລະບຽບຮຽບຮ້ອຍດີ. ກັບຕົ້ນເຮືອ ຢືນຢູ່ເທິງດາດຟ້າ, ແລະໄດ້ກ່າວອອກຄຳສັ່ງໂດຍຜ່ານທາງກະໂບກທໍລະໂຄ່ງ.

"ໄວໆແດ່ຈັກຫນ່ອຍຊິບໍ່ທັນໃດ", - ໂອໂລເດຍ ເປັນຫ່ວງ..

ພໍ່ໄດ້ກວດກາເບິ່ງປີ້ເຮືອ ແລະເຄື່ອງຂອງຕ່າງໆຂອງຕົນຄືນໃຫມ່ອີກເທື່ອຫນຶ່ງ. ແຕ່ລະຄົນ ຕ່າງກໍຫົວກະຕ່າ ຫລືຫີບຫໍ່ຕ່າງໆຕາມແຮງຂອງໃຜມັນ. ສຽງໂຫວດເຮືອໄດ້ດັງສັນຍານເປັນ ສຽງຍາວໆຂຶ້ນສອງເທື່ອ, ເມື່ອຮອດເທື່ອທີສາມຈຶ່ງປ່ຽນເປັນສຽງສັ້ນລົງ. ຫມາກພັດໄດ້ເລີ່ມປົ່ນ ເຮັດໃຫ້ຟອງນ້ຳຜິດຟ້ຽຢູ່ກ້ອງໃບພັດ ແລະເກີດມີສຽງດັງ ແລ້ວຕໍ່ມາ ເຮືອກຳປັ່ນ ກໍໄດ້ເຄື່ອນ ອອກຈາກ ຊຶມບກ ເພື່ອໄປຍັງ ກາລັງ.

ເມື່ອຮອດຍາມລະດູແລ້ງຂອງທຸກໆປີ, ຄອບຄົວ ອຸລຶອານິບ ໄດ້ຂຶ້ນເຮືອກຳປັ່ນໄປຍັງ ກາລັງ ສະເຫມີ. ເມື່ອໄປຮອດແລ້ວ, ພວກເຂົາເຈົ້າກໍຂຶ້ນລົດມ້າຕໍ່ໄປອີກປະມານສິບແວກ ຈຶ່ງຮອດ ບ້ານ ໂກກຸດສະກີໂນ. ເລີ່ມຕັ້ງແຕ່ຍາມລະດູຫນາວພຸ້ນເປັນຕົ້ນມາ, ໂອໂລເດຍ ໄດ້ຄອງຄອຍ ການເດີນທາງຕາມແມ່ນ້ຳ ໂວນກາ ໄປຍັງກາລັງແລະຫມູ່ບ້ານ ໂກກຸດສະກີໂນນີ້.

ນະຄອນ ຊຶມບກ ເບິ່ງຄືຈັ່ງວ່າກ້ອຍຫ່າງອອກໄປໄກເລື້ອຍໆ. ບັນດາບ້ານເຮືອນທີ່ມີຫລັງ ຄາສີແດງຢູ່ໃນນະຄອນນັ້ນ ກໍຄ້າຍກັບວ່າໄດ້ຫມູບຕ່ຳລົງຢູ່ຕາມສວນຫມາກໄມ້ອັນຂຽວງາມ ແລະ ສຸດທ້າຍກໍຍັງຄົງເຫລືອໄວ້ໃຫ້ເຫັນແຕ່ພຽງຫນ່ວຍພູອັນສູງຊັນຊຶ່ງຍືນປະກົດຕິວເຮັດ ເຈັ້ມເທິນຢູ່ເທົ່ານັ້ນ. ເນື່ອງຈາກວ່າແມ່ນ້ຳ ໂວນກາ ອັນລະອິດລະອ້ຽວໄດ້ໄຫລໂຄ້ງໄປທາງ

ໃຫມ່, ດ່ັງນັ້ນຈ່ຶງບ່ໍສາມາດແນມເຫັນນະຄອນ ຊິນຢກ ໄດ້ອ່ີກ. ຝູງນົກນາງນວນໄດ້ພາກັນ ບິນເຈ່ັຍເຈ່ິດຕ່ິດຕາມເຮ່ືອໄປພ້ອມທັ້ງສ່ົງສຽງຮ້ອງກ້ອງດ່ັງຈ່ິນ ລັກໄລ່ຫູ.

ໂອໂລເດຍ ບ່ິເຂ້ົາຈ່ີ່ເປ່ັນກ້ອນນ້ອຍໆໃຫ້ນົກແລ້ວກ່ໍແລ່ນເຂ້ົ້າມາໃນຫ້ອງເຄ່ືອງຈັກອ່ັຍນ້ໍາ ເປ່ັນມ່ັນເຍ່ິບຍາບ ນ່ັ້ນ ກ່ໍາລັງແລ່ນ ດ້ັງຟ່ິດສະນ່ັ້ນ ດ້ວຍຄວາມແຮ. ແທ່ງເຫລ່ັກທ່ີ່ໃຊ້ເປ່ັນກ່ໍາ ລ້ັງແຮງເພ່ືອດ່ັບຈັກນ່ັ້ນກ່ໍໄດ້ແລ່ນຢູ່ຢ່ັ່ງບ່ໍມ່ີການພ່ັກຜ່ອນ, ກ່ະແສອ່ັຍຮ້ອນ ໄດ້ພຸ່ງອອກມາ ຈາກທ່ໍ່ໄຟດ້ັງສ່ິດໆ. ນ່ັ່ງຊ່ັ່ງກ່ໍາກ່ັບໄຟຄ່ິນຫນ່ໍ້ງນຸ່ງເສ່ືອສ່ັ້ນລ້ອນຈ້ອນຮອດເຄ່ົ້ງຄ່ິງຕ່ິວດ່ໍາ ຫລ່ົ້ມໆແຕ່ຂ່ີ້ກ່ານໄຟ ແລະ ນ່ໍ້ມ່ັນອ່ັນເປ່ົ້ອນເປ, ເຂ່ົາເປ່ັນຜູ່້ເຮ່ັດວຽກປະຈ່ໍາຢູ່່ເຕ່ົາໄຟອ່ັນຮ້ອນ ອ່ົ້ານ່ັ້ນເອງ ຢາດເຫ່ົ້ອທ່ີ່ໄຫລ້ອ່ຍຢູ່່ກາງຫລ່ັງນ່ັ້ນຄ້ັ່ງກ່ັບວ່ານ່ແມ່ນເຂ່ົາອາບນ່ໍ້ໝາໃຫ່ມ່ໆ.

ໃນພ່ັດທ່ີ່ກ່ໍາລ້ັງປ່ັ່ນຢູ່່ທ້ານເຮ່ືອໄດ້ສ່ົ່ງສຽງດ້ັງຢ່ັ່ງຟ່ິດສະນ່ັ້ນ, ເຮ່ືອລ່ໍາດ້ັ່ງກ່ານ ໄດ້ແລ່ນຕ່ານ ຂ່ຶ້ນຕາມລ່ໍາແມ່ນ່ໍ້ ໂອນກ້ານດ້ວຍຄວາມແຮ. ຜູ່້ໂດຍສານທ້ັງຫລ່ານຕ່ັ່ງກ່ໍຊ່ິມທ່ົ່ວທ້ັ່ວທ່ໍ່ານະ ຊ່ານຢູ່່ເທ່ິງດ່ານຟ້ານເຮ່ືອ. ພ່ໍ່ໄດ້ຍ່ັ່ງອອກມ່ານຈ່ານກຫ້ອງ ພ້ອມທ້ັ່ງຈ່ັບເອ່ົ້ານ່ເປ່ັນຫມ່ານເສ່ົ້ກອອກ ມ່ານ່ໍ. ຊຸດຫມ່ານເສ່ົ້ກດ້ັ່ງກ່ານ່ັ້ ແມ່ນພ່ໍ່ເອ່ງເປ່ັນຜູ່້ເຮ່ັດຂ່ຶ້ນດ້ວຍໄມ້ຢ່ັ່ງສວຍງ່ານທ່ີ່ສຸດ, ແລະພິນທະຫ່ານຫມ່ານເສ່ົ້ກກ່ໍລ້ວນແຕ່ໄດ້ຖ່ົ້ກປະດ່ິດສ້ັ່ງຂ່ຶ້ນຫລ່ານແບບ, ຫລ່ານລ່ັກສະນະ ທ່ີ່ແຕກຕ່ັ່ງກ່ັນ.



- ເຮົາຕີເສີກກັນຈັກບາດເທາະ? - ຜູ້ເປັນພໍ່ຊວນ ໂວໂລເດຍ.

ເຖິງວ່າ ໂວໂລເດຍ ຈະຫາກໍມີອາຍຸໄດ້ເກົ້າປີເທົ່ານັ້ນກໍຕາມ ແຕ່ຜູ້ເປັນພໍ່ກໍເຫັນວ່າການຫລິ້ນຂອງ ໂວໂລເດຍ ຄ້າຍຄັ່ງຜູ້ໃຫຍ່ຢ່າງເອົາຈິງເອົາຈັງ.

ແຕ່ເຖິງຢ່າງໃດກໍດີ, ເດືອນແປດນີ້ ໂວໂລເດຍ ກໍຈະເຂົ້າວິທະຍາໄລແລ້ວ ແລະ ເຂົາກໍບໍ່ແມ່ນເດັກນ້ອຍຄືເກົ່າອີກ. - ຕ້ອງໄດ້ອຳລາ "ເສລີພາບ" ທ້າວໂກລັກເອີ!

- ທ່ານອາຈານ, ເທື່ອຫນ້າເຮົາຈະກິນເຈົ້າ, - ຜູ້ເປັນພໍ່ບອກ. ໂວໂລເດຍ ກໍຊຸກໂຕໜ້ານາຕັນໄວ້.

- ສະຫລາດຫລາຍ, ຄັນຊັ້ນເຮົາກໍຈະສົ່ງໂຕຄັກໆນີ້ແຫລະຂຶ້ນໄປ.

- ແຕ່ເຮົາກໍຈະສົ່ງໜ້າຕີ່ນີ້ຫອບຂຶ້ນໄປສະກັດໜ້າຄັກໆຂອງທ່ານແລະໂຕທ່ານເອົາໄວ້.

ໂວໂລເດຍ ຍ້າຍຫນາກເສີກດ້ວຍຄວາມສະຫລາດ. ກະແສລົມໄດ້ພັດເປັນຮູດມາເຮັດໃຫ້ຊົງຜົມຂອງເຂົາປິວແວ່ງໆ. ສາຍນ້ຳ ໂວນກາ ເຫລື້ອມມຶບມາບ້ອນແສງແດດ.

- ຢູ່ໃນຫ້ອງເຄື່ອງຈັກນີ້ ຈັ່ງແມ່ນມັນຮ້ອນເອົາແທ້ໆ! - ໂວໂລເດຍ ເວົ້າດ້ວຍຄວາມຫົນຫວຍ. - ກິ່ນນ້ຳມູກນ້ຳມັນພຸ່ງອອກມາຂືอຸ້ມເກີນວ່າຢູ່ຍາກ. ຫລຽວເບິ່ງນາຍຊ່າງໃຫ້ກັບເຕົາໄຟ ເບິ່ງເຫື່ອໄຫລຍ້ອຍອາບໂຕ; ບໍ່ມີວິທີໃດຈະຊ່ວຍເຫລືອລາວບໍ?

ຜູ້ເປັນພໍ່ບໍ່ປາກ, ສາຊາ ໄດ້ຫຍັບເຂົ້າມາໃກ້ໆແລ້ວຍົກບ່າຂຶ້ນ:

- ເກົ້າແກ່ເຈົ້າຂອງເຮືອ ກໍບໍ່ໄດ້ຈຳເປັນວ່າຈະໄປຮູ້ຈັກແລະສົນໃຈນຳຄົນກຳກັບເຕົ່າໄພທີ່ເຮັດວຽກລຳບາກກາກກຳຄືແນວນັ້ນ.

- ແຕ່ມັນບໍ່ຍຸຕິທຳຈັກດົນ່າ, - ໂວໂລເດຍ ກ່າວຂຶ້ນ.

- ສ່ວນເລື່ອງຍຸຕິທຳນັ້ນ ຢູ່ໃນໂລກນີ້ຊິບໍ່ທັນມີຫລາຍປານໃດດອກ, - ວ່າແລ້ວສອງອ້າຍນ້ອງກໍແນມເບິ່ງຫນ້າພໍ່.

- ແຕ່ວ່າ ພໍ່, ພໍ່ເປັນຜູ້ປົກປ້ອງຄວາມຍຸຕິທຳ, ພວກລູກຮູ້ດີ! - ສາຊາເວົ້າດ້ວຍຄວາມກະຕືລືລົ້ນ.

ສຽງໂຫວດເຮືອໄດ້ແຜດສຽງດັງກ້ອງໄປທົ່ວບໍລິເວັນລຳແມ່ນ້ຳ ໂວນກາ, ຄ້າຍດັ່ງວ່າ ມັນໄດ້ສົ່ງຄຳຢັ້ຍຢາມກາມຂ່າວບັນດາເຮືອທີ່ແລ່ນສວນສິນຜ່ານກາຍໄປນັ້ນ. ແມ່ນ້ຳໂວນກາ ເລີ່ມມີກະແສຟອງແຮງຂຶ້ນ, ແລະມ້ວນຕົວເປັນຄື້ນຍາວໆຕີກະທົບເຂົ້າໃສ່ຕາຝັ່ງ.

ນັກຮຽນນັດທະຍົມ

ມື້ຫນ້ຳຂອງເດືອນ ແປດ ປີ ໑໙໗໑, ໂວໂລເດຍ ໄດ້ມຸ້ງຫນ້າໄປຍັງໂຮງຮຽນນັດທະຍົມເພື່ອຕຽມເຂົ້າຫ້ອງປີທີຫນຶ່ງ. ເຮືອນຕຶກສອງຊັ້ນ ທີ່ຕັ້ງຢູ່ໃຈກາງເມືອງໃກ້ໆກັບແມ່ນ້ຳ ໂວນກາ ນັ້ນຄືໂຮງຮຽນນັດທະຍົມ ອຳ ໂວໂລເດຍ ຈະໄດ້ຮຽນຢູ່ແຫ່ງນັ້ນ ເປັນເວລາແປດປີ.

ແຕ່ຂັ້ນຕົ້ນ ຕ້ອງໄດ້ສອບເສັງເຂົ້າວິທະຍາໄລເສຍກ່ອນ. ບັນດາຄູຕ່າງກໍນັ່ງລາງທ່າເຄັ່ງຂຶມຢູ່ຕໍ່ຫນ້າໂຕະກຳມະການສອບເສັງ. ສ່ວນນັກຮຽນແມ່ນ ຕ້ອງລໍຖ້າເອີ້ນຊື່ເຂົ້າຫ້ອງຕາມລຳດັບ. ໂວໂລເດຍ ຍ່າງໄປຫາກະດານດ້ວຍຄວາມອົງອາດກ້າຫານ. ເມື່ອບັນດາຄູຖາມ ໂວໂລເດຍ ກໍສາມາດຕອບໄດ້ຢ່າງທັນການ. ເມື່ອບັນດາຄູໃຫ້ເຮັດບົດເຝິກຫັດເລກ, ໂວໂລເດຍ ກໍສາມາດແກ້ໄດ້ຢ່າງວ່ອງໄວ.

ໃນທຸກໆວິຊາທີ່ສອບນັ້ນ ໂວໂລເດຍ ກໍລ້ວນແຕ່ໄດ້ຮັບຄະແນນຫ້າທັ້ງນັ້ນ.

- ໂອໂລເດຍ ນັກຮ້ອງນັດທະຍິນ! ໂອໂລເດຍ ນັກຮ້ອງນັດທະຍິນຂອງພວກເຮົາ! - ທຸກຄົນໃນເຮືອນຕ່າງກໍຮ້ອງໂຮຊົມເຊີຍເພື່ອເປັນການຕ້ອນຮັບ.

ອ້າຍເອ້ຍ ແລະ ບັນດານ້ອງຕ່າງກໍແລ່ນເຂົ້າມາຫາ ເພື່ອອ່ວຍພອນໃຫ້ ໂອໂລເດຍ. ແມ່

ກໍໄດ້ເອົາເຄື່ອງນຸ່ງຊຸດນັກຮ້ອງນັດທະຍິນອັນມີກະດຸມລ້ວນກັນເປັນແຖວ, ເຫລື້ອມເປັນເງົາງາມນັ້ນມາໃຫ້ ໂອໂລເດຍ ນຸ່ງລອງເບິ່ງ. ຊ້ຳ ນ້ຳ ໂອໂລເດຍ ກໍຈະໄດ້ໄປເຂົ້າຮ້ອງທີ່ຫ້ອງ ມ. ຫນຶ່ງ ແລ້ວ. ແມ່ລັກຈອບເບິ່ງໂດຍຜ່ານທາງປ່ອງຢ້ຽມ, ບາດນີ້ ແມ່ໄດ້ມີລູກຊາຍເປັນນັກຮ້ອງນັດທະຍິນສອງຄົນແລ້ວຄື: ສາຊາ, ໂອໂລເດຍ ແລະ ລູກສາວນັກຮ້ອງນັດທະຍິນອີກຜູ້ຫນຶ່ງນັ້ນຄື ອານີອູຕາ. ລັນເວລາໄດ້ຜ່ານໄປ, ພວກລູກຕ່າງກໍໃຫຍ່ກ້າຫນ້າບານຂຶ້ນ.

ຮອດຍາມກາງຄືນ, ຕະກຽງໂຄມພະຍຸ ທີ່ນົກໂກບເກົ່າສີຂາວໄດ້ກົກຫ້ອຍໄວ້ຢູ່ໃນຫ້ອງກິນເຂົ້າຂອງຄອບຄົວ ອຸລີອານົບ. ເດັກນ້ອຍຕ່າງກໍນັ່ງຫຸ້ມລ້ອມໂຕະ ເພື່ອກະກຽມບົດຮຽນສຳລັບມື້ຕໍ່ໄປ. ນີຈີອາ ຫາກໍມີອາຍຸໄດ້ ຣ ປີ ຈຶ່ງບໍ່ມີບົດເຝິກຫັດຄືຫມູ່ດັ່ງນັ້ນ ຈຶ່ງໄດ້ແຕ່ນັ່ງແຕ້ມຮູບກຳປັ່ນລຳຫນຶ່ງມີທໍ່ຄ້ວນ, ແລະຄົ້ນກະແສຟອງຂອງແມ່ນ້ຳ ໂວນກາ. ໂອໂລເດຍ ສາມາດທ່ອງບົດ

ຮຽນໄດ້ຢ່າງໄວວາ; ຍ້ອນວ່າ ແມ່ນມື້ເຂົ້າຮຽນທຳອິດແລະແມ່ນປີທີຫນຶ່ງແດ່, ດັ່ງນັ້ນ ບົດຮຽນ ຈຶ່ງບໍ່ທັນມີຫລາຍພໍປານໃດ. ບາດນີ້ຈະເຮັດຫຍັງ? ໂອໂລເດຍ ໄດ້ເລີ່ມຕົ້ນຜະລິດສິ່ງໃດສິ່ງ ຫນຶ່ງຂຶ້ນດ້ວຍເຈ້ຍ, ໂອໂລເດຍ ເຮັດໂຕຕັກກະແຕນ ແລ້ວແລ່ນເຂົ້າໄປໃນຫ້ອງແມ່ລ້ຽງ ເພື່ອຂໍ ຝ້າຍໄຫມຫຍິບມາຜູກ. ຕອກໆ! - ທັນໃດນັ້ນຕັກກະແຕນກໍເຕັ້ນມາຮອດບ່ອນທີ່ອານີອູຕາຢູ່ ແລ້ວ ກໍເຈີດລີ່ງໄປໃສ່ປີ້ນຄູ່ມື.

- ໂອໂລເດຍ, ຢ່າມາກອນ, ບໍ່ແມ່ນຍາມນ້ອງຊິມາຍອກອີກແລ້ວໃດ! - ໂອໂລເດຍແກ່ເຊືອກ ອອກໄປ, ແລ້ວຈາກນັ້ນ ຕັກກະແຕນຕົວນັ້ນກໍໄດ້ຫາຍໄປ. ຫນ້ອຍຫນຶ່ງຕໍ່ມາພັດມີສຽງຕອກ ອີກ - ໂຕຕັກກະແຕນໄດ້ໂດດຂຶ້ນໄປຢູ່ເທິງປີ້ນຂອງສາຊາ. ຈາກນັ້ນ ສຽງຫົວສະອົກ ສະອ້ອຍກໍໄດ້ດັງຂຶ້ນຢູ່ທາງເບື້ອງຫລັງໂຕະ, ຈົນວ່າຮອດຍາມທີ່ໃຜຜູ້ຫນຶ່ງໄດ້ຈັບຕັກກະແຕນ ໂຕນັ້ນໄວ້ແລ້ວຕັດເຊືອກອອກເພື່ອ ເກວ່ງກ້ຽມ.

- ຄ່ອຍໆແດ່, - ອານີອູຕາເອີ້ນບອກ ໂອໂລເດຍ ແຕ່ ໂອໂລເດຍ ກໍບໍ່ຍອມຟັງ ຍິ່ງຫົວແຮງ ຂຶ້ນກ່ວາເກົ່າຢ່າງມີຊີວິດຊີວາ ຄ້າຍກັບວ່າ ໂອໂລເດຍຍັງຢາກຍອກໄຍອີກຕໍ່ໄປຢູ່.

- ມີຈີອາ, ມີຈີອາ!

- ແບ້ນັ້ນມີເຂົາ, ແບ້ນັ້ນມັກຊີນໃດເດີ, ນັ້ນຊີຊີນຄົນດອນີ້ລະຮູ້ບໍ?

- ຢ່າຊີນນ້ອງໃດ, ຢ່າຊີນນ້ອງ!

ແຕ່ແລ້ວ ເຂົາແບ້ທັງສອງຂ້າງກໍໄດ້ຫຍັບເຂົ້າມາຫາ ມີຈີອາ ຢ່າງຊ້າໆ, ແລ້ວໃນທີ່ສຸດ ກໍມາ ເກີ່ງໂຕຂອງທ້າວນ້ອຍນັ້ນອ່ຫລີ. ມີຈີອາ ທັງຮ້ອງທັງຫົວຂຶ້ນ, ແລະກົ້ງຕົກລົງຈາກຕັ່ງນັ່ງ. ຜູ້ ເປັນພໍ່ອອກມາຢືນຢູ່ປາກປະຕູ.

- ໂອໂລເດຍເຂົ້າໄປຫ້ອງພໍ່ດອນີ້, - ໂອໂລເດຍ ຢ່າງເຂົ້າໄປໃນຫ້ອງເຮັດວຽກຂອງພໍ່ ແຕ່ ທ່າທາງຂຶ້ນນັ້ນກໍຍັງບໍ່ທັນເຊົາເທື່ອ. ຢູ່ໃນຫ້ອງດັ່ງກ່າວ ມີຕູ້ໃສ່ປຶ້ມຢູ່ຕິດຝາລະຫວ່າງກາງປ່ອງ ຢ້ຽມສອງປ່ອງ ມີໂຕະໃຫຍ່, ສ່ວນຢູ່ຝາອີກດ້ານອື່ນ ມີໂຕະນ້ອຍຄືຮູບຫມາກໂຕ່ນຕັ້ງຢູ່ ແລະ ຊາ ລີ ເພື່ອຕ້ອນຮັບແຂກ.

- ນັ່ງລົງນີ້, - ຜູ້ເປັນພໍ່ເວົ້າ, - ກ້າພໍ່ຫນ້ອຍຫນຶ່ງ. ເວົ້າແລ້ວ ເພິ່ນກໍກັບໄປເຮັດວຽກຂອງ

ຕົນຢ່າງນ້ອເນົາ. ສຳລັບຫ້ອງເຮັດວຽກຂອງພໍ່, ໂອໂລເດຍແມ່ນຖືວ່າສຳຄັນ ແລະ ມີຄວາມຈິ່ງ ຈຽມມາຕັ້ງແຕ່ນ້ອຍໆພຸ້ນ. ຜູ້ເປັນພໍ່ເຮັດວຽກຫລາຍທີ່ສຸດ. ເພິ່ນໄປທົ່ວແຂວງ, ໄປຮອດໂຮງ ຮຽນຊົ່ງຕັ້ງຢູ່ຕາມບ້ານນອກ ທີ່ໄກຈາກຕົວເມືອງເປັນຮ້ອຍໆແວກ, ຊົ່ງບໍ່ວ່າຈະເປັນຍາມຫນາວ ອາກາດເຢືອກເຢັນ ກໍຄືລະດູໃບໄມ້ຫລົ່ນຫນົ່ນຫນອງ, ຄົງຈະບໍ່ມີໂຮງຮຽນປະກົມແຫ່ງໃດຢູ່ໃນ ແຂວງ ຊຶມບຸກ ນັ້ ທ່ໍ່ພໍ່ຂອງ ໂອໂລເດຍ ຈະບໍ່ໄປຮອດ, ແລະໄປເພ່ືອຊ່ອຍເຫລືອບັນດາຄູ ເຫລ່ານັ້ນ. ເມ່ືອມາຮອດເຮ່ືອນ, ເພ່ິນກໍຕ້ອງໄດ້ຂຽນບົດລາຍງານ, ສ້າງແຜນການ, ແຕ່ງບົດ ຮຽນ ແລະ ບົດຂ່າວກ່ຽວກັບວິຊາຄູ.

-ນ້ນພໍ່ໄດ້ເຮັດວຽກຂອງພໍ່ສຳເລັດຫມົດແລ້ວ, -ຜູ້ເປັນພໍ່ເວ້ົາ ໃນຂະນະທ່ີຣິບໂຮມແຜ່ນ ເຈ້ຍເຂ້ົາໄວ້ໃນແຟ້ມດ້ວຍຄວາມກະບຸກະຫນອມ, - ເມ່ືອເຮັດວຽກແລ້ວ ກໍສາມາດຫລ້ິນໄດ້, ແຕ່ຢ່າໄປລົບກວນຄົນອ່ືນເຂົາ, - ພໍ່ສ່ັງສອນ ໂອໂລເດຍ ດ້ວຍຖ້ອຍຄຳອັນນ້ີມນວນຫນ້າຟ້ງ. -ເປັນຈ່ັງໃດ, ວຽກງານທຸກຢ່າງຢູ່ທ່ີໂຮງຮຽນຂອງເຈ້ົາ, ທ້າວນັກຮຽນນັດທະຍົມ?

ໂອໂລເດຍ ໄດ້ເລ່ົາສູ່ພໍ່ຟ້ງທຸກຢ່າງ ແຕ່ກໍບໍ່ມ່ີເລ່ືອງໃດເປັນສ່ິງທ່ີພໍເສດອ່ີຫຍ້ງ. ສຽງດົນຕ ດ້ງຄ່ອຍໆມາຈາກຫ້ອງໃຫຍ່. ສອງພໍ່ລູກຈ່ົງພາກັນຍ່າງເຂ້ົາໄປໃນຫ້ອງຢ່າງງຽບໆ. ພາຍໃຕ ຄວາມມ່ືດແຕ່ແຈ້ງແຕ່ຂອງແສງທຽນທ່ີໄຕ້ຢູ່ເທ່ິງ ປ່ືອງໂນແມ່ກຳລ້ງຫລ້ົນ ປ່ືອງໂນ. ແມ່ ຫລ້ົນທຳນອງໄດ້ຢ່າງນ່ອນແນ້ງຄ້າຍກັບວ່າຢູ່ໃນບັນຍາກາດອັນສ່ິດໃສຂອງມ້ືຫນ່ຶງໃນຍາມລະດູ ຮ້ອນ. ໂອໂລເດຍ ໄດ້ນ່ັງຢູ່ແຈຫນ່ຶງກັບພໍ່ແລະໄດ້ຕ້ັງໃຈຟ້ງເພ່ືຢູ່ເປັນເວລາດົນນານ.

ຄວາມເປັນຫ່ວງເປັນໃຍ

ຕອນ ໂອໂລເດຍ ຮຽນຢູ່ຫ້ອງນ້ອຍນ້ັນ, ຜູ້ເປັນພໍ່ມ່ີຄວາມຂ້ອງໃຈຢູ່ບ່ອນວ່າໃນອະນາຄົດຕໍ່ ໄປພາຍຫນ້ານ້ັນ ໂອໂລເດຍ ຈະຊ່ືນເຄ່ືຍກັບການອອກແຮງງານຫລ່ືບໍ? ເພາະ ໂອໂລເດຍ ໄດ້ ສະແດງອອກໃຫ້ເຫ້ັນວ່າຕົນມ່ີຄວາມສາມາດຫລາຍທ່ີສຸດ. ແລະເກ້ັບກຳເອ່ົາສ່ິງໃຫມ່ໆໄດ້ຢ່າງ ທ້ັນການແລະວ່ອງໄວ. ຈາກນ້ັນຜູ້ເປັນພໍ່ຈ່ົງມ່ີຄວາມເຊ່ືອຫ້ັນວ່າ ໂອໂລເດຍສາມາດເຮັດວຽກ

ໄດ້ຢ່າງຫ້າວຫັນ ແລະ ສົ່ງດັ່ງກ່າວບໍ່ເປັນການແປກປະຫລາດ: ຍ້ອນວ່າຄອບຄົວຂອງ ໂວໂລເດຍ ນັ້ນ ຍາມໃດກໍ ກໍ ການອອກແຮງງານ ແມ່ນຫນ້າທີ່ພົ ເສດແລະສໍາຄັນ.

ສາຊາ ຮຽນຈົບອຸດົມ ແລ້ວ ໄດ້ເຂົ້າຮຽນຕໍ່ ທີ່ ມະຫາວິທະຍາໄລສົ ງຮວມວິທະຍາ ທີ່ ນະຄອນ ເປ ແຕກສະບວກ. ກ່ອນຈະໄປ ເປ ແຕກສະບວກ ນັ້ນ, ສອງອ້າຍນ້ອງໄດ້ພາກັນໄປ ທີ່ ເວ ແຍ ດ.

ນັ້ນ ແມ່ນ ຊໍ ຂອງ ແຄມ ຕາ ຝັ່ງ ອັນ ສູງ ຊັນ ທີ່ ຊົມ ນົກ, ຊົ ງ ມີ ນ້ໍ ໄຫ ລ ສູ່ ແມ່ ນ້ໍ ໂອ ນ ກາ. ສອງ ອ້າຍ ນ້ອງ ມີ ຄວາມ ຮັກ ຜູກ ພັນ ຢູ່ ກັ ບ ເຂ ດ ເວ ແຍ ດ ນັ ມ າ ຕັ ງ ແຕ່ ນ້ ອ ຍ ໆ ພຸ ນ. ເ ມ ື ່ ອ ແ ຫ ງ ນ ຫ ນ ້ າ ຂ ຶ ນ ເ ທ ິ ງ ກ ໍ ຈ ະ ສ າ ມ າ ດ ພ ິ ບ ເ ຫ ັ ນ ທ ້ ອ ງ ຟ ້ າ ອ ັ ນ ກ ວ ້ າ ງ ໃ ຫ ຍ ່ ໄ ພ ສ ານ. ແ ລ ະ ເ ມ ື ່ ອ ຢ ື ນ ຢ ູ ່ ເ ນ ິ ນ ສ ູ ງ ແ ຫ ່ ງ ນ ັ ້ ນ ກ ໍ ຈ ະ ສ າ ມ າ ດ ແ ນ ມ ເ ຫ ັ ນ ພ ູ ມ ິ ພ າ ກ ໄ ດ ້ ຢ ່ າ ງ ກ ວ ້ າ ງ ໄ ກ ຈ ົ ນ ສ ຸ ດ ສ າ ຍ ຕ າ.

- ຢ ູ ່ ໃ ນ ໂ ຕ ຄ ິ ນ ເ ຮ ົ າ ນ ີ ້ ອ ້ າ ຍ ມ ັ ກ ອ ີ ່ ຫ ຍ ັ ງ ຫ ລ າ ຍ ກ ່ ວ າ ຫ ມ ູ ? - ໂ ວ ໂ ລ ເ ດ ຍ ກ າ ມ.

- ມ ັ ກ ກ ານ ອ ອ ກ ແ ຮ ງ ງ ານ, ຄ ວ າ ມ ຮ ູ ້, ທ ັ ກ ສ ະ ນ ະ ຊ ີ ວ ິ ດ ແ ລ ະ ຈ ິ ງ ໃ ຈ. - ສ າ ຊ າ ຕ ອ ບ. ຈ າ ກ ນ ັ ້ ນ ກ ໍ ນ ั ่ ง ค ิ ด ຢ ู ่ ຫ ນ ้ ອ ຍ ຫ ນ ึ ่ ง ແ ລ ้ ວ ຈ ึ ่ ง ເ ວ ้ ົ ่ า ต ่ ม. - ต า ม อ ้ า ย ค ิ ด, พ ่ อ ข อ ง พ ว ก เ ร ิ า, เ ผ ิ ่ น ก ็ แ ม ่ น ค ื น ค ื ແ ບ ບ ນ ั ้ ນ ແ ທ ้.

ຄ ำ ເ ວ ้ ົ า ข อ ง ส า ช า ท ี ่ เ ว ้ ົ า ก ่ อ ก ั บ พ ่ , แ ต ่ ล ะ ค ำ น ั ้ น , ม ั น ไ ด ้ ฝ ั ง แ ห ้ น ย ู ่ ใ น ส ่ ว น ล ึ ก ข อ ง



ຫົວໃຈ ໂວໂລເດຍ ຕະຫລອດເວລາ. ພໍ່ໄດ້ອອກໄປປະຕິບັດວຽກງານຕາມໂຮງຮຽນປະກົມຕ່າງໆ ຢູ່ທາງຊົນນະບົດ ຊຶ່ງຂະນະນັ້ ນັນກໍກາຍເປັນເວລາທີ່ຈະກັບມານັບຕັ້ງແຕ່ດົນແລ້ວ, ແຕ່ເປັນ ຫຍັງຈຶ່ງບໍ່ເຫັນພໍ່ກັບມາ.

ໂວໂລເດຍ ນັ່ງຮຽນຫນັງສືຢູ່ໃນຫ້ອງນ້ອຍຂອງຕົນທີ່ເຮືອນຊັ້ນເທິງ, ຫ້ອງກິດກັນໄປນັ້ນ ກໍແມ່ນຫ້ອງຂອງ ສາຊາ ຊຶ່ງເປັນຫ້ອງນ້ອຍເຫມືອນກັນ. ແຕ່ດຽວນີ້ ນັນໄດ້ກາຍເປັນຫ້ອງທີ່ ເປົ່າຫວ່າງແລ້ວ ເພາະສາຊາໄດ້ໄປຮຽນຕໍ່ຢູ່ທີ່ມະຫາວິທະຍາໄລສັງຮວມວິທະຍາຢູ່ ເປເຕກສະ ບວກ ໄດ້ສາມປີແລ້ວ. ສ່ວນ ອານີອູຕາ ນັ້ນກໍກໍາລັງຮຽນຢູ່ໂຮງຮຽນວິຊາສະເພາະຊັ້ນສູງສໍາລັບ ເພດຍິງຢູ່ທີ່ ເປເຕກສະບວກ ເຫມືອນກັນ. ໂວໂລເດຍ ໄດ້ມີຄວາມໂສກເສົ້າຄິດເຖິງ ອານີອູຕາ ແລະ ສາຊາ ຫລາຍທີ່ສຸດໂດຍສະເພາະ ກໍແມ່ນຄິດຮອດ ສາຊາ.

- ຫວນຄຶດຄຶນແບບນັ້ນກໍພໍແລ້ວລະ, - ໂວໂລເດຍ ເວົ້າກັບຕົນເອງ, - ລົງມືເຮັດວຽກດີ ກ່ວາ!

ເມື່ອ ໂວໂລເດຍ ທ່ອງບົດຮຽນໄດ້ເປັນທີ່ຮຽບຮ້ອຍແລ້ວນັ້ນ, ໂວໂລເດຍກໍໄດ້ປະຕິບັດດັ່ງ ດຽວກັບຕອນຍັງນ້ອຍໆຄື ໂວໂລເດຍ ມີຄວາມຊົ່ນເຄີຍໃນການກະກຽມບົ້ມສໍາລັບມື້ໃຫມ່ນັ້ນ

ເຂົ້າໃສ່ກະເປົາຢ່າງຮອບຄອບ. ໂອໂລເດຍມັກອ່ານປຶ້ມຈົນຕະຫລອດຄືນ.

ບັນດາຄູໃນໂຮງຮຽນອຸດົມ ບໍ່ອາດຈະຮູ້ໄດ້ດອກວ່າ ໂອໂລເດຍນັ້ນ ໄດ້ອ່ານຮອດວັນນະກຳຂອງ ໂດໂບຣລີອູບົບ, ປີຊາເຣບ, ເບລິນສະກີ*, ເກກແຊນ ນຳອີກ. ບັນດາປຶ້ມດັ່ງກ່າວ ໄດ້ເວົ້າກ່ຽວກັບຫລາຍສິ່ງຫລາຍຢ່າງທີ່ ໂອໂລເດຍຍັງບໍ່ເຄີຍໄດ້ຟັງ ໃນລະຫວ່າງທີ່ຮຽນຢູ່ໂຮງຮຽນອຸດົມນັ້ນຈັກເທື່ອ; ປຶ້ມດັ່ງກ່າວໄດ້ຊີ້ບອກໃຫ້ຮູ້ເຖິງເຫດການຂອງຄວາມບໍ່ຍຸຕິທຳໃນສັງຄົມ.

... ໂອໂລເດຍ ເມຍເບິ່ງໂມງແລ້ວກໍປິງປຶ້ມລົງ. ຕາຍ! ເຮົາເມົາແຕ່ອ່ານຫຼາຍໂພດ! ຕ້ອງລົງໄປຫາແມ່ກ່ອນ. ໂອໂລເດຍ ມ້ຽນປຶ້ມໄວ້ເທິງໂຕະແລ້ວກໍແລ່ນລົງມາຫ້ອງກິນເຂົ້າຢູ່ຊັ້ນລຸ່ມທັນທີ. ແມ່ບໍ່ໄດ້ຢູ່ບ່ອນນັ້ນ ຕາມລຳພັງຄົນດຽວ, ເພິ່ນມີແຂກມາຢາມ, ເຂົາຜູ້ນັ້ນ ຄືເພື່ອນບ້ານໃກ້ຄຽງ, ຜູ້ຊາຍເປັນເພື່ອນຮ່ວມງານຂອງພໍ່, ເພິ່ນຊື່ວ່າ ອີວານ ຢາໂກວະເລວິດ ຢາໂກວະເລບ. ເພິ່ນໄດ້ແວ່ເຂົ້າມາຫລັ້ນນຳເປັນເວລາຕັ້ງຊົ່ວໂມງແລ້ວ, ທັງນີ້ກໍເພື່ອຢ້ຽມຢາມຖາມຂ່າວໃນຖານະຄົນບ້ານໃກ້ເຮືອນຄຽງກັນ. ເພິ່ນເປັນຄົນຊາວຊູວັດ, ມີໜ້າທີ່ເປັນຜູ້ກວດກາບັນດາໂຮງຮຽນຕ່າງໆສຳລັບຊາວຊູວັດ, ເພິ່ນເປັນຄົນທີ່ມີຄວາມຮູ້ແລະເປັນຜູ້ຫ້າວຫັນໃນການປ້ອງກັນສິດທິຂອງຊົນຊາດນ້ອຍຂອງຕົນ ທີ່ຖືກອຳນາດການປົກຄອງຂອງກະສັດ

*ແມ່ນນັກຮຽນປະຊາທິປະໄຕປະຕິວັດ ໃນເຄິ່ງສັດຕະວັດ ທີ ๑๙.

ລັດເຊຍກໍດີຂຶ້ນເທົ່ງ.

-ອີລີອາ ນິກໂກລາຍເອວິດ ຂອງພວກເຮົານີ້ເປັນຄົນຈິດໃຈສູງ ຍ້ອນມີຄວາມຮັບຜິດຊອບ ຕໍ່ວຽກງານຂອງຕົນ. ລາວບໍ່ພຽງແຕ່ໄດ້ເຮັດວຽກເພື່ອຜົນປະໂຫຍດຂອງປະຊາຊົນເປັນຕົ້ນຕໍ. ອີລີອາ ນິກໂກລາຍເອວິດ ໄດ້ເຮັດວຽກຫລາຍໆຢ່າງທີ່ດີທີ່ສຸດສຳລັບພວກເຮົາ, ກໍຄືບັນດາຊາວ ຊູວັດ ແລະ ຕະຫລອດເຖິງບັນດາຊາວ ນອກດາວ ນຳອີກ. ລາວໄດ້ຈັດຕັ້ງໂຮງຮຽນຂຶ້ນສຳລັບ ພວກເຮົາຢ່າງຫລວງຫລາຍຈົນນັບບໍ່ຖ້ວນ.

-ບໍ່ເຂົ້າໃຈເລີຍວ່າເປັນຫຍັງຜົວຂອງຂ້ອຍຈຶ່ງໄປດົນແທ້. ຂ້ອຍເປັນຫ່ວງລາວຫລາຍ ທີ່ສຸດ! -ແມ່ຕອບ.

ມີສຽງດົນຕີດັງສົ່ງອອກມາຈາກຫ້ອງໃຫຍ່ຄ່ອຍໆ ໂອລີອາ ກຳລັງຫລິ້ນບົດເພງ ຂອງ ຊາຍ ກິບສະກີ. ທຸກຄົນນັ່ງນິ່ງ ແລະ ຟັງດ້ວຍຄວາມສົນໃຈ.

ແຕ່ແລ້ວກໍມີສຽງອັນໃດຫນຶ່ງດັງຂຶ້ນ? ມັນແມ່ນສຽງກະດິ່ງ; ສຽງດັ່ງກ່າວໄດ້ຫຍັບໃກ້ເຂົ້າ ມາຊັກໄຊ້! ໂອໂລເດຍ ຜູດລຸກຂຶ້ນ. ແມ່ກໍຟ້າວລຸກຂຶ້ນເຊັ່ນກັນ, ຂະນະນັ້ນ ປະກົດວ່າໃບຫນ້າ ຂອງແມ່ແຈ່ມໃສຂຶ້ນແລະ ດວງຕາທັງຄູ່ໃສເປັນປະກາຍທັນທີ.

-ໂອໂລເດຍ, ພວກລູກເອີຍ, ພໍ່ສູເຈົ້າມາແລ້ວ!

ແມ່ນແລ້ວ, ມາບາດນີ້ທຸກຄົນຈຶ່ງໄດ້ຍິນສຽງດັງແຈ້ງຂຶ້ນກ່ວາເກົ່າ. ສຽງກະດິ່ງນັ້ນໄດ້ດັງ ກ້ອງຂຶ້ນມາແຕ່ທາງລຸ່ມປ່ອງຢ້ຽມ ແລະ ຢຸດຈົ່ກຢູ່ກັບຂ້າງປະຕູໃຫຍ່. ຈາກນັ້ນ ອີລີອາ ນິກໂກລາຍເອວິດ ກໍກ້າວເຂົ້າມາໃນເຮືອນ, ເພິ່ນນຸ່ງເຄື່ອງຕະລຸບ* ໄວ້ທາງນອກ ແລະສວມເສື້ອນວມໃຫຍ່ ໄວ້ທາງໃນ. ຕາມຄໍ້ວຽກງາຕິດເຕັມໄປດ້ວຍຫິມະ ຕີນຕີ ຂອງພໍ່ເຍັນກະດ້າງດ້ວຍຄວາມຫນາວ.

ທຸກຄົນຕ່າງກໍຊ່ວຍແກ້ເສື້ອໃຫ້ເພິ່ນແລ້ວກໍເອົາເສື້ອສຳລັບນຸ່ງຢູ່ໃນເຮືອນ ແລະ ເກັບປ່ຽນໃຫ້ ທັງຈັດແຈງອາຫານຂຶ້ນໃສ່ໂຕະກິນເຂົ້າ ແລ້ວເຊີ້ອເຊີນພໍ່ນັ່ງລົງ ເພື່ອຮັບປະທານອາຫານ. ອີລີອາ ນິກໂກລາຍເອວິດ ຮູ້ສຶກຕື້ນຕັນໃຈ, ແລະ ເກີດມີຄວາມອົບອຸ່ນຂຶ້ນມາທັນທີ ເພິ່ນເອົາມືລູບ ຫນວດດ້ວຍອາການເກີ່ງກະໆ:

---

*ເຄື່ອງນຸ່ງຊົນຊາດ: ເສື້ອຂົນສັດມີຕີນເສື້ອຍາວໆ.

-ตาย! ຫລັງຈາກການເດີນທາງທີ່ເຕັມໄປດ້ວຍພາຍຸຫິມະ ແລະລົມຫນາວເທົ່ອນີ້ແລ້ວ, ບາດມາຮອດເຮືອນ ຈ່ຳຮູ້ສຶກວ່າຈັ່ງແມ່ນອົບອຸ່ນແທ້! ເມື່ອສົງອຸທານຂຶ້ນເທົ່ອທຳອິດໄດ້ສົ້ນສຸດ ລົງແລະສອງພວງແກ້ມສີແດງຮູນໆຍ້ອນຄວາມຫນາວຈາກຫິມະນັ້ນ ໄດ້ກັບຄືນເປັນປົກກະຕິ, ໂອໂລເດຍ ຈ່ຳເຫັນໄດ້ວ່າພໍ່ມີຄວາມອຶດເມື່ອຍຫລາຍທີ່ສຸດ ກໍເລີຍເກີດມີຄວາມເສົ້າໃຈໄປນຳ. ອີວານ ຢາໂກອະເລວິດ ຢາໂກອະແລບ ເອງ ກໍສັງເກດໄດ້ວ່າ ເພື່ອນຂອງຕົນຜູ້ນີ້ ມີຄວາມຂຸ່ນຂ້ອງຫມອງໃຈເຊັ່ນກັນ.

-ອີວ໋ອາ ນິກໂກລາຍເອວິດ, ມີເລື່ອງບໍ່ສ່ວນໃຈຊັ້ນເບາະ? ຊ່ຳຮ້ອງຮອຍຂອງຄວາມອຸກອັ່ງຢ່າງຫນັກຫນ່ວງ ແລະຂົມຂື່ນດັ່ງກ່າວໄດ້ປະກົດຂຶ້ນຢູ່ເທິງຫນ້າຜາກກວ້າງຂອງ ອີວ໋ອາ ນິກໂກລາຍເອວິດ ນັ້ນເອງ.

-ຈ່ຳຄຶດເອົາເອງເທາະວ່າ, ມີບ້ານແຫ່ງຫນຶ່ງຕັ້ງຢູ່ໃນເຂດພູພຽງຊ່ຳໄກຈາກຊົນບົດ ປະມານ ๑๕๐ ແວກ, ແລະຫ່າງຈາກທາງຫລວງປະມານສາມສິບຫ້າວ ຊ່ຳເປັນບ່ອນກວ້າງໄກຜິບໍ່ທ່ອງຄົນບໍ່ທົນ. ມີໂຮງຮົມນ້ອຍຕັ້ງຢູ່ໃຈກາງຫມູ່ບ້ານ, ດັ່ງນັ້ນ ມັນກໍບໍ່ຕ່າງຫຍັງກັບຕູບທີ່ຕັ້ງຢູ່ໂດດດ່ຽວ. ລົມພັດຜ່ານມາຈາກທົ່ງສີ່ທິດ. ຢູ່ທາງຂ້າງໂຮງຮົມ ມີຫ້ອງນ້ອຍຫ້ອງຫນຶ່ງ, ສຳລັບນາງຄູ, ໃນນັ້ນບໍ່ມີຫລືຫນັງສືພິມອີ່ຫຍັງທັ້ງຫມົດ; ຟືນຊິດັ່ງກໍບໍ່ມີ, ຊິປ່ອຍໃຫ້ມັນເປັນແບບນັ້ນໄດ້ບໍ? ຫມາຍຄວາມວ່າ ບໍ່ໄດ້ກົມຟືນມາສຳຮອງໄວ້ ສຳລັບດັ່ງຝົ່ງ ໃນລະດູຫນາວຊ້ຳ! ສ່ຳທັ້ງຫມົດນັ້ນ ມັນເປັນຍ້ອນວ່າ ນາງຄູບໍ່ຍອມເຮັດຕາມໃຈ, ບໍ່ຍອມກົ້ມຫົວໃຫ້ແກ່ຂຸນນາງທີ່ເປັນພໍ່ບ້ານ. ນາງຄູຖືກເຂົາຂົ່ມຂືນ, ຖືກເຂົາທໍລະມານ, ແຕ່ພັດບໍ່ມີໃຜສາມາດປົກປ້ອງນາງຄູຄົນນັ້ນແຕ່ຢ່າງໃດ...

-ພໍ່ເອີ, ພໍ່ກໍຄວນຈະເປັນຜູ້ປົກປ້ອງນາງຄູຄົນນັ້ນແລ້ວ! - ໂອໂລເດຍ ເວົ້າຂຶ້ນ.

-ໃຫ້ຄວາມປົກປ້ອງເບາະ, ພັດປະຫນີເຂົາມາ; ສ່ວນນາງຄູຂອງພວກເຮົາພັດຢູ່ພຸ້ນພຽງຄົນດຽວ ເພື່ອຕ້ານຢູ່ກັບຂຸນນາງຜູ້ນັ້ນ. ຫມົດທັ້ງບ້ານນັ້ນແມ່ນຕົກຢູ່ໃນກຳມືຂອງມັນ. ຊາວນາແມ່ນບໍ່ມີສິດຫຍັງຫມົດ. ໄຮ່ນາຈະເຮັດນັ້ນມີຫນ້ອຍຢູ່ແລ້ວແຕ່ພັດນອນຢູ່ໃນກຳມືຂອງພວກຂຸນນາງແລະເຈົ້າທີ່ດິນເຫລົ່ານັ້ນທັ້ງຫມົດ. ພໍ່ຢ່າງເຂົ້າເຂດກາງລະດູຫນາວເທົ່ານັ້ນ

ບັນດາຊາວນາຜູ້ທຸກຍາກກໍຈຳເປັນຕ້ອງໄດ້ນັ່ງຢູ່ເຮືອນລ້ຳໆແລະບໍ່ມີຮອດເຂົ້າຈີ່ຈະກິນ.

ອີວ໋ອາ ນົກໂກລາຍເອ໋ວ ຍ່າງເລາะໄປຕາມຫ້ອງເຮືອນ, ພ້ອມທັງແກ້ກะດຸມຄໍເສື້ອອອກ ນຳ; ຕອນນີ້ ເພິ່ນຮູ້ສຶກອຶດອັດຢູ່ໃນໃຈ; ເພาะເວ໋ວຕາຂອງເພິ່ນໄດ້ສะແດງໃຫ້ເຫັນເຖິງຄວາມ ໂສກເສົ້າຫ່ວ່ມເຫງົ້າຢ່າງຈะแจ້ງ.

-ອ້າຍເອີ໋ຍ, -ນາອ໋ອາ ອາເລັກຊັ້ງໂດຣບอะນา ເວົ້າຂຶ້ນ, ດ້ວຍຄວາມເປັນຫ່ວງເປັນໃຍ, -ອ້າຍເມ໋ອຍຫລາຍແລ້ວ, ອ້າຍຄວນจะพักผ่อนแด่.

-ບໍ່ເປັນຫຍັງດອກນา, ນาแฌนกา ເອ໋ີ, ຂ້ອຍຍັງแขงแรงຫັ້ນแก่ນຄືກັບຕົ້ນບົກຕົ້ນ ນັ້ນນັ້ນแล้ว. -ອີ໋ວ໋ອา ນົກໂກລາຍເອ໋ວ ເວົ້າแกมຍอกໄຍ. -ແລะຢู่ອ້ອมๆแกอນັ້ນຍັງມີຕົ້ນ ບົກນ້ອຍ ທີ່ພอมเติบใหญ่เกิดຢู่ຢ่างหลอງหลาย.

ເพิ่นໂອບกอดเอ๋า ໂอโลเกย. ໂอโลเกย ได้ใหญ่เติบโตขึ้นแล้ว. ໂอโลเกย ມີโมน แก้มสูงๆ ແລะ ມີหน้าผากกว้าง ค้ายคืกับผู้เป้นพ่. ความกะหนอมรักแพงของผู้เป้น พ่ันั้น ได้เร้กใช้ ໂอโลเกย รู้สึกตื้นตันใจ. แต่ ໂอโลเกย พักเป้นคินบ่มักสะแดงออก ແລะเพื่อเป้นการตอบสะหนองต่อความรักของพ่ันั้น, ໂอโลเกยได้แต่ยิ้มยู่ย่างมีกๆ.

ພ

ยามพักหนาวใก้จะหมดแล้ว อายีอา ได้จัดแจงกองเคื่องของเพื่อกับไปรองต่ ที่โรงรองชั้นสูง สำลับเพดยีา ที่ เปแตกสะบอก อีก. อายีอา เมื่อพักหนาวที่บ้าน, ส่วน สาลา นั้นบ่ได้กับมา เพาะว่าการเดินทางแบบนี้สิ้นเปลืองเงินคำ ແລะเสียเวลา หลายที่สุด. ย้อนคิดฮอดบ้านหลาย, ดังนั้น อายีอา จึ่งมีความฉุนฉิมยู่กับสิ่งเล็กๆ น้อยๆที่มีอยู่ในเรือนติน. พิเสดนางมักนั่งแยงเบิ่งดอกไม้และต้นไม้นางอุ๋นิด ยู่ในห้อง กินเข้า ແລะ ห้องรับแขกนั้น. ส่วน ปีอานโน, ผอมี้นอกจากแม่ที่หลิ้นได้, ยังมีน้องสาวโอวีอา ที่หลิ้นได้ด้วยสิ้นอ่องแล้ว. เม็ดทีมะสีขาวกะจ่างที่ปีอติกาวิง ฉุ่ยอา

ຍັງມີດ້ານນອກນັ້ນ ໄດ້ເຮັດໃຫ້ທ່ວສວນຂາວພຸເຕັມໄປຫມົດ. ຕະຫລອດຍາມພັກຫນາວນີ້ ໂວໂລເດຍ ແມ່ນບໍ່ໄດ້ຫນີອອກຈາກຂ້າງເອື້ອຍ ຈັກຫນ້ອຍເລີຍ.

ສອງເອື້ອຍນ້ອງໄດ້ພາກັນມານັ່ງຢູ່ເທິງຕັ່ງຍາວທີ່ຫ້ອງຮັບແຂກ, ໂດຍບໍ່ຍອມໄຕ້ຫນາວ. ບາງຄັ້ງກໍມີ ໂອລີອາ ມານັ່ງຟັງນໍາກັນ. ນາງກໍແມ່ນຜູ້ຫນຶ່ງທີ່ມັກຟັງ ອາຍີອາເລົ່າເລື່ອງກ່ຽວກັບ ເປ ແຕກສະບວກ, ກ່ຽວກັບສະພາບສະມາຄົມຊາວຫ້ອງກິ່ນດຽວກັນ ແລະ ການປະຊຸມນຶດຕ່າງຂອງ ນັກສຶກສາຢ່າງເອົາໃຈໃສ່ຄືກັນ. "ປານໃດເດ, ພວກເຮົາຈຶ່ງຈະໄດ້ໄປຮຽນຢູ່ ເປແຕກສະບວກ?".

- ໂວໂລເດຍ ແລະ ໂອລີອາ ສ້າງຄວາມຫວັງເອົາໄວ້ໃນໃຈ.

ມື້ນັ້ນ, ແມ່ນວັນທີ ໑໘ ເດືອນມັງກອນ ປີ ໑໙໙໖, ຕາມທໍາມະດາແລ້ວເອື້ອຍນ້ອງພວກເຂົາມັກຈະມານັ່ງໂອ້ລົມກັນຢູ່ໃນຫ້ອງທີ່ມິດງຽບສະຫລົວນັ້ນເປັນປະຈໍາ.

- ດື່ມນໍ້າຊາກັນເທາະພວກລູກ! - ແມ່ເອີ້ນບອກ.

ພວກລູກຕ່າງກໍລຸກຂຶ້ນແລ້ວເຂົ້າໄປໃນຫ້ອງອາຫານ. ຍາມຢ່າງຜ່ານບ່ອນເຮັດວຽກຂອງພໍ່ນັ້ນ ແຕ່ລະຄົນຕ່າງກໍຢ່າງເຢັ້ຍຢ້ໍ ລ້ອມຮະແວ້ມ ເພາະມັນເປັນນິດໄສມາຕັ້ງແຕ່ນ້ອຍໆພຸ້ນ.

ພໍ່ກໍາລັງຫຍຸ້ງຍາກຄາວຽກຫລາຍ. ເພິ່ນໄດ້ຂຽນບົດລາຍງານປະຈໍາປີຂອງແຕ່ລະໂຮງຮຽນ. ໂອລີອາ ນິກໂກລາຍເອວິດ ນັ່ງຂຽນຕັ້ງແຕ່ເຊົ້າຈົນຮອດເດິກ, ແຕ່ລະມື້ ໄດ້ມີບັນດາຜູ້ກວດກາ ແລະບັນດາຄູຕ່າງໆມາປຶກສາຫາລືກ່ຽວກັບວຽກງານຕົວຈິງທີ່ມີຢູ່ໃນແຜນການ ແລະ ພິຈາລະນາກ່ຽວກັບຜົນງານຂອງພວກນັກຮຽນຢູ່ຕະຫລອດ.

ເມື່ອແນມຜ່ານທາງປະຕູທີ່ເປີດກ້ວາງຢູ່ນັ້ນ, ໂວໂລເດຍ ຈຶ່ງສາມາດແນມເຫັນຫລັງອັນກ້ຽງຂອງພໍ່ໄດ້ຢ່າງເຕັມຕາ. ເພິ່ນນັ່ງແນະໃສ່ກັບຂ້າງໂຕະ, ພ້ອມທັ້ງເອົາມືຄໍ້ໃສ່ເທິງຂະຫມັບ. "ພໍ່ເພິ່ນເຮັດວຽກຢ່າງບໍ່ເສຍດາຍເຫື່ອແຮງຈັກຄັ້", - ໂວໂລເດຍ ຄຶດໃນໃຈ.

ແຕ່ພາຍໃນຫ້ອງກິນເຂົ້າໄດ້ເຕັມໄປດ້ວຍຄວາມອົບອຸ່ນ ແລະ ເບີກບານຢ່າງເຕັມປ່ຽມ, ຫມໍ້ຕົ້ມນໍ້າ ຊາໂມວາ ທີ່ຕັ້ງໄວ້ເທິງໂຕະກິນເຂົ້ານັ້ນກໍເລີ່ມຟົດແລະດັງບ໊ວະໆອອກມາ. ບັນດາຄວາມຄຶດກັ້ງວົນຕ່າງໆກໍໄດ້ຄ່ອຍໆສະຫລາຍລົງໄປແດ່ແລ້ວແລະ ຈິດໃຈກໍກັບກາຍມາມີຄວາມເບີກບານຄືນຄືເກົ່າ. ພວກເຂົາເຈົ້າໄດ້ພາກັນເວົ້າກັບ ອາຍີອາ ກ່ຽວກັບຊີວິດນັກສຶກສາໃນອານາຄົດ

ຂອງ ໂອໂລເດຍ ແລະເວົ້າວ່າ ສາຊາ ອາດໄດ້ເປັນນັກ ວິທະຍາສາດກໍເປັນໄດ້: ສາຊາ ເປັນຄົນ ມີຄວາມສາມາດ ແລະ ມີພື້ນຖານຄິບກ້ວນພໍທີ່ຈະເປັນນັກວິທະຍາສາດໄດ້. ສ່ວນ ໂອລີອາ ອາດ ຈະເປັນນັກດົນຕີ - ນາງເປັນຜູ້ຫລົ້ນ ປີອານໂນໄດ້ເກ່ງທີ່ສຸດ! ດ້ວຍວ່ານາງມີທັດສະນະຄຸຫນັ່ນ ພາກພວນ ແລະມີຈິດໃຈສູ້ຊົນ, ດັ່ງນັ້ນ ໂອລີອາ ອາດຈະກາຍເປັນນັກຫລົ້ນດົນຕີໄດ້ເກ່ງກາດ ຢ່າງນະທັດສະຈັນກໍເປັນໄດ້! ແມ່ໄດ້ຍົກຈອກນ້ຳຊາອັນປຸກໆ ເຂົ້າໄປໃນຫ້ອງຂອງພໍ່ແລ້ວ ກໍນາ ນັ່ງຫຍິບເສ່ອຟັງພວກລູກລົມກັນຢູ່ທາງຂ້າງຫນ້ຕົ້ມນ້ຳ ຊາໂນວາ. ຄາວຫນຶ່ງຕໍ່ມາ ພໍ່ໄດ້ຍ່າງ ອອກມາຈາກຫ້ອງເຮັດວຽກແລະໄດ້ມາຢືນຢູ່ຊ່ຶປາກປະຕູ. ເພິ່ນໄດ້ແນມເບິ່ງພວກລູກທ້ງຫນົດຢູ່ ດົນເຕີບແລ້ວກໍຫລົບເຂົ້າໄປໃນຫ້ອງຄືນ.

"ພໍ່ບໍ່ໄດ້ເຫມືອນເດີມ",-ໂອໂລເດຍຮູ້ສຶກເຫມືອນກັບວ່ານີຫຍ້ງສງບແທງເຂົ້າໃນຫົວໃຈ.

-ແມ່ຊິເຂົ້າໄປຫາພໍ່ອີກກ່ອນ, -ມາຣິອາ ອາເລັກຊັງໂດຣບວະນາ ໄດ້ເວົ້າຂຶ້ນໃນທັນໃດ. ແມ່ນ້ຽນເຄື່ອງກັກເສ່ອໄວ້ແລ້ວ ກໍພ້າວເຂົ້າໄປໃນຫ້ອງເຮັດວຽກຂອງພໍ່.

-ພວກລຸກ! ອາຍີອາ, ໂອໂລເດຍ ເອີຍ! -ສຽງຮ້ອງດ້ວຍຄວາມຕົກໃຈຂອງແມ່ໄດ້ດັງຂຶ້ນ.

ພໍ່ໄດ້ນອນຢຽດຢູ່ເທິງຕ່ຽງນອ ດວງຕາທ້ງຄູ່ເລ່ືອນລອຍ, ຕົນໂຕຂິດໂຂ ແລະສັ່ນເຊັນຢ່າງ ແຮງ. ພວກລູກພາກັນໄປເອ້ີນເອົາຫມໍ. ມີສຽງປິດເປີດປະຕູຢູ່ຕະຫລອດເວລາ. ສຽງຮ້ອງໄຫ້ ສຽງຈົ່ມພຶມພໍ່ດ້ວຍຄວາມ ຢ້ານກົວແລະເປັນຫ່ວງຂອງໃຜຜູ້ຫນຶ່ງໄດ້ດັງກ້ອງກ້ວານຂຶ້ນ.

ຫນຶ່ງຊ່ົວໂມງຕໍ່ມາ, ພວກລູກໄດ້ຂາດພໍ່ໄປເສຍແລ້ວ. ໂລງສົບຂອງພໍ່ນ້ັນ ກ໊ືກວາງໄວ້ຢູ່ ທາງກາງຫ້ອງໃຫຍ່. ຕະຫລອດທ້ງສາມມ້ືສາມຄືນ ແມ່ບໍ່ຍອມອອກຫ່າງຈາກໂລງສົບນ້ັນໄປ. ພວກລູກສາວນ້ອຍຕ່າງກໍພາກັນຮ້ອງໄຫ້ສະອ໊ືກສະອ້ືນ, ນ້ຳຕາໄດ້ເຮັດໃຫ້ ໂອໂລເດຍຮູ້ສຶກອັດ ອ້ັນຕັນໃຈ ແຕ່ ໂອໂລເດຍ ກໍໄດ້ພະຍາຍາມອົດກ້ັນເອົາໄວ້. "ພໍ່ເອີຍ, ພໍ່ທີ່ຮັກເອີຍ! ພໍ່ບໍ່ມ໊ືດ ຢູ່ນໍາລູກອີຫລືແລ້ວຫວະ? ເຮັດແນວໃດ ພວກລູກຈ໋ືງຈະຢູ່ໂດຍປາສະຈາກພໍ່ໄດ້?".

ບັນດາຜູ້ຄົນທ້ງຫລາຍ ຕ່າງກໍໄດ້ມາສະແດງຄວາມເສ້ົາສະລົດໃຈນໍາ ອີລີອາ ນິກໂກລາຍ ເອ໋ວິດ. ທ່ານການ໋ຜູ້ຄົນດັ່ງກ່າວ ກໍມີບັນດາຄູ, ນັກຮຽນ ແລະ ເພ່ືອນຝູງຢ່າງຫລວງຫລາຍ. ໂອ ໂລເດຍ ເຄີຍຮູ້ວ່າພໍ່ຂອງຕົນເປັນຜູ້ມີຫນ້າທ່ີສໍາຄັນ ແລະເປັນຜູ້ທ່ີສ້າງຜົນປະໂຫຍດໃຫ້ແກ່ປະ

ຊາຊິນ. ແຕ່ຕົກມາຮອດຕອນນີ້, ໂອໂລເດຍ ຍິ່ງເຂົ້າໃຈແຈ້ງຕໍ່ຜູ້ເປັນພໍ່ຕື່ມອີກວ່າ ພໍ່ໄດ້ເຮັດຫລາຍສິ່ງຫລາຍຢ່າງຊຶ່ງລ້ວນແຕ່ເປັນການຕໍ່ຫຸກໆຄົນນັ້ນຄືແນວໃດ!

ສົບຂອງ ອີລີອາ ນົກໂກລາຍເອວົດ ໄດ້ຖືກຝັງໃນສັ່ນທີ່ນິອາກາດເຢືອກເຢັນແຕ່ວ່າແຈ່ມໃສ. ບັນດາຕົ້ນໄມ້ ຖືກປົກຄຸມໄປດ້ວຍຫິມະແລະຢືນຕັ້ງຕົວຢູ່ຢ່າງງຽບໆ. ຝູງຫມູ່ນົກທີ່ນິຂົນສີແດງງາມຕ່າງກໍບິນເຈິດຈາກຕົ້ນນີ້ ໄປຫາຕົ້ນນັ້ນຢ່າງໄຮ້ທິດທາງ. ບັນດາງ່ຳໄມ້ໄດ້ເອັ່ນໂຍບລົງ ແລະ ເຮັດໃຫ້ຫິມະສີຂາວຄຸລົງດິນ. ຝູງຄົນຈຳນວນຫນຶ່ງໄດ້ພາກັນຫາມໂລງສົບດັ່ງກ່າວ. ສ່ວນບັນດາລູກສິດຂອງ ອີລີອາ ນົກໂກລາຍເອວົດ ເປັນຜູ້ຖືພວງມາລາຢ່າງອອກຫນ້າ.

"ຂໍລາພໍ່ທີ່ຮັກຈົນຊົ່ວນິລັນດອນ! - ໂອໂລເດຍ ຄຶດດ້ວຍຄວາມຂົມຂື່ນຢູ່ໃນໃຈ. - ຂໍຂອບໃຈໃນທຸກສິ່ງທຸກຢ່າງຈາກພໍ່".

ວັນທີ່ຫນຶ່ງເດືອນສາມ

ແຕ່ຄາວພໍ່ຍັງມີຊີວິດຢູ່ນັ້ນ, ອີວານ ຢາໂກວະເລວົດ ຢາໂກວະແລບ ເຄີຍໄດ້ນຳເອົາຊາວຫນຸ່ມຊາວ ຊູວັດ ຜູ້ຫນຶ່ງ ຊື່ວ່າ ໂອໂຄດຍົກົບ ມາແນະນຳ ໃຫ້ ໂອໂລເດຍ ຮູ້ຈັກ.

- ເຈົ້າຄວນເອົາໃຈໃສ່ສຶກສອນໃຫ້ລາວຮູ້ແລະກໍ່ໄດ້ກ່ຽວກັບວິຊາຮຽນຕ່າງໆຂອງຊັ້ນອຸດົມ ຊຶ່ງມີໄລຍະຍາວ ເກົ່າແປດປີນັ້ນໃຫ້ໄດ້ຫມົດ, - ຢາໂກອະແລບ ເວົ້າ. - ຈາກນັ້ນ ລາວຈຶ່ງຈະສາມາດເຂົ້າຮຽນຕໍ່ທີ່ມະຫາວິທະຍາໄລໄດ້. ປະຊາຊົນຊາວຊູວັດ ມີຄວາມຕ້ອງການ ຜູ້ທີ່ມີຄວາມຮູ້ຫລາຍທີ່ສຸດ.

ໂວໂລເດຍ ຮັບຄຳວ່າຈະທຳການຊ່ວຍເຫລືອ ໂອໂຄດຍີກົບ, ດ້ວຍການສອນຢ່າງບໍ່ຄິດຄ່າ, ຍ້ອນວ່າຄອບຄົວຂອງ ໂອໂຄດຍີກົບ ນັ້ນມີຫລາຍຄົນແດ່, ອີງໃສ່ເງິນເດືອນທີ່ລາວໄດ້ຮັບນັ້ນ ມັນກໍຫນ້ອຍເຕັມທີ, ດັ່ງນັ້ນ ຕ້ອງໄດ້ຍອມອົດຍອມຈ່ຽຈຶ່ງຈະພໍ. ພາຍຫລັງທີ່ ອີລີອາ ນິກໂກລາຍເອົາ ໄດ້ເກົ່າແກ່ກໍ່ໄປແລ້ວ, ໂວໂລເດຍ ກໍ່ຍັງພະຍາຍາມຊ່ວຍເຫລືອ ໂອໂຄດຍີກົບ ໃນການຮ່ຳຮຽນ ເຫມືອນກັບວ່າເພື່ອເປັນການລະນຶກເຖົ້າພໍ່ຜູ້ຊຶ່ງໄດ້ເອົາໃຈໃສ່ຕໍ່ບັນດາໂຮງຮຽນຂອງຊົນຊາດ ຊູວັດເປັນຢ່າງດີ, ແລະໄດ້ກອກເຫກຳລັງວ້າຊາອອກເພື່ອຊ່ວຍເຫລືອບັນດາໂຮງຮຽນເຫລົ່ານັ້ນ.

- ຄົນຜູ້ທີ່ມີຄວາມຍິ່ງໃຫຍ່ນັ້ນ, ແມ່ນຄົນທີ່ມີຊີວິດຢູ່ເພື່ອນຳພາປະໂຫຍດມາໃຫ້ແກ່ປະຊາຊົນ, - ໂອໂຄດຍີກົບ ຫວນຄິດເຖິງ ອີລີອາ ນິກໂກລາຍເອົາ.

ໂວໂລເດຍ ຍາມໃດກໍ່ຄິດແຕ່ວ່າ: ເຮັດແນວໃດຈຶ່ງຈະສາມາດມີຊີວິດຢູ່ເພື່ອນຳພາປະໂຫຍດມາໃຫ້ແກ່ປະຊາຊົນໄດ້? ຍ້ອນຄິດວ່າ ເພື່ອພາປະໂຫຍດຂອງປະຊາຊົນນັ້ນແລ້ວ ໂວໂລເດຍ ຈຶ່ງຮັບສອນໃຫ້ແກ່ ໂອໂຄດຍີກົບ, ຜູ້ຊຶ່ງເປັນລູກຫລານຂອງຊາວກະສິກອນນັ້ນ, ຍັງຫຍັງອີກນໍ? ຂະນະນີ້ ໂວໂລເດຍ ກຳລັງຮຽນຢູ່ໂຮງຮຽນອຸດົມປີສຸດທ້າຍນັ້ນ, ເຂົາຈຶ່ງເລີ່ມມີຄວາມເຂົ້າໃຈວ່າຜູ້ ທີ່ປົກປ້ອງ ປະຊາຊົນທີ່ແທ້ຈິງນັ້ນຄື ຜູ້ທີ່ທຳການປະຕິວັດ. ແຕ່ ໂວໂລເດຍ ພັດ ຍັງບໍ່ທັນຮັບຮູ້ຢ່າງຄັກແນ່ວ່າ ຕ້ອງດຳເນີນການຕໍ່ສູ້ປະຕິວັດນັ້ນຄືແນວໃດ. ໂວໂລເດຍ ບໍ່ມັກ ທີ່ສຸດອັນລະບົບບ້ຽບປາບປາມຂອງໂຮງຮຽນອຸດົມ. ໂວໂລເດຍ ບໍ່ມີຄວາມເຊື່ອຖືທາງສາສະນາແລະໄດ້ເອົາໄມ້ກາງເຂນທີ່ຕົນຫ້ອຍຢູ່ຄໍນັ້ນແກວ່ງຖິ້ມ. ໂວໂລເດຍ ກຳລັງຄົ້ນຄິດກ່ຽວກັບເລື່ອງສັງຄົມທີ່ບໍ່ຍຸຕິທຳນີ້ຫລາຍທີ່ສຸດ: ຈຳພວກຄົນຮັ່ງ, ນ້ຳກົນນອນລ້າ, ສ່ວນພວກທີ່ທຸກຍາກເຖົ້າເຮັດວຽກລອດລົ້ມລອດຕາຍ ກໍ່ຍັງຫນີບໍ່ພົ້ນຄວາມທຸກຢູ່ຄືເກົ່າ. ອັນນັ້ນບໍ່ຄືຄວາມຍຸ

ຕີທຳ? ໂອໂລເດຍ ບໍ່ມັກຮອດກະທັ້ງກະສັດລັດເຊຍ. ຢູ່ຫ້ອງປະຊຸມຂອງໂຮງຮຽນອຸດົມ, ເພິ່ນ ໄດ້ແຂນຮູບ ອາເລັກຊ້ງ ກະສັດລັດເຊຍອົງທີ ມ ແຜ່ນບັກໃຫຍ່, ສູງຕັ້ງແຕ່ພື້ນເຮືອນຈົນຄຸ ເພດານ. ກະສັດລັດເຊຍຜູ້ມີໃບຫນ້າເບ່ເມ້ເຍ້, ຫນ່ວຍຕາສີຂາວປົນຟ້າຄ້ຳຕາແມວ, ທ່າທາງ ເຊີ່ງຊ້າງ. ກະສັດລັດເຊຍ ນອກຈາກເປັນຜູ້ທີ່ໂຫດຮ້າຍສາມານທີ່ສຸດແລ້ວ ຍັງເປັນເຈົ້າຈອມ ພະເດັດການ. ເຮັດຈັ່ງໃດນໍ ຈຶ່ງຈະຕໍ່ສູ້ກັບເຂົາໄດ້?

ສາຊາ ຢູ່ ເປແຕກສະບວກ ພຸ້ນ ກໍໄດ້ຄິດເຖິງເລື່ອງນີ້ຫລືບໍ່? ຫລືວ່າ ສາຊາ ບໍ່ສົນໃຈ ກັບ ການເມືອງ, ແລະ ມີແຕ່ຄົນຄ້ວາວິທະຍາສາດເທົ່ານັ້ນບໍ? ໂອໂລເດຍ ບໍ່ສາມາດຮູ້ໄດ້. ເຫດການ ທີ່ມັນໄດ້ເກີດຂຶ້ນທີ່ ເປແຕກສະບວກ, ໃນມື້ວັນທີ ຫນຶ່ງ ເດືອນສາມ ປີ ໑໙໙໗ ນັ້ນ, ສຳລັບ ໂອໂລເດຍ, ແມ່, ຕະຫລອດອາຍີອາ ຊຶ່ງເປັນຄົນທີ່ສະນິດຮັກແພງທີ່ສຸດກັບ ສາຊາ, ແລະເຄີຍ ພົບກັບສາຊາທີ່ ເປແຕກສະບວກ ຢູ່ເລື້ອຍໆນັ້ນ, - ບໍ່ຕ່າງຫຍັງກັບສາງພ້າແຜດຮ້ອງທີ່ດັງກ້ອງ ໄປທົ່ວທ້ອງຟ້າອັນສະຫວ່າງສະໄຫວນັ້ນ.

ໃນພາກຮຽນຊົ່ວໂມງສຸດທ້າຍ, ບັນດານັກຮຽນຫ້ອງ ແປດ ໄດ້ຕິດຕາມຟັງນາຍ ຄູອະ ທິບາຍບົດຮຽນ. ສາງລະຄ້ັງສັນຍານເລີກຮຽນໄດ້ດັງຂຶ້ນ. ແຕ່ແລ້ວໃຜຜູ້ຫນຶ່ງ ກໍໄດ້ມາຍືນກ້າ ໂອໂລເດຍ ຢູ່ທາງນອກຫ້ອງຮຽນ.

ນາງຄູ ເວຣາ ວາຊິລີເອບນາ ກາຊະກາດນ໋ອາ ເປັນເພື່ອນທີ່ສະນິດສະຫນິມກັນກັບພໍ່, ໄດ້ ສັ່ງໃຫ້ ໂອໂລເດຍ ໄປຫາ. ໂອໂລເດຍ ຈຶ່ງແລ່ນໄປຫາດ້ວຍຄວາມຟ້າວຟັ່ງ.

ເວຣາ ວາຊິລີເອບນາ ມີສີຫນ້າຈິດໜ້ານຂະນະທີ່ຍື່ນຈົດຫມາຍໃຫ້ແກ່ໂອໂລເດຍ.

ຈົດຫມາຍມາແຕ່ ເປແຕກສະບວກ. ໃນຈົດຫມາຍໄດ້ບອກຂ່າວກ່ຽວກັບເຫດການທີ່ມັນ ໄດ້ເກີດຂຶ້ນໃນມື້ວັນທີຫນຶ່ງ ເດືອນສາມ, ຄືນັກສຶກສາກຸ່ມຫນຶ່ງລອບສັງຫານກະສັດລັດເຊຍ ອາເລັກຊ້ງ ອົງທີສາມ. ແຕ່ການລອບສັງຫານນັ້ນບໍ່ປະສົບຜົນສຳເລັດ. ນັກສຶກສາທັ້ງຫມົດຕ່າງ ກໍຖືກຈັບກຸມ. ໃນນັ້ນ ມີທ້າວ ອາເລັກຊ້ງ* ອຸລີອານົບ ຮວມຢູ່ນຳດ້ວຍ.

ພໍແຕ່ອ່ານຈົດຫມາຍຈົບ, ໂອໂລເດຍ ກໍໄດ້ແຕ່ຢືນຊຶມຢູ່ກັບບ່ອນດິນເຕີບແລະປາກບໍ່ອອກ

---

*ຫມາຍເຖິງສາຊາຊຶ່ງແມ່ນຊື່ຫລິ້ນຂອງອາເລັກຊ້ງ.

ພໍຄວາມ. ສາຊາ! ອ້າຍຂອງເຮົາ. ສາຊາຜູ້ສະຫລາດສະຫລວ, ຜູ້ທີ່ເຕັມໄປດ້ວຍຄວາມສາມາດ ຂອງພວກນ້ອງ, ສາຊາຜູ້ມີ ຮ່າງຄົງບອບບາງ, ມີດວງຕາໃຫຍ່ ແລະທັງເປັນຜູ້ທີ່ມັກມີນິດໄສເອື້ອ ອາລີ. ຈະມີເຫດຮ້າຍອັນໃດເກີດຂຶ້ນແກ່ອ້າຍອີກນໍ?

ຕ້ອງເຂັ້ນແຂງເພື່ອແມ່. ຈະເວົ້າສູ່ແມ່ຟັງຈັ່ງໃດດີ ກ່ຽວກັບເລື່ອງສາຊາ ຖືກຈັບເທື່ອນີ້? ແລະ ອາຍີອາ ກໍຖືກຈັບເຊັ່ນດຽວກັນ.

ພໍ່ຫາກໍເສຍຊີວິດໄປໄດ້ປີປາຍເທົ່ານັ້ນ. ເຄື່ອງນຸ່ງສີດໍາທີ່ແມ່ໄວ້ອາໄລກໍບໍ່ທັນໄດ້ເລີກອອກ ເທື່ອ. ແມ່ບໍ່ໄດ້ຮ້ອງໄຫ້, ບໍ່ໄດ້ສະແດງຄວາມເຈັບປວດແຕ່ຢ່າງໃດ, ແຕ່ເພິ່ນໄດ້ຈ່ອຍລົງຢ່າງຜິດ ປົກກະຕິ. ແມ່ນຸ່ງເສື້ອຄຸມຍາວສີດໍາ, ທ່າທີເຄັ່ງຂຶມ ແລະຊຶງທຸກໃຈ, ເຮັດໃຫ້ ໂອໂລເດຍ ເຫັນ ແລ້ວເກີດມີຄວາມກັງວົນໃຈໄປນໍາ. ແມ່ສອນພວກລູກວ່າ ຄວນເຮັດວຽກເຮືອນແນວໃດ, ແລະ ຄວນດໍາລົງຊີວິດແບບໃດ. ແລ້ວແມ່ກໍໄດ້ຈັດແຈງກຽມເດີນທາງໄປຍັງ ເປແຕກສະບອກ. ແຕ່ ຕ້ອງໄດ້ໄປຊອກຫາລົດມ້າ ເພື່ອໄປຍັງ ເຊີຊານ ໂດຍດ່ວນ ແລະຊອກຫາເພື່ອນຮ່ວມທາງໄປນໍາ, ເພາະວ່າຕັ້ງແຕ່ ຊຶມບຽກ ໄປຫາ ເຊີຊານ ບໍ່ມັກມີລົດຫລວເປັນປະຈໍາ.

ໂອໂລເດຍ ໄດ້ໄປສອບຖາມເຮືອນນັ້ນເຮືອນນີ້, ເພື່ອຢາກຊາບວ່າມີຜູ້ໃດເຂົາຈະເດີນທາງ ໄປຍັງ ເຊີຊານ ເພື່ອຈະໄດ້ຂໍຝາກແມ່ໄປນໍາ.

ແຕ່ວ່າຂ່າວກ່ຽວກັບເລື່ອງ ສາຊາ ລອບສັງຫານກະສັດລັດເຊຍ ແລະຖືກຈັບນັ້ນກໍໄດ້ກະ ຈາຍກັນໄປທົ່ວ ຊຶມບຽກແລ້ວ. ດັ່ງນັ້ນ ຈຶ່ງບໍ່ມີໃຜຢາກຮັບເອົາແມ່ ມາຣີອາ ອາເລັກຊັງໂດຣບວະ ນາ ຮ່ວມທາງໄປນໍາ."ລົດມ້າຂອງຂ້ອຍບໍ່ມີບ່ອນຫວ່າງພໍ, ບໍ່ມີແທ້ໆ". ແລ້ວພວກເຂົາກໍອ່ອຍ ຫນ້າຫນີ. ນັກຮຽນຂອງ ໂອໂລເດຍ ກໍແມ່ນ ໂອໂຄດຍິກິບ ນັ້ນເອງ, ພວກເຂົາພາກັນໄປຫາ ທຸກໆເຮືອນ, ອາດຈະເກືອບຮອດສິບຄອບຄົວແລ້ວ. "ຈົ່ງອົດທົນແມ່ແດ່ທ້ອນ". ແຕກບ, ບໍ່ ໃຜອົດທົນສົງສານແຕ່ຢ່າງໃດ!

ໂອໂຄດຍິກິບ ໄດ້ແລ່ນເຂົ້າໄປພົບ ຊາວ ຊູວັດ ຜູ້ຫນຶ່ງ, ຊຶ່ງເປັນຄົນຊຶມເຜົ່າດຽວກັນແລ້ວ ກໍຂໍຮ້ອງນໍາເຂົາ. ຍ້ອນວ່າເຫັນແກ່ ອີລີອາ ນິກໂກລາຍເອວິດ, ດັ່ງນັ້ນຜູ້ກ່ຽວຈຶ່ງອອກປາກຮັບ ເອົາ ມາຣີອາ ອາເລັກຊັງໂດຣບວະນາ ໄປຍັງ ເຊີຊານນໍາ.

ເດືອນຫ້າມາຮອດແລ້ວ. ໂຮງຮຽນອຸດົມທຸກບ່ອນຕ່າງກໍເລີ່ມທຳການສອບເສັງ ໂວໂລເດຍ ແລະ ໂອລິອາ ກໍໄດ້ເຂົ້າສອບເສັງເອົາໃບປະກາດຈົບຊັ້ນ. ສອງອ້າຍນ້ອງໄດ້ຍ່າງເຂົ້າໄປຫາຫ້ອງເສັງຢ່າງສຸຂຸມ ແລະ ຍືນກ້າເວົ້າຮ້ອງຊື່ດ້ວຍອາການເຫງົາຫງ່ວມ. ບັນດາຄູຕ່າງກໍປະຫລາດນຳທຸກໆຄຳຕອບ - ສອງອ້າຍນ້ອງສາມາດຕອບໄດ້ດີ. ແຕ່ວ່າຕົວເມືອງຊຶມບຽກ ໄດ້ອອກໃບປະກາດແຈ້ງການ, ກ່ອນກັບ ອາເລັກຊັງ ອຸລິອານົບ ລູກຊາຍຂອງອະດີດຜູ້ອຳນວຍການໂຮງຮຽນປະຊາສາມັນນັ້ນພໍແຮ່ງແລ້ວ...

ເປັນເທື່ອທີ່ສີ່ຂອງລະດູບານໃຫມ່ແລ້ວ, ທີ່ ໂວໂລເດຍ ໄດ້ມາສອບເສັງຢູ່ ທີ່ໂຮງຮຽນອຸດົມແຫ່ງນີ້. ໂວໂລເດຍ ໄດ້ແນມເບິ່ງຜູ້ຄົນ ກຳລັງຍືນເປັນຈຸ້ມກັນຢູ່ ໃກ້ໆຫລັກເສົາໄຟນີເຈ ຍ ແຜ່ນຫນ້າບໍ່ຮູ້ວ່າເພື່ນຂຽນຫຍັງໃສ່ແຜ່ຕິດໄວ້ກັບຫລັກເສົາໄຟນັ້ນ. ທຸກຄົນຕ່າງກໍຍືນອ່ານ. ໃນຈຳນວນຝູງຄົນດັ່ງກ່າວ ກໍມີເຈົ້າຫນ້າທີ່ຜູ້ຫນຶ່ງ, ຊຶ່ງແກ່ນເຄີຍກັບພໍ່ຂອງຕົນ, ເມື່ອແນມເບິ່ງ ໂວໂລເດຍ, ເຂົາກໍຟ້າວອ່ວຍຫນ້າຫນີ ແລະ ຍ່າງອອກໄປຈາກຫລັກເສົາໄຟໃນທັນໃດນັ້ນໂລດ. ພວກພໍ່ແມ່ພີ່ນ້ອງບ້ານໃກ້ເຮືອນຄຽງຕ່າງກໍອ່ວຍຫນ້າຫນີ ແລະ ກໍແຕກກັນໄປພໍໃຜພໍລາວ. ໂວໂລເດຍ ຄ່ອຍໆຍ່າງເຂົ້າໄປໃກ້ໆ ແລ້ວອ່ານເບິ່ງໃບແຈ້ງຂ່າວດັ່ງກ່າວ. ດວງຕາທັງຄູ່ເສົ້າລົງກັບບ່ອນ. ນັກສຶກສາຫ້າຄົນທີ່ລອບສັງຫານ ນ ະ ສັ ດ ລັ ດ ເຊ ຍ ອາເລັກຊັງ ອີງທີ ສ ານນັ້ນໄດ້ຖືກລົງໂທດປະຫານຊີວິດໃນມື້ວັນທີ ແ ປ ດ ເດືອນຫ້ານີ້. ສາ ຊ າ ຖືກໂທດປະຫານແລ້ວ.

ນອກຈາກຂ່າວຄາວ ທີ່ພິມລົງໃນຫນ້າຫນັງສືພິມແລ້ວ, ທີ່ວທຸກແຫ່ງຂອງເມືອງຊຶມບຽກ ຍັງໄດ້ຕິດຫນັງສືປະກາດແຈ້ງການກ່ອນກັບການລົງໂທດປະຫານນີ້ອີກ.

ທີ່ ຫ້ອງສອບເສັງຂອງໂຮງຮຽນອຸດົມ, ໂວໂລເດຍ ໄດ້ພົບແຕ່ຄວາມມືດມົນອ້ານ ອ້ານ ຢ່ ານ ຫນ້າອະຫນາດ. ໂວໂລເດຍ ໄດ້ເຮັດບົດສອບເສັງເລກຄະນິດ ແລະ ເລກເລຂາຄະນິດ ແລ້ວກ່ອນຫມູ່. ສົ່ງບົດໃຫ້ຄູແລ້ວກໍຍ່າງອອກໄປ.

ພວກເຂົາໄດ້ເຮັດຫຍັງໃຫ້ແກ່ສາຊາ!

ອາທິດຫນຶ່ງຕໍ່ມາ, ແມ່ໄດ້ກັບມາແຕ່ ເປ ແ ຕ ກ ສ ະ ບ ອ ກ. ໂວໂລເດຍ ໄດ້ສັງເກດເຫັນຜົມຂອງແມ່ຕົນເອງຫງອກຂາວຫມົດທຸກເສັ້ນ.

ບັນດາຜູ້ຄົນຊາວເມືອງ ຊຶມບຽກ ຜູ້ທີ່ເຄີຍລ້ຽງແກ່ວ ກໍລ້ວນແຕ່ຫລົບຫນ້າລີ້ຕາພວກເຂົາ ພະຍາຍາມຫລີກຫນ້າຢູ່ພໍຊໍ່ານັ້ນ. ຕາມເສັ້ນທາງບັນດາຄົນທີ່ຍ່າງສວ່ນສົນມາທາງຫນ້າ ເມື່ອ ພົບເຫັນ ກໍຫ້ຽວວ່ວກຫນີໄປທາງອື່ນ, ທັງນີ້ກໍເພື່ອບໍ່ຢາກພົບພໍ້ ຫລືການຂ່າວຄາວຢ່າງຜູ້ມີລູກ ຊາຍຖືກໂທດປະຫານນັ້ນເອງ.

ນາຣິອາ ອາເລັກຊັງໂດຣບວະນາ ໄດ້ຍ່າງເງີຍຫນ້າເລາະຕາມຕົວເມືອງຢ່າງສະຫງ່າອີ່ງ ອາດ. ແມ່ບໍ່ໄດ້ຮ້ອງໄຫ້ ແລະ ເວົ້າເກີ່ງ ສາຊາ ແຕ່ຢ່າງໃດ. "ແມ່ແມ່ນຍິງຜູ້ທີ່ເຕັມໄປດ້ວຍ ຄວາມທະນົງຕົວ ແລະມີນາໍ້ຈິດສູງ!" ໂວໂລເດຍ ຄຶດ ດ້ວຍຄວາມເຄົາລົບນັບຖື.

ໂວໂລເດຍ ໄດ້ຮ່ວມຈິບຊັ້ນອຸດົມແລ້ວ. ບັນດາຄູຕ່າງກໍຂ້ອງໃຈ ແລະ ຖົກຖຽງກັນວ່າ: ສົມ ຄວນມອບຫລ່ວນຄໍາໃຫ້ແກ່ນ້ອງຊາຍຂອງຄົນຜູ້ທີ່ຫາກໍຖືກໂທດປະຫານນັ້ນຫລືບໍ່? ແຕ່ຍ້ອນ ວ່າ ໂວໂລເດຍ ສອບເສັງໄດ້ຄະແນນດີເລີດ ດັ່ງນັ້ນມັນຈຶ່ງເປັນການບັງຄັບໃຫ້ພວກເຂົາຈໍາຕ້ອງ ຕັດສິນມອບຫລ່ວນຄໍາດັ່ງກ່າວໃຫ້ແກ່ ໂວໂລເດຍ.

- ໂວໂລເດຍ ຕ້ອງໄດ້ເຂົ້າຮ່ວມຕໍ່ ທີ່ ມະຫາວິທະຍາໄລ, - ແມ່ໄດ້ເວົ້າເລື່ອງໃນໃຈສູ່ ອີວານ ຢາໂກວະເລວິດ ຟັງ, - ແຕ່ທາງ ເປເຕຣາສະບວກ ເຂົາຈະຮັບບໍ?

- ຄືບໍ່ຮັບດອກ. ຈະພະຍາຍາມປານໃດກໍຄືບໍ່ມີຜົນດອກ.

ພາຍຫລັງທີ່ຜູ້ເປັນພໍ່ ໄດ້ເກົ່ງແກ່ກາໍແລ້ວ, ຄອບຄົວ ອູລຽານົບ ກໍເລີ່ມພົບກັບຄວາມຫຍຸ້ງ ຍາກ. ພວກລູກພັດຍັງຮ່ວມຢູ່, ບໍ່ມີໃຜພໍທີ່ຈະອອກຫາເງິນໄດ້. ແມ່ຍັງໄດ້ຮັບເງິນບໍານານອຸດ ຫນູນຂອງພໍ່ນັ້ນຢູ່, ແຕ່ເງິນຈໍານວນດັ່ງກ່າວນັ້ນ ມັນກໍຕ້ອງໄດ້ອົດອອມຍອມແທ້ຍອມວ່າ ຈຶ່ງ ສາມາດລ້ຽງກຸ້ມທ້ຽງຄອບຄົວໄດ້.

ຫມົດທຸກຄົນ ຕ່າງກໍໄດ້ຕັດສິນໃຈຍ້າຍຫນີອອກຈາກ ຊຶມບຽກ. "ພວກເຮົາຈະຕ້ອງໄດ້ອໍາ ລາພາຈາກເຮືອນທີ່ຮັກຂອງພວກເຮົາໄປເສຍແລ້ວ, ຢູ່ຕາມແຈເຮືອນຊໍ່ານັ້ນ ມັນໄດ້ພາ ໃຫ້ຄຶດຮອດອະດີດ ທີ່ມີຄວາມສຸກຂອງມື້ຜ່ານມາ. ພວກເຮົາຈໍາໃຈຈາກສວນຫມາກໄມ້ຫມາກ

ນັ້ນ ຕະຫລອດທັງງ່າໄມ້ກົ່ງໃບ, ພວກເຮົາຈະຕ້ອງ
ໄດ້ຫ່າງເຫີນຈາກພວກເພື່ອນໆ ແລະບັນດາຜູ້ທີ່ລ້ຽ
ແກວ່ນແຕ່ຄາວກ່ອນ ຊຶ່ງມາຮອດປັດຈຸບັນ ພວກເຂົາ
ໄດ້ກາຍມາເປັນ ຜູ້ຫ່າງໄກຈາກເຮົາໄປເສຍແລ້ວ".

ແຕ່ ບໍ່ແມ່ນຫມົດທຸກຄົນດອກ. ນັກຮຽນຂອງ
ໂອໂລເດຍ, ໂອໂຄດຍີກັບ ບໍ່ເຄີຍກາຍມາເປັນຄົນອື່ນ
ແລະນາງຄູ ເວຣາ ວາຊີລີເອບນາ ກາຊະກາດາມໍວາ
ເຊັ່ນດຽວກັນ. ກົງກັນຂ້າມໃນຍາມໂຊກຮ້າຍເຊັ່ນນີ້,
ນາງຍິ່ງ ມີຄວາມໃກ້ຊິດຮັກແພງກັບແມ່ຂຶ້ນຫລາຍ
ກ່ວາເກົ່າ.

ຫນ້າຫນັງສືພິມ ທີ່ ຊຶມບກ ໄດ້ພິມຂໍ້ຄວາມ
ນ້ອຍອັນຫນຶ່ງ ເພື່ອເປັນການໂຄສະນາ: "ເນື່ອງຈາກ
ວ່າຕ້ອງຍົກຍ້າຍໄປຢູ່ບ່ອນໃຫມ່, ຕ້ອງການຂາຍ
ເຮືອນ ພ້ອມທັງສວນ ໃນນັ້ນມີເຄື່ອງຫລິ້ນ ປີອານ
ໂນ ແລະ ເຄື່ອງໄມ້ຕ່າງໆ. ສົນໃຈຕິດຕໍ່ ທີ່ເຮືອນຂອງ
ນາງ ອູລີອານົບວາ, ກະຫນົບ ມາສະກົບສະກາຍຢາ
ໄດ້."

ຕາມກະຫນົບຫົນທາງ ຄັບຄາຫນາແຫນ້ນໄປ
ດ້ວຍຜູ້ຄົນ, ຢູ່ປາກປະຕູທາງເຂົ້າຍາມໃດກໍມີສອງ
ກົງໆເກ່ງໆຂອງລະຄັງນ້ອຍດັງຢູ່ພໍຊໍ່ານັ້ນ. ເມື່ອພວກ
ທີ່ຕ້ອງການຊື້ມາເຖິງ, ພວກເຂົາໄດ້ເຂົ້າກວດກາເບິ່ງ
ທຸກໆຫ້ອງ. ພວກເຂົາສ່ອງເບິ່ງອັນນັ້ນອັນນີ້ ແລະ
ຈັບບາຍສິ່ງຂອງຫລາຍໆຢ່າງ. ພວກເຂົາແນມເບິ່ງ

ແມ່ ຜູ້ເປັນເຈົ້າຂອງເຮືອນ ແຕ່ຫົວເກົ່າຕົນ ແລ້ວກໍຊຸບຊິບໃສ່ຫູກັນ. ແມ່ຍືນຢູ່ໃກ້ໆປະຕູໃຫຍ່ ໃນເຮືອນ ດ້ວຍສີຫນ້າຈືດຈາງແລະເຄັ່ງຂຶມ, ຜົມອັນຫງອກຂາວນັ້ນກໍກຄຸມໄວ້ດ້ວຍແພລູກ ໄມ້ສີດໍາ. ໂອໂລເດຍ ຍາກແລ່ນເຂົ້າໄປຫາແມ່, ເພື່ອສະກັດບ້ງສາຍຕາແຫມທີ່ເບິ່ງແບບບໍ່ເປັນ ມິດນັ້ນໄວ້.

"ແມ່ເອີຍ! ຢ່າສູ້ໃຫ້ພວກອັບປີເຫລົ່ານັ້ນ ມັນໄດ້ເຫັນເຖິງຄວາມເຈັບຊໍ້າຂອງພວກເຮົາ ເທາະ, ພວກເຂົາບໍ່ໄດ້ສົງສານເຮົາດອກ."

ໂອໂລເດຍ ພະຍາຍາມຮັກສາທ່າທີໃຫ້ຄືກັບແມ່, ຄືມີທ່າທີເຄັ່ງຂຶມ ແລະ ສະຫງົບ ສະຫງຸມ, ຈົ່ງບໍ່ໄດ້ສະແດງໃຫ້ເຫັນເຖິງຄວາມຫວາດຫວັ່ນ ແລະ ບໍ່ມີນໍ້າຕາແຕ່ຢ່າງໃດ.

ໂອໂລເດຍ ຢືນເຮັດຕົວຊື່ຢູ່ຢ່າງສະຫງ່າຜ່າເຜີຍ.

ໂອໂລເດຍ ຫວນຄຶດເຖິງ ສາຊາ. "ສາຊາ, ອ້າຍເປັນຜູ້ກຸມດຸ້ງກະສັດລັດເຊຍ. ອ້າຍຢາກ ປອງຂ້າກະສັດ ລັດເຊຍ ດ້ວຍຫວັງວ່າໃນເວລານັ້ນລະບອບຈະມີການປ່ຽນແປງ, ທຸກຄົນກໍຈະ ໄດ້ຢູ່ດີມີສຸກຫລາຍກ່ວາເກົ່າ. ແຕ່ເປັນຫຍັງບໍ່ຄຶດແດ່ວ່າ ໃນໄລຍະຫົກປີຜ່ານມາ, ໃນນັ້ນມີ ຫນຶ່ງເດືອນສາມ ປີ ໑໙໑໗, ພວກປະຕິວັດປະຊານິຍົມ ກໍໄດ້ລອບຂ້າກະສັດລັດເຊຍ ອາເລັກ ຊັງ ອີກທີສອງ ຈົນສໍາເລັດ. ແຕ່ວ່າ ຊີວິດການເປັນຢູ່ຂອງທຸກຄົນນັ້ນ ມັນໄດ້ດີຂຶ້ນລົ້ນເກົ່າແລ້ວ ຫລືບໍ່? ບໍ່ເທົ່າໃດ ກັບມີກະສັດລັດເຊຍ ອາເລັກຊັງ ອີກທີສາມນັ້ນ ຂຶ້ນມາແທນອີກ. ແລ້ວ ມີຫຍັງດີຂຶ້ນກ່ວາເກົ່າຫລືບໍ່? ບໍ່ເລີຍ ດັ່ງນັ້ນຈຶ່ງຫມາຍຄວາມວ່າ ຕ້ອງຕໍ່ສູ້ດ້ວຍວິທີອື່ນ".

ໂອໂລເດຍ ໄດ້ຄຶດຄືແນວນັ້ນ.

ຫມາກກະດົ່ງສັນຍານຢູ່ທາງນອກປະຕູນັ້ນ ໄດ້ດັງກ້ອງຂຶ້ນຢ່າງລົ່ນຕຶດ. ພວກທີ່ຕ້ອງການ ຊິເຮືອນໄດ້ກ້າວເຂົ້າມາ, ພວກເຂົາພາກັນຈັບອັນນັ້ນດົ່ງອັນນີ້ ແລະໄດ້ແກ່ເອົາເຄື່ອງຂອງອອກ ໄປຈາກເຮືອນ. ມີພຽງແຕ່ ປີອານໂນຫນ່ວຍດຽວທີ່ບໍ່ມີໃຜຍາກຊິ, ໂອໂລເດຍ ໄດ້ລູບຄໍາຝາຂອງ ມັນ. "ທຸກສິ່ງທຸກຢ່າງໃນໄວເດັກເຮົາ ແລະ ຄວາມສຸກຂອງພວກເຮົາ ຍາມໃດກໍມີຄວາມຕຶດ ພັນກັບ ປີອານໂນນີ້ສະເຫມີ". ເຄື່ອງດົນຕີ ປີອານໂນ ດັ່ງກ່າວ ໄດ້ຖືກຂົນໄປກັບຄອບຄົວຂອງ ອູລີອານົບ ຈົນມາຮອດເມືອງ ກາຊານ.

ກອງປະຊຸມທົ່ວກາຊານ

ໂອໂລເດຍ ອູລີອານົບ ໄດ້ກາຍເປັນນັກສຶກສາ ໃນມະຫາວິທະຍາໄລແລ້ວ, ເພິ່ນຄຶດວ່າ ຢູ່ໃນມະຫາວິທະຍາໄລຂອງ ກາຊານນີ້, ຂໍ້ບັນຍັດຕ່າງໆຂອງໂຮງຮຽນຄົງໃຫ້ສິດເສລີພາບກ່ວາຢູ່ໂຮງຮຽນອຸດົມ ທີ່ ຊິມບຽກ. ແຕ່ມັນ ບໍ່ໄດ້ເປັນດັ່ງວ່ານັ້ນຈັກດີ! ພວກ "ເປດໍາ" ແມ່ນຊື່ຂອງ ຜູ້ຄວບຄຸມມະຫາວິທະຍາໄລ ຊຶ່ງມີຫນ້າທີ່ ສືບຮູ້ທຸກຢ່າງທີ່ເຫັນວ່າເປັນຫນ້າສົງໄສ - ຕິດ ຕາມທຸກການເຄື່ອນໄຫວ, ທຸກຄໍາເວົ້າຂອງບັນດານັກສຶກສາ. ພວກເຂົາໄດ້ຕິດຕາມເບິ່ງວ່າມີ ໃຜແດ່ ທີ່ຕ້ານກັບກະສັດລັດເຊຍ ແລະ ຕ້ານລັດກະບານ? ຕ້ານກັບຊັ້ນເທິງ? ຕ້ານກັບຜູ້ກວດ ກາຊື່ວ່າໂປຕາປິບ ນັ້ນຫລໍ່? ຜູ້ກວດກາ ໂປຕາປິບ ເປັນຄົນຕຸ້ຍພີ, ມີຫນວດດົກຫນາ. ພວກ "ເປດໍາ" ນີ້ເຂົ້າມາພົບກັບ ໂປຕາປິບ ກໍເພື່ອກ່າວຟ້ອງບັນດານັກສຶກສາເທົ່ານັ້ນ. ຈາກນັ້ນ ໂປ-ຕາປິບ ກໍຈະຟ້າວຈັດແຈງບົ່ງລາຍຊື່ຜູ້ທີ່ມີຄວາມຜິດ ເພື່ອປະນາມແລ້ວໄລ່ອອກຈາກມະຫາ ວິທະຍາໄລກັບບ່ອນໂລດ, ເປັນຕົ້ນກໍແມ່ນນັກສຶກສາຜູ້ທຸກຍາກ. ບັນດານັກສຶກສາທີ່ຍາກຈົນ ນັ້ນມີຄວາມຫຍຸ້ງຍາກໃນການຮໍ່າຮຽນຫລາຍທີ່ສຸດ, ຍ້ອນວ່າຄ່າຮຽນໄດ້ແພງຂຶ້ນຫລາຍໆທີ ບ.

ວັນທີ ๔ ເດືອນ ສິບສອງ ປີ ๑๙๐๗, ໄດ້ມີການເຜີຍແຜ່ທາງຫນັງສືພິມແລະເວົ້າກ່ອ ກັບການກໍ່ຄວາມວຸ້ນວາຍຂອງນັກສຶກສາຢູ່ມິດສະກູ. ແລະກຸ່ມນັກສຶກສາທີ່ກາຊານເອງກໍໄດ້ປະ ກາດຄໍາຮຽກຮ້ອງລັບໆອອກມາວ່າ: "ຈົ່ງລຸກຂຶ້ນຕໍ່ສູ້ ເພື່ອ ປ້ອງກັນສິດຜົນປະໂຫຍດຂອງຕົນ!"

- ອ້າຍນ້ອງນັກສຶກສາ! ເຂົ້າໄປປະຊຸມຢູ່ໃນຫ້ອງປະຊຸມກັນເທາະ!

- ເຂົ້າປະຊຸມ! - ສຽງເອີ້ນດັ່ງກ່າວ ໄດ້ດັງກ້ອງຂຶ້ນໄປທົ່ວທຸກຫ້ອງຫໍພັກຂອງໂຮງຮຽນ.

ຫມູ່ນັກຮຽນຈໍານວນຫລວງຫລາຍ ໄດ້ພາກັນແລ່ນເລາະໄປຕາມລະບຽງຢ່າງວ່ອງໄວ, ແລ້ວຂຶ້ນຂັ້ນໃດ ກ້າວເຂົ້າໄປໃນຫ້ອງປະຊຸມ ທີ່ຊັ້ນສອງ. ໃນຈໍານວນຂອງພວກທີ່ເດີນອອກ ຫນ້ານັ້ນມີທັງ ໂອໂລເດຍ ອູລີອານົບ.

- ບັນດາສະຫາຍ! - ປະທານຂອງກອງປະຊຸມປະກາດ. ຈາກນັ້ນ ກໍມີດຽບໃນທັນທີທັນ ໃດ. - ບັນດາສະຫາຍ! ຄົງຈະບໍ່ມີຄໍາໃດທີ່ວິເສດສູງສົ່ງໄປກ່ວາຄໍາວ່າສະຫາຍ! ພວກເຮົາຂໍສາ

ບານວ່າຈະໃຫ້ການສະຫນັບສະຫນູນຕໍ່ກັນ ເພື່ອປົກ
ປ້ອງແລະຫວງເອົາສິດຂອງຕົນ. ພວກເຮົາຫວງໃຫ້ມີສິດ
ເສລີພາບ, ມີລະບອບກົດຫມາຍ, ແລະສັດຈະທໍາ ...

ທັນໃດນັ້ນ ຜູ້ກວດກາ ໂປຕາປິບ, ຫນວດຍາວ,
ບ່າກວ້າງກໍໄດ້ມາປະກົດຕົວຢູ່ໃນຫ້ອງປະຊຸມດັ່ງກ່າວ.

-ອົງຖາມຂໍກໍານົດຂອງກົດລະບຽບ, ຂ້ອຍຮຽກຮ້ອງ
ໃຫ້ພວກເຈົ້າຈົ່ງເລີກດຽວນີ້.

-ອອກໄປ! ຈົ່ງຫນີອອກໄປໃຫ້ພົ້ນຫວິດບ່ອນນີ້!
ໂຄ່ນລົ້ມ! ຈັກສຽງຮ້ອງປະສົມກັບສຽງເປົ່າປາກດັງຟົດສະ
ຫນັ່ນກ້ອງເຂົ້າໃສ່ຫູ ໂປຕາປິບຈາກທັງສີ່ດ້ານ.

ຜູ້ກວດກາຟ້າວປິບຫນີດ້ວຍຄວາມຢ້ານກົວ ແລະ
ເອົາມືທັງສອງກໍາກໍາປັ້ນເຂົ້າຢ່າງແຫນ້ນແກ່ນ ເພື່ອຫນີນ
ຊອກຫາທາງອອກ.

ຈາກນັ້ນ ຜູ້ອໍານວຍການ ກໍໄດ້ເຂົ້າມາອີກ. ເຂົາຈະ
ມາເວົ້າເລື່ອງຫຍັງອີກ? ພວກນັກສຶກສາ ຕ່າງກໍພາກັນ
ນິດ, ແລະຍົ່ນຫນ້າສຽງຮ້ອງໃຫ້. "ຊີວິດການເປັນຢູ່
ຂອງຄົນທຸກຍາກ, ຊີວິດການເປັນຢູ່ຂອງເຫລົ່ານັກສຶກສາ
ທຸກຍາກຈົນທົນບໍ່ໄຫວຢູ່ແລ້ວ!". -ຫນ້າສຽງຮ້ອງມີ
ເນື້ອໃນຄືແນວນັ້ນ.

-ພວກເຈົ້າຈົ່ງອຸ່ນອ່ານ, -ດ້ວຍເຫດວ່າບໍ່ຮູ້ຈະເຮັດ
ແນວໃດ ຈຶ່ງສາມາດສະກັດກັ້ນຄວາມຮ້ອນໃຈຂອງພວກ
ລາວຫນຸ່ມດັ່ງກ່າວ, ດັ່ງນັ້ນ ຜູ້ອໍານວຍການ ຈຶ່ງໄດ້ກ່າວ
ຄວາມນັ້ນອອກມາ ເພື່ອເປັນການປອບໃຈ.

ນາເດສະດາ ເອງ ສາມາດກໍານົດໃສ ຂອງ ອະລາດີເມຍ ອີລີຊ ໄດ້ດີ, ຄັນຍາມໃດຄຶດ ຫລາຍມັກຈະຈົ່ມຢູ່ຜູ້ດຽວສະເຫມີ. ເມື່ອເປັນດັ່ງນັ້ນ ກໍບໍ່ຄວນລົບກວນເພື່ນ. ອີລີຊ ຫາກ ຈະຊອກຫາວິທີແກ້ໄຂໄດ້ໃນບໍ່ຊ້ານີ້ແລ້ວ. ແລະເປັນແນວນັ້ນອີຫລີ. ຕອນທີ່ເພື່ນຍ່າງໄປໆມາໆ ທ້າງຄິດໄປນໍານັ້ນ, ສຸດທ້າຍກໍຄົ້ນພົບທາງອອກ:

-ພວກເຮົາຈະຕ້ອງເອີ້ນເອົາບັນດາສະຫາຍທ້າງຫມົດມາປະຊຸມ ເພື່ອພິຈາລະນາກ່ຽວກັບ ເລື່ອງປຶ້ມ "ເກຣດໍ" ນັ້ນ. ພວກເຮົາຈະຕ້ອງຂຽນ "ມະຕິຄັດຄ້ານ", ແລ້ວເຊັນຊື່ໃສ່ທ້າງລຸ່ມ ຈົດຫມາຍດັ່ງກ່າວ ເພື່ອສົ່ງໄປຍັງບັນດາໂຮງຈັກໂຮງງານທົ່ວທຸກແຫ່ງຢ່າງລັບໆ.

ໃນທັນໃດນັ້ນ, ອະລາດີເມຍ ອີລີຊ ພ້ອມກັບ ນາເດສະດາ ກົງສະຕ້ງຕິນິບນາ ກໍໄດ້ລົງ ມືຂຽນຈົດຫມາຍສົ່ງໄປຍັງບັນດາສະຫາຍຜູ້ທີ່ກໍາລະເຫດຢູ່ທົ່ວທຸກບ່ອນນັ້ນ, ໃຫ້ພາກັນ ຊອກຂໍ້ອ້າງທຸກວິທີທາງເພື່ອຂໍອະນຸຍາດ ນໍາອໍານາດປົກຄອງໃຫ້ໄດ້ມາບ່ອນຊຸມນຸມກັນ. ຊັ້ນ ບ່ອນທີ່ຈະຕົກລົງຊຸມນຸມກັນນັ້ນ ຈະເອົາບ່ອນໃດດີ? ບ່ອນທີ່ເຫມາະສົມທີ່ສຸດນັ້ນ ກໍມີແຕ່ຢູ່ ບ້ານ ຊູແຊນສະໂກຍເອ ພຸ້ນແລ້ວ. ແຕ່ ອະລາດີເມຍ ອີລີຊ ໄດ້ເລືອກເອົາບ້ານ ເອັກມາກີບ ສະໂກຍເຍ, ຊຶ່ງໄກຈາກ ຊູແຊນສະໂກຍເອ ປະມານ ສິບແວກ ຊຶ່ງບ່ອນນັ້ນ ແມ່ນບ່ອນຢູ່ຂອງ ຜູ້ເປັນເພື່ອນທ້າງເປັນຜູ້ຊ່ວຍວຽກ ຂອງ ອະລາດີເມຍ ອີລີຊ ຢູ່ໃນຄະນະ "ສະຫະພັນການຕໍ່ ສູ້", ແລະເຂົາຄົນນັ້ນຄື ອານາໂຕລີ ວາເຍແອບ ນັ້ນເອງ. ຕອນຢູ່ໃນຄຸກ ເຂົາໄດ້ລົ້ມປ່ວຍລົງ ຢ່າງຫນັກດ້ວຍພະຍາດປອດແຫ້ງ ຊຶ່ງນັບມື້ນັບກັນດານຈົນບໍ່ສາມາດລຸກອອກຈາກຕຽງໄດ້.

ເພາະສະນັ້ນ ອະລາດີເມຍ ອີລີຊ ຈຶ່ງຕົກລົງຈັດຕັ້ງການພົບປະກັນຢູ່ທີ່ບ້ານແອກມາກີບສະ ໂກຍເຍ. ວາເຍແອບ ນອນເອົາຫົວຫມູນຢູ່ເທິງຫມອນສີຂາວ. ແຕ່ວ່າຕີນໂຕຂອງເຂົານັ້ນເປົ່ງ ແລ້ວ ມັນກໍຍົ່ງຂາວຊີດກ່ວາຫມອນຫນ່ວຍນັ້ນອີກ. ເຂົາມີໃບຫນ້າຈ່ອຍຜອມ, ດວງຕາ

ຫນ່ວຍໃຫຍ່ນັ້ນ ໄດ້ສະແດງໃຫ້ເຫັນວ່າຍັງມີພືດໄຂ້ຢູ່. ແຕ່ປານນັ້ນ ເຂົາກໍຍັງຮູ້ສຶກວ່າມີ ຄວາມມ່ວນຊື່ນ ກໍຍ້ອນວ່າຕົນໄດ້ເຂົ້າຮ່ວມໃນກອງປະຊຸມນັ້ນແລ້ວ. ເຂົາຢາກມີຊີວິດຢູ່! ເຂົາ ຢາກເຮັດວຽກ! ແລະປາກະຫນາຢາກນໍາເອົາຜົນປະໂຫຍດມາສູ່ຫມົດທຸກຄົນ.

ທຸກຄົນຕ່າງກໍປຶກສາຫາລືກ່ຽວກັບປຶ້ມ "ເກຣດ", ແລະໄດ້ເລັນຊື່ໃສ່ໃນບົດ "ມະຕິຄັດ ຄ້ານ" ນັ້ນ. ຫລັງຈາກນັ້ນ ຄໍາຮ້ອງປະຕິວັດຈາກເຂດ ຊິເບຣີ ທີ່ໄກແສນໄກ ກໍຈະໄດ້ໄປ ເຖິງບັນດາກໍາມະກອນແຕ່ລະກຸ່ມພາຍໃນຕົວເມືອງ.

"ບັນດາສະຫາຍທັ້ງຫລາຍ ຢ່າຟັງເຊື່ອ"ฝ่ายเสดกะกิด" ເຫລົ່ານັ້ນ. ພວກເຮົາມີ ພຽງເສັ້ນທາງດຽວເທົ່ານັ້ນ - ຄືເຮັດການປະຕິວັດ!". ພາຍຫລັງສໍາເລັດການ ປຶກສາຫາລືກັນ ແລ້ວ, ແຕ່ ອະລາດີເມຍ ອີລີຊ ກໍຍັງບໍ່ທັນກັບ, ເພິ່ນໄດ້ມານັ່ງຢູ່ຂ້າງຕຽງຄົນເຈັບ. ວາເຍ ແອບ ຮູ້ສຶກອ່ອນເພຍຫລາຍທີ່ສຸດ. ຈົນເມັດເຫື່ອອັນເຢືອກເຢັນໄດ້ຊຶມອອກເຕັມຫນ້າຜາກ ເປັນເມັດໃຫຍ່ໆ. ດວງຕາທັ້ງຄູ່ໂກນເລິກປານຊຸມ.

ວາເຍແອບ ຜູ້ຫນ້າສົງສານ ໄດ້ຖືກຄຸກ ແລະ ຖືກລະບອບຂອງກະສັດລັດເຊຍບີບບັງຄັບ ຢ່າງໂຫດຫ້ຽມ! ອະລາດີເມຍ ອີລີຊ ໄດ້ລູບຄໍາໄປຕາມແຂນອັນຈ່ອຍບາງຂອງເຂົາ, ແລ້ວກໍ ໄດ້ປຶກສາກ່ຽວກັບຄາດຫມາຍທີ່ຕົນຈະເຮັດສູ່ເຂົາຟັງ. ກໍານົດຖືກເນລະເທດໃກ້ຈະຫມົດລົງ ແລ້ວ. ອະລາດີເມຍ ອີລີຊ ໄດ້ເລົ່າເຖິງເຫດການທີ່ຈະເກີດຂຶ້ນ ພາຍຫລັງທີ່ໄດ້ສົ້ນສຸດ ກໍາ ນົດຖືກເນລະເທດນັ້ນສູ່ຟັງ. ພວກເຮົາຈະສ້າງຕັ້ງພັກມາກຊິດ ຂອງຊາວກໍາມະກອນຂຶ້ນ. ພວກເຮົາຈະພິມຈໍາຫນ່າຍຫນັງສືພິມຂອງພວກເຮົາ, ນັ້ນຄືຫນັງສືພິມກໍາມະກອນ. ພວກ ເຮົາຈະຕໍ່ສູ້ຕ້ານກັບລະບອບລາຊາຂອງກະສັດລັດເຊຍ. ວາເຍແອບ ຕັ້ງໃຈຟັງດ້ວຍຄວາມຫົວ ກະຫາຍ ແລະ ເບີກບານມ່ວນຊື່ນທີ່ສຸດ. ໃນຍາມຄ້ອຍຄໍ່າຂອງເດືອນແປດ, ເມື່ອເພນອອກ ໄປທາງປະຕູປ່ອງຢ້ຽມ ກໍເຫັນວ່າເວລານັ້ນມືດຄົ້ມແລ້ວ. ສຽງ ປືອານໂນ ທີ່ຫລົ້ນເປັນເພງ ເສົ້າໆ ໄດ້ດັງກ້ອງມາແຕ່ໄກໆ. ວາເຍແອບ ໄດ້ຈົ່ມພຶມພໍາອອກມາດ້ວຍນໍ້າສຽງອັນແຫບ ວ່າ:

-ຂອບໃຈເຈົ້າຫລາຍໆ ອະລາດີເມຍເອີຍ. ເຈົ້າໄດ້ມາຕື່ມພະລັງຊີວິດໃຫ້ແກ່ຂ້ອຍ, ຂ້ອຍ ກໍເຊື່ອຫມັ້ນຄືແນວນັ້ນ...

ຄ່ຳຄືນນັ້ນ ແມ່ນຄ່ຳຄືນທີ່ເຕັມໄປດ້ວຍຄວາມສຸກຄັ້ງສຸດທ້າຍຂອງ ວາເຍເຮອບ. ຕໍ່ມາບໍ່ ຮອດສາມອາທິດ, ວະລາດີເມຍ ອີລີຊ ແລະ ນາເດສະດາ ກ້າສະຕ້ຳຕີນີບນາກໍໄດ້ກັບຄືນໄປ ຍັງບ້ານ ແອກມາກັບສະໂກຍເຢອີກເພື່ອສ້ຳສະການ ອານາໂຕລີ ວາເຍເຮອບ.

-ລາກ່ອນຊ່ອນີລັນດອນ, ອານາໂຕລີເອີຍ - ວະລາດີເມຍ ອີລີຊ ເວ້ົາຂຶ້ນຢູ່ຕໍ່ຫນ້າໂລງ ສົບ. -ພວກເຮົາຂໍປະຕິຍານວ່າຈະເປັນຜູ້ບໍລິສຸດຕໍ່ພາລະກິດປະຕິວັດ.

ຫົມະຕົ້ນລະດູ ໄດ້ທະຍອຍກັນຂຸດຈົ່ນຕົກລົງມາໃສ່ໃບຫນ້າທີ່ປາສະຈາກຊີວິດຂອງ ອານາໂຕລີ. ຄ້າຍກັບວ່ານັ້ນແມ່ນດອງດອກໄມ້.

ວະລາດີເມຍ ອີລີຊ ໄດ້ສັ່ງຊື້ແຜ່ນສິລາລຶກແຜ່ນຫນຶ່ງສ່ຳກັບຜ່ານຶ່ແລ້ວສົມໄວ້ເທິງຂຸມ ຝັງສົບ. ແຜ່ນສິລາລຶກນັ້ນຂຽນວ່າ:

"ອານາໂຕລີ ອາເລັກຊັງໂດຣວິດ ວາເຍເຮອບ. ນັກໂທດເມລະເທດຍ້ອນເຄື່ອນໄຫວການ ເມືອງ. ເສຍຊີວິດ ເມື່ອວັນທີ ຊ ເດືອນເກົ້າ ປີ ຄ.ສ.ຊ. ອາຍຸ ຂ໗ ປີ. ຂໍໃຫ້ສະຫາຍຈົ່ງເຫລັບ ນອນດ້ວຍຄວາມສະຫງົບເທີ້ນ".

ການປ່ອຍຕົວໃຫ້ເປັນອິດສະລະ

ຢູ່ພາຍໃນເຮືອນ ປະກົດວ່າມີເລື່ອງເກີດຂຶ້ນຢ່າງແປກໆ ຊ່ຳແຕກຕ່າງກັບຕອນທຳມະດາ. ຢູ່ແຕ່ລະຫ້ອງແມ່ນເຕັມໄປດ້ວຍຫີບຫໍ່ເຄື່ອງຂອງຕ່າງໆ. ຄວາມເປັນລະບຽບຮຽບຮ້ອຍ ຂອງ ແຕ່ລະມື້ນມັນໄດ້ຖືກຝືນກົດເກນຢ່າງເຄັ່ງຂັ້ມ.

ຍາມຈວນຈະແຈ້ງຂອງມື້ວັນທີ ຊ໗ ເດືອນຈ໗, ມີລົດມ້າສອງຄັນ ໄດ້ມາຈອດຢູ່ ໃກ້ໆທາງຂັ້ນໄດເຮືອນແລ້ວ. ວະລາດີເມຍ ອີລີຊ ໄດ້ຍົກປຶ້ມອ່ານປຶ້ມຂຽນ ແລະ ສິ່ງຂອງຂຶ້ນ ໃສ່ເທິງລົດ. ທຸກຄົນຕ່າງກໍອອກແຮງຊົດຊ່ວຍເພີ່ນ.

-ນັ່ງລົງ, ນັ່ງລົງສະກ່ອນ, ກ່ອນຫນ້າທີ່ຈະອອກເດີນທາງຄວນຈະນັ່ງພັກຜ່ອນຫນ້ອຍ ຫນຶ່ງກ່ອນ. -ແມ່ເກົ້າ ເອລີຊາແວດຕາ ວາຊີລີເອບນາ ກ່າວຂຶ້ນ.

ຫມິດທຸກຄົນຕ່າງກໍນັ່ງລົງຢ່າງມິດໆ.

-ພວກເຮົາໄປກັນເທາະ! ເດີນທາງໄດ້ແລ້ວລະ! -ອະລາດີເມຍ ອີລີຊ ເວົ້າທ້າລຸກຂຶ້ນ ພ້ອມບາດ.

ຍ້ອນອາກາດຍັງເຢືອກເຢັນຫລາຍ, ດັ່ງນັ້ນ ອະລາດີເມຍ ອີລີຊ ຈຶ່ງໄດ້ຊ່ວຍນຸ່ງເສື້ອຂົນສັດໃຫ້ແກ່ເມຍ ແລະ ແມ່ເກົ້າ, ເພີ່ນເອົາເຟືອງແຫ້ງຂຶ້ນມາກັ້ງໄວ້ເພື່ອບັງລົມ ຢູ່ສອງຟາກຂ້າງລົດ.

-ອະລາດີເມຍ ອີລີຊ ເອີຍ, ລູກຍັງບໍ່ທັນນຸ່ງເສື້ອນວມເທື່ອໃດທັ້ນ, ຈັກຫນ່ອຍກໍກາກາດຫນາວ ແລ້ວຊິບໍ່ສະບາຍໃດ! -ແມ່ເກົ້າ ເອລີຊາເວດຕາ ວາຊີລີເອບນາ ເວົ້າຂົ້ນດ້ວຍຄວາມເປັນຫ່ວງ.

-ຄວາມອ່ອນຊົ່ນ ທີ່ໄດ້ມີສຶກເສລີພາບນັ້ນ ບໍ່ຕ່າງຫຍັງກັບໄຟກອງໃຫຍ່ທີ່ໄດ້ໃຫ້ຄວາມອົບອຸ່ນແກ່ລູກ ແລະ ບໍ່ມີຄວາມເຢືອກເຢັນໃດໆດອກ ທີ່ຈະມາບຸກລຸກລູກໄດ້. -ອະລາດີເມຍ ອີລີຊ ກ່າວຕອບແລ້ວກໍປົ້ນຂົ້ນເທິງລົດມ້າ, ພວກມ້າຕ່າງກໍແລ່ນຫອບໄປທາງຫນ້າດ້ວຍຄວາມອ່ອງໄວ.

ຫມູ່ບ້ານ ຊູແຊນສະໂກຍເອ ປະກົດຄ້າຍກັບວ່າໄດ້ຫ່າງໄກອອກໄປເລັ້ຍໆຊົ່ວນິລັນດອນ.

ທາງຂອບຟ້າ ເບື້ອງຕາເວັນອອກແສງສະຫວ່າງສີເຫລືອງແລະແດງໄດ້ປະກົດກາຍຂົ້ນຢູ່ທ່າມກາງຫມູ່ເມກນັ້ນຄືຂອບຟ້າແຫ່ງສັນຕິສຸກ.

ແລະຢູ່ໃນສ່ວນເລິກຫົວໃຈຂອງ ອະລາດີເມຍ ອີລີຊເອງ ກໍມີລັກສະນະທ່າທາງອັນໃດອັນຫນຶ່ງທີ່ເຄັ່ງຂຶມຄືກັນ. ອາລຸນຍາມເຊົ້າຄັ້ງທຳອິດ ທີ່ໄດ້ມີສຶກເສລີພາບ! ໃນເດືອນສຸດທ້າຍນີ້ ເຫັນວ່າ ເພີ່ນໄດ້ຈ່ອຍລົງຫລາຍ ທັງນຶ້ອຍນອງກ້າມສົ້ນສຸດວັນກໍເມລະເທດນັ້ນແຫລະ. ຍາມໃດເພີ່ນກໍເປັນຫ່ວງແຕ່ນຳພວກເຈົ້າຫນ້າທີ່ ມັນຈະມາກໍ່ເລື່ອງ ແລະແກ່ຍືດແກ່ຍາວັນທີ່ຈະສົ້ນສຸດໃນການເມລະເທດນັ້ນເລັ້ຍໆ.

ຍາມໃດ ອະລາດີເມຍ ອີລີຊ ກໍຄິດເຖິງນຳແຕ່ເລື່ອງດ່ວ ກ່ວກັບພັກ, ກ່ວກັບການ

ພົ້ນພູພັກ. ໃນປີ ໑໙໕໕, ຕອນທີ່ ອະລາດິເນຍ ອີລີຊ ກຸກເນລະເທດນັ້ນ, ຢູ່ ນິນສະເກ ໄດ້ມີການ ຮວກປະຊຸມໃຫຍ່ເທື່ອທີຫນຶ່ງ, ແຕ່ພວກເຈົ້າຫນ້າທີ່ ໄດ້ອອກແຮງຈັບກຸມ ພວກ ທີ່ນຳພາການສ້າງຕັ້ງພັກນັ້ນໄດ້ເກືອບຫມົດ. ດັ່ງນັ້ນ ຈຳຕ້ອງໄດ້ຟື້ນຟູພັກຂຶ້ນມາໃຫມ່. ຫນັງ ສືພິມຈະເປັນບາດກ້າວທຳອິດ ຂອງການປະຕິບັດວຽກອັນນັ້ນ. ແມ່ນຫນັງສືພິມ ນາກຊິດ ທັງເປັນຫນັງສືພິມປິດລັບ, ມັນຈະເປັນຜູ້ເຕົ້າໂຮມ ແລະ ເປັນເອກກະພາບກັບບັນດາ ທຸກໆກຳລັງທີ່ກ້າວຫນ້າຢູ່ໃນປະເທດລັດເຊຍນີ້. ສິ່ງເຫລົ່ານັ້ນແຫລະ, ສິ່ງທີ່ ອະລາດິເນຍ ອີລີຊ ກຳລັງຄິດຫາຢູ່.

ການເດີນທາງ ໄດ້ສືບຕໍ່ໄປເລື້ອຍໆ. ພວກເຂົາເຈົ້າໄດ້ຢຸດຢູ່ໂຮງການໄປສະນີ, ເພື່ອປ່ຽນ ມ້າ ແລະ ກິນເຂົ້າປາອາຫານເທົ່ານັ້ນ.

ຍັງອີກຕັ້ງດິນຈຶ່ງຈະໄປຮອດເມືອງນິນຊີນສະເກ, ແລະ ຈາກເມືອງ ນິນຊີນສະເກ ແລ້ວ ກໍຕ້ອງເດີນທາງຕໍ່ອີກຕັ້ງສາມຮ້ອຍແວ ຈຶ່ງຮອດສະຖານີລົດໄຟອາຊິນສະເກ. ພວກເຂົາເຈົ້າ ໄດ້ພາກັນເດີນທາງຕະຫລອດມື້ຕະຫລອດຄືນ. ຍາມກາງເວັນ ມີແສງສະຫວ່າງ, ມີແສງ ແດດ, ທ້ອງຟ້າກໍຂຽວງາມດີ, ຫີມະທີ່ເກາະຫ້ອຍຢູ່ຕາມງ່າໄມ້ ເມື່ອຕ້ອງກັບແສງແດດໄດ້ສ່ອງ ແສງເຫລື້ອມຍິບຍາບບາດຕາ. ໃນຍາມຄ່ຳຄືນ ມີຫມູ່ດວງດາວ. ດວງຈັນຫນ່ວຍໃຫຍ່ໄດ້ ພັດໄຫລໄປຕາມທ້ອງຟ້າອັນກວ້າງໃຫຍ່ໄພສານ, ບໍ່ຕ່າງຫຍັງກັບເຮືອກຳປັ່ນລຳຫນຶ່ງຊຶ່ງເດີນ



ຜ່ານຫມູ່ດວງດາວທີ່ ກະແຈກກະຈາຍກັນຢູ່ນັ້ນ ຍາມຄ່ຳຄືນເຊັ່ນນີ້, ສຽງທີ່ດັງເລັກໆນ້ອຍໆ ກໍ່ຄ່ອຍໆ ດັງກ້ອງໄປໄກ.

ຈົນຮອດຍາມເຊົ້າ ຂອງມື້ທ້າຍ ພວກເຂົາເຈົ້າຈຶ່ງໄດ້ພາກັນມາຮອດສະຖານີລົດໄຟ ອາຊິນສະເກ.

ສຽງລະຄັງສັນຍານລົດໄຟຈະມາຮອດນັ້ນໄດ້ດັງກ້ອງຂຶ້ນ.

ຫົວລົດໄຟອັນດຳ ທີ່ເປື້ອນເປິະ ດ້ວຍນ້ຳມັນເຄື່ອງໄດ້ ທັ່ງດັງປຶ໋ດໆ, ພ້ອມທັ້ງລາກແກ່ ເອົາຂະບວນຕູ້ລົດໄຟຈຳນວນຫນຶ່ງ ເຂົ້າມາຈອດຢູ່ທີ່ສະຖານີແຫ່ງນີ້ພຽງຄາວດຽວ. ຈາກນັ້ນ ສຽງລະຄັງສັນຍານອອກເດີນທາງ ກໍ່ໄດ້ດັງຂຶ້ນອີກ. ແລະສິ່ງທີ່ຄອງຄອຍມາຕັ້ງດົນນານ ກໍ່ໄດ້ ປະກົດເປັນຈິງຂຶ້ນມາ. ຢູ່ທາງເບື້ອງຫນ້າຂອງພວກເຂົາເຈົ້ານັ້ນ ຄື ຊີວິດໃຫມ່.

ຈາກຫມັດໄຟກາຍເປັນແປວໄຟ

"ຈົ່ງປົກປັກຮັກສາຈິດໃຈແຫ່ງຄວາມເປັນແກ່ນສານແລະທະນົງອົງອາດ
ຢູ່ໃນອຸໂມງບໍ່ແຮ່ ທີ່ ຊິເບຣີ,
ພາລະກິດ ອັນ ຫນ້າສົງສານ

ແລະແນວຄິດຈິດໃຈອັນສູງສົ່ງ ຄວາມຝັນຂອງພວກເຈົ້າ ຈະບໍ່ສູນເສຍ
ໄປຢ່າງແນ່ນອນ!"

ປຸດສະກິນ ໄດ້ຂຽນບົດກະວີອັນນີ້ໄວ້ ໃຫ້ແກ່ພວກທີ່ສັ່ງກັດຝ່າຍເດືອນທັນວາ* ເຊົ່ງກຶກ ເນລະເທດໄປຢູ່ ບໍ່ເຫລັກ ນຽກຊິນສະກີ. ສ່ວນນັກກະວີຝ່າຍເດືອນສິບສອງ ທີ່ມີຊື່ວ່າ ໂອໂດ ເອບສະກີ ກໍໄດ້ຂຽນຕອບ ປຸດສະກິນ ວ່າ:

"ພາລະກິດອັນຫນ້າສົງສານຂອງພວກຂ້ອຍນັ້ນຈະບໍ່ມີທາງວ່າສູນເສຍລ້າງ:
ລິເລີ່ມຈາກຫມັດໄຟຈະລຸກຂຶ້ນເປັນແປວໄຟ!"

ດັ່ງນັ້ນ ອະລາດເມຍ ອີລຊ ຈຶ່ງຕັດສິນໃຈ ຕັ້ງຊື່ ຫນັງສືພິມວ່າ "ຫມັດໄຟ".

ຕອນຢູ່ບ້ານ ຊູເຊນສະໂກຍເອ ນັ້ນ, ເພິ່ນໄດ້ຄິດຢ່າງລະອຽດລະອໍ ກ່ຽວກັບ ຫນັງສືພິມ ດັ່ງກ່າວ, ກ້າຈະເວົ້າ ກໍແມ່ນນັບຕັ້ງແຕ່ແກວທຳອິດໄປຈົນຮອດແກວສຸດທ້າຍພຸ້ນລະ. ບາດນີ້ຈຳຕ້ອງສ້າງຫນັງສືພິມສະບັບດັ່ງກ່າວອອກໃຫ້ໄດ້. ຫລັງຈາກກັບມາແຕ່ ຊິເບຣີ ແລ້ວ, ອະ ລາດເມຍ ອີລຊ ໄດ້ມາອາໄສຢູ່ເມືອງ ປະສະກິບ, ແລະຢູ່ແຕ່ພຽງຜູ້ດຽວເທົ່ານັ້ນ. ນາເດສະ ດາ ກົງສະຕັງຕິນິບນາ ບໍ່ໄດ້ມາຢູ່ນຳ. ນາເດສະດາ ກົງສະຕັງຕິນິບນາ ຍັງບໍ່ທັນຫມົດກຳນົດ ຂອງການຖືກເນລະເທດເທື່ອ ທັງນີ້ກໍເພາະວ່ານາງໄດ້ຖືກຄຸກ ແລະຖືກເນລະເທດໄປຢູ່ ຊິເບ ຣີ ຊ້ຳກ່ວາ, ດັ່ງນັ້ນ ນາດນ້ຕ້ອງໄດ້ຢູ່ຕື່ມອີກຈົນຫມົດກຳນົດຂອງການທີ່ຖືກເນລະເທດນັ້ນ ຢູ່ທີ່ເມືອງ ອູຟາ. ສ່ວນ ອະລາດເມຍ ອີລຊ ໄດ້ຮັບອະນຸຍາດ ໃຫ້ຢູ່ທີ່ ປະສະກິບ. ອະລາດ

---

*ພວກຝ່າຍເດືອນທັນວາ - ແມ່ນນັກປະຕິວັດລັດເຊຍໃນຕອນຕົ້ນສັດຕະວັດທີ XIX, ສ່ວນຫລາຍເກີດມາຈາກ ຊົນຊັ້ນຂຸນນາງທີ່ເປັນຊົນຊັ້ນສູງສຸດຍອດໃນປະເທດລັດເຊຍ. ພວກເຂົາເຈົ້າໄດ້ທຳການລຸກຮືຂຶ້ນດ້ວຍອາວຸດໃນ ເດືອນທັນວາປີ ໑໘໒໕. ພວກເຂົາເຈົ້າແມ່ນຜູ້ທຳອິດທີ່ໄດ້ທຳການລຸກຮືເພື່ອຕ້ານລະບອບການປົກຄອງຂອງກະ ສັດລັດເຊຍ. ເນື່ອງຈາກເຫດການຄັ້ງນັ້ນພວກເຂົາເຈົ້າຈຶ່ງໄດ້ຖືກຂະຫນານນາມວ່າ "ພວກຝ່າຍເດືອນທັນວາ". ການລຸກຮືຂຶ້ນເທື່ອນັ້ນໄດ້ຖືກປາບປາມຢ່າງຮຸນແຮງ, ນັກປະຕິວັດຫ້າຄົນຖືກປະຫານຊີວິດ, ຮ້ອຍປາຍຄົນຖືກ ເນລະເທດແລະຖືກສົ່ງໄປເຮັດວຽກສັບພະທຸກຢູ່ທີ່ບໍ່ແຮ່ຊິເບຣີ, ເຊິ່ງເປັນບ່ອນສົ່ງນັກໂທດໃນສະໄຫມນັ້ນ.

ເມຍ ອີລີຊ ໄດ້ອອກແຮງກະກຽມເພື່ອສ້າງຫນັງສືພິມ "ຫນັດໄຟ" ນີ້ຢ່າງເຄັ່ງຮ້ອນ. ອີລີຊ ເອງໄດ້ອອກເດີນທາງໄປຕາມຕົວເມືອງຕ່າງໆ ເພື່ອຊອກຫາບັນດາສະຫາຍຢູ່ໃນທົ່ວທຸກແຫ່ງ ໃຫ້ເຂົ້າປະກອບສ່ວນເຮັດຫນັງສືພິມ" ຫນັດໄຟ". ກ່ອນຫມູ່ຫນຶດ ຈຳເປັນຕ້ອງໄດ້ຊອກ ຫາຜູ້ທີ່ມີຄວາມສາມາດຂຽນບົດລົງໃນຫນ້າຫນັງສືພິມນັ້ນແລ້ວ, ຕ້ອງຊອກຫາບັນດາຜູ້ຈຳ ຫນ່າຍໃຫ້, ທັງນີ້ກໍເພາະວ່າຫນັງສືພິມ "ຫນັດໄຟ" ນີ້ບໍ່ອາດສາມາດທີ່ຈະຂາຍຢູ່ຕາມຮ້ານ ຂາຍທຳມະດາໄດ້, ຖ້າບໍ່ດັ່ງນັ້ນຄົນຂາຍກໍຈະຕ້ອງຕິດຄຸກກັບບ່ອນໂລດ. ຫມາຍຄວາມວ່າ ຕ້ອງຈຳຫນ່າຍຢ່າງລັບໆ ແລະຈະຕ້ອງໄດ້ຊອກເງິນຈຳນວນຫນຶ່ງ ເພື່ອສ້າງຫນັງສືພິມດັ່ງ ກ່າວ. ອະລາດີເມຍ ກໍສາມາດຫາເງິນມາໄດ້.

ຕະຫລອດໄລຍະສີ່ເດືອນເຕັມ ທີ່ ອະລາດີເມຍ ອີລີຊ ຊຶ່ງພວກເຮົາເຄີຍເວົ້າກັນນັ້ນວ່າ ຈະສາມາດປິ່ນຫນ່ວຍພູໃຫ້ສັ່ນສະເທືອນ ໄດ້ກະກຽມທຸກຢ່າງເປັນທີ່ຮຽບຮ້ອຍ.

ແຕ່ຈະພິມຫນັງສືພິມ "ຫນັດໄຟ" ນີ້ຢູ່ໃສ? ຄົງຈະບໍ່ສາມາດພິມຫນັງສືພິມແບບນີ້ ຢູ່ ປະເທດລັດເຊຍໄດ້, ເພາະມັນຕ້ານກັບກະສັດລັດເຊຍ, ຕ້ານພວກເຈົ້າທີ່ດິນ, ຕ້ານພວກ ເຈົ້າຂອງໂຮງຈັກໂຮງງານ, ຕ້ານພວກເຈົ້າຂຸນມຸນນາຍ, ນາຍຕຳຫລວດ. ແນ່ນອນແລ້ວ, ບໍ່ມີທາງດອກທີ່ຈະສາມາດພິມຫນັງສືພິມແບບນີ້ຢູ່ປະເທດລັດເຊຍ! ຄັນຊັ້ນຊິໄປພິມຢູ່ໃສ?

ອະລາດີເມຍ ອີລີຊ ຈຳຕ້ອງໄດ້ໃຊ້ສະຫມອງຢ່າງຫນັກ, ແລະຈຳເປັນຕ້ອງໄດ້ປຶກສາ ແລກປ່ຽນຄວາມຄິດຄວາມເຫັນກັບບັນດາສະຫາຍອີກ. ພາຍຫລັງທີ່ໄດ້ປຶກສາກັນຢ່າງລະ ອຽດແລ້ວ, ທຸກຄົນຕ່າງກໍເຫັນດີຕົກລົງເອົາໄປພິມຢູ່ຕ່າງປະເທດ. ແຕ່ເຖິງວ່າຈະໄປພິມຢູ່ ໃນຕ່າງປະເທດກໍຕາມ, ການພິມຫນັງສືພິມແບບນີ້ ມັນກໍຕ້ອງປິດລັບທີ່ສຸດຄືກັນ. ເຖິງຢ່າງ ໃດກໍຕາມ, ຖ້າມາປຽບໃສ່ຢູ່ກັບປະເທດຕົນ, ມັນກໍບໍ່ເຖິງຂັ້ນວ່າຈະມີຫມາຍພານຕຳຫລວດລັດ ເຊຍຫລາຍໆໂຕອອກຕິດຕາມ ແລະ ກໍບໍ່ເຖິງຂັ້ນວ່າຈະຖືກຈັບກຸມຢ່າງກະທັນຫັນໂລດ.

ບັນຫາທຸກຢ່າງ ແມ່ນຖືກແກ້ໄຂຫມົດແລ້ວ. ອະລາດີເມຍ ອີລີຊ ໄດ້ຂໍຫນັງສືກວດສຸກ ຂະພາບຈາກທ່ານຫມໍຜູ້ຫນຶ່ງແລ້ວອອກເດີນທາງໄປຕ່າງປະເທດໃນນາມປົວໂຕ. ກ່ອນທີ່ຈະ ອອກເດີນທາງໄປນັ້ນ, ອີລີຊໄດ້ໄປສັ່ງລາ ນາເດສະດາ ກົງສະຕັງຕິນົບນາ ກ່ອນ. ຕອນນັ້ນ

ຍ້ອນອີກພຽງແຕ່ເກົ້າເດືອນເທົ່ານັ້ນ ທີ່ນາງນ່ໍາຈະຫມົດກໍານົດກ໊ກເນລະເທດ, ແລ້ວຈາກນັ້ນ ລົດໄຟ ກໍໄດ້ນໍາເອົາ ອີລີຊ ໄປຍັງເຂດ ທີ່ຫ່າງໄກ ຊຶ່ງບໍ່ແມ່ນເຂດປະເທດລັດເຊຍອີກແລ້ວ. ຄາດວ່າຄົງຈະດີນຢູ່? ຄວາມຈິງກໍດີນແທ້.

...ຢູ່ທີ່ນະຄອນ ເລັນີ້ກ ປະເທດ ເຢຍລະມັນ. ຄຽງຄູ່ກັບກະທນິນຫີນທາງອັນຄັບແຄບ, ບັນດາເຮືອນຊານ ແລະໂບດທີ່ມີຫລັງຄາແຫລມນັ້ນໄດ້ມີໂຮງຈັກໂຮງງານ, ແລະໂຮງພິມເປັນຈໍານວນຫລວງຫລາຍ ແລະມີປຶ້ມອ່ານທຸກໆຊະນິດ ຢູ່ຕາມຮ້ານຂາຍປຶ້ມ. ທີ່ ເລັນີ້ກ, ຍັງມີຄົນເຢຍລະມັນຜູ້ຫນຶ່ງອາໄສຢູ່, ເຂົາອາຍຸໄດ້ສາມສິບຫ້າປີ, ຊື່ວ່າ ເກວກມານຣາວ, ເຂົາເປັນເຈົ້າຂອງໂຮງພິມນ້ອຍແຫ່ງຫນຶ່ງທີ່ຫມູ່ບ້ານ ຊຶ່ງຕັ້ງຢູ່ໃກ້ໆກັບເມືອງເລັນີ້ກ ນັ້ນເອງ. ຢູ່ໃນໂຮງພິມຂອງ ເກວກມານຣາວ ນັ້ນເຄື່ອງຈັກພິມແຕ່ພຽງຫນ່ວຍດຽວ ແຕ່ວ່າ ໃຫຍ່ທີ່ສຸດ. ເຄື່ອງຈັກພິມຫນ່ວຍໃຫຍ່ອັນເກົ່າແກ່ນີ້ ໄດ້ພິມຫນັງສືພິມກິລາຂອງຊາວກໍາມະກອນ, ຫນັງສືພິມໂຄສະນາ ແລະ ປຶ້ມອ່ານເຫລັ້ມນ້ອຍຊະນິດຕ່າງໆ.

ເກວກມານຣາວ ຜູ້ນີ້ ແມ່ນນັກມາກຊິດ ແລະ ທັງເປັນສະມາຊິກພັກສັງຄົມ-ປະຊາທິປະໄຕ ເຢຍລະມັນນໍາອີກ. ນ້ໍາຫນຶ່ງ ນັບດາສະມາຊິກພັກສັງຄົມ-ປະຊາທິປະໄຕ ຢູ່ ເລັນີ້ກ ໄດ້ບອກຂ່າວໃຫ້ ເກວກມານຣາວຮູ້ວ່າ ຈະມີຊາວມາກຊິດ ລັດເຊຍມາຫາ. ຫນ້າທີ່ຮັບຜິດຊອບຂອງຊາວມາກຊິດລັດເຊຍນ້ີ: ພິມຫນັງສືພິມປະຕິວັດ. ພວກເຂົາເຈົ້າໄດ້ຕົກລົງພິມຫນັງສືພິມ "ຫມັດໄຟ" ສະບັບທໍາອິດຢູ່ທີ່ເມືອງ ເລັນີ້ກ, ປະເທດ ເຢຍລະມັນນັ້ນ.

-ຄວນຈ່ອຍເຫລືອບັນດາສະຫາຍລັດເຊຍ, -ບັນດາຊາວສັງຄົມ-ປະຊາທິປະໄຕ ຢູ່ ເລັນີ້ກ ໄດ້ເວົ້າສູ່ ເກວກມານຣາວ ຟັງຄືແນວນັ້ນ.

ນັກມາກຊິດລັດເຊຍຜູ້ທີ່ເດີນທາງມາ ເລັນີ້ກນັ້ນແມ່ນ ອະລາດີເມຍ ອີລີຊ. ອະລາດີເມຍ ອີລີຊ ໄດ້ເຊົ່າເຮືອນນ້ອຍໆຢູ່ຫລັງຫນຶ່ງ ຊຶ່ງຕັ້ງຢູ່ນອກຕົວເມືອງເລັນີ້ກ.

ອະລາດີເມຍ ອີລີຊ ອອກຈາກເຮືອນໄປ. ເພິ່ນຕ້ອງໄດ້ຍ່າງໄປໄກຈົນຮອດໂຮງພິມຂອງ ເກວກມານຣາວ. ລະຍະທາງອາດຈະແມ່ນຫ້າຫລືຫົກ ກິໂລແມັດນີ້ແລ້ວ. ອະລາດີເມຍໄດ້ ມາຮອດເຂດນອກເມືອງ ແລະ ເລີ່ມເຂົ້າສູ່ເຂດທົ່ງພຽງທີ່ເຕັມໄປດ້ວຍຫີມະ. ຢູ່ໄກໆພຸ້ນ

ເພິ່ນສາມາດແນມເຫັນເຂດປ່າໄມ້ເປັນເງົາສີ
ດຳພໍ້ຄືນນຶ່ນ. ແສງຕະກຽງຂອງບັນດາເຮືອນ
ໃນແຖບນັ້ນກໍເລີ່ມຮຸ່ງຂຶ້ນ. ທີ່ໂຮງພິມ ຂອງ
ແກວກມານຣາວ ກໍມີແສງສະຫວ່າງຂອງໄຟ
ຕະກຽງຮຸ່ງກະຈາຍອອກມາຕາມປ່ອງປະຕູປ່ອງ
ຢ້ຽມ.

ພາຍໃນໂຮງພິມ ມີຫ້ອງໃຫຍ່ຢູ່ພຽງຫ້ອງ
ດຽວ. ຫນ່ວຍຈັກບັກໃຫຍ່ ໄດ້ກືນເນື້ອທີ່ໄປ
ແລ້ວເກືອບເຄິ່ງຫ້ອງ. ນອກນັ້ນຍັງມີອີກສອງ
ຫ້ອງນ້ອຍທີ່ໃຊ້ເປັນບ່ອນລຽງຫນັງສື. ເຕົາຝຶ
ຊຶ່ງດ້ວຍຟືນດິນນ້ອຍໆນັ້ນ ໄດ້ລຸກຂຶ້ນແດງ
ຮຸນໆ, ຟ້າສຽງນັ້ນແຕກດັງໂປກເປັກ, ແປວໄຟ
ທີ່ເຫນັງຕີງລອກແລກໆໄດ້ສະທ້ອນເງົາທີ່ສັ່ນ
ສາຍຂອງມັນໃສ່ກັບຝາເຮືອນ.

- ນັ້ນແມ່ນໝໍ່ສຳຄັນໝໍ່ຫນຶ່ງ, - ແກວ
ມານຣາວເວົ້າກັບ ອະລາດີເມຍ ອີລີຊ ເປັນພາສາ
ເຢຍລະມັນ.

ອະລາດີເມຍ ອີລີຊ ໄດ້ແຕ່ງົກຫົວ. ແມ່ນ
ແລ້ວ, ນັ້ນແມ່ນໝໍ່ສຳຄັນ. ຈົນມາຮອດ
ດຽວນີ້ ຄົງຈ່ຳໄດ້ນຶ່ງການກະກຽມເທົ່ານັ້ນ.
ສ່ວນນັ້ນເດ້...

ນາຍຊ່າງເກັບລຽງໄດ້ຍົກເບົ້າຕົວຫນັງສື
ຂຶ້ນມາວາງໃສ່ເຄື່ອງຈັກດ້ວຍຄວາມລຳບາກ.

ແກວກໝາ ເປັນຜູ້ແກວ່ງຈັກ ແລະ ຢືນຢູ່ທາງຫລັງເຄື່ອງຈັກ. ເຄື່ອງຈັກເລີ່ມເຮັດວຽກ ດ້ວຍສຽງອັນດັງ. ຫມາກໍ້ ໄດ້ປິ່ນລ້ອງຄ້າງຢູ່ຕະຫລອດເວລາ. ຫນັງສືພິມຈາກເທິງເຄື່ອງ ຈັກ ຕົກຍັງປົກຄຸ່ມຢູ່ ກໍເລີ່ມແລ່ນລົງມາ! ຫນັງສືພິມ "ຫມັດໄຟ" ສະບັບທຳອິດ ໄດ້ເກີດ ຂຶ້ນແລ້ວ! ອະລາດີເມຍ ອີລີຊ ຈັບເອົາຫນັງສືພິມ ດັ່ງກ່າວຂຶ້ນມາອ່ານ. ມັນແມ່ນເວລານາ ທີ່ທີ່ອະລາດີເມຍ ອີລີຊ ໄດ້ຄອຍມາຕັ້ງແຕ່ດົນນານແລ້ວ!

"ພວກເຮົາໄດ້ມີຫນັງສືພິມຂອງພວກເຮົາແລ້ວ, ນັ້ນແມ່ນຫນັງສືພິມປະຕິວັດຂອງຊາວ ກຳມະກອນ! ຫນັງສືພິມຂອງພວກເຮົາ ຈົ່ງປຶກເມືອສູ່ປະເທດຊາດຢ່າງອ່ອງໄອເທາະ! ຈົ່ງ ປຸກລະດົມແນວຄິດຈິດໃຈເພື່ອຮຽກຮ້ອງໃຫ້ເຮັດການປະຕິວັດ".

ອະລາດີເມຍ ອີລີຊ ໄດ້ອ່ານຫົວຂໍ້ຫນັງສືພິມ ດ້ວຍສຽງອັນດັງວ່າ:

- "ຫມັດໄຟ".

ຢູ່ທາງລຸ່ມຫນ້າດ້ານຂວາມືນັ້ນ, ໄດ້ມີຕົວຫນັງສືພິມເປັນຕົວບັກໃຫຍ່ວ່າ:

"ຫມັດໄຟຈະລຸກຂຶ້ນເປັນແປວໄຟ!".

ເລນິນ

ຂະບວນລົດໄຟໄດ້ຂົນຜູ້ໂດຍສານແລ່ນຜ່ານປະເທດ ເຢຍລະມັນ ມາທີ່ ເກນິກແບກ, ຢູ່ ໃນຕູ້ລົດໄຟຊັ້ນທີສາມ, ມີຊາວຫນຸ່ມຜູ້ຫນຶ່ງ ນັ່ງຢູ່ແປະປ່ອງຢ້ຽມ ເຂົາໄດ້ເດີນທາງອອກຈາກມູ ນິກ ແລະ ເທົ່ານອນມາສຸດທາງ. ມີຫີບໃຫຍ່ຫນ່ວຍຫນຶ່ງ ນັ່ງຢູ່ໃກ້ໆກັບປາຍຕີນຂອງເຂົາ.

ເກນິກແບກ ແມ່ນເມືອງເກົ່າແກ່ທີ່ມີປ້ອມຍາມໃຫຍ່ທີ່ກໍ່ດ້ວຍຫີນ, ມີໂບດ, ແລະບັນ ດາຫລັງຄາເຮືອນທີ່ມີສີແດງເຫລືອມຕ່າງໆ. ນອກນັ້ນຍັງມີທະເລບານຕິກ, ຄົ້ນຟອງທະເລໄດ້ ເດີເຂົ້າໃສ່ແຄມທ່າເຮືອດັ່ງເຜືອະເຜືອະ. ທີ່ແຄມທ່າເຮືອ, ບັນດາເຮືອແພນາວາ ໄດ້ຈອດຢູດ ຢ່າງຄັບຄາຫນາແຫນ້ນ. ໃນຈຳນວນຂອງເຮືອດັ່ງກ່າວມີກຳປັ່ນລຳຫນຶ່ງ ຊື່ຊື່ວ່າ "ພະເຈົ້າ

ມາກກາຣິດຕາ". ຄົນ ເຢຍລະມັນທີ່ເດີນທາງມາຈາກ ມູນິກ ໄດ້ຜິວປາກດ້ວຍຄວາມພໍໃຈ ແຕ່ບໍ່ໄດ້ໄປເລາະຕາມທ່າເຮືອອີກ. ເຂົາໄດ້ໄປຍັງບ່ອນຮ້ານຂາຍເຫລົ້າທີ່ຕັ້ງຢູ່ໃກ້ໆນັ້ນ. ໃນ ຮ້ານຂາຍເຫລົ້າດັ່ງກ່າວ ມີຄົນມາກຫນ້າຫລາຍຕາ, ບັນຍາກາດເຕັມໄປດ້ວຍຄວາມອຶດອັດ, ແລະກົ່ນຄ້ວນກອກຍາກໍອີບເອົ້າໄປທົ່ວຫ້ອງ. ຊາວເຢຍລະມັນຜູ້ນັ້ນ ເຂົ້ານັ່ງຢູ່ບ່ອນຫວ່າງ. ສ່ວນຫົວນັ້ນ, ເຂົາໄດ້ຊຸກເຂົ້າມ້ວນໄວ້ຢູ່ກ້ອງໂຕະ. ຊາຍຫນຸ່ມຜູ້ນັ້ນ ໄດ້ສັ່ງໄສ້ອໍ່ແລະຜັກ ກາດດອງ, ເຂົາດື່ມເຫລົ້າເບຍ ພ້ອມທັ້ງຫຍໍ້ອາຫານຢ່າງບໍ່ຟ້າວບໍ່ຟັ່ງ ແລະຮູ້ສຶກຮ້ອນເຄືອງ ແຕ່ຢ່າງໃດ. ບາງທີອາດເປັນໄປໄດ້, ເຂົາກໍາລັງນັ່ງຂ້າເວລາຊໍ້ໆ ຫລືບາງທີອາດຈະແມ່ນເຂົາ ກໍາລັງລໍຖ້າໃຜຜູ້ຫນຶ່ງຢູ່? ແມ່ນແລ້ວ, ເຂົາກໍາລັງຄອງຖ້າລູກເຮືອຂອງ "ພະເຈົ້າ ມາກກາຣິດ ຕາ". ຄົນເຢຍລະມັນ ໄດ້ມາບ່ອນຫນີ ໂດຍຈຸດປະສົງຢາກພົບກັບລູກເຮືອຜູ້ນັ້ນ ເຖິງແມ່ນວ່າ ບໍ່ເຄີຍເຫັນລາວມາກ່ອນເລີຍ. ເມື່ອແຂກຜູ້ໃດຜູ້ຫນຶ່ງ ກ້າວເຂົ້າມາໃນຮ້ານຂາຍເຫລົ້ານັ້ນ, ຊາວ ເຢຍລະມັນ ຜູ້ຊົ່ງມາຈາກ ມູນິກ ນັ້ນ ໄດ້ແນມເບິ່ງເຂົາດ້ວຍຄວາມສົນໃຈ, ແລ້ວເອົາ ມືຂວາຂຶ້ນລູບຜົມ. ແນ່ນອນແລ້ວ ການກະທໍາດັ່ງກ່າວນັ້ນກໍບໍ່ມີໃຜສົນໃຈແນມເບິ່ງດອກ. ຄວາມຈິງແລ້ວ ຄົນທີ່ກໍາລັງເອົາມືລູບຜົມເຊັ່ນນັ້ນ ກໍຈະມີຫຍັງແປກປະຫລາດ? ແຕ່ອັນນັ້ນ ມັນແມ່ນສັນຍານລັບຢ່າງຫນຶ່ງ.

ເມື່ອເລີກວຽກແລ້ວ, ລູກເຮືອຜູ້ຫນຶ່ງທີ່ມີຮ່າງກາຍແຂງແຮງ, ຜິວດໍາຍ້ອນຖືກອາບແດດ ຈາກທະເລນັ້ນ, ກໍກ້າວເຂົ້າໄປຍັງຮ້ານເຫລົ້າດັ່ງກ່າວ. ຕອນກ້າວເຂົ້າມາຊໍ້ປາກປະຕູນັ້ນ ເຂົາ ໄດ້ເສືອກຕາແນມເບິ່ງຫນົດທຸກຄົນ ແລະໄດ້ແນມເຫັນຜູ້ຫນຶ່ງທີ່ກໍາລັງລູບຜົມຢູ່, ດັ່ງນັ້ນ ເຂົາຈ໋ຽງຍ່າງເບັດຫນ້າໄປຍັງບ່ອນນັ້ນເລີຍ. ເຂົາດຶງເອົາຕັ່ງນ້ອຍອອກມານັ່ງ, ແລ້ວເອົາຕີນ ເຕາະໆຫົບ:

-ລີມຫນາວຈັດ.

-ບໍ່ເປັນຫຍັງດອກ, ຖ້າຫາກວ່າແມ່ນລີມລ່ວງ, -ຊາວເຢຍລະມັນຊົ່ງມາຈາກ ມູນິກ ນັ້ນຕອບ.

-ເຈົ້າສາມາດຕີຄວາມຫມາຍໄດ້ຢ່າງຖືກຕ້ອງ, ແມ່ນລີມລ່ວງແທ້ໆ.

ມັນແມ່ນຄຳລະຫັດລັບ. ພາຍຫລັງທີ່ໄດ້ເວົ້າຄຳລະຫັດລັບ ແລ້ວ, ພວກເຂົາຕ່າງກໍຮູ້ສຶກວ່າ ພວກຕົນແມ່ນມິດສະຫາຍກັນ. ພວກເຂົາຕ່າງກໍໄດ້ເຮັດວຽກທີ່ເຕັມໄປດ້ວຍໄພອັນຕະລາຍເຊັ່ນດຽວ ກັນ, ແລະກໍຍ້ອນວຽກງານດັ່ງກ່າວນັ້ນແລ້ວ ພວກເຂົາຈຶ່ງໄດ້ມາ ພົບກັນຢູ່ຮ້ານດື່ມເຫລົ້າແຫ່ງນີ້.

ຫນ້ອຍຫນຶ່ງຕໍ່ມາການໂອ້ລົມຂອງພວກເຂົາ ກໍສິ້ນສຸດລົງ, ແລະຕ່າງກໍລຸກຢືນຂຶ້ນແລ້ວ ຍ່າງຫນີອອກຈາກຮ້ານຂາຍເຫລົ້າໄປ. ບາດນີ້ມັນບໍ່ໄດ້ແມ່ນຄົນ ເຢຍລະມັນທີ່ມາຈາກ ມູນິກ ຫ້ວຫີບ ແຕ່ ໄດ້ກາຍເປັນລູກເຮືອໄປເສຍແລ້ວ ແລະກໍບໍ່ມີໃຜສາມາດຮັບຮູ້ໄດ້ ກ່ຽວກັບການປ່ຽນແປງອັນນັ້ນ. ໃຜຊິມາສົນໃຈນຳເລື່ອງອັນນີ້ເຮັດ ຫຍັງກັນ? ທັງສອງທ່ານຕ່າງກໍເວົ້າຊື່ແຈ້ງອັນໃດອັນຫນຶ່ງສູ່ກັນຟັງ. ເມື່ອໄປຮອດທາງສີ່ແຍກ, ພວກເຂົາຈຶ່ງໄດ້ແຍກຈາກກັນໄປ. ຊາວ ເຢຍລະມັນ ຜູ້ທີ່ມາຈາກ ມູນິກ ໄດ້ຍ່າງລັດໄປຫາຂະບວນລົດໄຟ ເພື່ອກັບເມືອເຮືອນຂອງຕົນ. ສ່ວນຫີບຫນ່ວຍນັ້ນກໍໄດ້ເດີນທາງ ຜ່ານທະເລບານຕິກໄປນຳເຮືອກຳປັ່ນ "ພະເຈົ້າມາກກາຣິດຕາ" ໄປຈີນຮອດສະໂຕກໂຮມ ນະຄອນຫລວງຂອງປະເທດ ຊູເອດ ພຸ້ນ.

ເມື່ອຕົກເກືອຍາມກາງຄືນ, ລົມທະເລໄດ້ພັດມາຢ່າງແຮງ, ເຮັດໃຫ້ຄື້ນທະເລເປັນຟອງບັກໃຫຍ່, ລົມທະເລອັນຫນ້າຢ້ານກົວ ໄດ້ພັດກະຫນ່ຳເຂົ້າໃສ່ຕົວເຮືອ "ພະເຈົ້າ ມາກກາຣິດຕາ", ຕຳກຶກ ຂ້າງເຮືອດັງເຜື່ອະຜະໆ, ຫລັກເສົາກັ້ງລົມໂອນໄກວໄປມາ ດັງເປັນ ສຽງອອດໆແອດໆ, ຄື້ນທະເລໄດ້ອຸ້ມເອົາຟອງນ້ຳຟົ້ງຂຶ້ນຮອດເທິງ ທ້ອງເຮືອ ຍາມຄ່ຳຄືນຢູ່ກາງທະເລ, ມືດມົນປານກຳຕາ.

ເຮືອກຳປັ່ນໄດ້ເຂົ້າທ່າເຮືອ ສະໂຕກໂຮມ ຊ້າກ່ວາກຳນົດເກືອ ຫົກຊົ່ວໂມງ. ປານນີ້ເຮືອກຳປັ່ນ "ຊູໂອມິ" ຂອງແຟງລັງ ອາດຈະ ອອກເດີນທາງໄປຍັງແຮນຊີກິ ແຕ່ດົນແລ້ວ. ອີງຕາມຕາຕະລາງ ໂມງຂອງການເດີນເຮືອ, ຂະນະນີ້ເຮືອທີ່ກຳລັງເດີນທາງຢູ່ນັ້ນ ຮອດສີ່ລຳເຮືອພຸ້ນ. ແຕ່ວ່າປະຈຸບັນ, ລູກເຮືອດົ່ງກ່າວຕ້ອງການພົບ ເຮືອກຳປັ່ນ "ຊູໂອມິ" ແຕ່ພຽງລຳດວງເທົ່ານັ້ນ.

"ບໍ່ທັນການແລ້ວບາດນີ້!" -ລູກເຮືອຜູ້ນັ້ນຄິດດ້ວຍຄວາມ ຢາກຮ້າຍຢູ່ໃນໃຈ.

ທັນໃດນັ້ນ ເຂົາກໍໄດ້ເຫັນເຮືອ "ຊູໂອມິ", ເຮືອຂອງ ປະເທດແຟງລັງ ຍັງຈອດຢູ່ທີ່ທ່າເຮືອ ສະໂຕກໂຮມນັ້ນຢູ່, ແຕ່ວ່າ ກຳລັງກະກຽມອອກເດີນທາງ. ອາດຈະແມ່ນລົມພະຍຸທະເລທີ່ເຮັດ ໃຫ້ມັນຕ້ອງຊັກຊ້າ, ແລະຈົນປານນີ້ ຈຶ່ງຄ່ອຍກອນສະຫນໍ້ຂຶ້ນ.

-ຄ່ອຍໆ! -ຫົວຫນ້າເຮືອອອກຄຳສັ່ງ.

ນ້ຳໄດ້ຟົກຟູຂຶ້ນເປັນຟອງຢູ່ກ້ອງໃບພັດ. ເຮືອກຳລັງເລື່ມເຄື່ອນ ທີ່ແລ້ວ. ໂອ້ຍ ຊ້າໄປເສຍແລ້ວ.

-ທ່ານຜູ້ຮອງຫົວຫນ້າເຮືອເອີ! -ລູກເຮືອຫ້າວຫົບຫ້າ ຮ້ອງນຳ້ວ້າຍວ້າຍ - ນີ້ແມ່ນເຄື່ອງຝາກຈາກຍາແມ່ຢູ່ທ່າ ເກນິກ ແບກ ຝາກມາໃຫ້ເຈົ້າບ່າ.

ລູກເຮືອດົ່ງກ່າວຫາຍໃຈເສົ້າງາບໆຍ້ອນແລ່ນເມື່ອຍ ແລະ ຫົ້ວ ຫົບຫນັກ. ແຕ່ເຮືອ "ຊູໂອມິ" ໄດ້ອອກໄປແລ້ວ, ເກົ່າຈະພະຍາ ຍາມປານໃດກໍຄົງບໍ່ເປັນຜົນ. ແຕ່ແລ້ວເຂົາກໍບໍ່ເສຍຫວັງ. ຫົວຫນ້າ ເຮືອຫາກໄດ້ຍິນ...

-ກອຍຄືນຄ່ອຍໆ, -ຄຳສັ່ງໄດ້ດັງກ້ອງຂຶ້ນຢູ່ເທິງເຮືອ "ຊູ

ໂອ້ຍ", -ຢຸດກ່ອນ, ແລະຍ່ອນຂັ້ນໄດລົງ.

-ທ່ານຜູ້ຮອງຫົວໜ້າເຮືອເອີຍ! ລູກເຮືອດົ່ງກ່າວຮ້ອງຈົນເວັນຄໍພົ້ງ...

-ແມ່ປ້າຝາກເສື້ອແລນແຂນຍາວ ແລະ ເຄື່ອງນຸ່ງໃຫມ່ຊຸດໜຶ່ງມາໃຫ້.

ຝູງຄົນທີ່ຢືນຢູ່ໃກ້ໆນັ້ນ, ໄດ້ພາກັນຫົວຂຶ້ນຢ່າງມ່ວນຊື່ນ. ທຸກຄົນຕ່າງກໍບໍ່ຮູ້ວ່າ ເປັນຫຍັງຈຶ່ງມີຄວາມມ່ວນຊື່ນໃນຕອນເມື່ອເຫັນເຮືອ "ລູໂອ້ຍ" ກັບຄືນເພື່ອເອົາຂອງຝາກ. ທ່ານຜູ້ຮອງຫົວໜ້າເຮືອ ໄດ້ເດ່ືອໄມ້ຮັບເອົາຫີບດົ່ງກ່າວພ້ອມທັງກວັກມືສະແດງຄວາມຂອບໃຈນຳລູກເຮືອຜູ້ນັ້ນ. ຕໍ່ມາເຂົາໄດ້ນຳເອົາຫີບດົ່ງກ່າວເຂົ້າໄປໃນຫ້ອງ. ພໍເຂົ້າໄປແລ້ວກໍອັດໃສ່ກອນປະຕູໄວ້, ແລ້ວເອົາລູກກຸນແຈຍັດເຂົ້າໃສ່ກົງ.

ຈາກນັ້ນ ຫີບດົ່ງກ່າວກໍໄດ້ເດີນທາງໄປຢ່າງບໍ່ຢຸດຢັ້ງ.

ທົ່ນະຄອນ ເຮນຊິງກີ ປະເທດ ແຟ່ງລັ່ງ ຝົນກຳລັງຕົກຫນັກປານກັບກອກນ້ຳອອກຈາກບ້ຳ. ນ້ຳຈາກທໍ່ ແລະ ຮາງລິນ ໄດ້ຊ່ອງເສັ່ງກັນໄຫລລົງດັງຈາກໆ. ຢູ່ຕາມກະຫນົນຫົນທາງມີນ້ຳໄຫລພັດຢ່າງແຮງ.

ທ່ານຜູ້ຮອງຫົວໜ້າເຮືອ ນຸ່ງເສື້ອກັນຝົນສີດຳແລ້ວຢ່າງລົງເຮືອ "ລູໂອ້ຍ" ໄປ, ຈາກນັ້ນກໍພ້າວເບັດໄປຍັງບ່ອນທີ່ມີລົດລາງມ້ານັ້ນໂລດ. ເຂົາມີຄວາມກະວົນກະວາຍເປັນຢ່າງຍິ່ງ.

ຝົນອັນນີ້ຈັ່ງແມ່ນມາຂັດຈັງຫວະເອົາແທ້ໆ! ຫລ້ວນ້ຳຊຶມເຂົ້າໄປໃນຫີບແລ້ວກໍບໍ່ຈັກ? ຝົນເທື່ອນີ້ນັບວ່າແຮງສົມຄວນ, ໂດຍສະເພາະປະເທດແຟ່ງລັ່ງຊຶ່ງເປັນປະເທດທີ່ມີຝົນຫລາຍອີກຢູ່ແລ້ວ. ທ່ານຜູ້ຮອງຫົວໜ້າເຮືອ ແນມພຸ້ນພີ ເພື່ອຊອກຫາກຳມະກອນຜູ້ທີ່ຈະມາຄອຍກ້າຕົ້ນ ຂ້າງສະຖານີ ແຕ່ກໍບໍ່ເຫັນ. ນອກຈາກເຮືອ "ລູໂອ້ຍ" ໄດ້ມາຮອດຊ້າ ເກີງສາມຊົ່ວໂມງແລ້ວພັດມີຝົນຕົກນ້ຳກ້ອນແນວນີ້ອີກ! ຕາມກະຫນົນຫົນທາງມືດມົນຂາດຄົນໄປຄົນມາ. ອ້າດຈະແມ່ນກຳມະກອນຜູ້ມາແຕ່ ເປແຕກສະບອກ ພຸ້ນ, ມາຮອດແລ້ວອີດ້າຕໍ່ໄປບໍ່ໄດ້ຫລືແນວໃດ? ໂອ້ຍ, ຈັ່ງແມ່ນເປັນຕາຢາກຮ້ອງແທ້ໆ! ໂອ ພຸ້ນເດ. ລົດຄັນຫນຶ່ງມາຮອດແລ້ວ... ແຕ່ພັດເປັນຫຍັງຈຶ່ງບໍ່ທັນເຫັນກຳມະກອນຜູ້ທີ່ມາແຕ່ ເປແຕກສະບອກນັ້ນເທື່ອ. ຂະນະທີ່ເຂົາພວມກຳລັງຄິດຢູ່ນັ້ນ, ມີຊາຍໄວສີ່ສິບປີ ຜູ້ຫນຶ່ງຢ່າງອອກມາຈາກເຮືອນ

ທ່ຢູ່ເບື້ອງກົງກັນຂ້າມກັບບ່ອນນັ້ນ. ເຂົາກໍຄືກຳມະກອນທ່ີມາ ຈາກ ເປແຕກສະບອກນັ້ນເອງ.

-ຈັ່ງແມ່ນບໍ່ໂຊກເອົາແທ້ໆ, -ກຳມະກອນຜູ້ນັ້ນເວົ້າທັງ ເຮັດໜ້າຫຍຸ້ງ. -ຂ້ອຍອ້ອມໄປວນນາຢູ່ແຫຼບນີ້ຕັ້ງໜ້າຊົ່ວ ໂມງແລ້ວ, ຝົນກະຕິກອີກ. ເຍັນກະດ່ຳໄປທ່ໍ ວໂຕແລ້ວລະ...

-ຍ້ອນຝົນລົມທະເລນັ້ນແລ້ ຈ່ຳເຮັດໃຫ້ມີການລັກລ້າ. ຄັນຊັ້ນ ປານໃດຊິອອກເດີນທາງ? -ທ່ານຜູ້ຮອງຫົວໜ້າ ຮ ອກາມ.

-ມ ນເອງ.

-ດີຫລາຍ, ຂ້ອຍຈະຕິສາຍແຈ້ງຂ່າວນີ້ທັນທີໂລດ. -ກຳ ມະກອນຜູ້ນັ້ນໄດ້ແຕ່ ກຫົວ, ພ້ອມນັ້ນ ກໍ ົ້ວເອົາຫີບ ແລ້ວ ກໍ ້າວປ ນ ົ້ນ ູ້ລິດລ ງ ຳ ມາຈອດນັ້ນເລີຍ.

ຫລາຍຊົ່ວໂມງຕໍ່ມາ ລິດໄຟແຕ່ ແຜ ລ ງ ກໍໄດ້ນ ຳຫີບ ດ ງ ກ ່ າວໄປຈ ນ ເ ງ ປ ແຕກສະບອກ.

ຂະບວນລິດດ ງ ກ ່ າວ ໄ ດ ແ ລ ນ ຜ ່ ານ ທ ງ ນ າ ໃ ນ ຍ າ ມ ລ ະ ດ ູ ບ ານ ໃ ຫ ມ ່ ແ ລ ວ ແ ລ ນ ຜ ່ ານ ໄ ປ ທ ງ ຫ ມ ູ ບ ານ ນ ອ ຍ ໆ ທ ່ ີ ລ ຸ ມ ຊ ນ ແ ລ ະ ຜ ່ ານ ໄ ປ ທ ງ ສ ະ ກ ານ ທ ່ ີ ພ ັ ກ ຜ ່ ອ ນ ຊ ່ ຳ ຕ ັ ງ ຢ ູ ່ ເ ທ ງ ໂ ນ ນ ສ ູ ງ , ຂ ະ ນ ະ ນ ັ ນ ປ ະ ຕ ູ ປ ່ ອ ງ ຢ ັ ມ ຂ ອ ງ ເ ຮ ື ອ ນ ທ ຸ ກ ໆ ຫ ລ ັ ງ ໄ ດ ້ ກ ຶ ກ ອ ັ ດ ໄ ວ ້ ເ ພ າ ະ ຍ ັ ງ ບ ໍ ທ ັ ນ ມ ີ ຜ ູ ້ ຄ ົ ນ ມ າ ຢ ູ ່ . ເ ນ ື ່ ອ ງ ຈ າ ກ ວ ່ າ ກ ຳ ມ ະ ກ ອ ນ ຈ າ ກ ເ ປ ແ ຕ ກ ສ ະ ບ ອ ກ ໄ ດ ້ ຮ ອ ບ ຮ ູ ້ ທ ົ ວ ກ ັ ນ ນ ິ ທ ລ າ ຍ ສ ິ ມ ຄ ວ ນ , ດ ັ ງ ນ ັ ນ ເ ຂ ົ າ ຈ ່ ຳ ບ ໍ ່ ຈ ຳ ເ ປ ັ ນ ເ ປ ີ ດ ປ ່ ອ ງ ຢ ັ ມ ເ ພ ື ່ ອ ປ ່ ອ ນ ຄ ໍ ອ ອ ກ ເ ບ ິ ່ ງ ຂ ່ າ ງ ນ ອ ກ ລ ່ ຳ . ເ ຂ ົ າ ໄ ດ ້ ແ ຕ ່ ນ ັ ່ ງ ອ ່ ານ ຫ ນ ັ ງ ສ ື ພ ິ ມ ເ ພ ື ່ ອ ລ ໍ ້ າ ໃ ຫ ້ ແ ຕ ່ ຮ ອ ດ ສ ະ ຖ ານ ີ ລ ິ ດ ໄ ຟ ຄ ອ ນ ຂ າ ວ .



ອອກຈາກສະຖານີດອນຂາວໄປກໍແມ່ນເລີ່ມເຂົ້າເຂດປະເທດລັດເຊຍ ແລະຢູ່ແຫ່ງນັ້ນ ມີ ປ້ອມກວດກາພາສີ. ພະນັກງານພາສີຜູ້ຫນຶ່ງ ຂຶ້ນມາເທິງຕູ້ລົດ:

-ຈົ່ງເປີດຫີບຫນ່ວຍນ້ອຍອອກມາເບິ່ງດູ.

ກຳມະກອນຈາກ ເປແຕກສະບວກ ຜູ້ນັ້ນ ກໍເປີດຫີບອອກຄ່ອຍໆ. ມີສົ້ງເສື້ອຊັ້ນໃນຊຸດ ຫນຶ່ງ, ມີແພຕຸ້ມລາຍຕາຫມ້ອງຫນຶ່ງຜືນ ແລະ ກ້ຽະຫນິມອິນລາຄາຖືກຫນຶ່ງກ້ຽ. ເຂົາໄດ້ ເອົາໄມ້ຄ້ອນເຄາະຂອບຫີບປອກໆ ແຕ່ກໍບໍ່ສາມາດພົບເຫັນອັນໃດພໍເປັນທີ່ສົງໄສໄດ້.

ພາຍໃນນຶ່ງຄວັນນັ້ນ ກຳມະກອນດ່ຽງກ່າວ ກໍໄດ້ມາເຖິງນະຄອນ ເປແຕກສະບວກ. ເຂົາ ໄດ້ຂຶ້ນໄປເທິງຊັ້ນທີສອງຂອງເຮືອນຕາກຫລັງຫນຶ່ງ ຊຶ່ງຕັ້ງຢູ່ ທີ່ດອນ ວາຊີລີເອບສະກີ. ຢູ່ເທິງ ຂອບປະຕູ ມີປ້າຍຂຽນວ່າ: "ຫມໍປົວແຂ້ວ".

ຜູ້ທີ່ເປັນແຂກໄດ້ບີບກະດິ່ງ: ສອງບາດທຳອິດເປັນສຽງຍາວໆ, ແລະບາດທີສາມເປັນ ສຽງສັ້ນໆ. ອັນນັ້ນຫມາຍຄວາມວ່າ, ບໍ່ຕ້ອງຢ້ານຜູ້ທີ່ມານັ້ນແມ່ນໄທກັນເອງ.

ຫມໍປົວແຂ້ວອອກມາເປີດປະຕູ.

-ເຊີນເຂົ້າໄປທາງໃນ, ພວກເຮົາກຳລັງລໍຖ້າເຈົ້າຢູ່.

ຄວາມຈິງແລ້ວ ຢູ່ບ່ອນນີ້ເປັນບ່ອນປະຊຸມລັບ. ຫ້ອງເຮືອນດ່ຽງກ່າວແມ່ນໃຊ້ເປັນບ່ອນ ພົບປະຂອງນັກປະຕິວັດ.

ຢູ່ໃນຫ້ອງປົວແຂ້ວ, ມີຍິງສາວຜູ້ຫນຶ່ງກຳລັງນັ່ງຄອງຖ້າກຳມະກອນຜູ້ນັ້ນຢູ່ແລ້ວ.

-ເອົາມາໃຫ້ຂ້ອຍເບິ່ງດູ, -ນາງເວົ້າຂຶ້ນ.

ຈາກນັ້ນ ນາງກໍຈັບເອົາຫີບຂຶ້ນມາເບິ່ງ. ຈົ່ງແມ່ນລຳບາກແທ້ໆ, ມັນອິດສາພະຍາມມາ ຜ່ານຜ່າທຸກອຸບປະສັກຢູ່ຕາມເສັ້ນທາງ ບໍ່ຈັກວ່າຖືກຟ້າຜ່າລົມແຮງຢູ່ກາງທະເລ, ບໍ່ຈັກຖືກຝົນ ສາດ ແລະ ບໍ່ຈັກວ່າຖືກກວດຄົ້ນ.

ນາງສາວຜູ້ນັ້ນ ໄດ້ເປີດແພທີ່ປົກຫໍ່ເປັນຮູບສີ່ຫລ່ຽມນັ້ນອອກ. ແລະດຶງເອົາສິ່ງອື່ນໆ ອອກມານຳ. ຍັງມີສິ່ງຫຍັງອີກແດ່ບໍ? ກຳມະກອນຜູ້ນັ້ນໄດ້ບີບປຸ່ມທີ່ຕິດຢູ່ເທິງຝາອັດນັ້ນຢ່າງ ແຮງ ແລະ ຄ່ອງແຄ້ວ. ຝາອັດດ່ຽງກ່າວ ຈຶ່ງໄດ້ກະເດັນຂຶ້ນຢ່າງແຮງ. ຫີບດ່ຽງກ່າວມີຄົນຫນີບ

ໄວ້ຢ່າງແໜ້ນໜາມ ແລະ ຢູ່ໃນນັ້ນບັນຈຸເຕັມແຕ່ໜັງສືພິມ. ນາງສາວຜູ້ນັ້ນ ຈັບເອົາໜັງສືພິມໃບໜຶ່ງຂຶ້ນມາເບິ່ງ. ໂອ້ "ຫນັກໄຟ"!

ໜັງສືພິມ "ຫນັກໄຟ" ໄດ້ຖືກນຳເອົາມາແຕ່ ມູນິກ ຕາມເສັ້ນທາງອັນຫຍຸ້ງຍາກ, ແລະ ປິດລັບ! ຄືຕ້ອງຜ່ານທາງ ເກີນີແບກ, ໄປຍັງ ສະໂຕກໂຮມ. ແລ້ວ ກໍຜ່ານມາທາງ ແຮນຊີ ກໍ່ຈຶ່ງມາຮອດ ເປແຕກສະບວກ ນີ້.

ນາງສາວຜູ້ນັ້ນ ເລີ່ມເກັບໜັງສືພິມດ່ຳກ່ອນຍັດເຂົ້າໃສ່ໃນຫີບໄມ້ສຳລັບໃສ່ຫມວກຂອງນາງ - ໃນສະໄໝນັ້ນ ພວກແມ່ຍິງມັກໃສ່ຫມວກທີ່ມີໃບໃຫຍ່ກ້ວາງ ຊຶ່ງຫີບໃສ່ຫມວກດັ່ງກ່າວ ມັນກໍຕ້ອງໃຫຍ່ພໍສົມຄວນ. ນາງສາວຜູ້ນັ້ນ ໄດ້ຍັດໜັງສືພິມເຂົ້າໃສ່ໃນຫີບຈົນເຕັມ,

ແລ້ວເອົາເຊືອກຫນັງມາມັດຫຸ້ມໄວ້. ແລ້ວຕໍ່ມາ ນາງກໍໄດ້ເອົາໄປຍາຍໃຫ້ພວກກໍາມະກອນ ຕາມກຸ່ມຕ່າງໆ ໃນຕົວເມືອງແລະເຂດນອກເມືອງ ແຕ່ແຕກສະບວກ. ນາງແມ່ນຜູ້ຫນຶ່ງ ທີ່ ເປັນຜູ້ຈໍາຫນ່າຍຫນັງສືພິມ "ຫມັດໄຟ". ບັນດາຜູ້ທີ່ທໍາຫນ້າທີ່ຈໍາຫນ່າຍຫນັງສືພິມ" ຫມັດ ໄຟ" ນັ້ນ ແມ່ນໄດ້ທໍາການເຄື່ອນໄຫວຢ່າງລັບໆຢູ່ຕາມຕົວເມືອງໃຫຍ່ໃນທົ່ວປະເທດລັດເຊຍ ນັ້ນເອງ.

ພວກເຂົາເຈົ້າພາກັນ ຈັດສົ່ງຫນັງສືພິມ "ຫມັດໄຟ" ນີ້ ໄປຕາມທາງລົດທາງທະເລ, ແລະທາງລົດໄຟກໍມີ. ແລະຈາກນັ້ນ ກໍສົ່ງໄປຍັງເຂດຊາຍແດນແລະເຂດແຄ້ວນຕ່າງໆຢ່າງ ລັບໆ.

ຫນັງສືພິມ "ຫມັດໄຟ" ໄດ້ຊີ້ໃຫ້ເຫັນເຖິງບົດບາດການດໍາເນີນຊີວິດຂອງຊາວກໍາມະ ກອນ ແລະ ຊາວ ກະສິກອນ. ຫນັງສືພິມ "ຫມັດໄຟ" ໄດ້ຊີ້ໃຫ້ເຫັນວ່າ: "ຕ້ອງຕໍ່ສູ້ຕ້ານ ກັບລະບອບກະສັດລັດເຊຍ! ຕ້ອງຕໍ່ສູ້ຕ້ານກັບພວກເຈົ້າທຶນ!".

"ຫມັດໄຟ" ໄດ້ຮຽກຮ້ອງໃຫ້ມີການສ້າງຕັ້ງພັກ, ຮຽກຮ້ອງໃຫ້ເຮັດການປະຕິວັດ.

ຂະບວນການຕໍ່ຕ້ານອັນແຂງແກ່ນຂອງກໍາມະກອນຕ່າງກໍມີ "ຫມັດໄຟ" ປຸກລຸກຂຶ້ນ ຂວາຍ ແລະ ແຜ່ຜາຍໄປໃນທົ່ວປະເທດລັດເຊຍ.

ຜູ້ທີ່ເປັນຫົວຫນ້າຂອງຂະບວນການອັນຍິ່ງໃຫຍ່, ທັງເປັນຜູ້ຊີ້ນໍາແລະທັງເປັນຜູ້ແຕ່ງ ຫນັງສືພິມ "ຫມັດໄຟ" ທີ່ແທ້ຈິງ ແລະ ທັງຫມົດເຫລົ່ານີ້ແມ່ນອະລາດີເມຍ ອີລີຊ ນັ້ນ ເອງ.

ອະລາດີເມຍ ອີລີຊ ໄດ້ຮັບຈົດຫມາຍຈາກຊາວກໍາມະກອນ ແລະບັນດາຜູ້ຈໍາຫນ່າຍຫນັງ ສືພິມ "ຫມັດໄຟ" ນັ້ນ ສົ່ງມາແຕ່ປະເທດລັດເຊຍຢ່າງຫລວງຫລາຍເປັນຈໍານວນຮ້ອຍໆສະ ບັບ. ໃນນັ້ນມີທັງຈົດຫມາຍທີ່ຂຽນດ້ວຍລະຫັດລັບ, ບັນດາບົດຂ່າວ, ບົດສໍາພາດຕ່າງກໍໄດ້ ຖືກສົ່ງມາຈາກໂຮງຈັກໂຮງງານຢູ່ພາຍໃນປະເທດລັດເຊຍ ເພື່ອໃຫ້ພິມລົງໃນຫນ້າຫນັງສືພິມ "ຫມັດໄຟ" ກັນທັງນັ້ນ. ອະລາດີເມຍ ອີລີຊ ໄດ້ຂຽນຈົດຫມາຍຕອບ ບັນດາກໍາມະກອນຢູ່ ຕາມໂຮງຈັກໂຮງງານລັດເຊຍຢ່າງເນື່ອງນິດ. ພ້ອມທັງຂຽນບົດຄວາມລົງໃນຫນັງສືພິມ"ຫມັດ

ໄຟ" ນັ້ນອີກ. ນອກນັ້ນຍັງຂຽນປຶ້ມ ກ່ຽວກັບການເມືອງ ແລະຊີວິດຕໍ່ສູ້ແບບປະຕິວັດອີກ ດ້ວຍ.

ນັບຕັ້ງແຕ່ເດືອນສິບສອງ ປີ ໑໙໐໑ ເປັນຕົ້ນມາ, ອະລາດີເມຍ ອີລີຊ ໄດ້ເຊັນຊື່ໃສ່ ໃນຫນ້າຫນັງສືພິມ ແລະ ປຶ້ມທີ່ຂຽນດ້ວຍຕົນເອງວ່າ: ເລນິນ ຊຶ່ງແມ່ນຊື່ອັນໂດ່ງດັງ ແລະ ທົ່ວໂລກຕ່າງກໍຮູ້ຊັດກ່ອນນັ້ນ.

ພັກໂບນເຊວິກ

ປະເທດ ສະວິດ ເປັນປະເທດທີ່ມີພູຜາຫລາຍ, ອ້ອມຮອບຫນອງ ເຊີເນວທີ່ຂຽງງາມ ນັ້ນ ຄື ນະຄອນ ເຊີເນວ. ຢູ່ເຂດນອກເມືອງ ຊຶ່ງບໍ່ໄກກັບຫນອງພໍປານໃດ ແລະຢູ່ຄຸ້ມ ເຊເສໂຣນ ມີເຮືອນສອງຊັ້ນຫລັງຫນຶ່ງງາມຫນ້າເບິ່ງ. ຫລັງຄາເຮືອນດັ່ງກ່າວມຸງດ້ວຍກະເບື້ອງ ຄ້າຍຄືກັນກັບເຮືອນຫລັງອື່ນໆ, ບານປະຕູປ່ອງຢ້ຽມທາສີຟ້າແກ່. ຢູ່ລຸ່ມປ່ອງຢ້ຽມມີເດີ່ນນ້ອຍ ທີ່ມີຫຍ້າ ຂຽງງາມຢູ່ຕະຫລອດເວລາ.

"ສອງຜົວເມຍ ອີລີຊ" ໄດ້ອາໃສຢູ່ໃນເຮືອນຫລັງດັ່ງກ່າວ. ບັນດາສະຫາຍທັ້ງຫລາຍ ເອີ້ນ ອະລາດີເມຍ ອີລີຊ ແລະ ນາເດສະດາ ກົງສະຕັງຕິນິບນາ ດ້ວຍຄວາມຮັກໃຄ່ຄືແມ່ ນັ້ນ.

ຕອນທຳອິດສອງຜົວເມຍ ອີລີຊ ພາກັນ ອາໃສຢູ່ເມືອງ ນູນີກ ພຸ້ນ, ຍ້ອນພວກຕຳຫລວດ ຕິດຕາມເລື່ອງຫນັງສືພິມ "ຫນັດໄຟ" ນັ້ນແລ້ວ ຈຶ່ງໄດ້ຍ້າຍຫນີອອກມາ. ຈາກນັ້ນ ພວກ ເຂົາເຈົ້າໄດ້ພາກັນໄປຢູ່ທີ່ ລອນດອນ-ປະເທດອັງກິດ, ຢູ່ທີ່ ລອນດອນ ພວກເຂົາເຈົ້າໄດ້ ສືບຕໍ່ພິມຫນັງສືພິມ "ຫນັດໄຟ" ນັ້ນໄດ້ປີຫນຶ່ງເຕັມໆ. ແຕ່ຢູ່ແຫ່ງນັ້ນ ກໍມີອັນຕະລາຍຄືກັນ. ດັ່ງນັ້ນຈຶ່ງຕ້ອງໄດ້ຊອກບ່ອນລີ້ຊ່ອນຫນັງສືພິມ "ຫນັດໄຟ" ອີກ. ຍ້ອນເຫດນັ້ນເອງ ສອງຜົວເມຍ ອີລີຊ ຈຶ່ງໄດ້ຍ້າຍມາຢູ່ທີ່ ເຊີເນວ, ໃນຄຸ້ມ ເຊເສໂຣນ.

-ຈັ່ງແມ່ນງາມ! -ພາຍຫລັງທີ່ໄດ້ເລາะເບິ່ງທົ່ວບໍລິເວັນເຮືອນນ້ອຍສອງຊັ້ນດັ່ງກ່າວ

ແລ້ວ ອະລາດີເມຍ ອີລີຊກໍໄດ້ເວົ້າຂຶ້ນຄືແນວນັ້ນ: ທາງຊັ້ນລຸ່ມມີຫ້ອງຄົວກິນກວ້າງສົມຄວນ, ມີຂັ້ນໄດນ້ອຍແຄບໆ ເພື່ອຂຶ້ນເມື່ອຊັ້ນເທິງ, ມີຫ້ອງນ້ອຍໆສວຍງາມ, ແລະແຈ້ງສະຫວ່າງດີແລະທັງງົບສະຫງັດອີກ, ຊົ່ງຢູ່ບ່ອນນີ້ສາມາດເຮັດວຽກໄດ້ຢ່າງສະບາຍໃຈ.

ວຽກງານຂອງ ອະລາດີເມຍ ອີລີຊ ຍາມໃດກໍຫາກຫລາຍຢູ່ພໍຊໍ່ານັ້ນ, ແຕ່ພວກເຂົາເຈົ້າກໍຢູ່ຢ່າງສະຫງົບ ບໍ່ໄດ້ຢູ່ດິນປານໃດ. ບັນດາຊາວບ້ານຄຸ້ມເຊເສໂຣນ ນີ້ໃຜກໍສັງເກດວ່າ: ເຮືອນຂອງສອງພີ່ນ້ອງເມຍຄົນລັດເຊຍນີ້ ມີຜູ້ຄົນຫລວງເວົ້ຍມາຫາຢູ່ເປັນປະຈຳ, ແລະຕະຫລອດເດືອນເຈັດປີ ດຽວນີ້ ແຫ່ງຄົ້ຈ່ງວ່າມີແຂກຄົນມາຢ້ຽມຢາມບໍ່ໄດ້ຂາດ. ບັນດາແຂກທີ່ມາຢ້ຽມຢາມ, ບາງພ່ອງກໍມາຜູ້ດຽວ ແລະ ບາງພ່ອງ ກໍມາເປັນຫມູ່ສອງສາມຄົນ. ມັນເປັນອັນຈະແຈ້ງຢູ່ບ່ອນວ່າ, ພວກນີ້ເຂົາບໍ່ໄດ້ແມ່ນປະຊາຊົນ ທີ່ອາໃສຢູ່ກັບທ້ອງຖິ່ນນີ້: ເພາະຄົນພວກນີ້ ເຂົາເວົ້າຈາ ແລະ ນຸ່ງຖືບໍ່ຄືກັບຄົນທ້ອງຖິ່ນນີ້ຈັກຄົ້. ພວກເຂົາເຈົ້າເວົ້າພາສາລັດເຊຍນຳກັນ. ພວກເຂົາແມ່ນຄົນຊາວລັດເຊຍ. ບາງທີພວກເຂົາອາດຈະມາ ເຊີແນວ ນີ້ເປັນເທື່ອທຳອິດກໍເປັນໄດ້, ເພາະທຸກສິ່ງຢ່າງສຳລັບເຂົາແລ້ວ ແມ່ນຍັງກະດ້າງກະເດື່ອງຢູ່. ພວກເຂົາພໍໃຈນຳຄວາມງາມຂອງທ້ອງຟ້າ ທີ່ມີແສງແດດ, ປ່ອງຢ້ຽມທີ່ທາສີຟ້າແກ່ ແລະ ພຸ່ມດອກໄມ້ຢູ່ໃນສວນຕໍ່ຫນ້າເຮືອນເຫລົ່ານັ້ນເປັນຕົ້ນ.

ບັນດາປະຊາຊົນ ທີ່ອາໃສຢູ່ໃນຄຸ້ມ ເຊເສໂຣນ ໄດ້ມີຄວາມປະຫລາດໃຈເພາະວ່າໃນລະດູຮ້ອນປີ ດຽວນີ້ ໄດ້ມີຄົນລັດເຊຍມາທີ່ ເຊີແນວນີ້ເປັນຈຳນວນຫລາຍຜິດປົກກະຕິ. ແນ່ນອນແລ້ວ, ກໍອາດຈະບໍ່ມີໃຜຮູ້ໄດ້ດອກວ່າບັນດາຜູ້ຄົນເຫລົ່ານັ້ນ ລ້ວນແລ້ວແຕ່ແມ່ນຕົວແທນຊົ່ງມາຈາກແຕ່ລະແຫ່ງໃນປະເທດລັດເຊຍ, ພວກເຂົາເຫລົ່ານັ້ນໄດ້ມາເຕົ້າໂຮມເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ II ຂອງພັກ.

ບັນດາຜູ້ແທນຕ່າງໆໄດ້ມາພົບກັບ ເລນິນ ກໍເພື່ອປຶກສາຫາລື ກ່ຽວກັບບັນຫາໃນກອງປະຊຸມໃຫຍ່ ແລະເພື່ອແລກປ່ຽນຄວາມຄິດຄ່ວາມເຫັນຊົ່ງກັນແລະກັນ. ທັງນີ້ ກໍເພາະເຂົາຮູ້ວ່າ ເລນິນ ໄດ້ກະກຽມເພື່ອກອງປະຊຸມໃຫຍ່ນີ້ຫລາຍທີ່ສຸດ. ທຸກຄົນຕ່າງກໍເຄົາລົບນັບຖື ອະລາດີເມຍ ອີລີຊ, ຜູ້ທີ່ໄດ້ຂຽນບົດລົງໃນຫນ້າຫນັງສືພິມ "ຫນັດໄຟ" ຢ່າງຫລວງຫລາຍ ແລະ

ເປັນຜູ້ຂຽນປຶ້ມ "ເຮັດຫຍັງ" ທີ່ໂດ່ງດັງທີ່ສຸດນັ້ນ, ປຶ້ມດັ່ງກ່າວ ໄດ້ຂຽນກ່ຽວກັບການກໍ່ສ້າງພັກຄືແນວໃດ; ໄດ້ກະກຽມຂໍ້ກຳນົດຂອງພັກ ແລະ ໂຄງການການເມືອງເພື່ອຕໍ່ສູ້ໃຫ້ແກ່ພັກ.

"ພວກເຮົາຕ້ອງການລະບອບສັງຄົມໃຫມ່ ທີ່ມີຄວາມຈິບງາມກ່ວາເກົ່າ. ຢູ່ໃນລະບອບໃຫມ່ ທີ່ມີຄວາມຈິບງາມດັ່ງກ່າວນັ້ນ ແລະ ຈະຕ້ອງບໍ່ມີຜູ້ຮັ່ງຜູ້ທຸກ - ເລນິນ ໄດ້ອະທິບາຍວ່າ, - ຢາກບັນລຸໄດ້ແນວນັ້ນ, ພວກເຮົາທຸກຄົນຕ້ອງເຮັດວຽກ".

ວະລາດີເມຍ ອີລີຊ ພະຍາຍາມສຸດຂີດເພື່ອຈະສ້າງສັງຄົມດັ່ງກ່າວນັ້ນຂຶ້ນມາໃຫ້ໄດ້ ແລະ ໃນລະຫວ່າງ ກຸກເນລະເທດຢູ່ນັ້ນ, ເພິ່ນກໍໄດ້ຄາດຄິດເອົາໄວ້ຢ່າງລະອຽດລະອໍ ກ່ຽວກັບບົດໂຄງການການເມືອງ.

ເພິ່ນຢາກໃຫ້ກອງປະຊຸມໃຫຍ່ໄດ້ຄົ້ນຄ້ວາເບິ່ງວ່າ: ຈະຕໍ່ສູ້ແນວໃດຈຶ່ງຈະເຮັດໃຫ້ສັງຄົມໃຫມ່ນັ້ກຖືກຕ້ອງເຫມາະສົມກ່ວາ, ເຮັດແນວໃດຈຶ່ງຈະກ້າວໄປເຖິງສັງຄົມໃຫມ່ນັ້ນຢ່າງລວດເລວໄດ້.

ບັນດາຜູ້ແທນ ໄດ້ເດີນທາງອອກຈາກ ເຊີເນວ ແລະ ໄປເຖິງ ບຣຸກແຊນ ນະຄອນຫລວງຂອງປະເທດ ແບນຊິກ. ກອງປະຊຸມໃຫຍ່ຄັ້ງທີ II ໄດ້ໄຂຂຶ້ນທີ່ ບຣຸກແຊນ. ກອງປະຊຸມໃຫຍ່ດັ່ງກ່າວໄດ້ເປີດຂຶ້ນຢູ່ໃນຫ້ອງສາງໃສ່ເບ້ຽຂະຫນາດໃຫຍ່ແຫ່ງຫນຶ່ງ ຊຶ່ງເປັນບ່ອນທີ່ ມືດມົວ ແລະ ຂາດຄວາມສະດວກສະບາຍທຸກຢ່າງ.

ສາງດັ່ງກ່າວ ໄດ້ຖືກປັດກວາດຢ່າງສະອາດກ້ຽງງາມດີ. ຢູ່ທາງໃນມີຮ້ານໄມ້ອັນຫນຶ່ງ. ປະຕູບ່ອງຍ້ຽມໃຫຍ່ຖືກອັດດ້ວຍແຜ່ນແພແດງ. ຢູ່ທາງລຸ່ມມີຕັ່ງແປ້ນຍ້າວຽນຢູ່ ຜູ້ແທນທຸກຄົນຕ່າງກໍເຂົ້ານັ່ງປະຈຳທີ່ຢູ່ທີ່ນັ້ນ. ເປລດນິບໄດ້ກ້າວຂຶ້ນເທິງເວທີ. ເຂົາເປັນນັກ ມາກຊິດ ຜູ້ທຳອິດຂອງລັດເຊຍ, ທັງເປັນສາດສະດາຈານຜູ້ຫນຶ່ງ. ກ່ອນຫນ້າ ເລນິນນັ້ນ, ເຂົາເອງ ກໍເຄີຍໄດ້ຂຽນປຶ້ມອະທິບາຍກ່ຽວກັບທິດສະດີປະຕິວັດຂອງ ມາກ. ເປລດນິບ ຂຶ້ນອ່ານບົດປາໄສໄຂກອງປະຊຸມໃຫຍ່ຄັ້ງທີ II ຢ່າງຄຶກຄື້ນ ແລະ ບົດປາໄສຂອງເຂົາກໍເຫັນວ່າ ສອດຄ່ອງເຫມາະສົມທີ່ສຸດ.

ທຸກຄົນຕ່າງກໍຕັ້ງໃຈຟັງດ້ວຍຄວາມເອົາໃຈໃສ່. ວະລາດີເມຍ ອີລີຊເອງຮູ້ສຶກຕື້ນຕັນໃຈ

ເປັນພິເສດ! ມີແຕ່ດວງຕາທັງຄູ່ເທົ່ານັ້ນທີ່ເປັນປະກາຍ. ເລນິນໄດ້ຄິດເຖິງກອງປະຊຸມໃຫຍ່ ຂອງພັກ ແລະ ເຖິງການຟື້ນຟູພັກນີ້ມາຕັ້ງແຕ່ດິນນານແລ້ວ. ໃນທີ່ສຸດ ກໍໄດ້ກາຍມາເປັນ ຄວາມຈິງຈົນໄດ້.

ກອງປະຊຸມໃຫຍ່ໄດ້ເປີດຂຶ້ນແລ້ວ, ແຕ່ກໍປະກົດວ່ານັບຕັ້ງແຕ່ມື້ເລີ່ມແລກຂອງກອງປະ ຊຸມ, ກໍມີການບໍ່ລົງລອຍກັນເກີດຂຶ້ນໂລດ, ເພາະວ່າມີບາງຜູ້ແທນບໍ່ເຫັນດີນຳ ບົດໂຄງການ ການຕໍ່ສູ້ທາງການເມືອງຂອງ ເລນິນ.

ເພາະວ່າບົດໂຄງການເມືອງດັ່ງກ່າວ ເປັນໂຄງການໃຫມ່ອ່ຽມທ້າວາດເອົ້ອມໂພດສຳລັບ ພວກເຂົາ. ດັ່ງນັ້ນ ບັນດາຕົວແທນຕ່າງໆຈຶ່ງໄດ້ທຳການໂຕ້ກຽງກັບ ເລນິນ. ເລນິນ ເປັນຄົນມີ ເຫດຜົນ, ແລະ ໄດ້ຢືນຢູ່ໃນທ່າປ້ອງກັນເຫດຜົນຂອງຕົນຢ່າງຫ້າວຫັນ, ດັ່ງນັ້ນ ຈຶ່ງເຮັດໃຫ້ ຕົວແທນໃນຈຳນວນຫລວງຫລາຍນັ້ນ ອ່ອນມາເຂົ້າຂ້າງ ເລນິນ. ກອງປະຊຸມໃຫຍ່ໄດ້ປຶກ ສາຫາລືກ່ຽວກັບບົດໂຄງການການເມືອງ, ແລະກົດລະບຽບຂອງພັກ, ເລືອກຕັ້ງຄະນະກຳມະ ການສູນກາງ, ແລະຄະນະຮັບຜິດຊອບການຂຽນແຕ່ງບົດລົງຫນັງສືພິມ "ຫນັດໄຟ". ຢູ່ແຫ່ງນີ້

ເອງ ຊຶ່ງ ເປັນ ບ່ອນ ທີ່ ມີ ການ ຕໍ່ ສູ້ ຢູ່ ໃນ ທຸກ ໆ ບັນ ຫາ ເກີດ ຂຶ້ນ. ເລນິນ ໄດ້ ອ່ານ ບົດ ລາຍ ງານ ຢ່າງ ມີ ເນື້ອ ໃນ ຈະ ແຈ້ງ ແລະ ເຕັມ ໄປ ດ້ວຍ ຄວາມ ປຸກ ລະ ດົມ ແລະ ເຮັດ ໃຫ້ ຜູ້ ຟັງ ເອົາ ໃຈ ໃສ່ ຟັງ ຢ່າງ ຈິງ ຈັງ. ໃນ ກອງ ປະ ຊຸມ ໃຫຍ່ ດັ່ງ ກ່າວ ໄດ້ ເປີດ ໃຫ້ ມີ ເກີ ງ ສິ ກ ສະ ໄຫມ, ແລະ ເລນິນ ໄດ້ ຂຶ້ນ ອ່ານ ບົດ ປາ ໄສ ແລະ ບົດ ກາມ ເພື່ອ ຕອບ ເກີ ງ ໑໔ ກ ບົດ. ເລນິນ ສາ ມາດ ເວົ້າ ໄດ້ ຢ່າງ ຈັບ ໃຈ! ຕົວ ແທນ ຂອງ ຫລາຍ ໆ ຄະ ນະ ໄດ້ ເຫັນ ດີ ເຫັນ ພ້ອມ ນໍາ ເລນິນ. ບັນ ດາ ຜູ້ ຊຶ່ ງ ເຫັນ ດີ ເຫັນ ພ້ອມ ນໍາ ການ ປະ ຕິ ວັດ ຂອງ ພວກ ກໍາ ມະ ກອນ, ເຫັນ ດີ ນໍາ ຄວາມ ຜາ ສຸກ ຂອງ ປະ ຊາ ຊົນ, ເຫັນ ດີ ນໍາ ໂຄ ງ ການ ເມືອງ ຂອງ ເລນິນ, ເຫັ ນ ດີ ນໍ ໍ ເລນິນ ນັ ນ ເອ ີ ນ ວ ່ ໍ ພ ວ ກ ໂ ບ ນ ເ ຊ ວ ິ ກ . ສ ່ ວ ນ ຜ ູ ້ ທ ີ ່ ຄັ ດ ຄ ້ ານ ຕ ້ ານ ກ ັ ບ ເ ລ ນ ິ ນ ຢ ູ ່ ໃ ນ ກ ອ ງ ປ ະ ຊ ຸ ມ ໃ ຫ ຍ ່ ຄ ັ ້ ງ ທ ີ II ນ ັ ້ ນ ເ ອ ີ ນ ວ ່ ໍ ພ ວ ກ ແ ມ ນ ເ ຊ ວ ິ ກ , ພ ວ ກ ເ ຂ ົ ໍ ແ ມ ່ ນ ຄ ົ ນ ຈ ໍ ໍ ນ ວ ນ ນ ້ ອ ຍ . ພ ວ ກ ແ ມ ນ ເ ຊ ວ ິ ກ ດ ັ ່ ງ ກ ່ ໍ ວ ແ ມ ່ ນ ໄ ດ ້ ຫ ່ ໍ ງ ເ ຫ ົ ນ ຈ ໍ ໍ ກ ກ ໍ ໍ ນ ຕ ໍ ່ ສ ູ ້ ປ ະ ຕ ິ ວ ັ ດ . ແ ຕ ່ ກ ົ ງ ກ ັ ນ ຂ ໍ ໍ ມ ຢ ູ ່ ບ ່ ອ ນ ວ ່ ໍ , ພ ວ ກ ໂ ບ ນ ເ ຊ ວ ິ ກ ພ ັ ດ ໄ ດ ້ ມ ີ ກ ໍ ໍ ນ ເ ຕ ົ ໍ ໍ ໂ ຮ ມ ກ ັ ນ ເ ຂ ົ ໍ ໍ ຢ ່ ໍ ງ ແ ໜ ້ ນ ແ ກ ່ ນ ້ ອ ມ ຂ ໍ ໍ ງ ເ ລ ນ ິ ນ ຊ ຶ ່ ງ ເ ປ ັ ນ ເ ວ ລ ໍ ໍ ນ ໍ ໍ ນ ໍ ໍ ນ

ເຟືອສີດຳເທິງທ້ອງຟ້າຫນີໄປ, ຈາກນັ້ນເຟືອສີແຫລ້ມໍປະກົດອອກມາອີກ, ດວງຕາເວັນໄດ້ ສ່ອງແສງສະຫວ່າງລົງມາບໍ່ພໍເທົ່າ ຫນ້ອຍຫນຶ່ງ ຝົນພັດຕົກລົງມາອີກແລ້ວ.

ກອງປະຊຸມໃຫຍ່ໄດ້ສິ້ນສຸດລົງ ພາຍໃຕ້ມືທຸ່່ມເຍັນຄືແນວນີ້ແລ້ວ ຊ່ຳແສງແດດ ໄດ້ພຸ່ງ ພົ້ນອອກມາພຽງຊົ່ວໄລຍະຫນຶ່ງ ແລ້ວ ພັດຫລົບລີ້ເຂົ້າໄປຢູ່ໃນກ້ອນເຟືອສີດຳອີກ, ເລນິນ ໄດ້ ເວົ້າວ່າ:

-ພວກສະຫາຍທັງຫລາຍເອີຍ! ໃນໄລຍະຊາວປີກ່ອນຫນ້ານີ້, ແລະກໍຢູ່ລອນດອນແຫ່ງ ນີ້ແລ້ວ ທີ່ທ່ານ ກາກມາກ ໄດ້ເສຍຊີວິດ. ພວກເຮົາພາກັນໄປໄວ້ອາໄລຢູ່ຂຸມຝັງສົບ ຂອງ ກາກມາກຜູ້ຍິ່ງໃຫຍ່ເທາະ.

ພວກເຂົາເຈົ້າໄດ້ພາກັນໄປຍັງປ່າຊ້າ, ຊຶ່ງຕັ້ງຢູ່ທາງພາກເຫນືອຂອງເມືອງ ລອນດອນ ຢູ່ ເທິງພູສູງ. ຢືນຢູ່ເທິງຫນ່ວຍພູດ້ງກ່າວ, ສາມາດແນມເຫັນ ເມືອງ ລອນດອນໄດ້ກວ້າງໄກ; ບັນດາຫລັງເຮືອນ ຊຶ່ງເປັນເງົາດຳຍ້ອນຖືກອາບດ້ວຍຄ້ວນໄຟ, ແລະ ເຫັນຫລັງຄາທີ່ເປັນສີ ດຳມືດມົວແລະທໍ່ຄ້ວນໄຟຂອງໂຮງຈັກໂຮງງານ. ຂຸມຝັງສົບ ຂອງ ກາກມາກ ຖືກກວມດ້ວຍ ແທ່ນຫີນອ່ອນສີຂາວ, ມີຫຍ້າຂຽວງາມ ເກີດຢູ່ອ້ອມໆ. ຢູ່ເບື້ອງຫົວສົບມີພຸ່ມດອກກຸຫລາບ ຊຶ່ງກົ່ງງ່າຂອງມັນໄດ້ໂອ່ນລົງມາດ້ວຍອາການເສົ້າໆ. ບັນດາຄົນຮິ່ມໄດ້ຕົ່ງແວບໆຢູ່ຕາມທາງ ຍ່າງ.

-ພວກສະຫາຍທັງຫລາຍເອີຍ, -ເລນິນ ເວົ້າຄ່ອຍໆພ້ອມທັງປົດຫມວກອອກ. -ມາກ ຜູ້ຍິ່ງໃຫຍ່ເປັນອາຈານຂອງພວກເຮົາ. ພວກເຮົາມາສາບານຢູ່ຕໍ່ຫນ້າດວງວິນຍານຂອງມາກ ກັນເທາະ: ວ່າຈະຊ່ວັດຕໍ່ທິດສະດີຂອງທ່ານ, -ແລະເວົ້າຕື່ມອີກວ່າ -ພວກເຮົາຈະຕໍ່ສູ້ຢ່າງບໍ່ ຢຸດຢັ້ງ. ຈົ່ງກ້າວຂຶ້ນ, ພວກສະຫາຍເອີຍ! ມີແຕ່ກ້າວຂຶ້ນເທົ່ານັ້ນລະ.

ການປະຫັດປະຫານກັນ

ໂຮງງານປູຈີລົບ ທີ່ ເປເຕກສະບວກ ໄດ້ໄລ່ກຳມະກອນອອກສາມຄົນຢ່າງບໍ່ມີເຫດຜົນ, ຄືພວກເຂົາຖືກໄລ່ອອກ ຍ້ອນອີ່ຕາເກົ້າຫົວຫນ້າຄົນງານບໍ່ມັກພວກເຂົາເຈົ້າ ຈາກນັ້ນຄວາມ

ອິນລະຫິນອຸ້ນວາຍ ກໍໄດ້ເລີ່ມລະເບີດຂຶ້ນຢູ່ທີ່ໂຮງງານແຫ່ງນັ້ນ.

-ພວກເຮົາຂາດສິດທຸກຢ່າງ. ຈົ່ງມອບສິດເຫລົ່ານັ້ນຄືນໃຫ້ແກ່ພວກເຮົາ. ໂຄ່ນລົ້ມພວກຫົວໜ້າຄົນງານ ທີ່ໂຫດຮ້າຍ! -ກຳມະກອນຢູ່ທີ່ໂຮງງານ ປູຈີລິບໄດ້ກ່າວຄຳຮຽກຮ້ອງ.

ຈາກນັ້ນ ການປະທ້ວງນັດຢຸດງານກໍໄດ້ລະເບີດຂຶ້ນ. ກຳມະກອນຢູ່ໃນໂຮງງານ ປູຈີລິບໄດ້ນັດຢຸດງານຢ່າງຄົບຫນ້າຄົບຕາ, ໂດຍບໍ່ຍົກເວັ້ນແມ່ນແຕ່ຄົນດຽວ. ແລະໃນມື້ດຽວກັນນັ້ນ ໂຮງງານອີກສອງແຫ່ງກໍໄດ້ປະທ້ວງນັດຢຸດງານຄືກັນ. ມື້ຕໍ່ມາ ກໍໄດ້ມີກຳມະກອນ ຈາກໂຮງຈັກໂຮງງານຕ່າງໆເປັນຈຳນວນ ສິຜ້ອ ແຫ່ງ ນັດຢຸດງານປະທ້ວງອີກ. ບັນດາເຄື່ອງຈັກເຄື່ອງລາງໄດ້ຢຸດສະງັກ ຈົນຫມົດ. ເປແຕກສະບວກ ໄດ້ກາຍສະພາບມາເປັນແຫ່ງທີ່ສັບສົນອຸ້ນ-ວາຍ. ທຸກຄົນຕ່າງກໍຄອງຄອຍວ່າຈະມີເລື່ອງຫຍັງເກີດຂຶ້ນ.

ວັນອາທິດ ທີ ລ ເດືອນມັງກອນ ປີ ໑໙໐໕, ກຳມະກອນເປັນຈຳນວນພັນໆຄົນ ໄດ້ແຫ່ຂະບວນໄປຕາມຖະຫນົນ.

-ພວກເຮົາຈະເຂົ້າເຝົ້າກະສັດລັດເຊຍ. -ບັນດາກຳມະກອນໄດ້ເວົ້າຄືແນວນີ້. -ໄປຫາ ທູນກະສັດຜູ້ເປັນເຈົ້າ, ຫວັງວ່າເພິ່ນຄົງໃຫ້ຄວາມເປັນທຳ ແລະປົກປ້ອງບໍ່ໃຫ້ບ່າວໄພ່ລາດສະດອນ ຜູ້ບໍ່ມີໂທດໂພຍຫຍັງຕ້ອງຕາຍຍ້ອນຄວາມອຶດຫິວ.

ພັກ ໂບນເຊວິກ ກໍໄດ້ເຕືອນພວກເຂົາແລ້ວວ່າ: ບໍ່ຈຳເປັນໄປ, ກະສັດລັດເຊຍ ຈະບໍ່ງ່ຽງຫູຟັງພວກເຈົ້າດອກ!

ແຕ່ບັນດາກຳມະກອນ ກໍຍັງດັ້ນດ້ານໄປຈົນໄດ້. ພວກເຂົາຄິດວ່າ: ກະສັດລັດເຊຍ ບໍ່ຮູ້ເລື່ອງລາວກ່ຽວກັບ ບ່າວໄພ່ລາດລະດອນທີ່ປະສົບກັບຄວາມທຸກຍາກອຶດຫິວ. ຖ້າເພິ່ນຮູ້, ເພິ່ນກໍຄົງຈະໃຫ້ຄວາມອຸປະກຳຄ້ຳຊູປົກປ້ອງພວກເຂົາ ແລະນຳພວກຫົວໜ້າຄົນງານ ແລະພວກເຈົ້າຂອງໂຮງງານອຸບາດເຫລົ່ານັ້ນ.

ພວກກຳມະກອນໄດ້ນຳເອົາຄຳຮຽກຮ້ອງໄປມອບໃຫ້ແກ່ ກະສັດ ລັດເຊຍ. ໃນຕອນເຊົ້າຂອງວັນອາທິດນັ້ນ, ຖະຫນົນຫົນທາງທຸກໆເສັ້ນຂອງ ນະຄອນ ເປແຕກສະບວກ, ໄດ້ອັ່ງອໍໄປດ້ວຍເຫລົ່າກຳມະກອນ ທີ່ພາກັນແຫ່ຂະບວນໄປຍັງ ວັງລະດູຫນາວ.

ແຕ່ແນມເບິ່ງພຸ້ນດູ. ຢູ່ຕາມທາງສີ່ແຍກໄດ້ມີກອງທະຫານຍືນລວມກັນເປັນແຖວ ໂດຍມີ ນາຍທະຫານໃສ່ຊຸບສີຂາວ ຍືນຢູ່ຫນ້າແຖວດັ່ງກ່າວ. ພວກເຂົາໄດ້ແຈກຢາຍກັນ ຢູ່ທົ່ວຕົວ ເມືອງ. ເພື່ອເຮັດຫຍັງ?

- ເພື່ອຮັກສາຄວາມປອດໄພຫັ້ນແລ້ວ. - ກຳມະກອນຜູ້ຫນຶ່ງກ່າວ ກ່ອນຈະ ອະທິບາຍໃຫ້ຮູ. - ອາດຈະແມ່ນພວກເຂົາຢ້ານພວກເຮົາແຫຍ້ຊິກັນ, ຊຸກກັນລົ້ມກໍ່ບໍ່ຈັກ.

ເສົາຫິນໃຫຍ່ຂອງວັງລະດູຫນາວ, ຕັ້ງເທົ້າເລີ່ຍູ່ລະຫວ່າງກາງສະຫນາມຫລວງ. ປ່ອງ ຢ້ຽມຊຶ່ງນັບເປັນຈຳນວນຮ້ອຍໆປ່ອງກໍ່ກອັດແຈບ. ບັນດາທະຫານ ຈຳນວນຫລວງຫລາຍ ໄດ້ຍືນລວມແຖວລັດຢູ່ຕໍ່ຫນ້າວັງດັ່ງກ່າວ. ພວກເຂົາມີສີຫນ້າບູດບຶ້ງ ແລະ ເຄັ່ງຕຶງ. ເມື່ອ ແນມເຫັນຝູງຄົນຈຳນວນຫລາຍພວມກຳລັງຫລັ່ງໄຫລເຂົ້າມາ, ຫມໍນາຍທະຫານກໍ່ຟ້າວ ຍົກມືທີ່ໃສ່ຊຸບສີຂາວນັ້ນຂຶ້ນ. ຈາກນັ້ນ ທະຫານທຸກໆຄົນ ກໍ່ໄດ້ຍົກປືນຂຶ້ນຕັ້ງບ່າທັນທີ.

- ອ້າຍນ້ອງທະຫານບໍ່ຕ້ອງຢ້ານດອກ! - ພວກກຳມະກອນຈຳນວນຫລາຍພາກັນຮ້ອງ ຂຶ້ນ. - ພວກເຮົາມາດີ. ພວກເຮົາມາຂໍເຂົ້າພົບກະສັດລັດເຊຍເພື່ອກາບທູນເພິ່ນດ້ວຍເຈດ ຕະນາດີ.

- ຢຸດ! ຫ້າມຍ່າງຕໍ່ໄປ! - ຫມໍນາຍທະຫານຮ້ອງໃສ່. - ຢຸດດຽວນີ້!

ຝູງກຳມະກອນດັ່ງກ່າວ ເລີ່ມອົດອັດຂຶ້ນ. ຈາກນັ້ນ ພວກເຂົາກໍ່ພາກັນຢຸດ. ແຕ່ບັນ ດາຝູງຄົນທີ່ຍ່າງມາຕາມຫລັງ, ຍ້ອນແນມບໍ່ເຫັນເຫລົ່າທະຫານແລະ ບໍ່ໄດ້ຍິນສຽງເວົ້າ, ດັ່ງ ນັ້ນ ຈຶ່ງໄດ້ແຕ່ຊຸກກັນໄປຫນ້າເລື່ອຍໆ.

- ຂໍພະຜູ້ເປັນເຈົ້າ, ຈົ່ງປົກປ້ອງກະສັດລັດເຊຍແດ່ທ້ອນ! - ມີສຽງຮ້ອງໄຫ້ວ້ອນດັງ ກ້ອງຂຶ້ນ ທົ່ວສະຫນາມຫລວງ.

ບັນດາກຳມະກອນ ຢູ່ທາງແຖວຫນ້າໄດ້ພາກັນຍົກທຸງຂາວຂຶ້ນແກວ່ງກວາຍ.

- ພວກເຮົາແມ່ນປະຊາຊົນ ຜູ້ຫວັງດີ! ພວກເຮົາໄດ້ນຳເອົາເອກກະສານກ່ຽວກັບຄຳຂໍ ຮ້ອງມາຍື່ນຕໍ່ກະສັດລັດເຊຍ! - ບັນດາກຳມະກອນທ້າຍ່າງຕໍ່ໄປພ້ອມ ທັງໄດ້ຊູທຸງຊາດ, ຮູບພະເຈົ້າແລະ ແຜ່ນແພສີຂາວຕ່າງໆ.



- ຍິງ! - ຫມໍນາຍທະຫານອອກຄໍາສັ່ງ.

ສຽງປືນບາດທໍາອິດ ໄດ້ດັງຂຶ້ນພ້ອມໆກັນ. ກໍາມະກອນຈໍານວນຊາວຄົນໄດ້ລົ້ມພຸບລົງກັບ ບ່ອນ.

- ຍິງ! - ຈາກນັ້ນ ສຽງປືນອີກຫນຶ່ງນັດກໍໄດ້ດັງກ້ອງຂຶ້ນອີກ.

- ຍິງ! ຍິງ! ຍິງ!

ທຸກຄົນຕ່າງກໍແຕກສະລຸຜຸຜ່າຍອອກຈາກສະຫນາມຫລວງ, ພາກັນໄປລີ້ຊ່ອນຢູ່ຕາມ ຮ່ອມ ຫລືຕາມປະຕູໃຫຍ່. ທ້ອງສະຫນາມຫລວງ, ຕໍ່ຫນ້າວັງລະດູຫນາວທີ່ເຕັມໄປດ້ວຍຫິ ມະນັ້ນ ໄດ້ກາຍເປັນບ່ອນນັ່ງນອນຊາກຄົນຕາຍໄປເສຍ ແລ້ວ ຈາກນັ້ນ ທະຫານມ້າ ຊຶ່ງມີກໍາລາບ ເຫລັ້ມມາບໆກໍໄດ້ກະໂດດອອກມາອີກ.

- ອ້າຍນ້ອງເອີຍ ຕາຍກັນຫມົດແລ້ວບາດນີ້, - ສຽງຮ້ອງໄດ້ດັງຂຶ້ນຢ່າງຫນ້າຫວາດກົວ ຢູ່ໃນທ່າມກາງຝູງຄົນເຫລົ່ານັ້ນ.

- ພວກອັບປີ! ພວກຊາດຊົ່ວ!

- ເຫັນແລ້ວບໍ່ວ່າ, ກະສັດລັດເຊຍ ຂອງພວກເຈົ້າເປັນແນວໃດ! - ນັກໂບນເຊວິກ ຫນຸ່ມຜູ້ຫນຶ່ງ ໄດ້ກ່າວອອກມາ ດ້ວຍຄວາມໂມໂຫ. - ເຫັນບໍ່, ພວກເຈົ້າ ໄປເຊື່ອຫມັ້ນນໍາ ຄົນຄືແນວນັ້ນ ກໍຊໍ່າກັບວ່າ ໄປເຊື່ອກັສັດທີ່ຮ້າຍກາດຕົວຫນຶ່ງເທົ່ານັ້ນເອງ!

ບັນດາກໍາມະກອນຕ່າງກໍເຂົ້າໃຈໃນຄວາມໂຫດຮ້າຍຂອງກະສັດລັດເຊຍ ທີ່ໄດ້ເຂັ່ນຂ້າ ພວກເຂົາ, ນັບແຕ່ນັ້ນເປັນຕົ້ນມາ ຄວາມເຊື່ອຖືຂອງປະຊາຊົນທີ່ມີຕໍ່ກະສັດລັດເຊຍນັ້ນ ແມ່ນ ໄດ້ຖືກຝ່າຍລົ້ນເຊິງ.

ໃນມື້ແຫ່ງການນອງເລືອດຄັ້ງອັນອາທິດ ທີ່ເກົ້າ ເດືອນມັງກອນ ປີ ໑໙໐໕ ນັ້ນ, ບັນ ດາກໍາມະກອນ ໄດ້ຖືກຂ້າຕາຍ ເປັນຈໍານວນພັນກ່ວາຄົນ, ຖືກບາດເຈັບຫ້າພັນຄົນ.

ຕອນແລງຂອງມື້ນັ້ນ, ເສັ້ນທາງຕ່າງໆໃນຕົວເມືອງ ເປັນຕົ້ນສະບວກຖືກຄຸມເຕັມໄປດ້ວຍ ເສົາໂຄມໄຟເພື່ອເປັນສິ່ງກີດຂວາງບ່ອນກໍາບັງ, ກໍາມະກອນໄດ້ລຸກຂຶ້ນຕໍ່ສູ້ຕ້ານກັບອໍານາດກະ ສັດລັດເຊຍ.

* * *

ຢູ່ນອກເມືອງ ເຊີເນວ, ແລະຢູ່ໃກ້ໆກັບແມ່ນ້ຳ ອາກວາ ນັ້ນ, ມີກະຫນ່ຳສາຍຫນຶ່ງ ຊື່ວ່າ ກາຣູເຊີ. ຊາວລັດເຊຍຕ່າງດ້າວສ່ວນນາກ ແມ່ນໄດ້ອາໃສຢູ່ ກະຫນ່ຳ ກາຣູເຊີກາ ນີ້. ຢູ່ແຫ່ງ ນັ້ນ ມີຮ້ານອາຫານຂອງພີ່ວເມຍ ເລເປຊິນສະກີ ຊຶ່ງເປັນມິດສະຫາຍ ກັບ ວະລາດີເມຍ ອີລີຊ ນາຕັ້ງແຕ່ຄາວກຶກເນລະເທດໄປຢູ່ ຊີເບຣີພຸ້ນ.ຊາວລັດເຊຍຕ່າງດ້າວລ້ວນແຕ່ຮູ້ຈັກຮ້ານອາ ຫານຂອງສອງພີ່ວເມຍເລເປຊິນສະກີກັນທັ້ງນັ້ນ. ທີ່ແຫ່ງນີ້ ບໍ່ພຽງແຕ່ເປັນຮ້ານອາຫານ ເທົ່ານັ້ນ, ແຕ່ນັ້ນຍັງເປັນສະໂມສອນຂອງພວກ ໂບນເຊວິກ ນຳອີກ, ຄືເປັນບ່ອນໂອ້ລົມ, ຫລື້ນ ຫນາກເສິກ, ຫລືປຶກສາຫາລືກ່ຽວກັບການເມືອງ...

ໃນມື້ທີ່ກະແສຂ່າວ ກ່ຽວກັບວັນອາທິດທີ່ນອງເລືອດ ໄດ້ມາເຖິງ ເຊີເນວນັ້ນ ຊາວ ລັດ ເຊຍຕ່າງດ້າວ ຕ່າງກໍໄດ້ມາເຕົ້າໂຮມກັນຢູ່ທີ່ຮ້ານອາຫານຂອງເລເປຊິນສະກີ ນີ້ ຢ່າງບໍ່ມີການ ນັດຫມາຍແຕ່ຢ່າງໃດ. ພວກເຂົາເຈົ້າບໍ່ໄດ້ເວົ້າຫຍັງຫລາຍ ນອກຈາກວ່າມິດຢູ່ພໍໃຜພໍລາວ. ໃບ ຫນ້າຂອງແຕ່ລະຄົນມີອາການເຄັ່ງຂຶມ. ພວກໂບນເຊວິກທັ້ງຫລາຍຕ່າງກໍຮູ້ດີວ່າ, ຢູ່ປະເທດ ລັດເຊຍພວມມີເຫດການອັນຍິ່ງໃຫຍ່, ຊຶ່ງບໍ່ເຄີຍມີມາກ່ອນນັ້ນເກີດຂຶ້ນ.

"ກັບຄືນເມືອເຮືອນ, ກັບຄືນເມືອບ້ານເກີດເມືອງນອນ, ກັບຄືນເມືອປະເທດຊາດບໍ!"

- ວະລາດີເມຍ ອີລີຊ ຄຶດຢູ່ໃນໃຈ.

ຈາກນັ້ນ ໃຜຜູ້ຫນຶ່ງ ກໍໄດ້ຮ້ອງເພັງຂຶ້ນດ້ວຍຄວາມເຈັບປວດ: ບັນດາສະຫາຍທີ່ໄດ້ເສຍ ສະຫລະຍ້ອນການຕໍ່ສູ້ອັນຮຸນແຮງ...ແລ້ວຈາກນັ້ນ ກໍໄດ້ລຸກຂຶ້ນຮ້ອງເພັງຮ່ວມກັນ:

ຍ້ອນອາໃສຄວາມຮັກຫອມ ໂດຍບໍ່ມີຂອບເຂດຂອງປະຊາຊົນ.

ພວກສະຫາຍໄດ້ເສຍສະຫລະ ທຸກສິ່ງທຸກຢ່າງທີ່ມີ,

ເພື່ອຊີວິດການເປັນຢູ່ຂອງປະຊາຊົນ, ເພື່ອກຽດແລະເສລີພາບ!

ມີຫລາຍໆຄົນ ນ້ຳຕາຊຶມອອກມາເຕັມເບົ້າ.

- ການປະຕິວັດ ກຳລັງ ລະເບີດຂຶ້ນຢູ່ປະເທດ ລັດເຊຍ, - ວະລາດີເມຍ ອີລີຊ ເວົ້າດ້ວຍ ຄວາມສະເທືອນໃຈ.

ການ ປະຕິວັດ. ຄຳສັບນີ້ໄດ້ດັງກ້ອງກັງວານຂຶ້ນ ເຊິ່ງສະແດງເຖິງຄວາມຈັບອົກຈັບໃຈ ທີ່ສຸດ! ແລະໃນຕອນຄ່ຳຂອງມື້ນັ້ນເອງ, ວະລາດີເມຍ ອີລີຊໄດ້ຂຽນຄຳຮຽກຮ້ອງ ລົງໃນຫນ້າ ຫນັງສືພິມ "ກ້າວຂຶ້ນ" ຊຶ່ງແມ່ນຫນັງສືພິມສະບັບໃຫມ່ໆ ຂອງລາວ ໂບນເຊວິກ. ຫນັງ ສືພິມ "ຫນັດໄຟ" ນັ້ນໄດ້ຖືກພວກ ເມນເຊວິກ ກືນກືນຫມົດແລ້ວ. ດັ່ງນັ້ນ ປັດຈຸບັນ ລາວໂບນເຊວິກຈຶ່ງໄດ້ອອກຫນັງສືພິມໃຫມ່, ຄືຫນັງສືພິບ "ກ້າວຂຶ້ນ" ນັ້ນເອງ.

ເລນິນ ໄດ້ຂຽນວ່າ: "ການລຸກຮື ໄດ້ເລີ່ມແລ້ວ. ກຳລັງແຮງໄດ້ຕ້ານກັບກຳລັງແຮງແລ້ວ. ນັ້ນຮົບຢູ່ຕາມກະຫນິນຫົນທາງກຳລັງຟົດເດືອດ, ປ້ອມສູ້ຮົບໄດ້ຖືກສ້າງຂຶ້ນ, ສຽງປືນໄດ້ດັງ ລັ່ນຂຶ້ນຢ່າງລຽນຕິດ, ສຽງປືນໃຫຍ່ໄດ້ດັງຂຶ້ນຢ່າງຟົດສະນັ່ນນັ່ນນອງ. ຫ້ວຍເລືອດກຳລັງໄຫລ ຫລັ່ງ, ການສູ້ຮົບພາຍໃນເພື່ອສິດເສລີພາບ ກຳລັງດຳເນີນໄປ...

ການປະຕິວັດ ຫມັ້ນຍືນ!

ຊົນຊັ້ນ ກຳມະຊີບ ທີ່ທຳການ ລຸກຮືຂຶ້ນ ຫມັ້ນຍືນ!".

ແຜ່ນທຸງສີແດງ ພວມປິວສະບັດຢູ່ເທິງທະເລ

ທີ່ ເຊີເນວ, ມື້ຫນຶ່ງ ໃນຍາມລະດູຮ້ອນ, ທັນໃດນັ້ນ ສຽງກະດິ່ງກໍໄດ້ດັງຂຶ້ນຢູ່ທີ່ຫນ້າປະຕູ ບ້ານຂອງສອງຜົວເມຍ ອູລີອານິບ.

-ໂອໂລເດຍ, ມີຄົນມາພົບເຈົ້າ, -ນາເດສະດາ ກົງສະຕັງຕິນິບນາທັງເວົ້າທັງພາເອົາຄົນ ຜູ້ທີ່ບໍ່ຮູ້ຫນ້ານັ້ນເຂົ້າມາໃນເຮືອນ.

ໃບຫນ້າຮູບໄຂ່ອັນຫນຸ່ມນ້ອຍຂອງຄົນຜູ້ນັ້ນ ໄດ້ສະແດງໃຫ້ເຫັນເຖິງຄົນທີ່ມີຈິດໃຈກວ້າງ ຂວາງ. ດວງຕາທັງຄູ່ທີ່ໃສເປັນປະກາຍຢູ່ພາຍໃຕ້ຂົນຕາສີດຳໆນັ້ນ, ເຕັມໄປດ້ວຍແວວແຫ່ງ ຄວາມສະຫລາດ ແລະ ຕື່ນເຕັ້ນ.

-ເຊີນເຂົ້າໄປໃນເຮືອນກ່ອນ, ພວກຂ້ອຍມີຄວາມຍິນດີທີ່ໄດ້ພົບເຈົ້າ, -ນາເດສະດາ ກົງ ສະຕັງຕິນິບນາ ເວົ້າຂຶ້ນ. "ຊາຍຫນຸ່ມຜູ້ມີທ່າທາງໃຈດີເມນເບິ່ງກໍຮູ້ໂລດວ່າເປັນຄົນຝ່າຍດວ

ກັນ ແລະ ເປັນຄົນດີ. ແຕ່ເຂົາອາດແມ່ນຄົນ ທີ່ຫາກໍມາຮອດ".

ຢູ່ປະເທດ ລັດເຊຍ ພວມມີການປະທ້ວງນັດຢຸດງານເກີດຂຶ້ນຢ່າງລຸນຕິດ. ພວກ ໂບນ ເຊວິກ ນັກເດີນທາງມາຈາກປະເທດ ເພື່ອຂໍຄວາມຄິດເຫັນນຳ ອະລາດີເມຍ ອີລີຊ ສະເຫມີ.

ຊາຍຫນຸ່ມດັ່ງກ່າວ ໄດ້ຍ່າງຕາມຫລັງ ນາເດສະດາ ກົງສະຕັງຕິນົບນາເຂົ້າ ໄປຫາ ເລນິນ. ຊາຍຜູ້ນັ້ນ ໄດ້ຍືນກົງຢູ່ປາກປະຕູ ແລະ ແອບເອົາເລັກນ້ອຍຕາມແບບສະບັບຂອງທະຫານ.

- ເຈົ້າມາແຕ່ໃສ? - ອະລາດີເມຍ ອີລີຊ ຖາມດ້ວຍຄວາມຍົ້ມແຍ້ມແຈ່ມໃສ.

- ທະຫານເຮືອ ອາຟານາຊີ ມາຈູເຊນໂກ, ມາຈາກຫມ່ອຍກຳປັ່ນຮົບ "ໂປໂຈມກິນ".

ອະລາດີເມຍ ອີລີຊ ໄດ້ຍ່າງເຂົ້າໄປຫາ ຊາຍຫນຸ່ມຢ່າງວ່ອງໄວ ແລະຈັບມືເຂົາຢ່າງສະຫນິດ ແຫນ້ນ.

- ຜູ້ນຳພາບັນດາທະຫານເຮືອປະຈຳກຳປັ່ນຮົບ "ໂປໂຈມກິນ"! ໃຄນີ້, ນາເດຍ ເອີຍ, ເບິ່ງແມ, ຍັງຫນຸ່ມແທ້ໆ...

ເຄິ່ງຊົ່ວໂມງຕໍ່ມາ, ນ້ຳທີ່ຕົ້ມຢູ່ເທິງເຕົານ້ຳມັນ ກໍໄດ້ຟົດຂຶ້ນອັກອັກ. ເຂົ້າຈີ່ຢ່າງດີ ຖືກນຳ ມາວາງໄວ້ເທິງໂຕ໊ະ, ພ້ອມດ້ວຍເນີຍແຂງສີເຫລືອງອ່ຍຫ່ຽ ຢູ່ໃນຖ້ວຍ. ຈັ່ງແມ່ນເປັນຕາແຊບ ແທ້ໆ.

- ບາດນີ້, ມາຈູເຊນໂກ ເອີຍ, ຈົ່ງເລົ່າຕໍ່ໄປເບິ່ງດູ! - ອະລາດີເມຍ ອີລີຊ ຖາມຂຶ້ນດ້ວຍ ຄວາມຮ້ອນໃຈ, ພາຍຫລັງທີ່ຊາຍຫນຸ່ມໄດ້ກິນເຂົ້າຈີ່ສອງສາມຕ່ອນ ພ້ອມທັງດື່ມນ້ຳຊາແລ້ວ.

ຈາກນັ້ນ ບ່າວທະຫານເຮືອ ອາຟານາຊີ ມາຈູເຊນໂກ ກໍໄດ້ເລົ່າເຖິງສະພາບການທີ່ເກີດ ຂຶ້ນຢູ່ເທິງກຳປັ່ນຮົບ "ໂປໂຈມກິນ" ສູ່ຟັງ.

* * *

ມັນແມ່ນເຮືອກຳປັ່ນຮົບທີ່ໃຫຍ່ທີ່ສຸດ ທີ່ຫາກໍ່ສ້າງແລ້ວໃຫມ່ໆ, ແລະໄດ້ຈອດຢູ່ທ່າເຮືອ ເຊວາສະໂຕໂປນ. ເທິງເຮືອມີປືນໃຫຍ່ຕັ້ງຢູ່ຫລາຍກະບອກ. ບັນດາທະຫານເຮືອທັງຫມົດໃນ ເຮືອລ້ວນແຕ່ມີຢູ ເຈດຮ້ອຍສິບຄົນ.

ການລຸກຮືຢູ່ປະເທດລັດເຊຍ ພວມດຳເນີນ ໄປຢ່າງຮ້າຍແຮງ. ຢູ່ຕາມຊົນນະບົດ, ບັນດາ ຊາວກະສິກອນ ກໍໄດ້ທຳການລຸກຮືຂຶ້ນຕ້ານກັບພວກເຈົ້າທີ່ດິນ. ສົງຄາມລະຫວ່າງລັດເຊຍກັບ ຍີ່ປຸ່ນກໍຍັງບໍ່ທັນເບົາບາງລົງຈັກເທື່. ພວກຍີ່ປຸ່ນເປັນຝ່າຍຊະນະ, ສ່ວນກອງທັບລັດເຊຍ ເປັນ ຜູ້ໄດ້ຮັບຜົນເສຍຫາຍຢ່າງຫນ້າອະຫນາດ. ກອງທັບເຮືອຂອງພວກເຮົາ ຢູ່ທີ່ອ່າວທະເລ ຊູຊິມ ນັ້ນ ກໍຖືກດັບສູນຈົນສ້ຳ. ພວກກຳອຳນາດໄດ້ສ້າງຄວາມເຫນ້ຳເຫມັນຢູ່ໃນທົ່ວທຸກດ້ານ. ປະ ຊາຊົນຂາດຄວາມເຊື່ອຖື ແລະ ມີຄວາມຄຽດແຄ້ນຕໍ່ກະສັດ ລັດເຊຍ ນິກໂກລາຍທີສອງທີ່ສຸດ.

ຫມໍຜ້ບັນຊາການກໍ່ປັ່ນຣົບ, ຊຶ່ງແມ່ນຜ້ໂຫດຮ້າຍ, ໃຈດຳອຳມະຫິດ, ຢ້ານວ່າຈິດໃຈແຫ່ງ ການປະຕິວັດຈະແຊກຊຶມເຂົ້າໃນ ກໍ່ປັ່ນຣົບ "ໂປໂຈມກິນ", ດັ່ງນັ້ນ ມັນຈຶ່ງສັ່ງໃຫ້ ກໍ່ປັ່ນດັ່ງ ກ່າວກຸ້ຍອອກຈາກທ່າເຮືອ ເຊວາສະໂຕໂປນທີ່ຮັກ, ເພື່ອໄປໃຫ້ໄກຈາກການປະທ້ວງຂອງ ບັນດາກຳມະກອນ, ເພື່ອໄປລ້ອມຣົບຢູ່ກາງທະເລ.

ຕັ້ງແຕ່ເຊົ້າໆຟ້ນ, ບັນດາທະຫານເຮືອຕ່າງກໍໄດ້ປະຕິບັດຕາມຄຳສັ່ງຂອງຜ້ເປັນນາຍ. ຫມໍ ຜ້ບັນຊາການ ໄດ້ອອກຄຳສັ່ງໃຫ້ເຮັດວງກນ້ັນວງກນ້ີ. ບັນດາທະຫານເຮືອກຸ່ມຫນ່ຶງ ກ້ກສັ່ງໃຫ້ ເຮັດອະນາໄມຢູ່ຕາມຫ້ອງເຮືອ.

ກະແສລົມໄດ້ ພັດເອົາກິ່ນ ເຫມັນເຫນ່ົາມາຈາກຫ້ອງເທ່ົາສຸດ. ພວກທະຫານເຮືອ ທ່ີມ ີ ຫນ້າທ່ີລ້ຽງຫ້ອງນ້ັນ ຈ່ຶງຂ້ຶນໄປເບ່ົາຊ້ັນເທ່ົາ. ແມ່ນຫຍ້ງັອ້ນ້ີ? ຕ່ອນຊ້ືນໄດ້ກ້ກຫ້ອຍໄວ້ຢູ່ຕາມ ຂໍເກາະ, ຊ່ຶງພວກຫນອນໂຕຂາວໆພ່ືງນຳລ້ງເຈາະຢູ່ຍ່ືໆ, ຄ້າຍກ້ບວ່າຕ່ອນຊ້ືນດ່ັງກ່າວສາມາດ ເຫນ້ງ່ຕ່ືງ ໄດ້ຈ່ັ້ງຊ້ັ້ນລະ. ພວກທະຫານເຮືອ ແນມເຫ້ນສະພາບແບບນ້ັ້ນ ແລ້ວກ ໍ ຮູ້ສ ກ ຶ ຂ ິ ນ ຄ ່ ຶ ງ ລຸກ.

-ເຫ້ນແລ້ວເນາະວ່າ, ພວກເຂ ົ າເອ ົ າອາຫານແບບໃດໄວ້ ໃຫ້ພວກເຮ ົ າກ ິ ນ!

-ພວກເຮ ົ າຈະບ ໍ ່ ກ ິ ນຫນອນອ ັ ນນ ້ ີ ເດ ັ ດຂາດ, ເອ ົ າໄວ ້ ໃຫ ້ ພວກນ າ ຍທະຫານມ ັ ນສ ອ ບເອ ົ ງ ສະ!

-ແຕ່ວ່າເລ ື ່ ອ ງໃດ ພວກນ າ ຍທະຫານ ມ ັ ນຊ ິ ກ ິ ນ. ກ ໍ ເພ າ ະອ າ ຫ ານສ ໍ ລ ັ ບພວກນ າ ຍທ ະ ຫ ານກ ໍ ມ ີ ຢ ູ ່ ແລ ້ ວ. ພວກມ ັ ນຊ ິ ທ ຸ ລ ະມ າ ຄ ິ ດເກ ົ ງ ພວກເຮ ົ າຫ ວ ະ?

ເມ ື ່ ອ ຮ ອ ດ ຍ າ ມ ອ າ ຫ ານທ ່ ຽ ງ. ກ ະ ດ ົ ງ ສ ັ ນ ຍ ານ ກ ໍ ໄ ດ ້ ດ ັ ງ ຂ ຶ ້ ນ. ພ ວ ກ ທ ະ ຫ ານ ເ ຮ ື ອ ຕ ່ າ ງ ກ ໍ ວ ິ ງ ໄປເຮ ື ອ ນ ຄ ິ ວ ລ ວ ມ. ຫ ິ ວ ຫ ນ ້ າ ຄ ິ ວ ກ ິ ນ ກ ໍ ລ ັ ງ ຕ ົ ມ ຕ ັ ກ ແ ກ ງ ຊ ຶ ່ ງ ມ ັ ນ ມ ີ ທ ັ ງ ໂ ຕ ຫ ນ ອ ນ ຢ ູ ່ ນ ັ ້ ນ.

-ພ ວ ກ ຂ ້ ອ ຍ ບ ໍ ່ ກ ິ ນ ດ ອ ກ, -ພ ວ ກ ທ ະ ຫ ານ ເ ຮ ື ອ ອ ຍ ກ ປ າ ກ ປ ະ ຕ ິ ເ ສ ດ.

ຈ າ ກ ນ ັ ້ ນ ກ ໍ ມ ິ ດ ຊ ຶ ກ ານ ມ ິ ດ ງ ບ ດ ັ ່ ງ ກ ່ າ ວ ນ ັ ້ ນ ເ ປ ັ ນ ຫ ນ ້ າ ຫ ວ າ ດ ກ ິ ວ ວ າ ດ ໃ ດ ວ າ ດ ຫ ນ ່ ຶ ງ. ຜ ູ ້ ກ ໍ າ ກ ັ ບ ຄ ິ ວ ລ ວ ມ ກ ໍ ເ ລ ີ ່ ມ ມ ິ ອ າ ກ ານ ຢ ້ ານ ກ ິ ວ. ຈ າ ກ ນ ັ ້ ນ ເ ຂ ົ າ ກ ໍ ຟ ້ າ ວ ແ ລ ່ ນ ຂ ຶ ້ ນ ໄ ປ ເ ອ ີ ້ ນ ນ າ ຍ ຮ ້ ອ ຍ ທ ະ ຫ ານ. ຫ ມ ໍ ນ າ ຍ ທ ະ ຫ ານ ແ ລ ່ ນ ຫ ລ ູ ບ ເ ຂ ົ ້ າ ມ າ ຫ າ ພ ວ ກ ທ ະ ຫ ານ ເ ຮ ື ອ, ພ ້ ອ ມ ທ ັ ງ ຮ ້ ອ ງ ດ ່ າ...ທ ັ ນ

ໃດນັ້ນ ເຂົາກໍຕ້ອງນຶດລີງກັບບ່ອນ ເມື່ອແນມເຫັນໃບຫນ້າທີ່ເຄັ່ງຂຶມ ແລະ ເອົາເລື່ອງຂອງ ເຫລົ່າທະຫານ. ດັ່ງນັ້ນ ຫມໍນາຍຮ້ອຍທະຫານ ຈຶ່ງພ້າວແລ່ນເມືອລາຍງານຫມໍຜູ້ບັນຊາ. ຫນ້ອຍຫນຶ່ງຕໍ່ມາ, ກໍໄດ້ມີສຽງກອງເພື່ອເຕົ້າໂຮມກຳລັງສະຫນັ່ນຂຶ້ນ. ເຫລົ່າທະຫານເຮືອ ໄດ້ພາກັນແລ່ນຂຶ້ນໄປຢືນລຽນກັນເປັນແຖວຢູ່ເທິງດາດຟ້າເຮືອຕາມລະບຽບ ຂອງທະຫານ ເຮືອ. ພວກເຂົາພາກັນຢືນນຶດງຽບ. ທົ່ວທ້ອງຟ້າອາກາດໃສແຈ້ງ, ອ້ອມຮອບພວກເຂົາ ມີແຕ່ ທະເລສີຂຽວ. ກະແສຄື້ນນ້ອຍໆໄດ້ພຸດພັ້ນຂຶ້ນເປັນຟອງ.

ຝູງຫມູ່ປາ ໄດ້ພາກັນຢອກໄຍຢູ່ຕາມກະແສຟອງດ່ັງກ່າວ.

- ພວກກໍ່ຄວາມອຸ້ນອາຍ! - ຜູ້ບັນຊາທັ້ງຮ້ອງທັ້ງທຶບຕີນ.

- ເປັນຫຍັງຈຶ່ງຫາວ່າມີຫນຍນ? ພວກສູຢາກຫາເລື່ອງ ຊັ້ນເບາະ? ກູຊິສັ່ງສອນໃຫ້ພວກ ສູຮູ້ເອົາໄວ້ວ່າການສ້າງຄວາມອຸ້ນອາຍຢູ່ໃນເຮືອນີ້ມັນເປັນຈັ່ງໃດ! ບັກໃດເປັນໂຕການ?

ເຫລົ່າທະຫານເຮືອພາກັນຢືນກົ້ມນຶດຢູ່. ພວກນາຍທະຫານ ໄດ້ນຳເອົາຫນ່ວຍປ້ອງກັນ ພ້ອມທັ້ງລາກເອົາປືນກົນອອກມາຈາກຫ້ອງເຮືອ. ຫນ່ວຍປ້ອງກັນດ່ັງກ່າວ ໄດ້ຢືນເປັນແຖວ ຢູ່ຕໍ່ຫນ້າພວກທະຫານເຮືອ.

- ບັກໃດມັນເປັນ ຫົວໂປ່? - ຫມໍຜູ້ບັນຊາຮ້ອງຄາງຂຶ້ນ. ເຫລົ່າທະຫານເຮືອ ກໍຍັງນຶດ ງຽບຢູ່ຄືເກົ່າ.

- ຮື້ຜ້າຕ້ອງອອກມາ! - ຫມໍຜູ້ບັນຊາອອກຄຳສັ່ງ. ນັ້ນມັນຫມາຍຄວາມວ່າແນວໃດ? ຫມາຍຄວາມວ່າ ຜູ້ບັນຊາຈະເອົາຜູ້ກົກໂທດນັ້ນໄປຂ້າ. ກ້າເຂົາຊິໃສ່ຜູ້ໃດຜູ້ຫນຶ່ງວ່າ: ນ້ຳແມ່ນ ບັກໂຕການ, ກໍຫມາຍຄວາມວ່າຜູ້ນັ້ນສິ້ນຊີວິດທັນທີ. ນິສາມສີ່ຄົນ ໄດ້ແກ່ຜ້າຕ້ອງອອກມາ, ແລ້ວປູລົງເທິງພື້ນເຮືອ. ກ້າຜ້າດ່ັງກ່າວຫາກຖືກນຳໄປປົກຫົວຜູ້ໃດ ຜູ້ນັ້ນກໍຈະໄດ້ຖືກຍິງເປົ້າ ຢ່າງບໍ່ມີການພິຈາລະນາແຕ່ຢ່າງໃດ. ຫມົດທຸກຄົນຕ່າງກໍພາກັນຢືນກົ້ມຢູ່ງຽບໆ. ເວລາແຫ່ງ ຄວາມຕາຍໄດ້ຫຍັບໃກ້ເຂົ້າມາຢ່າງບໍ່ມີ ທາງຫລີກລ່ຽງໄດ້. ທ້ອງຟ້າໃນຍາມນັ້ນ ເຕັມໄປດ້ວຍ ແສງແດດຮ້ອນໆ, ອ້ອມຮອບບໍລິເວນດ່ັງກ່າວລ້ວນແຕ່ແມ່ນທະເລສີຂຽວ, ກະແສລົມ ໄດ້ ພັດມາເປັນຮູດໆ.

ທັນໃດນັ້ນ ທະຫານເຮືອຜູ້ຫນຶ່ງ ກໍໄດ້ໂດດແລ່ນອອກມາຈາກແກວ:

-ອ້າຍນ້ອງທັງຫລາຍເອີຍ! ພວກເຮົາຊິອົດທົນຢູ່ແບບນີ້ຕະຫລອດໄປຫລືແນວໃດ? ພວກມັນຂີ່ມເຫັງພວກເຮົາ. ຈົ່ງຈັບອາວຸດຂຶ້ນຕໍ່ສູ້, ພວກອ້າຍນ້ອງເອີຍ!

ຈາກນັ້ນ ເຂົາກໍຟ້າວໂດດຄ້ວາເອົາກະບອກປືນຢູ່ທີ່ປ້ອມນັ້ນທັນທີ. ເຂົາຜູ້ນັ້ນ ຄື ອາຟານາຊີ ມາຈູເຊນໂກ ນັ້ນເອງ. ບັນດາສະຫາຍທັງຫລາຍໄດ້ເອີ້ນເຂົາວ່າ ນັກຕະລຸມບອນ.

-ພວກສະຫາຍທັງຫລາຍ, ໂຄ່ນລົ້ມຜູ້ບັນຊາທີ່ໂຫດຮ້າຍ! -ມາຈູເຊນໂກປະກາດຂຶ້ນ- ໂຄ່ນລົ້ມກະສັດ ລັດເຊຍ! ສິດເສລີພາບ ຫນັ້ນຍືນ! -ຈາກນັ້ນແກວທະຫານດັ່ງກ່າວ ກໍໄດ້ແຕກອອກ. ສະພາບແຫ່ງຄວາມມືດມົນ ກຶກທໍາລາຍໄປ. ພວກທະຫານເຮືອພາກັນແບກເອົາປືນເຫລັກຍາວອອກມາ.

ຫນໍຜູ້ບັນຊາການທະຫານຟ້າວແລ່ນກອຍໄປຫຍຸ່ຫລັກເສົາ, ເຂົາກໍາປືນສັ້ນແລ້ວກໍຍິງໃສ່ຄົນຂັບເຮືອ, ນັກປະຕິວັດ, ເພື່ອນສະຫາຍທີ່ເກົ່າກ້າ ແລະ ພໍລະອາດຫານ ຂອງພວກທະຫານເຮືອທັງຫນົດ ຊື່ວ່າ ວາກູລິນສຸກ ຈົນບາດເຈັບສາຫັດ ແລະ ໄດ້ລົ້ມພຸບລົງ.

-ນຶ່ງເຮັດແບບນັ້ນຫວະ? ຕາຍຊະ! -ມາຈູເຊນໂກ ໄດ້ຮ້ອງຂຶ້ນຄືກັບຄົນກໍາລັງເປັນບ້າ, ແລ້ວກໍຍິງໃສ່ຫນໍນາຍທະຫານຕາຍຄາທີ່.

ຄວາມຄຽດແຄ້ນໄດ້ຝັງເລິກເຂົ້າໃນຫມູ່ທະຫານເຮືອທຸກຄົນ.ນາຍທະຫານອີກຈໍານວນຫລາຍຄົນ ຜູ້ທີ່ໄດ້ສ້າງໂຫດກໍາໄວ້ນັ້ນ ກໍຖືກຍິງຕາຍ ແລະກົ້ມລົງກາງທະເລໄປ. ຫນໍຜູ້ບັນຊາການທີ່ໂຫດຮ້າຍ ຄົນນັ້ນ ໄດ້ປົບຫນີລົ້ຕິວ ແຕ່ພວກທະຫານເຮືອຊອກເຂົາຈົນພົບ, ແລ້ວລາກເຂົາອອກມາຈາກຫ້ອງ ແລະ ໄດ້ໂຍນລົງທະເລໄປ.

ກໍ່ປັ່ນຣົບ "ໂປໂຈມກິນ" ໄດ້ນິເສລີພາບຢ່າງສົມບູນ ແລະ ຫນົດທັງລໍາເຮືອ "ໂປໂຈມກິນ" ນັ້ນ ແມ່ນທະຫານເຮືອຫນົດທຸກຄົນເປັນເຈົ້າ.

ແຕ່ຕໍ່ໄປນີ້ ຈະເຮັດແນວໃດ? ແມ່ນໃຜຈະເປັນຜູ້ບັນຊາເຮືອ? ເຮືອຈະເດີນໄປຮອດໃສ?

ບັນດາທະຫານເຮືອທັງຫລາຍ ໄດ້ພາກັນເລືອກຕັ້ງຄະນະຊີ້ນໍາເຮືອໃຫມ່, ໂດຍມີ ອາຟານາຊີ ມາຈູເຊນໂກ ເປັນຫົວຫນ້າ. ພວກເຂົາໄດ້ຕັດສິນໃຈເອົາເຮືອໄປຈອດຍັງທ່າ ໂອ

ແດດຊາ. ຫລັກທຸງຂອງເຮືອ, ຊຶ່ງແຕ່ກ່ອນເຄີຍເປັນຫລັກທຸງຂອງກະສັດລັດເຊຍນັ້ນ,ດຽວ ນີ້ ໄດ້ມີທຸງຂອງຕົນເອງຂຶ້ນແຂວນແລ້ວ, ນັ້ນຄືທຸງ ປະຕິວັດ. ເຫດການດັ່ງກ່າວໄດ້ເກີດຂຶ້ນ ໃນມື້ວັນທີ ໑໔ ເດືອນຫົກປີ ໑໙໐໕.

ກຳປັ່ນຮົບ "ໂປໂຈມກິນ" ໄດ້ປັກແຜ່ນທຸງສີແດງແລ້ວແລ່ນໄປຍັງທ່າເຮືອໂອແດດຊາ ດ້ວຍຄວາມໄວສຸດແຮງ. ຜືນທຸງສີແດງໄດ້ປິວສະບັດໄປຕາມກະແສລົມ. ສີແດງເຂັ້ມ ຄ້າຍ ດັ່ງແປວໄຟຂອງມັນ ໄດ້ສະທ້ອນສະໄທວເຫມືອນດັ່ງໂດນໄຟທະເລ. ມັນໄດ້ຮຸກຮ້ອງ ແລະ ຊັກຈູງໃຫ້ບັນດາທະຫານເຮືອຕໍ່ສູ້ເພື່ອສິດເສລີພາບ. ກຳປັ່ນຮົບ "ໂປໂຈມກິນ" ໄດ້ມາຮອດ ເມືອງໂອແດດຊາແລະກອດສະຫນໍ່ຢູ່ຍັງອ່າວແຫ່ງນັ້ນ. ສາກກາງຄືນໄດ້ປົກຄຸມລົງ. ເບິ່ງຈຳ-ພວກແສງໄຟເຍືອງຂອງເຮືອນັ້ນ ຄ້າຍຄືກັບມັນກຳລັງຄວາງໍ່ຢູ່ຕາມງ່າມືດກໍ່ບໍ່ປານ. ຈູ່ ໂດມໄຟ ໄດ້ສາດແສງສະຫວ່າງ ຄືກັບມັນກຳລັງຊອກຄົ້ນຢູ່ຕາມຫນ້ານ້ຳທະເລດຳ ແລະ ຕາມ ເສັ້ນທາງຊຶ່ງກຳລັງຫລົບລີ້ຢູ່ໃນຍາມຄ່ຳຄືນ. ປາກກະບອກປືນ ຕ່າງກໍແນໄປທາງຕົວເມືອງໂອ ແດດຊາ. ຢູ່ແຫ່ງນັ້ນ ຊຶ່ງເປັນບ່ອນທີ່ກຳລັງມີການປະທ້ວງນັດຢຸດງານຂອງເຫລົ່າກຳມະ ກອນ, ຢູ່ແຫ່ງນັ້ນບັນດາກຳມະກອນຫມົດທຸກຄົນ ພວມລຸກຂຶ້ນຕ້ານກັບພວກເຈົ້ານາຍຂອງ ຕົນ. ຍ້ອນເຫດນັ້ນ, ເຮືອຮົບ "ໂປໂຈມກິນ" ຈຶ່ງຕ້ອງໄດ້ມາທີ່ນັ້ນໂດຍດ່ວນ, ເພື່ອຊ່ວຍ-ຊ່ວຍ ພວກກຳມະກອນເຫລົ່ານັ້ນ. ຕ້ອງຍິງລູກໄຟ, ເຂົ້າໄປທຳລາຍລາດຊະວັງຂອງພວກເຈົ້າ ໃຫຍ່ນາຍໂຕເຫລົ່ານັ້ນ. ແຕ່ຫົວຫນ້າທະຫານເຮືອ ຜູ້ທີ່ເປັນໂບນເຊວິກ ນັ້ນພັດກົງກັນຂ້ຳ ນາຍທະຫານ ຍິງບາດເຈັບ ແລະ ເສຍຊີວິດແລ້ວ. ພວກເຫລືອຢູ່ພັດມີແຕ່ພວກຍັງຫນຸ່ມ ນ້ອຍ ແລະ ບໍ່ທັນມີປະສົບການຫລາຍ!

ໃນເວລານັ້ນ ກະສັດລັດເຊຍ ຊຶ່ງຢູ່ທາງ ເປເຕກສະບວກພຸ້ນ, ໄດ້ສັ່ງຜູ້ບັນຊາເຮືອຮົບ ທະເລດຳ ຢູ່ທາງ ເຊວາສະໂຕໂປນວ່າ:

"ຕ້ອງປາບປາມ ການລຸກຮືນັ້ນຢ່າງທັນການ!"

ພວກມັນໄດ້ນຳເອົາກຳປັ່ນຮົບທີ່ ເຊວາສະໂຕໂປນ ທັງຫມົດມາຕ້ານກັບກຳປັ່ນຮົບ "ໂປ ໂຈມກິນ" ຊຶ່ງກຳລັງເຄື່ອນໄຫວຢູ່ທາງ ໂອແດດຊາ ພີ.

ໃນເວລານັ້ນ, ແມ່ນຍາມເຊົ້າຂອງວັນພຸດ, ທະຫານຍາມເຮືອ "ໂປໂຈມກິນ" ໄດ້ແນມເຫັນຫລັກຫຸງ ແລະ ທໍ່ຄັນໄຟເຮືອພົ້ນຂຶ້ນຢູ່ທາງຂອບຟ້າໄກໄກພຸ້ນ. ໄດ້ເຫັນເຮືອລຳຫນຶ່ງ ແລ້ວກໍອີກລຳຫນຶ່ງລຳທີສາມ ທີສີ່... ພວກມັນກຳລັງມາເພື່ອປິດລ້ອມ "ໂປໂຈມກິນ".

ເຮືອສິບສາມລຳຕ້ານກັບເຮືອລຳດຽວ.

ເຮືອຮົບ "ໂປໂຈມກິນ" ຈົ່ງຟ້າວອອກຄຳສັ່ງສັນຍານໄຟທັນທີ. ບັນດາທະຫານເຮືອໄດ້ເຂົ້າປະຈຳທີ່ໃຜມັນ. ຕໍ່ໄປນີ້ຈະມີເຫດການໃດເກີດຂຶ້ນນໍ?

ເຮືອຮົບ "ໂປໂຈມກິນ" ຄ່ອຍໆແລ່ນໄປຫາກຳປັ່ນເຫລົ່ານັ້ນ. ໃນຊ່ວງເວລານາທີ ອັນຫນ້າຫວາດສຽວນັ້ນ, ກະບອກປືນໃຫຍ່ທ້າງຫນົດຂອງ"ໂປໂຈມກິນ"ໄດ້ຄ່ອຍໆອ່ວຍປາກໄປທາງພວກເຮືອດັ່ງກ່າວ. ຜູ້ປະກາດໄດ້ປະຕິບັດຕາມຄຳສັ່ງຂອງ ນາຈູເຊນໂກ ວ່າ: "ທະຫານເຮືອຈາກ "ໂປໂຈມກິນ" ສະເຫນີບໍ່ໃຫ້ຍິງ".

ທັນໃດນັ້ນ ໄດ້ມີສຽງຮ້ອງດັງຂຶ້ນ "ອູຣາ" ເປັນຈຳນວນພັນໆສຽງດັງກ້ອງສະຫນັ່ນທົ່ວຫນ້ານ້ຳທະເລ. ສຽງດັ່ງກ່າວ ໄດ້ດັງມາຈາກເຮືອຮົບທີ່ສັ່ງໃຫ້ມາປາບ ກຳປັ່ນ "ໂປໂຈມກິນ" ທັ້ງສິບສາມລຳນັ້ນເອງ. ມີເຮືອລຳຫນຶ່ງ ໄດ້ສົ່ງສັນຍານໃຫ້ຮູ້ວ່າ: "ພວກເຮົາຂໍເຂົ້າເປັນທາງດຽວກັບພວກເຈົ້າ".

ແລະເຮືອຮົບລຳດັ່ງກ່າວ ກໍນຸ້ງຫນ້າເຂົ້າມາຫຽບກັບເຮືອ "ໂປໂຈມກິນ" ຢ່າງວ່ອງໄວເຫມືອນກັບນົກບິນ.

-ອູຣາ - ສຽງຮ້ອງໂຮດັງກ້ອງສະຫນັ່ນທົ່ວຫນ້ານ້ຳທະເລ. ຫມໍຫົວຫນ້າກອງທັບເຮືອເກີດມີຄວາມຢ້ານກົວ: ແມ່ນຫຍັງຢູ່ບໍ່ຢູ່ເຮືອຮົບກັບເກີດທໍລະຍົດ? ເຂົາໄດ້ອອກຄຳສັ່ງວ່າ:

-ກອງທັບເຮືອຈົ່ງກຽມເມືອ ເຊວາສະໂຕໂປນດຽວນີ້.

ໃນເວລານັ້ນ ເຮືອຮົບສອງລຳໄດ້ປັກທຸງສີແດງຂຶ້ນຢ່າງສ່ຽງໄພ ແລະໄດ້ຈອດຢູ່ໃກ້ໆກັບທ່າເຮືອ ໂອແດດຊາ ບ່ອນທີ່ມີການກໍ່ຄວາມວຸ້ນວາຍ ກຳລັງລໍ້າອັນໃດອັນຫນຶ່ງຢູ່ ແຕ່ບໍ່ກ້າເຂົ້າຫຽບທ່າ. ເພາະຍັງສອງຈິດສອງໃຈຢູ່. ບໍ່ຮູ້ວ່າຊິເຮັດແນວໃດ?

ຂະນະນີ້ນ້ຳມັນເຊື້ອໄຟຢູ່ໃນເຮືອຮົບ "ໂປໂຈມກິນ" ໃກ້ຈະຫມົດແລ້ວ, ນ້ຳຈືດກໍໃກ້ຈະ



ຫມົດແລ້ວ ເຊັ່ນດຽວກັນ, ເຄື່ອງຈັກກໍໃກ້ຈະຢຸດ. ພວມທະຫານເຮືອຕ່າງກໍເລີ່ມຄອນ ແຄນບໍ່ເຊື່ອຫັ້ນ, ຕ້ອງໄດ້ໄຊ້ມາດຕະການໃຫມ່. ແຕ່ຈະເຮັດແບບໃດດີ?

ເຮືອຣົບລໍາຂ້າງຄຽງກໍກ້າຫານແຕ່ພຽງຊື່ວຄາວ. ຜົນທຸງສີແດງທີ່ປີວຢູ່ເທິງເສົາຢ່າງ ຫນ້າສັງເວດນັ້ນ ກໍໄດ້ຖືກຊັກລົງແລ້ວ. ເຮືອລໍາດັ່ງກ່າວ ໄດ້ຍອມຈໍານົນ ແກ່ພວກກໍາອໍ ນາດອີກ. ພວກທະຫານເຮືອ "ໂປໂຈມກິນ" ໄດ້ຕັດສິນໃຈ ກອດສະຫນໍເຮືອ ແລະ ຫນີອອກຈາກທ່າເຮືອ ໂອແດດຊາ ເພື່ອໄປຍັງກາງທະເລ.

ໃນເວລານັ້ນ ທູດຂອງ ເລນິນ ໄດ້ຟ້າວເດີນທາງອອກຈາກເຊີເນວ ເພື່ອມາຊ່ວຍ ເຫລືອບັນດາທະຫານເຮືອ ທີ່ໄດ້ລຸກຮືຂຶ້ນໃນກໍ່ປັ່ນຣົບ "ໂປໂຈມກິນ" ເລນິນ ໄດ້ຕັກ ເຕືອນວ່າ:

"ຈົ່ງປຸກລະດົມພວກທະຫານເຮືອ, ໃຫ້ເຂົາເຈົ້າມີການກະທໍາຢ່າງເດັດດ່ຽວ ແລະ ວ່ອງໄວ. ຈົ່ງພະຍາຍາມຍົກພົນຂຶ້ນບົກ ... ຕ້ອງຍຶດເອົາຕົວເມືອງໃຫ້ມາຢູ່ໃນກໍາມືຂອງພວກ ເຮົາ ...".

ຂະນະທີ່ທູດຂອງເລນິນ ໄດ້ມາເຖິງ ໂອແດດຊາ ນັ້ນ, ຜົນທຸງສີແດງບໍ່ໄດ້ປີວສະບັດ ຢູ່ອ່າວທະເລ ໂອແດດຊາ ອີກແລ້ວ. ຜົນທຸງດັ່ງກ່າວ ໄດ້ອອກຫນີໄປໄກແລ້ວ.



ນ້ຳຖ້ວມໃນກຳປັ່ນໃກ້ຈະຫມົດ ເຕັມທີ, ຕ້ອງຊອກຫາທາງອອກຢ່າງຮີບດ່ວນພວກເຂົາ ໄດ້ມາຮອດ ເຟໂອໂດຊີອາ:

-ຂຸມນ້ຳຈືດແດ່ທ້ອນ!

ພວກກຳອຳນາດໄດ້ປະຕິເສດ.

-ພວກເຮົາບໍ່ຕ້ອງການບໍລິການນ້ຳຈືດໃຫ້ແກ່ຄົນກະບົດ. ຈາກນັ້ນຜົນທຸງແດງດັ່ງກ່າວ ຈຶ່ງໄດ້ເປີດອອກໄປນອກທະເລອີກ. ເກີ່ງຈະບໍ່ມີບ່ອນອີ່ງກໍຕາມແຕ່ກໍບໍ່ຍອມຈຳນົນ. ທຸກ ຄົນໃນເຮືອຕ່າງກໍພາກັນວິຕົກກັງວົນ ຂາດຄວາມເຊື່ອຫມັ້ນ. ທາງອອກນັ້ນຢູ່ໃສ?

ຈົນຮອດຄ່ຳຄືນຂອງມື້ສິບເອັດ, ກຳປັ່ນລຳດັ່ງກ່າວໄດ້ເຂົ້າໄປຮອດອ່າວທະເລ, ແລະ ໄດ້ຈອດຢູ່ທ່າເຮືອ ຣູມານີ. ມັນແມ່ນແຄມທ່າທີ່ບໍ່ເຄີຍເຫັນ, ບັນດາເຮືອນຊານບ້ານຊ່ອງ ຕະຫລອດທັ້ງແສງໂຄມໄຟ ກໍແມ່ນຕ່າງຕາຈົນຫມົດທັ້ງ.

ກຳປັ່ນຮົບ "ໂປໂຈມກິນ" ບໍ່ມີກຳລັງທີ່ຈະເດີນຕໍ່ໄດ້ອີກແລ້ວ. ຂາດນ້ຳກິນ, ຂາດກ່ານ ດັງ, ບໍ່ມີທັງເຂົ້າຈີ່ອີກ.

ລັດຖະບານ ຣູມານີ ເລີຍສະເຫນີ ວ່າ:

-ມອບກຳປັ່ນຮົບໃຫ້ແກ່ພວກເຮົາສາ, ແລ້ວພວກເຮົາຈະໃຫ້ບ່ອນພັກເຊົາແກ່ພວກ

ເຈົ້າ, ຈະບໍ່ມອບພວກເຈົ້າໃຫ້ແກ່ກະສັດລັດເຊຍ. - ແລະຄືນນັ້ນຄືນສຸດທ້າຍ ທີ່ພວກ ທະຫານເຮືອ ຢູ່ໃນກໍາປັ່ນຣົບ "ໂປໂຈມກິນ". ຂໍລາກ່ອນ ກໍາປັ່ນຣົບ" "ໂປໂຈມກິນ" ທີ່ເຕັມໄປດ້ວຍ ເສລີພາບເອີຍ! ຕະຫລອດສິບເອັດມື້ທີ່ເຈົ້າໄດ້ເຮັດໃຫ້ພວກນາຍພົນນາຍ ພັນ ແລະ ພວກນາຍທະຫານ ຂອງກະສັດລັດເຊຍ ແລະ ພວກຮັ່ງມີສີສຸກທັ້ງຫລາຍຢ້ານ ກົວ. ເຈົ້າເປັນຜູ້ທີ່ບໍລິສຸດຕໍ່ຜົນທຸງປະຕິວັດ - ຈົ່ງຫັ້ນຍືນ!

ການພົບປະໂດຍທາງລັບ

ຂະບວນລົດໄຟດ່ວນ ໄດ້ຕົນອອກຈາກ ມົດສະກູ ເພື່ອໄປຍັງ ເປແຕກສະບວກ. ຍັງ ພຽງສິນາທີເທົ່ານັ້ນ ທີ່ຂະບວນລົດດັ່ງກ່າວ ກໍຈະເຄື່ອນຍ້າຍອອກໄປ. ຜູ້ໂດຍສານທຸກ ຄົນຕ່າງກໍເຂົ້າປະຈໍາບ່ອນນັ່ງແລ້ວ. ບັນດາຝູງຄົນຈໍານວນຫນຶ່ງ ທີ່ອອກໄປສົ່ງກັນ ໄດ້ຍືນ ຢູ່ຕາມຂັ້ນໄດທາງຂຶ້ນລົງຂອງຕູ້ລົດ. ນັກສືບສອງຄົນ ຍືນຢູ່ໃກ້ໆກັບຕູ້ລົດໄຟຕູ້ສຸດທ້າຍ.

-ບໍ່ເຫັນ ... ຫມໍຫນຶ່ງ ເວົ້າຂຶ້ນ ພ້ອມທັ້ງຫັນໃຈໃຫ້ບາດຫນຶ່ງ.

-ບາງທີ ຮອດນາທີສຸດທ້າຍພຸ້ນ ເຂົາຈົ່ງຈະມາ, ພວກເຮົາຕ້ອງຕິດຕາມຢ່າງລະອຽດ ໃດ, -ຫມໍທີສອງຕອບ.

ທັ້ງສອງເອົາຫມວກປີກລົ່ງຕ່ໍາໆ, ໄຊ້ແສງຕາສອດສ່ອງເບິ່ງຢ່າງເອົາຈິງເອົາຈັງ. ໃນຂະນະນັ້ນ ມີຜູ້ໂດຍສານມາຕື່ມອີກສອງຄົນ. ຜູ້ຫນຶ່ງມີຮູບຮ່າງລໍ່າສັນໃສ່ແວ່ນຕາສີຂຽວ, ມີຫນ້ວຫົບ ແລະ ກະເປົາເດີນທາງສີເຫຼືອງ.

-ກະເປົາດັ່ງກ່າວແມ່ນໄດ້ປະດິດຂຶ້ນ ຢູ່ທີ່ປະເທດເຟຝລັງນັ້ນເອງ. ຜູ້ທີສອງ ແຕ່ງໂຕ ຈົບງາມ, ເຂົານຸ່ງເສື້ອໃຫຍ່ລາຍການໂຣ.

ຜູ້ໂດຍສານທີ່ໃສ່ແວ່ນຕາສີຂຽວນັ້ນໄດ້ຕອບຄືນແນວໃດກໍບໍ່ຮູ ເພາະນັກສືບ ສອງຄົນ ຟັງບໍ່ຄັກ, ດັ່ງນັ້ນ ຈົ່ງເຮັດໃຫ້ສະຫມອງຂອງພວກມັນເຄັ່ງຕຶງຂຶ້ນ: ຄົນທີ່ພວກມັນກໍາລັງ ກັຕອງນໂຕ ນັ້ນກໍຍັງບໍ່ທັນເຫັນມາປະກົດໂຕເທື່ອ. ແຕ່ວ່າຜູ້ທີ່ໃສ່ແວ່ນຕາສີຂຽວນັ້ນ

ແມ່ນໃຜກັນແທ້? ຄືຈະບໍ່ແມ່ນບຸກຄົນຜູ້ທີ່ມັນຄອງຄອຍນັ້ນດອກ, ແຕ່ກໍເປັນຕາສົງໄສຢູ່ໃດ ... ບໍ່ຄວນປະຫມາດ. ຈາກນັ້ນ ນັກສືບທັງສອງ ຈຶ່ງພ້ອມແລ່ນຕິດຕາມຜູ້ໂດຍສານທີ່ໃສ່ແວ່ນຕາສີຂຽວນັ້ນໄປ.

ແຕ່ລົດໄຟໄດ້ເລີ່ມເຄື່ອນອອກແລ້ວ. ຜູ້ໂດຍສານທີ່ໃສ່ແວ່ນຕາສີຂຽວນັ້ນ ກໍໄດ້ຫົວເອົາຫົວ ແລະ ກະເປົ໋າສີເຫຼືອງໂດດຂຶ້ນເທິງຂັ້ນໄດຕູ້ລົດໄຟໄປເສຍແລ້ວ. ສ່ວນຜູ້ທີ່ນຸ່ງເຄື່ອງຈີບງາມນັ້ນ ຍັງຢືນຢູ່ບ່ອນເກົ່າ. ເຂົາຜູ້ນີ້ ເປັນແຕ່ພຽງຜູ້ມາສົ່ງເທົ່ານັ້ນ.

-ພວກເຮົາກົກຕົ້ມຈືນເປື່ອຍລ້ານໆ, -ນັກສືບຫນຸ່ມຫນ້ຳ ຈົ່ມອອກມາດ້ວຍຄວາມເສົ້າໃຈ.
-ເຂົາເຈົ້າໄດ້ລາຍງານຕໍ່ຂັ້ນເທິງວ່າ ຜູ້ກ່ຽວຈະອອກເດີນທາງໄປປະເທດສະບອກ ພາຍໃນມື້ນີ້. ແຕ່ເປັນຫຍັງຈຶ່ງບໍ່ເຫັນເຂົາ. ຮູບກໍຢູ່ນີ້ເດ, ເບິ່ງຄືຈ່ຳວ່າຢູ່ສະຖານີລົດໄຟ ກໍບໍ່ເຫັນວ່າຊຸມີໃສຄືຮູບນີ້ຈັກຄົນ.

ຫນຸ່ມນັກສືບທັງເວົ້າທັງຈົກຮູບອອກມາຈາກກົງ, ຈຶ່ງຮູບດັ່ງກ່າວແມ່ນຮູບຂອງຜູ້ຫນຸ່ມ ທີ່ມີໂມນແກ້ມສູງ, ຫນ້າຜາກກ້ວາງ ແລະ ຂົນຄິ້ວທັງສອງຕິດຈອດເຂົ້າຫາກັນ ຢ່າງຄົນມີອາລົມ.

-ເລນິນ ອູລີອານົບ ອອກຈາກ ເຊີເນວ ເພື່ອມາປະເທດ ລັດເຊຍ, ແລະໄປບ່ອນທີ່ກຳມະກອນ ພວມລຸກຮືຂຶ້ນ. ເຂົານັ້ນແລ້ວທີ່ເປັນຜູ້ຫົວໂປ່ຂອງພວກເຂົາ. ມີຄຳສັ່ງວ່າໃຫ້ຈັບເຂົາໃຫ້ໄດ້. ຮ້ຳ່ ນີ້ ພວກເຮົາຕ້ອງມາຈອບເບິ່ງອີກ, -ຫນຸ່ມນັກສືບຜູ້ນັ້ນທັງເວົ້າທັງຍັດຮູບເຂົ້າມ້ວນໄວ້ໃນກົງ.

ໃນເວລານັ້ນ ຂະບວນລົດດ່ວນໄດ້ເຄື່ອນຍ້າຍກົງລໍ້ຂອງມັນ ໄປດ້ວຍຄວາມໄວສຸດຂີດ ແລະ ຂະນະນັ້ນເປັນເວລາຄ່ຳຄືນ ຈຶ່ງເຕັມໄປດ້ວຍຫມູ່ດວງດາວ. ທ່ໍລົດໄຟໄດ້ສົ່ງຄວັນໄຟຈຶ່ງມັນໄດ້ເຮັດໃຫ້ຈືນແສບຕາ. ປ່າທີ່ເຕັມໄປດ້ວຍຫີມະງົບສະຫງັດແລະປ່ຽວພ້ອຍ ໄດ້ກ້ອຍຫ່າງອອກໄປເລື້ອຍໆ. ຂະບວນລົດດັ່ງກ່າວ ຍັງຄົງສືບຕໍ່ແລ່ນໄປດ້ວຍຄວາມໄວ. ຕາໄຟຈາກຫ້ວລົດ ໄດ້ພຸ່ງແສງສະຫວ່າງອອກຢ່າງເຈີດຈ້າ. ສຽງລໍ້ລົດກະທົບໃສ່ກັບເສັ້ນທາງເຫລັກດັງເປັນສຽງກົກກັກໆ...

ເຊົ້າຂອງມື້ໃຫມ່ຕໍ່ມາ, ພໍໄປຮອດເປແຕກສະບອກແລ້ວ ຜູ້ທີ່ໃສ່ແວ່ນຕາຂຍວ ດ່ງກ່າວ ໄດ້ຈ້າງລົດມ້າຂໍ່ຕໍ່ອີກ. ຄາວຫນ່ຶງ ເຂົາກໍໄດ້ມາຮອດເຮືອນຫລັງຫນ່ຶງຊ່ຶງຢູ່ໃກ້ໆກັບຕົວເມືອງ. ແຕ່ວ່າເຮືອນດ່ງກ່າວ ແມ່ນເຮືອນຂອງຜູ້ທີ່ຫາກໍມາໃຫມ່ນັ້ນຫລໍ່ບໍ? ມັນແມ່ນເຮືອນຫ້ອງ ນ້ອຍໆພໍຢູ່, ໃນນັ້ນມີ ຕຽງເຫລັກທີ່ຫຸ້ມດ້ວຍຜ້າຫົ່ມບາງໆ ຕ້ັງຢູ່ຕິດຝາ, ມີໂຕະນ້ອຍຫນ່ວຍ ຫນ່ຶງຕ້ັງຢູ່ທາງຂ້າງປະຕູປ່ອງຢ້ຽມນ້ອຍ.

ຫ້ອງດ່ງກ່າວເປັນຫ້ອງຫວ່າງເປົ່າ ປາສະຈາກຄົນຢູ່.

ຜູ້ທີ່ຫາກໍມາຮອດ ປົດແວ່ນຕາອອກ ຍັດເຂົ້າໄວ້ໃນຫົບ. ຈາກນັ້ນກໍຈັບເອົາເຈ້ຍອອກ ມາຈາກກະເປົາສີເຫລ່ືອງ ແລ້ວມານ່ັງຂຽນດ້ວຍຄວາມພ້າວພັ່ງ.

ຫນ່ຶງຊ່ົວໂມງຕໍ່ມາ ໄດ້ມີສຽງດັງກອກເກກ ຢູ່ທາງນອກປະຕູ. ມັນແມ່ນສຽງບິດລູກກຸນ ແຈ. ບານປະຕູກໍ່ເປີດອອກ. ນາເດສະດາ ກ່ົງສະຕ້ັງຕິນບນາ ໃສ່ຊຸບໝ້ີນອນສີຂາວ, ສຸບ ຫມວກຂົນສັດ ໄດ້ຍ່າງເຂ້ົາມາ.

ອະລາດ່ເມຍ ອ່ີລ່ຊ ຟ້າວລຸກຢ່ືນຂ້ຶນທັນທ່ີ.

-ນາເດຍ ທ່ີຮັກ!

-ຢູ່ທ່ີ ມ່ິດສະກູ ພວກມັນບ່ໍຕ່ິດຕາມອ້ຍບ່ໍ? -ນາເດສະດາ ກ່ົງສະຕ້ັງຕ່ິນບນາ ຖາມຂ້ຶນ ດ້ວຍຄວາມເປັນຫ່ວງ.

-ເລ່ືອງນ້ັນບ່ໍຕ້ອງຖາມກໍ່ຢ່າເທາະ! -ອະລາດ່ເມຍ ທ້ັງເວ້ົາທ້ັງຍ້ຶມຫົວ.

ນາເດສະດາ ກ່ົງສະຕ້ັງຕ່ິນບນາ ພະຍາຍາມລະງັບຄວາມເປັນຫ່ວງກ້ັງວົນ ແລ້ວຟ້າວຄ້ົນ ເປ໋ົາຫົບ. ນ້ີແມ່ນແວ່ນຕາສີຂຽວຂອງໃຜ? ເອ່ົາມາເຮັດຫຍ້ັງ ເທາະ?

-ເພ່ືອປອມໂຕລະບໍ, -ອະລາດ່ເມຍ ອ່ີລ່ຊ ກ່າວຕອບ. -ກໍ່ຍ້ອນແວ່ນຕາສີຂຽວນ້ີແລ້ວ ອ້ายຈ່ຶງສາມາດຕິບຕາພວກນັກສ່ືບໄດ້ນະ, ນາເດຍເອ່ີຍ!

ອະລາດ່ເມຍ ອ່ີລ່ຊ ແລະ ນາເດສະດາ ກ່ົງສະຕ້ັງຕ່ິນບນາ ໄດ້ພາກັນກັບຈາກ ເຊ່ີເນວ ແລະ ເຂ້ົາມາປະເທດ ລັດເຊຍຢ່າງລັບໆ. ພວກເຂົາເຈ້ົາໄດ້ມາຮອດ ເປແຕກສະບອກ ຄົນ ລະເທ່ືອ ແລະໄດ້ໄຊ້ຫນ້ັງສ່ືເດ່ີນທາງຂອງຄົນອ່ືນ. ຈາກນ້ັນພວກເຂົາເຈ້ົາ ກໍໄດ້ມາພົບກັນ

ຢ່າງລັບໆ. ການພົບປະຂອງພວກເຂົາເຈົ້ານັ້ນ ແມ່ນມີຂຶ້ນໃນໄລຍະສັ້ນ ແລະທັ້ງຟ້າວຟັ່ງ.

ໃນເວລານັ້ນ ວະລາດີເມຍ ອີລີຊ ໄດ້ເລົ່າສະພາບການທີ່ເກີດຂຶ້ນຢູ່ ນິດສະກູ ຊູ້ຟ້າຢ່າງ ຟ້າວຟັ່ງ. ເລນິນ ເວົ້າເຖິງເຫດການອັນໃຫຍ່ຫລວງທີ່ຍັງບໍ່ເຄີຍພົບພໍ້ມາກ່ອນ! ເພິ່ນໄປທີ່ ນິດສະກູ ເພື່ອປຶກສາຫາລືເລື່ອງລາວຕ່າງໆຮ່ວມກັບບັນດາສະຫາຍຂອງຕົນ. ເລື່ອງລາວດັ່ງ ກ່າວ ແມ່ນເຫດການທີ່ໄດ້ເກີດຂຶ້ນໃນລະຫວ່າງເດືອນຕຸລານັ້ນເອງ, ຈຶ່ງນັ້ນໄດ້ເລີ່ມຕົ້ນດ້ວຍ ການປະທ້ວງນັດຢຸດງານຂອງພວກກຳມະກອນ ທາງລົດໄຟທີ່ ນິດສະກູ ແລະຕິດຕາມດ້ວຍ ບັນດາໂຮງຈັກໂຮງງານອື່ນໆ. ລົດລາງແລະລົດມ້າ ທີ່ ແລ່ນຕາມທາງເຫລັກນັ້ນ ກໍໄດ້ຢຸດ-ການເຄື່ອນໄຫວ, ໄຟຟ້າກໍມອດ, ລະບົບທໍ່ນ້ຳປະປາ ກໍຖືກຢຸດສະງັກລົງ. ກຳມະກອນ ທົ່ວ ນິດສະກູຕ່າງກໍໄດ້ປະທ້ວງນັດຢຸດງານຈົນຫມົດ. ຂະບວນການດັ່ງກ່າວ ໄດ້ເປັນໄຟລາມລຸກໄປ ຮອດຕົວເມືອງອື່ນໆອີກ. ຢູ່ຕາມຄຸ້ມບ້ານໃດ ກໍມີເຫດການ ຄ້າຍຄືກັນນີ້ເກີດຂຶ້ນ.

ເພື່ອດັບມອດແປວໄຟປະຕິວັດ ພວກກະສັດ ລັດເຊຍ ໄດ້ອອກກະແຫລງການຊົ່ງໃຫ້ຄຳ ຫມັ້ນສັນຍາວ່າຈະ ໃຫ້ສິດເສລີພາບ ແກ່ພວກກຳມະກອນ. ແຕ່ອັນນັ້ນມັນເປັນພຽງຄຳ ຫລອກລວງເທົ່ານັ້ນ. ພວກກຳມະກອນເຂົ້າໃຈດີວ່າ: ຄຳເວົ້າຂອງກະສັດລັດເຊຍນັ້ນ ເຊື່ອບໍ່ ໄດ້, ເພາະວ່າບັນດາກຳມະກອນຕ່າງກໍໄດ້ຮູ້ເຫັນເຫດການແຫ່ງການປະຫັດປະຫານຢູ່ທີ່ ວັງ ລະດູຫນາວໃນເດືອນມັງກອນທີ່ຜ່ານມາ ນັ້ນມາພໍ່ແຮງແລ້ວ.

ໃນມື້ວັນທີ ເຈັດ ເດືອນທັນວາ ປີ ໑໙໐໕ ຕອນສິບສອງໂມງທ່ຽງໄດ້ມີການປະທ້ວງ ນັດຢຸດງານລະເບີດຂຶ້ນ ທີ່ນິດສະກູ ອີກ. ລັດຖະບານຈຶ່ງໄດ້ສັ່ງໃຫ້ທະຫານ ອອກປາບປາມ ເຫລົ່າກຳມະກອນ ຜູ້ທີ່ເຂົ້າຮ່ວມການປະທ້ວງນັ້ນ. ບັນດາກຳມະກອນປະກອບອາວຸດ ຈຶ່ງໄດ້ ລົງມືທຳການຕອບໂຕ້. ດັ່ງນັ້ນຢູ່ຕາມຖະຫນົນຫົນທາງແຕ່ລະເສັ້ນ, ຢູ່ຕາມສະຫນາມຫລວງ, ຢູ່ຕາມໂຮງຈັກໂຮງງານແຕ່ລະບ່ອນ ຈຶ່ງໄດ້ສ້າງທີ່ກຳບັງຂຶ້ນ. ບັນດາກຳລັງທີ່ເປັນແກ່ນສານ ຂອງເຫລົ່າກຳມະກອນໄດ້ຖືເອົາ ແປຣສະຍາຈຶ່ງເປັນຄຸ້ມທີ່ຢູ່ອາໃສ ຂອງເຫລົ່າກຳມະກອນ ເປັນປ້ອມທີ່ຫມັ້ນ. ແລະຢູ່ແຫ່ງນີ້ ເປັນບ່ອນທີ່ມີໂຮງຈັກໂຮງງານຫລາຍ. ຈາກນັ້ນ ສະ ພາໂຊວຽດ ຈຶ່ງຫມາຍເຖິງອຳນາດຂອງກຳມະກອນ ກໍໄດ້ຖືກສ້າງຕັ້ງຂຶ້ນ.

ລັດກະບານຂອງກະສັດລັດເຊຍ ໄດ້ສັ່ງກອງພົນທະຫານບົກ, ທະຫານມ້າ, ທະຫານປືນໃຫຍ່, ແລະຫນ່ວຍທະຫານ ໂກລັກໃຫ້ເຂົ້າມາທີ່ ມົດສະກູ ຢ່າງຮີບດ່ວນ. ປືນໃຫຍ່ ຂອງກະສັດ ລັດເຊຍ ໄດ້ທໍາການຈູດເຜົາຄຸ້ມ ແປຣສະຍາ. ເຮືອນໄມ້ຂອງພວກກໍາມະກອນ ໄດ້ກືກເຜົາໄຫມ້ຈົນກ້ຽງ.

ການສູ້ຮົບໄດ້ແກ່ຍາວໄປເປັນເວລາສິບມື້. ບັນດາກໍາມະກອນແລະພວກໂບນເຊວິກ ໄດ້ທໍາການສູ້ຮົບຢ່າງອົງອາດກ້າຫານ. ແຕ່ປືນໃຫຍ່ຂອງກະສັດລັດເຊຍໄດ້ທໍາການປາບປາມການລຸກຮືບຢ່າງຮຸນແຮງຮ້າຍກາດທີ່ສຸດ.

ກໍາມະກອນບໍ່ຄວນຕໍ່ສູ້ ດ້ວຍອາວຸດ! ນັ້ນແມ່ນຄໍາເວົ້າຂອງພວກ ແມນເຊວິກ.

-ບໍ່ຈໍາເປັນດອກ, - ເປລຄານິບ ໄດ້ໃຫ້ຄໍາຢືນຢັນຄືແນວນັ້ນ.

ນັ້ນສູ້ຮົບປະຕິວັດ ຢູ່ທີ່ປະເທດລັດເຊຍ ໄດ້ລະເບີດຂຶ້ນຢ່າງຫລວງຫລາຍ ແຕ່ສ່ວນ ເປລ ຄານິບ ພັດນັບມື້ນັບຫ່າງເຫີນອອກຈາກພວກ ໂບນເຊວິກ.

-ຈໍາເປັນຕ້ອງມີການລຸກຮືບ, - ເລນິນໄດ້ໃຫ້ຄໍາຂາດຄືແນວນັ້ນ. -ກໍາມະກອນຕ້ອງຈັບອາວຸດຂຶ້ນຕໍ່ສູ້. ນັ້ນແມ່ນບົດຮຽນຕົວຈິງທີ່ສໍາຄັນຢ່າງຫນ້ອຍ.

ໃນຕອນນີ້, ພາຍຫລັງທີ່ໄດ້ໃສ່ໄລກຸນແຈຫ້ອງນ້ອຍໄວ້ແລ້ວ ອະລາດີເມຍ ອີລີຊ ກໍໄດ້ ເລົ່າສະພາບການຕ່າງໆ ສູ່ ນາເດສະດາ ກົງສະຕັງຕິນົບນາ ຟັງຄ່ອຍໆ.

ທັງນີ້ກໍຍ້ອນວ່າ ນາເດສະດາ ກົງສະຕັງຕິນົບນາ ເປັນເລຂາຄະນະກໍາມະການສູນກາງ ພັກ, ຮັບຜິດຊອບ ກ່ຽວກັບການປະຊຸມລັບຢູ່ທຸກໆຈຸດ, ທັງເປັນຜູ້ກໍາກັບການຕິດຕໍ່ຂອງພັກ ແລະທັງເປັນຜູ້ກໍາກັບການພິບປະຂອງນັກ ໂບນເຊວິກນໍາອີກດ້ວຍ. ນອກນັ້ນນາງຍັງເປັນຜູ້ ຊ່ວຍເຫລືອວຽກງານ ທີ່ໃກ້ຊິດທີ່ສຸດຂອງ ເລນິນ.

ພວກເຂົາເຈົ້າຍັງຈື່ຈໍາ ດ້ວຍຄວາມຂົມຂື່ນ ເຖິງເພື່ອນທີ່ຮັກແພງຂອງເຂົາເຈົ້າຄົນຫນຶ່ງ ຄື ນິກໂກລາຍ ບາອູມານ. ບາອູມານ ຜູ້ກໍາກັບການພິມຫນັງສືພິມ "ຫມັດໄຟ" ຮ່ວມກັບ ເລນິນ. ທັງເປັນຜູ້ຈັດສົ່ງຫນັງສືພິມ "ຫມັດໄຟ" ນີ້ຜ່ານຊາຍແດນເຂົ້າມາປະເທດລັດເຊຍ. ພວກສາລະວັດ ໄດ້ສະກັດລັດຈັບລາວ ແລ້ວເອົາລາວເຂົ້າຄຸກ. ລາວລັກອອກຈາກຄຸກມາ

ເຕ່ືອນໄຫວວຽກງານພັກຢ່າງກ້າແກ່ນ ແລະ ທະນົງອົງ ອາດ. ຕໍ່ມາລາວພັດໄດ້ຖືກຄຸກອີກ.

ເດືອນສິບ ປີ ໑໙໐໕ ບາຊູມານ ຖືກປ່ອຍຕົວ. ແຕ່ບໍ່ພໍເທົ່າໃດມື້ຕໍ່ມາ, ຕອນເດີນຂະບວນປະທ້ວງຢູ່ນັ້ນ ຫມໍເພັດຊະຄາດຮັບຈ້າງຜູ້ຫນຶ່ງ ໄດ້ເອົາທໍ່ເຫລັກທຸບຕີ ບາຊູມານ ຈົນເກືອແກ່ຄວາມຕາຍ.

ກຳມະກອນທີ່ ມິດສະກູ ເປັນຈຳນວນພັນໆຄົນ ໄດ້ ໄປສົ່ງສະການນັກ ໂບນເຊວິກ, ນັກປະຕິວັດ ແລະ ວິລະ ຊົນ ຜູ້ລ່ວງລັບໄປດ້ວຍຄວາມອົງອາດກ້າຫານ ຄຸນງາມ ຄວາມດີ ແລະ ບໍລິສຸດຜຸດຜ່ອງຜູ້ນັ້ນ...

-ພັກເຮົາ ມີຄວາມເຂັ້ມແຂງກໍ່ຍ້ອນມີຄົນປະເພດ ນັ້ນ, -ອະລາດີເມຍ ອີລີຊ ເວົ້າຂຶ້ນ.

ເລນິນ ລຸກຂຶ້ນ ແລ້ວຍ່າງເຂົ້າໄປໃກ້ໆປ່ອງຢ້ຽມ. ນາເດສະດາ ກົງສະຕັງຕິນົບນາ ກໍໄດ້ຍ່າງໄປຢືນຢູ່ຄຽງ ຂ້າງເພິ່ນ:

-ເຫັນພຸ້ນບໍ່ ໂອໂລເດຍ ເອີຍ!

ຢູ່ຟາກທາງເບື້ອງກົງກັນຂ້າມນັ້ນມີຊາຍຜູ້ຫນຶ່ງ ໃສ່ ຫມວກຂົນສັດ ແລະຄຽນຜ້າພັນຄໍຜືນງາມ, ເບິ່ງທ່າທາງ ດ້ານນອກສຸພາບຮຽບຮ້ອຍດີ ມັນຢືນຢູ່ບໍ່ເຫນັ້ງບໍ່ຕົງ. ອີກ ຄົນຫນຶ່ງກຳລັງຍ່າງໄປຍ່າງຟ້າວຟັ່ງຢູ່ເທິງແຄມທາງໃຫຍ່ ພຸ້ນ. ອະລາດີເມຍ ອີລີຊ ແລະ ນາເດສະດາ ກົງສະຕັງຕິ ນົບນາ ຢືນຕິດຕາມເບິ່ງພຶດຕິການຂອງພວກດັ່ງກ່າວຢູ່ ຄາວຫນຶ່ງ.

-ຕ້ອງໄດ້ປ່ຽນບ່ອນຢູ່ໃຫມ່, -ອະລາດີເມຍ ອີລີຊ ເວົ້າຂຶ້ນ.

ເລນິນ ຈັບເອົາບິດຂ່າວຊຸ່ງຫາກໍຂຽນແລ້ວນັ້ນຍື່ນໃຫ້ ນາເດສະດາ ກົງສະຕັງຕິນິບນາ. ນາງຈັບເອົາແລ້ວຍັດເຂົ້າໃນເສື້ອເຊີ້ມ. ອະລາດີເມຍ ອີລີຊ ລຸກກະເປົາສີເຫລືອງນັ້ນເຂົ້າໄວ້ໃນກ້ອງຕຽງ...

-ຕ້ອງອອກໄປໃຫ້ຫວິດຈາກບ່ອນນີ້, -ນາເດສະດາ ກົງສະຕັງຕິນິບນາກ່າວຂຶ້ນ.

ນາງຄຶດເປັນຫວງນາເຕ ອະລາດເມຍ ອລຊ.

ແຕ່ລະມື້, ແຕ່ລະນາທີ, ລ້ວນແຕ່ມີໄພນາບຂູ່ຢູ່ພໍສໍ່ານັ້ນ. ອີລີຊ ອາດຖືກຈັບ, ຖືກຄຸມຂັງຢູ່ໃນຄຸກ, ຖືກເນລະເທດຈົນຕະຫລອດຊີວິດກໍເປັນໄດ້.

ແຕ່ນາງກໍບໍ່ໄດ້ກ່າວຄວາມເປັນຫ່ວງຂອງຕົນອອກມາແມ້ແຕ່ຄໍາດຽວ, ນາງມີແຕ່ເວົ້າວ່າ ຂະນະນີ້ ນິນນາສະຫາຍກໍາລັງຄອງຖ້າ ອະລາດີເມຍ ອີລີຊ ຢູ່ ທ່ຈຸດອົ່ນພຸ້ນ. ພວກເຂົາເຈົ້າໄດ້ເກາະແຂນກັນແລ້ວຍ່າງອອກຈາກບ້ານໄປ, ແຕ່ບໍ່ໄດ້ຍ່າງໄປທາງເບື້ອງຊ້າຍມືຊ່ງແມ່ນບ່ອນທີ່ເຂົາເຈົ້າຕ້ອງການໄປນັ້ນ ແຕ່ພວກເຂົາເຈົ້າໄດ້ໄປທາງກົງກັນຂ້າມ. ອະລາດີເມຍ ອີລີຊ ສະແດງຕົນເປັນສຸພາບບຸລຸດ ແລະ ໄດ້ເລີ່ມລົມເລື່ອງກ່ຽວກັບການໄປເບ່ງດົນຕີ. ຂັ້ນໄປ ເບ່ງດົນຕີຄືຈະມ່ວນດີ. ນາເດສະດາ ກົງສະຕັງຕິນິບນາ ໄດ້ແຕ່ຫົວ ສະແດງຄວາມເຫັນດີນໍາ. ແຕ່ນາງກໍໄດ້ລອບເສືອດຕາເບ່ງການເຄື່ອນໄຫວ ຂອງພວກນັກສືບ. ຫນ້າທຸ່ກເພ້ຍ ຄໍ່ານີ້ນັ້ນ ຍັງຢືນຢູ່ຢ່າງບໍ່ເຫນັງຕີງ. ສ່ວນອີກຫນ້າຫນ່ຶງຍັງຍ່າງກັບໄປກັບມາດ້ວຍຄວາມຮ້ອນໃຈ.

-ລົດມ້າ! -ອະລາດີເມຍ ອີລີຊ ເອີ້ນໃສ່ລົດມ້າຊ່ງພວມຜ່ານມາທາງນັ້ນ.

ລົດມ້າຊ່ງພວມຜ່ານມາທາງນັ້ນ ກໍມາຢຸດໃກ້ໆກັບບ່ອນທີ່ພວກນັກສືບຢືນຢູ່ນັ້ນເອງ. ອະລາດີເມຍ ອີລີຊ ໂຊມເອົາເພ່ືອນຮ່ວມທາງຂຶ້ນເທິງລົດ, ແລ້ວກໍ່ຈ່ືຕິດຕາມຂຶ້ນໄປນ່ັງ.

-ໄປກະຫນິນ ຊາໂດວາຍຢາ! -ອະລາດີເມຍ ອີລີຊ ເວົ້າຂຶ້ນຢ່າງບໍ່ຕ້ອງຄຶດ ແລະ ເວົ້າກັບ ນາເດສະດາ ກົງສະຕັງຕິນິບນາ ດ້ວຍພາສາ ເຢຍລະມັນ ຄ່ອຍໆ: ສໍາລັບພວກຫນ້າໂງ່ ສອງຄົນນ້ີ, ຂໍໃຫ້ອາກາດມັນຫນາວຂຶ້ນແລະ ມີລົມພະຍຸຫິມະຕົກລົງມາຕ່ືມອີກຈັກຫນ້ອຍ

ແດ່ເທາະ, ເພື່ອຊິໃຫ້ພວກມັນຢືນອົດທົນຫນາວກະດ້າງຢູ່ກັບຫັ້ນ.

ຍັງບໍ່ທັນຮອດກະຫນິນ ຊາໂດວາຍຢາ ຊໍ້າ, ພວກເຂົາເຈົ້າໄດ້ພາກັນລົງກ່ອນ ແລ້ວລັດເຂົ້າໄປໃນເດີ່ນທີ່ລ່ວງຊອດໃສ່ກັບເດີ່ນອື່ນ, ຊຶ່ງເປັນບ່ອນທີ່ ອະລາດີເມຍ ອີລີຊ ເກອ່ນ ເຄີຍມາຕັ້ງແຕ່ສະໄຫມ ໄຮ້ຊີວິດຢູ່ ເປແຕກສະບວກ ໃນເມື່ອກ່ອນພຸ້ນ. ຈາກນັ້ນ ພວກເຂົາເຈົ້າກໍໄປຍັງດອນ ວາຊີລີແອບສະກີ. ຖ້າຫາກວ່າມີຄົນຕິດຕາມມາ, ພວກເຂົາເຈົ້າ ຈະຕ້ອງຫາວິທີ ປ່ຽນທິດທາງທັນທີ. ພວກເຂົາເຈົ້າພາກັນຍ່າງໄປຍ່າງບໍ່ມີຈຸດ.

ເຖິງວ່າຈະໄດ້ພົບ ແລະ ໄດ້ເດີນຄຽງຂ້າງກັນ ດ້ວຍຄວາມບັງເອີນ ແລະ ໃນເວລາສັ້ນໆ ນັ້ນກໍຕາມ ແຕ່ພວກເຂົາເຈົ້າກໍຖືວ່າ ເປັນຄວາມສຸກທີ່ສຸດ.

ເວລານັ້ນໃກ້ຈະຄ່ຳແລ້ວ, ແລະໃກ້ຈະຮອດເວລາທີ່ນັດຫມາຍເອົາໄວ້, ແລະກໍຍ້ອນເຊື່ອຫມັ້ນວ່າ ຄົງຈະບໍ່ມີພວກນັກສືບຕິດຕາມ, ດັ່ງນັ້ນ ອະລາດີເມຍ ອີລີຊ ຈຶ່ງໄດ້ໄປຍັງສະຖານທີ່ທີ່ ນາເດສະດາ ກົງສະຕັງຕິນິບນາ ໄດ້ຊີ້ຊ່ອງທາງໃຫ້. ຢູ່ບ່ອນນັ້ນ ພວກໂບນເຊວິກ ແລະ ບັນດາຊາວກຳມະກອນຜູ້ກ້າວຫນ້າຂອງ ເປແຕກສະບວກ ທັງຫລາຍ ໄດ້ມາເຕົ້າໂຮມກັນ ແລະ ກຳລັງຄອງກ້ຳການກ່າວຄຳປາໄສ ຂອງ ສະຫາຍ ເລນິນ ຢູ່.

ຫລົບຫນີໄປຢູ່ຕ່າງປະເທດອີກ

ຕະຫລອດສອງປີເຕັມ ທີ່ກອງໄຟແຫ່ງການລຸກຮືຂຶ້ນ ຂອງພວກກຳມະກອນແລະຊາວກະສິກອນ ໄດ້ລຸກໄຫມ້ຂຶ້ນໄປທົ່ວປະເທດລັດເຊຍ. ໃນໄລຍະສອງປີດັ່ງກ່າວນັ້ນ ແມ່ນໄລຍະທີ່ພວກກຳອຳນາດລັດເຊຍ ພະຍາຍາມດັບມອດແປວໄຟແຫ່ງການປະຕິວັດຢູ່ພາຍໃນປະເທດ ແລະ ເລີ່ມມີການປາບປາມຢ່າງແຂງແຮງຄື: ການຈັບກຸມ, ການເນລະເທດ, ການປະຫານຊີວິດ ແລະ ອື່ນໆ...

ອະລາດີເມຍ ອີລີຊ ໄດ້ໄປອາໃສຢູ່ໃກ້ໆກັບ ເປແຕກສະບວກ ທີ່ສຸດ! ຢູ່ແຫ່ງນີ້ ເລນິນ ໄດ້ຂຽນບົດຄວາມເພື່ອນຳເອົາໄປລົງພິມຢູ່ໃນ ຫນັງສືພິມ "ກຳມະຊີບ" ຂອງພັກ ໂບນ

ເຊວົກ, ຊຶ່ງເປັນຫນັງສືພິມທີ່ຜິດກົດຫມາຍ. ຢູ່ທີ່ນັ້ນ ເພິ່ນໄດ້ຕິດຕໍ່ກັບຫນ່ວຍເຄື່ອນ ໄຫວຂອງພວກ ໂບນເຊວົກ ຢູ່ທາງ ເປແຕກສະບວກ ເປັນປະຈຳ.

ສ່ວນ ນາເດສະດາ ກົງສະຕັງຕິນິບນາ ນັ້ນ ໄດ້ມາທີ່ ເປແຕກສະບວກ, ເກືອບທຸກໆອາ ທິດ ເພື່ອປະຕິບັດວຽກງານຂອງພັກຕາມການມອບຫມາຍຫນ້າທີ່ຈາກ ເລນິນ.

ມື້ຫນຶ່ງ ນາງໄດ້ກັບເມືອຈາກ ເປແຕກສະບວກ ດ້ວຍອາການໂສກເສົ້າ. ພວກກຳອຳ ນາດກະສັກລັດເຊຍກຳລັງອອກແຮງຕ້ານກັບ ອະລາດີເມຍ ອີລີຊ ຢ່າງບ່ວງບ້າ. ຢູ່ຕາມປ້ອມ ຂອງພວກສາລະວັດທະຫານລ້ອມແຕ່ໄດ້ຮັບຄຳສັ່ງ:

-ຈັບໂຕ ເລນິນ ຜູ້ນຳພວກ ໂບນເຊວົກ!

ໃນເວລານັ້ນ ທີ່ປະເທດ ແຟງລັ່ງ ພັດຍັງຖືກປົກຄອງໂດຍກະສັດລັດເຊຍຢູ່.

ສູນກາງ ໂບນເຊວົກ ໄດ້ຕົກລົງວ່າ: ເລນິນ ຕ້ອງຫລົບຫນີໄປຢູ່ຕ່າງປະເທດ ສ່ວນ ຫນັງສືພິມ "ກຳມະຊີບ" ນັ້ນກໍໃຫ້ຈັດພິມຢູ່ຕ່າງປະເທດພຸ້ນເລີຍ.

-ລາກ່ອນ, ອ້າຍທີ່ຮັກ, -ນາເດສະດາ ກົງສະຕັງຕິນິບນາ ກ່າວອຳລາ. -ພວກເຂົາຈະ ໄປພົບກັນຢູ່ທີ່ປະເທດ ຟຸແອດພຸ້ນ. ນາເດສະດາ ກົງສະຕັງຕິນິບນາ ຈະເດີນທາງໄປ ທີ່ ສະ ໂຕກໂຮມ, ນະຄອນຫລວງຂອງຟຸແອດຕາມຫລັງ. ຂະນະນີ້ ໃຫ້ ອະລາດີເມຍ ອີລີຊ ໄປ ຜູ້ດຽວກ່ອນ.

ໃນຂະນະນັ້ນ ແມ່ນເດືອນສິບສອງຂອງປີ ເລວກ. ກ້ອງລົດໄຟ ທີ່ອອກຈາກ ແຮນຊີ ກີ ໄດ້ມາເຖິງ ອາໂບ ເມືອງທ່າເຮືອຂອງ ແຟງລັ່ງ.

ຍ້ອນກຳລັງຄິດຢູ່ຢ່າງລຶ້ມຕົວ, ເລນິນຈຶ່ງບໍ່ໄດ້ແນມຜ່ານປະຕູແກ້ວອອກໄປເບິ່ງທີ່ລະບຽງ ທາງຍ່າງນັ້ນວ່າມີໃຜແດ່. ເມື່ອແນມອອກໄປ ກໍສາມາດຮູ້ໄດ້ໂລດວ່າ ຫນໍ່ທີ່ເຫລືອຕາ ແນມເບິ່ງເພິ່ນນັ້ນ ຄື ຕຳຫລວດລັບ. ອະລາດີເມຍ ອີລີຊ ໄດ້ມີບົດຮຽນໃນການເບິ່ງມັນນັ້ນ ຄືກັນ. ບາງທີ ພວກສາລະວັດທະຫານ ອາດຄອງກ້າລັດເອົາໂຕ ອະລາດີເມຍ ອີລີຊ ຢູ່ທາງ ສະຖານີລົດໄຟ ອາໂບ ພຸ້ນກໍບໍ່ຈັກ. ແນ່ນອນແລ້ວຫນໍ່ນັກສືບ ໄດ້ຕິສາຍໄປບອກຂ່າວໃຫ້ ພວກສາລະວັດທະຫານຮູ: ເພື່ອຕມຕ້ອນເອົາເຫຍື່ອແລ້ວ.

ອັນຕະລາຍແລ້ວບາດນີ້! ສະການີໂຕສຸດທ້າຍ ກ່ອນທີ່ຈະໄປຮອດ ອາໂບ ນັ້ນ ກໍກາຍ
ແລວ. ຄົງຈະບໍ່ມີສະການີໃດທີ່ພໍຈະລົງໄດ້. ຂະບວນລົດດັ່ງກ່າວ ໄດ້ນຳເອົາວະລາດີເມຍ
ອີລີຊ ເຂົ້າໄປຫາເງື້ອມມືຂອງພວກຕຳຫລວດຢ່າງແນ່ນອນ. ວະລາດີເມຍ ອີລີຊ ແນ່ນສອດ
ຜ່ານທາງປ່ອງຢ້ຽມແກ້ວອອກມາອີກ, ຫມໍນັກສືບບໍ່ຈັກວ່າຫນີໄປທາງໃດແລ້ວ.

ມັນອາດຈະເຊື່ອວ່າ ເຫຍື່ອໄດ້ຕົກຢູ່ໃນກຳມືຂອງພວກມັນຢ່າງແນ່ນອນ ແລ້ວສະບັ້ນມັນ
ຈໍ່ຍ່າງເຂົ້າໄປພັກຜ່ອນຢູ່ໃນຫ້ອງຂອງມັນ. ຈັ່ງແມ່ນອັນຕະລາຍແທ້ໆ: ຍັງອີກຊົ່ວໂມງດວ
ເທົ່ານັ້ນ ພວກມັນກໍຈະໄດ້ຈັບ ວະລາດີເມຍ ອີລີຊ.

ວະລາດີເມຍ ອີລີຊ ຜຸດລຸກຂຶ້ນ ພ້ອມທັງຫົ້ວເອົາຫົບນ້ອຍໆຂອງເພິ່ນ. ຈາກນັ້ນ ກໍ
ຄ່ອຍໆຍ່າງລົງໄປຕາມລະບຽງ. ວະລາດີເມຍ ອີລີຊ ໄຂປະຕູອອກ. ຂະບວນລົດໄຟ ແລ່ນໄປ
ດ້ວຍຄວາມໄວສຸດຂີດ! ຕູ້ລົດໄຟ ເທນັ້ງຕົງລອກແລກ: ວະລາດີເມຍ ອີລີຊ ຢືນຢູ່ຄາວ
ຫນ້ຳ: ບໍ່ກ້າສ່ຽງໂຕນ. ເພິ່ນຟັງຈັງຫວະສຽງບາດຕີນຂອງລົດຈັ່ງມັນກຳລັງຍຽບຢູ່ເທົ່ງລາງ
ເທລັກນັ້ນ. ວະລາດີເມຍ ອີລີຊ ຮູ້ດີວ່າ, ເມື່ອເວລາຮອດທາງໂຄ້ງນັ້ນ ລົດແລ່ນຊ້າລົງ,
ເກົ່ງຢ່າງໃດກໍບໍ່ມີທາງເລືອກອີກແລ້ວ. ດັ່ງນັ້ນວະລາດີເມຍ ອີລີຊ ຈົ່ງໂດດລົງລົດທັນທີ.
ແຕ່ກໍເປັນຈັ່ງບຸນ, ວະລາດີເມຍ ອີລີຊ ໄດ້ລົ້ມໃສ່ກອງຫີນະຫນາໆ, ຢູ່ຕາມໃບຫນ້າຄໍເສື້ອ
ແລະເກີບບິດເຕັມໄປດ້ວຍຫີນະ. ແຕ່ກະດູກຍັງຄົງຢູ່ໃນສະພາບປົກກະຕິເຫມືອນເດີມ. ເພິ່ນ
ຍັງສົມບູນດີ, ແລະຍັງມີຊີວິດຢູ່! ຂະບວນລົດໄຟ ຍັງສືບຕໍ່ແລ່ນຜ່ານທົ່ງຫີນະ ຟັງສຽງດັງຄຶກ
ຄັກໆຢູ່. ໄຟສັນຍານສີແດງຢູ່ຕູ້ສຸດທ້າຍ, ຮ່ຳມາບຂຶ້ນບາດຫນ້ຳ ແລ້ວຫາຍລັບໄປ. ຈາກນັ້ນ
ສຽງທີ່ດັງຢູ່ໄກໆພຸ້ນ ກໍມິດງຽບລົງ. ຢູ່ອ້ອມໆຂ້າງ ມີແຕ່ຄວາມງຽບສະຫງັດ ແລະ ມັນແມ່ນ
ຍາມຄ່ຳຄືນທີ່ມີ ຫມູ່ດວງດາວເກາະຫ້ອຍຢູ່ເຕັມທ້ອງຟ້າ.

ວະລາດີເມຍ ອີລີຊ ຍ່າງອອກຈາກກອງ ຫີນະດັ່ງກ່າວ, ທັງປັດເຊັດຫີນະອອກຈາກຕົນ
ຕົວ. ຈາກນັ້ນ ກໍຍ່າງເລາະໄປຕາມຂອກທາງລົດໄຟ ເພື່ອມຸ້ງຫນ້າເມືອທາງ ອາໂບ ພຸ້ນ.
ຈັກຍັງຕ້ອງໄດ້ຍ່າງໄປໄກປານໃດອີກ? ຄົງໃນລາວ ສິບສອງແວກພຸ້ນ, ເສັ້ນທາງດັ່ງກ່າວເປັນ
ເສັ້ນທາງທີ່ ເພິ່ນບໍ່ເຄີຍທ່ອງມາກ່ອນທັງເປັນຍາມກາງຄືນຂອງລະດູຫນາວອີກຊ້ຳ. ແຕ່ເກົ່ງ

ຈັ່ງໃດ ເພິ່ນກໍໄດ້ລອດພົ້ນຈາກເງື້ອມມືຂອງພວກສາລະວັດແລ້ວ. ສ່ວນຫມໍນັກສຶບຜູ້ນັ້ນເດ້ ຈັກຈະເປັນຈັ່ງໃດ? ອະລາດິເມຍ ອີລີຊ ຄິດວ່າຄົງພາບ ເບິ່ງຫມໍນັກສຶບຜູ້ນັ້ນວ່າ ຄົງຈະແລ່ນ ຊອກເພິ່ນຢູ່ທົ່ວທຸກຕູ້ ດ້ວຍຄວາມກະວົນກະວາຍ. ເພິ່ນຫົວຍຸ້ມເປັ້ຽຂຶ້ນບາດຫນ່ຶງ: "ຊວຍ ເສຍແລ້ວ, ເພື່ອນເອີ, ເຂົາອາດຈະຮ້າຍໃຫ້ເພື່ອນດ້ວຍຄວາມໂມໂຫຄັກໆແລ້ວ!"



ດວງຈັນມີແຕ່ຕ້ອງຍ່າງໄປໃຫ້ເຖິງ ອາໂບຕາມເສັ້ນທາງລົດໄຟນ້ີເທົ່ານັ້ນ, ຈາກນັ້ນ ຈຶ່ງໄປ ລົງເຮືອກໍ່ປັ່ນ ໄປຊູແອດ, ແລ້ວໄພອັນຕະລາຍທຸກຢ່າງກໍຈະຜ່ານພົ້ນໄປ.

ແຕ່ ອະລາດິເມຍ ອີລີຊ ໄປບໍ່ທັນເຮືອ. ບາດນ້ີ ກໍຫມາຍຄວາມວ່າ ໄພອັນຕະລາຍອ້ອມ ຂ້າງນັ້ນ ພັດຍັງບໍ່ທັນໄດ້ຜ່ານພົ້ນໄປເທ່ືອ. ຢູ່ເທິງທ່າເຮືອເຕັມໄປດ້ວຍພວກສາລະວັດທະ ຫານ. ພວກນັກສຶບລັດເຊຍຢ່າງໄປມາລຸດໆລ້ຽໆຈົນບໍ່ອາດທ່ີຈະປໍລຫນ້າເຂົ້າໄປຍັງທ່ີແຫ່ງ ນັ້ນໄດ້. ສາລະວັດທະຫານ ໄດ້ອອກເຄ່ືອນໄຫວຢູ່ເຕັມເມືອງ. ສະຫາຍຄົນແຟ້ງລັ້ງຜູ້ຫນ່ຶງ

ເວົ້າສູ່ຟັງແນວນັ້ນ. ສູນກາງຂອງພວກ ໂບນເຊວິກ ໄດ້ມອບຫມາຍຫນ້າທີ່ໃຫ້ສະຫາຍດ່ຽກ່າວ ເປັນຜູ້ພາ ອະລາດີເມຍ ອີລີຊ ຂ້າມແຕ່ ອາໂບໄປຈົນເຖິງ ສະໂຕກໂຮມ ໃຫ້ໄດ້.

ຕ້ອງອອກຈາກ ອາໂບ ເມືອງຕ່າງດ້າວທ້າວຕ່າງແດນແຫ່ງນີ້ໄປໄວທີ່ສຸດ! ນີ້ ຄືສິ່ງທີ່ຕ້ອງເຮັດ.

ສະຫາຍຄົນແຟງລັງໄດ້ພາ ອະລາດີເມຍ ອີລີຊ ໄປຍັງຄຸ້ມຂອງຊາວປະມົງແຫ່ງຫນຶ່ງ ຕັ້ງຢູ່ແຄມທະເລ ທີ່ມີກ້ອນຫີນໃຫຍ່ນ້ອຍຢາຍກັນຢູ່ຢ່າງຊະຊາຍ. ຢູ່ແຫ່ງນີ້ມີດອນ ເປັນຈໍານວນຮ້ອຍໆແຫ່ງ. ແຜ່ນນ້ໍາກ້ອນ ໄດ້ຢັ່ງຍາຍລົງໄປຮອດກາງອ້າງທະເລພຸ້ນ ກືກປົກຄຸມດ້ວຍຫີມະ. ທ້ານີ ກໍຍ້ອນວ່າພວມຢູ່ໃນລະຫວ່າງກາງລະດູຫນາວເດືອນສິບສອງ.

ຊາວປະມົງສອງຄົນ ໄດ້ຕົກລົງພາ ອະລາດີເມຍ ອີລີຊ ໄປສົ່ງຍັງດອນນ້ອຍແຫ່ງຫນຶ່ງ ຊຶ່ງບັນດາເຮືອກໍ່ປັ່ນຂອງປະເທດຊູແອດ ມັກມາຈອດຢູ່ ແຫ່ງນັ້ນເປັນປະຈໍາ. ເຮືອທຸກລໍາ ຕ້ອງໄດ້ທໍາລາຍຫນ້ານ້ໍາທີ່ເປັນນ້ໍາກ້ອນນັ້ນໃຫ້ເປັນຊ່ອງຫວ່າງ ເພື່ອໃຫ້ເຮືອແລ່ນຜ່ານໄປ. ຢູ່ຂ້າງຊ່ອງຫວ່າງດັ່ງກ່າວ ມີດອນແຫ່ງຫນຶ່ງ ຊຶ່ງເປັນບ່ອນທີ່ນັກຫາປາທ້າງສອງພາ ອະລາດີເມຍ ອີລີຊ ໄປນັ້ນ.

ໃນຍາມຄໍ່າຄືນ ທີ່ມືດມົວສະຫລົວຕາ, ຊໍ້າບໍ່ຫນໍາຍັງມີຫີມະຕົກຢູ່ບໍ່ຂາດສາຍນີ້. ພວກເຂົາໄດ້ພາກັນອອກເດີນທາງໄປ ກໍເພື່ອບໍ່ໃຫ້ມີຜູ້ຮູ້ເຫັນນໍາ. ໃຜໆຕ່າງກໍຮູ້ສຶກແປກໃຈ: ບໍ່ເຂົ້າໃຈໄດ້ວ່າພວກນີ້ ພາກັນຍ່າງໄປຕາມຫນ້ານ້ໍາກ້ານທີ່ບໍ່ຄົງທົນເພື່ອຫຍັງ ແລະ ໄປທາງໃດ? ແຜ່ນນ້ໍາກ້ານ ທີ່ຢູ່ຫນ້ານ້ໍາທະເລນັ້ນເຊື່ອໃຈບໍ່ໄດ້ຊໍ້າບາງບ່ອນ ກໍແຕກເປັນຄອງ ບາງບ່ອນ ກໍຫລຸບລົງເລິກເກືອບຊົ່ວຫລັງຄາເຮືອນຫລັງຫນຶ່ງພຸ້ນ. ຊາວປະມົງທ້າງສອງຕ່າງກໍຮູ້ວ່າ, ຄົນລັດເຊຍທີ່ຕົນພາມາສົ່ງຂຶ້ນເຮືອກໍ່ປັ່ນນີ້, ເປັນຜູ້ທີ່ຕໍ່ສູ້ຕ້ານກັບກະສັດລັດເຊຍ. ປະຊາຊົນຊາວ ແຟງລັງ ມີຄວາມຄຽດແຄ້ນໃຫ້ແກ່ກະສັດລັດເຊຍຫລາຍທີ່ສຸດເຊັ່ນກັນ. ດັ່ງນັ້ນ ເມື່ອມີຄົນລັດເຊຍຕ້ານກັບກະສັດລັດເຊຍແລ້ວ, ພວກເຂົາ ຈຶ່ງໄດ້ເຮັດທຸກວິທີທາງ ເພື່ອສ້າງເງື່ອນໄຂອັນຈໍາເປັນໃຫ້ແກ່ເຂົາຜູ້ນັ້ນ.

ພວກເຂົາໄດ້ເດີນທາງໄປຢ່າງມິດໆ, ໂດຍໄດ້ໃຊ້ແຕ່ໄມ້ທໍ່ຍາວໆຢັ່ງໄປຕາມເສັ້ນທາງທີ່ຈະ

ໄປນັ້ນ, ທ້າຍ່ຳລາເບິ່ງແຕ່ລະບາດກ້າວເດິນໄປນຳ. ເມັດຫີມະ ອັນເຢັນກະດ້າງ ໄດ້ປົວມາປະ ທະໃສ່ກັບໂນນແກ້ມ, ທ້ອງຟ້າມືດມົນປານກຳຕາ, ກະແສລົມຫນາວກໍ່ຍິ່ງພັດແຮງຂຶ້ນ, ເຮັດ ໃຫ້ ເມັດຫີມະປົວເປັນສາຍ. ສຽງໂຫວດຂອງເຮືອກ່ຳປັ່ນໃຫຍ່ ໄດ້ສົ່ງສຽງກ້ອງເຂົ້າມາ ແຕ່ ທາງທະເລພຸ້ນ. ຢູ່ແຫ່ງນັ້ນມີເຮືອກ່ຳປັ່ນ ທີ່ພວມແລ່ນຜ່ານພະຍຸຫີມະ ໃນທ່າມກາງຄວາມ ມືດມົວ.

"ຂໍຂອບໃຈນຳລຸງທ້າງສອງຫລາຍໆ. ໃນຍາມຄ່ຳຄືນທີ່ມີອາກາດບໍ່ດີແນວນີ້ ລຸງກໍ່ຍັງ ຂານອາສາມາສົ່ງຂ້ອຍ. -ອະລາດີເມຍ ອີລີຊ ຄິດຢູ່ໃນໃຈ. -ຂອບໃຈພວກສະຫາຍ".

ອະລາດີເມຍ ອີລີຊ ຍັງບໍ່ຮູ້ດອກວ່າ ການເດີນທາງເທິງນ້ຳກ້ອນໃນຄ່ຳຄືນທີ່ມີ ອາກາດ ບໍ່ດີ ຄືແນວນີ້ ແມ່ນກັນດານສ່ຽງໄພທີ່ສຸດ. ເພິ່ນໄດ້ຈັບເອົາໄມ້ສ້າວຢັ່ງໄປ ນຳທາງເດີນ, ພະຍາຍາມເຮັດຈັ່ງໃດ ເພື່ອບໍ່ໃຫ້ຫລົງກັບຄືນຫາປາສອງຄືນທີ່ຍ່າງອອກຫນ້າ. ທັນໃດນັ້ນ... ກ້ອນຫີມະ ກໍເລີ່ມເຈື່ອນ, ຟ້າສຽງມັນຫຼັ່ນດັງກອກແກກ, ຄວກຄ້ຽງກໍ່ສຽງສາກປືນ. ແຜ່ນ ນ້ຳທີ່ປາຍຕີນຂອງເພິ່ນໄດ້ເລີ່ມແຕກອອກເປັນປ່ຽງແລ້ວ ນ້ຳທີ່ຢູ່ຕາມຮ່ອງບ່ອນແຕກເຫີບ ນັ້ນກໍໄດ້ໄຫລໄປຢ່າງແຮງ. ອະລາດີເມຍ ອີລີຊ ໄດ້ຢັ່ງໄມ້ສ້າວລົງຈົນສຸດແຕ່ບໍ່ສາມາດແຕະ ພື້ນໄດ້.

ອະລາດີເມຍ ອີລີຊ ຈຶ່ບໍ່ໄດ້ຄັກວ່າ ເພິ່ນລອດຊີວິດມາໄດ້ແນວໃດ. ເພິ່ນຈື່ແຕ່ພຽງວ່າ ມີ ໃຜຜູ້ຫນຶ່ງເດ໋ມາໃຫ້ຈັບ ແລ້ວເພິ່ນກໍພ້າວໂດດໄປທາງຫນ້າທັນທີ.

ຊາວປະມົງສອງຄົນ ໄດ້ເອົາມືຕົບບ່າເພິ່ນຄ່ອຍໆ, ພ້ອມທັງເວົ້າເປັນພາສາ ແຟ້ງລັ ແລະ ພາສາ ເຢຍລະມັນ:

-ເກໂນເສະ, ເກໂນເສະ...*

ພວກເຂົາຕ່າງກໍມີຄວາມມ່ວນຊື່ນ. ພວກເຂົາມີຄວາມມ່ວນຊື່ນ ກໍເພາະວ່າສະຫາຍລັດ ເຊຍ ຜູ້ທີ່ທຳການຕໍ່ສູ້ຕ້ານກັບກະສັດລັດເຊຍ, ຕໍ່ສູ້ເພື່ອປະຊາຊົນ, ບໍ່ໄດ້ຖືກຈົມລົງໃນພື້ນ ນ້ຳກ້ອນ!

---

*ເກໂນເສະ: ສະຫາຍ.

ອະລາດີເມຍ ອີລີຊ ໄດ້ໄປເກີ່ງດອນນ້ອຍແຫ່ງນັ້ນແລ້ວ, ເຮືອກໍ່ຫໍ່ປັ່ນຂອງ ຊູແອດ ກໍ ໄດ້ຮັບເອົາເພີ່ນໄປຈົນເກີ່ງ ສະໂຕກໂຮມ. ອະລາດີເມຍ ອີລີຊ ໄດ້ໄປລໍ້ຖ້ານາເດສະດາ ກ່ຽສະ ຕ່ງຕິນິບນາ ຢູ່ທີ່ນັ້ນ.

ຈາກນັ້ນ ພວກເຂົາເຈົ້າໄດ້ໄປຢູ່ ເຊີເນວ ອີກ. ກໍຫມາຍຄວາມວ່າ ໄດ້ຫລົບຫນີໄປຢູ່ ຕ່າງປະເທດອີກເທື່ອຫນຶ່ງ.

ໃນເດືອນສິບສອງປີນັ້ ຢູ່ທີ່ ເຊີເນວ ເປ່ງຄ້ຈ່ງວ່າບໍ່ມີຫຍັງເປັນທີ່ດ່ງດູດຈິດໃຈປານໃດ, ຕອນທີ່ ອະລາດີເມຍ ອີລີຊ ແລະ ເພື່ອນຜູ້ບໍລິສຸດ ຂອງເພີ່ນ ຄ ນາເດຍ ທີ່ຮັກ ໄດ້ພ້ກັນ ມາຢູ່ ພາຍຫລ້ງເຮັດການປະຕິວັດຢູ່ປະເທດລັດເຊຍນັ້ນ.

ຍາມນັ້ນ ແມ່ນຍາມລະດູຫນາວ, ແຕ່ບໍ່ມີຫິມະຕົກ ນອກຈາກມີແຕ່ລົມແຮງທີ່ພັດເອົາ ຂີ້ຝຸ່ນອັນເຍືອກເຍັນຢູ່ຕາມທາງຢ່າງເທົ່ານັ້ນ.

ປະຊາຊົນຊາວເມືອງ ເຊີເນວ ຕ່າງກໍພ້ກັນຫລົບລີ້ລົມຢູ່ຕາມບ້ານເຮືອນໃຜລາວ. ຢູ່ ຕາມຫົນທາງຂາດຄົນຫມ່ອທ່ອງໄປມາ. ການດໍາເນີນຊີວິດຢູ່ທີ່ເຊີເນວ ໃນຍາມນັ້ຮູ້ສຶກວ່າ ປ່ຽວພ່ຽຍ ຂາດບ່ອນ ເອ່ີ່ຍອີ່ງ.

ພົບກັນ ທີ່ ສະໂຕກໂຮມ

ໃນປີ ຄ.ສ.ຕ ນັ້ນ, ອະລາດີເມຍ ອີລີຊ ໄດ້ກັບຄືນໄປຢູ່ສະໂຕກໂຮມ ນະຄອນຫລວງ ຂອງ ປະເທດ ຊູແອດ ອີກ. ແຕ່ການໄປໃນເທື່ອນີ້ ແມ່ນໄປແບບພິເສດ, ພິເສດທີ່ສຸດ.

ເພີ່ນໄດ້ຍ່າງເລາະໄປຕາມກະຫນົນຂອງນະຄອນ ສະໂຕກໂຮມ ໃນຍາມລະດູໃບໄມ້ຫລົ່ນ, ດ້ວຍຄວາມມ່ວນຊື່ນ ແລະ ດ້ວຍຄວາມໂລ່ງອົກໂລ່ງໃຈ.

ເພີ່ນຈະໄປທາງໃດ? ເພີ່ນກໍາລັງຈະໄປລາຍງານຢູ່ທີ່ ສະໂມສອນປະຊາຊົນ. ເພີ່ນໄດ້ ໄປຍ້ງສະຖານທີ່ນັ້ນ ບໍ່ຕໍ່ກ່ວາອ້ອຍເທື່ອແລ້ວ, ຊ້ໍ ເພີ່ນເຄີຍໄດ້ໄປລາຍງານ ຕໍ່ຫນ້ານໍ້ ມະກອນ ແລະ ປະຊາຊົນ ຢູ່ຕາມຕິອເມ້ຽງຕ່າງໆນັ້ນມາແລ້ວ. ແຕ່ເປັນຫຍັງນ້ໍ ເພີ່ນ ຄ

ຈ້ຽວ່ານີ້ຄວາມອ່ອນຊຶ້ນເປັນພິເສດ? ເພິ່ນໄດ້ແນມເບິ່ງທຸກສິ່ງທຸກຢ່າງທີ່ ພົບເຫັນຢູ່ໃນປະ ເທດ ຊູແອດ ແຫ່ງນີ້ຢ່າງມີຊີວິດຊີວາ. ຊູແອດ ເປັນປະເທດຫນຶ່ງ ຊຶ່ງ ບໍ່ໃຫຍ່ປານໃດ, ແຕ່ມີຄວາມສະອາດຮຽບຮ້ອຍ, ເສັ້ນທາງລະອິດລະອ້ຽວ ແລະແຄບໆ. ທຸກສິ່ງທຸກຢ່າງຢູ່ຫນ້ີ, ລະລາດົເມຍ ອີລີຊ ໄດ້ລ້ຽງແກ່ນມາແຕ່ດົນແລ້ວ. ແຕ່ສັ້ງເຫລົ່ານັ້ນ ກັບໄດ້ເຮັດໃຫ້ ເພິ່ນ ຍ້ຶນຫ້ວອອກມາ.

ເພິ່ນແນມເຫັນຍິງສາວຜູ້ຫນຶ່ງກໍາລັງຂາຍດອກໄມ້. ພວງດອກກຸຫລາບທ່ົ່ມສີແດງແລະ ສີເຫລືອງວາງຢູ່ໃກ້ໆຍິງສາວຜູ້ນັ້ນ.

- ໃຫ້ຂ້ອຍຂໍຊື້ດອກໄມ້ກຸຫລາບແດງນ້ີແດ່! ຂອບໃຈ!

ລະລາດົເມຍ ອີລີຊ ໄດ້ກ້ືເອົາຊໍ່ດອກໄມ້, ໄປຍັງສະຖານທ່ີລາຍງານພັກນັ້ນນໍາ. ແຕ່ກ້ັ ນັ້ນແມ່ນສະໂມສອນປະຊາຊົນ. ນ້ັ, ທ່ີແຫ່ງນ້ີ, ໄດ້ກາຍເປັນບ່ອນເຕ້ົາໂຮມຂອງ ທ ງກ ໂບນເຊ ວ ກ ລັດເຊຍພັດກ່ືນ.

- ເລນິນ! ເລນິນ! - ມີສຽງຮ້ອງໂຮຕ້ອນຮັບ ລະລາດົເມຍ ອີລີຊ ດ້ວຍຄວາມຮັກແພ.

ຫມິດທຸກຄົນຕ່າງກໍແລ່ນມາຫຸ້ມລ້ອມ ເພິ່ນ ແລະຂໍສໍາພັດນ. ພວກເຂົາເຫລົ່ານັ້ນລ້ວນ ແຕ່ແມ່ນຊາວຜູ້ລ້ີໄພການເມືອງທ່ີມາຈາກປະເທດ ລັດເຊຍທັ້ງນັ້ນ. ຫມິດທຸກຄົນຕ່າງກໍຮູ້ ຈັກ ເລນິນ, ໂດຍຜ່ານທາງປ້ຶມອ່ານ ແລະ ຫນັງສ ພິມ. ໂດຍສະເພາະແມ່ນຫນັງສ ພິມໂບນ ເຊ ວ ກ ຊ່ຶງຕອນທໍາອິດນັ້ນໃສ່ຊ່ືວ່າ "ຫນັດໄຟ" ແລະຕ່ໍມາກໍແມ່ນ "ກໍາມະຊ ບ". ນອກນັ້ນ ພວກເຂົາຍັງຮູ້ຈັກ ເພິ່ນໂດຍຜ່ານທາງກອງປະຊຸມໃຫຍ່ຂອງພັກ.

ຢູ່ທາງໃນຫ້ອງນ້ອຍນັ້ນ ມີແມ່ຍິງສອງຄົນກໍາລັງນ່ັງລໍ້ຖ້າຢູ່. ຜູ້ຫນຶ່ງເປັນຍິງຊະລາ, ເພິ່ນ ນຸ່ງເສ ອຄຸມຍາວສີດໍາ ເທິງຜົມທ່ີຫງອກຂາວຄ ກັບຫິມະນັ້ນ ໄດ້ກ ກຄ ມໄວ້ດ້ວຍແພລູກໄມ້, ໃບຫນ້າຂອງເພິ່ນໄດ້ສະແດງໃຫ້ເຫັນເຖິງຄວາມອ່ອນຫວານແລະສຸພາບຮຽບຮ້ອຍ. ປະກົດ ວ່າໃບຫນ້າຂອງເພິ່ນສ ດຊຶ່ນຂ ນມາ ກັບບ່ອນໂລດ ເມ່ືອໄດ້ຍິນສຽງໂຮຮ້ອງຢ່າງເປັນສຽງດ ວ ກັນວ່າ:

- ເລນິນ!

ນ້ຳຄຽງຂ້າງກັບແມ່ເກົ້ານັ້ນ ແມ່ນຍິງສາວຜູ້ຫນຶ່ງ, ນາງມີຫນ່ວຍຕາສີດຳ, ມີໂນນແກ້ມ ສູງຫນ້ອຍຫນຶ່ງ ແລະ ມີທ່າທາງເຄັ່ງຂຶມ. ເມື່ອເຫັນ ເລນິນ ອອກມາປະກົດໂຕ ນາງກໍມີ ອາການມ່ວນຊື່ນຂຶ້ນມາຄືກັນ. ວະລາດີເມຍ ອີລີຊ ໄດ້ກ້າວເຂົ້າໄປຫາພວກເຂົາເຈົ້າ, ແລະ ມອບຊໍ່ດອກກຸຫລາບແດງໃສ່ຕັກຂອງແມ່ເກົ້າ.

-ແມ່ແລະນ້ອງສາວ ມາແຕ່ລັດເຊຍ ເພື່ອມາຢ້ຽມຢາມຂ້ອຍ, -ເພິ່ນກ່າວຊີ້ແຈງເພື່ອ ໃຫ້ທຸກຄົນທີ່ກຳລັງຫຸ້ມນັ້ນໄດ້ຮູ້ຈັກ.

-ຂອບໃຈນຳແມ່ທີ່ອຸດສາຫະຍາມ, -ນັກໂບນເຊວິກ ເວົ້າກັບຜູ້ເປັນແມ່. -ແມ່ຄວນ ພູມໃຈນຳລູກຊາຍຂອງແມ່. -ເລນິນ ຢືນຢູ່ທາງຫລັງຂອງໂຕະນ້ອຍ, ຊົ່ງໃຊ້ເປັນບ່ອນປາກະ ຄາກາ, ແລ້ວກໍເລີ່ມກ່າວລາຍງານ. ຄຳລາຍງານດັ່ງກ່າວມີລັກສະນະພິເສດ. ເທື່ອນີ້ ເປັນ ເທື່ອທຳອິດທີ່ແມ່ໄດ້ຟັງ ເລນິນ ກ່າວຄຳປາໄສ. ເພິ່ນພວມກຳລັງເວົ້າ ນຳບັນດາສະຫາຍ, ຜູ້ຊົ່ງແມ່ນ ພວກ ໂບນເຊວິກ. ເວົ້ານຳ ຜູ້ເປັນແມ່ ຊົ່ງປຽບສະເຫມືອນວ່າ ເປັນເພື່ອນຜູ້ ຫນຶ່ງຂອງພວກລູກໆ ແລະລູກຂອງແມ່ທຸກຄົນ ກໍລ້ວນແຕ່ ແມ່ນນັກປະຕິວັດ.

ໃນປີ ໑໙໐໕, ໃນຕອນທີ່ ວະລາດີເມຍ ອີລີຊ ກຸກຄຸກນັ້ນ, ແມ່ຍັງໄດ້ໄປຮອດເປແຕກ ສະບວກ. "ແມ່ເອີຍ, ລູກຍັງຈື່ໄດ້ດີ, ຕອນແມ່ແນມເບິ່ງລູກ ໂດຍຜ່ານທາງຕາຫນ່າງເຫລັກ ນັ້ນ ຮີມສົບທັງສອງເບື້ອງຂອງແມ່ນັ້ນສັ່ນເຊັນ, ແຕ່ແມ່ກໍ ຍິ້ມຫົວອອກມາ".

ໃນບົດລາຍງານດັ່ງກ່າວ, ວະລາດີເມຍ ອີລີຊ ໄດ້ເວົ້າກ່ຽວກັບສະພາບການ ຢູ່ພາຍໃນ ພັກ, ເວົ້າກ່ຽວກັບການຕໍ່ສູ້ຕ້ານກັບທຸກສິ່ງຢ່າງທີ່ເຫັນວ່າບໍ່ຖືກຕ້ອງເປັນທຳ.

ເຖິງວ່າການປະຕິວັດ ປີ ໑໙໐໕ ນັ້ນ ຈະປະລາໄຊ, ແຕ່ກໍບໍ່ເສຍກຳລັງໃຈ. ຕ້ອງກ້າວ ໄປຢ່າງອົງອາດກ້າຫານ! ພວກເຮົາມີພຽງເສັ້ນທາງດຽວເທົ່ານັ້ນ...

ວະລາດີເມຍ ອີລີຊ ໄດ້ເວົ້າເຖິງທິດທາງການຕໍ່ສູ້ແບບປະຕິວັດ.

ເມື່ອກ່າວລາຍງານຈົບລົງ, ທຸກຄົນໄດ້ຫຸ້ມເຂົ້າມາອ້ອມ ເລນິນ ອີກ. ດັ່ງນັ້ນວະລາດີ ເມຍ ອີລີຊ ຈຶ່ງອອກຈາກສະໂມສອນປະຊາຊົນໄປໄດ້ດ້ວຍຄວາມຫຍຸ້ງຍາກສົມຄວນ.

ຂະນະນັ້ນທ້ອງຟ້າ ໄດ້ມືດແລ້ວ. ແສງສະຫວ່າງເປັນສີເຫລືອງອ່ອນ ແລະສີຂມົວໆຂອງ

ເກົ້າຕະກ່ຳ, ໄດ້ພຸ່ງແສງເຍືອງອອກມາຈາກປ່ອງຢ້ຽມຂອງແຕ່ລະຫລັງຄາເຮືອນ. ລົມເຢັນ ໄດ້ໂຊຍພັດມາແຕ່ແຄມທ່າເຮືອ. ສຽງດົນຕີໄດ້ສົ່ງສຽງດັງ ມາຈາກບ່ອນໃດບ່ອນຫນຶ່ງ.

ແມ່ ແລະ ນາເນີອາຊາ ໄດ້ໄປລໍຖ້າ ອະລາດີເມຍ ອີລີຊ ຢູ່ນອກທາງພຸ້ນ.

-ແມ່ເອີຍ, ລູກດີໃຈຫລາຍທີ່ໄດ້ພົບແມ່ຢູ່ໃນທີ່ແຫ່ງນີ້! -ເລນິນກ່າວຂຶ້ນ.

ເພິ່ນຢາກຮູ້ວ່າ ຜູ້ເປັນແມ່ ມີຄວາມຄິດຢ່າງໃດກ່ຽວກັບການປະຊຸມໃນມື້ນີ້.

ອະລາດີເມຍ ອີລີຊ ຫວນຄິດເຖິງສະໄຫມຍັງເປັນເດັກນ້ອຍ ເມື່ອຄ່ຳວທີ່ມີຄວາມສຸກ ຮ່ວມກັບແມ່ຂອງຕົນ. ແມ່ຊື່ງຍາມໃດ ກໍທຸ່ນທ່ຽງສະຫງົບສະຫງ່ຽມ. ໃນຕະຫລອດຊີວິດ ຂອງ ອະລາດີເມຍ ອີລີຊ ບໍ່ມີຍາມໃດ ທີ່ເພິ່ນຈະບໍ່ເຫັນດີເຫັນພ້ອມນຳສິ່ງໃດສິ່ງຫນຶ່ງ ຊຶ່ງ ແມ່ໄດ້ເຮັດລົງໄປນັ້ນ.

-ໂອໂລເດຍ, ລູກຮັບ, -ແມ່ເວົ້າຕໍ່ ເລນິນ, -ແມ່ໄດ້ອ່ານປຶ້ມບົດລາຍງານຂອງລູກຕັ້ງ ຫລາຍຫົວ. ແມ່ຂໍຊົມເຊີຍໃນຄວາມມີສະຕິປັນຍາຂອງລູກ ແລະ ບັນຫາຕ່າງໆຊຶ່ງລູກໄດ້ຍົກ ຂຶ້ນມາເວົ້ານັ້ນ. ແຕ່ໃນມື້ນີ້ເອງ ແມ່ຍັງໄດ້ເຫັນຢ່າງຈະແຈ້ງແລະເຕັມຕາວ່າ ທຸກຄົນມີຄວາມ ຮັກແພງລູກຢ່າງຈິງໃຈຄືແນວໃດ.

ນາຣິອາ ອາເລັກຊັງໂດຣບວະນາ ແລະ ນາເນີອາຊາ ໄດ້ພັກຢູ່ ສະໂຕກໂຮມເປັນເວລາສິບ ວັນ. ອະລາດີເມຍ ອີລີຊ ໄດ້ມາແຕ່ ປາຣີ ເພື່ອມາພົບແມ່ແລະນ້ອງສາວ. ສິບວັນຜ່ານໄປ ຈັ່ງແມ່ນໄວເອົາແທ້ໆ!

ໃນຕອນເຊົ້າຂອງມື້ນັ້ນ, ເຮືອກຳປັ່ນ ໄດ້ເດີນທາງອອກຈາກ ສະໂຕກໂຮມ. ລະດູໃບໄມ້ ຫລົ່ນ ທີ່ວ່າງເວຫມິ່ນຫມອງໄດ້ຫມູນວນມາຮອດອີກແລ້ວ. ກ້ອນຂີ້ເຜື້ອສີດຳໄດ້ແຫ່ກັນ ມາປົກຄຸມຈົນມືດມົວທົ່ວທ້ອງຟ້າ. ລົມໂຊຍພັດມາ ເຮັດໃຫ້ໃບໄມ້ຫລົ່ນລົງ, ແລະພັດຜ່ານ ໄປຕາມຄື້ນຟອງນ້ອຍໆໃນອ່າວທະເລ. ຈຳພວກເຮືອຕ່າງກໍຈົມທ້ອງເຮືອລົງຕິດແທດກັບຫນ້ຳ ນ້ຳຢ່າງແຮງ. ທັງຄຶດເປັນຫ່ວງ, ທັງໂສກເສົ້າຫງ່ວນເຫງົາ.

ອະລາດີເມຍ ອີລີຊ ໄດ້ໂອບກອດຈູບຜູ້ເປັນແມ່.

ສອງແມ່ລູກຕ່າງກໍບໍ່ໄດ້ເວົ້າຫຍັງຫລາຍ. ອະລາດີເມຍ ອີລີຊ ຮູ້ສຶກຄ້າຍກັບວ່າຫົວໃຈ

ຂອງເພິ່ນຈະຈືກຂາດອອກເປັນຕ່ອນໆ ໃນຂະນະທີ່ແມ່ໂອບກອດຈູບເພິ່ນ ກ່ອນທີ່ຈະຂັ້ນ ເທິງຂັ້ນໄດເຮືອກໍ່ປັ່ນນັ້ນ. ແມ່ໄດ້ອວ່າຍຫນ້າຄືນມາພ້ອມທັງແກວ່ງແພນໍ້າຢູ່ຕະຫລອດ. ເຮືອກໍ່ປັ່ນດັ່ງກ່າວ ໄດ້ທຽບທ່າດິນພໍສົມຄວນ, ແຕ່ ອະລາດີເມຍ ອີລີຊ ກໍ່ບໍ່ສາມາດຂຶ້ນໄປ ເທິງເຮືອນັ້ນໄດ້. ເພາະຢູ່ເທິງເຮືອນັ້ນ ມັນແມ່ນດິນແດນຂອງລັດເຊຍ, ມັນຍັງຢູ່ໃຕ້ກົດຫມາຍ ຂອງລັດເຊຍຢູ່. ກ້າ ອະລາດີເມຍ ອີລີຊ ຫາກກ້າວຂຶ້ນໄປ, ກໍຫມາຍຄວາມວ່າ ຕ້ອງກົກຄຸບ ໂລດ. ແມ່ຍັງແກວ່ງແພຢູ່ວັບໆ.

ສຽງໂຫວດເຮືອ ດັງຂຶ້ນຊ້ໍາໆ ແລະດັງກ້ອງໄປທົ່ວອ່າວທະເລ. ຝູງຫມູ່ນົກນາງນວນ ໄດ້ ຮ້ອງຂຶ້ນຈົນລັກໄລ່ຫູ. ກໍ່ປັ່ນໄດ້ກອດສະຫນໍ່ອອກຈາກທ່າແລ້ວ.

-ລາກ່ອນແມ່ເອີຍ!

ຈາກນັ້ນ ເພິ່ນກໍ່ບໍ່ໄດ້ພົບຜູ້ເປັນແມ່ອີກເລີຍ...

ຫມູ່ບ້ານ ລີງຈຸຍໂມ

ທີ່ ປະເທດຜະລັ່ງເສດມີ ນັກປະຕິວັດພັດກີ່ນອາໃສຢູ່ເປັນຈໍານວນຫລາຍພັນຄົນ.ອະລາ ດີເມຍ ອີລີຊ ກໍໄດ້ມາຢູ່ແລະເຄື່ອນໄຫວຢູ່ທີ່ ປາຣີ ຄືກັນ. ແຕ່ພໍຮອດລະດູບານໃຫມ່ ປີ ຄ.ສ ເພິ່ນພ້ອມດ້ວຍ ນາເດສະດາ ກົງສະຕັງຕິນີບນາ ກໍໄດ້ພາກັນຍ້າຍມາຢູ່ທີ່ ຫມູ່ບ້ານ ລີງຈຸຍໂມ ແລະ ອາໃສຢູ່ແຫ່ງນັ້ນຈົນຕະຫລອດລະດູຮ້ອນ.

ບ້ານ ລີງຈຸຍໂມ ນີ້ ໄກຈາກ ປາຣີ ປະມານ ສິບຫ້າ ກິໂລແມັດເທົ່ານັ້ນ. ມີກະຫນິນ ຍາວເສັ້ນຫນຶ່ງຕັດຜ່ານ ຫມູ່ບ້ານດັ່ງກ່າວ. ຕະຫລອດສອງຕະຫລອດຄືນຢູ່ຕາມກະຫນິນໄດ້ ຍິນແຕ່ສຽງລໍ້ລົດມ້າ ລາກແກ່ດັງຄຶກຄັກໆ ຢູ່ບໍ່ຂາດ, ມັນແມ່ນສຽງລໍ້ຂອງພວກຊາວນາ ທີ່ ພາກັນແກ່ເອົາເຄື່ອງບໍລິໂພກ ອອກໄປຂາຍຢູ່ຕະຫລາດ ປາຣີນັ້ນ ເອງ.

ບັນດາຫລັງຄາເຮືອນ ທີ່ຫມູ່ບ້ານ ລີງຈຸຍໂມ ນັ້ນ ມຸງດ້ວຍດິນກະເບື້ອ ເປີເປື້ອນຍ້ອນ ໂບເຊ່ຄືອັນໃຫ ຂອງ ໂຮງງານເຮັດຫນັງນ້ອຍແຫ່ງຫນຶ່ງ. ຕົ້ນໄມ້ທຸກຕົ້ນ ກໍລ້ອນແຕ່ມຸມມືອ

ແລະ ຫ່ວມເຫງົ້າ ຍ້ອນກົກໂອບຊ່ຶຄ້ວນໄຟດັ່ງກ່າວ. ຄວາມຈິງແລ້ວຢູ່ອ້ອມແອ້ມບໍ່ເວັນ ແຫ່ງນັ້ນ ມີທ່ານາທີ່ຂຍວງາມ ອຸ່ມທຸ່ມ. ແຕ່ ອະລາດີເມຍ ອີລີຊ ແລະ ນາເດສະດາ ກົງສະ ຕ້ງຕິນິບນາ ມາຢູ່ແຫ່ງນີ້ ບໍ່ແມ່ນເພື່ອພັກຜ່ອນແຕ່ຢ່າງໃດ ກົງກັນຂ້ານ ພວກເພິ່ນມາເຮັດ ວຽກງານທ່ີສຳຄັນ.

ຕອນນັ້ນຍັງເຊົ້າຢູ່. ໄກ່ໄດ້ເລ່ີມຂັນຂ້ຶນຢ່າງນັ້ນເນ່ືອຢູ່ທ່ີກາງເດ່ີນບ້ານ. ອະລາດີເມຍ ອີ ລີຊ ຊວາດຕ່ືນນອນ. ພາຍໃນຫ້ອງປະກົດວ່າຍາມໃດ ກໍມ່ືດມ່ືວ ແລະຊຸ່ມອ່ືນບໍ່ວ່າຈະເປັນ ຍາມຄ່ຳຫລ່ືຍາມເຊ້ົາ ຂອງລະດູຮ້ອນທ່ີມ່ືແສງແດດ ຫລາຍຄ່ືນ້ັ. ຕອນນັ້ນ ເພ່ິນຮູ້ສ່ືກວ່າ ຕາເວັນຄ່ືຍັງຈະບໍ່ທັນຂ້ຶນ ເພາະເຫັນວ່າຢູ່ໃນຫ້ອງຍັງມ່ືດ້ົມຢູ່.

ໃນເວລານັ້ນ, ນາເດສະດາ ກົງສະຕ້ງຕິນິບນາ ກໍໄດ້ ຈັດແຈງແຕ່ງອາຫານເຊ້ົາ.

-ອ້າຍເອ່ືຍ, ອ້າຍນອນລ່ືມຕ່ືນຊ້ັນເບາະ? ຄຸນສົມບັດແບບນ້ີ້ສົມໄດ້ຄະແນນຫນ່ຶງເທ່ົາ ນ້ັນລະ!

ອະລາດີເມຍ ອີລີຊ ຟ້າວລຸກອອກຈາກຕ່ຽງຢ່າງວ່ອງໄວ ແລະ ຄ່ຶດວ່າຕົນສົມຄວນໄດ້ຄະ ແນນຄ່ືເນ່ອນ້ັນແທ້. ຕ້ອງລຸກໄວໆເພ່ືອຊ່ິດຊ່ອຍວຽກເຮ່ືອນການຊານ...

-ໂອຍ! -ທັນໃດນ້ັນ ນາເດສະດາ ກົງສະຕ້ງຕິນິບນາ ໄດ້ຮ້ອງຂ້ຶນ.

ເລ່ືນ ໄດ້ເຮັດເຕ້ົານ້ຳຕານຫລຸດ່ືມ ແລະ ໃນວ່ິນາທ່ີດຽວກັນນ້ັນ ເພ່ິນກໍສາມາດຄ້ວ້ໄວ້ ໄດ້ທັນ.

-ຄ່ືກັບນັກກາຍຍະລ່ືນບໍ?

-ໃຫ້ຄະແນນສາມ, -ນາເດສະດາ ກົງສະຕ້ງຕິນິບນາ ກ່າວຕອບ.

ລະດູຮ້ອນ ທ່ີ ຝະລ່ັງເສດ ປ່ັນຮ້ອນຈ່ືນຢູ່ຍາກ! ແຕ່ເຊ້ົາໆ ອາກາດເລ່ີມອ່ືບເອ້ົາ ປານ ຢູ່ໃນເຕົາອ່ືບ. ຫມາຂ່ືນຍາວ ຊ່ຶງລ້ຽງໄວ້ເຝ້ົາເຮ່ືອນ ໄດ້ອອກໄປນອນ ຢູ່ກ້ອງຮ່ົມໄມ້ຂ້ຽງຮ້ົວ ແຄມທາງພຸ້ນ. ມັນແລບລ້ົນຄາດລາດໆ ແລະທັນໃຈຫອບ...

-ຮ້ອນຕ່ືເບາະ ຫລ້ານ້ອ? -ອະລາດີເມຍ ອີລີຊ ເອ່ົາມ່ືຕ່ືບໆຫລັງຫ່ມາດ້ວຍຄວາມຮັກ ໄຄ່. -ສະບາຍດ່ີ ເມຍອີລີຊ ກາມສະບາຍນ້ຳລຸງຊ່ຳງເຮັດຫນ້ັງ.

ມື້ນັ້ນ ແມ່ນ ວັນອາທິດ ລຸງຊ່າງໄດ້ອອກມານັ່ງຢູ່ເຄມຮົ້ວ, ເອົາແຂນທີ່ມີແຕ່ເອັນພາດ ໃສ່ຫົວເຂົ່າ. ລຸງຜູ້ນີ້ ມີໃບຫນ້ານ້ອຍແລະຈ່ອຍ. ເບິ່ງຊິງລາວມີລັກສະນະເມື່ອຍອ່ອນ ແລະ ບໍ່ມີແຮງ.

ລົດມ້າທີ່ມີລໍຊ໊ຣອງພື້ນ ແລະ ຂັດມັນຢ່າງດີຄັນຫນຶ່ງ ໄດ້ແລ່ນຜ່ານໄປ, ໃນລົດຄັນນັ້ນ ມີແມ່ຍິງຜູ້ຫນຶ່ງ ກັ້ງຄັນຮົ່ມລຸກໄມ້ນ້ຳຄຳງໄປກັບພວກເດັກນ້ອຍ ທີ່ມີຮູບຮ່າງສະອາດສະອ້ານ ແລະ ນຸ່ງຖືຢ່າງຈີບງາມ ຊຶ່ງພວມຍອກໄຍກັນໄປນຳທາງ. ລຸງຜ້າວລຸກຂຶ້ນແລ້ວກົ້ມຫົວລົງກາມ ສະບາຍ. ແມ່ຍິງຜູ້ນັ້ນ ຕອບດ້ວຍວິທີ່ກົ້ມຫົວ.

- ເມຍຂອງເຈົ້າຂອງໂຮງງານໃດທັ້ນ, -ລຸງຊ່າງເຮັດຫນ້າງ່ວງຂຶ້ນດ້ວຍຄວາມເຄົາລົບ ນັບຖື.

- ຄົນພວກນີ້ ຍູທ່ານັ່ງຢູ່ນອນກິນ ຢ່າງສະຫນຸກສຸກສຳບາຍເນາະ! - ວະລາດີເມຍອີລີຊ ເວ້ົາຍອກເຍ້ຍຂຶ້ນ.

ລຸງຊ່າງບໍ່ປາກ ມີແຕ່ເອົາມືລູບຫນວດ ທີ່ຍ່ອນຕະຊະຢູ່ນັ້ນ ແລ້ວ ຈຶ່ງຕອບແບບຍອມຈຳ ນົນວ່າ:

- ພະຜູ້ເປັນເຈົ້າ ແຕ່ງເຂົາລົງມາເກີດແບບນັ້ນເດ. ເຂົາກໍຕ້ອງເປັນແບບນັ້ນລະບໍ!

ສຽງລະຄັງ ໄດ້ດັງກ້ອງຜ່ານມາຕາມເສັ້ນທາງ. ຫມາຍຄວາມວ່າປະຕູໂບດໄດ້ເປີດເພື່ອທຳ ພິທີ ໃນວັນອາທິດແລ້ວ. ລຸງໄດ້ສະແດງຄວາມເຄົາລົບພະເຈົ້າ ທັ້ງອ່ອາຍຫນ້າໄປທາງໂບດພຸ້ນ ສ່ວນທາງປາກກໍຈົ່ມພຸບພຶບໄປນຳ:

- ພະເຈົ້າເປັນຜູ້ສ້ົາງໂລກຂຶ້ນມາ. ເລື່ອງໃດພວກເຮົາຈະມີສິດວິພາກວິຈານຈັ່ງຊັ້ນໄດ້?

- ນ້ົາຊິເອີ! - ເດັກນ້ອຍຊາວຝະລັ່ງເສດ ຜູ້ທີ່ຢູ່ເຮືອນໃກ້ຄຽງກາມຂຶ້ນ, - ທ່ານຊິໄປໂຮງ ຮຽນຂອງທ່ານບໍ? ທ່ານສອນຮອດມື້ພັກນຳອີກເນາະ!

ໂຮງຮຽນຂອງ ເລນິນ ເປັນໂຮງຮຽນທີ່ຜິດປົກກະຕິ, ໂຮງຮຽນດັ່ງກ່າວ ຕ້ັ ຢູ່ສົ້ນບ້ານ ລົງຈຸຍໂມ ພຸ້ນ. ເບິ່ງທາງນອກ ແມ່ນບໍ່ຄືກັບໂຮງຮຽນ. ກ່ອນຫນ້ານ້ີ, ຢູ່ບ່ອນນ້ີ ເປັນເຮືອນ ພັກເຊົ່າ. ຢູ່ເດີ່ນທາງໃນພຸ້ນ ມີສາງເຄ່ືອງຫລັ້ງຫນຶ່ງກ້ວ້ າງພໍສົມຄວນ. ກ່ອນຈະເຂ້ົາໄປ ປາ

ຣິ, ບັນດາລິດ້ຳຂົມຄົນໂດຍສານ ໄດ້ມາຢຸດຢູ່ບ່ອນນັ້ນສະເຫມີ. ຄົນຂັບລິດ້ຳມັກເຂົ້ຳມາ
ພັກຜ່ອນ ແລະ ສູບຢາ, ຫລືເອົ້ຳຫຍ້ຳໃຫ້ມ້ຳກິນ. ແຕ່ເຫດກ້ຳນດັ່ງກ່ຳວນັ້ນ ມັນໄດ້ຜ່ຳນມ້ຳ
ຕັ້ງແຕ່ດົນນ້ຳນແລ້ວ...

ລະດູບ້ຳນໃຫມ່ຂອງປີ ໙໙໑ ນັ້ນ, ອະລ້ຳດິເມຍ ອີລີຊ ໄດ້ມ້ຳເຊົ່ຳສ້ຳງດັ່ງກ່ຳວເພື່ອ
ເຮັດເປັນໂຮງຮຽນ. ພວກນັກຮຽນໄດ້ພ້ຳກັນນ້ຽນນັດຢ່ຳງລະອ້ຳດຈັບດີແລະໄດ້ເອົ້ຳໄມ້ແປ້ນມ້ຳ
ເຮັດ ຕັ່ງນັ່ງໄດ້ສິບສ້ຳມບ່ອນ. ນອກນັ້ນ ກໍ່ຍັ້ມເອົ້ຳຕັ່ງອີ້ແລະຕັ່ງແປ້ນນ້ຳເກົ່ຳຂອງປະຊ້ຳຊົນຕົ້ມ
ແລ້ວກໍ່ເປີດຮ່ຳຮຽນ.

ນັກຮຽນດັ່ງກ່ຳວ ແມ່ນກ່ຳມະກອນລັດເຊຍ. ພວກເຂ້ຳໄດ້ພ້ຳກັນລັກລອບຫນີຈ້ຳກພວກ
ສ້ຳລະວັດທະຫ້ຳນຂອງກະສັດ ລັດເຊຍ, ຕ້ຳມຕ້ິອເມ້ຶອງຕ່ຳງໆຂອງລັດເຊຍ, ເພ່ື່ອມ້ຳຮ່ຳຮຽນ
ຢູ່ແຫ່ຳນ້ີ. ສ່ອນຄູສອນນັ້ນ ແມ່ນ ອະລ້ຳດິເມຍ ອີລີຊ ແລະ ນ້ຳເດສະດ້ຳ ກ້ຳສະຕ້ຳຕິນິບນ້ຳ
ແລະ ອ້ີກສະຫ້ຳຍຈ້ຳນວນຫນ່ຶ້ງ.

ເມ່ື່ອ ອະລ້ຳດິເມຍ ອີລີຊ ໄປຮອດໂຮງຮຽນນັ້ນ, ພວກນັກຮຽນກໍ່ໄດ້ພ້ຳກັນເຂ້ຳນ່ຶ້ງປະ

ຈຳທີ່ແລ້ວ. ພວກເຂົາພາກັນລຸກຂຶ້ນຄຳນັບ, ເມື່ອເຫັນຄູຍ່າງເຂົ້າຫ້ອງ. ແຕ່ມີສິ່ງຫນຶ່ງທີ່ເປັນຕາຢາກຫົວຄື: ຫມິດທຸກຄົນ ພາກັນບໍ່ໃສ່ເກີບຈັກຄົນ. ພວກເຂົາພາກັນຍ່າງຕີນເປົ່ານັ້ນ ກໍຍ້ອນວ່າ ອາກາດທີ່ ລີງຈຸຍໂມ ມັນຮ້ອນເອົ້າ ຈົນບໍ່ຮູ້ແນວຊິຢູ່.

ພວກເຂົາລ້ວນແຕ່ແມ່ນລາວຫນຸ່ມທີ່ມັກຮໍ່າຮຽນ, ຊອກຮູ້ ແລະມີຄວາມສາມາດ. ພວກເຂົາມັກບົດສອນຂອງ ອະລາດີເມຍ ອີລີຊ.

-ພະເຈົ້າໄດ້ສ້າງໃຫ້ມີຄົນຮັ່ງ ແລະ ຄົນທຸກ. ຫມາຍຄວາມວ່າມັນຕ້ອງເປັນໄປຕາມແນວນັ້ນ. -ມັ້ນ ອະລາດີເມຍ ອີລີຊ ເລີ່ມຕົ້ນສອນ ດ້ວຍຄຳເວົ້າດັ່ງກ່າວຢ່າງ ບໍ່ໄດ້ເຈາະຈົງ.

ຮອຍຍິ້ມແບບມີເລ່ຫລ່ຽມ ໄດ້ປະກົດຂຶ້ນເທິງຮີມສົບຂອງເພິ່ນ, ຕາທັງຄູ່ ກໍປະກົດວ່າມີຮອຍຍິ້ມອອກມານຳ. ທຸກຄົນຕ່າງກໍມິດຟັງດ້ວຍຄວາມປະຫລາດໃຈ.

-ຊ່າງເຮັດຫນັງລາວຜະລັ່ງເສດ ໄດ້ເວົ້າຄວາມນີ້ກັບເຮົາ. -ອະລາດີເມຍ ອີລີຊ ໄດ້ອະທິບາຍ ພາຍຫລັງທີ່ໄດ້ຍຸດໄປຄາວຫນຶ່ງ.

ນັກຮຽນເລີ່ມໂສເຫລ້ກັນຂຶ້ນ:

-ອາ! ແນວນັ້ນກໍມີເນາະ! ມັນແມ່ນຕັກກະວິພາກຂອງພວກທີ່ອ່ອນແອ, ຊິ່ງມັນບໍ່ແມ່ນຂອງພວກນັກຣົບຈັກດ໋ອ.

-ຄົນຜະລັ່ງເສດຂອງສະຫາຍລ້າຫລັງຫລາຍເນາະ, ອະລາດີເມຍ ອີລີຊ ເອີຍ! ຄວນນຳເອົາລາວມາໂຮງຮຽນຂອງພວກເຮົາ ລ້າງສະຫມອງໃຫ້.

ນັກຮຽນຜູ້ຫນຶ່ງ ຢືນຂຶ້ນເວົ້າວ່າ:

-ຂ້ອຍກໍແມ່ນຊ່າງເຮັດຫນັງ ຜູ້ຫນຶ່ງ, ແຕ່ຂ້ອຍຄິດວ່າກົດເກນຂອງພະຜູ້ເປັນເຈົ້ານັ້ນບໍ່ໄດ້ສອດຄ່ອງກັບພວກເຮົາ. ຄວນດັບສູນພວກທີ່ຮັ່ງມີ ແລະ ກໍ່ສ້າງສັງຄົມໃຫມ່ຂຶ້ນ.

-ຖືກຕ້ອງ, -ທຸກຄົນທີ່ຢູ່ອ້ອມຂ້າງພາກັນເວົ້າຂຶ້ນ. ຊົ່ວໂມງຮຽນ ໄດ້ຜັນແປໄປຢ່າງຟົດຟື້ນ. ແຕ່ ອະລາດີເມຍ ອີລີຊ ຮູ້ສຶກພໍໃຈທີ່ສຸດ.

-ຫມາຍຄວາມວ່າ ບໍ່ຈຳເປັນເດັດຂາດວ່າຈະຕ້ອງມີຄົນຮັ່ງ, ຄົນທຸກສະເຫມີໄປດອກ,

-ອະລາດີເມຍ ອີລີຊ ເສີມຕໍ່.

ຈາກນັ້ນ ເພິ່ນກໍຫັນໄປຫາບົດຮຽນເສດຖະສາດການເມືອງ, ເພິ່ນອະທິບາຍຢ່າງງ່າຍດາຍ ແລະ ຄ່ອງແຄ້ວທີ່ສຸດ. ມັນແມ່ນວິຊາຮຽນ ກ່ຽວກັບການຂະຫຍາຍຕົວຂອງການຜະລິດ ແລະ ສັງຄົມ. ອະລາດີເມຍ ອີລີຊ ໄດ້ສອນລັດທິມາກ ໃຫ້ແກ່ບັນດາກຳມະກອນ. ກຳມະກອນ ຕ້ອງມີຄວາມຮູ້, ຕ້ອງເປັນຄົນສະຫລາດ ແລະຮຽນຮູ້ໃຫ້ຫລາຍໆ, ແລະກ່ອນອື່ນໝົດກໍ ຕ້ອງໄດ້ຮູ້ຈັກການເມືອງນຳ.

ຍ້ອນຈັ່ງຊັ້ນແລ້ວຈະໃຫ້ຊ່າງເຮັດຫນັງຊາວຜະລັ່ງເສດຜູ້ຊ່ຳໄດ້ແຕ່ຈົ່ມພຶມພຳ: "ແຕ່ພະຜູ້ເປັນເຈົ້າ, ຈົ່ງໂຜດຜາຍກະລຸນາສົ່ງສານແດ່ທ້ອນ!" ແລະຜູ້ຊ່ຳບໍ່ສາມາດຮັບຮູ້ອັນໃດເລີຍນັ້ນ ມາຕໍ່ສູ້ເພື່ອການປະຕິວັດໄດ້ແນວໃດ? ແລະຢູ່ພາຍໃນປະເທດລັດເຊຍຂອງພວກເຮົາ ກໍມີກຳມະກອນ ທີ່ລ້າຫລັງຄືແນວນີ້ຢູ່ບໍ່ຫນ້ອຍຄືກັນ. ແຕ່ຄວາມລ້າຫລັງບໍ່ອາດຈະເປັນອຸບປະສັກ ໃຫ້ແກ່ການຕໍ່ສູ້ປະຕິວັດນັ້ນໄດ້ດອກ.

-ກຳມະກອນກໍຕ້ອງຮ່ຳຮຽນ! -ອະລາດີເມຍ ອີລີຊເວົ້າຂຶ້ນ. ຍ້ອນແນວນັ້ນແລ້ວເພິ່ນ ຈົ່ງໄດ້ຈັດຕັ້ງໃຫ້ມີໂຮງຮຽນພັກຂຶ້ນທີ່ ລີງຈຸຍໂມ ນັ້ນ. ບັນດານັກຮຽນໄດ້ຮ່ຳຮຽນຢູ່ທີ່ນັ້ນ ເປັນເວລາສີ່ເດືອນ ແລ້ວຈົ່ງກັບ. ຈາກນັ້ນພວກເຂົາ ກໍໄດ້ນຳເອົາຄວາມເຊື່ອຫມັ້ນປະຕິວັດ ແລະ ຄວາມຮູ້ຂອງຕົນ ເພື່ອສູ່ຊຸມຊົນກຳມະກອນລັດເຊຍ.

ສ່ວນຫມູ່ບ້ານ ລີງຈຸຍໂມ ຂອງຜະລັ່ງນັ້ນ ເປັນຫມູ່ບ້ານທຳມະດາຫນ່ຶງຄື ບໍ່ມີຄວາມສວຍງາມປານໃດ, ແຕ່ບັດນີ້ໄດ້ກາຍມາເປັນຫມູ່ບ້ານທີ່ມີຊື່ສຽງດັ່ງດັງກໍຍ້ອນວ່າຢູ່ແຫ່ງນັ້ນ ໄດ້ມີໂຮງຮຽນພັກແຫ່ງທຳອິດຂອງ ເລນິນ ເກີດຂຶ້ນ.

ຕ້ານສົງຄາມ

-ຟ້າເອີຍ, ເກືອບບໍ່ຢາກເຊື່ອວ່າ ພວກເຮົາໄດ້ຫລຸດພົ້ນຈາກໄພພິບັດອັນຫນ້າຫວາດສຽວນີ້ໄດ້ແລ້ວ!

ນາເດສະດາ ກົງສະຕັງຕິນົບນາ ໄດ້ແນມເບິ່ງ ອະລາດີເມຍ ອີລີຊ ຢ່າງເຕັມຕາ. ເພິ່ນ

ຍັງຢູ່ນີ້ ແລະກໍຢູ່ໃກ້ໆນາງນີ້ເອງ ບໍ່ແມ່ນຢູ່ໃນຄຸກ! ເພິ່ນຍັງມີຊີວິດຢູ່ ແລະບັ້ນແທ່ງໄພພິບັດ ໄດ້ຜ່ານກາຍໄປແລ້ວ.

-ຈົ່ງປະລະແນວຄິດອັນບໍ່ດີນັ້ນຖິ້ມສະ, ວະລາຕີເມຍ ອີລີຊຕອບ. -ນາເດຍ ເອີ້ຍ,

ແນມເບິ່ງເມືອງ ແບກເນ ໃນຍາມລະດູໃບໄມ້ຫລົ່ນນີ້ແມ!

ຂະນະນັ້ນ ພວກເຂົາເຈົ້າ ກຳລັງດຳລົງຊີວິດຢູ່ເມືອງ ແບກເນ, ນະຄອນຫຼວງຂອງປະ ເທດ ສະວິດ, ແລະຢູ່ໃນບັນຍາກາດແຫ່ງຄວາມມີເສລີພາບແຕ່ວ່າ ຫວ່າງມໍ່ໆນີ້ເອງ ວະລາ ຕີເມຍ ອີລີຊ ໄດ້ເຂົ້າໄປຢູ່ໃນຄອກເຫລັກພາຍໃນຄຸກ ແລະຫາກໍໄດ້ອອກມາ. ເລື່ອງເກີດຂຶ້ນ ຢູ່ ໂປໂຣນິນ. ໂປໂຣນິນ ແມ່ນເມືອງນ້ອຍແຫ່ງຫນຶ່ງຂອງໂປໂລຍ, ແຕ່ຄັນຊິເວົ້າໃຫ້ຖືກແທ້ ນັ້ນ ແມ່ນຕິວເມືອງນ້ອຍ ຊຶ່ງໃນເວລານັ້ນຂຶ້ນກັບສິດອຳນາດຂອງ ໂອຕຣິດ ຢູ່. ວັນທີ ๑ ເດືອນ ສິງຫາ ປີ ๑๙๑๔ ສົງຄາມໂລກໄດ້ລະເບີດຂຶ້ນ.

ພວກແມ່ຍິງລັດເຊຍ, ເຢຍລະມັນ, ຝະລັ່ງ, ອັງກິດ, ໂອຕຣິດ, ຮົງກາຣີ ເປັນຈຳນວນ ພັນໆຄົນ ຕ່າງກໍໂອບກອດ ລູກຜົວຮ້ອງໄຫ້ສະອຶກສະອື້ນ. ອາດຈະເວົ້າໄດ້ວ່າເປັນການໂອບ ກອດ ເທື່ອສຸດທ້າຍກໍເປັນໄດ້. ຂະບວນລົດໄຟຂອງປະເທດລັດເຊຍ ໄດ້ຂົນເອົາປືນຜາຫນ້າ ກະບອກ ແລະລາວ ມູຊິກ ມາຈາກແຕ່ລະແຂວງເຊັ່ນ: ຣີອາຊານ, ຕູລາ, ອີອາໂຣສະລັບ ເພື່ອ ໄປຍັງສະໜາມຣົບ.

ໃນຣົ່ມຕົ້ນສົງຄາມນັ້ນ ພວກສາລະວັດທະຫານ ໂອຕຣິດ ໄດ້ຈັບ ເລນິນ ຢູ່ໂປໂຣນິນ ນັ້ນໂລດ. ຄົນລັດເຊຍຜູ້ນີ້ ຍາມໃດກໍຂຍົນນັ້ນຂຍົນນີ້ ແລ້ວຈັດສົ່ງເພື່ອຍັງປະເທດລັດເຊຍ. ຫມາຍຄວາມວ່າເຂົາຕ້ອງເປັນນັກສືບ. ດ້ວຍຂໍ້ອ້າງອີງອັນນີ້ເບາະ? ຢູ່ແຫ່ງນີ້ບໍ່ຈຳເປັນຫາຂໍ້ ຢືນຢັນອ້າງອີງໃດໆ! ພວກສາລະວັດໄດ້ຕັດສິນວ່າເປັນນັກສືບກໍຕ້ອງແມ່ນນັກສືບໂລດ.

ໂທດຫນັກອັນຕະລາຍ ເຖິງຂັ້ນປະຫານຊີວິດ. ນາເດສະດາ ກົງສະຕັງຕິນິບນາ ໄດ້ຜ່ານ ຜ່າອຸບປະສັກ, ຄວາມຂົມຂື່ນ ບໍ່ຈັກວ່າເທົ່າໃດ! ຕະຫລອດສອງອາທິດ ນັ້ນຊີວິດຂອງ ອະ ລາດີເມຍ ອີລີຊ ພໍປານກັບວ່າ ຖືກແຂວນໄວ້ດ້ວຍເສັ້ນຜົມ. ແຕ່ບັນດາສະຫາຍທັ້ງຫລາຍ ໄດ້ຊອກຊ່ອງທາງເພື່ອຊ່ວຍເຫລືອເພິ່ນ. ພວກເຂົາໄດ້ອອກແຮງວ້ຳເຕັ້ນຮ້ອງຂໍ, ຕໍ່ສູ້ເພື່ອ ເລນິນ ແລະ ໄດ້ຊ່ວຍໃຫ້ ເລນິນ ຫລຸດພົ້ນ ອອກຈາກການຈັບກຸມຄຸມຂັງ.

ພວກເຂົາເຈົ້າໄດ້ອອກຈາກ ໂປໂຣນິນ ແລະມາຮອດ ແບກເນີ ນະຄອນຫລວງຂອງປະ ເທດ ສະວິດ ທີ່ເປັນກາງ ໃນມື້ວານນີ້ເອງ. ປະເທດ ສະວິດ ເປັນປະເທດທີ່ຖືນະໂຍບາຍ ເປັນກາງ. ຢູ່ແຫ່ງນີ້ການດຳລົງຊີວິດ ຂອງປະຊາຊົນໄດ້ດຳເນີນໄປຢ່າງເປັນປົກກະຕິດີ. ບັນ ດາພວກແມ່ ບໍ່ໄດ້ຮ້ອງໄຫ້ ແລະ ກໍບໍ່ໄດ້ມີຄວາມກັງວົນແຕ່ຢ່າງໃດ.

ພວກເຂົາເຈົ້າພາກັນປັ້ນເຊົ້າ ດ້ວຍຄວາມຟ້າວຟັ່ງ ແລະ ຫລັງຈາກນັ່ງນັ່ງກ້ວຍຊາມ ເປັນທີ່ຮຽບຮ້ອຍແລ້ວ ກໍອອກຈາກເຮືອນໄປ. ພວກເຂົາເຈົ້າອອກໄປຮອດກະທົບ, ເວລາ ນັ້ນ ຢູ່ຕາມໂບດຕ່າງໆ ພວມກຳລັງທຳພິທີບຸນຢູ່. ສຽງລະຄັງກ້ອງກັງວານໄປທົ່ວນະຄອນ ແບກເນີ. ອະລາດີເມຍ ອີລີຊ ແລະ ນາເດສະດາ ກົງສະຕັງຕິນິບນາ ໄດ້ອາໄສຢູ່ທີ່ກະທົບ ແຄບໆທາງນອກເມືອງ, ກະທົບນັ່ງກ່າວມີຊື່ວ່າ ດີສະແຕນແວກ, ຊຶ່ງມີຄວາມຫມາຍ

ວ່າ: ເສັ້ນທາງຂວາກຫນາມ. ຄວາມຈິງກໍແມ່ນກະຫນິນທີ່ບໍ່ມີຄົນຮັ່ງມີອາໃສຢູ່.

ອະລາດີເມຍ ອີລີຊ ແລະ ນາເດສະດາ ກົງສະຕັງຕິນິບນາ ໄດ້ພາກັນຍ່າງເລາະຕາມເສັ້ນທາງ ດີສະແຕນແວກ ໄດ້ປະມານສິບນາທີ ກໍພົ້ນເຂດຕົວເມືອງ. ຈາກນັ້ນໄປ ກໍແມ່ນປ່າໄມ້ທົ່ມສົ່ເຫລືອງເຮືອ, ສະຫງ່າງາມຕາເພາະຕອນນັ້ນກຳລັງຢູ່ໃນລະຫວ່າງ ເດືອນເກົ້າພົດ. ປ່າໄມ້ໄດ້ເກີດລາມຂຶ້ນໄປຮອດເທິງຈອມພູ ແລະຕິດຈອດໃສ່ກັບພູຫນ່ວຍອື່ນ ສູງຂຶ້ນເປັນຂັ້ນໆ ແລະບາງບ່ອນກໍເປັນເຫວເລິກ. ແລ້ວໃນທີ່ສຸດ ອະລາດີເມຍ ອີລີຊ ກໍຢຸດຢູ່.

-ບໍ່ແມ່ນຢູ່ບ່ອນນີ້ບໍ່ ນາເດຍ ເອີຍ? -ອະລາດີເມຍຮ້ອງຖາມ ໃນເມື່ອແນມເຫັນເຄື່ອງຫມາຍ ຊີ້ບອກທາງແວ່, ບາດແລ້ວພວກເຂົາເຈົ້າ ກໍໄດ້ພາກັນເຕັ້ນຂ້າມຜ່ານຮ່ອງແຫ່ງຫນຶ່ງໄປ. ພວກເຂົາເຈົ້າໄດ້ເລາะໄປອີກຄາວຫນຶ່ງພ້ອມທັງໄດ້ເອົາມື ຊາວໄປຕາມພຸ່ມໄມ້. ແລະຢູ່ກ້າຫນ້າພຸ້ນ ແມ່ນເຂດປ່າຫ່າງ. ມີຫລາຍຄົນໄດ້ນັ່ງຫລົ້ນ ຢູ່ແຫ່ງນັ້ນ, ພວກເຂົາເອົາເສື້ອໃຫຍ່ ຫລືເສື້ອກັນຝົນປູຮອງພື້ນ.

-ສະບາຍດີພວກສະຫາຍ! -ອະລາດີເມຍ ອີລີຊເວົ້າຂຶ້ນ.

ມີສຽງວ່າໄມ້ນ້ອຍຫັກດັງຄວກຄົງກຢູ່ທາງເບື້ອງຫລັງ ແລະວ່າໄມ້ແປກເອ່ນໄກວ່ໄປມາ ຈາກນັ້ນໃຜຜູ້ຫນຶ່ງ ກໍໂປໂລຫົວອອກ ແລະມີອີກຜູ້ຫນຶ່ງ ກໍປົ່ນໂຕນ້ອຍອອກມາຈາກປ່າຣົກໆນັ້ນ, ປົ່ນໂຕດັ່ງກ່າວ ຊາວນະຄອນ ແບກເນີ ມັກໃຊ້ບັນຈຸເຄື່ອງກິນຍາມເຊົ້າ ກໍຄືຕອນໄປຫລົ້ນໄປທ່ຽວຮ່ວມຫມູ່ຢູ່ນອກເມືອງນັ້ນເອງ.

ພາຍຫລັງທີ່ລົງຈາກເຮືອ ແລະ ໄດ້ມາຮອດ ແບກເນີ ແລ້ວ ອະລາດີເມຍ ອີລີຊ ໄດ້ສົ່ງຂ່າວໃຫ້ນັກ ໂບນເຊວິກ ລັດເຊຍພັດກຸ້ນຜູ້ຫນຶ່ງ ຊຶ່ງເປັນຜູ້ທີ່ເພິ່ນລົ້ເຄີຍນັ້ນຮູ້. ຄົນຜູ້ນັ້ນໄດ້ສົ່ງຂ່າວໃຫ້ຜູ້ອື່ນໆ ຮູ້ຕໍ່ ແລະພຽງແຕ່ໃນຕອນແລງດຽວທໍ່ນັ້ນ ຂ່າວກໍຖືກສົ່ງໄປຍັງທົ່ວທຸກບ່ອນ:

-ພວກສະຫາຍ, ມີອົ່ນເຊົ້າໃຫ້ພາກັນໄປເຕົ້າໂຮມຢູ່ປ່າ ແບກເນີ ເດີ.

ພວກ ໂບນເຊວິກ ໄດ້ພາກັນມາເຕົ້າໂຮມ ຕາມກຳນົດເວລາ ເພາะທຸກຄົນຕ່າງກໍຢາກຟັງເລນິນ ກ່າວຄຳປາໄສ.

-ສົງຄາມໄດ້ສ້າງເຄາະກຳ ແກ່ປະຊາຊົນລັດເຊຍ ແລະ ບັນດາປະຊາຊາດອື່ນໆແລ້ວ, -ອະລາດີເມຍ ອີລີຊ ໄດ້ກ່າວຄືແນວນັ້ນ. -ການເຮັດສົງຄາມດັ່ງກ່າວນັ້ນນັ້ນມີຜົນປະໂຫຍດແກ່ໃຜ? ຜົນປະໂຫຍດແກ່ພວກນາຍທຶນ. ພວກເຂົາເປັນຜູ້ກອບໂກຍ ເອົາເງິນຄຳ ຢູ່ໃນສົງຄາມເທື່ອນີ້. ພວກເຂົາຕ້ອງການຢາກຂະຫຍາຍຕະຫຼາດການຄ້າແຫ່ງໃຫມ່ ເພື່ອຈະໄດ້ຮັບຜົນປະໂຫຍດຫລາຍໆເພີ່ມຂຶ້ນອີກ. ພວກມັນໄດ້ຫຼອກລວງ ທະຫານ ແລະ ກຳມະກອນວ່າ: ຈົ່ງພິທັກຮັກສາປະເທດຊາດ. ຄວາມຈິງອັນນັ້ນ ມັນບໍ່ແມ່ນພິທັກຮັກສາປະເທດຊາດແຕ່ຢ່າງໃດ, ແມ່ນພິທັກຮັກສາຜົນປະໂຫຍດຂອງພວກນາຍທຶນ. ຕ້ອງໄດ້ອະທິບາຍໃຫ້ເຫລົ່າທະຫານ, ກຳມະກອນແລະຊາວໄຮ່ນາຮູ້ວ່າ ດຽວນີ້ ອາວຸດໄດ້ຢູ່ໃນກຳມືຂອງພວກເຂົາແລ້ວ. ພົນທະຫານແລະບັນດາຊາວກຳມາຊີບປະເທດຕ່າງໆຈົ່ງຈັບປືນອ່ວຍມາຕ້ານກັບພວກເຈົ້າຊີວິດ ພວກຊຸນນາງ ແລະ ພວກນາຍທຶນ ຢູ່ພາຍໃນປະເທດຕົນ. ຈົ່ງເຮັດການປະຕິວັດໂຄ່ນລົ້ມ ການເຮັດສົງຄາມທີ່ໄຮ້ເຫດຜົນ. ຕ້ານສົງຄາມ!

ຢູ່ໃນປ່າ ແບກເນ ນັ້ນ ເລນິນ ຍັງໄດ້ເວົ້າຫລາຍອັນຫລາຍແນວຕື່ມອີກ. ແລະຈາກນັ້ນເພື່ນກໍໄດ້ຂຽນບົດຂ່າວ ກ່ຽວກັບເລື່ອງນີ້ ແລ້ວສົ່ງໄປໃຫ້ພວກ ໂບນເຊວິກ ທີ່ປະເທດລັດເຊຍ. ບັນດານັກ ໂບນເຊວິກ ໄດ້ເຜີຍແຜ່ເອກກະສານດັ່ງກ່າວ ໃຫ້ແກ່ເຫລົ່າທະຫານແລະກຳມະກອນ ຢູ່ທາງດ້ານແນວຮົບ ຢ່າງປິດລັບ ຈົ່ງຕ້ານສົງຄາມ!

ສ່ວນອ້າຍນ້ອງທະຫານ ເມື່ອພາກັນອ່ານແລ້ວ ຕ່າງກໍເກີດມີແນວຄິດວ່າ: "ຊິ້ກ່າຫຍັງອີກ, ເປັນຫຍັງຈົ່ງບໍ່ອ່ວຍປືນເຂົ້າໃສ່ພວກເຈົ້າຂອງໂຮງຈັກໂຮງງານແລະພວກເຈົ້າທີ່ດິນນັ້ນ? ຕ້ອງໂຄ່ນລົ້ມກະສັດລັດເຊຍ ແລະ ເລີ່ມຕົ້ນດຳລົງຊີວິດຕາມແນວທາງໃຫມ່".

ຄືນສູ່ປະເທດຊາດຕະຫລອດການ

ຢູ່ ແບກເນ ເລນິນ ກໍໄດ້ຂຽນປຶ້ມຫົວຫນຶ່ງ ກ່ຽວກັບລັດທິ ຈັກກະພັດ. ເພື່ນໄດ້ຂຽນວ່າ ພວກນາຍທຶນນີ້ ບໍ່ອາດຈະຢູ່ ໂດຍປາສະຈາກການເຮັດສົງຄາມປຸ້ນຊິງ ນັ້ນໄດ້. ພວກມັນຊອກ

ยาดฉวยยึดเอาประเทดอื่น, ขันประเทดอื่นใช้มาเป็นอานานิคมของตัน; ยามใด กำล้าง ร่ำคูนมี ก้อยกานฆูดธึดผู้อื่น. เกิงเวลาแล้อ ที่พอกมัน จะต้องยุดยั้ง ความมุ้งหาัง ในกานยากเป็นเจ้าจอมโลก, ฉอกกืนกืนแต่ต่อนใหย่. สิงคามธุกธาน ย่ำบับม้บับ หลายข้น, ประฉาฉินต้องตีกยู่พายใต้แอกบีกคองของพวกจักกะพัด ก้อยความทุก ยากลำบากก่อาเก่าอีก. แต่พะลังแห่งความเข้มแอ็ง และ สะติบันยาของฉาอกำมะ กอนบั้นพัดบับม้บับเพิ่มข้นฉักใส้. ยุกสะไหมแห่งกานปะติอัด สังคิมนิยิม ได้หยับ เอ้ามาให้แล้อ*...

ต้องรงนรู้เกิงชีวิดกานเป็นยู่ และ ปะหอัดสาดหังหมิด, เพื่อจะนำมาฮงนข้น เป็นป็ม. ดั่งนั้น อะลาดิเมย อิลิช ต้องได้อ่านบื้มย่างหลางหลาย.

อะลาดิเมย อิลิช และ นาเดสะดา กิงสะดังตินิบน่า ได้พากันมารอดเมืองๆ ลุยธึก แล้อ. หัางสองคิดว่าจะยู่เมืองๆ ลุยธึก แต่สองอาทิดเท่านั้น, แต่ในที่สุด กำพำนักยู่ ที่นั่นจินรอดหน่ำปี, ย้อนองกางนั้นแล้อ ที่ได้แก่ดิง อะลาดิเมย อิลิช เอ้าไว้. เพาะ ยู่แห่างนั้น, มีหำสะหมุด ที่ อุดมสินบูน และ ดิอเมืองกำม่อนฉิ่นดิ, เพาะเป็นเมืองๆ ใหย่ที่ดีกดื่น, โดยสะเพาะกำแม่นมีโรงจักโรงางนและ กำมะกอนย่างหลางหลาย.

ตะหลอดม็ อะลาดิเมย อิลิช มีแต่เธ็ดอองกยู่ในหำสะหมุด. เพิ่นกับเมือกืนเข้า สอายยู่บ้านแล้อ กำกับมาเธ็ดอองกโลด.

ตามหางย่างแดนกะหนินไปสู่หำสะหมุดนั้น เอิาเจ้าได้ปูกต้นหมากกำ ลงบหาง. ตะหลอดหน่ำปีเต้มๆ และ มีหน่ำสี่ฮ้อ ที่ อะลาดิเมย อิลิช ได้ย่างเอาะลงบไปตาม ก้องต้นหมากกำ, ย่างผ่านอาคานของโรงกานเมืองที่มียอดแหลม, และผ่านโบด พ้อมหัางบันดาเธือนฉานที่เก่าแก่เหล่านั้น.

---

*ในปี ๑๙๑๗ ตอนยู่ประเทดสะอืดนั้น, อะลาดิเมย อิลิชได้ฮงนนิพิน "จักกะพัดนิยิม: ขั้นสุดยอด และอะอะสานของทืนนิยิม". ในบื้มเหล้มนี้เลนินได้อิจานย่างรอบด้านก่องกับกานละหายติอของละ บอบจักกะพัดนิยิมและได้พิสูดให้เห็นอ่ากานปะติอัดของฉินฉั้นกำมะกอนจะต้องได้รับไสยะนะ.



ຢູ່ໃກ້ໆທີ່ນັ້ນ ມີຫນອງ ຊຸຍຣົກ ທີ່ສວຍງາມ. ມີບາງຄັ້ງນ້ຳເປັນຟອງຢ່າງຮ້າຍແຮງ ແລະ ຕີ
ເຂົ້າໃສ່ຕາຝັ່ງດັງເຜື່ອໆ ຈົນບໍ່ກ້າເຂົ້າໄປໃກ້. ຍາມຫນ້ານ້ຳງົບສະຫງັດ, ຂຽວງາມ, ເສາະໃສ
ພາຍໃຕ້ແສງແດດນັ້ນ ແມ່ນມີຄວາມສວຍງາມສະດຸດຕາ ຈົນບໍ່ອາດທີ່ຈະອົດເບນເບິ່ງໄດ້!
ອະລາດີເນຍ ອີລີຊ ມີຄວາມພໍໃຈນຳ ຮູບພາບທຳມະຊາດຂອງປະເທດສະວິດນີ້ ເປັນຢ່າງຍິ່ງ.
ແຕ່ເທົ່າຢ່າງໃດ ເພິ່ນກໍຍັງຄິດຫາປະເທດຊາດດ້ວຍຄວາມເປັນຫ່ວງ. ແລະນັບມື້ກໍຍິ່ງຄິດເຖິງ
ປະເທດລັດເຊຍຢ່າງຈົດຈໍ່.

ມື້ຫນຶ່ງ ພາຍຫລັງກິນເຂົ້າງາຍແລ້ວ, ອະລາດີເນຍ ອີລີຊ ໄດ້ຈັດແຈ່ງເພື່ອຕຽມຕົວໄປທຳ
ສະຫນຸກເຫມືອນດັ່ງເຄີຍ. ຂະນະນັ້ນ ມີສຽງເຄາະປະຕູບາດຫນັກໆແລະແຮງສົມຄວນ.
ຄົນພັດກຸ້ນ ຜູ້ທີ່ລ້ຽງເຄີຍກັບເພິ່ນໄດ້ກ້າວເຂົ້າມາໃນເຮືອນ. ຄວາມຈິງບໍ່ແມ່ນກ້າວເຂົ້າ ແຕ່ນັ້ນ
ແມ່ນຜູກເຂົ້າມາ, ໃບຫນ້າເຕັມໄປດ້ວຍຄວາມຕື່ນເຕັ້ນແລະ ມ່ວນຊື່ນ:

-ສະຫາຍໄດ້ຍິນອີຫຍັງແລ້ວບໍ? ບໍ່ທັນໄດ້ຍິນຊັ້ນເບາະ? ການປະຕິວັດຢູ່ປະເທດລັດ
ເຊຍ!

ວະລາດີເມຍ ອີລີຊ ຄວາຈັບເອົາຫມວກມາໃສ່. ນາເດສະດາ ກົງສະຕັງຕິນບນາ ຈັບເອົາ ເສື້ອຄຸມໃຫຍ່ ທ້ຽ່ງທ້ຽນຸ່ງໄປນຳ. ພວກເຂົາເຈົ້າໄດ້ພາກັນໄປທີ່ແຄມຫນອງດ້ວຍຄວາມ ຟ້າວຟັ່ງ. ຫນ້ານ້ຳຫນອງເຫລື້ອມຍິບຍັບຄືກັບສີເງິນ ແລະເສາະໃສ ຢູ່ພາຍໃຕ້ແສງແດດ ເຫມືອນເດີມ. ຝູງນົກຫ້ຽທີ່ມີຂົນສີດຳງາມ ກຳລັງກົ່ງຄໍລອຍເລາະຫລົ້ນຕາມຫນ້ານ້ຳຫນອງ ຫນ້າອອນຊອນ.

ວະລາດີເມຍ ອີລີຊ ແລ່ນເຂົ້າໄປຫາຫໍ່ຂ່າວຢູ່ໃກ້ໆກັບແຄມຫນອງນັ້ນເພາະວ່າ ຢູ່ທີ່ຫໍ່ຂ່າວ ດັ່ງກ່າວຍາມໃດ ກໍມີຫນັງສືພິມໃຫມ່ໆ ມາຕິດໄວ້ສະເຫມີ.

ວະລາດີເມຍ ອີລີຊ ອ່ານບົດໂຫລະເລກ ທີ່ຕີພິມລົງໃນຫນ້າຫນັງສືພິມ ດ້ວຍຄວາມ ຫິວກະຫາຍ. ເດືອນກຸມພາ ປີ ໜເໜ, ຢູ່ປະເທດລັດເຊຍ ໄດ້ມີການປະຕິວັດເກີດຂຶ້ນ.

- ເກົ້າເວລາແລ້ວບາດນີ້! - ວະລາດີເມຍ ອີລີຊ ໄດ້ເວົ້າຂຶ້ນໃນທັນໃດ.

ຍາມໃດ ເພື່ນກໍໄດ້ສະຫນິດຕິດພັນຢູ່ແຕ່ນຳປະເທດ ລັດເຊຍ ແລະເປັນຜູ້ນຳພາໃນການ ຕໍ່ສູ້ປະຕິວັດ ທີ່ພວມຂະຫຍາຍຕົວຢູ່ນັ້ນ ແລະຮູ້ດີວ່າ ການປະຕິວັດໄດ້ຫຍັບໃກ້ເຂົ້າມາແລ້ວ. ແຕ່ແນວໃດກໍດີ ເມື່ອໄດ້ຮູ້ຂ່າວຄາວ ກ່ຽວກັບການປະຕິວັດພາຍໃນປະເທດນັ້ນ ມັນເຮັດໃຫ້ ເພື່ນ ມີຄວາມຮູ້ສຶກຕື້ນຕັນໃຈຂຶ້ນມາທັນທີ.

ບໍ່ຕ້ອງສົງໄສອັນໃດອີກແລ້ວ, ຢູ່ທ້ຽປະເທດຊາດ ກຳລັງມີເຫດການ ຍິ່ງໃຫຍ່ເກີດຂຶ້ນ. ຕ້ອງກັບຄືນປະເທດໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້, ບໍ່ຄວນຢູ່ແຫ່ງນີ້ຕໍ່ໄປອີກແລ້ວ. ຕ້ອງກັບ ຄືນສູ່ປະເທດຊາດໃຫ້ໄວທີ່ສຸດ! ຍ້ອນວ່າຕະຫລອດຊີວິດຂອງເພື່ນແມ່ນໄດ້ສະຫລະໃຫ້ແກ່ ສ່ິງທ່ີພວມເກີດຂຶ້ນຢູ່ນັ້ນ.

ແຕ່ຈະກັບເມືອດ້ວຍວິທີໃດ?

ວະລາດີເມຍ ອີລີຊ ຮູ້ສຶກຮ້ອນອົກຮ້ອນໃຈເຫລືອທີ່ສຸດ. ເພື່ນອົດຫລັບອົດນອນຈົນ ຈ່ອຍຜອມ.

ໃນທ່ີສຸດ, ພາຍຫລັງການຄົ້ນຄິດຢ່ຳງຫນັກ, ແລະເປັນເວລາຍືດເຍ້ືອຍາວນານນັ້ນບັນດາ ສະຫາຍຊາວ ສະວິດ ໄດ້ວົນໄປວົນມາຕັ້ງຫລາຍຫລົບຫລາຍຕ່ອ ກໍຈ່ຳສາມາດ ຂໍຫນັງສື

ເດີນທາງໃຫ້ແກ່ ຄົນລັດເຊຍພັດກຶ່ນ ໄດ້ກັບຄືນສູ່ປະເທດ.

ຍັງອີກສອງຊົ່ວໂມງ ຂະບວນລົດໄຟ ຈະອອກເດີນທາງແລ້ວ, ວະລາດີເມຍ ອີລີຊ ບໍ່ປາ ກະຫນາ ທີ່ຈະຢູ່ຕ່າງປະເທດອີກຕໍ່ໄປແມ້ແຕ່ນາທີດຽວ. ຖ້າວ່າຈະກະກຽມພາຍໃນສອງຊົ່ວໂມງ ນີ້? ບໍ່ຈັກວ່າຕ້ອງຈັດແຈ່ງເຄື່ອງຂອງ, ໄປສົ່ງປຶ້ມຢູ່ຫໍສະຫມຸດ, ສໍາລະສະສາງນໍາເຈົ້າຂອງຂອງ ແຕ່ລະບ່ອນອີກເດ? ພວກເຂົາເຈົ້າຕ້ອງໄດ້ຈັດການຢ່າງວ່ອງໄວຈຶ່ງທັນການ. ສອງຊົ່ວໂມງຕໍ່ມາ ພວກເຂົາເຈົ້າກໍໄດ້ອອກຈາກ ຊຸຍຣິກ ເພື່ອໄປຍັງນະຄອນ ແບກເນ ແລ້ວອອກຈາກນະຄອນ ແບກເນ ເພື່ອເດີນທາງໄປຍັງປະເທດ. ນີຊາລັດເຊຍພັດກຶ່ນຢູ່ຕ່າງປະເທດປະມານສາມສິບ ຄົນທີ່ໄດ້ເດີນທາງກັບປະເທດລັດເຊຍພ້ອມກັບ ເລນິນ ນັ້ນ.

"ຂອບໃຈໃນນ້ໍາໃຈອັນດີງາມທີ່ໄດ້ໃຫ້ຄວາມຊ່ວຍເຫລືອທຸກຢ່າງ!" - ເລນິນໄດ້ຂຽນຈົດ ຫມາຍສະບັບຫນຶ່ງເກົ່ງບັນດາສະຫາຍຊາວສະວິດ.

ຂະບວນລົດດັ່ງກ່າວສືບຕໍ່ແລ່ນໄປຢ່າງບໍ່ຢຸດຢັ້ງ. ກົງລົດກະທົບໃສ່ທາງເຫລັກຟັງເປັນ ສຽງດັງກຶກກັກໆ. ພາບຫນອງນ້ໍາທີ່ໃສເຫລື້ອມເປັນເງົາ ແລະ ບັນດາພູຜາສູງຊັນຂອງປະເທດ ສະວິດ ໄດ້ໄຫລຜ່ານໄປຈາກສາຍຕາ.

ຂະບວນລົດໄຟໄດ້ແລ່ນຜ່ານປະເທດ ເຢຍລະມັນ. ຮູບພາບຂອງທະເລບານຕິກ ຊົ່ງຄົ້ນ ຟອງຂອງມັນໄດ້ພັດເຂົ້າກະທົບແຄມຝັ່ງດັງເຜື່ອເຜື່ອ ນັ້ນກໍໄດ້ປະກົດຕົວຢູ່ຕໍ່ຫນ້າແລ້ວ. ຈາກ ນັ້ນ ພວກເຂົາເຈົ້າໄດ້ມາຮອດປະເທດ ຊູແອດ ໂດຍທາງກໍ່ປັ່ນ. ຈາກນັ້ນກໍຈຶ່ງໄດ້ມາເກົ່ງປະ ເທດແຟງລັງ. ບົນເສັ້ນທາງອັນຍາວຍຶດ ແລະ ເຕັມໄປດ້ວຍໄພອັນຕະລາຍນັ້ນ, ແຕ່ໃນທີ່ສຸດ ພວກເຂົາເຈົ້າກໍຈະໄປເກົ່ງນະຄອນ ເປໂຕຣກຣາດ.

ເມື່ອແນມຜ່ານປ່ອງຢ້ຽມ ກໍສາມາດແນມເຫັນປ່າແປກນ້ອຍແຫ່ງຫນຶ່ງປະກົດຢູ່ເບື້ອງ ຫນ້າ. ຫົມະ ທີ່ຍັງບໍ່ທັນເປື່ອຍຍັງຄົງເກາະຫ້ອຍຂາວກະຈ່າງຢູ່ໄປທົ່ວ. ຕາມດິນມີຂີ້ກ່ານໄຟ ດໍາ, ຂີ້ຕົມ ແລະມີເທົ່າເກີດຢູ່ທົ່ວໄປ, ບາງບ່ອນກໍກາຍເປັນ ບວກຫນອງທີ່ມີໄຄດໍາປົກ. ທ້ອງ ຟ້າໄດ້ເລີ່ມເຂົ້າສູ່ຍາມລາຕີແລ້ວ.

- ພວກເຮົາ ຈະໄປເກົ່ງ ເປໂຕຣກຣາດ ໃນຕອນກາງຄືນ, ພວກເຂົາເຈົ້າຄົງຈະພາກັນນອນ

ຫລັບຫມົດແລ້ວ, - ນາເດສະດາ ກົງສະດັງຕົນບນາ ເອ່ີຍຂຶ້ນ.

ພາຍໃຕ້ແສງສະຫວ່າງອັນແຈ້ງພໍຄິວນິວ ຂອງໂຄມໄຟເຍືອງທາງນັ້ນ ເຮັດໃຫ້ສາມາດ ແນມເຫັນອາຄານໃຫຍ່ທີ່ກໍ້ດ້ວຍຫີນ ແລະ ສາງເກັບມ້ຽນຫີ້ວລິດໄຟ. ເມ່ືອແລ່ນເຂົ້າມາໃກ້ ຈະຮອດສະຖານີລິດໄຟ ແຟ່ງລັງ ແລ້ວ ຂະບວນລິດໄຟກໍໄດ້ຜ່ອນຄວາມໄວລົງ. ສຽງໂຫວດ ໄດ້ດັງກ້ອງຂຶ້ນ ເພ່ືອທຳລາຍຄວາມງຽບສະຫງັດ ໃນຍາມກາງຄືນນັ້ນໃຫ້ສະຫລາຍໄປ. ຂະບວນ ລິດດັ່ງກ່າວ ໄດ້ຫຍັບເຂົ້າໃກ້ສະຖານີຊັກໄຊ. ສຽງຫ້ວລິດໄຟພົ່ນຄ້ວນດັງປຶ໋ດໆ...ແຕ່ແມ່ນ ຫຍັງອັນນັ້ນ? ມີສຽງດົນຕີ. ໃນເດ່ີນສະຖານີດັ່ງກ່າວ ໄດ້ມີຫມ່ວຍດົນຕີ ທ່ີກຳລັງເສບເພ້ງ "ມາກໄຊແຢ".

- ຍົກປືນຂຶ້ນຄຳນັບ! - ສຽງຮ້ອງໂຮດັງກ້ອງຂຶ້ນ.

ຢູ່ເດ່ີນສະຖານີລິດໄຟແຫ້ນອັດໄປດ້ວຍປະຊາຊົນ, ບັນດາກຳມະກອນ ແລະບັນດາ ຫມ່ວຍພີທັກແດງ, ບັນດາທະຫານເຮືອ ກຣິນສະດາດ ທ່ີຢືນລວມແກ່ວກັນຢ່າງແຫ້ນສະ ນິດຄ້າຍດັ່ງແຜ່ນທອງ.

- ຍົກປືນຂຶ້ນຄຳນັບ!

ທ່ົວບໍລິເວັນແຫ່ງນັ້ນມິດງຽບ. ບັນດາຫມ່ວຍພີທັກແດງ ແລະ ທະຫານເຮືອໄດ້ຍົກປືນ ຂຶ້ນຄຳນັບ.

ເລນິນ ກ້າວລົງຈາກປະຕູລິດໄຟ. ເພ່ິນຮູ້ສຶກຕ້ືນຕັນໃຈຫລາຍທ່ີສຸດ...

- ບັນດາສະຫາຍ!

- ເລນິນ ຫມັ້ນຍືນ! ໂຄ່ນລົ້ມສົງຄາມ! ການປະຕິວັດຫມັ້ນຍືນ! - ທັງຫມົດ ໄດ້ພ້ອມກັນ ຮ້ອງຂຶ້ນເປັນສຽງດຽວ.

ຢູ່ທາງເບ້ືອງນອກສະຖານີ ແລະ ຢູ່ ທ່ີສະຫນາມຫລວງພຸ້ນ ກໍມີຜູ້ຄົນເປັນຈຳນວນ ຫລາຍໆພັນຮ້ອງຂຶ້ນນຳ. ສະຫນາມຫລວງໄດ້ກາຍເປັນທະເລຄົນໄປເສ່ຍແລ້ວ.

ຜ້ືນທຸງສີແດງເຂ້ັມນັ້ນບໍ່ຕ່າງຫຍັງກັບແປວໄຟຊ່ຶງກຳລັງລຸກ. ຢູ່ໃກ້ໆສະຖານີລິດໄຟມີລິດ ຫຸ້ມເກາະຄັນຫນ່ຶງຈອດຢູ່. ກະບອກປືນ ທ່ີຕ້ັງຢູ່ເທ່ິງລິດຢຸດນ້ຶງບໍ່ເຫນ້ັງບໍ່ຕ່ິງ. ລິດຫຸ້ມເກາະ

ПРИВѢТ
СОВѢТАМ!

ດ່ງກ່າວ ກໍໄດ້ມາຕ້ອນຮັບຜູ້ນຳຂອງພັກ ແລະ ຊົນຊັ້ນກຳມະກອນເຊັ່ນກັນ. ບັນດາກຳມະກອນ ແລະ ເຫລົ່າທະຫານ ໄດ້ພາກັນອູ້ມເອົາ ເລນິນ ຂຶ້ນເທິງລົດຫຸ້ມເກາະ. ບັນດາລຳແຂນທີ່ເຕັມ ໄປດ້ວຍຄວາມຮັກແພງໄດ້ເດ່ມາທາງເພິ່ນ. ແວວຕາຂອງພວກເຂົາເຈົ້າ ເຕັມໄປດ້ວຍຄວາມ ອ່ອນຊຶ່ນ. ເລນິນ ຄຶດຢາກຈະໂອບກອດເອົາຊາວກຳມະກອນທີ່ຮັກແພງຜູ້ຊ່ຶງກ໋ືກສ໋ືງຄາມ ແລະສະພາບການອຸ້ນວາຍທີ່ເຮັດໃຫ້ເຂົາເຈົ້າຕ້ອງມີຄວາມອຶດເມ໋ືອຍທຸກໆຄົນນັ້ນແທ້ໆ.

-ບັນດາສະຫາຍ! -ເລນິນ ກ່າວຂຶ້ນ. -ພວກສະຫາຍໄດ້ເຮັດການປະຕິວັດແລ້ວ. ພວກ ສະຫາຍໄດ້ໂຄ່ນລົ້ມກະສັດລັດເຊຍແລ້ວ. ແຕ່ພວກຜູ້ກຳອຳນາດຍັງແມ່ນພວກນາຍທຶນ, ຊ່ຶງ ພວກນັ້ນຍັງຫວັງຄອບຄອງພວກເຮົາຢູ່. ພວກເຮົາຄວນສ້າງຕັ້ງອຳນາດຂອງປະຊາຊົນຜູ້ອອກ ແຮງງານຂຶ້ນ. ພວກເຮົາຄວນເຮັດວຽກນ໋ຶໜ໋ຶງແຕ່ແປດຊົ່ວໂມງ. ຊາວກະສິກອນຕ້ອງການ ດິນນາ, ບັນດາຜູ້ອຶດຫິວຕ້ອງການຢາກມີເຂົ້າກິນ. ປະຊາຊົນຕ້ອງການສັນຕິພາບ. ພວກເຮົາ ຫມົດທຸກຄົນຕ້ອງການໃຫ້ ມີການປະຕິວັດສັງຄົມນິຍົມ!

-ອູຣາ! ເລນິນຫນັ້ນຍ໋ືນ! -ທ່ົວສະຫນາມຫລວງນັ້ນເນ໋ືອງໄປດ້ວຍສຽງໂຮຮ້ອງ ຄ້າຍ ກັບວ່າບ່ໍແມ່ນຍາມຄ່ໍາຄືນ, ແຕ່ນັ້ນແມ່ນຍາມເຊ້ົາຂອງລະດູບານໃຫມ່ ທ່ີມ່ວນຊ່ຶນສ໋ືດໃສ.

ລົດຫຸ້ມເກາະ ໄດ້ເຄ່ືອນໄປດ້ວຍທ່າທາງສະຫງ່ຽມຄ່ຽມຄົມ. ເລນິນ ໄດ້ກັບຄ໋ືນສູ່ປະເທດ ຊາດຕະຫລອດການ.

ຄຸ້ມ ຣາສະຕັນນາຢາ

ວະລາດິເມຍ ອ໋ີລ໋ີຊ ຄ່ອຍໆຍ໋ໍຫົວຂ໋ຶນຈາກຫມອນ. ເພ່ິນແນມໄປຮອບໆແລ້ວ ກໍປ່ອຍ ຮອຍຍ໋ິ້ມອອກມາ. ຫ້ອງນອນ ຊ່ຶງເປັນຫ້ອງທຳມະດາ ແຕ່ສະອາດສະອ້ິນດ໋ີນ໋ີຝາທ່ີຕ໋ິດດ້ວຍ ແພ່ນເຈ້ຍ ລາຍດອກສວຍງາມ, ມ໋ີໂຕະຂນາດນ້ອຍໆຫນ່ວຍໜ໋ຶງ, ເທ໋ິງໂຕະມ໋ີຫນ້ັງສ໋ືພ໋ິມ ວາງຢູ່. ຢູ່ທາງແຈຫ້ອງມ໋ີຕ່ັງນອນ ທ່ີຫຸ້ມດ້ວຍແພໄຫມແສ່ວສ໋ີແດງເຂ້ັມຫນ່ວຍໜ໋ຶງ.

-ເຮົາກຳລັງຢູ່ໃສກັນເດເນ?ະ ບ່ໍແມ່ນເຮົານອນຝັນໄປບໍ?

ບໍ່ແມ່ນ, ອະລາດີເມຍ ອີລີຊ ບໍ່ໄດ້ນອນຝັນຈັກດີ. ຕອນນີ້ ເພິ່ນກຳລັງນອນພັກຢູ່ເຮືອນ ຂອງເອື້ອຍຄົງແລະ ອ້າຍເຂຍຕົນຕີ ອານນາ ອີລິດຈະນາ ແລະ ມາກເກີ ຕີໂມເຟອີວິກ ເອລີຊາ ຣິບ ທີ່ ເປໂຕຣກຣາດ ນັ້ນເອງ.

ເພິ່ນໄດ້ຫວນຄືນເຖິງເຫດການຂອງມື້ວານນີ້, ຊຶ່ງເປັນມື້ຫນຶ່ງທີ່ເຕັມໄປດ້ວຍຄວາມສຸກ ແລະ ໄດ້ມີການຕ້ອນຮັບຢ່າງແປກປະຫລາດຫລາຍໆຢ່າງ. ລິດຫຸ້ມເກາະ ໄດ້ນຳເອົາ ອະລາດີ ເມຍ ອີລີຊ ໄປສູ່ວັງ ເກົາເຊຊຶນສະກາຍຢາ, ຊຶ່ງກ່ອນຫນ້ານີ້ ເປັນບ່ອນຢູ່ຂອງນັກຟ້ອນ ບານເລ ຊຶ່ງເປັນຜູ້ທີ່ໃກ້ຊິດທີ່ສຸດກັບກະສັດລັດເຊຍ. ປັດຈຸບັນນີ້ໄດ້ກາຍມາເປັນ ສຳນັກຂອງຄະນະກຳ ມະການສູນກາງພັກ ແລະ ຄະນະກຳມະການປົກຄອງກຳແພງນະຄອນຂອງພັກ ໂບນເຊວິກ ແລ້ວ. ລິດຫຸ້ມເກາະ ໄດ້ເຄື່ອນໄປຕາມເສັ້ນທາງທີ່ຊິຕີ ແລະ ລາດຟຢ.

- ເລນິນ! - ທຸກຄົນຕ່າງກໍຮ້ອງເຊວ ໆຂຶ້ນ.

ລິດຫຸ້ມເກາະ ໄດ້ມາຢຸດຢູ່ຕໍ່ຫນ້າພວກເຂົາ. ອະລາດີເມຍ ອີລີຊ ໄດ້ກ່າວດ້ວຍຄຳເວົ້າທີ່ ງ່າຍໆ ແລະແຈ່ມແຈ້ງ, ກ່ຽວກັບການປະຕິວັດສັງຄົມນິຍົມ, ການປະຕິວັດຂອງພວກກຳມະ ກອນ. ຫມາກຫົວໃຈຂອງເພິ່ນປ່ຽມລົ້ນໄປດ້ວຍຄວາມອົບອຸ່ນທີ່ສຸດ.

ບັນດາຝູງຄົນກໍໄດ້ພາກັນມາຫຸ້ມລ້ອມຢູ່ຕາມວັງ ເກົາເຊຊຶນສະກາຍຢາ ທີ່ຕັ້ງຢູ່ໃກ້ໆກັບ ແມ່ນ້ຳ ເນວາ ແລະ ປ້ອມທີ່ຫັ້ນຂອງນະຄອນ ເປໂຕຣກຣາດ ນັ້ນຢ່າງຫລວງຫຼາຍ.

- ສະເຫນີໃຫ້ ເລນິນ ອອກມາປະກົດໂຕ. ສະເຫນີໃຫ້ ເລນິນ ກ່າວຄຳປາໄສ!

ວາລາດີເມຍ ອີລີຊ ໄດ້ອອກມາ ທີ່ ລະບຽງຕັ້ງຫລາຍໆເທື່ອ. ກ້າຫາກວ່າບໍ່ແມ່ນກາງຄືນ ແລະ ກ້າຍືນທີ່ລະບຽງແຫ່ງນີ້ ຈະສາມາດແນມເຫັນຮອດຫລັງຄາທີ່ ມີຍອດແຫລມເຄືອບຄຳ ຂອງປ້ອມທີ່ຫັ້ນ ເປໂຕຣປາດລິບ ແລະກຳແພງອັນແຫ້ນແກ່ນຊຶ່ງບໍ່ອາດຈະລ່ວງລ້ຳນັ້ນ ໄດ້. ບັນດາບຸກຄົນຜູ້ທີ່ດີເດັ່ນ, ຜູ້ມີສະຕິປັນຍາຫລາຍໆຄົນໄດ້ຖືກຂ້າຕາຍຢູ່ທີ່ນັ້ນ.

"ຢູ່ໃນຂຸມທີ່ລຸ່ມອຶນ ແລະ ເຢືອກເຢັນ ຄືກັບຢູ່ໃນຮູນ້ຳສ້າງແຫ່ງນັ້ນ! ພວກເຮົາບໍ່ໄດ້ຢ້ານ ກົວດອກ, ອັນປ້ອມທີ່ຫັ້ນ ທີ່ເປັນຕາຫນ່າຍນັ້ນນະ. ຢ່າຫວັງວ່າຈະມາມາບຂູ່ເຮົາໄດ້ອີກ. ເຫດການອັນເກົ່າ ຈະບໍ່ມີທາງໄດ້ກັບມາຄືນ, - ອະລາດີເມຍ ອີລີຊ ເວົ້າຂຶ້ນ. ຈົ່ງກ້າວຂຶ້ນ,

ພວກສະຫາຍເອີ! ການປະຕິວັດສັງຄົມນິຍົມຫມັ້ນຍືນ!".

ບັນດາ ນັກ ໂບນເຊວິກ ເປໂຕຣກຣາດ ໄດ້ພາກັນມາເຕົ້າໂຮມ ຢູ່ຕໍ່ຫນ້າວັງເປັນຈໍານວນ ຫລວງຫລາຍ. ພວກເຂົາບໍ່ມີຢາມເລີກລາໄປຈັກເທື່ອ. ພວກເຂົາພາກັນຫຸ້ມຫໍ່ຢູ່ແຕ່ກັບ ເລນິນ.

ຈົນວ່າຮອດທ້າໂມງເຊົ້າພໍ, ອະລາດີເມຍ ອີລີຊ ແລະ ນາເດສະດາ ກົງສະດັງຕິນິບນາ ຈຶ່ງ ໄດ້ກັບເມືອຮອດເຮືອນ, ດ້ວຍອາການອິດເມື່ອຍ ແລະ ຊຶມຊຶມ. ໃນທີ່ສຸດ ພວກເຂົາເຈົ້າ ກໍ ໄດ້ກັບຄືນມາຢູ່ໃນປະເທດຊາດຂອງຕົນ. ແລະໄດ້ຜ່ານຜ່າອຸບປະສັກຫລາຍສິ່ງຫລາຍຢ່າງ. ສັກກະຫລາດໃຫມ່ທີ່ຍິ່ງໃຫຍ່ ໄດ້ເກີດຂຶ້ນຢູ່ໃນຊີວິດໃຫມ່ຂອງປະເທດລັດເຊຍແລ້ວ.

ຍ້ອນຄວາມຕື່ນເຕັ້ນ ແລະ ສະທ້ານໃຈ, ອະລາດີເມຍ ອີລີຊ ເກືອບບໍ່ສາມາດຫລັບຕາ ລົງໄດ້. ຈົນຊົ່ວໂມງຕໍ່ມາພໍ, ເພິ່ນຈຶ່ງເຊື່ອບຫລັບໄປແຕ່ແລ້ວພັດຟື້ນຕາຂຶ້ນມາອີກ. ຢູ່ໃນຫ້ອງ ເຮືອນງາມສະຫງ່າດີ, ປາສະຈາກສຽງດັງລົບກວນໃດໆ.

ອະລາດີເມຍ ອີລີຊ ໄດ້ຍ່າງເລາະໄປຕາມລະບຽງເຮືອນທີ່ຍາວແລະແຄບດ້ວຍອາການຄົ້ນ ຄິດຢູ່ຕະຫລອດເວລາ. ຊ້ຳຢູ່ຕາມສອງຟາກຂ້າງມີຫ້ອງຄ້າຍໆກັບຫ້ອງໃນເຮືອກ່ຳປັ່ນ. ຢູ່ ສົ້ນສຸດພຸ້ນ ແມ່ນຫ້ອງກິນເຂົ້າເປັນຮູບສາມຫລ່ຽມ, ແລະລະບຽງນ້ອຍຢູ່ຊັ້ນເທິງນັ້ນ ກໍເປັນ ຮູບສາມຫລ່ຽມຄືກັບຫົວເຮືອ. ຢູ່ໃນຫ້ອງກິນເຂົ້າ ກໍມີ ປີອານໂນຫນ່ວຍຫນຶ່ງ. ເຖິງວ່າຈະຢູ່ ແຫ່ງໃດກໍຕາມ ຄອບຄົວຂອງ ອູລີອານົບ ຈະຕ້ອງມີ ແຄນຝະລັ່ງອາກກອກ ແລະ ສຽງເພັ່ງເປັນ ປະຈໍາ.

ອະລາດີເມຍ ອີລີຊ ຈັບເອົາປຶ້ມນິດເພັ່ງຂຶ້ນມາ. ປຶ້ມດັ່ງກ່າວແມ່ນປຶ້ມຂອງແມ່. ແຕ່ຍາມ ນີ້ ແມ່ບໍ່ໄດ້ມີຊີວິດຢູ່ອີກແລ້ວ. ແມ່ໄດ້ເສຍຊີວິດໄປກ່ອນຫນ້ານີ້ເຈັດເດືອນ. ແມ່ຂອງ ນາເດຍ ກໍໄດ້ເສຍຊີວິດໄປແລ້ວ ເຊັ່ນດຽວກັນ.

ອະລາດີເມຍ ອີລີຊ ແນມໄປທົ່ວຫ້ອງທີ່ຄ້າຍດັ່ງຫົວເຮືອນັ້ນ ດ້ວຍຄວາມໂສກເສົ້າແລະ ຕ່ຳໂຍກຫນ່ວຍນີ້, ກໍແມ່ນບ່ອນທີ່ ແມ່ເຄີຍໄດ້ເອົາແພນຕຸ້ມຄ້ຳແລ້ວນັ່ງອ່ານປຶ້ມ. ແມ່ເກົ້າ ຫລາຍ ທ້າງອ່ອນເພຍ, ຍາມໃດກໍຕ້ອງທຸກໃຈຄິດນໍາແຕ່ພວກລູກ, ຍ້ອນວ່າຢູ່ໄກກັນນັ້ນລະ.

ຜູ້ຫນຶ່ງກົກເນລະເທດ, ແລະ ອີກຜູ້ຫນຶ່ງພັດກົກຂ້າຄຸກຢູ່ເຊັ່ນນັ້ນ. ໂອຍແມ່ທີ່ຮັກເອີຍ! ຄື ຈະບໍ່ມີຄຸກແຫ່ງໃດທີ່ແມ່ບໍ່ໄດ້ນຳເຄື່ອງຂອງໄປສົ່ງພວກລູກ! ເປັນຕົ້ນ ຢູ່ຄຸກ ເປເຕກສະບອກ, ນິກສະກູ, ກີແອບ, ສາຣາຕົບ ແລະ ອື່ນໆ. ຄືຊ່ໍມີເມືອງໃດດອກທີ່ແມ່ຈະບໍ່ໄປເກີ!

ວະລາດີເມຍ ອີລີຊ ວາງປຶ້ມນິດເພັງໄວ້ເທິງຫນ້າ ປີອານໂນ ແລ້ວຄ່ອຍໆອ່ວຍກັບມາ ຫາຫ້ອງ ທີ່ເອື້ອຍໄດ້ຈັດໄວ້ໃຫ້ສະເພາະຕົນ ແລະ ນາເດຍ. ແຕ່ກ່ອນ ແມ່ກໍເຄີຍພັກຢູ່ໃນ ຫ້ອງນີ້. ທັງແມ່ນບ່ອນຢູ່ຄັ້ງສຸດທ້າຍຂອງແມ່. ຕັ່ງນວມສີແດງເຂັ້ມໂຕນັ້ນ ກໍແມ່ນຝີ ມືຂອງແມ່ເອງ ຊົ່ງເປັນຜູ້ກັກແສ່ວລວງລາຍຮູບດອກໄມ້ ຢູ່ຕາມແຜ່ນແພໄຫມພົມນັ້ນ... ແມ່ ເອີຍ! ເປັນເລື່ອງຫນ້າອຸກໃຈທີ່ສຸດວ່າ ຈະບໍ່ໄດ້ມີໂອກາດແນມເຫັນແມ່ຊ່ວນີລັນດອນ, ໄດ້ ຈູບຕາ ມື ແລະ ລຳແຂນຂອງແມ່ດ້ວຍຄວາມຮັກໄຄ່ອີກແລ້ວ!

ຫນ້ອຍຫນຶ່ງຕໍ່ມາ ທຸກຄົນໃນເຮືອນຕ່າງກໍພາກັນຕົ້ນນອນ ແຕ່ຕອນເຊົ້າມື້ ບໍ່ໄດ້ ຕອນເຊົ້າຂອງວານນີ້. ວານນີ້ທຸກຄົນຕ່າງກໍມີຄວາມເບີກບານມ່ວນຊື່ນ, ມື້ທຸກຄົນ ຕ່າງກໍ ເວົ້າຈາດ້ວຍສຽງຄ່ອຍໆ.

ຕະຫລອດໄລຍະທາງຕັ້ງແຕ່ຈາກຄຸ້ມ ຣາສະຕັນນາຢາ ໄປຈົນຮອດປ່າຊ້າ ໂວນກີ ທີ່ ລີ ກີບກາ, ວະລາດີເມຍ ອີລີຊ ໄດ້ແຕ່ງນບຂຶ້ນ. ຄຸ້ມບ້ານອັນໂສກເສົ້າເອີຍ. ເສັ້ນທາງສຸດທ້າຍ, ເສັ້ນທາງຊ່ວນີລັນດອນ.

ຢູ່ປ່າຊ້າຍັງມີ ຫີມະຕົກປົກຄຸມໄປທົ່ວ. ຢູ່ຕາມຂຸມຝັງສົບນັ້ນ ເຕັມແຕ່ ຫີມະຂາວຂາວ. ງ່າໄມ້ແປກນ້ອຍເຮັດເປັນເງົາລອກແລກຢູ່ເທິງຂຸມຝັງສົບຂອງແມ່. ຢູ່ທາງຂ້າງມີໂນນດິນທີ່ ຕ່ຳກ່ວາ, ນັ້ນແມ່ນຂຸມຝັງສົບຂອງ ໂອລີອາ. ຕົ້ນສົນສະອຶ້ນໄດ້ກ່ອງງ່າຂອງມັນລົງດ້ວຍຄວາມ ໂສກເສົ້າຫງ່ອມເທົ່ງ.

ເລນິນ ປົດຫມວກອອກແລ້ວກົ້ມຫົວລົງ ໄວ້ອາໄລຢູ່ຕໍ່ຫນ້າຂຸມຝັງສົບດົນພໍສົມຄວນ.

ບັນດາຮູບພາບ ແຕ່ຄັ້ງເຍົາໄວ ໄດ້ທະຍອຍກັນອອກມາປະກົດຢູ່ຕໍ່ຫນ້າຂອງເພິ່ນ. ຢູ່ ພາຍໃນເຮືອນທີ່ ຊຸມນຸມ, ຈາກເສງຕະກຽງທີ່ໄຊ້ໄຕ້ຢູ່ຫ້ອງກິນເຂົ້າ. ພວກລູກໆພາກັນນັ່ງ ອ້ອມໂຕະ, ແມ່ເປີດປຶ້ມອອກມາອ່ານ. ສົ່ງຫນຶ່ງທີ່ຈັບໃຈ, ຈົນເຮັດໃຫ້ພວກລູກໆຕົກສະເງື

ນັ້ນ, ຄືສຽງສຳນຽງສຽງປາກຂອງແມ່ທີ່ອ່ອນຫວານນົ້ມນວນເປັນເຄື່ອເສາະໃສ!

ແລະຮູບພາບອີກຕອນຫນຶ່ງທີ່ແຕກຕ່າງກັນຢ່າງຂາດຂັ້ນຄື: ຢູ່ປາກປະຕູຫ້ອງຂັງ, ຫນ່ວຍກະແຈ ກຳລັງກອກແກກໆ:

"ນັກໂທດ ອູລິອານົບ ອອກມາພົບແມ່ແດ່!"

ວະລາດີເມຍ ອີລີຊ ຍ່າງອອກໄປຫາລະບຽງຄຸກດ້ວຍຄວາມພ້າວພັ່ງ, ເປັນຫ່ວງຢ້ານແຕ່ມັນຈະເສຍເວລາໃນຍາມພົບພໍ້ກັນ, ຜ່ານຫ້ອງທີ່ມືດມິວ, ແລະເພດານອັນຕ່ຳໆ, ຮົ້ວກັ້ນທີ່ເຮັດດ້ວຍຕະຫນ່ຳງເຫລັກ. ໃບຫນ້າທີ່ຫນ້າຮັກຂອງແມ່ໄດ້ຕິດແນບຢູ່ກັບຮົ້ວເຫລັກ. ແວວແຫ່ງຄວາມຮັກໄຄ່ໄດ້ປະກົດຂຶ້ນຢູ່ທີ່ດວງຕາທັງຄູ່. "ໂອໂລເດຍ! ລູກຍັງແຂງແຮງດີຢູ່ບໍ? ນ້ຳເດ ແມ່ເອົານ້ຳນົມ, ເອົາຂອງຕ້ອນມາໃຫ້ລູກ. ໃນນີ້ມີທັງປົ້ມທີ່ລູກສັ່ງນຳ..."

ແມ່ເອີຍ, ແມ່ທີ່ຮັກເອີຍ! ແມ່ບໍ່ມີໂອກາດມີຊີວິດຢູ່ຈົນຮອດມື້ນີ້, ເພື່ອເບິ່ງຊີວິດໃຫມ່ຂອງພວກເຮົາ. ຈັ່ງແມ່ນເປັນຫນ້າເຫລືອໃຈ ແລະ ຂົມຂື່ນທີ່ສຸດ. ແມ່ທີ່ຮັກເອີຍ, ລູກຈະບໍ່ມີວັນລືມ ສະຕິປັນຍາອັນສະຫລາດສະຫລວຍຂອງແມ່, ດວງໃຈອັນບໍລິສຸດຂອງແມ່ດອກ.

ມອບອຳນາດທັງຫມົດໃຫ້ແກ່ສະພາໂຊວຽດ

ເລນິນ ຍືນໄວ້ອາໄລຢູ່ຕໍ່ຫນ້າຊຸມຝັງສົບແມ່ແລ້ວ, ກໍອອກຈາກປ່າຊ້າ ໂວນກັບໄປອ່ານບົດລາຍງານ ທີ່ກອງປະຊຸມຂອງພວກ ໂບນເຊວິກ. ມື້ນັ້ນ ແມ່ນມື້ວັນທີ ๔ ເດືອນເມສາ ປີ ๑๙๑๗, ດ້ວຍເຫດນັ້ນ ບົດລາຍງານຂອງ ເລນິນ ໃນພາຍຫລັງຕໍ່ມາ ຈຶ່ງໄດ້ມີຊື່ເອີ້ນວ່າ "ວິທະຍານິພົນເດືອນສີ່". ເພິ່ນໄດ້ຂຽນບົດວິທະຍານິພົນດັ່ງກ່າວຢູ່ໃນຕູ້ລົດໄຟ, ບົນເສັ້ນທາງກັບຄືນສູ່ປະເທດນັ້ນເອງ. ເພິ່ນໄດ້ແຕ່ງຮ່າງແຜນການ ຢ່າງລະອຽດລະອໍ ກ່ຽວກັບການກະທຳອັນແນ່ນອນແລະຕາຍຕົວ ຂອງບັນດານັກ ໂບນເຊວິກ ແລະ ປະຊາຊົນ, ພາຍຫລັງການໂຄ່ນລົ້ມລະບອບກະສັດລົງເຊຍ.

ລັດຖະບານຊົ່ວຄາວ ໄດ້ຂຶ້ນກຳອຳນາດ. ແຕ່ໃນລັດຖະບານຊົ່ວຄາວນີ້ມີໃຜແດ່? ມີແຕ່

ພວກເຈົ້າທີ່ດິນ, ນາຍທຶນ ແລະ ພວກຮັ່ງມີທັງນັ້ນ. ພວກຮັ່ງມີເຫລົ່ານີ້ບໍ່ທີ່ຈະໃຫ້ການເບິ່ງ ແຍງພວກກຳມະກອນແລະ ຊາວໄຮ່ນາ? ແນ່ນອນ ພວກເຂົາຄົງຈະບໍ່ເຮັດດັ່ງນັ້ນດອກ. ພວກເຂົາຄົງຈະສົນໃຈຢູ່ແຕ່ນຳຊັບສົ່ງຂອງພວກເຂົາເທົ່ານັ້ນແລ້ວ. ດັ່ງນັ້ນ ເລື່ອງໃດ ແລະ ມີ ເຫດຜົນອັນໃດ ທີ່ພວກໂບນເຊວິກຈະຕ້ອງໄປສະຫນັບສະຫນູນ? ພວກເຮົາຈະສະຫນັບສະ ຫນູນແກ່ສະພາໂຊວຽດ, ສະພາໂຊວຽດແມ່ນ ຕົວແທນຂອງກຳມະກອນແລະ ຊາວໄຮ່ນາທີ່ໄດ້ ສ້າງຕັ້ງຂຶ້ນໃນສະໄຫມນັ້ນ, ແຕ່ຍັງ ບໍ່ທັນເຂັ້ມແຂງພໍ. ພວກແມນເຊວິກ ຫລາຍຄົນ ແລະ ພາກສ່ວນອື່ນໆທີ່ບໍ່ລົງລອຍ ກັບພວກ ໂບນເຊວິກ ກໍໄດ້ສູ້ຍັນຢູ່ໃນນັ້ນອີກ.

-ຕ້ອງປັບປຸງສະພາໂຊວຽດ! -ເລນິນເວົ້າ. -ອັນນັ້ນມັນຫມາຍຄວາມວ່າແນວໃດ? ຫມາຍຄວາມວ່າເຮັດໃຫ້ສະພາໂຊວຽດມາເປັນຂອງພວກ ໂບນເຊວິກ. ຈາກນັ້ນ ກໍຕ້ອງຮີບ ຮັດຍຶດເອົາດິນນາຂອງພວກເຈົ້າທີ່ດິນ, ແລະໂຮງຈັກໂຮງງານຂອງພວກນາຍທຶນມາເປັນຂອງ ປະຊາຊົນ, ແລະ ຍຸດຕິການເຮັດສົງຄາມ.

ເລນິນ ໄດ້ຮ້ອງຮ້ອງມາຍັງ ຊາວ ໂບນເຊວິກ ແລະ ກຳມະກອນໃຫ້ເຮັດຄືແນວນັ້ນແລ້ວ. ເພິ່ນເປັນຄົນທີ່ມີຄວາມເດັດດ່ຽວທີ່ສຸດ. ພາລະຫນ້າທີ່ອັນຍິ່ງໃຫຍ່ໄດ້ວາງອອກ ຢູ່ຕໍ່ຫນ້າ ຂອງເພິ່ນຄືແນວນັ້ນ. ເລນິນເປັນຜູ້ທີ່ບໍລິສຸດຜຸດພ່ອງຕໍ່ພາລະຫນ້າທີ່ອັນຍິ່ງໃຫຍ່ອັນນັ້ນ.

ພວກກຳມະກອນເຂົ້າໃຈດີວ່າເສັ້ນທາງເດີນຂອງພວກເຂົາ ແມ່ນຕ້ອງຕໍ່ສູ້ຄຽງບ່າຄຽງໄຫລ່ ກັບພວກ ໂບນເຊວິກ. ມີກຳມະກອນພາກສ່ວນຫນຶ່ງແລະພວກຊາວໄຮ່ນາ ຈຳນວນຫລາຍ ຍັງບໍ່ສາມາດເຂົ້າໃຈໃນສິ່ງເຫລົ່ານັ້ນໄດ້. ພວກ ແມນເຊວິກ ແລະພວກນາຍທຶນ ໄດ້ໃຊ້ທຸກວິທີທາງ ເພື່ອເຮັດໃຫ້ບັນດາຊາວນາ ແລະກຳມະກອນຫລົງທິດຢູ່ໃນຫນ້າຫນັງສືພິມ, ພວກມັນໄດ້ເສກສັນປັ້ນແຕ່ງເລື່ອງກ່ອກັບພວກ ໂບນເຊວິກຂຶ້ນ. ພວກມັນໂຄສະນາສະ ຫນັບສະຫນູນສົງຄາມ ແລະ ສະຫນັບສະຫນູນອຳນາດຂອງພວກນາຍທຶນ. ສ່ວນພວກ ໂບນເຊວິກ ກໍໄດ້ພິມຫນັງສືພິມຂອງໂຕເອງທີ່ມີຊື່ວ່າ "ສັດຈະທຳ". ສຳນັກຫນັງສືພິມດັ່ງ ກ່າວໄດ້ຕັ້ງຢູ່ເຮືອນໃຫຍ່ຫລັງຫນຶ່ງ ແຄມແມ່ນ້ຳ ໂນຍກາ, ປະກອບມີສາມຫ້ອງນ້ອຍ, ຫນັງສືພິມດັ່ງກ່າວໄດ້ຊີ້ໃຫ້ປະຊາຊົນເຫັນແຈ້ງເຖິງຄວາມເປັນທຳ.

ເລນິນ ໄດ້ມາເຖິງສຳນັກຫນັງສືພິມ "ສັດຈະທຳ" ຢ່າງກະທັນຫັນ. ເພິ່ນເປັນຄົນ ຂຽນບົດເອງ. ມື້ຕໍ່ມາ ກໍໄດ້ຂຽນຕື່ມອີກບົດຫນຶ່ງ. ແຕ່ລະມື້ເພິ່ນຕ້ອງຂຽນບົດໃຫ້ຫນັງສື ພິມ "ສັດຈະທຳ" ບົດຫນຶ່ງ ຫລື ສອງບົດ ແລະ ມີບາງມື້ຮອດສາມບົດກໍມີ. ເພິ່ນໄດ້ໄປ ປາໄສຢູ່ຕາມໂຮງຈັກໂຮງງານໃນທົ່ວນະຄອນ ເປໂຕຣກຣາດ. ເພິ່ນໄດ້ອະທິບາຍໃຫ້ປະຊາ ຊົນເຂົ້າໃຈແຈ້ງກ່ຽວກັບການຕໍ່ສູ້ຂອງພວກ ໂບນເຊວິກນັ້ນວ່າ, ແມ່ນເພື່ອຄວາມຜາສຸກ ຂອງບັນດາຊາວຜູ້ອອກແຮງງານ, ດັ່ງນັ້ນຈຶ່ງເຮັດໃຫ້ຊາວກຳມະກອນແລະຊາວນາຕ່າງກໍ ອ່ານມາສະຫນັບສະຫນູນ ເລນິນນັບມື້ນັບຫລາຍຂຶ້ນຊັກໄຊ.

ພຽງສາມເດືອນເທົ່ານັ້ນ, ຊົນັບຕັ້ງແຕ່ ເລນິນ ໄດ້ກັບມາຮອດປະເທດລັດເຊຍ, ແລະທຸກສິ່ງຢ່າງໄດ້ມີການປ່ຽນແປງ. ເລນິນບໍ່ໄດ້ຢູ່ຢ່າງໂດດດ່ຽວ. ເພິ່ນຍັງມີ ບັນດາສະ ຫາຍ, ພວກເຂົາໄດ້ພາກັນ ສຸມທຸກຄວາມພະຍາຍາມ ເພື່ອບັນລຸເປົ້າຫມາຍອັນໃຫມ່. ພວກທະຫານບໍ່ຕ້ອງການສົງຄາມ. ກຳມະກອນບໍ່ຕ້ອງການເຮັດວຽກໃຫ້ ແກ່ພວກນາຍທຶນ. ຊາວໄຮ່ນາຕ້ອງການຢາກມີດິນນາ.

ມື້ຫນຶ່ງໃນຍາມລະດູຮ້ອນ, ບັນດາກຳມະກອນ ແລະ ທະຫານທົ່ວນະຄອນ ເປໂຕຣ-ກຣາດ ໄດ້ພາກັນແຫ່ຂະບວນຕາມທ້ອງຖະຫນົນຢ່າງບໍ່ໄດ້ນັດຫມາຍກັນແຕ່ຢ່າງໃດ. ພວກ ເຂົາອົດບໍ່ລົນທົນບໍ່ໄດ້ອີກແລ້ວ. ບັນດາພວກໂບນເຊວິກກໍບໍ່ໄດ້ຮຽກຮ້ອງໃຫ້ພວກເຂົາເຮັດ ຄືແນວນັ້ນດອກ, ແຕ່ໄດ້ນຳພາໃນການປະທ້ວງ ແລະພະຍາຍາມເຮັດແນວໃດໃຫ້ການປະ ທ້ວງເທື່ອນີ້ໃຫ້ມີລັກສະນະສັນຕິພາບ. ພວກເຂົາພາກັນແຫ່ໄປທົ່ວມຸມເມືອງພ້ອມທັງຍົກ ຄຳຂວັນທີ່ວ່າ "ມອບອຳນາດທັງຫມົດໃຫ້ແກ່ສະພາໂຊວຽດ", "ໂຄ່ນລົ້ມບັນດາລັດຖະມົນ ຕີນາຍທຶນ!", "ຫວ່ງໃຫ້ມີເຂົ້າກິນ, ໃຫ້ມີສັນຕິພາບ ແລະເສລີພາບ!".

ພວກເຂົາພາກັນຍ່າງໄປດ້ວຍຄວາມເຕັມໃຈດ້ວຍຄວາມເຊື່ອຫມັ້ນແລະເຄັ່ງຂຶມ. ການ ແຫ່ຂະບວນເທື່ອນີ້ໄດ້ສະແດງໃຫ້ເຫັນວ່າປະຊາຊົນມີພະລັງອັນແຂງກ້າທີ່ສຸດ.

ແລະບັນດາລັດຖະມົນຕີຂອງລັດຖະບານຊົ່ວຄາວ ຕ່າງກໍພາກັນເກີດຄວາມຢ້ານກົວເກົ່ງ ວ່າພວກເຂົາ ຈະເອົ້ນຕົນວ່າປະຕິວັດກໍຕາມ ແຕ່ການກະທຳຂອງພວກເຂົານັ້ນພັດຊົ່ວຊ້າລາ

ນິກ ຄືກັບກະສັດລັດເຊຍໃນປີ ໑໙໐໕. ພວກເຂົາໄດ້ຍົງປືນໃສ່ຂະບວນປະທ້ວງ ຜູ້ທີ່ບໍ່ມີອາວຸດຕໍ່ສູ້.

ເຫດການດັ່ງກ່າວເກີດຂຶ້ນໃນມື້ວັນທີ ๔ ເດືອນເຈັດ ປີ ໑໙໑໗ ນັ້ນເອງ.

ເຊົ້າຂອງມື້ຕໍ່ມາ, ວະລາດີເມຍ ອີລີຊ ໄດ້ມາທີ່ສຳນັກຫນັງສືພິມ "ສັດຈະທຳ", ທີ່ຕັ້ງຢູ່ແຄມແມ່ນ້ຳ ໂນຍກາ ອີກ, ເພື່ອກວດກາບົດທີ່ລົງໃນຫນັງສືພິມ, ແລະຕັກເຕືອນບັນດາສະຫາຍນຳ.

...ລົດຂອງພວກທະຫານ ໄດ້ຍຶບເບັກຢ່າງແຮງ ຢູ່ຕໍ່ຫນ້າສຳນັກພິມ "ສັດຈະທຳ". ສຽງເກີບບົດໄດ້ດັງຄຶກຄັກໆຂຶ້ນມາ. ທັນໃດນັ້ນ ບານປະຕູກໍ່ຖືກເປີດອອກ. ພວກນັກຮົບທະຫານຫລາຍຄົນ ຖືປືນຕິດກະບີ່ພວດພາດເຂົ້າມາໃນສຳນັກຫນັງສືພິມ "ສັດຈະທຳ":

-ເລນິນ ຢູ່ໃສ?

ນັບວ່າໂຊກດີຢູ່ ທີ່ ເລນິນບໍ່ໄດ້ຢູ່ທີ່ນັ້ນແລ້ວ. ວະລາດີເມຍ ອີລີຊ ໄດ້ອອກຈາກສຳນັກຫນັງສືພິມ "ສັດຈະທຳ" ແລະໄດ້ກັບເມືອເຮືອນເປັນທີ່ຮົບຮ້ອຍແລ້ວ. ນາເດສະດາ

ກ້ຽສະຕ້ຽຕິນິບນາ ແລະ ຜູ້ເປັນເອື້ອຍກໍລັ່ງ
ນ້ຳຢູ່ທ່ຶລະບຽງເຮືອນ, ທ່ຽງຫູກໍຕິດຕ່ຽມຟ້ຽ
ສຽງທ່ຶດັ່ງຢູ່ທ່ຽງນອກ, ທ້ຽງສອງຕ່ຽງກໍພ່ຽກັນ
ນິ່ງຽບແລະນິ່ງໃບຫນ້ຽຈືດຈ່ຽງ.

-ໂອ້ໂລ່ເດຍເອີ! ລັດກະບ່ຽນຊື່ອຄ່ຽວ
ໄດ້ປະກ່ຽດວ່ເຈົ້ຽເປັນຄົນຜິດກົດຫມ່ຽຍແລ້ວ.

ໃນທັນໃດນ້ັ້ນໄດ້ມ່ີສຽງກະດິ່ງດັ່ງເປັນສຽ
ຍ່ຽວໆ. ຫມ່ິດທຸກຄົນຕ່ຽງກ້ັ້ນໃຈເອ່ົ້ຽໄວ້.

-ບ່ໍ່ແມ່ນພວກເຂ່ົ້ຽມ່ຽຊອກຫ່ຽເຈ້ົ້ຽບ່ໍ
ຫ້ັ້ນ? - ນ່ຽງເດສະດ່ຽ ກ້ຽສະຕ້ຽຕິນິບນ່ຽ ຄ່ຶດ
ກ່ຽມຢູ່ໃນໃຈ.

ອະລ່ຽກ່ເມ່ຽ ອ່ິລ່ິຊ ກ້ຽວເຂ້ົ້ຽໄປໃນຫ້ຽ
ຂອງຕົນຢ່ຽງຽບໆ. ຈັບເອ່ົ້ຽເອກກະສ່ຽນແລະ
ທ່ໍ່ຢູ້ຂ້ຶ້ນມ່ຽຈ່ກ່ົ້ມຢ່ຽງອ່ອງໄອ! ເພ່ົ້ອບ່ໍ່ໃຫ້ນ້ັ້ນ
ຕົກໄປຢູ່ໃນກ່ຳມ່ືຂອງພວກນ້ກສ່ຶບໄດ້ຈ້ກອ້ັ້ນ.

-ເປ່ີດປະຕູໄວ້ໆແດ່! - ຢູ່ຂ່ຽງນອກ ໄດ້
ຍ່ິນສຽງເອ່ົ້ນຄ່ອຍໆດ້ັ່ງເຂ້ົ້ຽມ່ຽ.

-ສະແວກລ່ິບ! - ອ່ຽນນ່ຽ ອ່ິລ່ິດຈະນ່ຽ
ຈ່ໄດ້ທ້ັນທ່ີ. -ແມ່ນ ສະແວກລ່ິບ ແທ້ໆ
ແລ້ວ.

ທຸກຄົນຕ່ຽງກ່ໍດ່ີໃຈ ເພ່ຽະວ່ຽເຂ່ົ້ຽບ່ໍ່ແມ່ນ
ຜູ້ທ່ໍ່ຈະມ່ຽຈ້ບຕ່ົ້ວ ຫລ່ົ້ວ່ຽມ່ຽຊອກຄ້ົ້ນແຕ່ຢ່ຽງ
ໃດຫ່ມ່ດ. ທຸກຄົນໄດ້ກ່ຽມພ້ອມເພ່ົ້ອໂອບ

ກອດສະຫາຍ ສະແວກລົບ.

-ອ໊ອາກົບ ມ໊ຄາຍໂລວ໊ກ ທ໊ຮັກແພງ, ເຂ້ົ້າມາໃນພ໊ີແມ້! - ອາມນາ ອ໊ີລ໊ິກຈະນາ ແລະ ນາເດສະດາ ກ໊ົງສະຕ໊ງຕ໊ິນບນາ ຕ່າງກໍພ້ອມເຊ໊ືອເຊ໊ີນຊາຍຫນຸ່ມຜູ້ທ໊ີ່ໃສ່ແວ່ນຕາ ແລະ ມ໊ີຮູບຮ່າງຈ່ອຍບາງຜູ້ນ້ັນ.

ເຂົາຍັງຫນຸ່ມແຫນ້ນ. ເຂົາໄດ້ອຸທ໊ິດຊ໊ີວ໊ິດຂອງເຂົາໃຫ້ແກ່ພັກຕ໊ັ້ງແຕ່ຄາວຍັງນ້ອຍພຸ້ນ. ລ໊ັດກະບານຂອງກະສ໊ັດລ໊ັດເຊຍ ໄດ້ເນລະເທດນ໊ັກປະຕ໊ິວ໊ັດ ສະແວກລົບ ໄປຢູ່ທາງ ນາຣ໊ືມ ສະກ໊ີ ທ໊ີ່ກວາງໄກພຸ້ນ. ສະແວກລົບ ໄດ້ລ໊ັກຫນ໊ີຕ໊ັ້ງສ໊ີ່ເທ໊ື່ອ ແລະແຕ່ລະເທ໊ື່ອລ້ວນແຕ່ປະ ລາໄຊທ໊ັ້ງນ້ັນ. ແຕ່ປານນ້ັນກໍຍັງສາມາດລ໊ັກຫນ໊ີມາອ໊ີກຈ໊ິນໄດ້ ...

ແຕ່ເຂົາອອກຈາກບ່ອນເນລະເທດນາ ບ່ໍໄດ້ພໍເທ່ົາໃດກໍ໊ືກພວກສາລະວ໊ັດທະຫານຈ໊ັບ ອ໊ີກ. ພວກນ໊ັນໄດ້ເນລະເທດເຂົາໃຫ້ໄປຢູ່ຍັງເຂດກວາງໄກ, ບ່ອນຜ໊ີບ່ໍທ່ອງຄົນບ່ໍທ໋ວ ທ໊ີ່ ຕຸຣຸຄານສະກ໊ີ ພຸ້ນ.

ມ໊ີແຕ່ການປະຕ໊ິວ໊ັດເທ່ົານ້ັນ ຈ໊ຶ່ງຈະສາມາດປ໊ົດປ່ອຍສະຫາຍ ສະແວກລົບໄດ້. ເຂົາເປ໊ັນ ຄົນສະຫລາດສະຫລ໋ວທ໊ັ້ງມ໊ີຄວາມສາມາດ, ເປ໊ັນນ໊ັກ ໂບນເຊ໊ວ໊ິກ ທ໊ີ່ ຫ້າວຫ໊ັນແລະທ໊ັ້ງ ເປ໊ັນຜູ້ຊ່ອຍວ໋ກທ໊ີ່ເອ໊ົາການເອ໊ົາງານຂອງ ເລນ໊ິນ.

ພວກນ໊ັກຮ໋ບທະຫານ ໄດ້ທ໋ໍາການພ້ົາງເພສ໋ໍານ໊ັກຫນ໊ັງສ໊ືພ໊ິມ "ສ໊ັດຈະທ໋ໍາ". ພວກ ເຂົາໄດ້ທຸ່ນພ້ົາງປະຕູແກ້ວຕ່າງໆ. ພວກເຂົາໄດ້ເອ໊ົາກະປ໋ໍ໊ປາຍປ໊ືນທ໋ັ້ງແທ່ງໃສ່ທຸກສ໋ິ່ງທຸກຢ່າງ. ຢູ່ຕາມຕ໊ີອເມ໊ືອງກ໋ໍາລ໊ັງມ໊ີການຈ໊ັບກຸມແລະຊອກຫາໂຕກ໊ັບຂ໊ຶ້ນຢ່າງຊຸນລະມຸນ. ພວກນ໊ັກຮ໋ບ ທະຫານໄດ້ທ໋ໍາການພ້ົາງເພໄປທ໊ີ່ອ໊ິບ. ພວກນ໊ັນອາດຈະບຸກເຂ້ົ້າມາບ່ອນນ໊ີ້ດ໋ວນ໊ີ້ກໍ໋ເປ໊ັນໄດ້. "ຕ໊ ້ອງອອກຫນ໊ີດ໋ວນ໊ີ້ໃດ, ອະລ໋ກ໊ເຊ ອ໊ີລ໊ຊ".

ອະລ໋ກ໊ເຊ ອ໊ີລ໊ຊ ກ໋ໍາລ໊ັງຄ໊ິດຢູ່ຢ່າງ໋ບໆ. ບາດນ໊ີ້ໄດ້ມ໊ີເລ ື ່ອງຈ໊ັບກຸມນ໊ັນດານ໊ັກປະຕ໊ິ ວ໊ັດເກ໊ີດຂ໊ຶ້ນແລ ້ ວ, ຈ໋ໍາເປ໊ັນຕ ້ ອງໄດ ້ ຫລ ິ ບລ ້ ອ ີ ກ.

ອະລ໋ກ໊ເຊ ອ໊ີລ໊ຊ ຊ ັ ່ ງຊາເບ ິ ່ ງເຫດການ. ໃຜ ້ ນ ັ ຕ ະ ລ ່ າ ຍ ເທ ື ່ ອ ນ ້ ໍ ມ ັ ນ ກ ັ ນ ດ ານ ແ ທ ້ ໆ. ຄົນຜູ ້ ທ ໍ ່ ີ ່ ວ ່ ານ ໍ ິ ດ ກ ິ ດ ຫ ມ າ ຍ ນ ້ ໍ ອ າ ດ ຈ ະ ຕ ້ ອ ງ ກ ໍ ິ ດ ຈ ັ ບ ຫ ລ ້ ໍ ຂ ້ ໍ ກ ໍ ້ ມ ໂ ດ ຍ ບ ່ ໍ ມ ີ ການ ພ ິ ພ າ ກ ສ າ ບ ່ ໍ ວ ່ າ

ກໍລະນີໃດໆຫມົດ. ລັດກະບານຊົ່ວຄາວໄດ້ປອງທໍາລາຍ ເລນິນ ເສຍແລ້ວ.

-ຕ້ອງໄປດ່ວນນີ້ໃດ ອະລາດີເມຍ ອີລີຊເອີຍ! - ສະແວກລິບເວົ້າຊໍ້າຄືນດ້ວຍນ້ໍາສຽງອັນເດັດດ່ວ.

ເຂົາແກ້ເສື້ອໃຫຍ່ອອກມາປົກບ່າໃຫ້ ອະລາດີເມຍ ອີລີຊ.

-ສະຫາຍນຸ່ງເສື້ອໂຕນີ້ສາ. ນຸ່ງເສື້ອຂອງຜູ້ອື່ນ, ພວກເຂົາບໍ່ມີທາງຈີ່ໄດ້ ເອົາຄໍເສື້ອຂຶ້ນນໍາ.

ອະລາດີເມຍ ອີລີຊ ດຶງຄໍເສື້ອຂຶ້ນ. ແລ້ວກໍໂອບກອດຈູບຜູ້ເປັນເອື້ອຍແລະເມຍເພິ່ນ ແນມເບິ່ງເຮືອນຂອງເອື້ອຍ ຊົ່ງເພິ່ນໄດ້ອາໃສດ້ວຍຄວາມສະດວກສະບາຍມາເປັນເວລາສາມເດືອນເຕັມ. ເຮືອນດັ່ງກ່າວຄ້າຍກັບເຮືອກໍ່າປັ່ນທີ່ລອຍຢູ່ກາງທະເລ.

ຈາກນັ້ນ ເພິ່ນກໍໄດ້ຫລົບຫນີຢ່າງບໍ່ມີໃຜຮູ້. ບັນດານັກປະຕິວັດໄດ້ເອີ້ນການຫລົບຫນີໃນເທື່ອນີ້ວ່າ: ການກອນໂຕແບບປົດລັບ.

ຫ້ອງເຮັດວຽກຢູ່ໃນປ່າ

ຢູ່ໃກ້ໆເມືອງ ເປໂຕຣກຣາດ ບ່ອນທີ່ບໍ່ຫ່າງຈາກຊາຍແດນປະເທດ ແຟງລັງ ພໍປານໃດ, ທີ່ ຫມູ່ບ້ານ ເຊສະເຕີໂຣເຣດສະເກ້ນ້ອຍໆແຫ່ງນຶ, ມີໂຮງງານຜະລິດອາວຸດໃຫຍ່ແຫ່ງຫນຶ່ງ. ເອເມລີອານິບ ເປັນກໍາມະກອນປະຈໍາຢູ່ໂຮງງານແຫ່ງນີ້ມາໄດ້ສາມສິບປີແລ້ວ. ເຂົາຢູ່ທີ່ສະຖານີລົດໄຟ ຣາສະລົບ, ຈາກບ່ອນນັ້ນຍ່າງໄປຫາໂຮງງານກິນເວລາເຄິ່ງຊົ່ວໂມງພໍດີ. ສະຖານີແຫ່ງນີ້ ເອີ້ນຕາມຊື່ຂອງຫນອງໃຫຍ່ແຫ່ງຫນຶ່ງ. ຫນອງດັ່ງກ່າວມີຄວາມຍາວເກືອເຈັດກິໂລແມັດ. ໃນລະດູຮ້ອນອາກາດແຈ່ມໃສ ຫນ້ານໍ້າຂອງງາມຄືກັບທ້ອງຟ້າ.

ຣັຫນຶ່ງ ໄດ້ມີຜູ້ຕາງຫນ້າຂອງສູນກາງພັກ ມາທີ່ເຮືອນຂອງ ເອເມລີອານິບ. ຄະນະບໍລິຫານງານສູນກາງພັກໂບນເຊວິກ ໄດ້ຕົກລົງ: ໃຫ້ລຸກເຊື່ອງ ເລນິນຜູ້ນໍາຂອງພັກ, ເພື່ອໃຫ້ຫລຸດພົ້ນຈາກການຈອກຈັບຂອງພວກລັດກະບານຊົ່ວຄາວທີ່ຟື້ນປະຕິວັດນັ້ນໃຫ້ໄວທີ່ສຸດ.

-ສະຫາຍ ເອເມລິອານິບ, ພັກໄດ້ມອບຫມາຍຫນ້າທີ່ອັນນີ້ໃຫ້ສະຫາຍໃດ.

ຕອນທຳອິດ ເອເມລິອານິບ ຕົກລົງວ່າຈະເຊື່ອງ ອະລາດີເມຍ ອີລີຊ ໄວ້ໃນເລົ້າບັນຈຸເຟືອງ, ຊ່ຳຕ້ຳຢູ່ໃນເດີ່ນບ້ານຂອງຕົນເອງ.

ແຕ່ຫນ້ອຍຫນຶ່ງຕໍ່ມາ ເຂົາຈຶ່ງຄິດໄດ້ວ່າ: ບໍ່ໄດ້, ບໍ່ເຫມາະແລະທ້ຽງເປັນ ອັນຕະລາຍອີກ. ເພາະຢູ່ອ້ອມຂ້າງຕົນກໍຍັງມີຊາວບ້ານໃກ້ເຮືອນຄຽງຢູ່ຄືກັນ. ພວກເດັກນ້ອຍຊາວບ້ານມັກແລ່ນເຂົ້າມາຫລິ້ນໃນເດີ່ນບ້ານນີ້ເລື້ອຍໆ. ເອເມລິອານິບ ມີລູກຕັ້ງເຈັດຄົນ-ຫມູ່ຂອງລູກແຕ່ລະຄົນອີກ ບວກເຂົ້າກັນແລ້ວ ມັນຊິຫນ້ອຍຫວະ? ບໍ່ໄດ້, ຕ້ອງໄດ້ຊອກຫາບ່ອນຊຸກເຊື່ອງທີ່ລຶກລັບກ່ວານີ້ອີກ.

ເອເມລິອານິບ ໄດ້ປຸກ ອະລາດີເມຍ ອີລີຊ ລຸກຕັ້ງແຕ່ເຊົ້າໆ, ຕັ້ງແຕ່ຕາເວັນຍັງບໍ່ທັນຂຶ້ນພົ້ນ. ຄວັນຫມອກສີຂາວພໍຄິວນິວກໍຍັງປົກຫຸ້ມຕາມຫນ້ານ້ຳຫນອງຢູ່. ຫນອງດັ່ງກ່າວ ຢູ່ທາງຫລັງເຮືອນນັ້ນເອງ. ເອເມລິອານິບ ແກ້ເຊືອກເຮືອອອກ. ສຽງໄມ້ພາຍຕຳກັບນ້ຳດັງຈຸ໋ມໆ. ເລາະລົງຕາມແຄມຫນອງ ບັນດາເຮືອນແຕ່ລະຫລັງຕ່າງກໍຍັງຫລັບໄຫລຢູ່ພາຍໃຕ້ບັນຍາກາດຂອງຍາມເຊົ້າຂ້ອນແຈ້ງນັ້ນຢູ່. ເອເມລິອານິບໄດ້ພາຍເຮືອເລາະລົງຜ່ານໄປຕາມແຄມນ້ຳ ແລ້ວຈຶ່ງອອກໄປທາງກາງຫນອງຮາສະລິບ ພົ້ນ: ຫນ້ານ້ຳຫນອງໃສແຈ້ງ, ກ້ວາງໄກສຸດສາຍຕາ ແລະປາສະຈາກຜູ້ຄົນ. ເງົາແຫ່ງຄວາມມືດ ໄດ້ຄ່ອຍໆຈາງຫາຍໄປ. ທຸກຄົນຕ່າງກໍກຳລັງນອນຫລັບແລະຝູງນົກຫນູກໍຍັງບໍ່ທັນຕື່ນ. ເສງສີທອງຂອງຍາມເຊົ້າຫາກໍເລື່ມພຸ່ງພົ້ນຂຶ້ນຢູ່ທາງກ້ຳທິດຕາເວັນອອກພົ້ນ.

ເອເມລິອານິບ ໄດ້ພາ ເລນິນ ໄປສົ່ງຮອດຝາກຫນອງເບື້ອງນັ້ນດ້ວຍຄວາມຟ້າວຟັ່ງ ເພາະວ່າໄລຍະທາງນັ້ນໄກເຖິງ ສີ່ ແວກ. ເຂົາມີຄວາມເປັນຫ່ວງທີ່ສຸດ: ຢ້ານວ່າມີໃຫ້ບ້ານຜູ້ໃດຜູ້ຫນຶ່ງແນມເຫັນເຂົາໃນຕອນເຊົ້າໆຄືແນວນີ້, ແລະກຳລັງຂ້ຳມສົ່ງໃຜຜູ້ຫນຶ່ງທີ່ເປັນຄົນແປກຫນ້າ, ຈັກໄປທາງໃດ, ເພື່ອຈຸດປະສົງອັນໃດ? ເພາະວ່າ ຢູ່ຕາມຫນ້າຫນັງສືພິມຕ່າງກໍລົງແຕ່ຂ່າວວ່າ ບັນດາຜູ້ກຳອຳນາດ ກຳລັງຊອກຫາເລນິນຢູ່. ເຂົາຢ້ານຈະພົບກັບຄົນປະເພດດັ່ງກ່າວ... ດັ່ງນັ້ນ ເອເມລິອານິບ ຈຶ່ງຕ້ອງເຮັດທ້ຽງຟ້າວທ້ຽງຟັ່ງ.

ອະລາດີເມຍ ອີລີຊ ນັ່ງນຶກບໍ່ປາກຢູ່ເບື້ອງຫລັງໄມ້ພາຍ. ກະແສລົມຍາມເຊົ້າພັດຜ່ານ ມາເປັນຮູດ, ເຮັດໃຫ້ກ້ອນເຜົ້ອສີຂຸ້ນຄ້ວນີ້ອຢູ່ເທິງຫນອງ ຣາສະລົບ, ເຄື່ອນຍ້າຍແລະ ຈືດຈາງຫາຍໄປ. ແຄມຕາຝັ່ງປະກົດໃຫ້ເຂົ້າຊັກໄຊ. ແສງສະຫວ່າງສີທອງຍາມເຊົ້າພຸ່ງຂຶ້ນ ເປັນໄລຍະໆ.

ໃນຍາມງຽບສະຫງັດຄືແນວນີ້, ອະລາດີເມຍ ອີລີຊ ໄດ້ຫວນຄຶດເຖິງວັນເດືອນປີທ່ີ ຜ່ານມາ ອັນແສນດົນນານ, ຄຶດເຖິງເພື່ອນນຶກສະຫນຶກສະຫນິມ. ຄຶດຮອດ ບາບຸດສະ ກົນ, ກຳມະກອນທົ່ນະຄອນ ເປແຕກສະບອກ. ອະລາດີເມຍ ອີລີຊ ໄດ້ເຄີຍຮ່ວມກັບ ບາບຸດສະກົນ ຂນໃບປ໊ອຄ້ງທຳອິດຂອງ "ສະຫະພັນການຕ໋ສູ້". ບາບຸດສະກົນ ກຳມະກອນ ໃນນະຄອນ ເປແຕກສະບອກ, ໄດ້ກາຍມາເປັນນັກປະຕິວັດຜູ້ຫ້າວຫັນ, ເປັນນັກໂບນເຊ ວິກ ທ່ີ ກ້າແກ່ນເຂັ້ມແຂງ. ໃນປີ ໑໙໐ຝ ນັ້ນ, ພວກເຈົ້າຫນ້າທ່ີໄດ້ຕັດສິນປະຫານເຂົາ ໂດຍບໍ່ມີການພິພາກສາແຕ່ປະການໃດ.

ເລນິນ ຄຶດເຖິງທະຫານເຮ໊ອ ນາຈູເຊັນໂກ ຂອງເຮ໊ອຣົບ "ໂປໂຈມກົນ", ຜູ້ທ່ີໄດ້ໄປ ພົບອະລາດີເມຍ ອີລີຊ ທ່ີ ເຊ໋ເນວ, ແລະ ໄດ້ເລົ່າເຫດການການລຸກຮ໊ືນ. ຕ໋ມາ ເຂົາໄດ້ ກັບຄືນສູ່ປະເທດ ແລະ ກຶກພວກກຳອຳນາດຕັດສິນປະຫານ.

ວະລາດີເມຍ ອີລີຊ ຄິດຮອດສະຫາຍອີກຜູ້ຫນຶ່ງ - ເຂົາເປັນກໍາມະກອນຫນຸ່ມຢູ່ອູຟາ ຊື່ວ່າ ອິວານ ອິອາກູຕິບ. ໃນຕອນເຣັດການປະຕິວັດ ປີ ໑໙໐໕ ນັ້ນ ອິວານ ອິອາກູຕິບ ໄດ້ສ້າງຕັ້ງປະເທດ ສາທາລະນະລັດປະຊາຊົນ ຢູ່ ອູຟາ. ເມື່ອການປະຕິວັດຖືກປາບປາມ, ອິວານ ອິອາກູຕິບ ກໍຖືກຕັດສິນປະຫານຢູ່ກັບເດີ່ນຕໍ່ຫນ້າຄຸກນັ້ນໂລດ. ບັນດານັກຣົບກໍາມະກອນ ເປັນຈໍານວນພັນໆຄົນ ໄດ້ຖືກເສຍສະລະ ເພື່ອການປະຕິວັດ! ຕະຫລອດທັງບັນດາສະຫາຍອື່ນໆຍັງຄົງຝັງຢູ່ໃນຄວາມຊົງຈໍາຂອງເພື່ນຕະຫລອດໄປ.

ວະລາດີເມຍ ອີລີຊ ຄິດໃນໃຈວ່າ ເອເມລີອານິບ, ກໍາມະກອນຢູ່ ເຊສະເຕີໂຣເຊດສະ ເກ ຜູ້ນີ້, ຊົ່ງເປັນຜູ້ປົດບັງເອົາເພື່ນໃຫ້ຫລຸດພົ້ນຈາກພວກກໍາອໍານາດນາຍທຶນ ກໍເປັນຜູ້ ທີ່ສ່ຽງໄພທີ່ສຸດຄືກັນ. ກ້າໂຊກບໍ່ເຂົ້າຂ້າງແລ້ວ ພວກມັນກໍຄົງຈະບໍ່ປານີປານອມຈັກຫນ້ອຍ ເລີຍ, ແລະ ນອກຈາກນັ້ນເຂົາຍັງມີລູກເກົ່ງເຈັດຄົນ.

- ຂໍຂອບໃຈ ນິກໂກລາຍ ອາເລັກຊັງໂດຣວິກ, - ວະລາດີເມຍ ອີລີຊ ກ່າວຂອບໃຈ.

ເອເມລີອານິບ ແນມເບິ່ງເພື່ນ:

- ບໍ່ເປັນຫຍັງດອກ, ວະລາດີເມຍ ອີລີຊ! ນັບວ່າແມ່ນກຽດອັນສູງສົ່ງສໍາລັບຂ້ອຍ.

ຈາກນັ້ນ ເຂົາກໍໄດ້ເອົາເຮືອຫມັ້ນເຂົ້າໄປໃນປ່າຜຶ.

ປ່າກໍຢູ່ໃກ້ໆກັບແຄມນ້ຳນັ້ນເອງ. ຄົນຈະວ່າປ່າ ແຕ່ກໍບໍ່ຄືປ່າ, ເພາະມັນເປັນພຽງປ່ານ້ອຍ, ໃນນັ້ນມີ ຕົ້ນເຄືອງູ, ຈຳພວກຕົ້ນເປືອຍຂາວທີ່ມີລຳຕົ້ນຈ່ອຍ ຣຽວສູງ.

ທ້າວສອງຄົນພາກັນຂົນເອົາເຄື່ອງອອກຈາກເຮືອ, ໃນນັ້ນມີທ້າງເຄື່ອງບໍລິໂພກແລະເຄື່ອງນອນຫມອນມຸ້ງ. ຈາກບ່ອນນັ້ນໄປເກີ່ງປ່າຕົບໄກປະມານເຄິ່ງແວກ. ວະລາດີເມຍ ອີລີຊ ໄດ້ບັນທຶກວຽກງານ ທີ່ເຮັດຢູ່ໃນຫໍສະຫມຸດ ຊຸຍຣົກ, ໃນນັ້ນ ເພິ່ນໄດ້ບັນທຶກບັນດາເອກກະສານທີ່ສຳຄັນນຳອີກ. ປັດຈຸບັນ ປັນສິຂອງດັ່ງກ່າວ ແລະສິ່ງຕ່າງໆທີ່ໄດ້ບັນທຶກໄວ້ໃນນັ້ນ, ມັນໄດ້ສ້າງແນວຄິດອັນປະເສີດເລີດລ້ຳໃຫ້ແກ່ ວະລາດີເມຍ ອີລີຊ ຢ່າງໃຫຍ່ຫລວງ.

ແຕ່ ເອເມລີອານີບ ຈະພາເພິ່ນໄປທາງໃດກັນແທ້? ພວກເຂົາເຈົ້າພາກັນ ຫມົ້ນເຂົ້າໄປໃນບ່ອນໂລ່ງແຫ່ງຫນຶ່ງທີ່ກ້ວາງແລະຂຽວງາມຕາມທຳມະຊາດ. ຢູ່ໃນປ່າດັ່ງກ່າວມີຕູບນ້ອຍຫລັງຫນຶ່ງ. ຢູ່ທາງຂ້າງຕູບ ມີຫລັກສອງອັນ ສັກລົງດິນ ແລະຢູ່ຫວ່າງກາງຫລັກ ມີຫມໍ້ນ້ອຍຫມ້ວຍຫນຶ່ງ: ອັນນັ້ນຫມາຍຄວາມວ່າແມ່ນເຮືອນຄົວ.

-ໂອຄັກ! - ວະລາດີເມຍ ອີລີຊ ທ້ວງຂຶ້ນ. - ມັນແມ່ນບ່ອນຢູ່ທີ່ຫາຍາກໃດ, ນົກໂກລາຍ ອາເລັກຊັງໂດຣວິກ ເອີຍ! ບໍ່ຄິດວ່າຊິໄດ້ຢູ່ບ່ອນພິເສດເກີ່ງຂະຫນາດນີ້ຈັກເທື່!

-ສະຫາຍໄດ້ເຫັນອັນນີ້ແລ້ວຫລະ? - ເອເມລີອານີບ ຖາມຂຶ້ນ. ຈາກນັ້ນ ເຂົາກໍຊີ້ມືໄປໃສ່ກ່ອງທີ່ວາງຢູ່ໃກ້ໆກັບຕູບ ແລະ ກ້ອນຫີນເພື່ອໄວ້ຝົນກ່ອງດັ່ງກ່າວ.

-ວະລາດີເມຍ ອີລີຊ ເອີຍ, ຂ້ອຍຂໍຈ້າງເຈົ້າມາກ່ອງຫຍ້າຢູ່ນີ້ສະເພາະ, ເພາະຂ້ອຍໄດ້ເຊົ່າປ່າແຫ່ງນີ້ໄວ້ແລ້ວ, ດ້ວຍເຫດນັ້ນຕ້ອງໄດ້ຕັດຫຍ້າໃດ. ໃນກໍລະນີທີ່ມີຄົນ ເກັບຫມາກໄມ້ ຫລືເກັບເຫັດ ບ້ຽເອີນຍ່າງມາພໍ້ຕູບ, ຫ້າມບໍ່ໃຫ້ເວົ້າກັບໃຜຈັກຄວາມເດີ. ຫມາຍຄວາມວ່າ ຂ້ອຍໄດ້ຈ້າງຊາວເຜົ່າລັງຜູ້ຫນຶ່ງມາຕັດຫຍ້າໃຫ້. ຄົນ ເຜົ່າລັງ ຜູ້ນັ້ນບໍ່ຮູ້ພາສາລັດເຊຍຈັກຄວາມ.

ເອເມລີອານີບ ຫລຽວເບິ່ງ ວະລາດີເມຍ ອີລີຊ ຕັ້ງແຕ່ຫົວເກີ່ງຕີນ. ວະລາດີເມຍ ອີລີຊ ໄດ້ເກາະຫນວດຢູ່ກ້ອງຄາງຈົນກ້ຽງ ແລະ ຕັດຫນວດເທົ່າສົບອອກ, ເພິ່ນນຸ່ງເສື້ອເຊີດຄໍຕັ້ງກັບເສື້ອໃຫຍ່ເກົ່າໆ, ເບິ່ງແລ້ວຈັ່ງແມ່ນຄືກຳມະກອນທຳມະດາໆ.

-ຈັ່ງແມ່ນຄືດົນ ແຟ້ງລ້ຽ ບໍ່ມີຜິດເລີຍ, - ເອເມລີອານີບ ກ່າວອອກຄວາມເຫັນ.

-ຍັງສ້ຽງຫນ້ຽງອີກໃດ! - ອະລາດີເມຍ ອີລີຊ ກ່າວຕໍ່ໄປ, - ຊ່ຽງຕັດຫຍ້າຂອງສະຫາຍ ຍັງຈະຕ້ອງໄດ້ຂົນຫນ້ຽງສ້ຽງລາຍອີກ. ດັ່ງນັ້ນຂົນຢູ່ໃສນັ້ນຈ້ຽງຈະສະດວກດີ?

-ສະຫາຍລອງແນມເບິ່ງອັນນັ້ນເບິ່ງດູ, - ເອເມລີອານີບ ຕອບດ້ວຍຄວາມພາກພູມໃຈ.

ຈາກນັ້ນ ເຂົາກໍພ້ຫຍ້າຢູ່ຂ້າງຕູບນັ້ນອອກ, ແລະໃນຕອນນີ້ ອະລາດີເມຍ ອີລີຊ ຈ້ຽງສາມາດແນມເຫັນເດ່ນຫຍ້າສີຂົມອ້ອຍໆ ທີ່ແຈ້ງສະຫວ່າງດີ ຕ້ຽຢູ່ລະຫວ່າງກ້ຽງພຸ່ມໄມ້ນັ້ນ. ຢູ່ແຫ່ງນັ້ນ ມີໄມ້ສອງທ່ອນ: ທ່ອນຫນ້ຽງຕ່ຳ ແລະທ່ອນຫນ້ຽງສູງ; ທ່ອນຕ່ຳນັ້ນ ໄຊ້ເປັນຕັ່ງນັ່ງ ສ່ວນທ່ອນສູງນັ້ນເຮັດເປັນໂຕະ.

-ບ່ອນເຮັດວຽກ ຢູ່ໃນປ່າຂອງສະຫາຍໃດຫັ້ນ, - ເອເມລີອານີບເວົ້າຂຶ້ນ. ມັນເປັນບ່ອນທີ່ລຶກລັບທ້ຽງນບສະຫງັດ ແລະ ຄວາມຄິດກໍປອດໂປ່ງດີອີກດ້ວຍ.

ພາຍຫລ້ຽງທີ່ໄດ້ນົນນັດຈັດແຈ້ງຕູບເປັນທີ່ຮນ້ອຍແລ້ວ, ເອເມລີອານີບ ຈ້ຽງເດີນທ້ຽງກັບເມືອບ້ານ. ລະລາດີເມຍ ອີລີຊ ໄດ້ອອກມາສ້ຽງຮອດແຄມຫນອງ. ເພ້ນຢ້ຽນແນມ ນຳ ຈົນວ່າເງົາຂອງເຮືອ ໄດ້ຫາຍລັບໄປ ແລ້ວຈ້ຽງຟ້າວກັບຄືນເມືອບ່ອນ "ເຮັດວຽກ" ຂອງຕົນ. ເພ້ນຈັບເອົາປ້ຶມປົກສີຂຽວຂ້ຶ້ນມາຂົນວ່າ ບັນດາກຳມະກອນ ຕ້ອງຕໍ່ສູ້ແບບພະເດັດການກຳມາຊີບຄືແນວໃດ* ແລະ ຕ້ອງກໍ່ສ້ຳງລັດຂອງພວກຕົນຄືແນວໃດ.

ນາຍຊ່ຳງດ້ຽງເຕ້ຽຢູ່ຫ້ອລິດໄຟຫນ້ຽງເລກ ๘๙

ນັບວ່າໂຊກດີ ທີ່ທ້ຽງຄະນະບໍລິຫານງ້ຽນໄດ້ຕົກລ້ຽງຊຸກເຊ່ືອງເລນິນໄວ້ທັນເວລາເພາະໃນຄ້ຳນັ້ນ, ພາຍຫລ້ຽງທີ່ ເລນິນ ໄດ້ອອກ ຈາກເຮືອນໄປ ພວກນັກຮົນທະຫານ ກໍຂ້ຶ້ນ ຫອບເຂ້ົ້ານ ເພ່ືອຊອກຫາ ເລນິນ.

---

*ປ້ຶມ "ລັດແລະການປະຕິວັດ".

ແຕ່ ເລນິນ ໄດ້ອອກໄປຢູ່ໄນຕູບນ້ອຍ ຂ້າງຫນອງນ້ຳ ຣາສະລິບ ພໍແຮງແລ້ວ, ດັ່ງ ນັ້ນ ຈ່ຳບ່ເນີຫຍັງເກີດຂຶ້ນແກ່ເພິ່ນ: ມີແຕ່ພວກຍຸງເທົ່ານັ້ນທີ່ບໍ່ປ່ອຍໃຫ້ເພິ່ນໄດ້ ຢູ່ ຢ່າງສະ ຫງົບ. ຫມູ່ຍຸງ ໄດ້ຂົບກັດຢູ່ຕະຫລອດມື້ຕະຫລອດຄືນ. ວະລາດີເມຍ ອີລີຊ ກົກຍຸງກັດ ຫລາຍ ຈົນເພິ່ນເວົ້າອອກມາວ່າ:

-ຫນີຈາກລັດກະບານຊ່ວຄາວແລ້ວ ຍັງບໍ່ແລ້ວ, ແຕ່ພັດມາພົບກັບພວກຍຸງອີກ.

ບາງຄັ້ງ ກ່ໍມີຝົນຕົກລົນແກ່ຍົດແກ່ຍາວ ບ່ໍຈັກວ່າເທົ່າໃດມື້ ແລະ ໃນເວລານັ້ນກ່ໍຕ້ອງ ໄດ້ນັ່ງ ຢູ່ແຕ່ໃນຕູບເທົ່ານັ້ນ. ມີບາງຄັ້ງຝົນຕົກແຮງ ຈົນບ່ໍມີຣອດບ່ອນພໍທີ່ຈະດ້ັງໄຟ ເພ່ືອ ຕົ້ມນ້ຳຊາແລະຝ້ັງ. ແຕ່ ວະລາດີເມຍ ອີລີຊ ກ່ໍບ່ເຄີຍວ່າ ຈະທ້ໍຖ້ອຍໃຈແຕ່ຢ່າງໃດ. ວຽກ ງານຂອງ ວະລາດີເມຍ ອີລີຊ ມີຫລາຍທ່ີສຸດ. ເພິ່ນທ້ັງຂຽນບົດໃຫ້ຫນ້ັງສ່ືພິມ, ທ້ັງ ຂຽນປ້ົມ, ຊ້ືນ່ຳນ່ຳພາກອງປະຊຸມໃຫຍ່ຂອງພັກໂບນເຊ່ວິກນ່ຳອີກ. ຢູ່ ເປໂຕຣກຣາດ ໄດ້ ມີການເປ່ີດກອງປະຊຸມໃຫຍ່ຄ້ັງທ່ີ VI ຂອງພັກ ໂບນເຊ່ວິກຂ້ຶນ. ບັນດາສະຫາຍທ້ັງຫລາຍ ຕ່າງກ່ໍໄດ້ມາພົບ ເລນິນ ຢ່າງລັບໆ. ໂດຍຜ່ານທາງສະຫາຍເຫລ່ົານ້ັນ, ວະລາດີເມຍ ອີລີຊ ໄດ້ຝາກຄວາມຄິດຄວາມເຫັນແລະຄ່ຳລາຍງານຂອງຕົນ ມາຍັງກອງປະຊຸມໃຫຍ່.

ວະລາດີເມຍ ອີລີຊ ໄດ້ເວ້ົາວ່າ: ຕ້ອງກະກຽມການລຸກຮ້ົ ຕ່ໍສູ້ດ້ວຍກ່ຳລ້ັງອາວຸດ ເພ່ືອ ຍາດເອົາອ່ຳນາດ ດ້ວຍກ່ຳລ້ັງແຮງຂອງຊ້ືນຊ້ັນກ່ຳມາຊ້ີບ ທ່ີເປ້ັນພັນທະມິດກັບຊາວນາຜ້ ທຸກຍາກນ້ັນ. ອັນນ້ັນແມ່ນພາລະຫນ້າທ່ີອ້ັນໃຫຍ່ຫລວງທ່ີ ວະລາດີເມຍ ອີລີຊ ໄດ້ນ່ຳ ເອົາມາສະເຫນີຕ່ໍກອງປະຊຸມໃຫຍ່. ທາງກອງປະຊຸມໃຫຍ່ດ້ັງກ່າວກ່ໍໄດ້ສະແດງຄວາມເຫັນ ດີເຫັນພ້ອມນ່ຳ ເລນິນ. ກອງປະຊຸມໃຫຍ່ໄດ້ຮ່ວມຮ້ອງ: "ຢູ່ໃນນ້ັນສູ້ຣົບນ້ີ, ພັກເຮົາຈ່ໍາ ຍກສູ້ງຄົນທຸກກ່ໍຂຽນຢ່າງອ່ຽງອາດ ... ຈົນເວລາແຫ່ງຄວາມພ່ຽພ່ນາດຂອງລະບອບເກ່ານ ໄດ້ມາເກ່ືງແລ້ວ".

ລັດກະບານຊ່ວຄາວຂອງພວກນາຍທຶນ ເກີດມີຄວາມຢ້ານກົວ ແລະ ສຸດທ່ີຄ່ວຄ້ ໃຫ້ແກ່ ເລນິນ, ເພາະພວກນ້ັນຮູ້ວ່າ ເລນິນ ເປ້ັນຜ້ ຊ້ືນ່ຳນ່ຳພາພັກ ດ້ວຍຄວາມອ່ຽງອາດ ກ້າແກ່ນ ແລະ ເດ້ັດດ່ຽວທ່ີສຸດ. ເພ່ືອຕ່ິດຕາມຊອກຈັບ ເລນິນ ລັດກະບານຊ່ວຄາວ

293

ໄດ້ຊຸບລ້ຽງພ້ອມກັບກຶບສອດແນມໄວ້ເປັນຈຳນວນຮ້ອຍໆຄົນ.

ອະລາດິເມຍ ອີລີຊ ອາໃສຢູ່ໃນຕູບ ແບບສ່ຽງໄພທີ່ສຸດ. ຍາມນັ້ນອາກາດ ໄດ້ເລີ່ມ ເຂົ້າສູ່ ລະດູໃບໄມ້ຫລົ່ນແລ້ວ. ດັ່ງນັ້ນໃນຕອນຄ່ຳຄືນ ຈ່ຳມີອາກາດເຢືອກເຢັນແລະມີເວລາ ຍາວກວ່າກາງເວັນ, ຝົນກໍຕົກຢ່າງບໍ່ມີຍານເອື້ອນ, ຕາມປ່າປຸກອຶບຢູ່ຍາກ.

ຄະນະບໍລິຫານງານ ຈ່ຳໄດ້ຕົກລົງໃຫ້ຍົກຍ້າຍ ເລນິນ ອອກຫນີຈາກຕູບດັ່ງກ່າວ, ເພື່ອ ໄປຢູ່ບ່ອນທີ່ໄກກ່ວານັ້ນອີກ.

ມື້ຫນ່ຶງ ເອເມລິອານິບ ໄດ້ໄປຮອດໂຮງງານຜະລິດອາວຸດຕັ້ງແຕ່ເຊົ້າໆ, ແລະໄດ້ເຂົ້າໄປ ໃນຫ້ອງຜູ້ອຳນວຍການ. ແຕ່ເລື່ອງໃດຍາມເຊົ້າໆແບບນີ້ ຜູ້ອຳນວຍການຈະທັນມາເຮັດ ວຽກ? ເປັນທີ່ແນ່ນອນວ່າ ມັນບໍ່ອາດເປັນໄປໄດ້ ທີ່ຜູ້ອຳນວຍການຈະມາຫ້ອງການແຕ່ເຊົ້າ ແບບນີ້! ສ່ວນ ເອເມລິອານິບ ກໍຮູ້ຢູ່ຄືກັນ. ຄືນຍາມທີ່ລ້ຽງແກ່ວນໄດ້ອະນຸຍາດໃຫ້ເຂົາເຂົ້າ ໄປໃນຫ້ອງເຮັດວຽກ ເພາະວ່າ ເອເມລິອານິບສາມາດຊອກຫາຂໍ້ອ້າງອື່ງໄດ້. ສ່ວນຄວາມ ເປັນຈິງແລ້ວ ແມ່ນເຂົາຕ້ອງການຢາກເຂົ້າ ໄປຊອກຫາຫນັງສືເດີນທາງ ເພື່ອຈະຂ້າມຊາຍ ແດນ ໄປຍັງປະເທດ ເຟ່ງລັ່ງ. ເພາະວ່າໃນຕອນນັ້ນ ມີ ກຳມະກອນຂອງໂຮງງານຈຳນວນ ຫນ່ຶງ ໄດ້ອາໃສຢູ່ຍັງເຂດ ທີ່ຂຶ້ນກັບປະເທດ ເຟ່ງລັ່ງ, ດັ່ງນັ້ນ ຜູ້ອຳນວຍການ ຈ່ຳໄດ້ ອອກຫນັງສືເດີນທາງໃຫ້ພວກເຂົາ ເພື່ອເປັນການສະດວກໃນການໄປມາ. ຫນັງສືເດີນ ທາງກອງກ້ຳມຊະຊາຍຢູ່ເທິງໂຕະຂອງຜູ້ອຳນວຍການ. ເອເມລິອານິບ ເດ່ນ້ຳໄປຈັບເອົາມາພັບ ແລ້ວຍັດເຂົ້າກ້ຽງສອງສາມໃບ. ຈາກນັ້ນກໍອອກເດີນທາງໄປຫາ ເລນິນ ຢູ່ທີ່ຕູບ. ດັ່ງນັ້ນ ອະລາດິເມຍ ອີລີຊ ຈ່ຳໄດ້ປອມໂຕເປັນ ກ້ຽສະຕ້ຽຕິນ ເປໂຕຣວິກ ອີວານິບ. ເພິ່ນໄດ້ ແກຫນວດອອກຢ່າງລະອຽດ, ດັດແປງຂົນຄິ້ວ ແລ້ວເອົາຜົມປອມມາໃສ່. ເພິ່ນສຸບຫມວກ ແງບ, ນຸ່ງອຍຜົມແຍ່ລ້ຽງມາປົກຫນ້າຜາກ. ສ່ຽງທ້ຽງຫນ້ານີ້ ແມ່ນບໍ່ໄດ້ເຮັດໃຫ້ເພິ່ນຄືກັບ ເລນິນຈັກຄ້ຳ. ແມ້ແຕ່ ນາເດສະດາ ກ້ຽສະຕ້ຽຕິນບນາ ເອງ ກໍຍັງຈ່ຳບໍ່ໄດ້ ກັບບ່ອນນັ້ນ ໂລດ.

ໃນຕອນເດິກທ່ຽງຄືນ, ພວກເຂົາເຈົ້າໄດ້ພາກັນ ອອກຫນີຈາກຕູບນ້ອຍຂ້າງຫນອງ

ຣາສະລິບ ເພື່ອ ມຸ້ງຫນ້າໄປຫາທາງລົດໄຟ. ເອເມລິອານິບ ພ້ອມທັງ ຄົນເຝົ້າລ້ຽງສອງ ຄົນ ເປັນຜູ້ນຳພາທາງ ຈະລາດີເມຍ ອີລີຊໄປ. ຕອນທຳອິດ ພວກເຂົາເຈົ້າພາກັນໄປຢ່າງ ສະດວກສະບາຍ. ພວກເຂົາເຈົ້າພາກັນຍ່າງເປັນແຖວຫນຶ່ງແລະ ເລາະລົງໄປຕາມເສັ້ນທາງ ນ້ອຍໆ. ຕໍ່ມາ ພວກເຂົາເຈົ້າກໍໄດ້ເຂົ້າສູ່ເສັ້ນທາງທີ່ຣົກເຮ້ຍໄປດ້ວຍກ້ຳໄມ້ນ້ອຍ, ມີບາງຄັ້ງ ພວກເຂົາເຈົ້າກໍຕ້ຳສະດຸດກ້ອນດິນ. ເມື່ອຫ ວົດຈາກທາງຮ່ອມໄປແລ້ວ ຕົ້ນໄມ້ກໍປະກົດວ່າ ຫ່າງໆອອກ. ມີແຕ່ພຸ່ມຫຍ້ານ້ອຍ ເທົ່ານັ້ນ ທີ່ເຮັດໃຫ້ພວກເຂົາໄປຍາກ. ໂອ້! ແມ່ນ ຫຍັງອັນນັ້ນ? ມີຄວັນໄຟພຸ່ງຂຶ້ນ ຫລືວ່າ ມີໄຟໄຫມ້ປ່າບໍ? ຍ່າງໄປເທົ່າໃດ ຄ້ວນດັ່ງກ່າວ ກໍຍິ່ງຊິວ ແລະ ມືດມົວເຂົ້າກ່ວາເກົ່າ ຈົນຮູ້ສຶກວ່າຫັນໃຈຍາກ ແລະ ແສບຕາ.

-ແວ່ໄປທາງເບື້ອງນັ້ນເທາະ, - ເອເມລິອານິບ ເວົ້າຂຶ້ນ. - ໄຟໄຫມ້ກ່ານດິນຢູ່ໃນ ນີ້ງ.

ບໍ່ມີຫຍັງທີ່ຈະເປັນຕາຢ້ານໄປກ່ວາການໄດ້ພົບກອງໄຟໄຫມ້ກ່ານດິນແບບນີ້. ໄຟລຸກ ໄຫມ້ກຸ່ນໆຢູ່, ພົ້ນດິນກໍຮ້ອນ ພ້ອມທັງແຜ່ລາມອອກໄປໄກໆອີກ. ບຶດຫນຶ່ງ ກໍມີໄຟລຸກ ວາບຂຶ້ນເປັນແປວສູງໆ, ແລ້ວຈູດເຜົາລາມລຸກໄປທົ່ວບໍລິເວັນໃກ້ຄຽງນັ້ນ.

-ຈະລາດີເມຍ ອີລີຊ, ນຳ້ຂ້ອຍມາ, ສະຫາຍ ...

ພວກເຂົາເຈົ້າ ຕ່າງຄົນຕ່າງກໍຫາຍໃຈຝືດ, ງົມຫາວໄປໃນທ່າມກາງຄ້ວນໄຟສີຂາວບໍ່ ຕ່າງຫຍັງກັບຄົນຕາບອດ. ພວກເຂົາເຈົ້າງົມໆຫາວໆທັງຕ້ຳສະດຸດລົ້ມ, ແລ້ວກໍລຸກຂຶ້ນບິນ ໄປຕໍ່. ແຕ່, ທັ້ນເດ ຄ້ວນໄຟໄດ້ເບົາບາງລົງແລ້ວເດ. ຄ້ວນດັ່ງກ່າວ ໄດ້ຫຍັບກ້ອຍໄປ ທາງເບື້ອງຫລັງເລັ້ຍໆ. ຢູ່ທາງພົ້ນຕີນ, ບໍ່ມີດິນເປັນກ້ອນຂ້ຫລໍ້ແຂ້ແຫລ້ອີກແລ້ວ. ພວກເຂົາເຈົ້າໄດ້ຫລຸດພົ້ນອອກຈາກບ່ອນໄຟໄຫມ້ນັ້ນແລ້ວ.

ຍ້ອນຄວາມອິດເມື່ອຍ, ພວກເຂົາເຈົ້າ ໄດ້ພາກັນນັ່ງເຊົາພັກຜ່ອນ. ຕີນທັ້ງສອງເບື້ອງ ສັ່ນເຊັ້ນດ້ວຍຄວາມອິດເມື່ອຍ.

ຄືນຕໍ່ມາ, ເວລາຫນຶ່ງໂມງກັບສິບຫ້ານາທີ, ຂະບວນລົດໄຟ ຊຶ່ງຂົນຜູ້ໂດຍສານທີ່ໄປ ພັກແລ້ງຢູ່ ເປໂຕຣກຣາດ ກຳລັງມຸ້ງຫນ້າເຂົ້າສູ່ສະຖານີລົດໄຟ ອູແດນນາ. ຂະບວນລົດ

ດ່ງກ່າວຈະເດີນທາງໄປ ແຟ້ງລ້ຽ. ຜູ້ຂບລົດ ແມ່ນ ກູໂກ ອິຍາລາວາ, ຄົນແຟ້ງລ້ຽ. ເຂົາເປັນນັກ ໂບນເຊວິກ ຜູ້ຫນຶ່ງ ຊຶ່ງອາໃສຢູ່ເມືອງ ເປໂຕຣກຣາດນັ້ນເອງ. ເຂົາ ມີຄວາມຮັກແພງ ຢູ່ກັບຫົວລົດໄຟຫມາຍເລກ ຣ໐໓, ຊຶ່ງມີທໍ່ຄ້ວນສີດໍາ, ປາຍເຫລື ແລະຮ່າງກົມງັ້ນ. ເມື່ອມາຮອດສະຖານີ ອຸແດນນາ, ກູໂກອິອາລາວາ ໄດ້ນໍາຫົວລົດຂອງ ຕົນ ມາຈອດຢູ່ຂ້າງທາງທີ່ຕັດຜ່ານກັບທາງລົດໄຟັ້ນໂລດ. ເຂົາໄດ້ໃຊ້ສາຍຕາ ແນມອອກ ໄປທາງນອກ. ແລະກໍຢູ່ທີ່ຂ້າງທາງ ມີຄົນຜູ້ຫນຶ່ງ ກໍາລັງຍືນດູດຢາຢູ່, ແສງໄຟຈາກປາຍ ກອກຢາ ຕອນດູດເປັນແສງຮຸ່ງມາບໆ. ອີກຜູ້ຫນຶ່ງ ກໍາລັງຍືນອ່ານຫນັງສືພິມຢູ່ ຂ້າງ ຫລັກເສົາໄຟ. ນັ້ນແມ່ນ ສັນຍານລັບ. ຫມາຍຄວາມວ່າ ທຸກຢ່າງ ເປັນໄປດ້ວຍຄວາມ ຮຽບຮ້ອຍແລ້ວ. "ຄົນຊັ້ນ ແມ່ນ ເລນິນ ຍືນຢູ່ໃສ?" - ກູໂກ ອິອາລາວາ ເລີ່ມມີຄວາມ ເປັນຫ່ວງຂຶ້ນມາ.

ພໍດີໃນເວລານາທີ່ນັ້ນ, ນິນາຍຊ່າງແຂງແຮງຜູ້ຫນຶ່ງ, ຮູບຮ່າງຕໍ່າເກົ່ງ, ຍ່າງເຂົ້າໄປ ຫາຫົວລົດໄຟດ້ວຍຄວາມອ່ອງໄວ. ຄົນຜູ້ນັ້ນ ໃສ່ຫມວກແກບ, ນິຍອຍ ຜິນສີຫມາກກໍ່ ຍ່ອນລົງເທິງຫນ້າຜາກ. ນາຍຊ່າງດ່ງກ່າວ ໃຊ້ມືຈັບຮາວ ແລ້ວ ບ້ຽນໂຕປີນຂຶ້ນໄປເທິງ ຫົວລົດໄຟ:

-ສະບາຍດີສະຫາຍ, ຂ້ອຍແມ່ນ ອິວານົບ ມາເປັນຊ່າງດ່ງເຕ່ຍຢູ່ຫົວລົດໄຟຂອງ ສະຫາຍ.

-ສະບາຍດີສະຫາຍຊ່າງ, - ກູໂກ ອິອາລາວາ ກ່າວສະບາຍດີນ.

ຊ່າງດ່ງເຕ່ຍດ່ັ່ງກ່າວ ກໍແມ່ນ ອະລາດີເມຍ ອີລິຊ ນັ້ນເອງ, ເພິ່ນແກ້ເສື້ອໃຫຍ່ອອກ, ແລ້ວເລີ່ມຂຶ້ນຟ້ນຢູ່ຂ້າງເຕ່ຍເຂົ້າໃສ່ໃນຮູເຕ່ຍນ້ອຍໆ, ເບິ່ງແລ້ວ ບໍ່ຕ່າງຫຍັງກັບຊ່າງດ່ງເຕ່ຍ ບໍ່ມີຜິດເລີຍ. ຫົວລົດໄຟ ໄດ້ສົ່ງສຽງໂຫວດຂຶ້ນບາດັ້ນໆແລ້ວກ່ຽງເຫລັກ ກໍເລີ່ມເຄື່ອນ ຍ້າຍ, ແລະໄດ້ແລ່ນຜ່ານເຂົ້າໄປໃນປ່າ.

ບິນເສັ້ນທາງໄປສູ່ສະຖານີລົດໄຟ ດອນຂາວ ບໍ່ມີເຫດການອັນໃດ ທີ່ເປັນຫນ້າວິຕົກ ເກີດຂຶ້ນ, ດອນຂາວ ແມ່ນສະຖານີລົດໄຟທີ່ຕິດກັບຊາຍແດນ. ຢູ່ທີ່ສະຖານີລົດໄຟດ່ັ່ງກ່າວ

ພວກຕຳຫລວດ ແລະ ພວກນັກຮົບທະຫານໄດ້ເລາະລົບໄປມາລຸດໆລ້ຽງໆ. ພໍແຕ່ຂະ ບວນລົດໄປຮອດ, ພວກເຂົາກໍຟ້າວຂຶ້ນໄປກວດ ຫນ້າສິເດີນທາງ ຢູ່ຕາມແຕ່ລະຕູ້ລົດ, ຟ້າສຽງຫມາກະຫວີດດັງຟົດສະນັ່ນນັ່ນນອງ. ພະນັກງານທາງລົດໄຟ ຜູ້ຫນຶ່ງ ຈັບຕະກຽງ ທີ່ມີແສງແຫມບໆເລາະຕາມຂະບວນລົດດ້ວຍຄວາມຟ້າວຟັ່ງ. ບໍ່ຈັກສຽງຮ້ອງ, ສຽງດ່າ ດັງ ຟົດສະນັ່ນຢ່ທົ່ວທຸກບ່ອນ.

-ເຮັດຈັ່ງໃດ ກໍຂໍຢ່າໃຫ້ພວກມັນ ມາຮອດຫົວລົດໄຟພີ້ທ້ອນ. -ກູໂກ ອິອາລາວາ ເວົ້າຂຶ້ນ ດ້ວຍຄວາມເປັນຫ່ວງ. -ເຖິງວ່າຈະມີຫນ້າສິເດີນທາງກໍຕາມ, ແຕ່ທາງທີ່ດີ ກໍຄວນຫລີກຈາກພວກນັກສຶບໃຫ້ໄກໆຫັ້ນແລ້ວ.

ກູໂກ ອິອາລາວາ ເຕັ້ນລົງລົດໄຟແລ້ວ ປົດຫົວລົດໄຟອອກຈາກຂໍ່ຕໍ່ນັ້ນດ້ວຍຄວາມ ວ່ອງໄວ. ແລ້ວກໍປ່ອຍອາຍນ້ຳອັ້ນມຶດມົວນັ້ນອອກ ແລະຍູ້ຫົວລົດໄປໃສ່ນ້ຳຕົ້ມ, ເຮັດທ່າ ທ່າຄືວ່າຈະເອົານ້ຳຕົ້ມໃສ່ໃຫ້ເຕັ້ມ.

ສຽງລະຄ້ຳສັນຍານເທື່ອທີສອງດັງຂຶ້ນ. ແຕ່ຫົວລົດໄຟທີ່ຈອດໃສ່ນ້ຳຢູ່ເສົານ້ຳກໍຍັງບໍ່ ທັນກັບມາ. ຈົນຮອດເວລາກ່ອນອອກເດີນທາງຫນຶ່ງນາທີພໍ, ກູໂກ ອິອາລາວາ ຈຶ່ງເອົາ ຫົວລົດຫມາຍເລກ ๔๙ ຂອງຕົນກັບມາຕໍ່ໃສ່ຕູ້ລົດໄຟ. ສຽງລະຄ້ຳສັນຍານດັງຂຶ້ນເປັນ ເທື່ອທີສາມ. ທາງຫົວລົດໄຟເລີ່ມສົ່ງສຽງໂຫວດທ້າທາຍຂຶ້ນ. "ກຶກຕິບຕາແລ້ວລະ, ພວກ ເພື່ອນທີ່ຮັກເອີ່ຍ!" -ກູໂກ ອິອາລາວາ ເວົ້າເຍາະເຍີ້ຍພວກຕຳຫລວດແລະ ພວກນັກ ຮົບທະຫານຢູ່ໃນໃຈ. ແລະຈາກນັ້ນ ຂະບວນລົດ ກໍໄດ້ເລີ່ມແລ່ນໄປດ້ວຍຄວາມໄວຂຶ້ນ. ເງົາມືດໄດ້ຄຸກຄາມເຂົ້າມາ ... ທ້ອງຟ້າເດືອນແປດ ເຕັ້ມໄປດ້ວຍດວງດາວ. ອະລາດີເມຍ ອີລີຊ ປ່ອນຫົວອອກ ຈາກຫ້ອງຂັບ. ກະແສລົມເຢັນໄດ້ພັດມາຕ້ອງໃບຫນ້າຂອງ ເພິ່ນ.

ຫນ້ອຍຫນຶ່ງຕໍ່ມາ ພວກເຂົາເຈົ້າກໍໄດ້ເຂົ້າສູ່ເຂດປະເທດເພື່ອງລັງ.

ຢູ່ນະຄອນຫລວງ ແຮນຊີກີ ຂອງປະເທດ ເຟ່ງລັ່ງ, ຫົວຫນ້າຕໍາຫລວດສະໄຫມ ນັ້ນ ເປັນຊາຍຫນຸ່ມຊື່ວ່າ ໂຮວິໂອ. ມື້ຫນຶ່ງ ໂຮວິໂອ ກັກເອົາຂຶ້ນໄປພົບກັບເຈົ້າແຂວງ. ເຈົ້າແຂວງພັດເປັນຄົນ ລັດເຊຍ, ເພາະວ່າ ໃນເວລານັ້ນ ປະເທດ ເຟ່ງລັ່ງ ຍັງກ່ວ່າ ແມ່ນພາກສ່ວນຫນຶ່ງ ຂອງປະເທດລັດເຊຍຄືກັນ.

ເຈົ້າແຂວງ, ນັ່ງເຮັດໂຕຊີຢູ່ຄຽງໄມ້, ຍົກບ່າຂຶ້ນໃຫ້ຊ້ໍ ແລ້ວ ເວົ້າຂຶ້ນຄ່ອຍໆດ້ວຍ ກອຍທ່ານອ່ອນວ່ານໃຫ້ຊູແດ:

-ມີຄໍາສັ່ງລັບມາແຕ່ ເປໂຕຣກຣາດ.

-ຂໍປະຕິບັດຕາມຄໍາສັ່ງ, -ຫົວຫນ້າຕໍາຫລວດ ຕອບ.

-ເຈົ້າຮູ້ບໍ່ວ່າ ເລນິນ ແມ່ນໃຜ? -ເຈົ້າແຂວງຖາມຂຶ້ນ. ໂຮວິໂອ ສະແດງອາການ ເກີກະຫນ້ອຍຫນຶ່ງ, ແລ້ວເອົາມືລູບຫນວດທີ່ເກແລ້ວ, ຈາກນັ້ນຈຶ່ງຕອບວ່າ ແນ່ນອນຮູ້ແທ້! ເພາະວ່າຫນັງສືພິມທຸກສະບັບ ກໍໄດ້ລົງຂ່າວວ່າ ລັດຖະບານ ຊົ່ວຄາວ ຕ້ອງການຈັບ ເລນິນ, ແຕ່ຊອກຫາໂຕບໍ່ພົບ.

-ມີຂໍ້ສົງໄສໃດ ... ເຈົ້າແຂວງເລີ່ມເວົ້າຂຶ້ນ, ມີການສົງໄສວ່າ ເລນິນອາດຈະລີ້ຊ່ອນ ຢູ່ ແຮນຊີກີ ນີ້.

ໂຮວິໂອ ມິດບໍ່ປາກ ພ້ອມທັງແນມເບິ່ງເຈົ້າແຂວງ ເຫມືອນກັບວ່າ ກໍາລັງລໍຖ້າສິ່ງ ໃດສິ່ງຫນຶ່ງ ທີ່ຈະເກີດຂຶ້ນ.

-ທ່ານຕ້ອງດໍາເນນ ທຸກວິທີການດ່ວນທີ່ສຸດ.

-ຮັບທ່ານເຈົ້າແຂວງ, ເລື່ອງນີ້ຈໍາເປັນແທ້ບໍ?

-ຖ້າວ່າ ເລນິນຫາກຕົກຢູ່ໃນກໍາມືຂອງທ່ານເດ ...

-ຖ້າວ່າ ເລນິນຫາກຕົກຢູ່ໃນກໍາມືຂອງຂ້ອຍ, ຂ້ອຍຂໍປະຕິບັດທຸກວິທີການທີ່ຈໍາເປັນ.

-ຖ້າຈັບ ເລນິນ ໄດ້ ກໍຈະໄດ້ລາງວັນ, -ເຈົ້າແຂວງກ່າວຊຸກຍູ້ດ້ວຍທ່າທີທີ່ສຸພາບດີ.

ໂຣວີໂອ ກ່າວຄຳອຳລາ ແລ້ວກໍອອກຈາກຫ້ອງເຮັດວຽກຂອງເຈົ້າແຂວງໄປ. ເຫົ່ອເມັດ ບັກໃຫຍ່ ໄດ້ໄຫລຍ້ອຍລົງຕາມຂະຫນັບທັງສອງເບ້ືອງ. ໂຣວີໂອ ຈັບເອົາແພຜ້ືນບັກໃຫຍ່ ທ່ີມ້ືຮູບລາຍການໂຣ ຂ້ຶນມາເຊັດເຫົ່ອຢູ່ຂະຫນັບ.

ອອກຈາກເຮ່ືອນເຈົ້າແຂວງແລ້ວ, ເຂົາບ່ໍໄດ້ກັ່ງໄປສຳນັກຂອງຕົນໂລດ, ແຕ່ພັດລັດໄປ ທາງສະຖານ້ີລົດໄຟພຸ້ນ. ຍ້ັງອີກດ້ົນເດ້ີບ ຂະບວນລົດຂ້ົນສົ່ງຫນັງສ ືແຮນຊ ິກ ິເປໂຕຣກຣາດ ຈ່ົງຈະເລ ່ືອນອອກເດ ີນທາງ, ແຕ່ຂະບວນຕ ູ້ລົດດັ່ງກ່າວ ໄດ້ກຽມພ ້ອມຢ ູ່ແລ ້ວ. ທ ີ່ ເດ ີ່ນຂອງສະຖານ ້ີລົດໄຟ ມ ີຄົນສ ົ່ງຈົດຫມາຍທ ີ່ສ ັ້ງກັດຢ ູ່ໃນຂະບວນລົດໄຟຊ ຶ່ງມ ີໃບຫນ ້າເຍ ັ້ນ ຊາ ແລະ ຊ ິງອ ິດນອນຜ ູ້ຫນ ຶ່ງ, ກ ຳລ ັງຍ ືນລ ໍ ້ຖ ້າ ໂຣວ ີໂອ ຢ ູ່. ຄ ້າຍຄ ືກ ັບວ ່າ ໃນຕະ ຫລອດຊ ົ ່ວ ີ ວ ິ ້ ຄ ົ ່ ຈ ະ ບ ໍ ່ ມ ີ ສ ິ ່ ງ ໃ ດ ທ ີ ່ ຈ ະ ສ າ ມ າ ດ ເ ຮ ັ ດ ໃ ຫ ້ ເ ຂ ົ ້ ຜ ູ ້ ນ ີ ້ ປ ະ ຫ ລ າ ດ ໃ ຈ ຕ ໍ ່ ສ ິ ່ ງ ໃ ດ ສ ິ ່ ງ ຫ ນ ຶ ່ ງ ໄ ດ ້ . ພ ວ ກ ເ ຂ ົ ້ າ ພ ັ ກ ນ ຢ ່ າ ງ ເ ຈ າ ະ ຄ ຽ ງ ຄ ູ ່ ກ ັ ນ ໄ ປ ຕ າ ມ ແ ຄ ມ ເ ດ ີ ່ ນ ຂ ອ ງ ສ ະ ຖ ານ ີ ລ ົ ດ ໄ ຟ ຢ ່ າ ງ ຊ ້ າ ໆ . ເ ມ ່ ື ອ ໄ ດ ້ ໂ ອ ກ າ ດ ອ ັ ນ ເ ຫ ມ າ ະ ສ ົ ມ , ໂ ຣ ວ ີ ໂ ອ ກ ໍ ພ ້ າ ວ ຈ ົ ກ ຫ ໍ ່ ອ ັ ນ ຫ ນ ຶ ່ ງ ອ ອ ກ ມ າ ຈ າ ກ ກ ົ ງ ແ ລ ້ ວ

ມອບໃຫ້ຄົນສົ່ງຫນັງສືຜູ້ນັ້ນ. ຄົນສົ່ງຫນັງສືຜູ້ນັ້ນ ກໍພ້ອງຈັບເອົາຫໍ່ດັ່ງກ່າວຍັດເຂົ້າໃສ່ໃນເອິກເສື້ອຢ່າງວ່ອງໄວ.

-ນັ້ນແມ່ນຈົດຫມາຍຂອງຜູ້ເກົ່າ ແລະທີ່ຢູ່ບ່ອນເກົ່ານັ້ນແລ້ວ. -ໂຣວິໂອ ເວົ້າຂຶ້ນ.

-ເຂົ້າໃຈ, -ຄົນສົ່ງຫນັງສືຫັນເວົ້າແລະພ້ອມຫັນມອບຫໍ່ຂອງອັນຫນຶ່ງໃຫ້ແກ່ໂຣວິໂອອີກ. ໂຣວິໂອ ກໍພ້ອງ ເຊື່ອງເອົາຫໍ່ດັ່ງກ່າວໄວ້ໂດຍໄວ. ຈາກນັ້ນ ພວກເຂົາກໍໄດ້ຈັບມືອໍາລາກັນໄປ.

ແຕ່ຈົນມາຮອດເທົ້າປານນີ້ ຫົວຫນ້າຕໍາຫລວດຜູ້ນີ້ ກໍຍັງບໍ່ໄດ້ກັບໄປບ່ອນເຮັດວຽກ-ຂອງຕົນ.

ເຂົາເວົ້າໄປໃນຮ້ານຂາຍອາຫານ, ຊື້ໄຂ່ໄກ່ສິບຫນ່ວຍ, ເຂົ້າຈີ່ຂາວ ແລະເນີຍຫນຶ່ງຕ່ອນ.

-ບາດນີ້ ກັບເມືອເຮືອນໄດ້ແລ້ວ, -ໂຣວິໂອ ຄຶດຢູ່ໃນໃຈ. ເຂົາພະຍາຍາມຍ່າງຫລີກເສັ້ນທາງກາງເມືອງແລະກ້ອມມາຕາມທາງຮ່ອມນ້ອຍອ້ອມໄປວນມາດົນພໍສົມຄວນ. ເວົ້າລວມແລ້ວ ຖ້າຫາກມີໃຜຕິດຕາມສັງເກດເບິ່ງເຂົາແລ້ວ, ກໍອາດຈະເຂົ້າໃຈເຂົາຍາກຄືກັນ. ແຕ່ຈະມີຜູ້ໃດໄປຕິດຕາມຫົວຫນ້າຕໍາຫລວດຈັກເທື່ອ, ເພາະຫນ້າທີ່ວຽກງານຂອງເຂົາ ມີແຕ່ຕິດຕາມເບິ່ງວ່າ ເຮັດຈັ່ງໃດຈຶ່ງຈະໃຫ້ທຸກສິ່ງທຸກຢ່າງຢູ່ໃນຕົວເມືອງ ເປັນລະບຽບຮຽບຮ້ອຍເທົ່ານັ້ນ.

-ຄໍາສັ່ງພິເສດຊັ້ນຫວະ? ເຊີນສັ່ງມາໂລດ! -ເຂົາຫວນຄຶດເກົ່ງຕອນໂອ້ລົມກັບເຈົ້າແຂວງ, ຂະນະທີ່ເຂົາກໍາລັງຂຶ້ນຂັ້ນໄດໄປບ່ອນຢູ່ຂອງຕົນເຊິ່ງຕັ້ງຢູ່ຊັ້ນຫ້າຂອງເຮືອນໃຫຍ່ຫລັງຫນຶ່ງ ໃກ້ສະຫນາມຫລວງ ຣາເກີເນດ, ຢູ່ແຫ່ງນັ້ນມີຫ້ອງສະເພາະຂອງເຂົາຫ້ອງຫນຶ່ງ, ປະກອບມີຫ້ອງເຮືອນຄົວ, ແລະປັດຈຸບັນ ມີແຂກຜູ້ຫນຶ່ງພວມນັ່ງຢູ່ຕໍ່ຫນ້າໂຕະຫນ່ວຍຫນຶ່ງ, -ສົມມຸດວ່າ ເຈົ້າແຂວງຫາກຮູ້ເດ? -ເຂົາຄົນນັ້ນກໍຄື ອະລາດີເມຍ ອີລີຊ ເອງ. ເພິ່ນກໍາລັງນັ່ງຂຽນປຶ້ມ "ລັດແລະການປະຕິວັດ" ຢູ່. ແລະປຶ້ມຂຽນປົກສີຂຽວຊຶ່ງໄດ້ບັນທຶກສິ່ງຕ່າງໆຢູ່ ຊຸຍຣົກ ນັ້ນ ກໍຖືກນໍາຕິດຕົວມາແຕ່ຕຸບພຸ້ນເຊັ່ນດຽວກັນ.

ໂຣວິໂອ ໄອສຍ່ງຄ່ອຍໆ. ອະລາດິເມຍ ອີລີຊ ຜູດລຸກຂຶ້ນທັນທີ:

-ມີຫນັງສັ້ນຫນັງສືຫລໍ່ບໍ?

-ມີແນ່ນອນ, ແຕ່ກ່ອນອື່ນຫມົດ ກໍຕ້ອງກິນເຂົ້າທ່ຽງເສຍກ່ອນໃດ ອະລາດິເມຍ ອີລີຊ.

-ບໍ່ໄດ້, ກ່ອນອື່ນຫມົດ ຕ້ອງອ່ານຈົດຫມາຍກ່ອນແມ. ຣີບເອົາມາເບິ່ງ.

ອະລາດິເມຍ ອີລີຊ ຮູ້ສຶກຮ້ອນໃຈ, ເມື່ອເຫັນ ໂຣວິໂອ ຈົກເອົາຫໍ່ຫັນຫນຶ່ງອອກມາ ຈາກຫລຶບເສື້ອທໍ່ຊວ່ງອົກນັ້ນ.

-ອະລາດິເມຍ ອີລີຊ ຈົ່ງຮັບເອົາຫໍ່ຫັນນີ້, ເພື່ອເປັນການແລກປ່ຽນກັບຫໍ່ທໍ່ສະຫາຍ ໄດ້ສົ່ງໄປນັ້ນສະ.

ໃນຫໍ່ຫັນມີຈົດຫມາຍຢູ່ສາມສີ່ສະບັບ. ອະລາດິເມຍ ອີລີຊ ໄລ້ສາຍຕາແນມເບິ່ງຈົດ ຫມາຍສະບັບນັ້ນສະບັບນີ້ພໍຜ່ານໆຢ່າງໄວວາ. ອັນນີ້ແມ່ນຈົດຫມາຍທີ່ຂຽນດ້ວຍນ້ຳມຶກ ວິທະຍາສາດ. ພວກເຂົາເຈົ້າຈົ່ງໄຕ້ທ່ຽນໄຂຂຶ້ນ, ບາດແລ້ວ ອະລາດິເມຍ ອີລີຊ ກໍໄດ້ຈັບ ເອົາຈົດຫມາຍທີ່ຂຽນເຕັມຫນ້າເຈ້ຍນັ້ນເຢິ້ງຂຶ້ນສ່ອງເບິ່ງ. ບັນດາຕົວຫນັງສືໄດ້ປະກົດກາຍ ຂຶ້ນມາລະຫວ່າງກາງແກວ. ອະລາດິເມຍ ອີລີຊ ທ້ຽ່ງອ່ານທ້ຽ່ງເວົ້າເສີມນຳ:

-ໄດ້ເລື່ອງ, ໄດ້ເລື່ອງ, ໄດ້ເລື່ອງແລ້ວ. ຂ່າວຄາວຄັກຢູ່ໃດ. ຂ່າວໄດ້ສົ່ງມາໃຫ້ຮູ້ວ່າ ພວກ ໂບນເຊວິກ ຢູ່ ເປໂຕຣກຣາດ ແລະ ມີດສະກູ ກຳລັງໄດ້ ຮັບໄຊຊະນະໃນສະພາໂຊວ່ຽດ ຢ່າງຂາດຂັ້ນ. ສະພາໂຊວ່ຽດ ໄດ້ກັບກາຍມາເປັນຂອງພວກ ໂບນເຊວິກ ແລ້ວ. ປະຊາຊົນ ໄດ້ຂາດຄວາມເຊື່ອຫມັ້ນຕໍ່ອຳນາດການປົກຄອງ ຂອງພວກນາຍທຶນແລ້ວ. ຈົດ ຫມາຍ ແຕ່ ເປໂຕຣກຣາດ ໄດ້ຂຽນວ່າປະຊາຊົນໄດ້ໃຫ້ການສະຫນັບສະຫນູນຕໍ່ພວກເຮົາ ນັບມື້ນັບຫລາຍຂຶ້ນ.

ຫົວຫນ້າຕຳຫລວດ ແກ້ເສື້ອຍົດ ທີ່ໄຊ້ນຸ່ງສະເພາະເວລາເຂົ້າພົບເຈົ້າແຂວ່ງ ນັ້ນອອກ, ເຂົາພັນແຂນເສື້ອຂຶ້ນສູງໆແລ້ວກໍເວົ້ມລົງມືຈົນໄຂ່ຢູ່ເທິງເຕົາໄຟ. ຈົ່ງແມ່ນແປກແທ້ໆ: ເປັນ ຫຍັງຫົວຫນ້າຕຳຫລວດຜູ້ນີ້ ຈົ່ງບໍ່ເຂົ້າຂ້າງທ່ຽງເຈົ້າແຂວ່ງ, ແຕ່ພັດມາເຂົ້າຂ້າງ ເລນິນ?

ເຂົາເຂົ້າຂ້າງ ເລນິນ ກ້ຍອນວ່າຕົນເອງ ໄດ້ກຳເນີດເກີດມາຈາກຊົນຊັ້ນກຳມາຊີບ, ເຂົາເຄີຍເປັນນາຍຊ່າງເຄື່ອງຈັກ, ເຂົາໄດ້ເຂົ້າຮ່ວມການປະຕິວັດຕັ້ງແຕ່ອາຍຸສິບແປດປີພຸ້ນ. ແຕ່ຫລັງຈາກ ມື້ໂຄ່ນລົ້ມກະສັດລັດເຊຍເປັນຕົ້ນມາ, ໂຮວິໂອ ໄດ້ຖືກພວກກຳມະກອນເລືອກໃຫ້ເປັນ ຫົວໜ້າຕຳຫລວດປະຊາຊົນຢູ່ ແຮນຊີກີ.

ເມື່ອຈົນໄຂ່ແລ້ວ, ໂຮວິໂອ ກໍເຊີນ ອະລາດີເມຍ ອີລີຊ ກິນເຂົ້າທ່ຽງ.

ອະລາດີເມຍ ອີລີຊ ມີຄວາມປິຕິຊົມຊື່ນທີ່ສຸດທີ່ໄດ້ຮັບຂ່າວຄາວໃຫມ່ນີ້. ໃຫ້ຈະໄດ້ກັບປະເທດ ລັດເຊຍແລ້ວເດ! ພັກ ໂບນເຊວິກ ໄດ້ປຸກລະດົມຂົນຂວາຍຊົນຊັ້ນກຳມະກອນ ໃຫ້ທຳການລຸກຮືຂຶ້ນ. ກຳມະກອນ ຈະເປັນຜູ້ໂຄ່ນລົ້ມລັດກະບານຊົ່ວຄາວ. ແລ້ວສ້າງຕັ້ງ ອຳນາດຂອງກຳມະກອນຂຶ້ນ. ເລນິນ ໄດ້ຂຽນກ່ຽວກັບເລື່ອງນີ້ແລ້ວສົ່ງເມື່ອ ເປໂຕຣກຣາດ ຢ່າງລັບໆ. ພ້ອມກັນນັ້ນ ເພິ່ນເອງ ກໍໄດ້ຂຽນໄວ້ຢູ່ໃນປຶ້ມບັນທຶກຂອງເພິ່ນເຊັ່ນກັນ.

ໂຮວິໂອ ທັງກິນໄຂ່ ທັງເລົ່າເລື່ອງກ່ຽວກັບເຈົ້າແຂວງໄປນຳ. ອະລາດີເມຍ ອີລີຊ ຟັງ ດ້ວຍຄວາມເອົາໃຈໃສ່:

-ທຸກວັນນີ້ ມັກຈະມີເລື່ອງ ທີ່ເຮົາຄາດບໍ່ເຖິງເກີດຂຶ້ນເລື້ອຍໆ: ຜູ້ເປັນເຈົ້າຂອງເຮືອນ ໄດ້ໄປພົບເຈົ້າແຂວງ ແຕ່ຂໍຖາມວ່າ ຢູ່ເຮືອນຂອງຕົນເອງເດ ໄດ້ຕອນຮັບໃຜແດ່?

-ຊິ້ຕ້ອນຮັບໃຜອີກ? ຜູ້ເປັນເຈົ້າຂອງເຮືອນຕອບຢ່າງໃຈເຢັນໆ. ກໍມີແຕ່ຕ້ອນຮັບ ພະອາຈານ ຜູ້ຫນ້າເຄົາລົບນັບຖືຊາວ ແຟ້ງລັ້ງ ອີງຫນຶ່ງເທົ່ານັ້ນ.

ອະລາດີເມຍ ອີລີຊ ຫົວຂຶ້ນກັບບ່ອນ. ຖືກຕ້ອງ, ເພາະຕອນມາຮອດ ແຮນຊີກີ ເພິ່ນໄດ້ປອມຕົວເປັນນັກບວດ. ບັນດາສະຫາຍ ແຟ້ງລັ້ງ ໄດ້ຈັດສົ່ງເອົານັກສະແດງອາຊີບ ມາຍັງບ່ອນທີ່ ອະລາດີເມຍ ອີລີຊ ຢູ່, ພາຍຫລັງທີ່ໄດ້ຫນີອອກຈາກຕູບທີ່ມີຫ້ອງຂ່ອນທີ່ ຮາດສະລິບ ນັ້ນແລ້ວ. ບັນດານັກສະແດງດັ່ງກ່າວ ລ້ວນແຕ່ແມ່ນກຳມະກອນ, ສະມາຊິກ ພັກລັ້ງຄົມປະຊາທິປະໄຕທັ້ງນັ້ນ. ພວກເຂົາໄດ້ສອນເຄື່ອງເອ້ໃຫ້ ອະລາດີເມຍ ອີລີຊ ໄດ້ຢ່າງຄ່ອງຄ່ວທີ່ສຸດ. ພວກເຂົາ ໄດ້ນຳເອົາເສື້ອຄຸມຍາວມາຕັ້ງແຕ່ໃນເມືອງພຸ້ນ, ໃນນັ້ນ ມີຫ້ວງຫນວກສູງທີ່ເຄີຍໄດ້ເຫັນຢູ່ນຳບັນດານັກບວດທ້ວງຫລາຍ, ແລະໄດ້ຕິດຫນວດຫນາໆ

ໃຫ້ເພີ່ນນຳອີກ, ແລະ ... ເບິ່ງແລ້ວຄ້າຍກັບວ່າເພີ່ນກຳລັງຈະອອກໄປຫາໂບດ ເພື່ອທຳພິທີ. ແຕ່ມາບັດນີ້, ຕ້ອງໄດ້ເປັນຫ່ວງນຳເລື່ອງຊອກຜົມປອມໃຫ່ມ່ໃຫ້ເພີ່ນປ່ຽນຫນ້າອີກເທື່ອຫນຶ່ງຢ່າງຮີບດ່ວນອີກ.

ກໍຕ້ອງແລ້ວ, ຕ້ອງໃຫ້ໄດ້ໄວທີ່ສຸດ. ໃນຫ້ໍ່ທ້ອງຟ້າແຈ່ມໃສ້ຫນຶ່ງ, ໂຣວີໂອ ໄດ້ພາ ວະລາດີເມຍ ອີລີຊ ໄປຫາຊ່າງຕັດຜົມ. ຊ່າງຕັດຜົມຜູ້ນ້ີ ມີເຊື້ອສາຍລາຍລ່ອງເປັນ ຄົນ ເປແຕກສະບອກ. ກ່ອນຫນ້ານ້ີ ເຂົາເປັນຊ່າງຕັດຜົມປະຈຳໂຮງລະຄອນຢູ່ໃຈກາງ ເມືອງ ແລະໄດ້ຮູ້ຈັກກັບເຈ້ົາຊຸນມຸນນາຍຫລາຍສົມຄວນ. ເຂົາໄດ້ເປັນຜູ້ທ່ີເຮັດໃຫ້ພວກ ເຂົາກັບເປັນຫນຸ່ມຄືນ, ເປັນຕົ້ນ ຍ້ອມຫນວດ ແລະ ເຮັດຜົມປອມໃຫ້ແກ່ພວກເຂົາ ທ້ັງຫມົດ.

-ສ່ວນເຈ້ົານ້ັນບ່ໍຈຳເປັນຈະໃສ່ຜົມປອມດອກ ເພາະເບ່ິງຄ້ັຍງຫນຸ່ມຢູ່. - ຊ່າງຕັດຜົມ ໄດ້ເວ້ົາກັບ ວະລາດີເມຍ ອີລີຊ ດ້ວຍນ້ຳສຽງສຸພາບ.

-ແຕ່ຂ້ອຍຢາກໃຫ້ມັນເກ່ົາກ່ວາເກ່ົານ່າ, - ວະລາດີເມຍ ອີລີຊຕອບ.

-ເພ່ືອເຮັດຫຍັງກັນ? - ຊ່າງຕັດຜົມ ສຸດທ່ີມ່ີຄວາມແປກປະຫລາດໃຈ.

-ຫາລະເຮັດໃຫ້ຂ້ອຍເປັນຄ່ົນເກ່ົາໆ ຫລາຍກ່ວານ້ີ ໄດ້ຫລາຍເທ່ົາໃດຍ່ົງດ!ີ - ວະລາ ດີເມຍ ອີລີຊ ທ້ັງເວ້ົາທ້ັງຍ້ົມຫົວອອກມາດ້ວຍຄວາມຊ່ືນຊ່ົມ. - ຈ່ົງຍ້ອມຜົມຫ່ົງອກໃຫ້ ຂ້ອຍ, ໃຫ້ຄ້ົນກັບຜູ້ທ່ີ່ມ່ີອາຍຸປະມານຫ້ົກສ່ິບປ່ີນ້ັນລະ!

-ປະມານຫ້ົກສ່ິບປ່ີພຸ້ນຫວະ? ຍ້ອມຜົມຫ່ົງອກຊ້ັນຫວະ? ບ່ໍໄດ້ດອກ!

-ເປັນຫ້ຍັງ?

-ເຮັດໃຫ້ຜູ້ຫນຸ່ມກາຍເປັນຜູ້ເກ່ົາກ່ອນອາຍຸຊ້ັນຫວະ?! ເຮັດເພ່ືອເອ່ົາວ່ິມານອ່ີຫ້ຍັງ ກັນ! - ຊ່າງຕັດຜົມຜູ້ທ່ີ່ມ່ີຮ່າງກາຍນ້ອຍບາງ ໄດ້ເກ່ີດມ່ີຄວາມບ່ໍພໍໃຈຂ້ຶ້ນມາທັນທ.ີ - ຫນ້າ ທ່ີ່ຂອງຂ້ອຍມ່ີແຕ່ເຮັດໃຫ້ທຸກໆຄົນຫນຸ່ມຂ້ຶ້ນເທ່ົານ້ັນ.

-ຫນ້າທ່ີ່ຂອງເຈ້ົາ ກໍນ້ັບວ່າເປັນຫນ້າສັນລະເສ່ີນຢູ່, ແຕ່ຫາລະເຮັດໃຫ້ຂ້ອຍສ, ກ່ໍວ່ານ້ັນຢູ່ນອກຫນ້າທ່ີ່ກໍ່ແລ້ວກັນ.

ສ່ວນ ໂຣວີໂອ ຄິດໃນໃຈວ່າ:

"ອະລາດີເມຍ ອີລີຊ ຍັງຈະຈຳຕ້ອງ ໄດ້ໃສ່ຜົມປອມ ແລະເຄື່ອງນຸ່ງແບບນີ້ອີກດົນປານໃດ? ແລະຍັງຈະຕ້ອງໄດ້ຊຸດເຊພະເນຈອນແບບນີ້ໄປອີກດົນປານໃດເດເນາະ?"

ບ່ອນເຄື່ອນໄຫວປິດລັບອີກແຫ່ງໜຶ່ງ

ກະແສລົມເຢັນ ໄດ້ພັດຢ່າງແຮງຜ່ານຕາມສາຍທາງຂອງຄຸ້ມ ວິບອກ ທີ່ເກົ່າແກ່.

ແລະໃນຫົ້ວ່ໍ່ມືອາກາດຫນາວດັ່ງກ່າວນີ້ແລ້ວທີ່ ເອີຍໂນ ຣາເຄຍໄດ້ເດີນທາງອອກຈາກເປໂຕຣກຣາດ ມາທີ່ ວິບອກ. ຣາເຄຍ ເປັນຄົນຮ່າງສູງ, ມີໜ້າຜາກສວດ, ນິໄສໃຈຄໍ ນັກໝ່ວນແລະວ່ອງໄວ.

ຕອນທ້າຍລະດູຮ້ອນ, ເອເມລີອານົບ, ກຳມະກອນໂຮງງານຜະລິດອາວຸດຢູ່ ເຊສະເຕີ ໂຣເຣສະກີ, ແລະຊາວ ເຜົ່າລ້ຽ ສອງຄົນ ໄດ້ພາ ອະລາດີເມຍ ອີລີຊ ຜ່ານປ່າບຸດົ້ງ ແລະ ຫນ່ຶ້ງໃນຈຳນວນດັ່ງກ່າວ ກໍມີ ເອີຍໂນ ຣາເຄຍ ຮ່ວມຢູ່ດ້ວຍ. ເຂົາແມ່ນກຳມະກອນຫນຸ່ມ ຢູ່ໂຮງງານ ເປໂຕຣກຣາດ, ທັ້ງເປັນສະມາຊິກພັກ ໂບນເຊວິກນຳອີກ. ຄະນະບໍລິຫານ ງານສູນກາງພັກ ໄດ້ມອບຫນ້າທີ່ໃຫ້ເຂົາເປັນຜູ້ຕິດຕໍ່ພົວພັນກັບ ເລນິນ.

ປັດຈຸບັນ, ຣາເຄຍ ໄດ້ມາທີ່ຄຸ້ມ ວິບອກ ນີ້ກໍແມ່ນເພື່ອພົບກັບ ເລນິນນັ້ນເອງ. ເລນິນ ກຶ້ກຍົກຍ້າຍອອກຈາກ ແຮມຊິກີ ແລະ ໄດ້ມາຢູ່ທີ່ແຫ່ງນີ້ກໍເພື່ອຢາກຢູ່ໃກ້ກັບປະເທດ ລັດເຊຍໃຫ້ຫລາຍທີ່ສຸດ, ເພາະວ່າ ເພິ່ນມີຄວາມປະສົງ ທີ່ຢາກກັບປະເທດຢ່າງຈິດຈໍ ແລະ ໃນທີ່ສຸດ ມັ້ດ່ັງກ່າວ ກໍໄດ້ມາເຖິງ.

ອະລາດີເມຍ ອີລີຊ ສຸດທີ່ມີຄວາມຮ້ອນອົກຮ້ອນໃຈ. ແຕ່ສ່ວນ ຣາເຄຍ ພັດທຳທ່າ ເມີນເສີຍເຫມືອນດັ່ງກັບບໍ່ມີ ເລ່ືອງຫຍັງເກີດຂຶ້ນ.

-ພວກເຮົາພາກັນໄປສະກີນີລິດໄຟດ່ວນນີ້ເບາະ, ອະລາດີເມຍ ອີລີຊ?

ຣາເຄຍ ເວົ້າດ້ວຍອາການເສີຍໆ, ແຕ່ໃນໃຈກໍມີສ່ວນເປັນຫ່ວງຄືກັນ. ແຕ່ວ່າເຂົາ

ບໍ່ຕ້ອງການສະແດງມັນອອກມາຊໍ່ໆ. ແນ່ນອນແລ້ວ, ອະລາດີເມຍ ອີລີຊ ເອງກໍຕ້ອງໄດ້ລຸກ
ເຊື່ອງຄວາມກະວົນກະວາຍຂອງຕົນຄືກັນ.

ພວກເຂົາເຈົ້າ ໄດ້ພາກັນຂຶ້ນລົດໄຟ ແລະ ອອກເດີນທາງຈົນມາຮ່ອດສະຖານີລົດໄຟ
ແຫ່ງຫນຶ່ງຢູ່ປະເທດ ແຟ່ງລັ່ງ ໂດຍບໍ່ໄດ້ເວົ້າຈານໍາກັນພໍຄວາມ. ຢູ່ໃນຕູ້ລົດໄຟ ມີແຕ່ຄົນ
ແຟ່ງລັ່ງ, ແຕ່ ອະລາດີເມຍ ອີລີຊ ພັດບໍ່ຮູ້ພາສາແຟ່ງລັ່ງ, ດັ່ງນັ້ນຄົນສຸດກໍມີແຕ່ນັ່ງນິດ
ຢູ່ລ້ານໆ ເພື່ອຫລີກເວັ້ນຈາກການສົງໄສຂອງຜູ້ອື່ນ.

ບາງຄັ້ງບາງຄາວ ອະລາດີເມຍ ອີລີຊ ໄດ້ເອົາມືລູບໆຄໍາເບົ່ງລູກກຸນແຈຢູ່ໃນກົງ, ວ່າມັນ
ຍັງຢູ່ຫລໍ່ ດ້ວຍຄວາມຄ່ອງແຄ້ວ.

ລູກກຸນແຈດັ່ງກ່າວແມ່ນລູກກຸນແຈເຮືອນປົດລັບຢູ່ທີ່ຄຸ້ມກໍາມະກອນ ໃນນະຄອນ
ເປໂຕຣກຣາດ.

ຂະບວນລົດໄຟ ໃກ້ຈະຮອດສະຖານີແລ້ວ. ຣາເຄຍ ຟ້າວຜູດລຸກຂຶ້ນແລ້ວຍ່າງອອກ
ຈາກຕູ້ລົດໄຟໄປ. ອະລາດີເມຍ ອີລີຊ ກໍໄດ້ຍ່າງໄປຕາມຫລັງເຂົາໄປເຊັ່ນກັນ. ເມື່ອຮອດ
ສະຖານີ, ອະລາດີເມຍ ອີລີຊ ມີຄວາມຮູ້ສຶກຕື່ນເຕັ້ນເປັນພິເສດ. ຢູ່ທີ່ທາງລົດໄຟ ມີລົດໄຟ
ໂດຍສານຂະບວນຫນຶ່ງ ທີ່ອອກມາຈາກ ເປໂຕຣກຣາດ ແລະ ກໍາລັງຈອດພັກຜ່ອນຢູ່.
ຫົວລົດໄຟດັ່ງກ່າວ ຫມາຍເລກ ๔๙๓.

"ສະບາຍດີເພື່ອນເກົ່າ, ເພື່ອນເຄີຍໄດ້ຊ່ວຍເຮົາມາເທື່ອຫນຶ່ງແລ້ວ. ຈົ່ງຊ່ວຍເຮົາອີກ
ເທື່ອຫນຶ່ງແດ່ເທາະ".

ກູໂກອີອາລາວາ ຜູ້ຂັບລົດດັ່ງກ່າວ ແນມຜ່ານທາງປະຕູຫົວລົດໄຟ ດ້ວຍອາການເຄັ່ງ
ຂຶມ, ແຕ່ບາດວ່າໄດ້ແນມເຫັນ ຣາເຄຍ ແລະ ຊ່າງດັ່ງເຕົາຜູ້ຊ່ຽນຄຸ້ນເຄີຍມາກ່ອນແລ້ວ,
ເຂົາຈຶ່ງຍົ້ມອອກ ແລະ ຄຶດໃນໃຈວ່າ: "ຊ່າງດັ່ງເຕົາຂອງພວກເຮົາຜູ້ນຄຜົມຫາງອກແລ້ວ!".

ສະຫລຸບແລ້ວແມ່ນ ອະລາດີເມຍ ອີລີຊ ໄດ້ອອກຈາກ ແຟ່ງລັ່ງ ເພື່ອກັບເມືອ
ເປໂຕຣກຣາດ ແລະ ໄດ້ໄປເກົ່ງສະຖານີລົດໄຟ ອູແດນນາຢາ ດ້ວຍຫົວລົດໄຟດັ່ງກ່າວນັ້ອີກ.

ເສັ້ນທາງຕັ້ງແຕ່ ສະຖານີ ອູແດນນາຢາ ໄປຫາກະທໍານິນ ແຊກໂດໂນສະກາຍຢາ ນັ້ນ



ແມ່ນຖືກຕັດຜ່າໄປຕາມທົ່ງນອັນຫວ່າງເປົ່າ
ຈຶ່ງມີໄລຍະໄກປະມານຫ້າ ແວກ. ໃນຍາມຄ່ຳ
ຄືນຂອງເດືອນສິບ ທົ່ວອາກາດຫນາວເຢັນ
ເຊັ່ນນີ້, ຕາມກະຫນົບຫົນທາງເກືນວ່າມັນ
ມີຄົນນັ່ງລົບເອົາແທ້ໆ, ໄດ້ຍິນແຕ່ສຽງດ້ວຂອງ
ກະແສລົມທີ່ພັດຜ່ານໄປມາເທົ່ານັ້ນ.

ແຕ່ເຖິງຢ່າງໃດກໍຕາມ ນາເດສະດາ ກ້າ
ສະຕ້ຳຕົນບນາ ໄດ້ໄປຢືນຖ້າຢູ່ບ່ອນທີ່ໄດ້ນັດ
ຫມາຍເອົາໄວ້ນັ້ນກ່ອນແລ້ວ. ນາງນຸ່ງເສື້ອຄຸມ
ຫນ້ງສັ້ນໆ, ໃສ່ຫມວກຂອບມົນ. ອະລາດີ
ເມຍ ອີລີຊ ຈັບມືອັນເຢືອກເຢັນກະດ້າງຂອງ
ນາງ, ເພາະບໍ່ໄດ້ໃສ່ຖົງມື. ນາງບໍ່ຄ່ອຍຈະເອົາ
ໃຈໃສ່ໃນຕົນເອງ! ມີແຕ່ເຮັດວຽກ, ເຮັດ
ວຽກ, ເຮັດວຽກເພື່ອການປະຕິວັດ. ພັກບອກ
ໄປທາງໃດ ກໍແມ່ນຕ້ອງໄປໃຫ້ເຖິງແຫ່ງນັ້ນ
ໂລດ.

ຢູ່ແຈກະຫນົນ ແຊກໂດໂບນສະກາຍຢາ,
ແລະທາງໃຫຍ່ ຊຳປະໂຊນິເອບສະກີ, ມີເຮືອນ
ດິນຈົ່ບ່ຫາສິຫລ້ງຫນ້ງຕັ້ງຢູ່, ເຮືອນດັ່ງກ່າວ
ເບິ່ງຂ້າງນອກ ມີລັກສະນະທົ່ຫມົ່ນຫມອງ.
ມັນແມ່ນເຮືອນສີ່ຊັ້ນທົ່ເກົ່າແກ່ແລະໃຫຍ່
ທົ່ສຸດ ທ່າມກາງບັນດາເຮືອນນ້ອຍທົ່ຢູ່ອ້ອມ
ແອ້ມ.

ອະລາດີເມຍ ອີລີຊ ຍ່າງຊໍ່ເຂົ້າໄປຫາປາກປະຕູບ້ານ, ຄ້າຍຄືກັບວ່າໃນຕະຫລອດຊີ-ວິດຂອງເພິ່ນ ໄດ້ຮູ້ຈັກ ແລະ ລ້ຽງແກ່ວນກັບບ່ອນນີ້ເປັນຢ່າງດີມາແລ້ວ. ສ່ວນ ຣາເຄຍ ໄດ້ຍ່າງໄປທາງກະຫນິນໃຫຍ່ ຊຳປະໂຊນິເອບສະກີ ພ້ (ຫມາຍຄວາມວ່າ ນາຣອດມັ້ຄົນ ໄດ້ເຮັດຫລ້ອນຫນ້າທີ່ແລ້ວ), ສ່ວນ ອະລາດີເມຍ ອີລີຊ ໄດ້ຍ່າງນຳຫນ້າ ນາເດສະດາ ກ້າສະຕ້ຳຕີນບນາ, ແລ້ວກ້າວຂຶ້ນເມືອເທົ້າຊັ້ນສີ. ຮອດແລ້ວເພິ່ນກໍຈັກເອົາລູກກຸນແຈ ອອກມາໄຂປະຕູ. ຢູ່ຊໍ່ປາກປະຕູ ມີລະບຽງນ້ອຍໆ. ຫ້ອງຂອງເພິ່ນຢູ່ນັ້ນແມ່ນຢູ່ບ່ອນ ສັ້ນສຸດຂອງລະບຽງດ້ານຊ້າຍມື. ອະລາດີເມຍ ອີລີຊ ສາມາດເກັບກຳຫນົດທຸກສິ່ງຢ່າງໄດ້ ໂດຍຜ່ານທາງແຜນທີ່. ນາເດຍ ໄດ້ເວົ້າວ່າ ຢູ່ໃນຫ້ອງດ່ຳກ່າວ ບໍ່ມີໃຜຈັກຄົນ, ມີແຕ່ ແມ່ຍິງຜູ້ຫນຸ່ມໍ່ໍ່ທີ່ເປັນເຈົ້າຂອງເຮືອນຊໍ່ວ່າ ນາກກາຣິດຕາ ວາຊີລີເອບນາ ໂຟຟາໂນວາ, ເພື່ອນຂອງ ນານີອາຊາ ເທົ່ານັ້ນເອງ.

ແຕ່ມັນແມ່ນຫຍັງກັນນັ້ນ? ພໍ ອະລາດີເມຍ ອີລີຊ ເປີດປະຕູອອກ ກໍໄດ້ຍິນສຽງໂຈ ເຈໂສເຫລ້ກັນໂລດ. ມີແສງສະຫວ່າງຂອງໂຄມໄຟ ຈາກຫ້ອງກິນເຂົ້າສ່ອງແສງອອກໄປ ຮອດລະບຽງ. ຢູ່ຕໍ່ຫນ້າໂຕະ ມີແມ່ຍິງສອງສາມຄົນ ເບິ່ງຄືວ່າ ພວກເຂົາເຈົ້າແມ່ນ ນາງຄູ.

- ເປົ້າຫມາຍແຫ່ງວິຊາຄູຂອງພວກເຮົາ, ພວກເພື່ອນເອີຍ ...

ອະລາດີເມຍ ອີລີຊ ໄດ້ຍິນພວກເຂົາໂອ້ລົມກັນຄືແນວນັ້ນ. ບໍ່ເປັນຕາຫນ້າເຊື່ອ ວ່າ ຢູ່ໃນເຮືອນກຳລັງມີການປະຊຸມ! ຢູ່ໃນຫ້ອງປິດລັບຊ້ຳ! ໂດຍສະເພາະ ໃນຄືນມັ້ຊ ຳ ເປັນຍາມທີ່ ອະລາດີເມຍ ອີລີຊ ມາເຖິງ. ໂດຍບໍ່ໄດ້ສະແດງອາການລັ່ງເລໃຈຢ່າງໃດຫນົດ, ອະລາດີເມຍ ອີລີຊ ຟ້າວຍ່າງຕັດເຂົ້າໄປໃນຫ້ອງດ່ຳກ່າວນັ້ນໂລດ. ອະລາດີເມຍ ອີລີຊ ເຮັດຫລ້ງສີ່ກ່ຽງ, ໃສ່ຜ້ມປອມຫງອກສີຂາວໆ. ເພິ່ນບໍ່ຜິດຫຍັງກັບພໍ່ເກົ້ານ້ອຍຜູ້ຫນຸ່ ທີ່ ມີທ່າທາງວ່ອງໄວ ແລະ ຄ່ອງແຄ້ວ.

- ໂອຍ ຟ້າເອີຍ! - ນາເດສະດາ ກ້າສະຕ້ຳຕີນບນາ ຫ້ວງຂຶ້ນຄ່ອຍໆ, ຕອນ ທີ່ພວກ ເຂົາເຈົ້າສອງຄົນຢູ່ໃນຫ້ອງນີ້ ປະກົດວ່າສະອາດສະອ້ຳ ຫ້ງເປັນລະບຽບຮຽບຮ້ອຍດີ, ຫ້ອງ

ດ່ງກ່າວນັ້ນ ແມ່ນຫ້ອງ ທີ່ ອະລາດີເມຍ ອີລີຊ ຈະອາໄສຢູ່ໃນບັ້ນຕໍ່ມາ. - ຟ້າເອີຍ, ນ້ອງກັບ ນາກກາຣິດຕາ ຈັ່ງແມ່ນພາກັນເຜີດີວເອົາແທ້ເອົາວ່າ!

- ແມ່ນແລ້ວລະ, - ອະລາດີເມຍ ອີລີຊ ຕອບ.

- ອ້າຍຫວັງວ່າບ່ອນນີ້ຄືຈະແມ່ນບ່ອນເຄື່ອນໄຫວລັບຄັ້ງສຸດທ້າຍແລ້ວລະ, - ອະລາດີເມຍ ອີລີຊ ເວົ້າຂັ້ນ. ເພິ່ນໄຂປ່ອງຢ້ຽມອອກ. ຢູ່ທາງລຸ່ມ ໄດ້ຍິນແຕ່ສຽງລົມໂຊຍພັດ.

- ອ້າຍຫວັງວ່າບ່ອນນີ້ ຄືຈະແມ່ນບ່ອນເຄື່ອນໄຫວລັບຄັ້ງສຸດທ້າຍແລ້ວລະ, - ອະລາດີເມຍ ອີລີຊ ເວົ້າຊ້ຳ ຄືນອີກ.

- ແລະທ້ຳເປັນບ່ອນທີ່ອັນຕະລາຍອີກ! - ນາເດສະດາ ກ້ຽສະຕ້ຽຕິນິບນາ ທ້ວງຂຶ້ນ.

ອະລາດີເມຍ ອີລີຊ ໄດ້ແນມເບິ່ງທ່າທີ ທີ່ເຕັມໄປດ້ວຍຄວາມເປັນຫ່ວງເປັນໄຍອັນບໍ່ອາດຈະປິກປິດໄດ້ຂອງຜູ້ເປັນເມຍ. ກືກແລ້ວ, ຢູ່ບ່ອນນີ້, ແລະຢູ່ກະທັນນີ ແລກໂດໂບນ ສະກາຍຢານີ້, ອັນຕະລາຍທີ່ສຸດ, ກ້າປົນໃສ່ກັບຕອນຢູ່ຕູບມຸງຫຍ້າ, ຫລືຕອນຢູ່ ແຮນ ຊຽກ. ພວກນັກສຶບຂອງລັດກະບານຊ່ວຄາວນັ້ນມັກມາກວດຄົ້ນຢູ່ຕາມເຮືອນຊານບ້ານ ຊ່ອງ ແລະ ຕິດຕາມຢູ່ທຸກບາດຍ່າງໃດ.

ຢູ່ບ່ອນນີ້ ອັນຕະລາຍຈົນວ່າບໍ່ມີໃຜຈະຮູ້ໄດ້ວ່າ ເລນິນ ໄດ້ກັບມາແຕ່ ແຟງລັງ ແລ້ວ ໄປຢູ່ບ່ອນໃດ, ນັບທ້ຳຄະນະບໍລິຫານງານສູນກາງພັກກໍຍັງບໍ່ຮູ.

ໃນນັ້ນ ມີແຕ່ ນາເດສະດາ ກ້ຽສະຕ້ຽຕິນິບນາ ແລະ ຜູ້ຕິດຕໍ່ຄື ຣາເຄຍ ເທົ່ານັ້ນທີ່ຮູ້ ຈັກດີ.

ກ່ອນການປະຕິວັດ

ບໍ່ທໍ່ໃດນັ້ຕໍ່ມາ ຣາເຄຍ ໄດ້ພາ ອະລາດີເມຍ ອີລີຊ ໄປເຂົ້າຮ່ວມກອງປະຊຸມລັບແຫ່ງ ຫນຶ່ງ. ເດີກທ່ຽງຄືນແລ້ວ, ບັນດາຫ້ຽງຮ້ານຄ້າຕ່ຽງກໍໄດ້ອັດປະຕູປະຕ່ຽງກັນຫມົດແລ້ວ. ຢູ່ໃກ້ໆແຫ່ງນັ້ນ ມີເຮືອນຫລັງຫນຶ່ງຕິດປ້າຍເຂົ້າຈີ່ເປັນຮູບເລກ ຊ ສີເຫລືອງອຸ່ນທຸ່ນ, ສະແດງໃຫ້ຮູ້ວ່ານັ້ນ ແມ່ນຮ້ານຂາຍເຂົ້າຈີ່. ສ່ວນປະຕູຫນ້າບ້ານໄດ້ກືກອັດຢ່າງແຫນ້ນຫນາ.

ປ່ອງຢ້ຽມທຸກປ່ອງ ກໍຖືກອັດຢ່າງແໜ້ນສະໜິດເໝືອນກັນ. ແຕ່ຢູ່ໃກ້ໆເຮືອນຫລັງນີ້ ມີຫລາຍຜູ້ຫລາຍຄົນເປັນຕົ້ນ ກໍແມ່ນພວກແມ່ຍິງ ທີ່ພາກັນຢືນລໍຄອຍເປັນແຖວຍາວ ຊຶ່ງ
ເລີ່ມຕັ້ງແຕ່ປະຕູທີ່ຍັງອັດແຈບນັ້ນເປັນຕົ້ນມາ. ພວກແມ່ຍ່າແມ່ຍິງ ທີ່ມີຜ້າແພຄຸມຫົວ
ໄດ້ພາກັນຢືນຫິດຕູ່ຢູ່ດ້ວຍຄວາມຫນາວ. ພວກເຂົາເຈົ້າ ຕ່າງກໍພາກັນອົດທົນຄອງຄອຍຖ້າ.
ຮ້ານຂາຍເຂົ້າຈີ່, ບ່ອນອົບກໍເປັນດັ່ງນັ້ນຄືກັນ. ຢູ່ນະຄອນ ເປໂຕຣກຣາດ, ເມື່ອຮອດຍາມ

ຄ່ຳຄືນຄືແນວນີ້ມາ ຜູ້ຄົນພາກັນຢືນລໍຄອຍເຖິງຄອຍດ້ວຍຄວາມເຫົ່ງົາຫງອຍ, ມືດງົບ.
ເຂົ້າຈີ່ຂາຍຕາມບັດນັ້ນ ມີມາຕັ້ງແຕ່ຄືນນານແລ້ວ. ສຳຫລັບມື້ຫນຶ່ງໆບາງເທື່ອ ກໍໄດ້ເຄິ່ງ
ຟຸນ, ແລະບາງເທື່ອ ກໍໄດ້ແຕ່ຫນຶ່ງສ່ວນສີ່ຂອງຟຸນເທົ່ານັ້ນ. ດັ່ງນັ້ນ ຈຶ່ງຕ້ອງໄປຊື້ໃຫ້ທັນ
ທັນເວລາ. ຖ້າບໍ່ດັ່ງນັ້ນ ເຖິງຈະມີເງິນຫລາຍປານໃດກໍຕາມ ແຕ່ກໍບໍ່ສາມາດຊື້ເຂົ້າຈີ່ໄດ້ຈັກ
ກ້ອນ. ບັນດາພວກແມ່ຍິງ ທີ່ມາລໍຄອຍກັນຢູ່ຂ້າງຮ້ານຂາຍນັ້ນ ແມ່ນຕ້ອງໄດ້ຢືນຢູ່ຕະ
ຫລອດຄືນ. ຈົ່ງແມ່ນພວກເຂົາໄດ້ຮັບຄວາມລຳບາກກາກກຳແທ້ໆ, ລູກ, ຜົວຂອງເຂົາ
ເຈົ້າ ລ້ວນແຕ່ອອກສູ່ສະໜາມຮົບຈົນຫມົດ, ທັງນີ້ ກໍເພາະວ່າສົງຄາມລະຫວ່າງລັດເຊຍ
ກັບ ເຢຍລະມັນ ຍັງແກ່ຍາວຢູ່. ພວກລູກຜົວກໍຖືກສົ່ງໄປຢູ່ຕາມສະນາມທີ່ສູ້ຮົບຕ່າງໆ, ແລະ

ກຶກຂ້າຕາຍຢ່າງບໍ່ມີເຫດຜົນ.

-ຢູ່ບ້ານເຮືອນບໍ່ມີຄວາມມ່ວນຊື່ນຫຍັງຫນິດ. -ຣາເຄຍ ເອ່ີ້ຍຂຶ້ນ. -ພວກເຈົ້າ ຂອງຣາມພາກັນປົດປະຕູທຸກແຫ່ງ. ໂຮງຈັກໂຮງງານ ກໍຢຸດສະຫງັກ ບໍ່ມີການເຄ່ືອນໄຫວ ຫຍັງຫນິດ. ຈາກນັ້ນ ກໍພາໃຫ້ເກີດມີການຫວ່າງງານ.

ສະພາບການໃນປະເທດກຳລັງເຂົ້າຂັ້ນສັບສົນອັນຕະລາຍທ່ີສຸດ. ການໄປມາທາງລົດໄຟກໍພົບແຕ່ຄວາມຫຍຸ້ງຍາກ. ໂນງເວລາ ກຳນົດອອກເດີນທາງຂອງລົດໄຟກໍຖືກປະປ່ອຍ. ລົດໄຟບໍ່ຍອມຂົນກ່ານກັບອັດກຸດົບມາໃຫ້ແກ່ໂຮງງານ, ບໍ່ຍອມຂົນເຂົ້າຈ່ີມາສູ່ຕົວເມືອງນຳ ອີກ.

-ຍັງຊິຄອງກ້າອ່ີຫຍັງອີກ? -ຣາເຄຍເວ້ົ້າຂຶ້ນ.

-ນັກ ໂບນເຊວິກ ຕ້ອງຮູ້ຈັກເຮັດຫຍັງ, -ອະລາດ໌ເມຍ ອີລີຊ ເວ້ົ້າຂຶ້ນດ້ວຍກ້ອຍ ທຳນອງທ່ີເຄ່ັງຂຶມ. -ບໍ່ຕ້ອງຄອງກ້າອີກແລ້ວ, ແຕ່ຕ້ອງເຮັດການປະຕິວັດກຳມະກອນ.

ເລ່ີມຕ້ັງແຕ່ການປະຕິວັດ ເດ່ືອນກຸມພາ ພຸ້ນມາ, ເລນິນ ໄດ້ຕັກເຕ່ືອນວ່າ: ຕ້ອງພະ ຍາຍາມ ເພ່ືອເຮັດແນວໃດໃຫ້ສະພາໂຊວຽດ ເປັນຂອງພວກ ໂບນເຊວິກ ໃຫ້ໄດ້. ເກ່ົາ ຍາມນ້ັນຊິນຊ້ັນກຳມະກອນ ຈະເປັນຜູ້ກຳອຳນາດ ຕາມແນວທາງແຫ່ງສັນຕິພາບໄດ້. ແຕ່ ພວກ ແມນເຊວິກ ບໍ່ເຫັນດີນຳ, ຈ່ືງຫາທາງຄັດຄ້ານ.

ດຽວນ້ີ ທຸກສ່ິງຢ່າງ ໄດ້ມີການປ່ຽນແປງຫນິດແລ້ວ. ແລະຣອດຍາມທ່ີ ຈະຕ້ອງລຸກ ຂຶ້ນກຳອຳນາດດ້ວຍອາວຸດ, ໂດຍບໍ່ຕ້ອງລັກລ້ຳແຕ່ຢ່າງໃດ!

ໃນຕອນກາງຄືນ ຂອງເດ່ືອນ ຕຸລາ ນ້ັນ, ຄະນະບໍລິຫານງານສູນກາງພັກ ໄດ້ເປ ກອງປະຊຸມລັບ. ທຸກຄົນຮູ້ວ່າ ເລນິນ ຈະຕ້ອງມາຮ່ວມ! ເປັນເວລາດົນນານແລ້ວ ທ່ີ ພວກເຂົາບໍ່ໄດ້ພົບພ້ັກັບ ເລນິນ, ແລະມາບັດນ້ີ ທຸກຄົນຕ່າງກໍຄອງຄອຍດ້ວຍຄວາມຫວັງ; ຍ້ອນວ່າເພ່ິນໃສ່ຜົມປອມທ່ີຫາງອກຂາວ, ດັ່ງນ້ັນ ເພ່ິນຈ່ືງມີການປ່ຽນແປງໄປຫລາຍ, ແຕ່ ນ້ຳສຽງສຳນຽງ, ຄວາມຄິດ, ຄຳຮຽກຮ້ອງ ແລະ ທັງເຈດຕະນາລົມຕ່າງນ້ັນ ລ້ວນແຕ່ຍັງ ແມ່ນຂອງ ເລນິນ ຜູ້ເກ່ົາຢູ່.

ຕ້ອງໄດ້ກະກຽມການລຸກຮົ້ຂຶ້ນດ້ວຍອາວຸດ! ດ້ວຍການຊັກຊວນເອົາບັນດາທະຫານເຂົ້າຮ່ວມກັບກຳມະກອນ. ຈັດສົ່ງບັນດານັກ ໂບນເຊວິກ ໄປຍັງແຂວງແລະຕາມຕິວເມືອງຕ່າງໆ. ອາວຸດແມ່ນສິ່ງທີ່ຈຳເປັນກ່ວາຫມູ່ສຳລັບຫນ່ວຍກອງລະວັງຫນ້າແດງ ທີ່ປະຈຳຢູ່ຕາມບັນດາໂຮງຈັກໂຮງງານ. ຄັດເລືອກເອົາຜູ້ຊຸ້ນຳທີ່ສະຫລາດສະຫລຽວເຂົ້າຢູ່ໃນແຕ່ລະຫນ່ວຍ.

ຕ້ອງວາງກຳນົດກົດເກນຄັກແນ່ໃຫ້ແກ່ກອງລະວັງຫນ້າແດງ ໃນການເຄື່ອນໄຫວ.

ເພື່ອຊຸ້ນຳນຳພາການລຸກຮົ້ ຕ້ອງສ້າງຕັ້ງຄະນະກຳມະການການທະຫານປະຕິວັດຂຶ້ນ.

ນັ້ນແມ່ນແຜນການທີ່ ເລນິນ ໄດ້ວາງອອກ. ຄະນະບໍລິຫານງານສູນກາງພັກ ກໍໄດ້ພິຈາລະນາແຜນການດັ່ງກ່າວນີ້ ຊຶ່ງເປັນແຜນການ ທີ່ຫ້າສິນໃຈຫລາຍທີ່ສຸດ. ທຸກສິ່ງຢ່າງຈະແຈ້ງ ແລະ ຖືກຕ້ອງເຫມາະສົມດີ. ທຸກຄົນຕ່າງກໍເຫັນດີເຫັນພ້ອມ.

ນອກຈາກກຳມະການ ຂອງ ຄະນະບໍລິຫານງານຂອງພັກສອງຄົນເທົ່ານັ້ນທີ່ຄັດຄ້ານ. ພວກເຂົາໄດ້ປະກາດຕົນເອງວ່າເປັນນັກໂບນເຊວິກ ແຕ່ໃນຕິວຈິງພວກເຂົາຜັດຕ້ານກັບການລຸກຮົ້ຂອງຊຸ້ນຊັ້ນກຳມະຊີບນັ້ນຢ່າງປ່ວງບ້າ. ພວກເຂົາບໍ່ເຫັນດີນຳ ເລນິນ ກໍຄື ການນຳຂອງພັກ. ພວກເຂົາໄດ້ທໍລະຍົດຢ່າງບ້ງອາດ. ໃນນັ້ນມີ ຊິໂນວິເອບ ແລະ ກາເມນເອບ ນັ້ນເອງ. ຊິໂນວິເອບ ແລະ ກາເມນເອບ ເປັນຜູ້ທີ່ກຳທຶດສະຕິໄດ້ດີ. ພວກເຂົາແມ່ນບຸກຄົນທີ່ກ່າວຄຳປາໄສເກັ່ງທີ່ສຸດ. ແຕ່ບາດເວົ້າເຖິງ ການລຸກຮົ້, ພວກເຂົາຜັດສະແດງອາການອ່ອນແອຢ້ານກົວ.

-ເລື່ອງໃດທີ່ຊຸ້ນຊັ້ນກຳມະກອນ ຈະສາມາດຄອບຄຸມລັດໄດ້? -ຊິໂນວິເອບ ແລະກາເມນເອບ ບໍ່ຍອມເຊື່ອ.

ເມື່ອມາຮອດນາທີແຫ່ງການຕັດສິນໃຈແລ້ວ, ແຕ່ພວກເຂົາຜັດຕ້ານກັບການລຸກຮົ້, ຍິ່ງໄປກ່ວານັ້ອີກ, ພວກເຂົາຍັງໄດ້ໄປປະກາດລົງໃນຫນັງສືພິມ ແມນເຊວິກ ວ່າ ພວກ ໂບນເຊວິກ ກຳລັງກະກຽມການລຸກຮົ້. ແລະນອກຈາກນັ້ນ ຊິໂນວິເອບ ແລະກາເມນເອບ ຍັງໄດ້ເປີດເຜີຍ ທຸກສິ່ງຢ່າງໃຫ້ລັດກະບານຊົ່ວຄາວຮູ້ນຳອີກ. ພວກເຂົາເວົ້າວ່າ: "ພວກເຮົາມີຄວາມຄັດຄ້ານຕ້ານກັບການລຸກຮົ້."

ພວກເຂົາໄດ້ເຜີຍແຜ່ທຸກສິ່ງຢ່າງ ກ່ຽວກັບສະຫາຍຂອງຕົນໃຫ້ແກ່ພວກນາຍທຶນຮູ້. ບໍ່ດອກ, ພວກເຂົາທັ້ງສອງບໍ່ແມ່ນສະຫາຍຂອງພວກເຮົາອີກແລ້ວລະ!

"ຂ້ອຍເວົ້າແທ້, ຂ້ອຍບໍ່ໄດ້ຖືວ່າສອງຄົນດັ່ງກ່າວແມ່ນສະຫາຍຂອງຂ້ອຍອີກແລ້ວ ... -ອະລາດີເມຍ ອີລີຊ ໄດ້ບັນທຶກໄວ້ດ້ວຍຄວາມຄຽດແຄ້ນນັ້ນ. - ... ໃນໄລຍະທີ່ຫຍຸ້ງຍາກສັບສົນ, ຕ້ອງແບກຫາບພາລະໜ້າທີ່ທີ່ຫນັກໜ່ວງ, ແຕ່ກັບມີການທໍລະຍົດເກີດຂຶ້ນຄືແນວນີ້ອີກ".

ແຕ່ ເລນິນ ບໍ່ໄດ້ມີອາການຫວັ່ນໄຫວແຕ່ຢ່າງໃດ. ການລຸກຮົ້ຈະຕ້ອງມີຂຶ້ນ. ຄະນະ ເລຂາທິການສູນກາງພັກ ໄດ້ລົງມືກະກຽມການລຸກຮົ້ຢ່າງຮີບຮ້ອນ.

ທີ ສະໂມນນີ

ແຄມຝັ່ງແມ່ນ້ຳ ເນວາ ຢູ່ ເປແຕກສະບວກ, ບ່ອນທີ່ມີນ້ຳໄຫລວຽນ ແລະຫລ່ອງໄຫລໄປທາງຫນອງ ລາໂດກາ ຊຶ່ງເມື່ອຄາວກ່ອນນັ້ນຢູ່ແຫ່ງນີ້ ມີເດ່ນ ສະໂມລີໂນຍ*.

*ເດ່ນຕົ້ນຢາງ.

ເຂົາເຈົ້າຕົ້ມຢາງໃສ່ກະທັ້ງບັກໃຫຍ່ຢູ່ແຫ່ງນີ້.

ເລີຍຈາກເດີ່ນ ສະໂນລີໂນຍ ໄປນິວັດ ຊຶ່ງພາຍລຸນມາໄດ້ກາຍມາເປັນ ວິທະຍາຄານ ສະເພາະພວກຜູ້ຍິງຊຸນນາງ. ວິທະຍາຄານບັນດິດດັ່ງກ່າວ ມີຊື່ເອີ້ນວ່າ ສະໂນນີ, ຍ້ອນວ່າ ບ່ອນນີ້ ແຕ່ກ່ອນແມ່ນເດີ່ນ ສະໂນລີໂນຍ.

ໃນປີ ດຽດ, ພາຍຫລັງທີ່ໄດ້ໂຄ່ນລົ້ມກະສັດລັດເຊຍແລ້ວ, ພວກນັກຮົບນິຍົມທ້າຫລາຍຕ່າງກໍພາກັນກັບເມືອຢູ່ບ້ານຊ່ອງຂອງຕົນ, ສ່ວນວິທະຍາຄານ ສະໂນນີ ກໍໄດ້ກາຍມາເປັນປ້ອມບັນຊາການຂອງສະພາ ໂຊວຍດ ຊຶ່ງເປັນໂຕແທນໃຫ້ແກ່ບັນດາກຳມະກອນ ແລະເຫລົ່າທະຫານແຫ່ງນະຄອນ ເປໂຕຣກຣາດ. ຄະນະກຳມະການການທະຫານປະຕິວັດ ກໍໄດ້ມາຕັ້ງປ້ອມຢູ່ທີ່ ສະໂນນີ ນັ້ນ.

ຄະນະກຳມະການການທະຫານປະຕິວັດ ໄດ້ທຳການພົວພັນຕິດຕໍ່ກັບກຳມະກອນແຕ່ລະໂຮງຈັກໂຮງງານ, ທັງນີ້ກໍເພື່ອຈັດຕັ້ງກອງລະວັງຫນ້າແດງຂຶ້ນເພື່ອທຳການລຸກຮືຢູ່ແຕ່ລະໂຮງຈັກໂຮງງານ. ກຳມະກອນ ເປໂຕຣກຣາດ ຈຳນວນ ຊາວພັນຄົນ ໄດ້ຖືກປະກອບອາວຸດແລະຕົມກ້າແຕ່ຄຳສັ່ງລົງມືເທົ່ານັ້ນ! ຄະນະກຳມະການການທະຫານປະຕິວັດໄດ້ຄັດເລືອກເອົາຄະນະກຳມະການການເມືອງ ໂບນເຊວິກ ລົງໄປພົບກັບພວກທະຫານເຮືອຢູ່ທາງເຂດທະເລ ບານຕິກ, ເພື່ອໂຄສະນາຄັດຄ້ານລັດຖະບານຊົ່ວຄາວຂອງພວກນາຍທຶນ, ແລະ ຕ້ານພວກນາຍທະຫານໃນກອງທັບເຮືອ. ບັນດາເຫລົ່າທະຫານເຮືອທ້າຫລາຍ ໄດ້ຄອງ ກ້າຍາກໃຫ້ມີການສູ້ຮົບເກີດຂຶ້ນ. ບັນດາກອງພົນທະຫານໃຫຍ່ ຕ່າງກໍໄດ້ອ່ອຍມາທາງພັກ ໂບນເຊວິກ ແລະ ຄະນະກຳມະການການທະຫານປະຕິວັດຈົນຫມົດ.

ສ່ວນລັດຖະບານຊົ່ວຄາວນັ້ນເດເປັນຈັ່ງໃດ? ລັດຖະບານຊົ່ວຄາວ ໄດ້ເກີດມີຄວາມຢ້ານກົວພວກ ໂບນເຊວິກ ແລະ ກຳມະກອນເປັນຢ່າງຍິ່ງ.

"ຫ້າມບໍ່ໃຫ້ກຳມະກອນກຶອາວຸດ, - ລັດຖະບານຊົ່ວຄາວໄດ້ອອກຄຳສັ່ງຢ່າງເຂັ້ມງວດ. -ຈັບບັນດາສະມາຊິກຄະນະກຳມະການໃຫ້ຫມົດ! ຈັບໂຕ ເລນິນ ເຂົ້າຄຸກໃຫ້ໄດ".

ແລະແນ່ນອນແລ້ວ, ລັດຖະບານຊົ່ວຄາວກໍບໍ່ໄດ້ນັ່ງນອນໃຈ, ພວກເຂົາພະຍາຍາມ

ເຕົ້າໂຮມກຳລັງເພື່ອຕ້ານກັບພວກ ໂບນເຊວິກ ແລະ ກຳມະກອນ, ຈາກນັ້ນ ກໍແກ່ດຶງ ເອົາກອງທັບມາປິດລ້ອມ ນະຄອນ ເປໂຕຣກຣາດ ໄວ້.

ເລນິນ ໄດ້ຂຽນຈົດໝາຍ ສົ່ງໃຫ້ບັນດາສະຫາຍໃນຄະນະບໍລິຫານງານສູນກາງ ວ່າ ບໍ່ຄວນທີ່ຈະແກ່ຍືດແກ່ຍາວການລຸກຮົ້ອກຕໍ່ໄປ! ເວລາການຕັດສິນໃຈ ໄດ້ມາເຖິງແລ້ວ.

ວັນທີ ຊາວສີ່ ເດືອນຕຸລາ, ວະລາດີເມຍ ອີລີຊ ໄດ້ຂຽນຈົດໝາຍຝາກໄປຫາຄະນະບໍລິຫານງານສູນກາງ ອີກສະບັບຫນຶ່ງ. ໂຟຟາໂນວາ ເປັນຜູ້ໄປສົ່ງໃຫ້ຄະນະບໍລິຫານງານສູນກາງ ແລະທັງເປັນຜູ້ນຳເອົາຈົດໝາຍຕອບມາພ້ອມ. ໃນເວລານັ້ນ, ເລນິນ ຍັງບໍ່ທັນໄດ້ຮັບອະນຸຍາດໃຫ້ອອກຈາກບ່ອນລີ້ຊ່ອນເທື່ອ, ເພາະວ່າ ພວກນາຍທະຫານສາມາດຍິງຫລີ້ຟັນ ເພີ່ນໄດ້ຢ່າງສະບາຍ, ຖ້າຫາກວ່າໄດ້ແນມເຫັນເພີ່ນອອກໄປປະກົດໂຕຢູ່ທາງນອກ.

ຄະນະບໍລິຫານງານສູນກາງພັກ, ພາຍໃຕ້ການຊີ້ນຳຂອງ ວະລາດີເມຍ ອີລີຊ ໄດ້ດຳເນີນການກະກຽມໃສ່ບັ້ນຣົບເທື່ອສຸດທ້າຍນີ້. ແຕ່ເວລາທີ່ແນ່ນອນຂອງການລຸກຮົ້ບັ້ນພັດຍັງບໍ່ທັນຖືກກຳນົດເທື່ອ.

ມ້ວນ ທີ ๔๕ ເດືອນຕຸລາ, ກອງປະຊຸມໃຫຍ່ຄັ້ງທີ II ຂອງສະພາໂຊວຽດ ຈະໄດ້ເປີດຂຶ້ນຢູ່ ສະໂມນນີ. ບັນດາຜູ້ແທນຢູ່ແຕ່ລະຕິວເມືອງໄດ້ພາກັນມາເຕົ້າໂຮມຢູ່ທີ່ ເປໂຕຣ-ກຣາດ. ວະລາດີເມຍ ອີລີຊ ຄິດຢູ່ໃນໃຈ - "ຕ້ອງໄດ້ເລີ່ມລົງມືເຮັດການລຸກຮົ້ ກ່ອນທີ່ໄຂກອງປະຊຸມນີ້, ຫລັງຈາກໂຄ່ນລົ້ມລັດຖະບານຊົ່ວຄາວແລ້ວ ມ້ໍ່ຕ່ມາ ກໍມອບອຳນາດໃຫ້ແກ່ ສະພາ ໂຊວຽດ".

ເລນິນ ໄດ້ຄິດໄວ້ຄືແນວນັ້ນ. ແຕ່ວັນເວລາລ່ວງເລີຍໄປເລ້ືອຍໆ. ເລນິນ ໄດ້ຂຽນຈົດໝາຍສະບັບຫນຶ່ງຝາກໄປຫາຄະນະບໍລິຫານງານອີກ. ວະລາດີເມຍ ອີລີຊ ຮູ້ສຶກກະວົນກະວາຍຫລາຍທີ່ສຸດ. ຢູ່ພາຍໃນຫ້ອງນ້ອຍໆສີຂາວ ທີ່ກະທັດຮັດ ເຊຸກໂດບິນສະກາຍ-ຍາ. ບັດນີ້ ເພີ່ນຮູ້ສຶກຫນັກໜ່ວງຫລາຍກ່ວາທຳມະດາອີກ, ຈົນກະທັ້ງວ່າການຍ່າງວົນວຽນໄປມາຕາມຫ້ອງ ກໍບໍ່ມີເສລີພາບປານໃດ: ບາງທີອາດມີຄົນຢູ່ຫ້ອງອື່ນໆ ຈະໄດ້ຍິນສຽງບາດຍ່າງແລະຄິດວ່າແມ່ນໃຜເດ່ຍ່າງໄປໆມາໆຢູ່ໃນຫ້ອງຂອງໂຟຟາໂນວາ ນັ້ນ?

ຈົນຮອດຄ່ຳມືດມື້ ໂຟຟາໂນວາ ຈຶ່ງກັບມາຮອດເຮືອນ. ອະລາດີເນຍ ອີລີຊ ຄອງກ້າ ນາງດ້ວຍຄວາມກະວົນກະວາຍ.

-ສະຫາຍຈົ່ງໄປສົ່ງຈົດຫມາຍສະບັບຫນຶ່ງອີກແດ່. ໄປດຽວນີ້ໂລດ, ຢ່າສູ່ຟ້າວແກ້ເສື້ອກັນ ຫນາວອອກກ້ອນ. ຂ້ອຍຈະເອົາມາໃຫ້ດຽວນີ້...

ຈາກນັ້ນ ເພິ່ນຟ້າວຍ່າງກັບເຂົ້າໄປໃນຫ້ອງຂອງຕົນ ແລະຂຽນຈົດຫມາຍອີກສະບັບ ຫນຶ່ງເພື່ອສົ່ງໃຫ້ຄະນະບໍລິຫານງານສູນກາງວ່າ:

"ບັນດາສະຫາຍ!

ເຮົາໄດ້ຂຽນຈົດຫມາຍນີ້ ໃນມື້ວັນທີ ๔๔, ໃນລະຫວ່າງທີ່ສະຖານະການຄັບຂັນທີ່ສຸດ. ມັນເປັນອັນຈະແຈ້ງຢູ່ແລ້ວວ່າ ໃນເວລານີ້ຈະຍືດເວລາການລຸກຮົບ ແມ່ນບໍ່ໄດ້ແລ້ວ".

ຕໍ່ຈາກນັ້ນ, ເພິ່ນໄດ້ຂຽນວ່າ: "ຕ້ອງເລັ່ງລົງມື ໃນມື້ໂລດ, ໂຄ່ນລົ້ມລັດຖະບານຊົ່ວຄາວ, ຍາດເອົາອຳນາດມາມື. ປະຫວັດສາດຈະບໍ່ໃຫ້ອະໄພ, ຖ້າວ່າພວກເຮົາຫາກບໍ່ຕັດສິນໃຈ ເຮັດໃນມື້. ຖ້າຮອດມື້ອື່ນແລ້ວ ບາງທີອາດຈະຊັກຊ້າ. ມື້ນີ້ແມ່ນມື້ສຸດທ້າຍແລ້ວ, ພວກເຮົາຕ້ອງມີການກະທຳທີ່ເດັດຂາດທີ່ສຸດ."

-ສະຫາຍຈົ່ງນຳເອົາຈົດຫມາຍສະບັບນີ້ໄປສົ່ງດ່ວນທີ່ສຸດ!-ເລນິນ ກ່າວສົ່ງທ້າຍ ໂຟຟາ-ໂນວາ.

ຈາກນັ້ນ ເພິ່ນກໍຢູ່ເຮືອນແຕ່ຜູ້ດຽວ, ແລະຮູ້ສຶກບໍ່ອຸ່ນຈົດອຸ່ນໃຈຈັກຫນ້ອຍເລີຍ! ເພິ່ນນັ່ງລົງ ແລະ ຕັ້ງໃຈຟັງຄ້າຍຄືກັບວ່າກຳລັງຄອງຄອຍອັນໃດອັນຫນຶ່ງຢູ່.

ທັນໃດນັ້ນ, ຫມາກກະດົ່ງຢູ່ປາກປະຕູກໍໄດ້ດັງຂຶ້ນ. ຮາເຄຍ ຄົນຕິດຕໍ່ໄດ້ເຂົ້າມາຫາ.

-ຢູ່ໃນຕົວເມືອງກຳລັງເກີດເລື່ອງແລ້ວ, ອະລາດີເນຍ ອີລີຊ ເອີ!

ເລື່ອງເກີດຂຶ້ນຢູ່ໃນຕົວເມືອງມີຄືແນວນີ້: ຄ່ຳຄືນມື້ນັ້ນ ທ້ອງຟ້າຮູ້ສຶກວ່າຊຸ່ມອຶ້ນແລະຢູ່ຍາກ. ກະແສລົມແຮງໄດ້ພັດຜ່ານເຂົ້າມາຕັ້ງແຕ່ຟາກແມ່ນ້ຳ ເນວາ ພຸ້ນ. ຫິມະໄດ້ປົກຄຸມໄປທົ່ວກະທັນຫັນຫາງ. ແຕ່ວ່າຜູ້ຄົນໄດ້ໄປເຕົ້າໂຮມກັນເປັນກຸ່ມເປັນພວກຢູ່ຕາມຫ້ອງປາກປະຕູໃຫຍ່ ບ່ອນຕ່າງໆ. ລົດຂົນສົ່ງຄັນຫນຶ່ງ ໄດ້ຂົນທະຫານແລະກຳມະກອນ ຊຶ່ງມີອາວຸດຄົບ

ມືແລ່ນຜ່ານໄປ. ຕໍ່ມາຢູ່ທົ່ວທຸກແຫ່ງກໍປະກົດມີສຽງປືນເຫລັກຍາວ ແລະ ສຽງປືນກົນດັງຂຶ້ນຕິດໆກັນ, ຈາກນັ້ນກໍມິດງຽບໄປ ຢ່າງຫນ້າວິຕົກ.

ຕາມສົ້ນຂີວ ໄດ້ມີກອງໄຟ ແລະ ມີພວກກອງລະວັງຫນ້າແດງພາກັນຍືນຍາມຢູ່. ຕອນກາງເວັນນັ້ນ, ລັດຖະບານຊົ່ວຄາວໄດ້ອອກຄໍາສັ່ງ ໃຫ້ຕັດຂີວຂ້າມແມ່ນ້ໍ ເນວາ. ພວກນັກຮົບທະຫານ ໄດ້ພາກັນຂີ່ມ້າ ແລ່ນໄລ່ຜູ້ຄົນ ທີ່ກໍາລັງໄປມານັ້ນ ຫນີອອກໄປ ແລ້ວກໍຕັນທາງໄວ້. ແຕ່ພວກເຂົາ ສາມາດທໍາລາຍແຕ່ຂີວ ນິກໂກລາຍແອບ ເທົ່ານັ້ນ. ກອງທັບເຮົາ ໄດ້ມາເຖິງທີ່ນັ້ນຢ່າງທັນການ, ແລ້ວໄດ້ຂັບໄລ່ພວກນັກຮົບທະຫານເຫລົ່ານັ້ນກອຍໄປ.

ຖ້າວ່າພວກນັກຮົບທະຫານ ຫາກສາມາດຕັດຂີວໄດ້ ກໍນັບວ່າເປັນອັນຕະລາຍແທ້ໆແລ້ວ: ເພາະວ່າທະຫານຂອງເຮົາທັງຫມົດ ກໍຈະຖືກຕັດແຍກອອກໄປເປັນກຸ່ມໆ. ຈາກນັ້ນ ພວກນັກຮົບທະຫານ ກໍຈະສາມາດ ຕີພວກກໍາມະກອນປະຕິວັດໃຫ້ແຕກສະຫລາຍໄປໄດ້.

ນັ້ນແມ່ນເລື່ອງທີ່ສະຫາຍຕິດຕໍ່ ຣາເຄຍ ໄດ້ນໍາມາເລົ່າ ສູ່ ອະລາດີເມຍ ອີລີຊ ຟັງ.

ອະລາດີເມຍ ອີລີຊ ນັ່ງຕັ້ງໃຈຟັງຢ່າງນິດໆ. ຄາວຫນຶ່ງຕໍ່ມາ ເພິ່ນກໍຜຸດລຸກຂຶ້ນຈາກຕັ່ງ ໂດຍບໍ່ເວົ້າບໍ່ວ່າຫຍັງຈັກຄວາມ ແລ້ວເຂົ້າໄປເອົາຜ້ມປອມອອກມາຈາກຕູ້.

"ເພິ່ນຊິເຮັດຫຍັງເດເນາະ?" - ຣາເຄຍ ເມມເບິ່ງດ້ວຍຄວາມເປັນຫ່ວງ. ພັກໄດ້ມອບຫມາຍຫນ້າທີ່ໃຫ້ເຂົາ, ຊຶ່ງເປັນນັກ ໂບນເຊວິກ ຜູ້ຫນຶ່ງ ເປັນຜູ້ປ້ອງກັນ ເລນິນ.

ໃນລະຫວ່າງການພົບປະກັບບັນດາກຳມະກອນຢູ່ທີ່ຫ້ອງເຮັດວຽກຂອງຕົນທີ່ ແກຣນ-ແລງນັ້ນ, ເລນິນ ກໍໄດ້ອະທິບາຍວ່າຄວນຈະສ້າງສັງຄົມໃຫມ່ນີ້ໄປໃນທຳນອງໃດ. ບາດກ້າວ ເດີ່ນຄັ້ງທຳອິດຍ່ອມມີຄວາມຫຍຸ້ງຍາກສັບສົນກ່ວາສິ່ງອື່ນໃດຫມົດ! ແຕ່ວ່າມັນແມ່ນບາດ ກ້າວທີ່ສຳຄັນທີ່ສຸດ. ເລນິນ ໄດ້ຄົດຫລາຍກ່ວາຫນຶ່ງອາທິດກ່ຽວກັບບັນຫານີ້. ຍາມໃດ ເພິ່ນກໍໄດ້ ກາມຄວາມຄົດເຫັນ, ແລະປຶກສາຫາລືກັບບັນດາຄະນະກຳມະການລັດຖະບານຢູ່ເປັນປະຈຳ.

ອະລາດີເມຍ ອີລີຊ ມັກພົບປະກັບ ອີອາກົບ ມົກຄາຍໂລວິກ ສະແວກລົບ ຢູ່ເປັນເນືອງ ນິດ, ເພາະ ສະແວກລົບ ເປັນປະທານຂອງຄະນະບໍລິຫານສະພາໂຊວຽດທົ່ວລັດເຊຍ. ດັ່ງ ນັ້ນ ເລນິນ ກັບ ສະແວກລົບ ຈຶ່ງໄດ້ແລກປ່ຽນຄວາມຄົດເຫັນຊຶ່ງກັນແລະກັນສະເຫມີ. ພວກເພິ່ນໄດ້ຮ່ວມກັນແກ້ໄຂທຸກໆວຽກງານແລະນັບທັງບັນຫາຂອງຊາດນຳ.

ເລນິນ ປາກະຫນາ ຢາກຍາດແຍ່ງເອົາເວລາແຫ່ງການຍຶດອຳນາດໂຊວຽດນີ້, ຢຸດຕິສົງ

ຄາມຊ່ວຄາວ, ທັງນັ້ກໍເພື່ອໃຫ້ສະພາບການເປັນປົກກະຕິຂຶ້ນ, ໂດຍສະເພາະກໍແມ່ນຢາກ
ໃຫ້ຊີວິດໃຫມ່ຂອງປະຊາຊົນມີຄວາມທຸ່ນທ່ຽງຢ່າງຫມັ້ນແກ່ນແຫນ້ນຫນາ.

ກ່ອນອື່ນຫມົດ, ເພິ່ນໄດ້ຊອກຮູ້ຈາກຊົນຊັ້ນກໍາມະກອນ. "ສິ່ງທີ່ຈໍາເປັນສໍາລັບພວກ
ເຮົານັ້ນ, ກະແມ່ນຢູ່ບ່ອນບາດກ້າວເດີນອັນຫນັກແຫນ້ນຂອງກອງທັບເຫລັກກ້າຂອງຊົນ
ຊັ້ນກໍາມາຊີບ" - ອະລາດີເມຍ ອີລີຊ ໄດ້ຂຽນບົດຂ່າວທີ່ຊ່ວ່າ "ພາລະຫນ້າທີ່ສະເພາະຫນ້າ
ຂອງອໍານາດໂຊວຽດ". ຄະນະບໍລິຫານງານສູນກາງພັກ ໄດ້ເຫັນດີຕໍ່ຄວາມຫມຸ່ງຫວັງແລະ
ບັນດາແຜນການຂອງ ເລນິນ. ບົດຂ່າວດັ່ງກ່າວ ໄດ້ພິມລົງໃນຫນ້າຫນັງສືພິມ "ສັດ-
ຈະທໍາ", ແລະຫນັງສືພິມ "ຂ່າວສານ". ບັນດາເປົ້າຫມາຍອັນໃຫຍ່ຫລວງດັ່ງກ່າວໄດ້ເປີດ
ກ້ວາງອອກສູ່ປະຊາຊົນ. ບັນດານັກຄອມມຸຍນິດ, ກໍາມະກອນ, ຊາວນາຕ່າງກໍເດີນຕາມ
ເລນິນ, ແລະມີຄວາມເຊື່ອຫມັ້ນນໍາ ເລນິນ...

ໃນຫ້ອງເຮັດວຽກຂອງ ເລນິນ ຢູ່ທີ່ວັງ ເກຣມແລງ, ແລະຢູ່ຂ້າງໂຕະຂຽນຫນັງສືມີຕັ່ງ
ຂີ້ຫວ່າຍຫນ່ວຍຫນຶ່ງ, ອະລາດີເມຍ ອີລີຊ ມີຄວາມພໍໃຈນໍາຕັ່ງຫວ່າຍຫນ່ວຍນີ້ເປັນຢ່າງ
ຍິ່ງ, ອາດຈະເປັນຍ້ອນວ່າ ຕັ້ງແຕ່ຄາວຍັງເປັນເດັກນ້ອຍຢູ່ພຸ້ນ, ຄອບຄົວຂອງ ອູລີອານົບຢູ່
ທີ່ ຊິມບຽກ ເຄີຍໄດ້ມີຕັ່ງຫວ່າຍ ທີ່ຄ້າຍໆກັບຕັ່ງຫນ່ວຍນີ້ກໍເປັນໄດ້. ອະລາດີເມຍ ອີລີຊ
ຫວນຄິດເຖິງຕອນຄໍ່ຂອງມື້ຫນຶ່ງໃນຍາມລະດູຫນາວ, ຕົນເຄີຍນັ່ງຢູ່ໃນຫ້ອງກົນເຂົ້າ ຊຶ່ງ
ເຕັມໄປດ້ວຍຄວາມສະດວກສະບາຍ, ພາຍໃຕ້ແສງສະຫວ່າງ ຂອງຕະກຽງພະຍຸທີ່ມີເກົ້າສ
ຂາວນັ້ນ. ຊີວິດແຕ່ຄາວຍັງນ້ອຍເຕັມໄປດ້ວຍຄວາມຜາສຸກ!

ເລນິນ ປາກະຫນາ ຢາກໃຫ້ເດັກນ້ອຍກໍາມະກອນຊາວນາຢູ່ໃນທົ່ວປະເທດໂຊວຽດ
ທັງຫມົດ ໄດ້ມີຊີວິດທີ່ຜາສຸກແລະມ່ວນຊື່ນຄືແນວນີ້.

ພາຍໃຕ້ລະບອບກະສັດລັດເຊຍ ບັນດາເດັກນ້ອຍຂອງກໍາມະກອນຊາວນາ ສຸດແສນມີ
ຄວາມຫຍຸ້ງຍາກໃນການຮໍ່າຮຽນແທ້ໆ. ຫນ້ອຍຫນັກທີ່ສຸດ ທີ່ຈະມີຜູ້ໄດ້ຮຽນຈົບຂັ້ນວິທະ
ຍາໄລ. ສ່ວນທີ່ສາມາດຈົບຂັ້ນ ມະຫາວິທະຍາໄລນັ້ນແຫ່ງຫາຍາກທີ່ສຸດ. ມາບາດນີ້ ຕາມ
ໂຮງຮຽນນັກທະຍົມ, ແລະມະຫາວິທະຍາໄລທັງຫມົດລ້ວນແຕ່ໄດ້ເປີດຕ້ອນຮັບເອົາບັນດາ

ນ້ອງນຸ່ງລູກຫລານຂອງຊາວຜູ້ອອກແຮງງານ. ຈົ່ງຮ່ຳຮຽນ!

ສົງຄາມໄດ້ເຮັດໃຫ້ປະເທດລັດເຊຍລົ້ມລະລາຍ, ປະສົບກັບໄພອຶດຫິວ -ແຕ່ຈຳນວນອັດຕາກິນທົ່ດທ່ີສຸດ ໄດ້ຖືກແຍກອອກໄວ້ສຳລັບພວກເດັກນ້ອຍ. ບ່ໍມີຈັກເທ່ືອດອກ, ແລະ ບ່ໍມີປະເທດນາຍທຶນໃດດອກ, ທ່ີຈະໃຫ້ຄວາມສົນໃຈຕ່ໍເດັກນ້ອຍ ແລະຕ່ໍບັນດາຊາວຜູ້ ອອກແຮງງານຄ໊ືແນວນ້ັ.

ພາຍໃຕ້ລະບອບຂອງຈັກກະພັດລັດເຊຍແລະພວກນາຍທຶນນ້ັນ ບັນດາກຳມະກອນ ຕ້ອງ ໄດ້ເຮັດວຽກ ມ້ືຫນ່ຶງ ສິບສອງຊ່ົວໂມງ, ບາງຄ້ັງກ໊ເຮັດຮອດສິບຫ້າຊ່ົວໂມງ. ເມ່ືອສະພາໂຊ ວຽດໄດ້ຂຶ້ນກຳອຳນາດແລ້ວ, ເລນິນ ປະທານສະພາລັດຖະມົນຕີ ໄດ້ເຊັນຂໍ້ດຳລັດໃນທັນໃດ ນ້ັນໂລດ: ແຕ່ລະຄົນແມ່ນເຮັດວຽກ ມ້ືຫນ່ຶງ ແປດຊ່ົວໂມງ.

ແຕ່ກ່ອນພຶ້ນດິນນາທົ່ດທ່ີສຸດ ແມ່ນຕົກຢູ່ໃນກຳມ໊ືຂອງພວກ ກູລັກ* ແລະ ພວກເຈ້ົາທ່ີ ດິນ. ມາບັດນ້ັບັນດາໂຮງຈັກແລະໂຮງງານ, ທາງລົດໄຟ, ບ່ໍແຮ່, ໂຮງຈັກຂຸດຄົ້ນບ່ໍນ້ຳມັນ, ທະນາຄານ - ທັງຫມົດແມ່ນຕົກເປັນກຳມະສິດຂອງລັດ. ທັງຫມົດນ້ັແມ່ນຂອງປະຊາຊົນ ໂຊວຽດ, ແລະແມ່ນຂອງລັດ. ໂຄ່ນລົ້ມພວກເຈ້ົາທ່ີດິນແລະພວກນາຍທຶນ! ຢາກມ໊ືຊ໊ືດຢູ່ກ໊ ຕ້ອງເຮັດວຽກ. ຄົນໃດບ່ໍເຮັດວຽກ ຄົນຜູ້ນ້ັນກ໊ຈະບ່ໍມ໊ືສິດໄດ້ຊົມໃຊ້.

ການປະຕິວັດອັນສະຫງ່າອ້ົາອາດນ້ັບ໊ືນ້ັບກ້າວເດ ນ ໄປຫນ້າ. ຜູ້ທ່ີເປັນຫົວຫນ້ານ ຳ ພາ ບາດກ້າວເດ ນ ອັນໃຫມ່, ທ່ີຍ ັ ງບ່ໍທັນເຄ ຍ ມ ີ ຈັ ກ ເທ ່ ື ອ ນ ້ ັ ນ ກ ໍ ຄ ື ອ ະ ລ າ ດ ິ ເ ມ ຍ ອ ິ ລ ິ ຊ ແ ລ ະ ພ ັ ກ ຂອງບັນດານັກ ຄອມມຸຍນິດນ້ັນເອງ.

ລ ງ ສ ູ ຊ ນ ະ ບ ດ

ກ່ອນການປະຕິວັດເດືອນຕຸລາ, ແລະໃນຕອນທ່ີ ອະລາດ ິ ເ ມ ຍ ອ ິ ລ ິ ຊ ພ ້ ອ ມ ດ້ວຍບັນດາສະຫາຍອ່ືນໆ ໄດ້ພາກັນໃຊ້ຊ ີ ວ ິ ດ ຢ ູ່ ເ ຊ ິ ແ ນ ວ ນ ້ ັ ນ , ມ ີ ນ ັ ກ ປ ະ ຕ ິ ວ ັ ດ ຍ ິ ງ ຫ ນ ຸ ່ ມ ຜ ູ ້ ຫ ນ ຸ ່ ມ

*ພວກຊາວນາຮັ່ງມ ີ

ຊ່ວ່າ ລີເດຍ ອາເລັກຊັງໂດຣບວະນາ ໂຟຈີເອວາ ໄດ້ເດີນທາງຈາກປະເທດລັດເຊຍມາພົບເພື່ນ. ແລະໃນບັ້ນຕໍ່ມາ ນາງໄດ້ກາຍມາເປັນຜູ້ຊ່ວຍວຸກ ເລນິນ ຢ່າງເອົາການເອົາງານ.

ພາຍຫລັງການປະຕິວັດໄດ້ສຳເລັດລົງແລ້ວ, ລີເດຍ ອາເລັກຊັງໂດຣບວະນາ ໂຟຈີເອວາ ກໍໄດ້ກາຍມາເປັນສະຫາມນປະຈຳ ສະພາລັດຖະມົນຕີ, ນາງມີຫນ້າທີ່ເກັບກຳວຸກງານທຸກຢ່າງ. ນາງໄດ້ຍ້າຍມາຢູ່ ແກຣມລິນ ພ້ື, ເພື່ອຢູ່ໃກ້ໆກັບສະພາລັດຖະມົນຕີ.

-ວະລາດີເມຍ ອີລີຊ, ມີຜູ້ຕາງຫນ້າຈາກເຂດຊົນນະບົດທີ່ກວ້າງໄກມາພົບ, -ນ້ຳສຽງໂຟຈີເອວາ ໄດ້ເວົ້ຂ້ົນຄືແນວນັ້ນ.

-ເຊີນພວກເຂົາເຈົ້າເຂົ້າມາເມ! -ວະລາດີເມຍ ອີລີຊ ຕອບ.

ບັນດາຊາວນາ ທີ່ມີຫນວດຍາວດົກຫນາ, ຜິວດຳຊ້ຳຍ້ອນຕາກແດດຕາກລົມ, ພາກັນເຂົ້າມານັ່ງຢູ່ເທິງຕັ່ງຍາວທີ່ປູດ້ວຍຜ້າຂົນແກະສີຂຽວ. ຕອນຕົ້ນພວກເຂົາຮູ້ສຶກວ່າອຶດອັດໃຈເຕັ້ມທີ. ແຕ່ ເລນິນ ໄດ້ວາງຕົນແບບທຳມະດາ, ດັ່ງນັ້ນ ຈ່ຶງເຮັດໃຫ້ພວກເຂົາເກີດມີຄວາມກ້າຫານຂ້ຶນຢ່າງບໍ່ຮູ້ສຶກຕົວ.

ຍ້ອນທັດສະນະອັນງ່າຍດາຍ, ທຳມະດາຂອງ ເລນິນ ນັ້ນເອງ ຈ່ຶງເຮັດໃຫ້ພວກເຂົາກໍມີຄວາມສະຫລາດວ່ອງໄວຂ້ຶນກ່ວາເກົ່າ. ເລນິນເອງ ກໍຕ້ອງການຄືແນວນັ້ນ. ເລນິນຕ້ອງການໃຫ້ແຕ່ລະຄົນໄດ້ເວົ່າຄວາມຈິງ, ຕາມຄວາມຄິດແລະຄວາມເຂົ້າໃຈຂອງຕົນ.

-ສະຫາຍ ວະລາດີເມຍອີລີຊ, ສະຫາຍເປັນຫົວຫນ້າຂອງພວກເຮົາ, -ບັນດາຜູ້ຕາງຫນ້າເວົ້ຂ້ົນ, -ສະຫາຍເປັນຜູ້ມີຄວາມຮູ້, ຄວາມສາມາດຈົນບໍ່ອາດພັນລະນາໄດ້...

-ກໍບໍ່ໄດ້ຫລວງຫລາຍພາຍມາກຫຍັງດອກ, -ວະລາດີເມຍ ອີລີຊ ເວົ້ຄັດຄ້ານພ້ອມທ້ງ້ມຫົວອອກມາ. -ເປັນຕົ້ນແມ່ນ ຄວາມຮູ້ກ່ຽວກັບຊົນນະບົດນັ້ນຍັງຂາດຢູ່ໃດ.

-ພວກເຮົາຈະລາຍງານກ່ຽວກັບຄວາມເປັນຈິງທ້ງ້ຫມົດຢູ່ຊົນນະບົດ ໃນປັດຈຸບັນສູ່ສະຫາຍຟ້ງ.

-ຂໍເຊີນເລີຍ!

-ກ່ອນອື່ນຫມົດ ອຳນາດໂຊວຽດນ້ີ ກໍແມ່ນສອດຄ່ອງເຫມາະສົມກັບວິງການຊາວກະສິ

ກອນຫລາຍທີ່ສຸດ, ຍ້ອນວ່າມັນໄດ້ປົດປ່ອຍ
ເອົາດິນນາອອກຈາກກຳມືພວກເຈົ້າທີ່ດິນ, -
ຜູ້ຕາງໜ້າທີ່ເກົ່າກ່ວາໜູ່, ມືໜວດຍາວ
ດົກປົກຮອດໜ້າເອິກ ເວົ້າຂຶ້ນ.

-ເວົ້າຕໍ່ໄປ, -ອະລາດີເມຍ ອີລີຊ
ເວົ້າຂຶ້ນ. -ເວົ້າອອກມາໃຫ້ໝົດເລີຍ.

-ຕໍ່ໄປນີ້, ພວກເຮົາຢາກເວົ້າເຖິງເລື່ອງ
ພວກກູລັກ. ພວກກູລັກນີ້ມັນຢາກຈະບີບຮັດ
ການມີຊີວິດໃໝ່ຂອງພວກເຮົາ, ເພາະວ່າມັນ
ຂັດຂວາງການຂະຫຍາຍຕົວ ຂອງພວກມັນ.
ອະລາດີເມຍ ອີລີຊ, ຈົ່ງເຊື່ອໜັ້ນກັບເກວ
ບັນດາຊາວນາທຸກເຫລົ່ານີ້ເທາະ. ພວກກູລັກ
ນັ້ນມັນບໍ່ເປັນເພື່ອນກັບອຳນາດໂຊວຽດ ແຕ່
ຢ່າງໃດ. ພວກກູລັກມັນແມ່ນສັດຕູ...

ເລນິນ ເອງກໍຮູ້ໄດ້ເຖິງສິ່ງເຫລົ່ານັ້ນຄື
ກັນ. ແຕ່ເພິ່ນກໍນັ່ງຟັງດ້ວຍຄວາມເອົາໃຈໃສ່.
ຕັ້ງໃຈຟັງຄຳເວົ້າຂອງຜູ້ຕາງໜ້າ ຊາວນາທຸກ
ນັ້ນດ້ວຍຄວາມຈົດຈໍ່. ເພິ່ນໄດ້ສຳຫລວດ
ກວດກາເບິ່ງ ຄວາມຮອບຮູ້ຂອງຕົນຄືນໃໝ່
ອີກ. ຈາກນັ້ນ ຈົ່ງສະຫລຸບ ແລະກຳນົດຂໍ້ກຳ
ລັກແລະກິດລະບຽບໃໝ່ອອກມາ.

ຍ້ອນເໜດນັ້ນແລ້ວ, ໃນລະດູແລ້ງຂອງ
ປີ ๑๙๑๘, ເລນິນ ຈຶ່ງໄດ້ເຊັນລົງໃນຂໍ້ກຳລັກ

ຂອງສະພາລັດກະນິນຕິວ່າດ້ວຍການສ້າງຕັ້ງສະມາຄົມຂອງຊາວນາທຸກຢູ່ຕາມຊົນນະບົດ. ໃນ
ການຕໍ່ສູ້ຕ້ານກັບພວກກູລັກນັ້ນ, ອຳນາດໂຊວຽດ ກໍໄດ້ຖືເອົາສະມາຄົມຂອງຊາວນາທຸກຍາກ
ນີ້ແລ້ວເປັນບ່ອນອີງ.

ຖ້າດັ່ງນັ້ນແລ້ວ, ພວກກູລັກນັ້ນມັນແມ່ນໃຜກັນແທ້? ໃນປັດຈຸບັນນີ້, ໃນດິນແດນ
ໂຊວຽດແຫ່ງນີ້, ພວກ ກູລັກ ແມ່ນບໍ່ໄດ້ຍັງເຫລືອອີກແລ້ວ.

ພວກກູລັກນັກແມ່ນພວກກະສິກອນຄົນ, ຕາງແຕ່ວ່າພວກນັ້ນຫວ່ແຫລມແລະເປັນ
ຜູ້ຮັ່ງມີໄດ້. ຕັ້ງແຕ່ກ່ແຕ່ກ່ອນ ພວກກະສິກອນເຫລົ່ານີ້ ກໍບໍ່ໄດ້ສ້າງຮັ່ງຄຸນມີດ້ວຍຄວາມເປັນ
ທຳດອກ. ພວກເຂົາສ້າງຮັ່ງຄຸນມີດ້ວຍຄວາມຂີ້ຕົວະຫລອກລວງ, ກັກຕຸນ, ຂູດຮີດແຮງງານ
ຂອງຄົນອື່ນ. ຈາກນັ້ນ ຈຶ່ງກາຍມາເປັນຜູ້ຮັ່ງມີລ້ຳລວຍ, ພວກນັ້ນຍູ່ທ່ຽງຊິດນໃຮ່ດິນນາຕໍ່ຂຶ້ນ
ເລື້ອຍໆ. ພວກນັ້ນໄປກວດຕ້ອນເອົາຊາວນາທຸກຜູ້ບໍ່ມີດິນນາແລະອຸບປະກອນຕ່າງໆໃນເຫລ
ຊົນນະບົດ ອອກມາເຮັດວຽກຮັບຈ້າງໃຫ້ພວກນັ້ນ ຊຶ່ງນັ້ນດາຊາວກະສິກອນເຫລົ່ານັ້ນ ບໍ່ມີ
ເຂົ້າບະເລກິນກຸ້ມຮອດລະດູຊ້ຳ. ດັ່ງນັ້ນ ພວກເຂົາຕ້ອງໄດ້ໄປຢືມເອົາເຂົ້າບະເລດຳນຳພວກ
ກູລັກ ນັ້ນຫນຶ່ງປຸດ*. ຫມາຍຄວາມວ່າພວກເຂົາຕ້ອງໄດ້ໄປໃຫ້ນາໃຫ້ແກ່ພວກກູລັກເປັນຄ່າ
ຕອບແທນ. ແຕ່ບາດຮອດລະດູເກັບກ່ຽວມາ, ທີ່ຈິງພວກເຂົາຄວນແທນເຂົ້າຄືນແຕ່ປຸດ
ດຽວ, ຜັດໃຫ້ໄຊ້ເທົ່າສອງປຸດ ໂດຍບໍ່ມີການຕໍ່ວ່າແຕ່ຢ່າງໃດ. ດັ່ງນັ້ນກໍຊ່ຳກັບວ່າ ພວກຊາວ
ນາທຸກເຫລົ່ານັ້ນມີຊີວິດແບບຂຶ້ນກັບເຂົາທັງຫມົດ. ຍ້ອນຄວາມອຶດຫີວຈຳເປັນກໍຕ້ອງໄດ້
ໂອ່ນເອນໄປນຳພວກເຂົາ ຊຶ່ງບໍ່ຕ່າງຫຍັງກັບເມັດເຂົ້າລີບທີ່ໂອ່ນເອນໄປຕາມກະແສລົມ. ເວ
ເຂົ້າຂອງພວກ ກູລັກ ຈຶ່ງເຕັມໄປດ້ວຍເຂົ້າບະເລຂາວແລະເຂົ້າບະເລດຳຈົນແທ້ນັ້ນອັດ ບໍ່ຕ່າງ
ຫຍັງກັບປ້ອມຫມັ້ນແຫ່ງຫນຶ່ງ. ພວກ ກູລັກມີການຄິດໄລ່; ເຂົ້າບະເລຂຶ້ນລາຄາເທົ່າໃດ
ກໍຍິ່ງດີ ... ຍ້ອນຜົນປະໂຫຍດອັນນັ້ນແລ້ວ, ພວກກູລັກຈຶ່ງຍາມໃດກໍຕຽມພ້ອມທີ່ຈະບີບ
ຄໍຄົນທີ່ຢູ່ໃກ້ຄຽງຕົນ.

---

* ຫົວຫນ່ວຍທີ່ເຄີຍໄຊ້ໄວ້ ຊັ່ງເຄື່ອງຂອງລັດເຊຍ, ຫນຶ່ງປຸດ ເທົ່າກັບ ໑໖,໓ ກິໂລກຣາມ.

ສ່ວນຢູ່ໃນຕົວເມືອງຜັດກຶກໄພອຶດຫົວ ຊຶ່ງນັບມື້ຍິ່ງເປັນຫນ້າວິຕົກ. ແລະອັດຕະຄັດຂຶ້ນເລື້ອຍໆ! ຈະເຮັດແນວໃດບາດນີ້? ຊິເອົາຫຍັງມາລ້ຽງກຳມະກອນແລະພະນັກງານ, ເດັກນ້ອຍ ແລະກອງທັບແດງ? ເຮັດຈັ່ງໃດຈຶ່ງຈະຊອກຫາເຂົ້າບະເລໄດ້?

ແຕ່ກໍຄວນຄິດເບິ່ງວ່າ, ຕາມຊົນນະບົດຍັງມີເຂົ້າບະເລ!

ພຽງແຕ່ວ່າ ພວກກູລັກບໍ່ຢາກມອບໃຫ້ແກ່ລັດ, ພວກມັນໄດ້ຊຸກເຊື່ອງໄວ້ດ້ວຍວິທີຝັງດິນໄວ້.

ໂດຍກໍບໍ່ໄດ້ພ້ອມພຸ້ນພ້ອມພີແຕ່ຢ່າງໃດ! ເພິ່ນບໍ່ອາດຈະປະປ່ອຍໃຫ້ຄົນຢູ່ໃນຕົວເມືອງຕ້ອງອຶດຫົວ, ທັ້ງໆທີ່ສາງເຂົ້າຂອງພວກ ກູລັກ ຜັດມີເຂົ້າບະເລເຕັມອັດຕິແນວນີ້ໄດ້ ແລະທັ້ງໆແມ່ນຊາວນາຜູ້ຂົ້ນເນື້ອປະດາຕົວເປັນຜູ້ປູກຝັງມັນ. ດັ່ງນັ້ນ ເຂົ້າບະເລດັ່ງກ່າວ ຈຶ່ງບໍ່ໄດ້ແມ່ນຂອງພວກ ກູລັກຈັກດີ, ມັນແມ່ນຂອງປະຊາຊົນ.

ເລນິນ ໄດ້ສ້າງທິດສະດີໄວ້ຄືແນວນັ້ນ, ແລະໄດ້ຮຽກຮ້ອງເຖິງກຳມະກອນ.

-ພວກສະຫາຍກຳມະກອນທັ້ງຫລາຍ, -ວະລາດີເມຍ ອີລີຊ ກ່າວຂຶ້ນ, -ຈົ່ງສ້າງຫນ່ວຍບໍລິໂພກປະຈຳໂຮງຈັກໂຮງງານໃຜລາວຂຶ້ນ, ແລ້ວຈົ່ງລົງສູ່ພາກຊົນນະບົດ. ຢູ່ແຫ່ງນັ້ນ ໄດ້ມີສະມາຄົມຂອງຊາວນາທຸກຢູ່ແລ້ວ. ບັນດາສະມາຄົມຊາວນາທຸກເຫລົ່ານັ້ນ, ໄດ້ສະຫນັບສະຫນູນພວກເຮົາ. ແລະພວກຊາວນາກາງກໍໄດ້ອ່ຽງມາທາງພວກເຮົາຄືກັນ. ດັ່ງນັ້ນ ພວກສະຫາຍຈົ່ງໄປປຸກລະດົມພວກເຂົາວ່າ: ຕ້ອງໄດ້ປັບປຸງອຳນາດໂຊວຽດຢູ່ຕາມພາກຊົນນະບົດຄືແນວໃດ. ແລ້ວພວກເຂົາກໍຈະເປັນຜູ້ໃຫ້ຄຳຕອບແກ່ພວກສະຫາຍຄືນວ່າ: ເພື່ອປົດບັງຕາຄົນຫົວນັ້ນ, ພວກກູລັກ ໄດ້ຊຸກເຊື່ອງເຂົ້າບະເລຢູ່ໃສ?

ແລະ ເລນິນ ເອງກໍໄດ້ຮ່າງຂໍ້ຄຳລັດອັນຫນຶ່ງຂຶ້ນ ຊຶ່ງມີເນື້ອຄວາມວ່າ ສະມາຄົມຊາວນາທຸກ ແລະບັນດາຫນ່ວຍຂອງກຳມະກອນ.

ສະພາລັດຊະນິນຕີ ກໍໄດ້ອະນຸມັດຜ່ານກ່ຽວກັບຂໍ້ຄຳລັດດັ່ງກ່າວ. ດ້ວຍເຫດນັ້ນ, ໃນປີທຳອິດການປະຕິວັດ, ເລນິນ ແລະອຳນາດໂຊວຽດ ຈຶ່ງສາມາດກອບກູ້ຊີວິດຊ່ວຍປະຊາຊົນຊາວຜູ້ອອກແຮງງານໃຫ້ຫລຸດພົ້ນອອກຈາກໄພອຶດຫົວໄດ້.

ເທິງແຄມທະເລ ບາແຣນ ທາງຂົ້ນໂລກເຫນືອ, ສາມປີກ່ອນນີ້ ໄດ້ມີເມືອງພົ້ນທະເລແຫ່ງຫນຶ່ງ ຊື່ວ່າ ມູຣະມານ. ມັນເປັນເມືອງທ່າ ທີ່ບໍ່ໃຫຍ່ປານໃດ, ແຕ່ມີຄວາມສຳຄັນທາງທະເລຢູ່ທາງພາກເຫນືອ.



ມື້ຫນຶ່ງ, ໃນລະດູບານໃຫມ່ ຂອງປີ ໑໙໑໔, ແລະໃນຍາມເຊົ້າ, ຕອນທີ່ນ້ຳຫມອກກຳລັງກຸກກ້ວາຄືວມົວ ຢູ່ເທິງຫນ້ານ້ຳທະເລຢູ່ນັ້ນ, ແລະໃນຂະນະນັ້ນ ໄດ້ມີເງົາດຳໆຂອງເຮືອຣົບໂປໂລອອກມາ. ເຮືອລຳດັ່ງກ່າວ ກຳລັງມຸ່ງຫນ້າໄປສູ່ຕົວເມືອງ ມູຣະມານ ແລະແລ່ນປາຍປືນໄປໃສ່ກຳດັ່ງກ່າວ. ເຮືອລຳນີ້ ແມ່ນເຮືອຣົບລາດຕາເວັນຂອງອັງກິດ, ຊຶ່ງກຳລັງມຸ້ງຫນ້າເຂົ້າສູ່ຕົວເມືອງ ມູຣະມານ.

ຫນ້ອຍຫນຶ່ງຕໍ່ມາ, ຜັດມີເຮືອຣົບລາດຕາເວັນລຳຫນຶ່ງມາຈອດທຽບຂ້າງເຮືອດັ່ງກ່າວ

ອີກ. ເຮືອລຳນີ້ ແມ່ນເຮືອຣົບຂອງຝະລັ່ງ, ຕໍ່ຈາກນັ້ນ ກໍມີເຮືອຣົບລາດຕາເວັນຂອງ ອະເມລິກາອີກລຳຫນຶ່ງ.

ກອງທັບຕ່າງປະເທດໄດ້ຍົກພົນຂຶ້ນບົກເທິງຝັ່ງທະເລໂຊວຽດ.

ກຸ່ມ "ອານຕານຕາ" ເປັນຜູ້ຈັດສົ່ງພວກເຂົາມາ. ກຸ່ມ "ອານຕານຕາ" ນີ້ແມ່ນຊື່ເອີ້ນ ພວກສຳພັນທະມິດທາງດ້ານການທະຫານອັງກິດ, ຝະລັ່ງແລະອະເມລິກາໃນສະໄຫມນັ້ນ. ກຸ່ມດັ່ງກ່າວ ແມ່ນກຸ່ມສຳພັນທະມິດຂອງພວກນາຍທຶນ, ແລະລັດຖະບານນາຍທຶນ.

ກຸ່ມ "ອານຕານຕາ" ນີ້ຫວັງຢາກໂຄ່ນລົ້ມອຳນາດປະຕິວັດໂຊວຽດຢູ່ລັດເຊຍ. ພວກເຂົາ ຢ້ານວ່າກຳມະກອນໃນປະເທດອື່ນໆ ຈະນຳເອົາແບບຢ່າງຂອງຄົນລັດເຊຍແລ້ວມາເຮັດການ ປະຕິວັດຢູ່ໃນປະເທດຂອງຕົນ.

ລະດູບານໃຫມ່ ປີ ຄ.ສ ນັ້ນເກີນວ່າເປັນຫນ້າຫວາດຫວັ່ນ.

ໃນລະຫວ່າງການລະດູແລ້ງປີນັ້ນ, ຂະບວນເຮືອຣົບທັງຫມົດຂອງກຸ່ມ "ອານຕານຕາ" ໄດ້ບຸກເຂົ້າມາທາງທະເລຂາວ.

ແມ່ນ້ຳ ດະວິນນາ ທີ່ເຍັນກະດ້າງຢູ່ທາງພາກເຫນືອ, ໄດ້ໄຫລຜ່ານລົງໄປສູ່ທະເລ ຂາວດ້ວຍຄວາມແຮງ.

ໃກຈາກປາກແມ່ນ້ຳດັ່ງກ່າວປະມານຫ້າສິບ ແວກ, ມີເມືອງແຫ່ງຫນຶ່ງ, ມີທາງຫລວ ແຄມທ່າທີ່ເຮັດດ້ວຍໄມ້, ມີໂຮງງານກໍ່ສ້າງ ແລະແປງກຳປັ່ນ, ມີໂຮງເລື່ອຍ, ມີສາງໄມ້ປຸກ ຍາວຍົດໄປຕາມລຳແມ່ນ້ຳທີ່ເຕັມໄປດ້ວຍເຮືອແພນາວາ ທີ່ຂົນລ່ອງໄປມາບໍ່ໄດ້ຂາດ. ຢູ່ ທາງຟາກເບື້ອງກົງກັນຂ້າມນັ້ນ ແມ່ນທ່ຽພາກເຫນືອທີ່ກວ້າງໃຫຍ່ ເຕັມໄປດ້ວຍແຫນໄຄ ຈົນຕິດກັບຕີວເມືອງ. ເມືອງດັ່ງກ່າວມີຊື່ວ່າ ອາຣະຄານແກນ, ຊຶ່ງເປັນເມືອງທ່າເຮືອການ ທະຫານແລະຄ້າຂາຍ, ເປັນປ້ອມທີ່ຫມັ້ນຢູ່ທາງພາກເຫນືອໃຫ້ແກ່ປະເທດລັດເຊຍ.

ກຸ່ມ "ອານຕານຕາ" ໄດ້ຍຶດເອົາເມືອງ ອາຣະຄານແກນ. ພວກທະຫານຂາວ ໄດ້ຈັດພິ ທີຕ້ອນຮັບ ການບຸກໂຈມຕີຂອງກຸ່ມ "ອານຕານຕາ" ດ້ວຍຄວາມປິຕິຊົມຊື່ນ, ເພາະວ່າພວກ ທະຫານຂາວເຫລົ່ານີ້ ເຂົາມີຄວາມຫວັງຢ່າງດຽວວ່າ: ຕ້ອງໂຄ່ນລົ້ມອຳນາດໂຊວຽດ. ພວກ

ເຂົາ ໄດ້ທຳການກໍ່ຄວາມວຸ້ນວາຍຂຶ້ນທີ່ ອາຣະຄານແກນ. ບັນດາກຳມະກອນ, ພ້ອມທັງ ນັກຮົບກອງທັບແດງ, ແລະທະຫານເຮືອ ໄດ້ເສຍສະລະຢູ່ໃນບັ້ນສູ້ຮົບອັນບໍ່ສາມາດຊັ່ງຊາ ກຳລັງໃນເທື່ອນີ້ ເປັນຈຳນວນຫລວງຫລາຍ.

ພວກພໍ້ຄ້າຊາວຂາຍ, ພວກນາຍທຶນ ທີ່ຫລົບລີ້ຊ່ອນຢູ່ນັ້ນກໍໂປໂລຫົວອອກ. ພວກ ນາຍທະຫານຂອງກະສັດລັດເຊຍ ກໍກັບມາມີອຳນາດຄືນອີກ. ສ່ວນຄັ້ງໄດ້ດ້ອງຂຶ້ນ: ຢູ່ ຕາມໂບດຄຸນພໍ່ ໄດ້ມີການຈູດທູບຈູດທຽນ, ຈັດພິທີທຳບຸນ ເພື່ອລະນຶກຫາບຸນຄຸນຂອງພະ ຜ້ເປັນເຈົ້າ.

ບັນດາອົດທີ່ກຳລັງຝືນປະຕິວັດເຫລົ່ານີ້ ໄດ້ກໍ່ກຳທຳເວັນຂຶ້ນຢູ່ທາງພາກຕາເວັນອອກ ໄກ, ຢູ່ທາງຊີເບຣີ, ແລະອູຣານ, ພວກເຂົາໄດ້ບຸກເຂົ້າມາຈົນຮອດເຂດລຳແມ່ນ້ຳ ໂວນ ກາ. ບັນດາເຮືອຮົບລາດຕາເວັນຂອງພວກສັດຕູ, ໄດ້ທຳການຍິກພົນຂຶ້ນບົກທີ່ ເມືອງວະ ລາດີວົດສະຕອກອີກ.

ຈາກນັ້ນ ພວກ ກູລັກ ໃນແຖບ ຊີເບຣີ ກໍໄດ້ທຳການກໍ່ຄວາມວຸ້ນວາຍຂຶ້ນ: ພວກເຂົາ ໄດ້ທຳການນ້ຳເພສະມາຄົມຊາວນາທຸກຍາກ, ນອກນັ້ນພວກນັ້ນຍັງໄດ້ເຂັ່ນຂ້ານັກຄອມ ມຸຍນິດອີກເປັນຈຳນວນຫລາຍໆຄົນ.

ໄດ້ມີການລັ່ງເລືອກຢູ່ຕາມຕິວເມືອງ ແລະຕາມຊົນນະບົດຂອງເຂດແມ່ນ້ຳດົງແລະກູບັ. ພວກນາຍພົນນາຍພັນຂອງທະຫານຂາວ ໄດ້ທຳການຍຶດເອົາເຂດແມ່ນ້ຳດັ່ງກ່າວ. ສ່ວນ ອູແກຣນນັ້ນ ກໍໄດ້ຕົກຢູ່ພາຍໃຕ້ການຄອບຄອງຂອງພວກເຢຍລະມັນ.

ພວກສັດຕູ ໄດ້ປິດລ້ອມອ້ອມປະເທດລັດເຊຍໂຊວຽດ ນັບມື້ນັບແຫ້ນເຂົ້າ.

ໃນຍາມເຊົ້າຂອງມື້ຫນຶ່ງ, ດວງອາທິດຍັງບໍ່ທັນພົ້ນຂອບຟ້າ, ແຕ່ວ່າຢູ່ທາງກ້ຳຕາເວັນ ອອກ, ໄດ້ມີແສງສະຫວ່າງສີທອງຮຸ່ງເຮືອງຂຶ້ນແລ້ວ.

ອະລາດີເມຍ ອີລີຊ ກ້າວອອກຈາກຫ້ອງສ່ວນຕົວທີ່ ແກຣມແລງ, ຊຶ່ງບໍ່ໄກກັບຫ້ອງ ເຮັດວຽກຂອງປະທານສະພາລັດຮະນິນຕີນັ້ນ. ກ້າທຽບໃສ່ຕອນຢູ່ ສະໂນນນີ ແມ່ນໃກ້ກ່ວາ ຫລາຍ.

ຢູ່ທາງສົ້ນລະບຽງໃກ້ໆທາງເຂົ້າຫ້ອງເຮັດວຽກນັ້ນ ມີທະຫານຜູ້ຫນຶ່ງຢືນຍາມຢູ່.

-ສະບາຍດີສະຫາຍ! -ອະລາດີເມຍ ອີລີຊ ເວົ້າຂຶ້ນດ້ວຍຄວາມຍິ້ມແຍ້ມແຈ່ມໃສ.

ເຖິງວ່າການກະທຳແບບນັ້ນ ຈະບໍ່ຖືກກັບກົດລະບຽບປານໃດກໍຕາມ, ແຕ່ ອະລາດີເມຍ ອີລີຊ ກໍມັກຖາມທະຫານຍາມແບບນັ້ນເປັນປະຈຳ. ເມື່ອແນມເຫັນ ອະລາດີເມຍ ອີລີຊ ທະຫານຍາມກໍພ້ອຍຢືນກົ້ງ ແລະຄິດດ້ວຍຄວາມປະຫລາດໃຈວ່າ: "ຊັ້ນແມ່ນເພິ່ນເອົາ ເວລາໃດມານອນ?"

ປະທານສະພາລັດກະມິນຕີຫາກໍອອກຈາກຫ້ອງເຮັດວຽກໄປຫວ່າງເມື່ອຕອນໃກ້ຊິແຈ້ງ ນີ້ນ່າ, ຕາເວັນຍັງບໍ່ທັນຂຶ້ນ, ເລນິນ ຜັດກັບເຂົ້າມາຫ້ອງເຮັດວຽກຂອງເພິ່ນອີກແລ້ວ.

ແຜນທີ່ປະເທດລັດເຊຍແຜ່ນບັກໃຫຍ່ ໄດ້ຫ້ອຍຢູ່ເທິງຝາລະຫວ່າງກາງຂອງປະຕູປ່ອງ ຢ້ຽມທັງສອງໃນຫ້ອງເຮັດວຽກດັ່ງກ່າວ. ອະລາດີເມຍ ອີລີຊ ຢືນເອົາມືຂັດຫລັງ, ແນມ ເບິ່ງສະຫນາມຮົບແຕ່ລະເຂດເທິງແຜນທີ່ເປັນເວລາດົນນານ. ອະລາດີເມຍ ອີລີຊຮູ້ໄດ້ເປັນ ຢ່າງດີກ່ຽວກັບເຫດການທີ່ເກີດຂຶ້ນຢູ່ຕາມແຕ່ລະຕິວເມືອງ, ຕາມເຂດທີ່ຫມັ້ນຊຶ່ງ ກຳລັງມີ ການຕໍ່ສູ້ຢູ່ນັ້ນ. ເພິ່ນຮູ້ຮອດຜູ້ບັນຊາການ ແລະຜູ້ກຳການເມືອງນຳອີກ. ເພິ່ນພະຍາຍາມ ຊອກຮູ້ນິໄສໃຈຄໍ, ຄວາມຮອບຮູ, ແລະຄວາມສາມາດຂອງແຕ່ລະຄົນ.

ໃນເວລາທີ່ພວກສັດຕູໄດ້ບຸກລຸກເຂົ້າມາໃນເຂດໂຊວຽດແລ້ວນັ້ນ, ບັນດາຜູ້ບັນຊາ ການທີ່ມີຄວາມເກັ່ງກ້າສາມາດກໍໄດ້ປະກົດຕົວອອກມາຈາກປະຊາຊົນຢ່າງຫລວ່ງຫລາຍ.

ເປັນຕົ້ນ ວາຊີລີ ອິວາໂນວິກ ຊາປາແອຟ! ວິລະຊົນທີ່ແທ້ຈິງຂອງປະຊາຊົນ. ຈິດໃຈ ອັນອົງອາດກ້າຫານແລະເກັ່ງກ້າສາມາດທາງການທະຫານຂອງ ຊາປາແອຟ ນັ້ນ ໄດ້ກາຍ ເປັນເລື່ອງເທບນິຍາຍເລົ່າສືບຕໍ່ກັນມາເລື້ອຍໆ. ແລະຊື່ສຽງຂອງ ກວີນ ໂວໂຣຊີລົບ ກໍໄດ້ ກາຍມາເປັນຊື່ສຽງຂອງຜູ້ສະຫງ່າອົງອາດຢູ່ໃນຫມູ່ປະຊາຊົນຄືກັນ.

ແລະ ເລນິນ ໄດ້ຄຶດເຖິງ ຟຣຸນເຊ ດ້ວຍຄວາມເຄົາລົບນັບຖືແລະເຊື່ອຫມັ້ນຢ່າງໃຫຍ່ ຫລວງ. ໃນປີ ໑໙໐໕, ນັກໂບນເຊວິກ ມິກຄາອິນ ວາຊີລີເອວິກ ຟຣຸນເຊ ໄດ້ນຳພາ ກັນແກວກຳມະກອນຢູ່ທາງພາກອິວາໂນວາ-ໂວເຊີແນເຊນສະເກ, ເຂົ້າມາລ່ວຍຄຸ້ມເປຣສະ

ນາ ເພື່ອທຳການລຸກຮົ້ກ່ານິດສະກູ, ແລະ ປັດຈຸບັນເຂົາໄດ້ເປັນຜູ້ບັນຊາການກອງທັບໃນ ເຂດທົ່ສຳຄັນທົ່ສຸດ.

ອະລາດິເມຍ ອີລີຊ ແນມຜ່ານໄປຕາມແຕ່ລະແນວສູ້ຮົບ, ເປັນກໍ່ແມ່ນ ໂວໂລຊີລົບ, ບູດີໂອນນີ, ລາໂຊ, ໂກຕົບສະກີ, ເຊອອກຊີ, ຕູຄາແສບສະກີ, ບລີຊູແຄຣ ແລະອື່ນໆ...

ຕາມສະຫນາມຮົບທາງພາກເຫນືອ, ພາກຕາເວັນອອກ, ແລະພາກໃຕ້, ພວກທະ ຫານຂາວແລະພວກກູລັກ ໂດຍມີກຸ່ມ"ອານຕານຕາ" ຊ່ວຍເຫລືອທາງດ້ານກຳລັງ, ໄດ້ຍຶດ ເອົາແຫ່ງປູກເຂົ້າບະເລທາງເຂດຕາເວັນອອກໄວ້ໄດ້. ກຸ່ມ"ອານຕານຕາ"ຢາກສວຍໂອກາດ, ໃນຍາມທົ່ມີໄພອຶດຫີວນີ້ ບໍ່ບຮັດລັດຂອງກຳມະກອນຊາວນາ.

"ກອງທັບແດງ ຕ້ອງໄດ້ຕີຕອບໂຕ້ຢ່າງຂະຫນາດຫນັກຢູ່ທາງພາກຕາເວັນອອກ, -ອະ ລາດິເມຍ ອີລີຊ ຄິດໃນໃຈ. -ຕ້ອງຂັບໄລ່ໂສຫົວ ພວກທະຫານຂາວອອກໃຫ້ພົ້ນຈາກເຂດ ລຸ່ມແມ່ນ້ຳ ໂວນກາ ແລະ ເຂດ ຊິເບຣີ, ແລະພ້ອມດຽວກັນກໍຕີໂຕ້ພວກກູລັກໃຫ້ມັນ ແຕກລະລາຍໄປພ້ອມໆກັນ".

ອະລາດິເມຍ ອີລີຊ ນັ່ງຕັ້ງແຄ້ວຈັບເອົາບິດລາຍງານທົ່ຫາກໍ່ກົ່ກລົ່ງມາແຕ່ລະສະ ຫນາມຮົບອານນີ ຂຶ້ນມາອ່ານ. ອານນີ ເພີ່ນພ້ອມດ້ວຍ ເດົ່ເຊກຊິບສະກີ, ສະແວກລົບ, ຊິເຊຣິນແລະບັນດາສະຫາຍອື່ນໆ ໄດ້ປຶກສາຫາລືຄົ້ນຄ້ວາກ່ຽວກັບສະຖານະການ, ຈົນຮອດ ເດິກົ່ນທ່ຽງຄືນ. ບັນດາຂໍ້ຕົກລົງຕ່າງໆໄດ້ຮັບຜ່ານຫມົດແລ້ວ. ມາບາດນີ້ຕ້ອງໄດ້ຂຽນຈົດ ຫມາຍຝາກໄປຍັງບັນດາຜູ້ບັນຊາການ, ແລະຂຽນຄຳສັ່ງໄປຍັງສະຫນາມຮົບທຸກແຫ່ງ. ອະ ລາດິເມຍ ອີລີຊ ໄດ້ເຮັດວຽກຈົນຮອດຍາມຮຸ່ງເຊົ້າ. ຍາມນັ້ນ ດວງຕາເວັນໃນຍາມລະດູ ຮ້ອນໄດ້ພົ້ນຂຶ້ນສູງຫວິດຫລ້າຄາເຮືອນແລ້ວ, ໂຟຈິເອວາ ໄດ້ເຄາະປະຕູ ເພື່ອລາຍງານວ່າ ມີແຂກຢາກເຂົ້າຢ້ຽມຢາມ. ອະລາດິເມຍ ອີລີຊ ແນມເບິ່ງບັນດາແຂກທົ່ງຫລາຍ ໄດ້ມາ ເຖິງຕາມເວລານັດຫມາຍ.

"ເຫັນໄດ້ໂລດວ່າແມ່ນນາຍທະຫານ," -ອະລາດິເມຍ ອີລີຊ ໃຫ້ຊໍ້ຄິດເຫັນຢູ່ໃນໃຈຜູ້ ດຽວ.

ເພິ່ນຈັບເອົາເຈ້ຍແລະຈົດຫມາຍຍັດເຂົ້າໄວ້ໃນກະເປົາເອກກະສານ, ແລ້ວສົ່ງຕໍ່ໃຫ້ ໂຟຈິເອວາ.

-ໃຫ້ສະຫາຍສົ່ງດ່ວນໂລດເນີ!

ເພິ່ນຍົກມືຂຶ້ນລູບໃບຫນ້າ ຄ້າຍຄືກັບວ່າເພິ່ນຢາກປັດເຂ່ຍຄວາມອຸກອັ່ງແລະຮອຍຍໍ່ຫ ເທິງໃບຫນ້າ, ແລະເພື່ອບໍ່ຢາກໃຫ້ທຸກຄົນໄດ້ເຫັນເຖິງຄວາມເປັນຫ່ວງເປັນໄຍຂອງຕົນນັ້ນ ນໍາ.

ບັນດານັກການທະຫານ ພາກັນກ້າວເຂົ້າມາໃນຫ້ອງ. ພວກເຂົາເຫລົ່ານັ້ນ ແມ່ນບັນ ດາຜູ້ບັນຊາການກອງທັບແດງ ຊຶ່ງເລນິນໄດ້ຮູ້ຈັກພວກເຂົາເປັນຢ່າງດີ. ແລະໃນນັ້ນມີຜູ້ ຫນຶ່ງຊຶ່ງແຕ່ກ່ອນ ແມ່ນນາຍພົນໃນກອງທັບຂອງກະສັດລັດເຊຍ.

-ຈັ່ງໃດບາດນີ້, ລາຍງານແຜນການ ການບຸກໂຈມຕີຂອງພວກເຮົາມາເບິ່ງດູ, - ອະລາດີເມຍ ອີລີຊ ກ່າວກັບບັນດາແຂກຄັ່ງກ່າວ.

ແປກຫລໍ່: ອະລາດີເມຍ ອີລີຊ ຜັດມາຖາມຄວາມເຫັນນໍານາຍພົນເກົ່າຂອງກະສັດ ລັດເຊຍ? ແຕ່ກໍຄວນຈື່ເອົາໄວ້ວ່າ, ເລນິນ ເຄີຍໄດ້ເຊັນຂໍ້ກໍານົດທີ່ເວົ້າວ່າການເຂົ້າຮັບໃຊ້ຢູ່ ໃນກອງທັບແດງນີ້ນັ້ນສຸດທີ່ມີກຽດ, ແລະວ່າກຽດອັນນັ້ນ ແມ່ນເພື່ອບັນດາຊາວນາທຸກ, ກໍາມະກອນ ແລະບັນດາຜູ້ອອກແຮງງານ ແລະນ້ອງນຸ່ງລູກຫລານຂອງພວກເຂົາທັງຫມົດ, ວ່າບໍ່ຄວນເອົາພວກນ້ອງນຸ່ງລູກຫລານຂອງພວກກູລັກ ແລະຊຸນນາງເຂົ້າຮ່ວມຢູ່ໃນກອງທັບ ແດງ, ວ່າຄວນເລືອກເອົານັກຄອມມຸຍນິດ ມາເປັນຜູ້ບັນຊາແລະກໍາການເມືອງຢູ່ໃນກອງ ທັບແດງ.

ແຕ່ປຸບປັບເປັນຫຍັງຜັດມາມີຮອດນາຍພົນຂອງກະສັດລັດເຊຍເຂົ້າຮ່ວມນໍາອີກ! ແບບ ນີ້ກໍຈະເປັນໄປໄດ້ບໍ? ແຕ່ເຂົາແມ່ນນາຍພົນຜູ້ທີ່ມີຄວາມເຊື່ອຫມັ້ນນໍາພາພາລະກິດຂອງ ເລນິນ. ບັນດານັກລ່ວງລານທາງດ້ານການທະຫານ, ຊຶ່ງເປັນຜູ້ທີ່ມີຄວາມຮອບຮູ້ຢ່າງເລິກ ເຊິ່ງ, ມີຄວາມຊື່ສັດສຸດຈະລິດນັ້ນ, ເລນິນ ໄດ້ເຊື້ອເຊີນໃຫ້ເຂົ້າມາຮ່ວມຢູ່ໃນກອງທັບແດງ ຈົນຫມົດ.

ນາຍພົນຜູ້ນັ້ນໄຊ້ໄມ້ຍາວຊີ້ໃສ່ແຜນທີ່, ແລະໄດ້ອະທິບາຍແຜນການໂຈມຕີສູ ຈະລາດີ ເມຍ ອີລີຊ ຟັງ.

-ຖືກຕ້ອງ, ຖືກຕ້ອງ, -ຈະລາດີເມຍ ອີລີຊ ງຶກຫົວສະແດງຄວາມເຫັນດີ.

ຈະລາດີເມຍ ອີລີຊ ໄດ້ໃຫ້ຄວາມເຫັນດີນຳ, ກໍເພາະນັບແຕ່ມື້ວານນີ້, ເພິ່ນເອງພ້ອມ ທັງບັນດາສະຫາຍອື່ນໆ ໄດ້ປຶກສາກັນມາຈົນ ເຖິງ ຂັ້ນກຳແຜ່ນບັນຫາດັ່ງກ່າວນີ້ແລ້ວ. ມາບາດນີ້ເພິ່ນກຳລັງສຳຫລວດເບິ່ງຄືນອີກ.

-ແຜນການນີ້ ເຮົາຄຶດວ່າແນບນຽນທີ່ສຸດ, -ນາຍພົນໃຫ້ຂໍ້ສະຫລຸບຄືແນວນັ້ນແລະ ວາງໄມ້ຊີລົງດ້ວຍຄວາມເພິ່ງພໍໃຈ.

-ຈະແນບນຽນຫລືບໍ່ນັ້ນ, ມັນບໍ່ສຳຄັນປານໃດ, -ຈະລາດີເມຍ ອີລີຊ ກ່າວຂຶ້ນ. -ອັນ ທີ່ສຳຄັນທີ່ສຸດນັ້ນ ແມ່ນໄຊຊະນະ.

-...ສະຫາຍມີຄວາມເຫັນເປັນແນວໃດ? -ເພິ່ນອ່ຽຍມາຖາມບັນດາຜູ້ບັນຊາການ ກອງທັບແດງອີກ.

ພວກເຂົາໄດ້ພາກັນປຶກສາຫາລືກ່ຽວກັບແຜນການໂຈມຕີຢ່າງລະອຽດລະອໍ ແລະຮອບ ຄອບນຳກັນເປັນເວລາດົນພໍສົມຄວນ.

-ເຖິງວ່າສະຖານະການຈະມີຄວາມຫຍຸ້ງຍາກ, -ຈະລາດີເມຍ ອີລີຊ ກ່າວຂຶ້ນ. -ແຕ່ ກອງທັບແດງ ຕ້ອງໄດ້ຮັບໄຊຊະນະ.

ລູກປືນຕ່ຳຊ້ຳສາມລູກ

ຈະລາດີເມຍ ອີລີຊ ພ້ອມດ້ວຍ ນາເດສະດາ ກົງສະຕັງຕິນີບນາ ແລະ ມາຣີອາ ອີລີດ ຈະນາ, ໄດ້ກິນເຂົ້າເຊົ້າຮ່ວມກັນຢູ່ທີ່ເຮືອນຄົວ ຢູ່ ແກຣມແລງ ນີ້, ພວກເພິ່ນໄດ້ມີຫ້ອງ ກິນເຂົ້າສ່ວນຕົວແລ້ວ. ແຕ່ສ່ວນຫລາຍ ຫ້ອງດັ່ງກ່າວ ໄຊ້ເປັນຫ້ອງຕ້ອນຮັບແຂກຄົນທີ່ມາ ແວ່ເຍັ່ມນ້ຳຊາຫລືໄຊ້ເປັນຫ້ອງປຶກສາຫາລືວຽກງານ. ໃນເວລາທີ່ບໍ່ມີຄົນພາຍນອກມາ,

ຫລືວ່າມີແຕ່ພວກເພິ່ນແລ້ວ, ພວກເພິ່ນກໍຈະພາກັນມາຢືນອ້ອມຢູ່ໂຕະນ້ອຍໆໃນເຮືອນຄົວ ແຫ່ງນັ້ນ.

ມັ້ນແມ່ນວັນສຸກພໍດີ. ຢູ່ນິດສະກູ ໄດ້ມີຂໍ້ກຳນົດເອົາໄວ້ວ່າ: ເມື່ອຮອດມື້ວັນສຸກແລ້ວ, ບັນດາຄະນະກຳມະການບໍລິຫານງານສູນກາງ ແລະ ບັນດາລັດຖະມົນຕີທັ້ງຫລາຍຕ້ອງໄດ້ ລົງໄປປ່າໄສຢູ່ຕາມສະຖານທີ່ຊຸມນຸມຂອງບັນດາກຳມະກອນ. ເຈົ້າຄອງກຳແພງນະຄອນ ນິດ ສະກູ ກໍໄດ້ສົ່ງບັດແຈ້ງສະຖານທີ່ບ່ອນຈະໄປກ່າວຄຳປາໄສ ໃຫ້ ອະລາດີເມຍ ອີລີຊ ໄວ້ ລ່ວງຫນ້າແລ້ວ.

ທັນໃດນັ້ນ, ໄດ້ມີໂທລະເລກດ່ວນມາຈາກ ເປໂຕຣກຣາດ. ຫ້ອງໂທລະເລກຂອງລັດ ຖະບານຊົ່ງເຮັດວຽກຢູ່ຕະຫລອດມື້ຕະຫລອດຄືນນັ້ນ ຕັ້ງຢູ່ກະໂຕລະບຽງຂອງສະພາລັດຖະ ມົນຕີດັ່ງນັ້ນໂທລະເລກດັ່ງກ່າວ ຈຶ່ງຖືກສົ່ງເຖິງ ອະລາດີເມຍ ອີລີຊ ກັບບ່ອນໂລດ.

ໂທລະເລກຈາກ ເປໂຕຣກຣາດ ໄດ້ລາຍງານວ່າ, ສະຫາຍ ອູຣິດສະກີ, ປະທານຄະນະ ກຳມາທິການພິເສດ ເພື່ອການຕໍ່ສູ້ຕ້ານກັບພວກອົດທິກຳລັງຝ່ຶນປະຕິວັດ ປະຈຳ ເປໂຕຣກ ຣາດໄດ້ຖືກລອບສັງຫານຕາຍແລ້ວ. ຫນ້ອຍຫນຶ່ງຕໍ່ມາ ທາງກຳແພງນະຄອນນິດສະກູ ກໍ ໄດ້ໂທລະສັບມາວ່າ:

-ສະຫາຍ ອະລາດີເມຍ ອີລີຊ, ທາງກຳແພງນະຄອນນິດສະກູ ຂໍເຕືອນໃຫ້ສະຫາຍ-ຊາບວ່າ, ມັ້ນ ບໍ່ຄວນອອກໄປປາໄສ ບໍ່ວ່າຢູ່ບ່ອນໃດກໍຕາມ, ຈະເປັນອັນຕະລາຍ, ເພາະ ວ່າພວກອົດທິກຳລັງຝ່ຶນປະຕິວັດ ໄດ້ທຳການສ່ຽງໄພສຸດຂີດ.

-ໂອຍຕາຍ, ຄັນຄຶດຢ້ານຫມາຈອກແລ້ວ ກໍບໍ່ຄວນເຂົ້າໄປໃນປ່າເທົ່ານັ້ນແລ້ວ. - ອະລາດີເມຍ ອີລີຊ ຕອບພໍແລ້ວຣິດ, ແລ້ວກໍພ້າວເຂົ້າໄປໃນຫ້ອງເຮັດວຽກຂອງຕົນ.

ອູຣິດສະກີ ໄດ້ຖືກຄາດຕະກຳແລ້ວ. ກ່ອນຫນ້ານີ້ຫນ້ອຍຫນຶ່ງ ໂວໂລດາຣາສະກີ, ນັກ-ໂບນເຊວິກ ທ່ານໜຶ່ງກໍຖືກຄາດຕະກຳເຫມືອນກັນ. ພວກອົດທິກຳລັງຝ່ຶນປະຕິວັດ ໄດ້ຕິດຕາມ ບັນດາຄະນະກຳມະການບໍລິຫານງານສູນກາງພັກແລະລັດຖະບານຢ່າງບໍ່ລົດລະ.

ແຕ່ຄົງຈະເປັນໄປບໍ່ໄດ້ດອກທີ່ຈະບໍ່ໃຫ້ ອະລາດີເມຍ ອີລີຊ ໄປຮ່ວມນຳພວກກຳມະ

ກອນນັ້ນເພາະກຳມະກອນກໍກຳລັງລໍ້ກ່າເພີ່ນຢູ່.

ລິດຄັນຫນຶ່ງແລ່ນເຂົ້າມາຈອດ, ກິນ ຄົນຂັບລິດປະຈຳໂຕຂອງ ເລນິນ, ໄດ້ທຳຫນ້າທີ່ເປັນຜູ້ຂັບລິດໃຫ້ເພີ່ນໃນເທື່ອນີ້ຕາມເດີມ.

ມັ້ນ ອະລາດີເມຍ ອີລີຊ ຈະໄປກ່າວຄຳປາໄສຢູ່ເກີ່ງສອງບ່ອນ. ແລະຕອນຄ່ຳກໍຍັງຈະໄດ້ປະຊຸມຄະນະສະພາລັດກະນິນຕີອີກ.

-ຂ້ອຍຈະໄປປາໄສຢູ່ກຳມະກອນຟັ່ງ, ແລະຕອນຄ່ຳຍັງຈະໄດ້ເຂົ້າຮ່ວມກອງປະຊຸມສະພາລັດກະນິນຕີອີກ, -ອະລາດີເມຍ ອີລີຊ ກ່າວຂຶ້ນຄືແນວນັ້ນ.

ກິນ ໄດ້ແຕ່ແກວ່ງຫົວ:

-ອະລາດີເມຍ ອີລີຊ ເອີຍ, ສະຫາຍເອົາເຫື່ອເອົາແຮງມາແຕ່ໃສຄືຈັ່ງວ່າຫລວງຫລາຍແທ້?

ກິນ ຂັບລິດພາ ເລນິນ ມາຮອດກະຫນິນ ແຊກປູຄອບ, ຊຶ່ງແຕ່ກ່ອນຫນ້ານີ້ກໍແມ່ນໂຮງງານຂອງ ນິກແຄນໂລ ນັ້ນເອງ, ຊຶ່ງ ອະລາດີເມຍ ອີລີຊ ເຄີຍມາແຫ່ງນີ້ເລື້ອຍໆ...

ບັນດາກຳມະກອນ ໄດ້ມາເຕົ້າໂຮມກັນຢູ່ໃນຫ້ອງຜະລິດລູກແຕກ, ຊຶ່ງແມ່ນເຮືອນໄມ້ຫລັງໃຫຍ່ ຫາກໍສ້າງຂຶ້ນສຳເລັດ. ຫນຶ່ງທຸກຄົນຕ່າງກໍພາກັນນັ່ງຢັ່ງຍາຍໄປຕາມແຄມເຄື່ອງຈັກໃຫຍ່, ແລະຕາມທາງຍ່າງກໍມີ. ທຸກຄົນມີໃບຫນ້າອັນເຄັ່ງຂຶມ, ດວງຕາແຕ່ລະຄູ່ບົ່ງບອກເກີ່ງຄວາມຕັ້ງອົກຕັ້ງໃຈຟັງຢ່າງເປັນພິເສດ.

ເລນິນ ໄດ້ເວົ້າເກີ່ງສົງຄາມກາງເມືອງ ແລະ ເວົ້າເກີ່ງການຕໍ່ສູ້ຕ້ານກັບພວກທະຫານຂາວ.

ສ່ວນກຳມະກອນໃນໂຮງງານດັ່ງກ່າວນີ້ໄດ້ຜະລິດອາວຸດ ລູກແຕກກໍເພື່ອຕ້ານກັບພວກທະຫານຂາວຄືກັນ. ຖ້າຫາກຈຳເປັນພວກເຂົາກໍພ້ອມແລ້ວທີ່ຈະໄປຕໍ່ສູ້ຄືກັນ.

ເລນິນ ໄດ້ເຫັນກັບຕາຂອງຕົນເອງວ່າ: ບໍ່ໄດ້, ເກີ່ງຢ່າງໃດກໍດີ, ກຳມະກອນຈະບໍ່ຍອມປະປ່ອຍໂຮງງານຂອງຕົນກໍຄືປະປ່ອຍອຳນາດຂອງຕົນໃຫ້ແກ່ພວກນາຍທຶນເປັນອັນຂາດ.

-ສະຫາຍ ກິນ ເອີຍ, ກຳລັງແຫ່ງຄວາມເຂັ້ມແຂງຂອງພວກເຮົາກໍແມ່ນເລີ່ມຂຶ້ນຈາກ

ບ່ອນນີ້ແລ້ວ. ຊິນຊັ້ນກຳມະກອນ, ກໍບໍ່ຕ່າງຫຍັງກັບຫມໍ້ກັ່ນໄຟ, ຊ່ຳເປັນບ່ອນສົ່ງພະລັງ ແຫ່ງມານະຈິດໃຫ້ແກ່ພວກເຮົາ.

ການຮ່ວມຊຸມນຸມນິດຕິ ໄດ້ສິ້ນສຸດລົງ. ເລນິນໄດ້ອອກຈາກຫ້ອງທຳງານ ໂດຍມີກຳມະກອນຈຳນວນຫລາຍຫຸ້ມລ້ອມນຳໄປສົ່ງເພິ່ນ. ສ່ວນ ກິນ ແມ່ນໄດ້ຕິດຈັກລິດແລະກວມພ້ອມໄວ້ກ້າຢູ່ແລ້ວ. ຄົນຂັບລິດຍາມໃດ ກໍແມ່ນເປັນຜູ້ຮອບຄອບກ່ຳກ້ວນທ່ຳສຸດ. ເບ່ຳພຸ້ນ! ຝູງຄົນຫລວງຫລາຍພ້ຶກ! ແລະພວມກຳລັງຢູ່ໃນໄລຍະທ່ຳບໍ່ສະຫງົບຢູ່ຄືແນວນ້ັ້ກຊ້ຳ. ຄົນຂັບລິດ ກໍຮູ້ໄດ້ກ່ຽວກັບການຄາດຕະກຳ ອຸຣິດສະກີ ນັ້ນດີ. ເຂົາຕ້ອງການຢາກໃຫ້ ອະລາດີເມຍ ອີລິຊ ມາຂ້ຶນລິດໄວໆ...ແຕ່ຜູ້ຄົນຜັດບ່ໍ່ປ່ອຍໃຫ້ເພິ່ນໄປໄດ້. ບັນດາຄຳຖາມປະກົດວ່າ ໄດ້ດັງກ້ອງເຂ້ົ້າມາທັ່ງແປດດ້ານ. ອະລາດີເມຍ ອີລິຊ ກໍໄດ້ໃຫ້ຄຳຕອບແກ່ກຳມະກອນຢ່າງ ມີຊີວິດຊີວາແລະອ່ອນຊ່ຶນ. ໃນທັນໃດນັ້ນ...ໄດ້ມີສຽງປືນດັງກ້ອງຂ້ຶນ. ແມ່ນຫຍັງກັນ ນໍ? ສຽງປືນອ່ຶຫຍັງ? ສ່ວນ ອະລາດີເມຍ ອີລິຊ ຮູ້ສຶກວ່າມີບາງຢ່າງແລ່ນຕຳແຂນເບ້ືອງຊ້າຍ ຂອງຕົນ. ເພິ່ນຢ່າງເຊຊັກໄປ, ຈາກນັ້ນ ກໍໄດ້ຍິນສຽງປືນດັງຂ້ຶນອ່ຶກນັດຫນ່ຶງ. ເພິ່ນຮູ້ສຶກ ວ່າແຂບຈ້ືອຢູ່ກ້ານຄໍ. ຕອນນ້ີ ອະລາດີເມຍ ອີລິຊ ເລ່ີມງ່ໂຕລົງ. ຈາກນັ້ນ ລູກປືນລູກທ່ີ ສາມກໍໄດ້ເຈາະເຂ້ົ້າ ເສ້ືອໃຫຍ່ທາງຫລັງຂອງເພິ່ນຈົນເປ້ັນຮູ.

- ເລນິນຖ້ືກລອບຍິງ! -ສຽງຮ້ອງດ້ວຍຄວາມຢ້ານກົວ ໄດ້ດັງກ້ອງຂ້ຶນ ຢູ່ໃນທ່ານກາງ ຝູງຄົນຈຳນວນຫລວງຫລາຍຢ່າງສະນ່ັ້ນນັ້ນເ ມ ືອງ.

ມ ີແມ່ຍິງຜູ້ຫນ ຶ ່ງ, ເປ ັ ນທ ່ ີ ຕ ້ ອງສົງໄສ, ນ ັ ້ ນ ກ ໍ ມ ີ ເປ ັ ນ ສ ັ ້ ນ ບ ຣ າ ວ ນ ິ ງ ລ ົ ງ ພ ້ ຶ ນ ດ ິ ນ ແ ລ ້ ວ ກ ໍ ພ ້ າ ວ ປ ິ ດ ຫ ນ ີ ອ ອ ກ ຈ າ ກ ເ ດ ່ ີ ນ ໄ ປ . ຝ ູ ງ ຄ ົ ນ ໄ ດ ້ ແ ລ ່ ນ ໄ ປ ຈ ັ ບ ຍ ິ ງ ຄ າ ດ ຕ ະ ກ ອ ນ ຊ ຶ ່ ງ ເ ປ ັ ນ ຄ ົ ນ ຂ ອ ງ ພ ວ ກ ຝ ່ ີ ນ ປ ະ ຕ ິ ວ ັ ດ ນ ັ ້ ນ ໄ ວ ້ ໄ ດ ້ .

- ອ ະ ລ າ ດ ີ ເ ມ ຍ ອ ີ ລ ິ ຊ ! - ກ ິ ນ ຮ ້ ອ ງ . - ສ ະ ຫ າ ຍ ເ ລ ນ ິ ນ !

- ເ ມ ື ອ ເ ຮ ື ອ ນ , - ສ ຽ ງ ເ ວ ົ ້ າ ຄ ່ ອ ຍ ໆ ໄ ດ ້ ດ ັ ງ ອ ອ ກ ມ າ ຈ າ ກ ຣ ິ ມ ສ ິ ບ ນ ັ ້ ນ ຈ ິ ດ ຈ າ ງ ຂ ອ ງ ອ ະ ລ າ ດ ີ ເ ມ ຍ ອ ີ ລ ິ ຊ .

ກ ຳ ມ ະ ກ ອ ນ ຫ ລ າ ຍ ຄ ົ ນ ໄ ດ ້ ເ ຂ ົ ້ າ ມ າ ຊ ່ ວ ຍ ໂ ຈ ມ ເ ພ ິ ່ ນ ລ ຸ ກ ຂ ້ ຶ ນ ໃ ສ ່ ລ ິ ດ . ຈ າ ກ ນ ັ ້ ນ ຝ ູ ງ ຄ ົ ນ ຈ ຳ

ນອນຫລວງຫລາຍດົ່ງກ່າວຕ່າງກໍພາກັນນິ່ງນຽບນ້ອນນອນ. ທຸກຄົນຮູ້ສຶກວ່າສາມາດ ໄດ້ຍິນສຽງຫັນໃຈຂອງ ເລນິນ ແຕ່ລະບາດໆ.

ກິນ ໄດ້ເລ່ງລິດນຸ້ງຫນ້າເຂົ້າສູ່ວັງແກຣມແລງ ດ້ວຍຄວາມໄວ.

-ອະລາດິເມຍ ອີລິຊ ເອີຍ, ຂ້ອຍຈະອຸ້ມເອົາສະຫາຍເຂົ້າໄປໃນເຮືອນເອງດອກ, -ກິນ ໄດ້ເວົ້າຂຶ້ນ ເມື່ອຮອດເຮືອນແລ້ວ.

ແຕ່ ອະລາດິເມຍ ອີລິຊ ບໍ່ຕ້ອງການເຮັດເຊັ່ນນັ້ນ. ເຖິງວ່າຕົນຈະເຈັບປວດແລະເສົ້ອົ່ ນຸ່ງຢູ່ນັ້ນເຕັມໄປດ້ວຍເລືອດກໍຕາມ, ແຕ່ເພິ່ນຍັງອີດສາຍ່າງໄປເອງ, ໂດຍມີ ກິນ ແລະກໍາມະ ກອນທີ່ຮ່ວມເດີນທາງໄປນັ້ນໂຊມສອງຂ້າງ. ເພິ່ນຍ່າງໄປຊ້າໆແລະນິ່ງນຽບ ຈົນຮອດຊັ້ນ ສາມ. ຂັ້ນໃດທາງຂຶ້ນກໍຄືຈ່ງວ່ານັ້ນກວາງໄກແລະ ລໍາບາກເອົາແທ້ໆ!

ນາຣິອາ ອີລິດຈະນາ ແລ່ນອອກມາຕ້ອນຮັບດ້ວຍຄວາມຢ້ານກົວ.

-ໂອໂລເດຍ! ໂອໂລເດຍ!

-ເຈັບຫນ້ອຍຫນຶ່ງທໍ່ນັ້ນ... ຈັກຫນ່ອຍນັນຫາກຊິເຊົ່າດອກ, -ອະລາດິເມຍ ອີລິຊ ເວົ້າຂຶ້ນດ້ວຍນ້ໍສຽງແຫບໆ.

-ເຮັດເສັຽງເອົາໄວ້ ນາຣິອາ ເອີຍ. ຢ່າເຮັດໃຫ້ ນາເດຍ ເກີດຄວາມຢ້ານກົວ.

ຕອນນີ້ ນາເດສະດາ ກົງສະຕັງຕິນິບນາ ບໍ່ຢູ່ເຮືອນ. ນາງກໍາລັງຢູ່ຫ້ອງເຮັດວຽກພຸ້ນ. ສ່ວນຢູ່ທີ່ສະພາລັດຖະມົນຕີ, ຂະນະນັ້ນທຸກຄົນໄດ້ມາເຕົ້າໂຮມກັນຄົບຫນ້າຄົບຕາຫມົດ ແລ້ວ. ທັງນີ້ກໍຍ້ອນວ່າ ອະລາດິເມຍ ອີລິຊ ໄດ້ກໍານົດວ່າຈະເປີດກອງປະຊຸມໃນເວລາເກົ້າ ໂມງແລງ. ທຸກຄົນຕ່າງກໍຮູ້ດີວ່າ ເລນິນ ເປັນຄົນກົງຕໍ່ເວລາສະເຫມີ. ເປັນຄັ້ງທໍາອິດ, ແລະ ເທື່ອດຽວເທົ່ານັ້ນ, ທີ່ປະທານສະພາລັດຖະມົນຕີມາຊ້າ...

ພວກເຂົາໄດ້ພາກັນນໍາເອົາ ເລນິນເຂົ້າໄປຫາຕຽງທີ່ນີ້ເພລາຍກາໂຣປົກໄວ້ຢ່າງຮຽບ ຮ້ອຍ. ແພ່ງກ່າວແມ່ນ ນາເດສະດາ ກົງສະຕັງຕິນິບນາ ເປັນຜູ້ຮັກສາເອົາໄວ້. ຈາກນັ້ນ ພວກເຂົາກໍເອົາ ອະລາດິເມຍ ອີລິຊ ຂຶ້ນນອນເທິງຕຽງ. ປະກົດວ່າເພິ່ນອ່ອນເພຍລົງ ຫລາຍ. ໃບຫນ້າຂອງເພິ່ນລ່າເຫລືອງຈົດໜ້ານ.

- ເປັນຈັ່ງໃດ? - ບັນດາສະຫາຍທັ້ງຫລາຍພາກັນຖາມຂຶ້ນດ້ວຍຄວາມຫວັງ. - ອະລາ ດີເມຍ ອີລີຊ ເຈັບຫລາຍບໍ່? ບໍ່ອັນຕະລາຍປານໃດຕິເບາະ?

- ເພິ່ນເຈັບຫນັກ ອາການຢູ່ໃນຂັ້ນອັນຕະລາຍທີ່ສຸດ...

ເວລານາທີ ໄດ້ຜ່ານໄປຢ່າງເຊື່ອຍຊ້າ. ນັ້ນເດ, ນາເດສະດາ ກ້າສະຕັ້ງຕີນີບນາ ໄດ້ກັບ ມາແຕ່ບ່ອນເຮັດວຽກແລ້ວ. ເປັນຫຍັງນໍ ປະຕູຕ່າງໆ ຈຶ່ງຖືກເປີດອອກແນວນີ້? ເປັນຫຍັງ ຢູ່ເຮືອນຄົ່ວຈຶ່ງມີຄົນຫລາຍແທ້ໆ?

ມີຜູ້ຫນຶ່ງເອົາມືຈັບບ່ານາງຄ່ອຍໆ. ນາງເຂົ້າໃຈເຖິງຄວາມຫມາຍອັນນັ້ນ. ນາງຖາມຂຶ້ນ ລະຫລໍ່ລະຫລັກວ່າ:

- ເພິ່ນຍັງມີຊີວິດຢູ່ຫລືບໍ່?

ສຽງຄວນຄາງໄດ້ດັງກ້ອງມາຈາກຫ້ອງຂອງ ເລນິນ. ນາງພະຍາຍາມອົດກັ້ນສະຕິເອົາໄວ້ ເພື່ອບໍ່ໃຫ້ຮ້ອງໄຫ້ ແລະດວງຕາທັ້ງຄູ່ກໍຍັງແຫ້ງດີເຫມືອນເດີມ. ນາງມຸ່ງຫນ້າເຂົ້າໄປຫາ ອະລາດີເມຍ ອີລີຊ. ເມື່ອແນມເຫັນເມຍເຂົ້າມາ, ເພິ່ນກໍອົດສາຍົ້ມຫົວອອກມາ:

- ບໍ່ເປັນຫຍັງດອກ, ນາເດຍເອີຍ, ສໍາລັບນັກປະຕິວັດແລ້ວ, ເລື່ອງແນວນີ້ມັນແມ່ນ ເລື່ອງທໍາມະດາ. ບາດແຜກໍບໍ່ຫລວງຫລາຍ, ແລ້ວມັນກໍຈະເຊົາເອງດອກ.

ຈາກນັ້ນ ເພິ່ນໄດ້ຫລັບຕານອນລົງ. ເສັ້ນເລືອດຂອງເພິ່ນກໍໄດ້ປະກົດວ່າແລ່ນຊ້າລົງ. ເພິ່ນຄົ່ວວ່ານັບມື້ອ່ອນເພຍລົງເລື້ອຍໆ.

ຫມາຍຄວາມວ່າ ເລນິນ ຈະເສຍຊີວິດໄປແທ້ໆບໍ່?

ລຸມປີທີ່ຫຍຸ້ງຍາກ

ຢູ່ທີ່ລະບຽງຂອງສະພາລັດຖະມົນຕີ, ມີສຽງສັນຍານຂອງໂທລະເລກດັງຂຶ້ນ: ຕິດຕິດ, ຕິດຕິດ, ຕິດຕິດ... ສົ່ງ-ຮັບ, ສົ່ງ-ຮັບ... ພະນັກງານໂທລະເລກຜູ້ຫນຶ່ງ, ນຸ່ງຊຸດທະຫານ ຈັບເອົາກໍ້ເຈ້ຍໂທລະເລກດັ່ງກ່າວ ຊຶ່ງກໍາລັງແລ່ນຢູ່ນັ້ນຂຶ້ນມາເບິ່ງ ດ້ວຍຄວາມຕັ້ງໃຈ. ເຂົາ

ໄດ້ແປຄວາມຫມາຍຂອງສັນຍານລັບດ້ວຍຄວາມຟ້າວຟັ່ງ ແລະຈາກນັ້ນກໍແລ່ນໄປທາງສົ້ນ ລະບຽງທີ່ຫ້ອງຂອງ ເລນິນ.

ນາເດສະດາ ກົງສະຕັງຕິນິບນາ ເປັນຜູ້ເປີດປະຕູອອກ.

-ເອົາເຂົ້າໄປສົ່ງໃຫ້ ວະລາດິເມຍ ອີລິຊ ດຽວນີ້ໂລດ, -ນາງເວົ້າຂຶ້ນ, ພາຍຫລັງທີ່ໄດ້ອ່ານໂທລະເລກດັ່ງກ່າວຈົນສຸດແລ້ວ.

ທະຫານຜູ້ນີ້ ໄດ້ມີຄວາມຮູ້ສຶກຕື່ນຕັນໃຈ, ຕໍ່ຄວາມໄວ້ເນື້ອເຊື່ອໃຈຄືເມື່ອນີ້, ເຂົ້າກ້າວເຂົ້າໄປໃນຫ້ອງດັ່ງກ່າວ.

ຢູ່ແຫ່ງນັ້ນມີຕຽງທີ່ປູດ້ວຍຜ້າແພກາໂຣແຄບໆຫນ່ວຍຫນຶ່ງ. ຢູ່ຂ້າງຕຽງໃກ້ໆກັບປ່ອງຢ້ຽມມີໂຕະຂຽນຫນັງສືຫນ່ວຍຫນຶ່ງ. ວະລາດິເມຍ ອີລິຊ ຢືນຢູ່ຂ້າງໂຕະນັ້ນ, ແຂນເບື້ອງຊ້າຍຂອງເພິ່ນຖືກພັນແລະຫ້ອຍຂຶ້ນໃສ່ເທິງບ່າໄວ້. ເພິ່ນຈ່ອຍຜອມລົງໄປຢ່າງຫລວງຫລາຍ, ຈົນຫນ້າໂກນໂອ້, ແຕ່ວ່າ ດວງຕາທັງຄູ່ຍັງແຫລມຄົມ, ແລະທ່າທາງກໍຍັງວ່ອງໄວຢູ່ຢ່າງເດີມ.

ໂທລະເລກດັ່ງກ່າວ ຖືກສົ່ງມາຈາກນັກຣົບກອງທັບແດງ.

"ວະລາດິເມຍ ອີລິຊ ທີ່ຮັກແພງ! ການຍຶດເອົາຕົວເມືອງ ຊຶ່ງເປັນບ້ານເກີດຂອງສະຫາຍນັ້ນ ເປັນການຕອບໂຕ້ສໍາລັບບາດແຜທີ່ຫນຶ່ງ, ສ່ວນບາດແຜໂຕທີສອງນັ້ນ, ພວກເຮົາຈະຍຶດເອົາຕົວເມືອງ ຊາມາຣາ ໄວ້ໃຫ້ໄດ້!".

-ເກັ່ງຫລາຍ! -ວະລາດິເມຍ ອີລິຊ ອອກປາກຊົມຢ່າງບໍ່ຮູ້ສຶກຕົວ. -ຂໍຂອບໃຈ, ຂອບໃຈ! -ເພິ່ນເວົ້າຊໍ້າດ້ວຍຄວາມສະເທືອນໃຈ. ແລ້ວກໍອ່ານໂທລະເລກຄືນອີກເທື່ອຫນຶ່ງ -"ການຍຶດເອົາຕົວເມືອງຊຶ່ງເປັນບ້ານເກີດຂອງສະຫາຍ..." ກອງທັບເຮົາຍຶດເມືອງຊຶມບຽກ ໄດ້ແລ້ວ, ສະຫາຍນັກໂທລະເລກໄດ້ຍິນຄັກແລ້ວບໍ? ພວກເຮົາໄດ້ຮັບໄຊຊະນະອັນສະຫງ່າງາມອັນຫນຶ່ງແລ້ວ, ນາເດຍ ໄດ້ຍິນຫລືບໍ່?

ທັນໃດນັ້ນ, ວະລາດິເມຍ ອີລິຊ ກໍໄດ້ຂຽນໂທລະເລກຕອບກັບບ່ອນເລີຍ. ເພິ່ນໄດ້ຂຽນຄໍາອວຍພອນ, ແລະຄວາມຂອບໃຈຕໍ່ໄຊຊະນະຂອງນັກຣົບກອງທັບແດງໃນຄັ້ງນີ້. ເພິ່ນ

ໄດ້ຂ່ມນ ວ່າ ເລື່ອງການຍຶດເມືອງ ຊິ່ມບ່ມ ໄດ້ນັ້ນ, ແມ່ນຢ່າປ່ອບາດແຜຊະນິດພິເສດສຳລັບເດັ່ນ.

-ສຳລັບຂ້ອຍແລ້ວແມ່ນບໍ່ມີຢ່າຊະນິດໃດດອກ, ທ່ຈະມີສັບພະຄຸນຊ່ຳກັບໄດ້ຍິນຂ່າວອັນນ້ີ! ບາດນ້ີ ບາດແຜດ້ງກ່າວກ່ຈະສ່ວາງຫາຍຢ່າງໄວວາ, -ອະລາດ໌ເມຍ ອີລິຊ ເວ້ົາຂ້ນ.

ແລະກ່ເປັນເຊ່ນນ້ັນແທ້ອ່ີຫລ, ຫລາຍມ້ື່ຕ່ມາ, ຫນ້ງສ່ືພິມ "ສັດຈະທ່ໍາ" ໄດ້ລົງຂ່າວວ່າຄະນະແພດໄດ້ເວ້ົາວ່າ ສຸກຂະພາບຂອງ ອະລາດ໌ເມຍ ອີລິຊ ໄດ້ຫາຍເປັນປົກກະຕ໌ແລ້ວ. ນັ້ນຄ່ແພດໄດ້ອະນຸຍາດໃຫ້ ອະລາດ໌ເມຍ ອີລິຊ ຄືນໄປເຮ້ດວຽກໄດ້ແລ້ວ.

ໄລຍະນ້ັນ ສະພາບການເລ່ີມຫຍຸ້ງຍາກຫນັກຫນ່ວງ. ພວກກຸ່ມ"ອານຕານຕາ"ຮູ້ສ່ກຕ່ວແລ້ວວ່າ ການຍອກຫລ້ືນກັບພວກກອງທັບແດງນ້ັນນ້ັບວ່ນຕະລາຍທ່ໍ່ສຸດ, ດ່ງນ້ັນ ຈ່ງໄດ້ມ່ການເພ່ີມກ່ໍາລັງຂອງພວກນ້ັນຂ້ືນອ່ກ ... ພວກຮຸກຮານປະເທດໂຊວ່ຽດ ຕອນນ້ີມ່ນ່ໍາກັນທ້ັງຫມ່ດສ່ິບສ່ປະເທດ. ປະເທດລ້ດເຊຍກາຍເປັນປ້ອມຫນ້ັນທ່ໍ່ກ່ກປ່ດລ້ອມ.

-ຢ່ໃນປ້ອມຫນ້ັນທ່ໍ່ກ່ກປ່ດລ້ອມຄ່ແນວ

ນີ້, ການເຄື່ອນໄຫວທາງດ້ານຊີວິດການເປັນຢູ່ຕ້ອງຢູ່ໃນລະບຽບກອງທັບ, - ເລນິນ ກ່າວຂຶ້ນ.

ເພິ່ນໄດ້ສະເຫນີໃຫ້ຫມູນໃຊ້ແຮງງານຂອງແຕ່ລະບຸກຄົນ. ຊາວໂຊວຽດຫມົດທຸກຄົນຕ້ອງໄດ້ເຮັດວຽກຢູ່ຕາມໂຮງຈັກໂຮງງານ, ຕາມອົງການຈັດຕັ້ງ, ຕາມໄຮ່ນາ ແລະຕາມສາຍທາງລົດໄຟ, ເພື່ອເປັນການຊ່ວຍຊູແກ່ກອງທັບແດງ!

ກອງທັບແດງຕ້ອງການອາວຸດ. ບັນດາສະຫາຍກຳມະກອນທັງຫລາຍຈົ່ງຜະລິດອາວຸດຂຶ້ນມາ. ຜະລິດອາວຸດໃຫ້ໄດ້ຫລາຍໆກ່ວານີ້ອີກ.

ກອງທັບແດງມີຄວາມຈຳເປັນທາງດ້ານເຄື່ອງນຸ່ງ, ແລະເກີບ. ບັນດາສະຫາຍກຳມະກອນກໍຈົ່ງຫຍິບເກີບບິດ ແລະເສື້ອກັນຫນາວ, ໃຫ້ໄດ້ຫລາຍກ່ວານີ້ອີກ.

ແຕ່ບັນດາໂຮງຈັກໂຮງງານຍັງຕອບສະຫນອງຄືແນວນັ້ນບໍ່ທັນໄດ້, ເພາະວ່າທາງໂຮງງານຂາດຫນັງເພື່ອຕັດເກີບບິດ. ແລະຂາດແພນຳອີກ. ບາດນີ້ຈະເຮັດຈັ່ງໃດດີ? ຈະເຮັດຈັ່ງໃດ ເພື່ອຈະໃຫ້ປະຊາຊົນແລະກອງທັບແດງໄດ້ມີສົ້ງເສື້ອນຸ່ງຢ່າງພຽງພໍ?

ລັດສະບານແລະພັກໄດ້ປະກາດເປີດບັ້ນສະສົມຮີບໂຮມເອົາສົ້ງເສື້ອນຳປະຊາຊົນ. ທຸກຄົນຕ່າງກໍພາກັນເອົາເສື້ອຂົນສັດ, ເສື້ອໃຫຍ່, ເສື້ອແຈນແຂນຍາວ, ແພພັນຄໍ ແລະກ້ຽຕີນໄປຍັງບ່ອນຮີບໂຮມ.

- ຕ້ອງສັ່ງຍຶດເຄື່ອງນຸ່ງກັນຫນາວທີ່ເຫລືອເຝືອຂອງພວກນາຍທຶນ, ຈົ່ງໄວ້ໃຫ້ພວກເຂົານຸ່ງຄົນລະຜືນເທົ່ານັ້ນກໍພໍ. - ອະລາດີເມຍ ອີລີຊ ເວົ້າກັບ ເດີແຊກຊິນສະກີ. - ສ່ວນບັນດາຊາວຜູ້ອອກແຮງງານນັ້ນ ໄດ້ພາກັນມອບໃຫ້ຈົນຫມົດແລ້ວ, ດ້ວຍເຫດນັ້ນ ພວກຮົ່ງມີກໍຕ້ອງແບ່ງປັນໃຫ້ຄົນນັ້ນລະເບາະຈົ່ງແມ່ນ.

ເດີແຊກຊິນສະກ ເປັນປະທານຂອງຄະນະກຳມາທິການພິເສດທ້ອປະເທດລດເຊຍ, ເພື່ອຕ້ານກັບພວກຝືນປະຕິວັດແລະຕ້ານກັບພວກມ້ຽງເພທຳລາຍ, ຊຶ່ງມັກເອີ້ນຫຍໍ້ໆວ່າ ເຊກາ ນັ້ນເອງ. ເດີແຊກຊິນສະກີ ໄດ້ແຕ່ງໃຫ້ສະມາຊິກຂອງອົງການ ເຊກາ ອອກໄປຊອກຮີບໂຮມສົ້ງເສື້ອແລະເກີບຕາມເຮືອນຂອງພວກຮົ່ງມີ. ຈາກນັ້ນກໍໄດ້ນຳໄປແຈກຢາຍ, ແບ່ງປັນໃຫ້ແກ່ປະຊາຊົນ ແລະກຳມະກອນຜູ້ທຸກຍາກ ແລະນອກນັ້ນ ໄດ້ສົ່ງອອກໃຫ້ກອງ

ທັບແດງຢູ່ທາງແນວຫນ້ານໍາ.

ແຕ່ໄພອຶດທີວນັ້ນ ເປັນໄພພິບັດທີ່ຫນ້າຫວາດຫວັ່ນທີ່ສຸດ. ບັນດາເຄື່ອງບໍລິໂພກທີ່ກຸກ ແບ່ງບັນຕາມບັດຢູ່ຕາມແຕ່ລະຕິວເມືອງ ທີ່ໄດ້ປະຕິບັດມາແຕ່ດົນແລ້ວນັ້ນ ມີອັດຕາບ້ອຍ ຫລາຍຈົນກິນບໍ່ອີ່ມຊໍ້າ.

ລັດຖະບານໂຊວຽດ ໄດ້ຮ່າງກົດລະບຽບອັນຫນຶ່ງອີກ ຊຶ່ງເຂັ້ມງວດທີ່ສຸດ. ກົດຫມາຍ ໃຫມ່ດັ່ງກ່າວ ແມ່ນກົດຫມາຍກ່ຽວກັບການແບ່ງບັນເຄື່ອງບໍລິໂພກ. ສິ່ງດັ່ງກ່າວມີຄວາມ ຫມາຍຢູ່ວ່າ, ບັນດາຊາວກະສິກອນຈໍາຕ້ອງໄດ້ມອບເຂົ້າບະເລ ແລະເຄື່ອງບໍລິໂພກທີ່ເຫລືອ ຄວາມຕ້ອງການທັງຫມົດໃຫ້ແກ່ລັດ. ບັນດາແປ້ງ, ຮໍາ, ຊີ້ນ ແລະເນີຍ - ທັງຫມົດດັ່ງກ່າວ ນີ້ ຕ້ອງສົ່ງໃຫ້ແກ່ກຸ່ມທັບແດງ, ກໍາມະກອນ ແລະລັດຖະກອນ. ບັນດາຊາວກະສິກອນຮູ

ສຶກວ່າມີຄວາມຫຍຸ້ງຍາກໃຈສົມຄວນ, ແຕ່ມັນກໍບໍ່ມີທາງເລືອກອື່ນໃດອີກແລ້ວ.

ຢູ່ທົ່ວຜືນແຜ່ນດິນໂຊວຽດຫນຶ່ງທຸກຄົນ ລ້ວນແຕ່ໄດ້ດຳເນີນລະບອບການແບ່ງປັນ ເຄື່ອງບໍລິໂພກແລະປະຕິບັດຕາມຄຳຂວັນທີ່ວ່າ: ທຸກຄົນຕ້ອງເຮັດວຽກເພື່ອແນວຫນ້າ. ເຄື່ອງບໍລິໂພກທັງຫນຶ່ງແມ່ນກຶກ ແບ່ງປັນຕາມບັດແລະເຄື່ອງນຸ່ງຖົ່ງເສື້ອນັ້ນ ແມ່ນກຶກສະ ຫນອງໃຫ້ຢ່າງສອດຄ່ອງເຫມາະສົມ, ທັງນີ້ກໍຍ້ອນວ່າເຄື່ອງບໍລິໂພກແລະເຄື່ອງນຸ່ງມີຫນ້ອຍ ນັ້ນເອງ. ທາງດ້ານການຂົນສົ່ງໂທລະຄົມນາຄົມ ກໍກຶກເປັນອຳມະພາດ. ລົດໄຟ ແມ່ນມີ ຫນ້າທີ່ຂົນອາວຸດແລະທະຫານອອກໄປປ້ອງກັນປະເທດຊາດ, ກ່ອນຈະຂົນຂໍ້ກໍຕ້ອງມີຫນັງ ສືພິເສດເສຍກ່ອນ. ລະບອບດັ່ງກ່າວ ເລນິນໃຫ້ເອີ້ນວ່າ ລະບອບຄອມມຸຍນິດສະໄຫມ ສົງຄາມ.ຍ້ອນວ່າ ໄລຍະນັ້ນ ແມ່ນຊຸມປີທີ່ຫຍຸ້ງຍາກ! ແຕ່ວ່າກໍຍັງໂຊກດີ, ໃນປີທີ່ມີຄວາມ ຫຍຸ້ງຍາກນີ້, ພວກເຮົາກໍຍັງມີ ເລນິນ ເປັນຜູ້ນຳພາລັດໂຊວຽດ.

ເຫດເກີດຂຶ້ນທີ່ ໂຊໂກນນິກ

ໃນຍາມທີ່ ອະລາດີເມຍ ອີລີຊ ເຈັບແລະອ່ອນເພຍ ຢູ່ໃນຂັ້ນອັນຕະລາຍເກືອບບໍ່ລອດ ຊີວິດຢູ່ນັ້ນ ນາເດສະດາ ກົງສະຕັງຕິນົບນາ ໄດ້ພະຍາຍາມອົດກັ້ນປິດບັງຄວາມວິຕົກກັງວົນ ຍ້ານກົວເຫລົ່ານີ້ເອົາໄວ້. ນາງເປັນຄົນໃຈແຂງ ຈົນເຮັດໃຫ້ທຸກຄົນຕ້ອງຕົກສະເງື່ຫ່ຄວາມ ເດັດດ່ຽວຂອງນາງ.

ແຕ່ບາດມາຮອດຍາມ ອະລາດີເມຍ ອີລີຊ ຫາຍເຊົ່າເປັນປົກກະຕິແລ້ວ, ນາງຜັດມາ ເກີດເຈັບໄຂ້ປ່ວຍລົງໄປ, ແລະອາການຫນັກສົມຄວນ! ບັນດາຫມໍ ໄດ້ເວົ້າວ່າ ມີແຕ່ຊອກ ຫາບ່ອນໃດ ທີ່ມີບັນຍາກາດປອດປ່ຽງເທົ່ານັ້ນ ນາງຈຶ່ງຈະສ່ວາງຫາຍໄດ້.

ຢູ່ໃນໄລຍະຫຍຸ້ງຍາກສັບສົນຄືແນວນີ້, ທົ່ວປະເທດລັດເຊຍຜັດຍັງບໍ່ທັນມີໂຮງຫມໍພັກ ຟື້ນຈັກແຫ່ງ. ມີແຕ່ຢູ່ໃນປ່າ ໂຊໂກນນິກຢູ່ທາງນອກເມືອງມົດສະກູ ບ່ອນດຽວເທົ່ານັ້ນ ທີ່ມີ ໂຮງຮົມສຳລັບພວກເດັກນ້ອຍທີ່ມີສຸກຂະພາບອ່ອນເພຍ. ໂຮງຮົມດັ່ງກ່າວໄດ້ຕັ້ງຢູ່ກາງ

ສວນສາທາລະນະ, ບ້ານຍາກຢູ່ບ່ອນນັ້ນກໍມີຄວາມປອດປ່ຽດ!

ທຸກຄົນຕ່າງກໍໃຫ້ຄຳແນະນຳແກ່ ນາເດສະດາ ກ້າສະຕ້ຽຕິນິບນາ ວ່າ ຄວນໄປພັກຜ່ອນຢູ່ແຫ່ງນັ້ນ.

ເລນິນຫຍ້າງຢູ່ກັບວຽກຫລາຍທີ່ສຸດ. ແຕ່ລະມື້ມີແຕ່ສິນລະວິນຢູ່ນຳການແກ້ໄຂວຽກບ້ານການເມືອງ, ຈິນຮອດເດິກ. ທຸກສິ່ງທີ່ເກີດຂຶ້ນຢູ່ໃນລັດໃຫມ່ນີ້ລ້ວນແຕ່ໄດ້ສ້າງຂຶ້ນຕາມແບບວິທີໃຫມ່ທ້າທາຍ ແລະໂດຍມື ເລນິນ ເປັນຫົວຫນ້ານຳພາ.

ທຸກໆຄືນ, ເກົ້ຈະເປັນຢ່າງໃດກໍຕາມ ເພິ່ນໄດ້ສະລະເວລາຫນຶ່ງຊົ່ວໂມງ, ແລະບອກກັບ ກືນ ວ່າ:

-ພວກເຮົາພາກັນໄປຢາມ ນາເດສະດາ ກ້າສະຕ້ຽຕິນິບນາ ກັນເທາະ?

ລະດູຫນາວ ໄດ້ກ້າວເຂົ້າມາຮອດແລ້ວ. ຫິມະໄດ້ຕົກຢ່າງຫລວງຫລາຍ. ທົ່ວພາກພື້ນດິນຂອງນິດສະກູ ແມ່ນຖືກປົກຄຸມໄປດ້ວຍຫິມະ. ລົດທີ່ຂົນຫິມະກໍຈົນຂົນອອກຈາກຕົວເມືອງນັ້ນເທບຈະບໍ່ທັນ, ຫິມະກອງຄູນຈຸນພຸ່ນເປັນກອງໆ, ຢູ່ຕາມຖະຫນົນຫົນທາງສູງກໍຈົນເກືອບຮອດເຮືອນສອງຊັ້ນ.

ແລະຢູ່ໃນມື້ທ້ານ ຫິມະຫລາຍຄືເມື່ອນັ້ນ, ໃນມື້ຫນຶ່ງຂອງເດືອນມັງກອນ ປີ ໑໙໑໙ ນັ້ນເອງ, ຢູ່ທາງໂຮງຮຽນ ໄດ້ທຳການຕິດຕັ້ງຕົ້ນແປກປີໃຫມ່ຂຶ້ນ. ອະລາດີເມຍ ອີລິຊ ໄດ້ນັດຫມາຍເອົາໄວ້ວ່າຈະມາຮ່ວມພິທີນີ້ໃຫ້ໄດ້. ເວລານັ້ນ ໃກ້ຈະຄ່ຳແລ້ວ, ເພິ່ນເອງແລະ ນາ-ຣິອາ ອີລິດຈະນາ ໄດ້ພາກັນຈັດແຈ່ງອອກເດີນທາງ, ພ້ອມທັງໄດ້ນຳເອົາເຕົ້ານ້ຳນົມສົດມາຕ້ອນ ນາເດສະດາ ກ້າສະຕ້ຽຕິນິບນາ ນຳ.

ເຫມືອນດັ່ງທຸກໆເທື່ອ, ຜູ້ຂັບລົດກໍແມ່ນ ກືນ ຄືເກົ່າ. ນອກນັ້ນ ກໍຍັງມີສະຫາຍປ້ອງກັນອີກຄົນຫນຶ່ງຊື່ວ່າ ເຊບານິບ ເດີນທາງຮ່ວມໄປນຳ.

ມື້ນັ້ນເປັນວັນອາທິດ, ຕາມຖະຫນົນຫົນທາງ ມີຜູ້ຄົນຍ່າງສວ່ານສິນໄປມາຢ່າງຫລວງຫລາຍ. ຖະຫນົນພາຍໃນຕົວເມືອງທີ່ເຕັມໄປດ້ວຍຫິມະ, ໄດ້ກາຍເປັນທາງຍ່າງອັນແຄບໆເບິ່ງແລ້ວບໍ່ຕ່າງຫຍັງກັບຂຸມຄອງເອົາຊື່ໆ, ມີບາງບ່ອນກໍຈົນເກືອບໄປບໍ່ໄດ້ຊ້ຳ, ແຕ່ ກືນ ກໍ

ໄດ້ໃຊ້ຄວາມສາມາດອັນສະຫລາດຄ່ອງແຄ້ວຂອງຕົນ, ຂັບບຸ່ໄປຕາມຝູງຄົນແລະກອງຫົ
ມະໄດ້ຢ່າງບໍ່ຂ້ອງຄາ.

ທັນໃດນັ້ນ, ຢູ່ທາງແຄມປະຕູເຂົ້າສວນ ໂຊໂກນນິກິ, ແລະກໍຢູ່ໃກ້ໆກັບຂົວທາງລົດໄຟ
ນັ້ນ, ນິຊາຍສາມຄົນຍືນຕັນທາງເອົາໄວ້.

-ຢຸດ. ບໍ່ຢຸດຍິງໂລດ!

ກົນ ຄິດວ່າຈະເລັ່ງລົດຜ່ານໄປເລີຍ, ແຕ່ ຈະລາດີເມຍ ອີລີຊ ສັ່ງໃຫ້ຢຸດກ່ອນ. ຈະລາ
ດີເມຍ ອີລີຊ ຄິດວ່າພວກນັ້ນແມ່ນຕຳຫລວດ. ໃນຍາມສົງຄາມ, ຕຳຫລວດກໍຕ້ອງໄດ້ຕິດຕາມ
ລົດທຸກໆຄັນທີ່ແລ່ນອອກນອກຕົວເມືອງ. ສ່ວນພວກເຂົາເຫລົ່ານີ້ຜັດບໍ່ໄດ້ນຸ່ງເຄື່ອງແບບ
ຂອງຕຳຫລວດ, ຍ້ອນວ່າໃນຍາມນັ້ນ ເຄື່ອງແບບສຳລັບຕຳຫລວດຍັງບໍ່ມີພ່ຽງພໍ.

ພໍລົດຄັນດັ່ງກ່າວຈອດເປັນທີ່ຮຽບຮ້ອຍແລ້ວ, ຊາຍທັງສາມກໍພາກັນຟ້າວອ້ອມລົດເອົາ
ໄວ້. ພວກເຂົາເປີດປະຕູລົດອອກກວ້າງ, ພ້ອມທັງຊັກປືນເຂົ້າໃສ່:

-ລົງຈາກລົດດຽວນີ້!

-ຂ້ອຍແມ່ນ ເລນິນເອງ, -ຈະລາດີເມຍ ອີລີຊ ເວົ້າຂຶ້ນ.

ໃນຕອນນີ້ ເພິ່ນກໍຍັງຄິດວ່າເຂົາເຫລົ່ານັ້ນເປັນຕຳຫລວດຢູ່. ແຕ່ມັນແມ່ນຫຍັງກັນ?
ຊາຍທັງສອງຄົນໄດ້ໃຊ້ປາຍປືນສັ້ນຈີ້ເຂົ້າໃສ່ຂະຫນັບຂອງ ຈະລາດີເມຍ ອີລີຊ. ຕອນນີ້ເພິ່ນ
ຮູ້ສຶກວ່າເຢັນວາບບາດຫນຶ່ງ, ຍ້ອນຖືກສຳພັດກັບປາຍປືນສັ້ນນັ້ນ. ຊາຍຜູ້ທີສາມໃສ່ຫມວກ
ຂົນສັດຈອມແຫລມ, ມີໃບຫນ້າຈືດຈາງແລະຫ່ວງແຫ້ງ, ໄດ້ຊອກຄົ້ນຕາມກົ່ງຢ່າງວ່ອງໄວ.
ເຂົາພົບຫນັງສືອະນຸຍາດເຂົ້າເກຣມລິນ ແລະພ້ອມທັງປືນສັ້ນ ບຣາວນິ ຂອງ ເລນິນ.

ແລ້ວພວກໂຈນໄດ້ພາກັນໂດດຂຶ້ນລົດ, ພ້ອມທັງຊັກປືນໃສ່, ແລ້ວກໍຂັບລົດແລ່ນຫນີໄປ.
ລົດໄດ້ແລ່ນຫາຍໄປໃນເງົາມືດ. ເຫດການດັ່ງກ່າວເກີດຂຶ້ນຢ່າງກະທັນຫັນບໍ່ມີໃຜທັນໄດ້ຕັ້ງ
ໂຕຈັກຄົ.

ຈະລາດີເມຍ ອີລີຊ ຄຶດຄຽດ, ແລະນົ່ງນິ່ງຢູ່ຊົ່ວໄລຍະຫນຶ່ງ ຈາກນັ້ນ ເພິ່ນກໍໄດ້ຕຳນິ
ຕົນເອງ.

-ຈັ່ງແມ່ນສິນນ້ຳຫນ້າແທ້ໆ! ບໍ່ພໍຢຸດໆຍ່ອນໆຈິນໃຫ້ພວກມັນລັກເອົາລິດໄປໄດ້.

-ອະລາດິເນຍ ອີລີຊ! ຂ້ອຍຄິດວ່າຊິຍິງພວກມັນ, ແຕ່ຍ້ອນຢ້ານວ່າພວກມັນຊິຍິງສະຫາຍຄືນ! -ກິນ ເວົ້າຂຶ້ນດ້ວຍຄວາມຄຽດ.

-ເອີ, ກໍຖືກຕ້ອງແລ້ວ, ອາດຈະເປັນໄປໄດ້, ໂງ່ຫຍັງຊິນາກໍ່ເລື່ອງ. ເມື່ອພວກເຮົາເປັນຝ່າຍເສຍປຽບຢູ່ແລ້ວ, -ອະລາດິເນຍ ອີລີຊ ອອກຄວາມເຫັນ.

ເພິ່ນແນມໄປທາງສະຫາຍ ເຊບານິບ ແລ້ວກໍຫົວອັກໆຂຶ້ນບັກແຮງໆ. ຮອຍຍິ້ມຂອງເພິ່ນເປັນທີ່ຫນ້າຈັບໃຈ, ຈົນເຮັດໃຫ້ ມາຣິອາ ອີລີດຈະນາ ແລະ ກິນ ເອງກໍອົດຫົວບໍ່ໄດ້. ຄົງຍັງແຕ່ ເຊບານິບ ຜູ້ດຽວເທົ່ານັ້ນທີ່ຍັງຢືນນິ່ງຢູ່ຢ່າງບໍ່ຍິ້ມຫົວແຕ່ຢ່າງໃດ...ມືຂອງເຂົາຍັງຈັບເຕົ້ານ້ຳນົມຢູ່ຢ່າງບໍ່ວາງ.

-ໂອ້, ສິ່ງດຽວທີ່ພວກເຮົາສາມາດ ຮັກສາໄວ້ໄດ້ ຈາກເງື້ອມມືຂອງພວກປຸ້ນກໍຄືເຕົ້ານ້ຳນົມ, ຂໍຂອບໃຈນຳສະຫາຍປ້ອງກັນ! -ອະລາດິເນຍ ອີລີຊ ທັງເວົ້າທັງຍິ້ມຫົວໄປນຳ.

ຈາກນັ້ນ ຫມິດທຸກຄົນຕ່າງກໍຍອກໄຍ ເຊບານິບ ຊ່ວມືຫນ່ຶງມເບ່ິງປ່ືນຢູ່ໃນກ່ົງດ້ວຍທ່າ ທ່ີທ່ີກະວົນກະວາຍ ແລະ ອ່ືກມ່ືຫນ່ຶງກ່ືເຕ້ົານ່ິນ, ແລ້ວກໍພ້ອມພາກັນຍ່າງເຂ້ົາໄປຫາຄະນະ ກຳມະການປ່ົກຄອງຄຸ້ມທ່ີຢູ່ໃກ້ໆກັບທາງລົດໄຟນ້ັນ. ເມ່ືອໄປຮອດແຫ່ງນ້ັນ, ເຂົາເຈ້ົາໄດ້ ຊອກລົດຄັນໃຫມ່, ເພ່ືອໃຫ້ ອະລາດ່ເມຍ ອ່ືລ່ຊ ແລະ ນາຣ່ອາ ອ່ືລ່ດຈະນາ ຂ່ີ່ໄປຮອດໂຮງ ຮຽນ. ແລະໃນເວລາດຽວກັນນ້ັນ ກໍໄດ້ລາຍງານ ເລ່ືອງກ່ືກປ້ັນລົດ, ສູ່ເດ່ືເຊກລ່ນສະກ່ ຮ້ ຢ່າງທັນການ. ພາຍຫລັງທ່ີໄດ້ຮັບຄຳສ່ັງແລ້ວ, ບັນດາຄະນະກຳມະການຂອງຄະນະບໍລ່ຫານ ງານພ່ເສດ, ເພ່ືອຕ້ານກັບພວກຝ່ນປະຕ່ວັດແລະຕ້ານພວກທຳລາຍທ່ີ່ວລັດເຊຍນ້ັນ, ກໍໄດ້ ເລ່ີມແຍກຍ້າຍກັນອອກທ່ີ່ວ່ມ່ດສະກູ, ເພ່ືອຕ່ດຕາມຈັບຄ່ນຮ້າຍລາຍດ່ັງກ່າວ. ແລະຕ່ໍມາບ່ໍ ດ່ນ ພວກນັ້ນກໍ່ກ່ືກຈັບໄດ້ຈ່ນຫມ່ດ.

ເງ່ືາຂອງ ນາເດສະດາ ກ່ງສະຕ່ງຕ່ນ່ບນາ ທ່ີ່ຍ່າງໄປໆມາໆຈາກປ່ອງຢ້ຽມນ້ັນຫາປ່ອງຢ້ຽມ ນ່ີ ຄ້າຍກັບຄ່ນພະເນຈອນ. ນາງໄລ້ສາຍຕາແນມໄປເບ່ິງສວນທ່ີ່ພວມແຈບຈ່ມຢູ່ພ້ືນທ່ີ່ນະ ໃນຍາມລະດູຫນາວ: ເປ້ັນຫຍ້ງ ອະລາດ່ເມຍ ອ່ືລ່ຊ ຄ່ືຈ່ງມາຊ້ົາແທ້? ຫລ່ື ຫາກວ່ານ່ື ຫຍ້ງເກ່ດຂ້ົນແກ່ເພ່ືນບ່ໍ?

ພວກເດ້ກນ້ອຍຫມ່ດທ້ັງໂຮງຮຽນ ກໍໄດ້ມ່ຄວາມເປ້ັນຫ່ວງກະວ່ນກະວາຍເຊ່ັ່ນດຽວ ກັນ. ເຂ້ັມໂມງກໍ່ຄ່ືຈ່ງວ່ານ້ັນຍ້ັບຍ້ັງຊ້ົາເອ່ົາແທ້ໆ.

ໃນທ່ີ່ສຸດ, ສ່ງເວ້ົາອ້ັນເຕ້ັມໄປ້ດ້ວຍຄວາມປ່ິຕ່ິຊ່ນຊ່ມ ກໍໄດ້ດ່ງຂ້ົນທ່ີ່ວເຮ່ືອນ.

-ນາຮອດແລ້ວ!

ອະລາດ່ເມຍ ອ່ືລ່ຊ ແລ່ນເຂ້ົາໄປແຕ່ທາງນອກເດ່ັນພ້ົ, ເສ່ືອນວມຂອງເພ່ືນບ່ໍໃສ່ກະ ດຸມ, ຫນວດແລະຂ່ນຄ້ິວມ່ຫ່ມະບາງໆເກາະຫ້ອຍຢູ່ ແລະສອງພວງແກ້ມກໍແດງຮຸນຮຸນ.

-ພ່ໍເຖ້ົາຫ່ມະ! -ພວກເດ້ກນ້ອຍທ້ັງຫລາຍພາກັນແລ່ນຫຸ້ມເຂ້ົ້າມາຫາ ພ້ອມທ້ັງກອດ ກ້ວ່ອໂຕເພ່ືນ.

ຊ່ືວ່າຈະໄປຮອດ ນາເດສະດາ ກ່ງສະຕ່ງຕ່ນ່ບນາ ໄດ້ນ້ັນ, ຕອນທຳອ່ກ ອະລາດ່ເມຍ ອ່ືລ່ຊ ບ່ໍຢາກເລ່ົາເລ່ືອງກ່ວ່ວກ້ັບພວກປ້ັນດອກ, ແຕ່ຍ້ອນ ນາເດສະດາ ກ່ງສະຕ່ງຕ່ນ່ບນາ

ແນມເບິ່ງເພິ່ນດ້ວຍຄວາມສົງໄສ, ຄ້າຍຄືກັບວ່າມີເລື່ອງທີ່ບໍ່ແຈ່ມໃຈ.

-ເລື່ອງເລັກນ້ອຍເທົ່ານັ້ນແລ້ວ, ນາເດຍເອີ, ມັນເປັນເລື່ອງບໍ່ເປັນຕາເວົ້າຊ້ຳດອກ.

ເມື່ອໄດ້ຟັງເລື່ອງກ່ຽວກັບພວກປຸ້ນແລ້ວ, ນາງກໍຫນ້າຈືດລົງກັບບ່ອນ. ນາງບໍ່ເວົ້າບໍ່ວ່າຫຍັງ, ມີແຕ່ເວົ້າລະບາຍອອກມາຄ່ອຍໆວ່າ:

-ໂຊກດີຫລາຍ, ທີ່ເຈົ້າຍັງມີຊີວິດຢູ່.

ຈາກນັ້ນ, ຄວາມເບີກບານມ່ວນຊື່ນກໍເລີ່ມຕົ້ນຂຶ້ນ. ຕົ້ນແປກປີໃຫມ່ສວຍງາມທີ່ປະດັບດ້ວຍແຜ່ນເຈ້ຍສີເຫລື້ອມປານໃຫມ່ຄຳແລະເຄື່ອງຫລິ້ນທີ່ເຮັດເອົາເອງນັ້ນສູງຈົນເກືອບຄຸງເພດານ. ຕົ້ນໄມ້ ນ້ອຍຍາມລະດູຫນາວ ໄດ້ກະຈາຍກິ່ນຫອມຫວນຊວນຊື່ນຂອງມັນອອກມາທົ່ວຫ້ອງ. ພວກເດັກນ້ອຍຕ່າງ ກໍພາກັນຟ້ອນລຳດິດເຕັ້ນມ່ວນຊື່ນຢູ່ອ້ອມຕົ້ນແປກປີໃຫມ່ນັ້ນ. ອະລາດິເນຍ ອີລີຊ ກໍໄດ້ຟ້ອນລຳນຳພວກເດັກນ້ອຍເຊັ່ນດຽວກັນ. ພວກເດັກນ້ອຍຮ້ອງເພັງ, ອະລາດິເນຍ ອີລີຊກໍຮ້ອງນຳ. ຈາກນັ້ນຈຶ່ງພາກັນຫລິ້ນຫມາກແມວຄຸບຫນູ,ຫລິ້ນເອົາຜ້າມັດຕາ ແລ້ວໄລ່ຈັບກັນ. ທຸກຄົນຕ່າງກໍມີຄວາມມ່ວນຊື່ນສຸດຂີດ. ຄັນວ່າຮອດມື້ນຸ້ນແລ້ວກໍຕ້ອງໃຫ້ມັນມ່ວນຄືມື້ນຸ້ນແທ້ໆ!

ສ່ວນ ນາເດສະດາ ກົງສະຕັງຕິນິບນາ, ພາຍຫລັງທີ່ໄດ້ລາບຂ່າວວ່າ ກ່ອນຫນ້ານີ້ ປະມານສອງຊົ່ວໂມງ ອະລາດິເນຍ ອີລີຊ ຖືກພວກນັກປຸ້ນຈັ້ດ້ວຍປືນສັ້ນ, ຄວາມຕາຍໄດ້ຫຍັບເຂົ້າມາໃກ້ບໍ່ພໍຮອດຂົ້ມຊ້ຳນັ້ນແລ້ວ, ນາງກໍໄດ້ແຕ່ແນມເບິ່ງເພິ່ນ, ແລະຄຶດຂຶ້ນມາດ້ວຍຄວາມທະນົງໃຈວ່າ: "ຈັ່ງແມ່ນເຈົ້າອີງອາດກ້າຫານ, ດັ່ງນັ້ນ ຈ່ຳສາມາດມ່ວນຊື່ນຄືແນວນັ້ນ".

ການສູນເສຍ ທີ່ ເຈັບແສບ

ລົດໄຟຂະບວນຫນຶ່ງໄດ້ແລ່ນແຕ່ ເປໂຕຣກຣາດໄປຍັງ ມົດສະກູ. ອະລາດິເນຍ ອີລີຊ ໄດ້ຂີ່ຢູ່ໃນຂະບວນລົດໄຟດັ່ງກ່າວ. ຜູ້ທີ່ເດີນທາງຮ່ວມມານຳເພິ່ນມີ ເອ໋ອຍກິກຊ໌ ອາເນນາ

ອີລິດຈະນາ. ຕອນນັ້ນ ແມ່ນຢູ່ໃນລະຫວ່າງເດືອນສາມປີ ດດດ. ໂຄມຕະກຽງນ້ຳມັນ ນ້ອຍໄດ້ສາດແສງຮຸ່ງພໍມົວໆແລະຕູ້ລິດໄຟກໍໄດ້ສັ່ນສະເທືອນໄປສຸດທາງ. ກົ່ງລໍ້ທີ່ແລ່ນລົ້ງໄປ ຕາມເສັ້ນທາງຢ່າງເປັນລະບຽບນັ້ນໄດ້ສົ່ງສຽງດັ່ງເປັນສີເສົ້າໆຈາກໃຈຈາກຫນ່ຶ້ງ. ອານນາ ອີລິດ ຈະນາ ນັ່ງຊົດຢູ່ທາງແຈເບື້ອງຫນ່ຶ້ງ. ພວກເພື່ນໄດ້ເດີນທາງກັບມາມິດສະກູ ພາຍຫລັງທີ່ໄປ ສົ່ງສະການ ມາກຕີໂມເຟເອວ, ຊຶ່ງແມ່ນພີ່ວຂອງ ອານນາ ອີລິດຈະນາ ນັ້ນເອງ.

ໄພພິບັດຄັ້ງໃຫມ່ໄດ້ປົກຄຸມໄປທົ່ວປະເທດລັດເຊຍອີກແລ້ວ. ພະຍາດບາດເຍົ່າໄດ້ທຳ ຮ້າຍໃຫ້ແກ່ຄົນຢ່າງຫລວງຫລາຍ, ມັນໄດ້ລຸກລາມໄປທົ່ວທຸກແຫ່ງ, ບໍ່ວ່າຢູ່ຕາມຕົວເມືອງ ກໍຄືຕາມຊົນນະບົດ, ຕາມເສັ້ນທາງແລະສະຖານີລົດໄຟອື່ນໆ - ມີຫລາຍບ່ອນທີ່ເກີດມີພະ ຍາດໄຂ້ຂຶ້ນຊ້ຳມາຈາກໂຕຫມັດໂຕເມັນ ແລະກໍ ມີຫລາຍໆຄົນທີ່ຖືກລົ້ມຕາຍຍ້ອນພະຍາດ ໄຂ້ຂຶ້ນນີ້.ທັງນີ້ກໍຍ້ອນວ່າໂຮງຫມໍ ແລະແພດຍັງມີຫນ້ອຍ, ພ້ອມດຽວກັນນັ້ນຢຸກຢາພັດຂາດ ເຂີນ.

ມາກ ໄດ້ໄປປະຕິບັດວຽກງານຢູ່ທາງ ເປໂຕຣກຣາດ, ແລະໄດ້ເສຍຊີວິດຍ້ອນພະຍາດໄຂ້ ຂຶ້ນ, ຫລ່ງາສອງສາມມື້ຜ່ານມານີ້ເອງ. ຢູ່ປ່າຊ້າ ໂວນກິບ, ແລະຢູ່ກ້ອງຣົ່ມຕົ້ນເປືອຍຂາວ ນີ້, ໄດ້ມີຂຸມຝັງສົບຂຸມທີສາມທີ່ຝັງຢູ່ຄຽງຂ້າງກັບຂຸມຝັງສົບຂອງແມ່ແລະນ້ອງສາວຂອງ ເລ ນິນ.

...ຫລາຍໆປີທີ່ມີທັງຄວາມອ່ອນຊົ່ນລົ້ນເຈົ່ງແລະເຈັບຊ້ຳຫນ້ຳໃຈນັ້ນ, ມັນເຄີຍໄດ້ສະ ຫນິດຕິດພັນກັບ ມາກ ຢູ່ໃນລະຍະຜ່ານມາ. ຕັ້ງແຕ່ສະໄຫມຍັງຫນຸ່ມ, ເຂົາໄດ້ເປັນເພື່ອນ ທີ່ສະນິດສະຫນົມກັບ ສາຊາ. ຫລັງຈາກ ສາຊາ ຖືກໂທດປະຫານໄປແລ້ວ, ມາກກໍໄດ້ ກ້າວເຂົ້າມາຮ່ວມຊີວິດຢູ່ໃນຄອບຄົວຂອງພວກເພື່ນ. ເຂົາເປັນຄົນທີ່ສະຫລາດສະຫລວ, ທັງຊື່ສັດສຸດຈະລິດ, ດັ່ງນັ້ນ ເຂົາຈ່ຶງໄດ້ກາຍມາເປັນຜູ້ທີ່ໃກ້ຊິດຕິດພັນແລະສະນິດສະຫນົມ ຮັກແພງຂອງທຸກໆຄົນ, ຈົນບໍ່ສາມາດຈະພັນລະນາໄດ້!

ຂະບວນລົດໄຟດັ່ງກ່າວໄດ້ບຸຜ່ານເງົາມືດຂອງຍາມຄ່ຳຄືນໄປດ້ວຍຄວາມໄວ. ເຂດປ່າດົງ ໃນຍາມເດືອນມືນາ, ຍືນເຈັ່ນເທົ່ນຢູ່ຄັ່ບຮາວຮ້ອສີດຳ ເລາະລົງໄປຕາມຂອກທາງລົດໄຟ.

ຫມູ່ບ້ານທົ່ມີຫລ້ງຄາມຸງດ້ວຍຫຍ້າ ໄດ້ທະຍອຍກັນປະກົດຂຶ້ນຢູ່ເບື້ອງຫນ້າເລື້ອຍໆ. ບັນດາ ຫລັກທໍ່ຄ້ວນສູງໆຂອງບັນດາໂຮງຈັກໂຮງງານຕ່າງກໍໄດ້ຕັ້ງເທີ້ເລີ້ຢູ່ຢ່າງງົບໆ. ແຕ່ວ່າຂະນະ ນັ້ນ ຍັງບໍ່ທັນມີຄ້ວນພົ່ນຂຶ້ນເທື່ອ. ບັນດາໂຮງຈັກໂຮງງານທັ້ງຫລາຍທົ່ເຄື່ອນໄຫວໄດ້ນັ້ນ ກໍນັບມື້ລິດນ້ອຍກອຍລົງ, ທັ້ງນີ້ກໍ້ຍ້ອນວ່າຂາດວັດຖຸດິບແລະວັດຖຸເຊື້ອເພີງ. ການຜະລິດຢູ່ ຕາມໂຮງຈັກໂຮງງານກໍ່ກໍ່ຢຸດສະງັກລົງ ອັນພາໃຫ້ເກີດສະພາບສັບສົນວຸ້ນວາຍຂຶ້ນ.

ສ່ວນຄວາມເຈັບແຄ້ນອັນໃຫມ່ ກໍກໍາລັງລໍ້າຢູ່ທີ່ ນິດສະກູ ພຸ້ນອີກ. ອີອາກິບ ນິກ-ຄາຍໂລວ໊ກ ສະແວກລິບ, ປະທານຄະນະບໍລິຫານງານສູນກາງທົ່ວລັດເຊຍ ຜັດໄດ້ປ່ອຍໂຊ ລົງອີກ, ດ້ວຍພະຍາດທົ່ໄດ້ຕິດແປດມາແຕ່ປະເທດ ເອີດສະປາຍ ພຸ້ນ, ມັນເປັນເຊື້ອພະ ຍາດທົ່ບໍ່ເຄີຍພົບເຫັນຈັກເທື່ອ ໃນປະເທດໂຊວ໊ຽດ, ໃນສະໄຫມນັ້ນ ເຂົາເຈົ້າໄດ້ເອີ້ນພະ ຍາດໄຂ້ຫວັດໃຫຍ່ວ່າໄຂ້ເອີດສະປາຍ. ມັນໄດ້ທໍາລາຍລ້າງຜານຊີວິດຄົນເປັນຈໍານວນພັນໆ ຢ່າງບໍ່ມີຄວາມປານີ. ຈາກນັ້ນ ກໍຍັງມີພະຍາດໄຂ້ຂໍ້ນ, ໄພອຶດຫີວ, ສົງຄາມກາງເມືອງ. ບັນດາໄພພິບັດໄດ້ທະຍອຍກັນເຂົ້າມາຢ່າງລວມຕິດ. ຫນັງສືພິມຕ່າງປະເທດ ຈົນໄດ້ລົງຂ່າວ ແບບເຍ້ຍຫຍັນວ່າ: ອໍານາດຂອງໂຊວ໊ຽດໃກ້ຈະຮອດມື້ສັ້ນສຸດແລ້ວ.

ອະລາດີເມຍ ອີລີຊ ໄດ້ແຕ່ບີບສະຫມອງຄຶດ. ຈັ່ງແມ່ນຫຍຸ້ງຍາກລໍາບາກສັບສົນເອົາ ແທ້ໆ.

ຈັກຈະເຮັດແນວໃດ ເພື່ອຈະໃຫ້ ສະແວກລິບ ຫາຍພະຍາດນີ້ໄດ້!

ທັ້ງສອງຕ່າງກໍເຄີຍຮ່ວມວ໊ກຮ່ວມງານນໍາກັນມາ ແລະມີນິໄສໃຈຄໍສອດຄ່ອງກັນທົ່ສຸດ!

"ອີອາກິບ ນິກຄາຍໂລວ໊ກ, ຕ້ອງເຮັດໃຫ້ມັນແລ້ວໃດ..." -ອະລາດີເມຍ ອີລີຊ ເວົ້າ ກ່ວ໊ກັບເລ້ືອງໃດເລ້ືອງຫນຶ່ງ.

ສະແວກລິບ ຕອບຢ່າງໃຈເຢັນໆວ່າ:

"ແລ້ວແລ້ວເດ".

"ແມ່ນຫຍັງແລ້ວໆ?"

"ໄດ້ເຮັດສໍາເລັດພໍ່ແຮງແລ້ວລະ, ອະລາດີເມຍ ອີລີຊ ເອີ້ຍ."

"ສະຫາຍທັນໄດ້ເຮັດສຳເລັດ, ແຕ່ຍາມໃດກັນ, ອິອາກິບ ນິກຄາຍໂລວິກ? ພວກເຮົາ ຄືຫາກໍຊິເວົ້າກັນດອນີ້ຫນີ້ຫນຶ່ງ!"

"ຄືຫາກໍຊິ..." -ສະແວກລິບຍົ້ມຫົວ.

ເຂົາສາມາດເຂົ້າໃຈໃນຄຳເວົ້າ ແຕ່ພຽງເຄິ່ງກາງເທົ່ານັ້ນ. ເລນິນ ນັກນິໄສແບບຮອບ

ສະແວກລິບ, ຕະຫລອດເກົ່ງຈິດໃຈປະຕິວັດ, ແນວຄິດ ກ່ຽວກັບການເມືອງແບບ ລວມຂອງເຂົານັ້ນຫລາຍທີ່ສຸດ.

ນັກການເມືອງ ບໍ່ໄດ້ອະນຸຍາດໃຫ້ອະລາດີເມຍ ອີລີຊ ເຂົ້າຍັ່ງມຄົນເຈັບ, ເພາະພະຍາດ ຫາວ ເປັນພະຍາດທີ່ຕິດຕໍ່.

ແຕ່ ອະລາດີເມຍ ອີລີຊ ບໍ່ຍອມເຊື່ອຟັງ. ເພິ່ນພະຍາຍາມເຂົ້າໄປຢາມມິດສະຫາຍຂອງ ນຈົນໄດ້. ແລະເມື່ອເຂົ້າມາໃນຫ້ອງເຂົາແລ້ວ ເພິ່ນກໍຮູ້ສຶກສັ່ນສະເທືອນໃຈ.

ນັ້ນແມ່ນ ສະແວກລິບ ແທ້ຫລືບໍ່? ຄົນປ່ວຍຜູ້ຊາມີຮູບຮ່າງຈ່ອຍຜອມ, ຫົວຫມູນຢູ່ ທົ່ງຫມອນສີຂາວ, ຕົນມືປາສະຈາກການເຫນັງຕີງ ແລະດ້ງເຫລມ ມີແຕ່ກະດູກຜູ້ນັ້ນ. ທີ່ກ້ອງຄາງຂອງເຂົາມີຫນວດປົ່ງອອກຍາວສົມຄວນ, ເບິ່ງແລ້ວຄືຈັ່ງວ່າເຂົາໄດ້ເກົ້າລີ

ຫລາຍເຕີບ. ເບົ້າຕາທັງຄູ່ກໍໂກນໂວກ. ເຂົາກຳລັງນອນຢູ່ໃນລັກສະນະເຈ່ືອນລອຍ.

ອະລາດີເມຍ ອີລີຊ ໄດ້ນັ່ງລົງທີ່ຂ້າງຕຽງ. "ສະຫາຍຜູ້ທີ່ເຕັມໄປດ້ວຍຄວາມເຊື່ອ ໝັ້ນ, ມີຄວາມສາມາດ, ຢ່າໄດ້ ຈາກເຮົາໄປເທາະ!" -ອະລາດີເມຍ ອີລີຊ ຄິດຢູ່ໃນໃຈ.

ຮູບພາບອັນຫນຸ່ມແຫ້ນແຂງແຮງ ຂອງ ສະແວກລິບທີ່ມີອາຍຸແຕ່ຟ້ຽສາມສິບປີນັ້ນ ຍັງຝັງຢູ່ໃນຄວາມຊົງຈຳຂອງ ເລນິນ ສະເຫມີ. ຍາມໃດເຂົາກໍເປັນຜູ້ທີ່ມີພາລະອົດທົນ, ເປັນຜູ້ທີ່ຮັກຊີວິດແລະມີຄວາມອົງອາດກ້າຫານທີ່ສຸດ. ອະລາດີເມຍ ອີລີຊ ບໍ່ເຄີຍຄິດເລີຍ ວ່າ ຄົນຄືສະແວກລິບຈະເກີດມີຄວາມຢ້ານກົວຕໍ່ໄຟອັນຕະລາຍທີ່ຫນ້າຫວາດກົວຂັ້ນໃດກໍ ຕາມ. ເຂົາເປັນຜູ້ທີ່ລ່ຳລ່ຽເວົ້າລ່ຽວ່າກັບປະຊາຊົນ, ຮູ້ຈັກຮຽກຮ້ອງ, ປຸກລະດົມປະຊາຊົນ ເພື່ອໃຫ້ເຂົາເຈົ້າເຂົ້າຮ່ວມນຳການປະຕິວັດ.

ຂົນຕາທັງຄູ່ໄດ້ເຫນັງຕີງຍຸບຍິບ, ແລ້ວ ສະແວກລິບ ກໍຄ່ອຍໆຫຼຽບຕາຂຶ້ນ. ເຂົາແນມ ເບິ່ງ ເລນິນດ້ວຍຄວາມປະຫລາດໃຈ, ໃນລັກສະນະເຄົ່ງຕຶງເຄົ່ງລະເມີ, ຮອຍຍິ້ມທີ່ບົ່ງບອກ ໃຫ້ເຫັນເຖິງຄວາມທໍລະນົນແລະເຈັບປວດໄດ້ສະແດງອອກຢູ່ເທິງຮີມສົບຂອງເຂົາ.

ອະລາດີເມຍ ອີລີຊ ຈັບຝ່າມືອັນຫ່ວຍແຫ້ງຂອງເຂົາ ພ້ອມທັງກືນນ້ຳຕາລົງທ້ອງ.

ເລນິນ ກົ້ມຫນ້າຍ່າງອອກໄປ.

ຫລາຍນາທີຕໍ່ມາ, ສະແວກລິບ ກໍໄດ້ສິ້ນຊີວິດໄປ. ກ່ອນທີ່ຈະຈາກໄປ, ເຂົາໄດ້ຊວາດ ຮູ້ເມື່ອຄືງຂຶ້ນມາ ເບິ່ງຈັ່ງຫນ້ຳຄ້າຍຄືກັບວ່າ ເພື່ອຢາກແນມເບິ່ງ ເລນິນເປັນຄັ້ງສຸດທ້າຍ. ສາຍຕາຂອງເຂົານັ້ນຄ້າຍດັ່ງຢາກຈະເວົ້າວ່າ: ລາກ່ອນຊ່ວນິລັນດອນ. ຈາກນັ້ນ ເຂົາກໍໄດ້ ຈາກໄປຢ່າງບໍ່ມີວັນຈະກັບມາ.

ໃນຊຸມປີທີ່ພົບຄວາມຫຍຸ້ງຍາກສັບສົນ, ເພື່ອກໍ່ສ້າງສັງຄົມໂຊວຽດ ແລະ ຊີວິດໃຫມ່ນີ້, ບໍ່ມີຈັກເທື່ອ ທີ່ ອະລາດີເມຍ ອີລີຊ ຈະຫລົງລືມບຸກຄົນຜູ້ທີ່ເຄີຍຊ່ວຍວຽກຢ່າງບໍ່ຮູ້ອິດຮູ້ ເມື່ອຍເກຕົນນັ້ນຈັກເທື່ອ.

...ຊີວິດຍັງສືບຕໍ່ຢ່າງບໍ່ຢຸດຢັ້ງ. ດັ່ງນັ້ນຕ້ອງໄດ້ປ້ອງກັນແລະປັບປຸງສັງຄົມໂຊວຽດໃຫ້ດີ.

ເລນິນ ໄດ້ສະເຫນີໃຫ້ເລືອກເອົາ ນິກລາຍອຶນ ອີວາໂນວິກ ກາລິນິນ ຂຶ້ນເປັນປະທານ

ຄະນະບໍລິຫານງານສູນກາງທົ່ວລັດເຊຍ, ແທນສະແວກລິບ.

ການິນ ໄດ້ກຳເນີດມາຈາກຄອບຄົວຊາວນາຢູ່ເມືອງ ຕະແວກ ນັ້ນເອງ. ເຂົາເປັນກຳມະກອນໂຮງງານທີ່ ເປໂຕຣກຣາດ. ເລນິນ ໄດ້ຮູ້ຈັກກັບຜູ້ທີ່ຕົນຄັດເລືອກເອົານັ້ນເປັນຢ່າງດີ. ນິກຄາຍອິນ ອິວາໂນວິກ, ແມ່ນນັກຄອມມຸຍນິດທີ່ດີຜູ້ຫນຶ່ງ, ເຂົາເປັນຄົນດີ, ທ້າສະຫລາດສະຫລວ: ດັ່ງນັ້ນ ທຸກຄົນ ຈຶ່ງມີຄວາມຮັກແພງເຂົາ.

»ຂ້ອຍແມ່ນລູກຫລານຂອງປະຊາຊົນຜູ້ອອກແຮງງານ...«

ກອງທະຫານຂາວ ແລະກອງທັບຂອງພວກຮຸກຮານຈຳນວນລ້ານຄົນປາຍ, ໄດ້ບຸກເຂົ້າມາໃກ້ຕົວເມືອງນິດສະກູ ຊຶ່ງເປັນຫມາກຫົວໃຈ ຂອງປະເທດລັດເຊຍນັ້ນແລ້ວ. ແນວຮົບຂອງພວກສັດຕູທັງຫົກດ້ານ, ໄດ້ທຳການປິດລ້ອມປະເທດຊາດໂຊວຽດຈົນເປັນວົງລ້ອມທີ່ແຂງແກ່ນ, ບໍ່ທັນມີສະຖານະການໃດທີ່ຮຸດໂຊມແລະຫນ້າຫວາດສຽວຄືແນວນີ້ຈັກເທື່ອ.

ມື້ຫນຶ່ງຂອງຕົ້ນເດືອນ ທັນວະພາ, ຕາມຖະຫນົນຫົນທາງຕ່າງໆ ໃນນະຄອນນິດສະກູ ໄດ້ມີຜູ້ຄົນຍ່າງສວ່ານສິນໄປໆມາໆຢູ່ຢ່າງຜິດປົກກະຕິ. ຕັ້ງແຕ່ບໍ່ທັນແຈ້ງພຸ້ນ, ພວກແມ່ຍ່າແມ່ຍິງ ໄດ້ພາກັນມາເຕົ້າໂຮມຢູ່ຕາມຫນ້າປະຕູໂຮງຈັກໂຮງງານດ້ວຍຄວາມເປັນຫ່ວງກະວົນກະວາຍ. ພວກເຂົາກຳລັງລໍ້ຖ້າອີ່ຫຍັງກັນແທ້! ສ່ວນພວກເດັກເລັກເດັກນ້ອຍ ກໍພາກັນກ້ຽວງວຽນຢູ່ນຳຜູ້ເປັນແມ່ຂອງໃຜລາວ. ເດັກນ້ອຍ ນິດສະກູ ທີ່ຢູ່ຕາມຄຸ້ມກຳມະກອນທ້າຫລາຍລ້ວນແຕ່ມີໃບຫນ້າລ່າເຫລືອງຈືດຈາງ, ດວງຕາທັງຄູ່ສະແດງໃຫ້ເຫັນເຖິງຄວາມຫົວໂຫຍ. ປາກປະຕູໃຫຍ່ຂອງໂຮງຈັກໂຮງງານແຕ່ລະແຫ່ງກໍເປີດອອກບັກກ້ວາງໆ. ບັນດາກຳມະກອນ, ບາງຄົນກໍນຸ່ງເສື້ອນວມ, ບາງຄົນກໍນຸ່ງເສື້ອກັນຫນາວເຮັດດ້ວຍຝ້າຍ, ບ່າແບກບາໂລ ແລະປືນເຫລັກຍາວ ກ້າວອອກມາຈາກໂຮງງານ.

-ຫນ້າກົງ! -ສຽງຮ້ອງອອກຄຳສັ່ງ.

ບັນດານັກຮົບກອງທັບແດງໄດ້ພາກັນຍືນລຽນກັນເປັນແຖວ. ກ່ອນຫນ້ານີ້ບໍ່ດົນປານ

ໃດນັ້ນ, ພວກເຂົາໄດ້ຜ່ານບັ້ນຮົບຢ່າງກະທັນຫັ,ນໃນກອງທັບແດງມາແລ້ວ. ພວກເຂົາຍືນ ລວມກັນເປັນແກວ, ເຖິງວ່າຈະບໍ່ຊ່ຳປານໃດກໍຕາມ, ແຕ່ພວກເຂົາຜັດຍິງປືນເກັ່ງ.

- ໄປທີ່ສະຫນາມຫລວງ, ຫນ້າເດີນ!

ບັນດາກັນແກວກຳມະກອນທີ່ຢູ່ຕາມຄຸ້ມໂຮງງານຕ່າງໆທີ່ ນິດສະກູ, ຕ່າງກໍມຸ່ງຫນ້າໄປ ສູ່ ແກຣມແລງ ຈິນຫມິດ.

ພວກແມ່ຍ່າແມ່ຍິງມີແພລວນຫົວສີຂາວສີແດງ, ມືຖົ້ວເອົາຫໍ່ນ້ອຍຢ່າງຄວງຂ້າງໄປ. ພວກເຂົາຍ່າງໄປດ້ວຍຄວາມຟ້າວຟັ່ງ, ທ້ວງຕຳສະດຸດລົ້ມຄຸບໄປນຳທາງກໍມີ, ດວງຕາທ້ວງຄູ່ ໄດ້ແນມເບິ່ງແຕ່ໃບຫນ້າຂອງພວກນັກຮົບຢ່າງຈິດຈໍ່, ມືທ້ວງສອງຈັບພົກນ້ອຍໆຂອງໃຜ ລາວ.

ແມ່ເຖົ້າຜູ້ມີສີຫນ້າດຳຍ້ອນຄວາມລຳບາກກາກກຳຮ້ອງຂຶ້ນວ່າ:

- ວາຊິອາ, ລູກຮັກຂອງແມ່ເອີຍ! ຂໍຄຸນພະຈົ່ງມາຊ່ວຍປົກປ້ອງໃຫ້ລູກຂ້ອຍຕະຫລອດ ປອດໄພຈາກລູກປືນຂອງພວກນາຍທຶນແດ່ທ້ອນ...

ສ່ວນພວກເດັກນ້ອຍ ກໍໄດ້ພາກັນແລ່ນຕີນເປົ່າໄປຕາມຫວ່າງແກວທະຫານກອງທັບ ແດງ, ແລ້ວພາກັນຮ້ອງຕ່ໍຫມູ່ພວກດ່ວນກັນວ່າ:

- ພໍ່ເຮົາມືປືນເຫລັກຍາວພຸ້ນໃດ!

- ປືນເຫລັກຍາວນັ້ນກໍຊິມີຫຍັ້ງແປກ! ພໍ່ເຮົາມີຮອດບັ້ງລູກປືນກົນພຸ້ນນາ. ປືນກົນນີ້ ຍິງໃສ່ພວກນາຍທຶນເປັນຮອດໆພຸ້ນແຫ່ງຄັກຕ່ວາ!

- ພໍ່ເຮົາແຫ່ງຄັກ, ເບິ່ງແມ, ເຕັ້ນເອວມີແຕ່ຫມາກແຕກ. ກ້າເບິ່ງໂລດ, ຝ່າຍກຳມະ ກອນ ພວກເຮົາ ຊິເຮັດໃຫ້ພວກທະຫານຂາວນັ້ນຮູ້ລົດເດດບາດນີ້ລະ.

"ຂ້ອຍ, ແມ່ນລູກຫລານຂອງປະຊາຊົນຜູ້ອອກແຮງງານ, ກຳມະກອນປະເທດສາທາ ລະນະລັດໂຊວຽດ, ໄດ້ຮັບນາມມະຍົດວ່າເປັນນັກຮົບກອງທັບກຳມະກອນຊາວນາ...".

ບັນດາສຳນຽງສຽງຮ້ອງອັນຫນັກແຫນ້ນດັ່ງກ່າວ, ຟັງແລ້ວຮູ້ສຶກວ່າຂຶ້ນອົກຂຶ້ນໃຈເອົາ ແທ້ໆ! ມັນໄດ້ເຮັດໃຫ້ການເດີນຂອງຫມາກຫົວໃຈເຕັ້ນຂຶ້ນແຮງກ່ວາເກົ່າ. ຫມາກຫົວໃຈ

ຂອງເລນິນເອງ ກໍເຕັ້ນແຮງເປັນຈັງຫວະລວນຕິດຕິກັນ, ເພາະວ່າໃນຫນ່ຶງປີທີ່ຜ່ານມາ, ປະທານສະພາລັດຖະມົນຕີຜູ້ນີ້, ກໍເຄີຍໄດ້ໃຫ້ຄໍາສາບານວ່າຈະຮັບໃຊ້ລັດໂຊວຽດນີ້ຢ່າງບໍລິສຸດຜຸດຜ່ອງຄືກັນ. ເຫດການດັ່ງກ່າວໄດ້ເກີດຂຶ້ນທີ່ໂຮງງານ ມີແຄນເຊິນ ນັ້ນເອງ. ເລນິນ ໄດ້ໃຫ້ຄໍາສາບານຮ່ວມກັບບັນດາກໍາມະກອນຫນຸ່ມແລະບັນດານັກຮົບຂອງບັນດາກອງລະວັງຫນ້າແດງທັງຫລາຍວ່າ: "ອີງຕາມຄໍາຮຽກຮ້ອງຄັ້ງທໍາອິດຂອງລັດຖະບານກໍາມະກອນຊາວນານີ້, ຂ້າພະເຈົ້າຂໍສາບານວ່າຈະປ້ອງກັນປະເທດສາທາລະນະລັດໂຊວຽດໄວ້ໃຫ້ໄດ້".

ອະລາດີເມຍ ອີລີຊ ໄດ້ອອກສູ່ສະຫນາມແດງ, ຮ່ວມກັບບັນດາສະຫາຍອື່ນໆ, ດ້ວຍອາການຄົ້ນຄິດແລະຕຶກຕອງ.

ທີ່ ບໍລິເວັນສະຫນາມແດງ ໄດ້ມີຝູງຄົນແຫ້ນຫນາອັ່ງອໍ. ອະລາດີເມຍ ອີລີຊ ໄດ້ແນມເບິ່ງປ່າປາຍປືນກະບີ່ທີ່ເດ່ຊາບລາບຂຶ້ນເທິງຟ້າ, ປາຍເຫລັກອັນແຂງແກ່ນແລະແຫລມຄົມຂອງມັນໄດ້ສະທ້ອນແສງເຫລື້ອມຍິບຍັບ. ບັນດາແມ່ຍິງທັງຫລາຍໄດ້ຢືນຢູ່ຄຽງຂ້າງລູກຜົວຢ່າງບໍ່ປະປ່ອຍໃຫ້ໄກພໍ້ກ້າວ. ອະລາດີເມຍ ອີລີຊ ໄດ້ແນມເຫັນບັນດານັກຮົບກອງທັບແດງທັງຫລາຍ ກໍາລັງກອດຈູບ ເພື່ອສັ່ງລາລູກເມຍຂອງຕົນ. ຂະນະນັ້ນບັນດານັກຮົບກອງທັບແດງ ແລະ ຫນ່ວຍປ້ອງກັນໄດ້ພາກັນມາເຕົ້າໂຮມຢູ່ທີ່ສະຫນາມແດງຈົນຫມົດແລ້ວ.

ປີກາຍນີ້ ເລນິນ ໄດ້ເຊັນດໍາລັດຂອງສະພາລັດຖະມົນຕີ ທີ່ວ່າດ້ວຍບັນດາກໍາມະກອນແລະປະຊາຊົນຜູ້ອອກແຮງງານທັງຫມົດ ຕ້ອງໄດ້ຝຶກແອບວິຊາການທະຫານ. ປະເທດຊາດກໍາລັງປະສົບໄພອັນຕະລາຍ, ດັ່ງນັ້ນ ບັນດາກໍາມະກອນຫມົດທຸກຄົນ, ຈຶ່ງແອບຍິງປືນ, ຕ່ວມພ້ອມປົກປັກຮັກສາປະເທດໂຊວຽດ.

ຢູ່ສະຖານທີ່ດັ່ງກ່າວ ບໍ່ມີເວທີ ເພື່ອຂຶ້ນກ່າວຄໍາປາໄສແຕ່ຢ່າງໃດ. ມີພຽງແຕ່ລົດຂົນສົ່ງຄັນເກົ່າໆ ຊຶ່ງເຕັມແຕ່ຂີ້ຝຸ່ນຄັນດອເທົ່ານັ້ນທີ່ຈອດໄວ້ເພື່ອເຮັດຕ່ວເວທີ. ຢູ່ທາງຝ່າເບື້ອງຫນຶ່ງຂອງລົດດັ່ງກ່າວກ່ວງແພສີແດງ ໂດຍມັດຕິດໃສ່ກັບໄມ້ສ້າວ. ແພດັ່ງກ່າວມີຕົວຫນັງສືບັກໃຫຍ່ຂຽນວ່າ: "ພວກເຮົາຕ້ອງຕີເອົາຊະນະພວກເຈົ້າທີ່ດິນ ແລະພວກນາຍທຶນທີ່ໂຫດຮ້າຍນັ້ນໃຫ້ໄດ້".

ອະລາດີເມຍ ອີລີຊ ພ້ອມດ້ວຍບັນດາຜູ້ບັນຊາການກອງທັບແດງໄດ້ພາກັນອອກກວດກາແກວທະຫານ, ແລ້ວປີນຂຶ້ນເນີນເທິງລົດຂີ່ນສີ່ຄັນດັ່ງກ່າວ.

ຢູ່ກ້ຳຫນ້າຂອງເພີ່ນນັ້ນ, ແມ່ນທະເລຄົນອັນກວ້າງໃຫຍ່ໄພສານ. ໃນນັ້ນບັນດາກຳມະກອນເປັນຈຳນວນພັນໆຄົນໄດ້ພາກັນປະກອບອາວຸດຢ່າງຄຶບຊຸດ.

ແຕ່ລະຄົນ ມີທັງຄວາມໂສກເສົ້າ, ມ່ວນຊື່ນ, ຄວາມຫວັງແລະຄວາມຮັກໄປພ້ອມໆກັນ, ພວກເຂົາໄດ້ປະຕິບັດຕາມຄຳຮຽກຮ້ອງຄັ້ງທຳອິດຂອງລັດຖະບານກຳມະກອນຊາວນາ ຄືໄດ້ປະວາງຫມົດທຸກສິ່ງຢ່າງ ເພື່ອເຂົ້າຮ່ວມສົງຄາມກາງເມືອງ, ຕ້ານກັບພວກທະຫານຂາວຄັ້ງນີ້.

ອະລາດີເມຍ ອີລີຊ ໄດ້ກ່າວຄຳປາໄສ.ສະຫນາມແດງ ໄດ້ກັບເຂົ້າສູ່ສະພາບທີ່ມີດງນ.

ເລນິນ ໄດ້ເວົ້າວ່າ, ແຕ່ກ່ອນຫນ້າ ເຂົາເຈົ້າໄດ້ສັ່ງສອນໃຫ້ເຫລົ່າທະຫານປົກປ້ອງກະສັດລັດເຊຍ ແລະພວກນາຍທຶນ. ຕົກມາໃນປັດຈຸບັນ, ບັນດານັກຮົບກອງທັບແດງຕ້ອງປົກປ້ອງຕົນເອງ, ຕະຫລອດທັງພໍ່ແມ່ແລະລູກເຕົ້າຂອງຕົນ, ປົກປ້ອງລັດຂອງຕົນໃຫ້ຫລຸດພົ້ນຈາກເງື່ອມມືຂອງພວກເຈົ້າທີ່ດິນແລະນາຍທຶນ. ເລນິນ ກ່າວດ້ວຍລັກສະນະທີ່ເປັນກັນເອງ ແລະທຳມະດາທີ່ສຸດ, ຊຶ່ງຄຳເວົ້າດັ່ງກ່າວແມ່ນຖືກຕ້ອງກັບແນວຄິດຂອງນັກຮົບກອງທັບແດງເປັນຈຳນວນພັນໆຄົນເຫລົ່ານັ້ນ.

ພາຍຫລັງການໂຮມຊຸມນຸມໄດ້ສິ້ນສຸດລົງ, ບັນດາກອງຮ້ອຍຂອງກອງທັບແດງ ກໍໄດ້ພາກັນອອກຈາກສະຫນາມຫລວງ, ເພື່ອມຸ່ງຫນ້າໄປສູ່ສະຖານີລົດໄຟ. ຈາກນັ້ນບັນດາຂະບວນລົດໄຟກໍໄດ້ຂົນເອົານັກຮົບກອງທັບແດງອອກສູ່ສະຫນາມຮົບ.

ຈຸບສົມບັດຂອງຊາດ

ບັນດາຜູ້ຮ່ວມງານໃນສະພາລັດຖະມົນຕີນັ້ນ ບໍ່ມີຫລາຍພໍປານໃດ. ທຸກຄົນມີອາຍຸເຮັດຫລາຍພໍສົມຄວນ. ແຕ່ວ່າແຕ່ລະຄົນ ກໍລ້ວນແຕ່ພໍໃຈໃນຫນ້າທີ່ວຽກງານຂອງຕົນ, ແລະ

ຍິນດີປະຕິບັດດ້ວຍຄວາມມ່ວນຊື່ນ. ອະລາດີເມຍ ອີລີຊ ໄດ້ມີຄວາມເຄົາລົບນັບຖືບັນດາ ຫມູ່ຄະນະນ້ອຍໆທີ່ເປັນພະນັກງານຢູ່ໃນສະພາລັດຖະມົນຕີ.

-ເຖິງວ່າເປັນປາໂຕນ້ອຍ, ແຕ່ກໍຍັງດີກ່ວາເປັນແມງສາບໃຫຍ່ຫັ້ນແລ້ວ, -ອະລາດີ ເມຍ ອີລີຊ ເວົ້າແກມຍອກໄຍ.

ບັນດາພະນັກງານເຫລົ່ານັ້ນ ລ້ວນແຕ່ພໍໃຈໃນຄຳເວົ້າຂອງເພື່ນກັນທັງນັ້ນ.

-ພວກເຮົາແມ່ນພວກປານ້ອຍ, -ພວກເຂົາເວົ້າແລ້ວກໍພາກັນຫົວຂຶ້ນ.

-ແຕ່ມັນແມ່ນນ້ອຍຫມາກເຜັດຂີ້ຫນູ, -ອະລາດີເມຍ ອີລີຊ ກ່າວຊົມເຊີຍ.

ອະລາດີເມຍ ອີລີຊ ໄດ້ມາຮອດສະຖານທີ່ປະຊຸມໄວກ່ອນຫ້ານາທີ, ບໍ່ວ່າຍາມໃດ ເພື່ນ ກໍໄດ້ມາຮອດກ່ອນເວລາທຸກເທື່ອ. ເພື່ນເຂົ້າໄປນັ່ງຢູ່ບ່ອນນັ່ງຂອງປະທານກອງປະຊຸມ. ເອກ-ກະສານຂ່າວຄາວ ແລະ ໂທລະເລກຕ່າງໆກຳລັງລໍຖ້າເພື່ນຢູ່ເທິງຫນ້າໂຕະເປັນກອງ. ກ່ອນ ທີ່ບັນດາສະມາຊິກສະພາລັດຖະມົນຕີ ຈະເຂົ້າມານັ່ງຢູ່ເທິງຕັ່ງນວມທີ່ປູດ້ວຍຜ້າກຳມະຍີ ຂອງນັ້ນ, ເລນິນໄດ້ອ່ານບັນດາເອກກະສານດັ່ງກ່າວຫລາຍໃບສົມຄວນແລ້ວ ຊຶ່ງອັນໃດອ່ານ ແລ້ວ ເພື່ນກໍໄດ້ເຊັນລົງໃສ່ໄວ້ບ່ອນອື່ນ. ສ່ວນສະບັບທີ່ຍັງເຫລືອກໍສົ່ງຄືນໃຫ້ແກ່ ເລຂານຸ-ການ. ຈາກນັ້ນ ເພື່ນຈຶ່ງປະກາດເປີດກອງປະຊຸມຂອງສະພາລັດຖະມົນຕີ.

ບັນດາສະມາຊິກດັ່ງກ່າວ ບໍ່ມີໃຜມາຊ້າຈັກຄົນ. ທຸກຄົນຕ່າງກໍມາທັນເວລາເລີ່ມຕົ້ນນັ້ນ ໂລດ, ເພາະວ່າຜູ້ໃດ ກໍບໍ່ຢາກເຊັນຊື່ເຂົ້າໃນປຶ້ມບັນທຶກມາຊ້າຈັກຄົນ, ຫລີ້ຮ້າວໄປກ່ວານັ້ນອີກ, ກໍແມ່ນຢ້ານຖືກຕຳຫນິ, ເພາະວ່າ ເລນິນ ບໍ່ເຄີຍຍົກໂທດໃຫ້ແກ່ຜູ້ທີ່ມາຊ້າຈັກຄົນ.

-ພວກເຮົາເລີ່ມເຮັດວຽກ, -ອະລາດີເມຍ ອີລີຊ ກ່າວຂຶ້ນ. ສະຫາຍຫນຶ່ງໄດ້ລາຍ ງານກ່ຽວກັບສະພາບການດ້ານສະບຽງອາຫານ. ສະຫາຍດັ່ງກ່າວແມ່ນ ຄະນະກຳມະການບໍລິ-ຫານທາງດ້ານສະບຽງອາຫານໂດຍສະເພາະ. ຈຳນວນສະບຽງອາຫານທີ່ໄດ້ທ້ອນແຮໄວ້ທັງ ຫມົດນັ້ນ, ທາງຄະນະກຳມະການໄດ້ສຳຫລວດກວດກາຢ່າງລະອຽດລະອໍ ນັບຕັ້ງແຕ່ຟຸນ ຫນຶ່ງຂຶ້ນເດືອ. ນອກນັ້ນສະຫາຍຍັງໄດ້ລາຍງານວ່າ, ໃນເດືອນນີ້ຈະສາມາດແຈກຢາຍເຂົ້າ

ຈ່ຳ, ເນີຍແລະເກືອໃຫ້ແກ່ຊາວຜູ້ອອກແຮງງານນັ້ນໄດ້ຈຳນວນເທົ່າໃດອີກ.

ແຕ່ລະຄົນໄດ້ຮັບການແບ່ງປັນໃນຈຳນວນຫນ້ອຍທີ່ສຸດ. ສ່ວນເດັກນ້ອຍນັ້ນ ໄດ້ຮັບຫລາຍກ່ວາ, ແຕ່ວ່າເຖິງຢ່າງໃດກໍຍັງແມ່ນຈຳນວນທີ່ຫນ້ອຍຢູ່ນັ້ນລະ.

-ແຕ່ຢ່າລືມພວກພໍ່ຕູ້ແມ່ຕູ້ທີ່ຢູ່ໂດດ່ວນັ້ນນຳແດ່ເນີ, -ເລນິນເວົ້າເສີມຂຶ້ນຕື່ມ.

ຜູ້ລາຍງານ ຍັງສືບຕໍ່ລາຍງານ ກ່ວກັບວຽກງານຂອງຕົນ, ວະລາດີເມຍ ອີລີຊ ໄດ້ກົ້ມຫົວລົງຟັງດ້ວຍຄວາມເອົາໃຈໃສ່, ພ້ອມທັງຂີດວົງມົນນ້ອຍໆແລະຂີດໄຂ່ວຕົນກາໃສ່ເທິງຫນ້າແຜ່ນເຈ້ຍໄປນຳ.

ຍ້ອນວ່າຜູ້ລາຍງານບໍ່ໄດ້ກ່າວຕອບຂໍ້ສະເຫນີຂອງປະທານສະພາລັດຊະມົນຕີພໍຄວາມ, ເລື່ອງນີ້ສະແດງວ່າ ພວກເຮົາມີຄວາມຂາດເຂີນທາງດ້ານສະບຽງອາຫານທີ່ສຸດ.

-ຕ້ອງບໍ່ລືມພວກພໍ່ຕູ້ແມ່ຕູ້ຜູ້ທີ່ຢູ່ໂດດ່ວໃດ, -ວະລາດີເມຍ ອີລີຊ ເພີ່ມເຕີມ, ດ້ວຍຖ້ອຍຄຳທີ່ເດັດດ່ວກ່ວາເກົ່າ. -ຈະມີໃຜໄປສົນໃຈນຳພວກເຂົາເຫລົ່ານັ້ນ, ຄົນບໍ່ແມ່ນອຳນາດໂຊວຽດນີ້? ຖືກຕ້ອງ, ຖືກຕ້ອງ! ພວກເຮົາທຸກກໍຈົນ ແຕ່ກໍຕ້ອງຊອກຫາທາງອອກ.

ວະລາດີເມຍ ອີລີຊ ແນມໄປທາງສະມາຊິກສະພາຜູ້ຊ່ຳຮັບຜິດຊອບທາງດ້ານສະບຽງອາຫານເຫມືອນກັບຢາກຖາມວ່າ: ອາເລັກຊ໌ ດ໌ມິຕຣິເອວິດ ຈະລາຍງານຫຍັງຕໍ່ອີກ? ສຳລັບ ອາເລັກຊ໌ ດ໌ມິຕຣິເອວິດ ຊູຣູປາ ນີ້, ເລນິນ ເອງໄດ້ລົ້ມແກ່ນກັບເຂົ້ານາແຕ່ດົນແລ້ວ, ຄົນຊິເວົ້າ ກໍແມ່ນຕັ້ງແຕ່ຕອນກັບຈາກບ່ອນເນລະເທດພຸ້ນແລ້ວ. ວະລາດີເມຍ ອີລີຊ ໄດ້ຮັກແພງ ຊູຣູປາ ຕັ້ງແຕ່ຕອນພົບກັນຄັ້ງທຳອິດເປັນຕົ້ນມາ. ເຂົາເປັນຄົນມີນິໄສນ້ກ່ອນ! ມຫນວຍຕາສີຟ ແລະມຜມກູດສີທອງ.

ແຕ່ນັ້ນກໍບໍ່ແມ່ນເລື່ອງທີ່ຈະເບິ່ງແຕ່ຮູບພາຍນອກເທົ່ານັ້ນ - ຊູຣູປາ ແມ່ນນັກປະຕິວັດທີ່ດີເດັ່ນຜູ້ຫນຶ່ງ, ທາດແທ້ຂອງເຂົານັ້ນ ແມ່ນຢູ່ບ່ອນຫັ້ນ, ແລະເຂົາແມ່ນພະນັກງານທີ່ເຕັມໄປດ້ວຍຄວາມເສຍສະຫລະ ແລະທັງເປັນສະມາຊິກສະພາລັດຊະມົນຕີທີ່ດີເລີດຜູ້ຫນຶ່ງອີກ, ຈຸດພິເສດຂອງເຂົານັ້ນເຮັດໃຫ້ ເລນິນ ພໍໃຈການເຮັດວຽກຂອງເຂົາທີ່ສຸດ.

ມີເຫດການອັນໃດເກີດຂຶ້ນກັບສະຫາຍຜູ້ນີ້? ເລນິນເຮັດຫນ້າຫຍຸ້ງ, ທັງແນມເບິ່ງ

ລູຣູປາ ຢ່າງຈິດຈໍ່ ປະກົດວ່າເຂົາຈ່ອຍລົງຫລາຍ, ໃບຫນ້າກໍ່ຄ້ຳຈ່ອ ບໍ່ມີເລືອດຈັກຕິ ຫນ່ວຍ ຕາໂກນໂວກເປັນຂຸມດຳໆ. "ອາດຈະແມ່ນຍ້ອນຄວາມອຶດຫີວນັ້ນແລ້ວ, ລູຣູປາ ຈຶ່ງເປັນແບບນີ້!" ອະລາດີເມຍ ອີລີຊ ສາມາດເຂົ້າໃຈເຂົາເປັນຢ່າງດີ.

ອະລາດີເມຍ ອີລີຊ ສືບຕໍ່ຟັງບົດລາຍງານ, ພ້ອມທັງຈົກເຈ້ຍນ້ອຍຈາກປຶ້ມບັນທຶກອອກມາຂຽນຫນັງສືສັ່ງໃຫ້ ລູຣູປາ ນຳ, ຈົດຫມາຍດັ່ງກ່າວມີເນື້ອໃນວ່າ, ຕ້ອງເອົາໃຈໃສ່ຕໍ່ "ຊຸບສົມບັດຂອງຊາດ", ຕ້ອງຮັກສາມັນໃຫ້ດີ, ບໍ່ແມ່ນຊິປ່ອຍປະລະເຫລົ່ານັ້ນ, ມັນບໍ່ຖືກຕາມຫລັກການໃດ.

ລູຣູປາ ອ່ານຈົບແລ້ວກໍ້ຍິ້ມ. ອະລາດີເມຍ ອີລີຊ ກໍ່ສຸກຂະພາບຂອງພະນັກງານທີ່ເຮັດວຽກໃຫ້ແກ່ປະເທດຊາດນັ້ນວ່າແມ່ນ "ຊຸບສົມບັດຂອງຊາດ" ສັ່ງຫນ້ຳ. ສ່ວນ ລູຣູປາເອງ ກໍ່ພ້ຽງກຕອບກັບ ອະລາດີເມຍ ອີລີຊ ໃນທັນໃດນັ້ນໂລດວ່າ, ມັນບໍ່ໄດ້ແມ່ນແຕ່ເຂົາຜູ້ດຽວ ດຽກ ທີ່ອຶດຫີວນັ້ນນະ ແຕ່ຫມົດທຸກຄົນກໍ່ລ້ວນແຕ່ພາກັນກິນບໍ່ອີ່ມຈັກຄົນ. ຍາມໃດປະ-ເທດຊາດຂອງພວກເຮົາຫາກຮັ່ງມີຂຶ້ນມາພຸ້ນແລ້ວ, ຍາມນັ້ນ ພວກເຮົາຈຶ່ງຈະໄດ້ກິນອີ່ມຫນຳສຳລານ.

ແຕ່ພໍຄະນະກຳມະການທາງດ້ານສະບຽງອາຫານໄດ້ລາຍງານສິ້ນສຸດລົງ, ແຕ່ ລູຣູປາ ຈະຂຽນຫນັງສືຕອບ ອະລາດີເມຍ ອີລີຊ ກໍ່ບໍ່ທັນອີກແລ້ວ, ດັ່ງນັ້ນ ຈຶ່ງໄດ້ແຕ່ຍົກມືຂຶ້ນຂໍເວົ້າ ໃນຕອນນັ້ນ ກໍເລີ່ມມີການພິຈາລະນາ ບັນຫາທີ່ສຳຄັນທີ່ສຸດຊ້ຳ. ລູຣູປາ ຕ້ອງໄດ້ກ່າວສະເຫນີ ແລະອອກຄວາມຄິດເຫັນຂອງຕົນ. ວ່າແລ້ວ ສະຫາຍກໍລຸກຢືນຂຶ້ນ. ທັນໃດນັ້ນ ເຂົາກໍ່ຮູ້ສຶກວິນຫົວ ແລະໄດ້ລົ້ມຟຸບລົງຢູ່ກັບພື້ນຫ້ອງ, ເລືອດຜຸດລຸກຂຶ້ນ ແລ້ວເລ່ນເຂົ້າມາໃກ້ໆ:

-ອາເລັກຊັງ ດີມິຕຣີເອວິດ ທີ່ຮັກແພງເອີຍ, ສະຫາຍເປັນຫຍັງໄປ?

ລູຣູປາ ໄດ້ນອນຫງາຍ ຍົກແຂນເຮັດລ້ວຍລ້ວຍຢູ່, ໃບຫນ້າຂອງເຂົາຈືດຈາງຄ້ຳຍດັ່ງຄົນຕາຍ. ທຸກຄົນໄດ້ແລ່ນເຂົ້າມາຫຸ້ມລ້ອມເຂົາໄວ້. ໃນນັ້ນ ມີໃຜຜູ້ຫນ້ຳ ໄດ້ໂທລະສັບເອີ້ນແພດມາເບ່ຳ.

ມີຜູ້ຫນຶ່ງໄດ້ເອົານ້ຳຢູ່ໃນເຕົ້າແກ້ວຄໍກົ່ວມາຊຶດໃສ່ຫນ້າຂອງ ຊູຮູປາ. ເຂົາເລີ່ມເຫນັງຕີງຂຶ້ນມາແລ້ວ! ລະບົບການຫັນໃຈ ໄດ້ເຮັດໃຫ້ຫນ້າເອິກຂອງເຂົາເຫນັງຕີງຢູ່ແວບໆ. ເຂົາໄດ້ຮູ້ເມື່ອຄືງຂຶ້ນມາແລ້ວ. ຈາກນັ້ນ ເຂົາເຈົ້າກໍໄດ້ໂຈມເອົາຊູຮູປາຂຶ້ນນັ່ງເທົ່າຕັ່ງອີ. ຊູຮູປາ ໄດ້ຈັບເອົາແພນີ້ຂຶ້ນມາເຊັດຫນ້າ, ດ້ວຍທ່າທີທີ່ເຕັມໄປດ້ວຍຄວາມອຸກອັ່ງ ແລະ ກະວົນກະວາຍ:

-ຂ້ອຍໄດ້ສ້າງຄວາມລຳຄານ ແລະໄດ້ນ້ຳໜ້າຮອດກອງປະຊຸມນຳ.

-ສະມາຊິກສະພາລັດກະນິນຕິ ທີ່ຮັບຜິດຊອບທາງດ້ານສະບຽງອາຫານ ໄດ້ສະລິບໄປ ດ້ວຍຄວາມຫິວໂຫຍ, -ອະລາດິເມຍ ອີລີຊ ທັງເວົ້າທັງແກວ່ງທິວ. -ພວກເຮົາມີຊີວິດຢູ່ ດ້ວຍຄວາມຫຍຸ້ງຍາກລຳບາກທີ່ສຸດ. ແຕ່ເກີງຢ່າງໃດກໍຕ້ອງຮັກສາ "ຊັບສົມບັດຂອງຊາດ" ໄວ້ໃຫ້ໄດ້, -ເພີ່ນເວົ້າກັບ ຊູຮູປາຄືແນວນັ້ນ. -ບັນດາສະຫາຍທັງຫລາຍ, "ຊັບສົມບັດ ຂອງຊາດ" ນີ້ ໄດ້ຕົກຢູ່ໃນສະພາບທີ່ຊຸດໂຊມທີ່ສຸດ. ເຮົາຂໍສະເຫນີໃຫ້ນຳເອົາໄປໂຮງສ້ອມ ແປງຂັ້ນໃຫຍ່ດ່ວນນີ້.

24/VII

"ວັນມ່ວນຊື່ນເດືອນພຶດສະພາໄດ້ມາເກີງແລ້ວ ..."

ອະລາດິເມຍ ອີລີຊ ຕື່ນແຕ່ເຊົ້າໆຟຸ້ນ, ແຕ່ບໍ່ໄດ້ເຮັດສິ່ງໃດເປັນທີ່ລົບກວນ ນາເດສະດາ ກົງສະຕັງຕິນິບນາ ແລະ ນາຣິອາ ອີລິນິດນາ ແຕ່ປະການໃດ. ເພິ່ນເຂົ້າໄປໃນເຮືອນຄົວ. ນ້ຳ ນີ້ເພິ່ນໄດ້ນຸ່ງເຄື່ອງ ແລະໃສ່ເກີບຄູ່ເກົ່າແລະບໍ່ໄດ້ມັກກາລະວັດແຕ່ຢ່າງໃດເລີຍ.

ນ້ຳທີ່ຕົ້ມໄວ້ໃນເຮືອນໄຟ ໄດ້ຟົດດັງບ໊ວະໆ ແລະຫມໍ້ກະທະ ກໍໄດ້ສົ່ງກິ່ນຫອມຫວນຂອງ ມັນຝະລັ່ງຂຶ້ນມາ. ວຽກງານໃນຄອບຄົວຂອງ ອູລີອານິບ ທີ່ ເກຣມເລງນີ້ ແມ່ນ ຊາຍີອາ ເປັນຜູ້ຮັບພາລະທັງຫມົດ. ນາງແມ່ນ ນ້ອງສາວຂອງ ບາບຸດສະກິນ, ຊຶ່ງຖືກພວກສາລະວັດ ທະຫານຂອງກະສັດລັດເຊຍຍິງຕາຍ ໃນປີ ໑໙໐໗ ນັ້ນເອງ.

-ອະລາດິເມຍ ອີລີຊ ກະຊິໄປຊັ້ນເບາະ? -ຊາຍີອາ ເວົ້າດ້ວຍຄວາມປະຫລາດໃຈ.

-ແມ່ນອີຫຍັງອັນນີ້ນາ? -ອະລາດີເມຍ ອີລີຊ ຖາມຂຶ້ນ, ດ້ວຍອາການຍົ້ມແຍ້ມແຈ່ມໃສ, ແລະຊົ້ມໄປໃສ່ເຕົ້ານ້ຳຮ້ອນ ແລະຫມໍ້ກະທະ. -ອັນນັ້ນແມ່ນຫຍັງຫັ້ນ? ຄືມາແຕ່ງອາຫານໃຫ້ຂ້ອຍແຕ່ເຊົ້າແທ້? ຂອບໃຈເດີ ຊາຍີອາ. ນັ່ງລົງນີ້ແມ, ພວກເຮົາມາປັ້ນເຊົ້າຮ່ວມກັນເທາະ.

ອະລາດີເມຍ ອີລີຊ ກິນອາຫານ ດ້ວຍຄວາມແຊບນ້ວ, ສ່ວນ ຊາຍີອາ ນັ້ນໄດ້ຫຍິ້ນນ້ຳຊາໃສ່ຈອກໃຫ້ເພີ່ນ, ດ້ວຍອາການປະຫລາດໃຈວາດໃດວາດຫນຶ່ງ:

-ວຽກແນວນີ້ມັນບໍ່ເຫມາະກັບທ່ານຕີ, ອະລາດີເມຍ ອີລີຊ ເອີ, ເພາະວຽກງານສຳລັບທ່ານນັ້ນ, ມັນແມ່ນວຽກງານທາງດ້ານມັນສະຫມອງພຸ້ນ.

-ເພື່ອປະເທດຊາດໂຊວຽດ ກໍຕ້ອງໄດ້ອອກແຮງງານທາງຕີນມືແດ່ລະເນາະ? -ອະລາດີ-ເມຍ ອີລີຊ ເວົ້າຂຶ້ນ ພ້ອມທັງຍິ້ມຫົວ.

ອະລາດີເມຍ ອີລີຊ ກິນເຂົ້າເຊົ້າຢ່າງວ່ອງໄວ, ແລ້ວກໍກ້າວອອກຈາກເຮືອນໄປ. ເຊົ້າມື້ນັ້ນອາກາດປອດປ່ຽດ, ກະແສລົມເຢັນ ໄດ້ພັດມາເຮັດໃຫ້ໃບໄມ້ສີຂຽວສັ່ນສະເທືອນ. ກ້ອນຂີ້ເຝືອສີຂາວໄດ້ລ່ອງໄຫລໄປຕາມກະແສລົມຢູ່ເທິງທ້ອງຟ້າສີຄາມ.

ຢູ່ທີ່ ແກຣມລຶນ ມີຜູ້ຄົນຫລວງຫລາຍ ແລະຟົດຟື້ນຜິດປົກກະຕິ. ຢູ່ຕາມທ້ອງສະຫນາມຫລວງອັນກ້ວາງໃຫຍ່ ໄດ້ມີບັນດານັກຮົບທະຫານຍືນເປັນແຖວ - ພວກເຂົາໄດ້ອາໄສແລະຮົບຢູ່ກັບລັ່ງແກຣມລຶນນັ້ນເລີຍ. ບັນດາພະນັກງານ ໃນສະພາລັດຖະມົນຕີ ແລະ ຄະນະບໍລິຫານງານສູນກາງທົ່ວລັດເຊຍຕ່າງກໍໄດ້ເຂົ້າຮ່ວມຢູ່ໃນບ່ອນນີ້ຄືກັນ.

ມັນ ແມ່ນມັນທີຫນຶ່ງເດືອນຫ້າ.

ພັກໄດ້ຮຽກຮ້ອງໃຫ້ຈັດຕັ້ງການອອກແຮງງານສາມັກຄີແທນການເດີນສວນສະຫນາມໃນວັນບຸນໃຫຍ່ປີນີ້.

ກ່ອນຫນ້ານີ້ປີຫນຶ່ງ, ແລະແມ່ນວັນເສົາຄືແນວນີ້ແລ້ວ, ພາຍຫລັງເລີກວຽກແລ້ວ, ບັນດາກຳມະກອນທາງລົດໄຟສາຍ ມົດສະກູ - ກາຊານ ພາກັນບໍ່ກັບບ້ານ, ພວກເຂົາໄດ້ພາ-ກັນຢູ່ເຮັດວຽກໃນໂຮງງານຕໍ່. ພວກເຂົາໄດ້ພາກັນລ້າງແປງຫົວລົດໄຟສີ່ຫົວ ແລະຕູ້ລົດໄຟ

ອີກສິບຫົກຕູ້ໂດຍບໍ່ຄິດຄ່າແຕ່ຢ່າງໃດ. ເລນິນ ໄດ້ຂຽນບົດລົງຫນັງສືພິມ ກ່ຽວກັບມື້ວັນເສົາ ຄອມມຸຍນິດເທື່ອທຳອິດຂອງກຳມະກອນ, ໂດຍພາດຫົວເລື່ອງວ່າ "ຫົວຄຶດປະດິດສ້າງອັນຍິ່ງໃຫຍ່". ເລນິນ ກ່າວການເຮັດວຽກດ້ວຍຄວາມສະຫມັກໃຈ ໂດຍບໍ່ເອົາເງິນ ນີ້ ແມ່ນ ການອອກແຮງງານຄອມມຸຍນິດຢ່າງຫນຶ່ງ.

ດັ່ງນັ້ນ ໃນມື້ວັນທີຫນຶ່ງເດືອນພຶດສະພາ ປີ ໑໙໒໐ ໄດ້ປະກາດໃຫ້ມີວັນເສົາຄອມມຸຍນິດໃນທົ່ວປະເທດລັດເຊຍ. ຢູ່ໃນທົ່ວທຸກແຫ່ງ, ບັນດາແຜ່ນດິນປະເທດລັດເຊຍອັນກວ້າງໃຫຍ່, ທຸກຄົນໄດ້ພາກັນລົງສູ່ກະຕາບົນຫົນທາງຫລືໂຮງຈັກໂຮງງານ, ເພື່ອເຮັດວຽກອັນສຳຄັນໃຫ້ແກ່ສ່ວນລວມ.

ພວກນັກຮົບທະຫານທີ່ ແກຣມລິນ ໄດ້ພາກັນຍືນເປັນແຖວຢູ່ໃກ້ໆກັບປືນໃຫຍ່ຂອງກະສັດລັດເຊຍ. ປືນໃຫຍ່ກະບອກນີ້ເຮັດດ້ວຍທອງແດງ. ປືນໃຫຍ່ດັ່ງກ່າວ ບໍ່ທັນເຄີຍໄດ້ຍິງຈັກເທື່ອ. ບັນດານາຍຊ່າງຜູ້ເກັ່ງກ້າສະໄຫມເກົ່າໄດ້ຫລໍ່ອາວຸດນີ້ຂຶ້ນມາ, ເພື່ອເຮັດໃຫ້ທຸກຄົນຕົກຕະລຶງແລະສັດຕູເກີດມີຄວາມຢ້ານກົວ. ປືນໃຫຍ່ກະບອກດັ່ງກ່າວຖືກນຳມາວາງໄວ້ຢູ່ທີ່ ແກຣມລິນ ຕະຫລອດການ.

ບັນດານັກຮົບທະຫານ ໄດ້ພາກັນຍືນລຽນເປັນແຖວແລ້ວ, ຈາກນັ້ນ ຜູ້ບັນຊາການ ກໍ ປະກາດກ່ຽວກັບວຽກທີ່ຕ້ອງເຮັດ: ຂົນທ່ອນໄມ້ແລະສິ່ງຕ່າງໆຂອກຈາກເດີ່ນ ແລະມ້ຽນມັດ ແກຣມລິນໃຫ້ສະອາດງາມຕາ.

ໃນຕອນນັ້ນ ພໍດີ ວະລາດີເມຍ ອີລີ ຊມາຣອດ, ເພິ່ນຍ່າງໄປຍ່າງມາ. ເພິ່ນນຸ່ງເສື້ອເກົ່າແລະ ໃສ່ຫມວກແຫລບ, ມີທ່າທາງເຄັ່ງຂຶມ ແຕ່ດວງຕາທັງຄູ່ໄດ້ສະແດງໃຫ້ເຫັນເຖິງຄວາມອ່ອນລ້າ.

- ຂ້ອຍຂໍເຮັດວຽກຮ່ວມກັບພວກເຈົ້າ, - ວະລາດີເມຍ ອີລີຊ ຍືນກົ່ງແບບທະຫານ, ແລ້ວລາຍງານຕໍ່ຜູ້ບັນຊາການ. - ໃຫ້ຂ້ອຍໄດ້ປະກອບສ່ວນເຮັດວຽກວັນເສົາ ຄອມມຸຍນິດ ນີ້ນຳແດ່ເທາະ.

- ໃຫ້ສະຫາຍໄປຍືນຢູ່ແຖວເບື້ອງຂວາ, - ຜູ້ບັນຊາການອອກຄຳສັ່ງ.

ໃນໃຫຍ່ຢູ່ເທິງຫໍຄອຍເກຣມແລ້ວ ໄດ້ຕີສັນຍານເປັນບາດຍາວໆ, ຈາກນັ້ນສຽງເກ-ຂອງຫນ່ວຍ ດຸລິຍາ ກໍດັງຂຶ້ນ.

ທຸກຄົນຕ່າງກໍລົງມືເຮັດວຽກດ້ວຍຄວາມມ່ວນຊື່ນ. ສຽງດົນຕີ ໄດ້ສ້າງບັນຍາກາດ ໃຫ້ແກ່ມື້ຮ້ອນອົບເອົ້ານັ້ນຢ່າງຫນ້າອອນຊອນ. ການທີ່ ເລນິນ ໄດ້ເຮັດວຽກຢູ່ຄຽງບ່າຄຽງໄລ່ກັບພວກເຂົາເຈົ້າ ໄດ້ເຮັດໃຫ້ບັນດານັກຮຽນທະຫານມີຄວາມຈູບຈ້າວຫ້າວຫັນຕໍ່ວຽກງານ.

ທ່ອນໄມ້ແຕ່ລະທ່ອນ ລ້ວນແຕ່ຫນັກທັງນັ້ນ, ແລະຕ້ອງຫາມຫິກຄົນຈຶ່ງໄຫວ. ຄາວຫນຶ່ງຕໍ່ມາ·ບັນດານັກຮຽນທະຫານ ໄດ້ສັງເກດເຫັນວ່າ: ອະລາດີເມຍ ອີລີຊ ຍາມໃດກໍພະຍາຍາມເອົາແຕ່ທາງເບື້ອງກົກ ຊຶ່ງເປັນເບື້ອງທີ່ມີນ້ຳຫນັກຫລາຍກ່ວານັ້ນສະເຫມີ.

-ສະຫາຍ ເລນິນ, -ຫນຶ່ງໃນຈຳນວນນັກຮຽນເວົ້າຂຶ້ນ, -ພວກເຮົາຈະບໍ່ປ່ອຍໃຫ້ສະຫາຍແບກຫາມຫນັກແບບນັ້ນ ໄດ້ດອກ!

-ພວກສະຫາຍກໍຍັງແບກໄດ້, ເປັນຫຍັງຂ້ອຍຜັດຊິແບກບໍ່ໄດ້? -ອະລາດີເມຍ ອີລີຊ ຕອບຄັດຄ້ານຂຶ້ນ.

-ສະຫາຍ ວະລາດີເມຍ ອີລີຊ, ສະຫາຍ ຈົ່ງກັບເມືອສາ. ພວກເຮົາກໍຈະສາມາດເຮັດເອງໄດ້ຢູ່ດອກ, -ນັກຮົບທະຫານຜູ້ນັ້ນພະຍາຍາມຢ່າງມາໃຫ້ທັນເພື່ນແລ້ວກ່າວຊ້ຳເຈ.

-ບໍ່, ບໍ່, ເຈົ້າບໍ່ສາມາດບັງຄັບໃຫ້ຂ້ອ: ອກຫນີຈາກທີ່ນີ້ໄດ້ດອກ. ຂ້ອຍຈະບໍ່ຍອມຫນີໄປທາງໃດເດັດຂາດ.

-ວະລາດີເມຍ ອີລີຊ ເອີຍ, ສະຫາຍ ມີອາຍຸໄດ້ຫ້າສິບປີແລ້ວ!

ນັກຮົບທະຫານຜູ້ນັ້ນເວົ້າອອກມາ ແລ້ວທັນໃດນັ້ນກໍເກີດມີຄວາມຮູ້ສຶກລະອາຍໃຈທີ່ຕົນເອງໄດ້ປະພຶດຕໍ່ເພື່ນແບບເປັນກັນເອງຫລາຍໂພດ. ຄ້າຍກັບວ່າ ເພື່ນບໍ່ແມ່ນປະທານສະພາລັດກະນິດ, ແຕ່ແມ່ນອ້າຍຄົງໆຂອງຕົນ!

ວ່ະລາດີເມຍ ອີລີຊ ອ່ວຍຫນ້າຄືນມາຫາເຂົາ, ພ້ອມທັງຍົ້ມຫົວຂຶ້ນ:

-ຫມາຍຄວາມວ່າ ຂ້ອຍມີອາຍຸຫລາຍກ່ວາເຈົ້າ, ເພາະສະນັ້ນ ເຈົ້າກໍບໍ່ຄວນມາກຸ່ງກັບຂ້ອຍລະເບາະຈົ່ງແມ່ນ.

ວະລາດີເມຍ ອີລີຊ ຍັງຈົ່ມຫນ້ງຂອງເດືອນພຶດສະພາ, ໃນຄາວທີ່ເພື່ນແລະນາເດສະ-ດາ ກົງສະຕັງຕິນິບນາ ກືກ ເນລະເທດໄປຢູ່ບ້ານ ຊູແຊນສະໂກຍເອ ນັ້ນໄດ້ດີ. ພວກເຂົາພາກັນລັກເຮັດທຸງສີແດງເຊື່ອງພວກຕຳຫລວດຊົນນະບົດ, ແລະເມື່ອຮອດມື້ວັນທີຫນ້ງເດືອນພຶດສະພາ ພວກເຂົາໄດ້ພາກັນໄປເຕົ້າໂຮມຢູ່ທົ່ງຫຍ້າແຫ່ງຫນ້ງ. ພວກເຂົາໄດ້ຮ້ອງເພັ້ງຮ່ວມກັນ:

ມື້ວັນມ່ວນຊື່ນຂອງເດືອນພຶດສະພາໄດ້ມາຮອດແລ້ວ,
ເງົາແຫ່ງຄວາມເຈັບຊ້ຳຂໍ່ຈົ່ງຫາຍຈາກໄປ!
ຈົ່ງຮ້ອງເພັ້ງອັນພິລະອາດຫານຂຶ້ນ!
ມື້ວັນພວກເຮົາຈະມີການປະທ້ວງ!

ແລະຢູ່ແຫ່ງນັ້ນ, ຊົ່ງເປັນບ່ອນທີ່ພວກເຂົາກືກເນລະເທດ, ພວກເຂົາໄດ້ພາກັນໄຝ່ຝັນເຖິງອະນາຄົດ...

ອະນາຄົດດັ່ງກ່າວ ໄດ້ມາເຖິງແລ້ວ. ປະຊາຊົນມີສິດເສລີພາບ ແລະໄດ້ອອກແຮງງານ ເພື່ອຕົນເອງ, ກອງທັບແດງຢູ່ຕາມສະຫນໍ່ລະພູມຕ່າງໆ ກໍໄດ້ສົ່ງຂ່າວຄາວກ່ຽວກັບທ່າບຸກ ຂອງຕົນມາຫາ: ພວກເຮົາພວມຈະຜາບແພ້ພວກຮຸກຮານແລະພວກຝຶນປະຕິວັດ, ພວກ ເຮົາຈະຂັບໄລ່ໄສຫົວພວກມັນໃຫ້ຫນີອອກໄປຈົນຕະຫລອດການ.

ອະລາດີເມຍ ອີລີຊ ໄດ້ກັບຈາກການໄປອອກແຮງງານຂອງວັນເສົາ ຄອມມຸຍນິດ, ເສື້ອ ຂອງເພິ່ນປົກຄຸມໄປດ້ວຍເຫື່ອ. ເກີບຄູ່ດ່ຽວຂອງເພິ່ນກໍສຶກຂາດ.

-ອ້າຍບໍ່ມີເກີບສໍາຮອງໄວ້ໃສ່ພໍຄູ່ເລີຍ, -ນາເດສະດາ ກົງສະຕັງຕິນິບນາ ເວົ້າຂຶ້ນ.

ຈາກນັ້ນ ນາງກໍເອົາເສື້ອ ໂຕໃຫມ່ມາໃຫ້ ອະລາດີເມຍ ອີລີຊ ປ່ຽນ. ອະລາດີເມຍ ອີ-ລີຊ ທ່າທາງຊົງອົດເມື່ອຍ ກໍາລັງຢືນລ້າງຫນ້າຢູ່ກອກນໍ້າທີ່ເຮືອນຄົວດ້ວຍຄວາມດີໃຈ, ເພິ່ນ ຫັນໃຈເປັນບາດແຮງໆ, ແລະແກວ່ງຫົວອຶດໆເຮັດໃຫ້ນໍ້າຟົ້ງໄປທົ່ວ.

ຕໍ່ຈາກນັ້ນ ນາເດສະດາ ກົງສະຕັງຕິນິບນາ ກໍໄດ້ເອົາແຜ່ນແພແດງນ້ອຍຜືນຫນຶ່ງມາຕິດ ເຂົ້າໃສ່ເສື້ອໃຫຍ່ ຂອງ ອະລາດີເມຍ ອີລີຊ. ເພິ່ນໄດ້ໄປທີ່ ສະຫນາມຫລວງຕໍ່ຫນ້າ ໂຮງ ມະໂຫລະສົບແຫ່ງຫນຶ່ງ ຊົງເປັນບ່ອນວາງຮູບປັ້ນຂອງການມາກ ແລະໄດ້ອ່ານບົດປາໄສຢູ່ທີ່ ນັ້ນນໍາອີກ. ແລະໃນມື້ດຽວກັນນີ້ ຍັງໄດ້ມີການວາງຮູບປັ້ນ "ບົດປ່ອຍແຮງງານ" ຢູ່ອີກແຫ່ງ ຫນຶ່ງ. ອະລາດີເມຍ ອີລີຊ ເອງກໍໄດ້ມາອ່ານບົດປາໄສຢູ່ທີ່ນີ້ເຫມືອນກັນ.

ພໍຕົກເຖິງຕອນຄໍ່າ ເພິ່ນກໍໄດ້ໄປກ່າວຄໍາປາໄສຢູ່ໃນພິທີມິດຕິງ ແລະຍ້ອມຍາມຄຸ້ມບ້ານ-ຕ່າງໆ. ຈາກນັ້ນ ເພິ່ນກໍໄດ້ໄປກ່າວຄໍາປາໄສຢູ່ຄຸ້ມກໍາມະກອນ. ມື້ນັ້ນ, ແມ່ນມື້ວັນທີຫນຶ່ງ ເດືອນ ພຶດສະພາ ປີ ໑໙໘໐, ທີ່ນິດສະກຸ ໄດ້ມີພິທີເປີດສະໂມສອນກໍາມະກອນ.

ອະລາດີເມຍ ອີລີຊ ຮູ້ສຶກວ່າ ມີຄວາມຊື່ນຊົ່ນຕ່ອງກາງທົ່ມຂຶ້ນໃນມື້ນີ້, ຊົ່ງແມ່ນມື້ ປະກາດວັນເສົາຄອມມຸຍນິດທົ່ວປະເທດລັດເຊຍ. ເພິ່ນຮູ້ສຶກມີຄວາມຊື່ນຊົ່ນຕໍ່ຫນ້າແຜ່ນ ຫີນສີລາກໍ່ຄົ້ນກາບວັດທະນະທໍາໃຫມ່.

ເຖິງວ່າຕີນມືແຂນຂາທັ້ງສອງຂອງ ອະລາດີເມຍ ອີລີຊ ຈະອ່ອນລ້ອຍກໍຕາມ, ແຕ່ເພິ່ນ ກໍຮູ້ສຶກເບີກບານມ່ວນຊື່ນຫລາຍທົ່ສຸດ.

ທຸກຄົນຕ່າງກໍຮູ້ດີວ່າ ສະມາຊິກຊາວຫນຸ່ມຄອມມຸຍນິດນີ້ ລ້ວນແຕ່ແມ່ນບັນດາຊາວ ຫນຸ່ມຜູ້ອົງອາດກ້າຫານ ແລະ ກ້າວຫນ້າກັນທັງນັ້ນ. ເພື່ອຜົນປະໂຫຍດຂອງປະຊາຊົນ, ດັ່ງນັ້ນພັກຈຳເປັນ ຕ້ອງໄດ້ຄັດເລືອກເອົາ ຜູ້ທີ່ມີຈິດໃຈກ້າແກ່ນ ເພື່ອມາປະຕິບັດວຽກທີ່ສຳ ຄັນອັນນີ້ - ໃຜຈະເປັນຜູ້ອອກຫນ້າ? ຍາມໃດ ນັ້ນກໍຕ້ອງແມ່ນ ບັນດາສະມາຊິກຊາວຫນຸ່ມ ຄອມມຸຍນິດ ນັ້ນແລ້ວ.

ຕ້ອງເດີນໄປຕາມເສັ້ນທາງທີ່ຍັງບໍ່ເຄີຍພົບຈັກເທື່ອ - ແລ້ວແມ່ນໃຜຈະເປັນຜູ້ຕອບສະ-ຫນອງຕາມຄຳຮຽກຮ້ອງຄັ້ງທຳອິດນັ້ນ? ກໍຍັງແມ່ນບັນດາສະມາຊິກຄະນະຊາວຫນຸ່ມຄອມ-ມຸຍນິດອີກ. ເປັນຕົ້ນ ແມ່ນສົງຄາມ - ບັນດາສະມາຊິກຊາວຫນຸ່ມຄອມມຸຍນິດບໍ່ເຄີຍຫວັ່ນ ໄຫວຢ້ານກົວແຕ່ຢ່າງໃດ.

ໃນສະໄຫມສົງຄາມກາງເມືອງນັ້ນ, ບັນດາສະມາຊິກຊາວຫນຸ່ມຄອມມຸຍນິດ ກໍໄດ້ມີຜົນ ງານຢ່າງຫລວງຫລາຍ. ບັນດາຂຸມຝັງສົບຂອງສະມາຊິກຄະນະຊາວຫນຸ່ມຄອມມຸຍນິດນັບ ເປັນພັນໆ ຊຶ່ງປັດຈຸບັນ ມີຫ້າຍແຫ່ງຫາມເກີດຂຶ້ນ, ໄດ້ເຄຍລະດາດທົ່ວຜືນແຜ່ນດິນເຂດຊີ ເບຣີ, ອູເກຣນ, ກຣີມ ແລະຢູ່ຕາມແຄມແມ່ນ້ຳ ໂວນກາ, ກໍຄືຢູ່ທີ່ ກວກສະກະ ແລະເປ ໂຕຣກຣາດ. ແລະກໍຍັງມີສະມາຊິກຊາວຫນຸ່ມຄອມມຸຍນິດ ນັບເປັນຈຳນວນພັນໆຄົນ ທີ່ ໄດ້ເປັນວີລະຊົນ...

ອະລາດີເມຍ ອີລີຊ ເອົາສໍດຳຂີດຂຽນໄປຕາມແຜ່ນເຈ້ຍຢູ່ເທິງຫນ້າໂຕະ, ເພີ່ນກຳລັງ ຂຽນຮ່າງຍັດຕິຂອງກອງປະຊຸມ.

ມື້ນີ້ເພີ່ນຈະໄດ້ໄປອ່ານບົດປາໄສຢູ່ກອງປະຊຸມໃຫຍ່ຄັ້ງທີ III ຂອງຄະນະຊາວຫນຸ່ມຄອມ-ມຸຍນິດ. ຄະນະຊາວຫນຸ່ມຄອມມຸຍນິດໃນທົ່ວລັດເຊຍ ເກີດຂຶ້ນໄດ້ສອງປີແລ້ວ. ອະລາດີ-ເມຍ ອີລີຊ ໄດ້ໃຫ້ຄວາມສົນໃຈ ແລະໃຫ້ຄວາມຫວັງຕໍ່ຄະນະຊາວຫນຸ່ມຄອມມຸຍນິດນີ້ ຫລາຍທີ່ສຸດ. ເພາະພວກເຂົາເປັນຜູ້ທີ່ມີຄວາມກ້າວຫນ້າທີ່ສຸດ, ແລະທັງເປັນຜູ້ທີ່ອົງອາດ

ກ້າແກ່ນທີ່ສຸດ! ພວກເຂົາແມ່ນລູກຫລານຂອງຊົນຊັ້ນກຳມະກອນແລະຊົນຊັ້ນຊາວນາທຸກຍາກ. ວະລາດີເມຍ ອີລີຊ ຄິດຢູ່ໃນໃຈ, ພວກເຮົາໄດ້ຮ່ວມກັນເຮັດການປະຕິວັດແລ້ວ, ແຕ່ຜັດຍັງບໍ່ທັນໄດ້ກໍ່ສ້າງສັງຄົມຄອມມຸຍນິດນັ້ນເທື່ອ. ສະນັ້ນຄົນຮຸ່ນຫນຸ່ມນ້ອຍນີ້ແລ້ວຈະເປັນຜູ້ສ້າງທັງຫມົດ. ຜູ້ທີ່ຈະອອກຫນ້າພາທາງກໍແມ່ນບັນດາສະມາຊິກຊາວຫນຸ່ມນີ້ແລ້ວ.

ແລະກໍແມ່ນໃນຕອນນີ້ເອງທີ່ບັນດາຜູ້ຕາງຫນ້າຄະນະຊາວຫນຸ່ມຄອມມຸຍນິດ, ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່. ພວກເຂົາໄດ້ພາກັນມາແຕ່ບ່ອນເຮັດວຽກເສົາຄອມມຸຍນິດນັ້ນເລີຍ, ຈຶ່ງຕ່າງແຕ່ເຊົ້າເປັນຕົ້ນມາ, ພວກເຂົາໄດ້ພາກັນນັ່ງນັດສ້ອມແປງຕູ້ລົດໄຟຂອງແຕ່ລະສະຖານີ, ສັບຊ້ອນກອງຟືນຢູ່ຕາມສາງນັ່ງເຄື່ອງກໍຄືການສ້າງຄວາມເປັນລະບຽບຮຽບຮ້ອຍຢູ່ຕາມກະຫນິນຫີນທາງຂອງຄຸ້ມຕ່າງໆ, ເຮັດໃຫ້ໂສມຫນ້າຂອງນະຄອນຫລວງ ມົດສະກູ ໄດ້ມີຄວາມງາມຂຶ້ນຕື່ມ.

ມື້ນັ້ນ ແມ່ນວັນທີສອງເດືອນຕຸລາ ປີ ໑໙໘໐. ອາກາດຫນາວເຢືອກເຢັນ, ທົ່ວທ້ອງຟ້າມືດມົວໄປດ້ວຍກ້ອນເຜື້ອ. ທັນໃດນັ້ນ ກໍເກີດມີລົມແຮງຂຶ້ນ, ເຮັດໃຫ້ໃບໄມ້ສີເຫລືອງຢູ່ຕາມຕົ້ນແຄມທາງຫລວງຫລົ່ນລົງແລະປົວໄປຕາມກາງອາກາດ, ຈາກນັ້ນ ຈຶ່ງຕົກລົງດິນຟ້າສຸງດັງຊູ່ຊ່າຢ່າງຫນ້າອອນຈອນ.

ບັນດາຄະນາຊາວຫນຸ່ມຄອມມຸຍນິດ ຕ່າງກໍມີຄວາມຊົ່ນຊື່ນຕໍ່ບັນຍາກາດອັນສົດຊື່ນໃນຍາມເຊົ້າ, ຕໍ່ໃບໄມ້ທີ່ຫລົ່ນຕົກລົງມາ ກໍຄ້ອງກາງນລວມ ຈຶ່ງພວກເຂົາໄດ້ປະກອບສ່ວນດ້ວຍຕົນດ້ວຍມືຂອງຕົນເອງນັ້ນ. ແຕ່ອັນທີ່ສຳຄັນກ່ວາຫມູ່ນັ້ນ ກໍຄື ເລນິນ ຈະໄດ້ມາກ່າວຄຳປາໄສທີ່ກອງປະຊຸມໃຫຍ່!

ແມ່ນອນທີ່ສຸດ, ກໍຄືບັນດາຜູ້ຕາງຫນ້າຂອງຄະນະຊາວຫນຸ່ມຄອມມຸຍນິດ ໄດ້ຍ່າງສາວບາດຕົນໄປດ້ວຍຄວາມພ້າວຟ້ຳ, ເພື່ອໄປຍັງເຮືອນເລກທີ ຜ ຢູ່ກະຫນິນ ມາລາຍຢາ ດິມິຕຣິບກາ ໃຫ້ມັນທັນກັບເວລາທີ່ນັດຫມາຍ. ປັດຈຸບັນເຮືອນດັ່ງກ່າວ ໄດ້ກາຍມາເປັນໂຮງລະຄອນຂອງຄະນະຊາວຫນຸ່ມຄອມມຸຍນິດ ເລນິນ. ໃນເວລານັ້ນບໍ່ທັນແມ່ນໂຮງລະຄອນເທື່ອ. ຢູ່ທີ່ ເວທີສະແດງນັ້ນ ແມ່ນໂຕະເຮັດດ້ວຍໄມ້ ແລະບໍ່ມີຜ້າກັ້ງແຕ່ຢ່າງໃດ. ບັນດາ

ຮູບແຕ້ມເພື່ອປຸກລະດົມແລະຄຳຂວັນຕ່າງໆໄດ້ຖືກຕິດໃສ່ແຜ່ນເພສີແດງ. ຮູບນັກຣົບກອງທັບແດງຜູ້ຫນຶ່ງໃສ່ຫມວກເພຕິດດາວແດງກຳລັງຊັກຖາມຜູ້ເບິ່ງດ້ວຍທ່າທີອັນເຂັ້ມງວດວ່າ:

"ເຈົ້າໄດ້ເຂົ້າຢູ່ໃນກັນເກວກອງທະຫານອາສາສະຫມັກແລ້ວຫລືຍັງ?"

ຢູ່ໃນຫ້ອງນັ້ນ ມີສະມາຊິກຊາວຫນຸ່ມຄອມມຸຍນິດ ຊຶ່ງຫາກຳມາຈາກສະຫນາມຣົບຢ່າງຫລວງຫລາຍ. ແລະນອກຈາກນັ້ນ ກໍຍັງມີ ບັນດາຜູ້ຕາງຫນ້າຄະນະຊາວຫນຸ່ມຄອມມຸຍນິດທີ່ມາຈາກຕ່ວເມືອງ ແລະຕາມພາກຊົນນະບົດຕ່າງໆ, ພວກເຂົາບໍ່ແມ່ນວ່າຈະໄດ້ຮຽນຄືກັນ, ບາງຄົນກໍອ່ານອອກຂຽນໄດ້, ບາງຄົນກໍບໍ່ຮູ້ຂຽນ, ແລະມີບາງຄົນ ບໍ່ເຄີຍໄດ້ຈັບປື້ມອ່ານຈັກເທື່ອກໍມີ. ແຕ່ເພື່ອອຳນາດໂຊວຽດແລ້ວ, ພວກເຂົາທັງຫມົດແມ່ນພ້ອມແລ້ວທີ່ຈະບຸກເຂົ້າສູ່ກອງໄຟ.

ຫມາກຫົວໃຈຂອງບັນດາສະມາຊິກຊາວຫນຸ່ມຄອມມຸຍນິດ, ໄດ້ເຕັ້ນເປັນຈັງຫວະ



ດ້ວຍຄວາມຮ້ອນຮົນແລະຄອງຄອຍ: ເລນິນ ໃກ້ຈະມາແລ້ວ. ໃກ້ຈະໄດ້ຟັງຄຳເວົ້າຂອງ ເລ-ນິນແລ້ວ!

ໃນເວລາທີ່ລໍຖ້າຢູ່ນັ້ນ, ພວກເຂົາໄດ້ນັ່ງລົມກັນຢູ່ເທິງຕັ່ງຍາວ. ບາງຄົນກໍນຸ່ງເສື້ອນອມໃຫຍ່, ແລະບາງຄົນກໍນຸ່ງເສື້ອຫນັງ. ບັນດາສະມາຊິກທີ່ມີອາຍຸຂັ້ນຊາວປີຂຶ້ນໄປ. ສ່ວນຫລວງຫລາຍ ແມ່ນມັກນຸ່ງເສື້ອຫນັງສີດຳຄືກັບສະແວກລົບ. ນອກນັ້ນບາງຄົນກໍນຸ່ງເສື້ອໃຫຍ່ຊະນິດລ່ວມທີ່ຄົນພໍສົມຄວນ, ຊຶ່ງເປັນເສື້ອໃຫຍ່ ໄຊ້ນຸ່ງໃນຍາມສູ້ຮົບທີ່ອາບຊຶມໄປດ້ວຍເຫື່ອໄຄ ແລະຖົ່ນຫມໍ້. ພວກເຂົາຕ່າງກໍພາກັນໃສ່ຫມວກຂົນສັດຫລືຫມວກແພທີ່ຕົກກາ-ດາວແດງ.

"ເລນິນຈະເວົ້າຫຍັງນໍ?" - ບັນດາສະມາຊິກໄດ້ພາກັນຄາດຄະເນເອົາໄວ້. ໃນຂະນະທີ່ພວມກຳລັງຄອງຄອຍ: ເພິ່ນຈະຕ້ອງເວົ້າກ່ຽວກັບສົງຄາມ, ຈະຮຽກຮ້ອງໃຫ້ໄປສູ້ຮົບ, ເພື່ອສ້າງຜົນງານໃນການຮົບ ແລະຍົກສູງຈິດໃຈອັນອົງອາດກ້າຫານ. ກອງທັບແດງໄດ້ຂັບໄລ່ພວກທະຫານຂາວໄປແລ້ວ. ແຕ່ສົງຄາມກາງເມືອງນັ້ນ ກໍຍັງບໍ່ທັນສິ້ນສຸດເທື່ອ.

ພວກເຮົາຈົ່ງອອກສູ້ຮົບດ້ວຍຄວາມອົງອາດກ້າຫານ...

ທັນໃດນັ້ນ ສຽງເພັງຢູ່ທາງຫົວຫ້ອງປະຊຸມໄດ້ດັງກ້ອງຂຶ້ນ, ແລະດັງແຮງຂຶ້ນເປັນລຳດັບ.

ເພື່ອອຳນາດໂຊວຽດ.
ແລະພວກເຂົາ, ຫມົດທຸກຄົນກໍພ້ອມແລ້ວທີ່ຈະເສຍສະລະ
ຢ່ໃນການຕໍ່ສັ້ນ!

ທັນໃດນັ້ນ ທ້າງຫມົດກໍພາກັນງຽບສຽງລົງ. ຈາກນັ້ນກໍເລີ່ມມີການເລືອກຕັ້ງຄະນະປະທານເຫມືອນດັ່ງທີ່ເຄີຍເຫັນຢູ່ໃນຕາມແຕ່ລະກອງປະຊຸມອື່ນໆ: ໂຕະຂອງຄະນະປະທານ, ປູດ້ວຍແຜ່ນແພກຳມະຍີ່ສີແດງ. ບັນດາສະຫາຍຕ່າງກໍພາກັນ ເຂົ້ານັ່ງປະຈຳທີ່. ຮູບຂອງ ມາກແລະອ້ງແກນ ກໍຖືກຫ້ອຍໄວ້ເທິງຝາ, ທ້າງສອງຄ້າຍກັບວ່າກຳລັງແນມເບິ່ງບັນດາຄະນະສະມາຊິກຊາວຫນຸ່ມຄອມມຸຍນິດດ້ວຍຄວາມຮັກແພງ.

ທັນໃດນັ້ນ ສຽງຮ້ອງໂຮດ້ວຍຄວາມດີໃຈກໍໄດ້ດັງຂຶ້ນຢ່າງກະທັນຫັນ.

- ເລນິນ!

ບັນດາຄະນະສະມາຊິກຊາວຫນຸ່ມຄອມມຸຍນິດຕ່າງກໍພາກັນລຸກຂຶ້ນ, ພ້ອມທັງຕົບມືຊົມເຊີຍ. ພວກເຂົາເຫລົ່ານີ້ໄດ້ມີຄວາມພາກພູມໃຈ, ມີຄວາມຮັກແພງຕໍ່ ເລນິນຢ່າງຈິດຈໍ່ທີ່ສຸດ.

ເລນິນ ແກ້ເສື້ອໃຫຍ່ທີ່ມີຄໍຂົນນັ້ນອອກມາພາດໄວ້ເທິງຕັ່ງອີ. ແລ້ວກໍຈັບມືກາມສະບາຍກັບພວກສະຫາຍທີ່ຢູ່ໃນຄະນະປະທານ. ທຸກພຶດຕິກາມ, ຕະຫລອດທ້ງຮອຍຍິ້ມຂອງເພິ່ນ, ລ້ວນແຕ່ໄດ້ເຮັດໃຫ້ບັນດາຄະນະສະມາຊິກເກີດມີຄວາມພໍໃຈທ້ັງນັ້ນ. ເພິ່ນເປັນຜູ້ທ່ີງາມທ່ີສຸດ, ເປັນຜູ້ທ່ີປະເສີດ ແລະຫນ້າຮັກແພງທ່ີສຸດ. ເພິ່ນໄດ້ເຮັດໃຫ້ຄະນະສະມາຊິກຜູ້ຫ້າວຫັນທ້ງຫລາຍນ້ີນ້ຳຕາໄຫລຊຶມອອກມາ ຍ້ອນຄວາມສະເທ່ືອນໃຈ ແລະຍ້ອນວ່າໂອກາດທ່ີຈະໄດ້ພົບກັບເພິ່ນຄ້ືແນວນ້ັນ.

ເລນິນ ກ້າວເຂ້ົາໄປຫາໂຕະເທ່ືງເວທ, ແລ້ວຈ່ກເອ່ົາໂມງທ່ີມ່ສ່ວນຫ້ອຍ ຈາກກ່ົງເສ້ືອ

ມາເບິ່ງ. ເພິ່ນໄດ້ເຮັດສັນຍານແທນຄຳເວົ້າທີ່ວ່າ: ພໍແລ້ວໆ, ເຊົາຕີບໍ່ກັນສາ, ພວກເຮົາ ມາເລີ່ມລົງມືເຮັດວຽກກັນເທາະ.

ບັນດາຄະນະສະມາຊິກ ຍິ່ງເກີດຄວາມພໍໃຈຂຶ້ນຕື່ມອີກ. ແລະກ້າເພິ່ນຫາກເວົ້າວ່າ: "ບັນດາສະຫາຍທັງຫລາຍ! ໂດຍບໍ່ຍົກເວັ້ນຜູ້ໃດຫນຶ່ງ, ຈົ່ງອອກສູ່ສະໜາມຮົບດວງນີ້" ນັ້ນ, ໃຜໆກໍຄົງຈະຕະລຸມບອນອອກສູ່ສະໜາມຮົບໃນທັນທີນີ້ໂລດ.

ແຕ່ ເລນິນ ຜັດເວົ້າໄປທາງອື່ນ. ຕອນທຳອິດ ບັນດາສະມາຊິກຈົນເກີດຄວາມຫົນຫວຍ, ເກີດຄວາມປະຫລາດໃຈແລະເຈື່ອນລອຍເພີ່ກເສີຍ, ທັງນີ້ກໍຍ້ອນວ່າພວກເຂົາບໍ່ເຂົ້າໃຈ.

ເລນິນ ບໍ່ໄດ້ຢືນຢູ່ແຕ່ກັບບ່ອນເກົ່າ, ເພິ່ນຍ່າງໄປໆມາໆຢູ່ກັບແຄມໂຕະເທິງເວທີນັ້ນ ຢ່າງສົມສະອົມ. ມັນັ້ນ ມີຜູ້ຄົນເຂົ້າຮ່ວມຢ່າງຫລວງຫລາຍທີ່ສຸດ. ປະທານຂອງຄະນະຜູ້ທີ່ ມີອາຍຸຫລາຍກ່ວາໜຸ່ມນັ້ນນັ່ງຢູ່ທາງເບື້ອງຫລັງໂຕະ. ຍ້ອນວ່າພາຍໃນຫ້ອງຂາດຕັ່ງນັ່ງ, ດັ່ງ ນັ້ນ ບັນດາສະມາຊິກຕ່າງໆ ຈຶ່ງພາກັນນັ່ງແພບລົງກັບພື້ນຫ້ອງນັ້ນໂລດ. ເລນິນໄດ້ຍ່າງຜ່ານ ກາຍພວກເຂົາໄປມາ ດ້ວຍຄວາມຈົ່ງຈົ່ມ ທັງກ່າວຄຳປາໄສໄປນຳ.

ໄດ້ເວົ້າຫຍັງແດ່? ເພິ່ນເວົ້າວ່າ ພາລະຫນ້າທີ່ ຂອງສະມາຊິກຊາວຫນຸ່ມຄອມມຸຍນິດ ປັດຈຸບັນ ແມ່ນຕ້ອງຝຶກຝົນຮ່ຳຮຽນ.

ບັນດາຄະນະສະມາຊິກຕ່າງກໍພາກັນຕົກຕະລຶງ. ວະລາດີເມຍ ອີລີຊ ສາມາດຮັບຮູ້ເຖິງ ຄວາມປະຫລາດໃຈດັ່ງກ່າວ, ແລະໃບຫນ້າທີ່ສະແດງເຖິງຄວາມບໍ່ເຂົ້າໃຈຂອງຊາວຫນຸ່ມ ເຫລົ່ານັ້ນຄືກັນ, ດັ່ງນັ້ນ ເພິ່ນຈຶ່ງໄດ້ພະຍາຍາມອະທິບາຍຄວາມນຶກຄິດຂອງເພິ່ນໃຫ້ຈະ ແຈ້ງທີ່ສຸດ.

ສົງຄາມກາງເມືອງຂອງພວກເຮົາມໍ່ຈະສິ້ນສຸດລົງແລ້ວ. ກອງທັບຂອງສັດຕູກຳລັງຈະ ຖືກປັດເຂ່ຍຫນີໄປຫມົດແລ້ວ. ຕໍ່ຈາກນັ້ນ ພວກເຮົາຈະເຮັດຫຍັງແດ່? ພວກເຮົາຈະຕ້ອງ ໄດ້ລົງມືກໍ່ສ້າງໂຮງຈັກໂຮງງານ, ເຄື່ອງຈັກ ໄຖນາ, ເຮືອບິນ, ລົດຍົນ, ຕ້ອງແຈກຢາຍພະ ລັງໄຟຟ້າໄປທົ່ວປະເທດ. ພະລັງໄຟຟ້ານັ້ນ ມັນແມ່ນຫຍັງ, ພວກສະຫາຍສະມາຊິກທັງ

ຫລາຍ, ຮູ້ຈັກບໍ? ພວກສະຫາຍຄວນຮູ້ຈັກ, ຕ້ອງຮູ້ຈັກ!

ຈາກນັ້ນ ອະລາດີເມຍ ອີລີຊ ກໍໄດ້ອະທິບາຍຢ່າງຈະແຈ້ງແລະງ່າຍດາຍຕໍ່ບັນດາສະມາ-ຊິກວ່າ, ຖ້າບໍ່ມີຄວາມຮູ້ແມ່ນບໍ່ອາດຈະກໍ່ສ້າງສັງຄົມຄອມມຸຍນິດໄດ້.

ຕ້ອງຮຽນຮູ້ແລະອອກແຮງງານ. "ມີແຕ່ຜ່ານການຮໍ່າຮຽນແລະການອອກແຮງງານໄປພ້ອມກັບກຳມະກອນແລະຊາວນາເທົ່ານັ້ນ ຈຶ່ງຈະສາມາດກາຍເປັນ ນັກຄອມມຸຍນິດທີ່ແທ້ຈິງ ໄດ້." ອະລາດີເມຍ ອີລີຊ ໄດ້ເວົ້າວ່າ, ຝຶກຝົນຮໍ່າຮຽນລັດທິຄອມມຸຍນິດນີ້, ຫມາຍຄວາມວ່າຕ້ອງກຳນົດບາດກ້າວເດີນຂອງຕົນເອງແຕ່ລະກ້າວ, ກໍຄືການຕໍ່ສູ້ແບບກຳມະຊີບທີ່ແພ້ໃສ່ຕ້ານກັບສັງຄົມເກົ່າເທົ່ານັ້ນ. ແລະຕ້ອງກໍ່ສ້າງສັງຄົມໃຫມ່ຂຶ້ນມາແທນ.

ຄວາມຫວັງແລະຄວາມເປັນຈິງ

ແຮກແບນ ແວນ ນັກປະພັນວິທະຍາສາດສົມມຸດ ທີ່ລີຊ ຂອງອັງກິດ ກຳລັງນັ່ງຢູ່ໃນຫ້ອງເຮັດວຽກຂອງ ອະລາດີເມຍ ອີລີຊ. ບັນດາປຶ້ມທີ່ ແວນ ຂຽນຂຶ້ນນັ້ນ ລ້ວນແຕ່ໄດ້ຮັບຄວາມນິຍົມຊົມຊອບ, ແລະມີຊື່ສຽງຢູ່ໃນໂລກ. ແວນ ເປັນນັກ ວິຈານກ່ຽວກັບຊີວິດການເປັນຢູ່ຄວາມບີກພ່ອງຢູ່ໃນສັງຄົມທຶນນິຍົມ, ແລະຍ້ອນເຫດນັ້ນ ເມື່ອອະລາດີເມຍ ອີລີຊຈຶ່ງເກີດຄວາມພໍໃຈ ແລະສ້າງຄວາມຮູ້ຈັກຄຸ້ນເຄີຍກັນກັບເຂົາ.

ແຮກແບນ ແວນ ໄດ້ເລົ່າຄວາມຮູ້ສຶກຂອງຕົນສູ່ ອະລາດີເມຍ ອີລີຊ ຟັງ. ເຂົາເລົ່າຕັ້ງແຕ່ຕອນມາຮອດໃຫມ່ໆເມື່ອສອງອາທິດກ່ອນ, ແລະໄດ້ໄປທ່ອງເລາະຕາມຄຸ້ມບ້ານຕາມກະຫນົນຫົນທາງໃນເມືອງ ເປໂຕຣກຣາດ ແລະ ນິດສະກູ ໂດຍບໍ່ມີຄວາມອຶດເມື່ອຍແຕ່ຢ່າງໃດ. ເຂົາໄດ້ໄປເບິ່ງບັນດາໂຮງຈັກໂຮງງານ, ໃນນັ້ນມີໂຮງງານທີ່ບໍ່ທຳການຜະລິດເປັນຈຳນວນຕັ້ງເຄິ່ງຫນຶ່ງຂອງໂຮງງານທັງຫມົດ. ເຄື່ອງຈັກເຄື່ອງລາງລ້ວນແຕ່ຕາຍມິດຊ້ອຍມ້ອຍກັນທັງນັ້ນ. ຈາກນັ້ນ ເຂົາກໍໄດ້ໄປໂຮງຮຽນຕ່າງໆອີກ. ເຂົາເຫັນພວກນັກຮຽນແຕ່ລະຄົນໄດ້ຮັບ

ເຂົ້າຈ່ຶ້ກ້ອນນ້ອຍໆສຳລັບຄາບເຂົ້າ, ບັນດາປຶ້ມຮຽນກໍຂາດເຂີນ. ປຶ້ມແຕ່ລະຫົວ ໄດ້ເບ່ິງຮ່ວມກັນຕັ້ງສາມ, ສ່ີຄົນ.

ແວນໃຫ້ຂໍ້ສັງເກດ, ທ້າລັກກາມແລະຕັ້ງໃຈຟັງດ້ວຍຄວາມເອົາໃຈໃສ່. ເຂົາເກ່ີດມ່ີຄວາມປະຫລາດໃຈເປັນທ່ີສຸດທ່ີເຫັນ ປະເທດລາດໂຊວຽດ ໄດ້ປະສົບກັບຄວາມຫຍຸ້ງຍາກຈົນບ່ໍອາດທ່ີຈະວາດພາບໄດ້! ສະພາບຄວາມອ ຶດຫົວ, ຄວາມອຸ້ນວາຍ, ຂາດວັດຖຸເຊ ຶ້ອໄຟ, ຂາດແສງສະຫວ່າງ. ປະເທດລັດເຊຍ ໄດ້ແຈບຈົມຢູ່ໃນເງ ຶ ມ ຶດ.

ແຮກແບນ ແວນ ໄດ້ເວ ົ້າກັບ ເລນິນ ຄ ຶ ແນວນ ັ ້ນ.

ໃນຫ ນ ້ າທ ່ ີ ກ ໍ າລ ັ ງຢ ຶ ້ ມຫ ົ ວຂອງ ເລນິນ ໄດ ້ ຄ ່ ອຍໆຈ ຶ ດຈາງລ ົ ງ. ບ ່ ແ ໝ ່ ນວ ່ າ, ເພ ິ ່ ນມ ີ ຄ ວາມ ຄ ງ ດ ຽ ມ ຕ ່ ໍ ຄ ໍ າ ເ ວ ົ ້ າ ຂ ອ ງ ນ ັ ກ ປ ະ ພ ັ ນ ຜ ູ ້ ມ ີ ຊ ື ່ ສ ຽ ງ ຜ ູ ້ ນ ຶ ດ ອ ກ. ເລນິນ ມ ັ ກ ຄ ົ ນ ເ ວ ົ ້ າ ກ ົ ງ ໄ ປ ກ ົ ງ ມ າ, ຄ ຶ ດ ແ ນ ວ ໃ ດ ກ ໍ ໃ ຫ ້ ເ ວ ົ ້ າ ແ ນ ວ ນ ັ ້ ນ ໂ ລ ດ. ແ ວ ນ ເ ວ ົ ້ າ ຄ ວ າ ມ ຈ ິ ງ: ປ ະ ເ ທ ດ ລ ັ ດ ເ ຊ ຍ ກ ໍ າ ລ ັ ງ ຕ ົ ກ ຢ ູ ່ ໃ ນ ສ ະ ພ າ ບ ອ ຸ ້ ນ ວ ິ ນ ວ ິ ນ ທ ະ ກ ານ. ແ ວ ນ ໃ ຫ ້ ຂ ໍ ້ ຄ ຶ ດ ເ ຫ ັ ນ ທ ່ ີ ກ ົ ກ ຕ ້ ອ ງ ທ ່ ີ ສ ຸ ດ: ບ ່ ແ ໝ ່ ນ ບ ັ ນ ດ າ ນ ັ ກ ໂ ບ ນ ເ ຊ - ວ ິ ກ ນ ຶ ດ ອ ກ ທ ່ ີ ພ າ ປ ະ ເ ທ ດ ລ າ ດ ໄ ປ ສ ູ ່ ຄ ວ າ ມ ອ ຸ ້ ນ ວ ິ ນ ຄ ຶ ແ ນ ວ ນ ຶ ້ , ແ ຕ ່ ນ ັ ນ ແ ໝ ່ ນ ພ ວ ກ ລ ັ ດ ກ ະ ບ ານ ຂ ອ ງ ກ ະ ສ ັ ດ ລ ັ ດ ເ ຊ ຍ ແ ລ ະ ພ ວ ກ ນ າ ຍ ທ ຶ ນ ຢ ູ ່ ພ າ ຍ ໃ ນ ແ ລ ະ ນ ອ ກ ປ ະ ເ ທ ດ ພ ຸ ້ ນ ຕ ່ າ ງ ຫ າ ກ ພ ຸ ້ ນ, ແ ໝ ່ ນ ກ ະ ໂ ຕ ພ ວ ກ ນ ຶ ້ ແ ລ ້ ວ ຈ ່ ໍ າ ເ ປ ັ ນ ຜ ູ ້ ສ ້ າ ງ ສ ິ ງ ຄ ວ າ ມ ຢ ູ ່ ໃ ນ ປ ະ ເ ທ ດ ລ ັ ດ ເ ຊ ຍ ຂ ຶ ້ ນ. ແ ຕ ່ ແ ວ ນ ຄ ິ ງ ບ ່ ໍ ເ ຊ ື ່ ອ ດ ອ ກ ວ ່ າ ພ ວ ກ ໂ ບ ນ ເ ຊ ວ ິ ກ ນ ຶ ້ ຈ ະ ເ ປ ັ ນ ຜ ູ ້ ຟ ື ້ ນ ຟ ູ ປ ະ ເ ທ ດ ລ ັ ດ ເ ຊ ຍ ເ ຮ ັ ດ ໃ ຫ ້ ປ ະ ເ ທ ດ ລ າ ດ ຫ ລ ຸ ດ ພ ົ ້ ນ ອ ອ ກ ຈ າ ກ ສ ະ ພ າ ບ ກ ານ ທ ່ ີ ທ ຸ ກ ຍ າ ກ ປ າ ກ ຫ ມ ອ ງ ແ ລ ະ ສ ິ ງ ຄ ວ າ ມ ເ ຫ ລ ົ ່ ານ ຶ ້ ໃ ຫ ້ ໄ ດ ້ ນ ັ ້ ນ.

ໃນຕອນນ ຶ ້ ເລນິນ ຍ ່ ົ ງຫຍ ັ ບເຂ ົ ້ າໃກ ້ ໆກ ັ ບນ ັ ກປ ະ ພ ັ ນ ແ ວ ນ ກ ່ ອ ງ ເ ກ ່ ົ າ ອ ີ ກ, ແ ລ ະ ພ ້ ອ ມ ທ ້ າ ລ ັ ກ ກ າ ມ ດ ້ ວ ຍ ທ ່ າ ທ ີ ຢ ຶ ້ ມ ແ ຍ ້ ມ ແ ຈ ່ ມ ໃ ສ ແ ລ ະ ຊ ົ ່ ນ ຊ ົ ່ ມ:

-ຊ ັ ້ ນ ເ ຈ ົ ້ າ ພ ໍ ຈ ະ ວ າ ດ ພ າ ບ ໄ ດ ້ ຢ ູ ່ ບ ໍ, ວ ່ າ ພ ວ ກ ໂ ບ ນ ເ ຊ ວ ິ ກ ຈ ະ ເ ຮ ັ ດ ຫ ຍ ັ ງ ແ ດ ່ ເ ພ ່ ໍ ຈ ະ ຟ ື ້ ນ ຟ ູ ປ ະ ເ ທ ດ ລ ັ ດ ເ ຊ ຍ ນ ຶ ້ ? ເ ຈ ົ ້ າ ຕ ້ ອ ງ ການ ຢ າ ກ ຮ ູ ້ ຫ ລ ົ ບ ໍ ?

ແ ຮ ກ ແ ບ ນ ແ ວ ນ, ເ ປ ັ ນ ນ ັ ກ ປ າ ດ ແ ລ ະ ທ ້ າ ເ ປ ັ ນ ນ ັ ກ ຄ ົ ້ ນ ຄ ິ ດ ທ ່ ີ ເ ບ ່ ົ ງ ກ ວ ້ າ ງ ແ ນ ມ ໄ ກ, ດ ້ ວ ຍ ເ ຫ ດ ນ ັ ້ ນ, ເ ລ ນ ິ ນ ຈ ່ ໍ ຕ ັ ດ ສ ິ ນ ໃ ຈ ນ ໍ າ ເ ອ ົ າ ແ ຜ ນ ກ ານ ອ ອ ກ ມ າ ສ ະ ເ ຫ ນ ີ ເ ພ ່ ໍ ໃ ຫ ້ ເ ຂ ົ າ ເ ຂ ົ ້ າ ອ ີ ກ ເ ຂ ົ ້ າ ໃ ຈ ນ ໍ . ນ ັ ນ ແ ມ ່ ນ ແ ຜ ນ ກ ານ ທ ່ ີ ຍ ່ ົ ງ ໃ ຫ ຍ ່ ທ ່ ີ ສ ຸ ດ. ເ ລ ນ ິ ນ ໄ ດ ້ ຄ ົ ້ ນ ຄ ິ ດ ຂ ຶ ້ ນ ມ າ ຕ ັ ້ ງ ແ ຕ ່ ດ ິ ນ ນ ານ ແ ລ ້ ວ.

ແຕ່ສະໄຫມຍັງຫນຸ່ມ, ວະລາດີເມຍ ອີລີຊ ເຄີຍມີເພື່ອນທີ່ສະນິດສະຫນົມຜູ້ຫນຶ່ງ, ຊື່ວ່າ ກາແລບ ນັກຊີມີລີອາໂນວິດ ກະເຣີຊີສານິບສະກີ, ຊຶ່ງແມ່ນນັກຄອມມຸຍນິດ ແລະທັງ ເປັນນັກວິສາວະກອນໃຫຍ່ຜູ້ຫນຶ່ງ. ນອກນັ້ນ ເຂົາຍັງເປັນນັກກະວີນໍາອີກ. ໃນສະໄຫມປົກ ຄອງຂອງກະສັດລັດເຊຍເຂົາໄດ້ແປບົດເພັງໂປໂລຍ ມາເປັນພາສາລັດເຊຍ ຊຶ່ງກ່ອນຫນ້ານີ້ ພວກເຂົາເຈົ້າກໍຍັງເຄີຍໄດ້ຮ້ອງບົດເພັງດັ່ງກ່າວ, ແລະມາຮອດດຽວນີ້ ບົດເພັງດັ່ງກ່າວກໍຍັງ ຄົງດັງກ້ອງໄປໃນທົ່ວປະເທດລັດເຊຍ:

ແຕ່ພວກເຮົາມີຄວາມທະນົງຕົວແລະອາດຫານສູງສົ່ງ...

ໃນຕອນຄ່ໍາ ເລນິນເຄີຍໄດ້ປຶກສາຫາລືແຜນການວຽກງານຂອງຕົນກັບ ກະເຣີຊີສານິບ-ສະກີ ຢູ່ເປັນປະຈໍາ.

ບັນດານັກປາດ, ນັກວິຊາສະເພາະໃຫຍ່ທີ່ສຸດ, ແລະບັນດານັກຊ່ຽວຊານທັງຫລາຍ ເປັນຈໍານວນຮ້ອຍໆຄົນ ໄດ້ຖືກ ເລນິນເຊີນເຂົ້າມາວາງແຜນ ແລະ ພິນິດພິຈາລະນາແຜນການ ດັ່ງກ່າວ.

ໃນເວລານີ້ ເພິ່ນທໍາຄວາມເຂົ້າອົກເຂົ້າໃຈກັບນັກປະພັນ ແລະ ຜູ້ນີ້. ນັກປະພັນດັ່ງ ກ່າວບໍ່ເຂົ້າໃຈພາສາລັດເຊຍພໍໂຕ. ແຕ່ ວະລາດີເມຍ ອີລີຊ ໄດ້ໂອ້ລົມກັບເຂົາເປັນພາສາ ອັງກິດ, ເພິ່ນເວົ້າພາສາອັງກິດໄດ້ດີຈົນບໍ່ຕ່າງຫຍັງກັບຄົນອັງກິດຈັກຄົນ. ແລະ ສຸດທ້າຍຄວາມ ເຄົາລົບນັບຖືເພາະເພິ່ນເວົ້າພາສາອັງກິດໄດ້ຢ່າງຄ່ອງແຄ້ວ, ເປັນກັນເອງ! ສ່ວນຄວາມນຶກ ຄິດນັ້ນແຫ່ງພິລຶກ! ເພິ່ນມີຄວາມນຶກຄິດທີ່ຈະແຈ້ງພໍປານກັນກັບແສງຟ້າແມບເຫລື້ອມແລະ ສາມາດສ່ອງເຫັນອະນາຄົດອັນກ້ວາງໄກນໍາອີກ. ແຜນການຂອງ ເລນິນ ທີ່ໄດ້ເຮັດໃຫ້ ແລະ ຕິກຕະລຶນັ້ນຄືໂຄງການກໍ່ສ້າງລະບົບພະລັງງານໄຟຟ້າໃນທົ່ວປະເທດລັດເຊຍ! ຊຶ່ງມີເຂດພູ ພຽງແລະປ່າດົງອັນກ້ວາງໃຫຍ່ໄພສານ, ຢູ່ຕາມບ້ານນອກຂອກຄາເມ ເຄີຍມີແຕ່ແສງສະ ຫວ່າງຂອງຕະກຽງ, ຕິວເມືອງກໍຮ້າງ, ເຄື່ອງຈັກເຄື່ອງລາງກໍເພພັງ. ວຽກງານການຊື້ຂາຍກໍ ຖືກຢຸດສະຫງັກ, ສາຍທາງລົດໄຟກໍລ້ວນແຕ່ຖືກທໍາລາຍເປ່ເພ.

- ໃນສະພາບເງື່ອນໄຂທີ່ຫ້ານວິຕິກຄືແນວນີ້ ທ່ານຜັດໃຜ່ຝັນວ່າຢາກໃຫ້ໄຟຟ້າຮຸ່ງແຈ້ງ ໄປໃນທົ່ວຜືນແຜ່ນດິນອັນກວ້າງໃຫຍ່ໄພສານນັ້ນຊິເປັນໄປໄດ້ບໍ?

- ແມ່ນແລ້ວ. ພວກເຮົາຈະກໍ່ສ້າງບັນດາໂຮງງານໄຟຟ້າຂຶ້ນ. ຈະສະຫນອງພະລັງງານ ໃຫ້ແຕ່ລະໂຮງງານ, ຈະຜະລິດບັນດາລົດໄຟທີ່ແລ່ນດ້ວຍໄຟຟ້າຂຶ້ນ.

"ຄົນປະເສີດແທ້ໆ! - ແວນ ທ້າຟ້າເລນິນເວົ້າ, ທ້າຄິດຢູ່ໃນໃຈ. - ແຕ່, ໂອຍເນາະ... ນັກລະເມີເຫີ້ຝັນແຫ່ງແກຣນແລງ ເອີ". ນັກປະພັນ ຜູ້ເບິ່ງກວ້າງເຫັນໄກ ຄຶດຢູ່ໃນໃຈວ່າ ແຜນການຂອງ ເລນິນ ນັ້ນ ມັນເປັນພຽງເລື່ອງລົມໆແລ້ງໆ ຊິ່ງຄົງຈະບໍ່ມີທາງປະກົດເປັນຈິງ ຂຶ້ນມາໄດ້ດອກ.

ສອງເດືອນຕໍ່ມາ, ຢູ່ທີ່ໂຮງມະໂຫລະສິບ ໂບນຊອຍ ໄດ້ມີການເປີດກອງປະຊຸມໃຫຍ່ຄັ້ງ ທີ VIII ຂອງສະພາໂຊວຽດທົ່ວລັດເຊຍຂຶ້ນ. ເຫດການດ່ວນກ່ອເກີດຂຶ້ນ ໃນເດືອນທັນວາ ຂອງປີ ໑໙໒໐.

ນ້ຳຢູ່ຕ່ຳນອນທ່ວມຫ້ອງດ້ວຍຜ້າກຳມະຍີ, ແມ່ນບັນດາຜູ້ຄົນນຸ່ງເສື້ອຜ້າແບບທຳມະດາທີ່ ສຸດ, ໃສ່ເກີບບິດຊາວນາ. ພວກເຂົາເຫລົ່ານັ້ນແມ່ນບັນດາຜູ້ຄົນຜູ້ທີ່ມີສີຫນ້າກ້າຫານເດັດ ດ່ຽວ, ພວກເຂົາແມ່ນຜູ້ຕາງຫນ້າຂອງອຳນາດໂຊວຽດ. ພວກເຂົາພາກັນມາເຕົ້າໂຮມຢູ່ ແຫ່ງນີ້ ກໍແມ່ນເພື່ອມາປຶກສາຫາລືເພື່ອຮັບຮອງເອົາທິດທາງອັນຖືກຕ້ອງ ແລະ ແຜນການ ກໍ່ສ້າງຊີວິດການເປັນຢູ່ໃຫມ່, ກໍ່ສ້າງພິມການເສດຖະກິດຢູ່ໃນອະນາຄົດ.

ເທິງເວທີ ໄດ້ມີແຜນທີ່ທີ່ສະແດງເຖິງການກໍ່ສ້າງລະບົບໄຟຟ້າທົ່ວປະເທດລັດເຊຍໃຫຍ່ ແຜ່ນຫນຶ່ງ. ອະລາດີເມຍ ອີລີຊ ໄດ້ໃຫ້ຄວາມເອົາໃຈໃສ່ຕໍ່ແຜ່ນທີ່ດັ່ງກ່ອຫລາຍທີ່ສຸດ. ເພິ່ນເຄື່ອຍຕີສາຍໄປຫາກະເຣີຊີສານິບສະກັຕ່ງຫລາຍໆເທື່ອ, ພ້ອມທ້າຊຸກຍູ້ໃຫ້ນັກແຕ້ມ ແລະບັນດາຊ່າງໄຟຟ້າທ້ງຫລາຍພາກັນເຮັດໃຫ້ແລ້ວຕາມກຳນົດຄາດຫມາຍ! ອະລະດີເມຍ ອີລີຊ ປາກະຫນາຍາກໃຫ້ບັນດາຜູ້ແທນສະພາໂຊວຽດໄດ້ເຫັນແຈ້ງວ່າ: ນີ້ແລ້ວແມ່ນແຜນ ການການກໍ່ສ້າງລະບົບພະລັງໄຟຟ້າຂອງພວກເຮົາ, ພວກເຮົາຈະພາກັນສ້າງສາປະເທດລັດ ເຊຍຄືແນວນີ້ແລ້ວ. ອີກສິບປີຂ້າງຫນ້ານີ້ ຂໍເຊີນໃຫ້ທ່ານ ແວນ ກັບຄືນມາເບິ່ງໂລດ...

ນັກວິສາວະກອນ ກະເຣີຊີສານິບສະກີ, ຜູ້ທີ່ມີຫນ່ວຍຕາດຳ, ຮູບຮ່າງຕ່ຳເຕ້ຍ, ກຳລັງ ຢືນຢູ່ເທິງເວທີດັ່ງກ່າວ. ເຂົາເປັນຄົນທີ່ເຄັ່ງຂຶມແລະສະຫລາດນີໃຫວພິກດີ, ແຕ່ມາຮອດ ດວງຕາ ກັບມີດຈ່ໍ ດ້ວຍຄວາມຕື່ນຕັນໃຈ.

ມື້ວານນີ້ ກໍຍັງແມ່ນຢູ່ບ່ອນນີ້, ແລະຢູ່ເທິງເວທີອັນນີ້ແລ້ວ ທີ່ ເລນິນໄດ້ເວົ້າ: "ລັດ-ທິຄອມມຸຍນິດ ນັ້ນ ແມ່ນອຳນາດໂຊວຽດບວກເຂົ້າໃສ່ກັບການກໍ່ສ້າງລະບົບພະລັງໄຟຟ້າໃນ ທົ່ວປະເທດ". ມາມື້ ວິສາວະກອນ ກະເຣີຊີສານິບສະກີ ຈະຕ້ອງໄດ້ອະທິບາຍໃຫ້ຈະແຈ້ງ ວ່າ: ທຸກສິ່ງທຸກຢ່າງເຫລົ່ານັ້ນຈະດຳເນີນໄປຄືແນວໃດ. ເຂົາມີຄວາມຕື່ນຕັນໃຈເປັນທີ່ສຸດ, ໄມ້ຊີກະດານຢູ່ໃນກຳມືເຂົານັ້ນ ຮູ້ສຶກວ່າສັ່ນໆວາດໃດວາດຫນຶ່ງ. ເຂົາຍົກໄມ້ດັ່ງກ່າວຂຶ້ນ, ແລະຊີ້ໄປຕາມແຜນທີ່ຄ່ອຍໆ. ໃນເວລານັ້ນ ແສງສະຫວ່າງຢູ່ໃນຫ້ອງໄດ້ຖືກມອດລົງ, ມີ ແຕ່ແຜນທີ່, ເມື່ອໄມ້ຊີຖືກບ່ອນໃດ ກໍມີແສງນ້ອຍໆຮຸ່ງຂຶ້ນພ້ອມບາດ, ກະເຣີຊີສານິບສະກີ ໄດ້ໃຫ້ຄວາມກະຈ່າງແຈ້ງວ່າ: ພວກເຮົາຈະກໍ່ສ້າງໂຮງງານໄຟຟ້າຢູ່ແຫ່ງໃດ, ຈະກໍ່ສ້າງຂຶ້ນຄືແນວໃດ, ພື້ນຖານການອຸດສາຫະກຳຈະໄດ້ຖືກຟື້ນຟູຂຶ້ນຄືນຄືແນວໃດ, ໄຮ່ນາຕ່າງໆ ພວກເຮົາຈະໄດ້ມີສະມັນຕະພາບຄືແນວໃດ. ແສງໄຟໄດ້ຮຸ່ງເປັນບາດໆ, ແລະໄດ້ສະແດງໃຫ້ ເຫັນຢ່າງຈະແຈ້ງເຖິງບ່ອນທີ່ຈະຕັ້ງໂຮງງານໄຟຟ້າ. ແຜນທີ່ດັ່ງກ່າວໄດ້ແຈ້ງສະຫວ່າງຂຶ້ນ ຢ່າງຫນ້າປະຫລາດ ແລະມະຫັດສະຈັນແທ້ໆ. ກະເຣີຊີສານິບສະກີ ໄດ້ຊີ້ແຈງດ້ວຍສຽງອັນ ດັງແລະຫນັກແຫນ້ນ.

ອະລາດີເມຍ ອີລີຊ ແນມເບິ່ງໃບຫນ້າທີ່ເຕັມໄປດ້ວຍຄວາມເບີກບານຂອງຜູ້ເປັນ ເພື່ອນ; ເພິ່ນຮູ້ສຶກວ່າທີ່ຊຸມນຸມໄດ້ໃຫ້ຄວາມສົນໃຈຮັບຟັງເປັນພິເສດ; ຈາກນັ້ນ ເພິ່ນກໍ ແນມໄປເບິ່ງແສງໄຟທີ່ຮຸ່ງມາບໆຢູ່ເທິງແຜນທີ່ອີກ - ແສງສະຫວ່າງແຫ່ງອະນາຄົດເອີ! ແລະ ເພິ່ນກໍເຂົ້າໃຈວ່າ: ມາຮອດຕອນນີ້, ແຜນການຊຶ່ງເພິ່ນໄດ້ຄົ້ນຄ້ວາມາດ້ວຍຈິດໃຈແລະເຫື່ອ ແຮງທັງຫມົດນັ້ນ ໄດ້ກາຍມາເປັນຄວາມຫວັງແລະໃກ້ຈະເປັນຄວາມຈິງແລ້ວ. ຄວາມຫວັງ ແລະຄວາມຈິງດັ່ງກ່າວບໍ່ແມ່ນຂອງເພິ່ນຜູ້ດຽວແຕ່ຢ່າງໃດ. ແຕ່ແມ່ນຂອງປະຊາຊົນໂຊວຽດ ແລະບັນດາສະຫາຍອື່ນໆອີກ.

ในเดือน ทันวา ปี ๑๙๘๐, หนังสือพิม "สักจะทำ" ได้ลงบิดข่าวสะบับสุดท้าย ของสะพาหะหานปะติวัดว่า: "ยู่ตามแต่ละสะหนามธิบ ได้มีความสะหงบลงหมิด แล้อ". กองทับแดง สามาดบักเอ่ยพวกธุกธานได้ย่างธาบดาบ, ได้ดีเอาชะนะ พวกกองหะหานขาวแล้อ. อีกบ่ดิน, อำนาดโซวยด ก็จะไปธอดเขดพาดตาเอ้น ออกไกแล้อ.

สิงดามยู่ในที่อปะเหดด้ายกับบ่าได้สิ้นสุดลิงแล้อ. การปะกาดไช้ละบอบคอม มุยนิด ในสะไหมสิงดามแม่นบ่สอดค่องกับชิวิดการเบ้นยู่ของปะชาชินอีกแล้อ. ด่งนั้น เลนิน จึ่งได้ค้นคิดนะโยบายแบบใหม่อันหนึ่งขึ้นมา เพื่อให้สอดค่องกับสะไหมสันติพาบ.

แต่ไพพิบัด อันหน้าหวาดกิว ผักได้เล็ดลอดเข้ามาในปะเหดโซวยดอีก.

ละดูหนาว บ่มีหิมะดิก, บ่มีธอดกะแสลม, อากาดหนาวอันเยือกเย็นด้ายกับมันได้มุดเข้าไปยู่ในพื้นดินจินหมิด. บันดาพืดพันที่แตกหน่อใบ้ขึ้นในยามละดูบานใหม่ต่างก็เหลืองหล่าห่องแห้งไปหมิด. บันดาพืดพันที่จ่อยผอมเหลืนั้น ต่างก็ดองก้าน้ำฝนโธยธำด้วยความหิวกะหาย. แต่ก็เสยปะโหยดล้างๆ, ตะหลอด ไลยะของละดูบานใหม่และละดูแล้วนั้น, อากาดร้อนเอ้าด้ายด่งไฟ. ดวงตาเอ้นก็ ร้อนดีกับกองไฟ, ท้องฟ้าปาสะจากสีเผือหล่องไหล. ความร้อนได้ดูดดึงเอาน้ำ ยางยากสุดท้ายของบันดาพืดพันที่กำลังห่องแห้งย่างหาวุน. สีดินก็แขงแก่นย้อน ความร้อนพิลึกอันนั้น. ตามลิงเขดของแม่น้ำโองกา ก็ดียู่ตามที่งใธ่ที่งนาล้อน แต่วุดโฉมไปตามๆกัน. ไพแห้งแล้งได้แผ่ลามไปธอดเขด กรีม และหางพากใต้ ของอูธาน. ไพอึดหือได้ค่อยๆโปโลขึ้นยู่ต่ำหน้าปะชาชินนับเบ้นจำนอนล้านๆคิน.

อะลาดีเมย อีลิช ได้ไปเกิงสะพาลัดกะมินดีปะชาชินแล้อ, จากนั้นสะไหม

ກອງປະຊຸມກໍໄດ້ເລີ່ມເປີດຂຶ້ນຕາມເວລາທີ່ໄດ້ກຳນົດໄວ້. ໃນວາລະກອງປະຊຸມດັ່ງກ່າວ ເພິ່ນ ໄດ້ເວົ້າກ່ຽວກັບການໃຫ້ຄວາມຊ່ວຍເຫລືອແກ່ຜູ້ທີ່ກຳລັງອຶດຫິວ. ວະລາດີເມຍ ອີລີຊ ໄດ້ ແນະນຳ, ຊັກຈູງ, ທັກທ້ວງໃຫ້ມີການກະທຳຢ່າງຮີບດ່ວນ ແລະ ເດັດຂາດແບບດຽວກັນ ກັບສະໄຫມສົງຄາມ.

ລັດຖະບານໂຊວຽດ ໄດ້ຮຽກຮ້ອງມາຍັງປະຊາຊົນ. ບັນດາໜັງສືພິມພ້ອມທັງໂທລະເລກ ໄດ້ຖືກຫວ່ານໄປທົ່ວທຸກແຂວງແລະຕົວເມືອງ: "ບັນດາສະຫາຍທັງຫລາຍ, ຈົ່ງແບ່ງປັນ ທຸກສິ່ງເທົ່າທີ່ສາມາດ!" ເດີແຊນຊິນສະກີ, ປະທານຄະນະກຳມາທິການ ເພື່ອການຕໍ່ສູ້ຕ້ານ ພວກຝົນປະຕິວັດແລະຕ້ານການນ້ຳເພຫຳລາຍທົ່ວລັດເຊຍໄດ້ໄປ ຊີເບຣີ, ເພື່ອຮົບໂຮມເອົາ ເຂົ້າບະເລແລ້ວນຳໄປ ຊີ້ດຊ່ວຍພວກທີ່ຢູ່ທາງຂ້າງເຂດແມ່ນ້ຳ ໂວນກາ.

ຢູ່ທາງເຂດ ອູເກຣນ ພື້ ລະດູການປູກຝັງແມ່ນດີທີ່ສຸດ. ເລນິນ ໄດ້ຝາກຈົດຫມາຍ ໄປເຖິງປະຊາຊົນອູເກຣນ.

"ຕ້ອງການຄວາມຊ່ວຍເຫລືອຢ່າງຮີບດ່ວນ ແລະ ຕ້ອງການການຊ່ວຍເຫລືອຢ່າງ ຫລວງຫລາຍ", ວະລາດີເມຍ ອີລີຊ ໄດ້ຂຽນຄືແນວນັ້ນ.

ນອກນັ້ນ ເພິ່ນຍັງຂຽນຈົດຫມາຍຝາກໄປຫາບັນດາກຳມະກອນທີ່ຢູ່ຕ່າງປະເທດນຳອີກ. "ຈົ່ງໃຫ້ຄວາມຊ່ວຍເຫລືອ!".

ລັດຖະບານໂຊວຽດຍັງໄດ້ສ້າງຕັ້ງຄະນະກຳມາທິການຫນ່ວຍງານອີກຊຸດໜຶ່ງ ການີນ ເປັນ ຫົວຫນ້າ, ຄະນະດັ່ງກ່າວມີຫນ້າທີ່ເພື່ອຊ່ວຍເຫລືອຜູ້ທີ່ອຶດຫິວ. ເລນິນ ເອງ ໄດ້ສ້າງ ຄວາມຫວັງໄວ້ນຳ ການີນ, ກໍຄືນັ້ນສະຫມອງຂອງຜູ້ທີ່ກຳເນີດຂຶ້ນມາຈາກຊົນຊັ້ນຊາວໄຮ່ ນາແລະແນວຄິດອັນອ່ອງໄວແບບກຳມາຊີບຂອງເຂົານັ້ນ.

ການີນ ໄດ້ໄປເຖິງ ເຂດແມ່ນ້ຳ ໂວນກາ ໂດຍທາງລົດໄຟພິເສດທີ່ໃສ່ຊື່ວ່າ "ການ ປະຕິວັດເດືອນຕຸລາ".

-ຕ້ອງເອົາໃຈໃສ່ພວກເດັກນ້ອຍເປັນພິເສດ, -ວະລາດີເມຍ ອີລີຊເວົ້າຂຶ້ນ, ແລະ ເວົ້າຕື່ມອີກວ່າ - ຫວັງວ່າສະຫາຍຄົງຈະເອົາໃຈໃສ່!

ກາລິນ ສາມາດຮັບຮູ້ເຖິງຄວາມເອົາໃຈໃສ່ກໍຄືຄວາມອົດທົນຂອງເລນິນ ນັ້ນໄດ້ດີ. ຍ້ອນວ່າ ປະທານສະພາລັດຖະມົນຕີປະຊາຊົນ ມີຄວາມຮັກແພງເປັນຫ່ວງເປັນໄຍນຳເດັກນ້ອຍທາງເຂດແມ່ນ້ຳໂວນກາ ຊຶ່ງກຳລັງຈ່ອຍຜອມແກ້ມໂວກເຫລ່ານັ້ນຄ້າຍກັບວ່າແມ່ນລູກຄົງຂອງຕົນເອງນັ້ນແລ້ວ, ກາລິນ ຈຶ່ງໄດ້ກ່າວຕອບເພື່ອແບ່ງເບົາຄວາມກະວົນກະວາຍຂອງເພິ່ນ, ທັງເອົາມືລູບຫນວດຢູ່ຄາງ:

-ເຮົາຈະພະຍາຍາມຢ່າງສຸດຂີດ, ຈະເຮັດຈົນສຸດຄວາມສາມາດພຸ້ນແລ້ວ.

-ຕ້ອງເຮັດຫລ່ືນຄວາມສາມາດພຸ້ນອີກ! -ອະລາດີເມຍ ອີລີຊ ເວົ້າຂົ້ນຕ່ໍ.

* * *

ເດີກດົ່ນທ່ຽງຄືນແລ້ວ, ແຕ່ຢູ່ໃນຫ້ອງເຮັດວຽກຂອງປະທານສະພາລັດຖະມົນຕີປະຊາຊົນ ຍັງມີແສງສະຫວ່າງຈາກໄຟຕະກຽງຮຸ່ງພໍຣິບຣ່ີຢູ່. ອະລາດີເມຍ ອີລີຊ ໄດ້ຈັດແຈງມັດກອງເຈ້ຍທ່ີໄດ້ເຊັນແລະແກ້ໄຂແລ້ວນັ້ນໄວ້ອີກເບ້ືອງຫນ່ຶງ.

ເພິ່ນເຈັບຫົວ, ເຈັບຫົວຈົນບ່ໍອາດທ່ີຈະທົນຕ່ໍໄປໄດ້ອີກ. ອະລາດີເມຍ ອີລີຊ ກ່ໍຍັງພະຍາຍາມອົດກັ້ນເອົາໄວ້. ໃນເວລານ້ີ ບ່ໍແມ່ນຍາມທ່ີຈະເຈັບໄຂ້ ບ່ໍໄດ້ເດັດຂາດ. ຂະນະນັ້ນຜັກບ່ໍມີໃຜເນມເຫັນເພິ່ນຈັກຄົນເລີຍ. ເພິ່ນໄດ້ເອົາຫນ້າຜາກຫມູບໃສ່ຝ່ามືດ້ວຍອາການເມ່ືອຍອ່ອນ. ສະພາບແຫ່ງຄວາມອຶດຫົວຍາມໃດກ່ໍໄດ້ປະກົດຂ້ຶນຢູ່ໃນແນວຄິດຂອງເພິ່ນ.

"ເຮັດການຄວາມສາມາດພຸ້ນລະເບາະ!" -ອະລາດີເມຍ ອີລີຊ ຄິດຢູ່ໃນໃຈ.

ລັດຖະບານໂຊວຽດ ໄດ້ເຮັດວຽກການຄວາມສາມາດ. ເຖິງວ່າຢູ່ໃນທະນາຄານໂຊວຽດຈະຍັງມີຄໍາເຫລ ືອຢູ່ຈໍານວນຫນ້ອຍທ່ີສຸດກ່ໍຕາມ, ແຕ່ ເລນິນ ຍັງເຊັນຄໍາລັດຄໍາສ່ັງໃຫ້ກອບເອົາເງິນຮູບອອກຕ້ັງສິບສອງລ້ານຮູບຄໍາ, ເພ ື່ອເອົາມາຊ ື້ແນວເຂ ົ້າປູກຈາກຕ່າງປະເທດ ສ ົ່ງໃຫ້ບ່ອນທ ີ່ແຫ້ງແລ້ງ.

ບັນດາກໍາມະກອນ ໄດ້ຂຽນຈົດຫມາຍຝາກ ເຖິງສະພາລັດຖະມົນຕີປະຊາຊົນວ່າ:

"ຮຽນ ສະຫາຍ ເລນິນ! ຢູ່ໃນປະເທດລັດເຊຍ ແຜ່ນດິນແມ່ຂອງພວກເຮົານ ້ີຍ ັງມ ີ

ໂບດເປັນຈຳນວນລ້ານໆແຫ່ງ, ບັນດາໄມ້ກາງ
ເຂັນທີ່ເຮັດດ້ວຍຄຳ, ຢູ່ຕາມແຕ່ລະບ່ອນແລະ
ສ່ຽງຄ້ຳຂອງຄູນຕ່າງໆນັ້ນຄວນຮີບໂຮມ ເພື່ອ
ເອົາມາແລກກັບເຂົ້າບະເລ, ເພື່ອຊ່ວຍເຫລືອ
ບັນດາປະຊາຊົນທີ່ອຶດຫີວນັ້ນ".

ບັນດາກຳມະກອນນີ້ ຈັ່ງແມ່ນມີຫົວຄິດດີ
ແທ້ໆ! ເລນິນ ໄດ້ຮັບເອົາຄຳແນະນຳຂອງບັນ
ດາກຳມະກອນໄວ້.

ສຽງໂທລະສັບໄດ້ດັງຂຶ້ນ, ກາລິນິນ ເວົ້າ
ຜ່ານທາງໂທລະສັບມາຕັ້ງແຕ່ເຂດແມ່ນ້ຳໂວນ
ກາ, ເລນິນ ເອົາຫູໂທລະສັບແປະເຂົ້າໃສ່
ຫູດ້ວຍຄວາມເປັນຫ່ວງກະວົນກະວາຍ:

- ເປັນຈັ່ງໃດ, ນິກຄາຍອິນ ອິວາໂນວິດ?

- ວະລາດີເມຍ ອິລິຊ, ສະພາບການຫນັກ
ຫນ່ວງຫລາຍທີ່ສຸດ.

ບັນດາເຂົ້າປູກຢູ່ຕາມທົ່ງໄຮ່ທົ່ງນາຕາຍ
ຈົນຫມົດ. ຢູ່ຕາມບ້ານຕາມຊ່ອງມີຫມອກປົກ
ກົ້ວຢູ່ໄປທົ່ວ. ສຽງງົວໂຕຫນຶ່ງຮ້ອງກໍບໍ່ມີ. ສັດ
ລ້ຽງສ່ວນຫລາຍກໍຖືກຂ້າກິນເປັນອາຫານຫລື
ບໍ່ກໍຕາຍໄປດ້ວຍການຂາດເຫຍື່ອ, ເຫັດແລະ
ຫມາກໄມ້ປ່າ ກໍບໍ່ສາມາດປົ່ງຂຶ້ນໄດ້ຍ້ອນລະດູ
ແລ້ງທີ່ເປັນຕາຢ້ານນີ້. ປະຊາຊົນ ໄດ້ເອົາໃບໄມ້
ແລະຫຍ້າມາຕົ້ມເຂົ້າແລະຫຸງເກົ. ປະຊາຊົນ

24 / VII
ห้ามจำหน่าย

ມີສະພາບອ່ອນເພຍເປ້ຍລ່ອຍລົ້ມພຸບລົ້ມພາບ
ຍ້ອນຄວາມອຶດອ່ອນ, ມີຫລາຍຄອບຄົວໄດ້
ຕາຍດັບຕາຍສ້ຽງ, ຄ້າຍກັບວ່າເປັນພະຍາດ
ກາລະໂລກນີ້ແລ້ວ.

ພາຍຫລັງທີ່ໄດ້ຟັງໂທລະສັບນັ້ນແລ້ວ,
ເລນິນ ກໍນັ່ງເທົ້າລີງໃສ່ຕ່ຽງຢ່າງບໍ່ປາກບໍ່ຕ້ຽຕັ້ງ
ດິນ, ການປະພຶດດັ່ງກ່າວນີ້ບໍ່ແມ່ນຄວາມຊຶນ
ເຄີຍຂອງເພິ່ນແຕ່ຢ່າງໃດ.

ວຽກງານຂອງຄະນະກຳມາທິການ ເພື່ອ
ຊີ້ດຊ່ວຍຜູ້ອຶດຫິວ ກໍຄືຈັດຕັ້ງກັນຂົນເອົາເດັກ
ນ້ອຍອອກຈາກບ່ອນນັ້ນ, ແມ່ນນະໂຍບາຍທີ່
ຖືກຕ້ອງທີ່ສຸດ. ແລະກໍເປັນຫນ້າວິຕົກແທ້ໆ:
ບັນດາຕູ້ລົດໄຟທີ່ຂົນເອົາພວກເດັກນ້ອຍ ໃສ່
ຈົນເຕັມອັດນັ້ນ ກໍຄືວ່າມາມຶດຈົ່ນແທ້...

ບັນດາຂະບວນລົດໄຟດັ່ງກ່າວ ໄດ້ແລ່ນ
ອອກຈາກແຂວງທີ່ປະສົບໄພອຶດຫິວ ເພື່ອໄປ
ຍັງຕົວເມືອງຕ່າງໆ. ນະຄອນຫລວງ ມົດສະກູ
ກໍໄດ້ຮັບເອົາພວກເດັກນ້ອຍຊາວ ຊູວັດ, ຢູ່
ຕາມເຮືອນຫລັງໃຫຍ່ໆ ຂອງພວກຊຸນນາງ
ແລະພວກນາຍທຶນໃນສະໄຫມກ່ອນນັ້ນ, ມາ
ດຽວນີ້ໄດ້ກາຍມາ ເປັນເຮືອນສຳລັບເດັກນ້ອຍ
ກຳພ້າຊາວຊູວັດ ແລ້ວ.

ເດັກຄົນທ່ຽງຄືນແລ້ວ, ອະລາດີເມຍ ອີ

ລີຊ ໄດ້ຍ່າງເຂົ້າໄປໃນເຮືອນດ້ວຍບາດຕີນຄ່ອຍໆ. ທຸກຄົນຕ່າງກໍຫລັບນອນກັນຫມົດແລ້ວ, ມີແຕ່ ນານີອາຊາ ເທົ່ານັ້ນ ຍັງບໍ່ທັນນອນ. ນາງຍັງຄົງນັ່ງຄອງຖ້າເພິ່ນຢູ່. ນາງເຊີນເພິ່ນ ລົງໄປທາງເຮືອນຄົວ.

-ອ້າຍບໍ່ຮັກສຸຂະພາບຂອງອ້າຍແດ່ເນາະ, ອ້າຍ ໂອໂລເດຍ. ອ້າຍດື່ມນ້ຳຊາຮ້ອນ ຈັກຈອກຫນຶ່ງກ່ອນເນາະ. ເອ້ີຍ ນາເດຍ ລາວມ້ແຕ່ເຮັດວຽກເມື່ອຍຫລາຍ ເລີຍເຂົ້າ ໄປພັກຜ່ອນແລ້ວ.

ອະລາດີເມຍ ອີລີຊ ເຫມເຫັນຫໍ່ຂອງຝາກທາງໄປສະນີ, ຫໍ່ດ້ວຍແພເສັ້ນໃຫຍ່ທີ່ວາງ ໄວ້ຢູ່ເທິງໂຕະຫໍ່ຫນຶ່ງ. ພວກກະສິກອນບ້ານ ຕາມບິບ ຂຽນຈົດຫມາຍມາວ່າ, ພວກເຂົາ ໄດ້ຝາກສົ້ມຊີ້ນແລະນ້ຳມັນມາໃຫ້: "ອະລາດີເມຍ ອີລີຊ ລອງຊີມຜະລິດຕະພັນຂອງຊາວ ຊົນນະບົດພວກຂ້ອຍນີ້ລອງເບິ່ງດູ, ຫວັງວ່າມັນຄົງຈະ ເຮັດໃຫ້ສະຫາຍມີກຳລັງວັງຊາແຂງ ແຮງຕື່ມ".

-ໂອໂລເດຍ ເອີຍ, ອ້າຍຍັງບໍ່ເຄີຍໄດ້ຮັບຂອງຂວັນແບບນີ້ຈັກເທື່ອໃດເນາະ, -ນາຣິອາ ອີລີນິດນາ ເວົ້າຂຶ້ນ, -ນ້ອງແລະເອ້ີຍ ນາເດຍ ຕ່າງກໍເຫັນດີນຳ. ແຕ່ ໂອໂລເດຍ... ເບິ່ງຊິ້ອ້າຍ ຄືດເມ່ືອຍຫລາຍໃດນັ້ນ...

ອະລາດີເມຍ ອີລີຊ ຍິ້ມຕໍ່ນ້ອງສາວ. ນານີອາຊາ ທີ່ຮັກເອີຍ! ເພິ່ນມີຄວາມຮັກຕໍ່ ນ້ອງສາວຂອງເພິ່ນຫລາຍທີ່ສຸດ. ປີ ເຊຊກ, ຕອນ ອາເລັກຊັງ ຜູ້ເປັນອ້າຍກົກຖືກໂທດ ປະຫານນັ້ນ, ນາງຍັງນ້ອຍຢູ່. ຊາວເມືອງ ໄດ້ຫ່າງເຫີນຈາກຄອບຄົວ ອູລີອານົບກັນທັ້ງ ນັ້ນ, ມີແຕ່ອີວານ ຢາໂກວາເລວິດ ຢາໂກອະແລບ ຊາວຊູວັດ ຊຶ່ງເປັນເພ່ືອນຂອງພໍ່ເທົ່າ ນັ້ນ, ທີ່ບໍ່ໄດ້ຫລົບຫນ້າລີ້ຕາ, ບໍ່ກົ້ມບໍ່ປະ, ແລະນອກນັ້ນກໍຍັງມີຊາວຊູວັດອີກຜູ້ຫນຶ່ງ ຊື່ວ່າ ໂອໂດຍົກົບ ທີ່ບໍ່ໄດ້ກົ້ມປະຄອບຄົວ ອູລີອານົບ ໃນລະຫວ່າງທີ່ມີເຫດຮ້າຍເກີດຂຶ້ນຄືແນວ ນັ້ນ. ຂໍຂອບໃຈນຳພວກເຂົາແລ້ວ.

-ນ້ອງຮູ້ຈັກບໍ່ວ່າພວກເຮົາຄວນຈະເຮັດຈັ່ງໃດກ່ຽວກັບຂອງຂວັນອັນນັ້ນ? -ອະລາດີ ເມຍ ອີລີຊ ຫັງເວົ້າພ້ອມຫັງເອົາມືເຄາະຂອງຝາກທີ່ຫໍ່ດ້ວຍແຜ່ນແພເສັ້ນໃຫຍ່ນັ້ນນຳ.

-ຫລ່າງກັ້ນ ເຂົາເຈົ້າຫາກໍ່ຂຶ້ນເອົາເດັກນ້ອຍຊາວຊູວັດມາທີ່ ນິດສະກູ ນີ້ໃດ. ພວກເຮົາຄວນຈະສົ່ງຂອງສິ່ງນີ້ໄປຍັງເຮືອນລ້ຽງເດັກເພື່ອມອບໃຫ້ແກ່ພວກເດັກນ້ອຍຊາວຊູວັດ. ນ້ອງເຫັນດີນຳບໍ່, ນາງອາຊາ?

ນາຣິອາ ອີລິນິດນາ ແນມເບິ່ງໃບຫນ້າຂອງຜູ້ເປັນອ້າຍຢ່າງເຕັມຕາ, ຫນ້າຕາຂອງເພິ່ນລ່າເຫລືອງຫລາຍແທ້ໆ, ເຫັນແລ້ວເຮັດໃຫ້ຫມາກຫົວໃຈຂອງນາງຫົດຫູ່ເຂົ້າ, ດ້ວຍຄວາມສົງສານ.

-ພວກເຮົາຈະຂໍຮ້ອງໃຫ້ເຂົາເຈົ້າແບ່ງປັນໃຫ້ແກ່ເດັກນ້ອຍຜູ້ທີ່ອ່ອນເພຍແລະຈ່ອຍໂຊ ກ່ວາຫມູ່ເຫລົ່ານັ້ນ, -ອະລາດີເມຍ ອີລຊ ເວົ້າຂຶ້ນຕໍ່.

ນາຣິອາ ອີລິນິດນາ ງຶກຫົວສະແດງຄວາມເຫັນດີນຳ.

ອະລາດີເມຍ ອີລຊ ຍັງຄົງເຈັບຫົວຄືເກົ່າຢູ່. ແຕ່ເພິ່ນກໍມີຄວາມມ່ວນຊື່ນຂຶ້ນມາຢ່າງເຫັນໄດ້ແຈ້ງ. ຂອງຂ້ວນຂອງຊາວ ກະສິກອນຈາກຕາມບ້ານ ນີ້ ກໍ່ບໍ່ຕ່າງຫຍັງກັບຢອດນ້ຳໃນທະເລ ຢອດຫນຶ່ງເທົ່ານັ້ນ. ແຕ່ເຖິງຢ່າງໃດ ເພິ່ນ ກໍມີຄວາມມ່ວນຊື່ນ, ເພາະວ່າໃນຫົ ວ່ນນີ້, ພວກເດັກນ້ອຍຜູ້ໃດຜູ້ຫນຶ່ງທີ່ອ່ອນເພຍກ່ວາຫມູ່, ບາດຮອດຄາບເຂົ້າທ່ຽງມາ ກໍ ຈະໄດ້ກິນຊຸ້ນສົ້ມສຸກຫລາບອັນແຊບນິ ຈາກຕາມບ້ານນີ້.

ແນບ ແມ່ນຫຍັງ?

ບັນດາກຳມະກອນ ໄດ້ພາກັນເຂົ້າພົບ ເລນິນ, ເພື່ອລາຍງານສະພາບການຊີວິດການເປັນຢູ່ຂອງພວກເຂົາ ແລະການເຮັດວຽກນັ້ນວ່າເປັນຄືແນວໃດ. ສ່ວນຜູ້ບັນຊາການກອງທັບແດງ ກໍໄດ້ເຂົ້າມາພົບ ເພື່ອປຶກສາຫາລືກ່ຽວກັບສະພາບການທາງສົງຄາມ. ບັນດານັກປາດທັ້ງຫລາຍ ກໍໄດ້ເຂົ້າມາພົບເຊັ່ນດຽວກັນ. ເລນິນ ໄດ້ຖາມຄວາມຄິດຄວາມເຫັນນຳ ຫມົດທຸກຄົນ, ພ້ອມທັ້ງເອົາໃຈໃສ່ຮັບຟັງແຕ່ລະຄົນ.

ຈາກນັ້ນ ສະພາລັດຖະມົນຕີປະຊາຊົນ ກໍໄດ້ຮຽກປະຊຸມປຶກສາຫາລື ກ່ຽວກັບບັນຫາ ຊຶ່ງ

ແມ່ນປະຊາຊົນເປັນຜູ້ຍົກຂຶ້ນມານັ້ນ: ລັດຖະບານໄດ້ລາຍງານກ່ຽວກັບບັນດາຂໍ້ຕໍ່ລັດທີ່ຈຳເປັນສຳລັບປະເທດໂຊວຽດ.

ພວກຊາວນາ ກໍໄດ້ມາພົບເພິ່ນເຊັ່ນກັນ. ໃນໄລຍະຕົ້ນຂອງການສ້າງຕັ້ງອຳນາດໂຊວຽດໃຫມ່ໆ, ຊາວກະສິກອນ ໄດ້ຍົກບັນຫາອັນເປັນພື້ນຖານແລະຕົ້ນຕໍນັ້ນຄື ດິນນາຂອງພວກເຈົ້າທີ່ດິນ ແລະ ພວກ ກູ້ລັກວ່າ, ຈະແບ່ງປັນດິນນາດັ່ງກ່າວນັ້ນແບບໃດ ລະຫວ່າງຊາວນາທຸກກັບຊາວນາກາງ, ຈະຫມູນໃຊ້ແບບວິທີໃດ ເພື່ອໃຫ້ມັນມີຜົນ.

ເພື່ອເປັນແນວນັ້ນ ແລ້ວສົງຄາມກາງເມືອງກໍເລີ່ມລະເບີດຂຶ້ນ.

ໃນໄລຍະສົງຄາມກາງເມືອງນັ້ນ ລັດຖະບານໂຊວຽດ ຍັງໄດ້ກຳນົດໃຊ້ກົດລະບຽບເກັບເກັ່ນເຄື່ອງບໍລິໂພກນຳປະຊາຊົນຢູ່. ພວກເຂົາໄດ້ພາກັນເກັບກ່ຽວເຂົ້າບາດຽວກັນໂລດຄື: ເຂົ້າໄວ້ເຮັດແນວ, ໄວ້ກິນ, ເຖິງວ່າຈະບໍ່ໄດ້ຫລາຍປານໃດ ແຕ່ກໍພໍກິນ. ສ່ວນທີ່ຍັງເຫລືອນັ້ນ ພວກເຂົາໄດ້ເອົາມາຕາກໃຫ້ແຫ້ງແລ້ວເອົາມາຍີ ເພື່ອມອບໃຫ້ລັດຫມົດ. ຄັນບໍ່ເອົາໄປມອບໃຫ້ລັດແລ້ວ ຊິເອົາຫຍັງມາລ້ຽງກອງທັບແດງ? ເອົາຫຍັງມາລ້ຽງກຳມະກອນ?

ໃນສະໄຫມນັ້ນ, ສຳລັບຊາວກະສິກອນແລ້ວ ແມ່ນຕົກຢູ່ໃນສະພາບຫນັກຫນ່ວງທີ່ສຸດ. ແຕ່ຈະເຮັດຈັ່ງໃດໄດ້? ເພາະທຸກຄົນຕ່າງກໍພົບແຕ່ຄວາມຫຍຸ້ງຍາກກັນທັງນັ້ນ.

ແຕ່ໃນເວລານີ້ ສົງຄາມ ໄດ້ສິ້ນສຸດລົງແລ້ວ. ບັນດາຜູ້ຕາງຫນ້າຂອງຊາວນາ ຕາມແຕ່ລະຫມູ່ບ້ານຕ່າງໆໄດ້ມາພົບ ເລນິນ. ພວກເຂົາພາກັນມາຢ່າງຫລວງຫລາຍ. ບັນດາຄົນເຫລົ່ານັ້ນລ້ວນແຕ່ ມີຫນວດຍາວ ແລະພວກເຂົາກໍບໍ່ໄດ້ແມ່ນບຸກຄົນທີ່ອັບປັນຍາຈັກຄື, ພວກເຂົາລ້ວນແຕ່ມີຄວາມຊຳນິຊຳນານໃນການຫາຢູ່ຫາກິນທັງນັ້ນ. ເລນິນ ສຸດທີ່ມີຄວາມດີໃຈ, ເພິ່ນໄດ້ຖາມຄວາມເຫັນຂອງພວກເຂົາ ກ່ຽວກັບອະນາຄົດ.

ບັນດາຊາວກະສິກອນເວົ້າວ່າ: ຄວນຍົກເລີກລະບອບເກັບເກັ່ນເຄື່ອງບໍລິໂພກແລ້ວປ່ຽນມາເປັນລະບອບເກັບພາສີກະສິກຳ.

ອັນນັ້ນມັນຫມາຍຄວາມວ່າແນວໃດ? ຫມາຍຄວາມວ່າບໍ່ແມ່ນຈະມອບທັງແນວເຂົ້າປູກ ແລະຜົນເກັບກ່ຽວໃຫ້ລັດຈົນຫມົດ. ຜູ້ໃດສາມາດເກັບກ່ຽວໄດ້ຫລາຍກໍຕ້ອງປະໄວ້ໃຫ້ເຂົາ

ແດ່ລະບໍ. ເພາະອັນນັ້ນ ມັນແມ່ນສິດແລະຜົນປະໂຫຍດຂອງຊາວນາ. ເຂົາເຈົ້າກໍ່ຈົ່ງຈະຢາກປູກຝັງໃຫ້ໄດ້ຫລາຍກ່ວາເກົ່າ, ແລະຢາກຄາດໄກໃຫ້ໄດ້ດີກ່ວາ. ເພາະວ່າຖ້າເຫລືອຈາກຈຳນວນທີ່ຈະຕ້ອງມອບໃຫ້ລັດແລ້ວ, ພວກເຂົາກໍຈະໄດ້ເກັບໄວ້ໃນສາງຈັກເລັກນ້ອຍ. ສ່ວນຈຳນວນທີ່ເຫລືອນັ້ນ ກໍຈະເອົາໄປຂາຍ ເພື່ອຊື້ສິ່ງຂອງທີ່ຈຳເປັນໄດ້ຄື: ສະບູ, ນ້ຳມັນກາດ, ແຜ່ນແພ, ແລະບັນດາເຄື່ອງມືໃນການອອກແຮງງານຄືກ່ານ, ຫມາກສົບໄກ, ຈັກກ່ອງເຂົ້າ. ເພາະວ່າຫມາກສົບໄກແລະເຄື່ອງຈັກກ່ອງເຂົ້ານັ້ນບໍ່ໄດ້ເກີດຂຶ້ນຕາມທົ່ງໄຮ່ທົ່ງນາ... ຫມາຍຄວາມວ່ານັ້ນຢູ່ຕາມຕົວເມືອງພຸ້ນ, ໂຮງຈັກໂຮງງານ ກໍຕ້ອງໄດ້ຟື້ນຟູຄືນໃຫມ່, ທັງນີ້ກໍເພື່ອໃຫ້ມັນສອດຄ່ອງກັບຄວາມຮຽກຮ້ອງຕ້ອງການທັງຫມົດເຫລົ່ານັ້ນ.

ບໍ່ແມ່ນວ່າ ປະຊາຊົນຜູ້ອອກແຮງງານທັງຫມົດ ຈະສາມາດໃຊ້ແຕ່ສອງຝາມືເປົ່າຂອງຕົນ ເພື່ອເຮັດໃຫ້ຊີວິດມີຄວາມອຶ່ມຫນຳສຳລານແມ່ນຫລືບໍ່? ພວກເຮົາໄດ້ປົດເຂ່ຍພວກນາຍທຶນອອກໄປຢ່າງຮາບກ້ຽງ, ໄດ້ຕີເອົາຊະນະພວກທະຫານຂາວມາພໍແຮງແລ້ວ, ຈາກນັ້ນພວກເຮົາຈະຕ້ອງໄດ້ແກ້ໄຂກັບຊາຕາກຳຂອງພວກເຮົາເອງ.

ໂດຍຜ່ານການໂອ້ລົມກັບຊາວນາຄົນເນອນີ້ ແລະໂດຍຜ່ານການແລກປ່ຽນຄວາມຄິດຄວາມເຫັນສ່ວນຕົວແດ່, ດັ່ງນັ້ນ ເລນິນ ຈຶ່ງໄດ້ສ້າງແຜນການໃຫມ່ ຂຶ້ນມາ. ເລນິນ ເອີ້ນແຜນການດັ່ງກ່າວວ່ານະໂຍບາຍເສດຖະກິດໃຫມ່.

ເມື່ອເປັນເຊັ່ນນັ້ນແລ້ວ ນະໂຍບາຍເສດຖະກິດໃຫມ່ນີ້ ຈຶ່ງມີຊື່ເອີ້ນສັ້ນໆວ່າ ແນບ*.

ອຳນາດໂຊວຽດ ໄດ້ອະນຸຍາດໃຫ້ພວກເອກກະຊົນເປີດການຄ້າຂາຍຂຶ້ນ, ແຕ່ຫາກຢູ່ໃນຂອບເຂດຈຳກັດ ຊຶ່ງບໍ່ເປັນການກະທົບກະເທືອນຕໍ່ປະເທດຊາດໂຊວຽດ ແຕ່ຢ່າງໃດ. ຍ້ອນວ່າອຳນາດໄດ້ຕົກເປັນຂອງກຳມະກອນຊາວນາຢູ່ແລ້ວ ດັ່ງນັ້ນອຳນາດໂຊວຽດ ຈຶ່ງໄດ້ເອົາໃຈໃສ່ສິ່ງສຳຄັນຕົ້ນຕໍໃຫ້ປະກົດເປັນຈິງຄືປັບປຸງ, ເສີມຂະຫຍາຍພື້ນຖານການອຸດສາຫະກຳ, ເສັ້ນທາງລົດໄຟ, ການຂົນສົ່ງທາງທະເລແລະທາງແມ່ນ້ຳລຳເຊ - ສິ່ງທັງຫມົດເຫລົ່ານັ້ນລ້ວນແຕ່ແມ່ນຂອງປະຊາຊົນ ກໍຄືລັບສົມບັດຂອງລັດ.

---

*ແມ່ນຊື່ຫຍໍ້ຊຶ່ງມາຈາກໂນວາຍຢາ ເອໂກໂນມິເຈສະກາຍາ ໂປລິຕິກກາ ແມ່ນແຜນການເສດຖະກິດແບບໃຫມ່

ທຸກສິ່ງຢ່າງທີ່ ເລນິນ ໄດ້ພະຍາຍາມເຮັດໃຫ້ສຳເລັດ, ທັງຫມົດນັ້ນ ກໍລ້ວນແຕ່ເພື່ອ ຜົນປະໂຫຍດ ເພື່ອຄວາມຜາສຸກຂອງປະຊາຊົນທັງນັ້ນ. ມາບາດນີ້, ພາຍຫລັງສົງຄາມ, ເລນິນ ໄດ້ມີຄວາມຕ້ອງການຢາກເສີມຂະຫຍາຍເສດຖະກິດ, ການຄ້າ, ອຸດສາຫະກຳ, ກໍ່ ສ້າງລະບົບພະລັງງານໄຟຟ້າ, ຜະລິດເຄື່ອງຈັກ ແລະສ້າງມິດຕະພາບອັນແທ້ນແກ່ນລະ ຫວ່າງຊົນນະບົດກັບຕົວເມືອງ. ທັງຫມົດເຫລົ່ານັ້ນ ແມ່ນນອນຢູ່ໃນແຜນນັ້ນເອງ. ກອງ ປະຊຸມໃຫຍ່ຄັ້ງທີ x ຂອງພັກໄດ້ຕົກລົງຮັບຮອງເອົາແຜນການ ແນບ ຂອງ ເລນິນ.

ແຕ່ແລ້ວ ເລນິນ ບໍ່ອາດຈະກໍ່ສ້າງຊີວິດການເປັນຢູ່ຕາມແນວທາງໃຫມ່ນີ້ໄດ້ຢ່າງງ່າຍ ດາຍ. ໃນພາກຕົວຈິງແລ້ວ ຍັງມີອຸບປະສັກຢ່າງຫລວງຫລາຍ. ທີ່ກອງປະຊຸມໄດ້ເກີດມີການ ຖົກຖຽງ, ບຸກລຸກກັນຢ່າງເຊື່ອມຊາມ.

ຄວນຈະຢູ່ຮ່ວມກັນ, ຮັກແພງແລະຖືກຕ້ອງປອງດອງກັນ ເພື່ອກໍ່ສ້າງຊີວິດການເປັນ ຢູ່ຢ່າງສັນຕິ. ເລນິນ ມີຄວາມໝັ້ນຄືແນວນັ້ນ, ເພິ່ນປາກະຫນາຢາກໃຫ້ພາຍໃນພັກຊົ່ງ ຍາມໃດກໍມີຄວາມຖືກຕ້ອງເປັນເອກກະພາບກັນ.

ແຕ່ພັດຍັງມີບຸກຄົນທີ່ຂັດຂວາງຊີວິດການເປັນຢູ່ໃຫມ່ນີ້ອີກຢູ່.

ເລນິນ ໄດ້ຕັ້ງຫນ້າຕໍ່ສູ້ຕ້ານຍັນກັບພວກເຫລົ່ານີ້ຢ່າງເອົາຈິງເອົາຈັງ.

ບັນດານັກຄອມມຸຍນິດຈຳນວນຫລວງຫລາຍ ໃຫ້ຄວາມສະຫນັບສະຫນູນ ແລະຢືນຢູ່ ທາງຝ່າຍ ເລນິນ. ພວກເຂົາເຈົ້າໄດ້ຮັບໄຊຊະນະ, ໄດ້ນຳພາພັກພ້ອມດ້ວຍປະຊາຊົນໂຊ ວຽດກາວຂຶ້ນສູ່ລັດທິ ຄອມມຸຍນິດ.

ເມື່ອສົງເພງຈາກນ້ຳຕ້ານ

- ພວກເຮົາພາກັນໄປເທາະ! - ນາເດສະດາ ກົງສະຕັງຕິນົບນາ ເວົ້າຂຶ້ນ.

- ແນ່ນອນຕ້ອງໄປລະເບາະ, ອ້າຍ ໂອໂລເດຍ! - ນາຣິອາ ອີລົນິດນາ ເວົ້າເສີມຂຶ້ນ, ເພາະຄິດຢ້ານ ເລນິນ ຈະບໍ່ໄປນຳ.

ແຕ່ ອະລາດີເມຍ ອີລີຊ ກັບບໍ່ໄດ້ຄັດຄ້ານແຕ່ປະການໃດ, ເຖິງວ່າຂະນະນັ້ນ ເພິ່ນຈະ ກຳລັງນັ່ງຂຽນບົດຫນັງສືພິມຢູ່ໃນຫ້ອງເຮັດວຽກທີ່ງຽບສະຫງົບຢູ່ກໍຕາມ, ແລະນອກນັ້ນເພິ່ນ ກໍຍັງຕ້ອງໄດ້ຂຽນຈົດຫມາຍທີ່ສຳຄັນນຳອີກ.

ແຕ່ທ້ອງຟ້າໃນຍາມເຊົ້າທີ່ມີອາກາດປອດໂປ່ງຂອງເດືອນຕຸລານີ້ ຊ່າງດຶງດູດຈິດໃຈໃຫ້ ອອກໄປທ່ຽວທາງນອກເອົາແທ້ໆ. ໃນມື້ທີ່ມີອາກາດສົດໃສແບບນີ້ ໄປທ່ຽວຫລິ້ນທາງນອກ ເມືອງຄົງຈະມ່ວນຫລາຍທີ່ສຸດ, ດັ່ງນັ້ນ, ຈົ່ງປະຂຽກມື້ໄວ້ຊ້ອຄາວສະກ່ອນ! ທ້ອງແຜ່ນປະຕິ ທິນກໍມີຕົວເລກສີແດງ ສະແດງວ່າມື້ແມ່ນວັນອາທິດ. ພວກເຂົາເຈົ້າໄດ້ພາກັນຂຶ້ນຂີ່ລົດ ໃຫຍ່ສີດຳຍີ່ຫໍ້ "ໂຣນສະຣອຍ" ຂອງອັງກິດ. ໂດຍມີ ກິນ ເປັນຜູ້ຂັບລົດດັ່ງກ່າວໄດ້ພາ ອະລາດີເມຍ ອີລີຊ ພ້ອມດ້ວຍ ນາເດສະດາ ກັງສະຕັງຕິນິບນາ ແລະ ມາຣີອາອີລີນິດນາ ໄປຍັງບ້ານ ກອກກີ.

ພວກເຂົາເຈົ້າໄດ້ພາກັນເດີນທາງອອກໄປຈາກ ນິດສະກູ. ອະລາດີເມຍ ອີລີຊ ໄດ້ສືບ ເອົາບັນຍາກາດອັນປອດໂປ່ງຂອງຍາມເຊົ້າເຂົ້າຈິບເຕັມຊອງອີກ. ພາບທຳມະຊາດໃນຍາມ ເຊົ້າ ຊຶ່ງຂອບຟ້າເປັນສີເຫລືອງແດງ ເບິ່ງແລ້ວເປັນຕາຫນ້າສະອອນທີ່ສຸດ! ດວງຕາເວັນໄດ້ ຜຸດພົ້ນຂຶ້ນເທິງຂອບຟ້າຢ່າງຊ້າໆພ້ອມທັງເປັ່ງແສງສະຫວ່າງແຈ້ງໄປທົ່ວທ້ອງຟ້າສີຄາມ.ຕາມ ເສັ້ນທາງ ໄດ້ເລີ່ມມີຫີມະອຸດຕັນເອົາໄວ້. ຕາມເສັ້ນທາງທີ່ມີທັງໂນນແລະເປັນຂຸມໄດ້ເຮັດໃຫ້ ຕົນລົດຕົກຕຳດັງເປັນສຽງ, ແລະສະເທືອນໄປທົ່ວລົດ. ກິນ ໄດ້ຂັບລົດໄປຢ່າງໃຈເຢັນ, ແລະ ຮອບຄອບ. ແຕ່ ອະລາດີເມຍ ອີລີຊ ຜັດຕ້ອງການໃຫ້ໄປໄວໆ. ເພິ່ນມັກໃຫ້ລົມພັດທັ່ງໃສ່ ໃບຫນ້າແລະແກ້ມເຮາໆ!

-ກິນ, ສະຫາຍຂັບລົດເນອໃດ ປານກັບວ່າຊິແວ່ກາມຂ່າວຄາວເປັດແຕ່ລະໂຕຈັ່ງຊັ້ນ ແຫລະ, -ອະລາດີເມຍ ອີລີຊ ເວົ້າຍອກໄຍຂຶ້ນ.

ຄຳເວົ້າຂອງ ອະລາດີເມຍ ອີລີຊ ນັ້ນ ໄດ້ເຮັດໃຫ້ ກິນ ມີຄວາມມ່ວນຊື່ນ, ແຕ່ວ່າເຂົາ ກໍບໍ່ໄດ້ເພີ່ມຄວາມໄວຕື່ມແຕ່ຢ່າງໃດ. "ບໍ່ຈຳເປັນດອກ", ເຂົາຄິດຢູ່ໃນໃຈ, "ເຫນງ່ວ່າສູ ໄປກາມຂ່າວຄາວພວກເປັດແຕ່ລະໂຕຢູ່ຕາມບ້ານຕາມຊ່ອງເນອນີ້ ຍັງຊິດີກ່ວາໄປເຮັດໃຫ້

ວະລາດີເມຍ ອີລີຊ ເປັນລີ້ນຢູ່ຕາມທາງທີ່ເປັນຂຸມເປັນໂນນຄືເນວນ້ອກ".

ກອກກີ ແມ່ນ ນິຄົມເກົ່າແກ່ຂອງເຈົ້າທົ່ດົນແຫ່ງຫນຶ່ງ, ທົ່ມີສວນງາມ, ຫຸ້ມລ້ອມ ດ້ວຍເຮືອນວົນລາ ທົ່ມີເສົາຂາວໆເປັນແຖວແລະມີເຮືອນຮັບແຂກອີກສອງຫລັງ. ຕາມເສັ້ນ ທາງມີຮົ່ມຕົ້ນໂພໄຮທົ່ປົ່ງໃບດົກຫນາ ແລະຕົ້ນປ່ານໃຫຍ່, ມີເດົ່ນຫຍ້າທົ່ປອດໂປ່ງດີ ຢູ່ແຫ່ງ ນັ້ນມີພຸ່ມນ້ອຍໆແປກໆຫລາຍພຸ່ມ - ແລະຢືນຢູ່ບ່ອນນີ້ຈະສາມາດແນມເຫັນໄດ້ໄກ, ຈົນຮອດ ຄຸ້ມໂປໂດນສະເກ ພຸ້ນ.

ວະລາດີເມຍ ອີລີຊ ມັກແນມໄປ ຍັງພຸ້ມພາບເບ້ືອງບ່ອນທົ່ມີທ້ອງຟ້າສີຄາມໄກໆພຸ້ນ, ເພິ່ນໄດ້ຄຶດວ່າດພາບວ່າຢູ່ທາງຟາກປ່າເບ້ືອງນັ້ນມີຕົວເມ້ືອງແລະມີແມ່ນ້ຳ ປາເຄ້ືຣາ ທົ່ໄຫລ ແຮງ. ເພິ່ນເຄ້ືຍໄດ້ໄປ ທົ່ ໂປໂດນສະເກ ຕັ້ງແຕ່ຄາວຍັງນ້ອຍໆພຸ້ນ, ແລະໃນຕອນທົ່ກັບ ມາຈາກບ່ອນກ້ືກເນລະເທດ. ຄາວນັ້ນ ແມ່ນຢູ່ໃນລະຫວ່າງປີ ໑໙໐໐, ຕອນແມ່ ນາຣ໊ອາ ອາເລັກຊັງໂດຣບວະນາ ພ້ອມດ້ວຍລູກຊາຍມີ້ອາ ທົ່ກ້ືກຂັບໄລ່ອອກຈາກ ນິດສະກູ ແລະ ໄດ້ມາອາໄສຢູ່ບ່ອນນັ້ນ. ບັນດາເອ້ືອຍນ້ອງຂອງ ວະລາດີເມຍ ອີລີຊ ກໍໄດ້ພາກັນມາຢູ່ແຫ່ງ ນັ້ນຄືກັນ. ຕອນນັ້ນ ວະລາດີເມຍ ອີລີຊ ໄປຢາມແມ່ ແລະພວກເອ້ືອຍນ້ອງຢູ່ທົ່ນັ້ນ ກ່ອນ ຫນ້ົາທົ່ຈະເດີນທາງໄປ ສະວິດ. ຊ່ົ ໃນເວລາ ວະລາດີເມຍ ອີລີຊ ກໍາລັງກະກຽມເພ້ືອພິມ ຫນັງສ້ືພິມ "ຫນັດໄຟ" ຢູ່ຕ່າງປະເທດ, ຊ່ົ ແມ່ນຫນັງສ້ືພິມປະຕ້ືວັດຂອງກໍາມະກອນນັ້ນ ເອງ.

ລິດໄດ້ແລ່ນເຂ້ົາໄປໃນສວນແລະຄ່ອຍໆເຄ້ືອນເຂ້ົາໄປທາງເຮືອນຕ້ອນຮັບ ທົ່ຢູ່ກ້ົາເບ້ືອງ ເຫນ້ືອ. ວະລາດີເມຍ ອີລີຊ ບ່ໍມັກເຮືອນຫລັງໃຫຍ່ພ້ໍປານໃດ, ເພິ່ນມັກເຮືອນຕ້ອນຮັບສ້ໍາ ຮອງຢູ່ທາງເບ້ືອງເຫນ້ືອພຸ້ນຫລາຍກ່ວາ, ຢູ່ບ່ອນນັ້ນ ມີຫ້ອງນ້ອຍໆ ພ້ົນເຮືອນ ກ໋ໍບ່ໍສູງປານ ໃດ, ແລະປ່ອງຢ້ຽມກ໋ໍບ່ໍໃຫຍ່. ສະໄຫມພວກເຈ້ົາທົ່ດົນຍັງຢູ່ນັ້ນ, ເຮືອນຫລັງນ້ົ້ຄ້ງຈະໄຊ້ ເປັນບ່ອນອາໃສຢູ່ຂອງພວກຮັບໄຊ້. ພາຍຫລັງການປະຕ້ືວັດເດ້ືອນຕຸລາ, ພວກເຈ້ົາຂອ່ງ ເຮືອນແຫ່ງນ້ົ ໄດ້ພາກັນໂຕນຫນ້ໄປຢູ່ຕ່າງປະເທດ ຈາກນັ້ນ ລັດກ໋ະບານໂຊວ໋ດຈ້ົ່ງໄດ້ໄຊ້ ເປັນສະຖານທົ່ ພັກຜ່ອນປະຈ໋ໍາຫມູ່ບ້ານ ກອກກີ. ພາຍຫລັງ ທົ່ ເລນິນ ກ້ືກບາດເຈ້ັບ,

ເຂົາເຈົ້າກໍໄດ້ຕົກລົງເຮັດເປັນບ່ອນພັກຜ່ອນຂອງປະທານສະພາລັດຖະມົນຕີ. ບັນດາແພດ ຫມໍທັ້ງຫລາຍ ໄດ້ອອກຄໍາສັ່ງຢ່າງເຂັ້ມງວດວ່າ, ເພິ່ນຕ້ອງປິ່ນປົວພະຍາດຂອງເພິ່ນດ້ວຍ ບັນຍາກາດອັນປອດປົ່ງສິດໄສ!

ແມ່ນແລ້ວ ພໍແຕ່ ອະລາດີເມຍ ອີລີຊ ໄດ້ຫລຸດພົ້ນອອກຈາກບັນຍາກາດທໍ່ອຶດອັດ ຂອງກອງປະຊຸມແລະສົງບັນນອງຂອງຕົວເມືອງ ນິດສະກູ ມາຢູ່ສວນ ກອກກີ ນີ້, ໃນ ຂະນະດຽວກັນນັ້ນ ເພນກເຊາເຈບຫວເກອບເປັນປົກກະຕ.

-ຫັນໃຈເອົາອາກາດຂອງຊົນນະບົດເຂົ້າໄປບໍ່ພໍເທົ່າໃດ ແກ້ມກໍແດງຂຶ້ນກັບບ່ອນ, -ນາ ເດສະດາ ກົງສະຕັງຕິນິບນາ ສັງເກດເບິ່ງເພິ່ນດ້ວຍຄວາມດີໃຈ.

-ບັນດາເອື້ອຍນ້ອງທັ້ງຫລາຍ, ມື້ນີ້ ພວກເຮົາເດີນທາງໄກກັນ ເທາະ, -ອະລາດີເດຍອີລີຊ ກ່າວເຊີນຊວນ.

ອາກາດເຢືອກເຢັນທີ່ສຸດ, ເວລາຍ່າງໄປຕາມຫນ້າດິນ ໄດ້ຍິນແຕ່ ສຽງບາດຕີນທີ່ຍຽບໃບໄມ້ຫລົ່ນດັງຄວບຄາບໆ. ໃບໄມ້ຕ່າງໄດ້ຊຸຫລົ່ນຈົນ ຫມົດແລ້ວ, ຢູ່ທົ່ວສວນເປົ່າແປນສະຫວາດຕາ, ມີແຕ່ຕົ້ນດອກຈິກ

ເທົ່ານັ້ນ ທີ່ກຳລັງນອນເຫງົາຫ່ວມຄຽງຄູ່ກັບກອງໃບໄມ້ທີ່ຂຸຫລົ່ນເຫລົ່ານັ້ນ, ຕົ້ນໄມ້ໃນຍາມ ລະດູໃບໄມ້ຫລົ່ນລາງຕົ້ນມີງ່າເອນກ່ອງ ຍ້ອນຫນັກຫນາກທີ່ເປັນຫນ່ວຍສີແດງໆຂອງມັນ.

ນາເດສະດາ ກົງສະຕັງຕິນິບນາ ສຸດທີ່ມີຄວາມພໍໃຈແລະນັບຖື ໃນຄວາມຮູ້ສຶກແລະ ຄວາມເມົາມົວຢູ່ກັບທຳມະຊາດຂອງເພິ່ນ. ແຕ່ຄາວພັດກຶ່ນ, ຍາມໃດມີເວລາຫວ່າງ, ພວກ ເພິ່ນມັກພາກັນຂຶ້ນໄປຫລົ້ນເທິງພູຫລືຂຶ້ນກັບເລາະຫລົ້ນ, ເຂົ້າໄປໃນປ່າເລິກໆ, ບ່ອນທີ່ ມໜາງຄອຍ, ຫລືບ່ອນທີ່ບໍ່ມີຄົນທ່ອນນັ ຈະລາດເມຍ ອີລຊ ມັກ.

-ນາເດຍ ເອີຍ, ພວກເຮົາພາກັນໄປເບິ່ງໂງ່ນຫີນທີ່ຕັ້ງຢູ່ໃນຫນອງພຸ້ນໄປ...

ບັນດາຫນອງນ້ຳແລະພູຢູ່ປະເທດ ສະວິດ ນັ້ນ ກໍນັບວ່າໃຫຍ່ໂຕແລະສວຍງາມທີ່ສຸດ ແລ້ວ. ແຕ່ວ່າພຸມພາບທຳມະຊາດທີ່ງົບສະຫງັດຢູ່ທາງລັດເຊຍພົ້ ຍິ່ງເຮັດໃຫ້ເພິ່ນມີຄວາມ ຫລີງໄຫລ, ຮັກແພງກ່ວາ.

-ເບິ່ງພຸ້ນແມ, ຫນອງນ້ອຍ! -ຈະລາດິເມຍ ອີລຊ ທ້ວງຂຶ້ນ.

ນາຣິອາ ອີລິດນາ ເວົ້າດ້ວຍຄວາມນ່ອນຊຶ່ນວ່າ:

-ຄັນຊັ້ນ, ພວກເຮົາກໍໄດ້ພາກັນມາຮອດບ່ອນທີ່ຍອດທີ່ສຸດແລ້ວໃດເນາະ!

ນ້ຳໃນຫນອງນ້ອຍນີ້ຫາກໍເລີ່ມກ້າມເປັນແຜ່ນບາງໆສີຂຽວຈົດ. ເບິ່ງແລ້ວຄ້າຍຄືກັບວ່າ ມັນຖືກປົກປິດໄວ້ດ້ວຍແຜ່ນແກ້ວ, ຊຶ່ງສະທ້ອນໃຫ້ເຫັນເງົາຕົ້ນໄມ້ ທີ່ຕັ້ງເຈີ່ນເທິ່ນແລະພຸ່ມ ໄມ້ທີ່ປົ່ງຮົກເຮື້ອຢູ່ເທິງຫນ້າດິນພົ້ຈົນຫມົດ. ເມື່ອສອດສ່ອງຜ່ານແຜ່ນຫີນລົງໄປກໍຈະສາ ມາດແນມເຫັນຮອດເທົ້າຢູ່ໃນພື້ນນ້ຳພຸ້ນ.

ທັນໃດນັ້ນ ຢູ່ເທິງຫນ້າຫນອງກໍເກີດມີສຽງດັງສະທ້ອນຂຶ້ນ, ຄ້າຍກັບມີໃຜຜູ້ຫນຶ່ງ ເອົາມືເຕາະເຂົ້າໃສ່ລາຍກົດ ຫລືເຄື່ອງດົນຕີແປກໆອັນໃດອັນຫນຶ່ງ, ແລະສຽງດັ່ງກ່າວ, ມັນ ໄດ້ດັງຂຶ້ນດ້ວຍຄວາມນຸ້ມນວນ, ເປັນສຽງຍາວໆ.

ຫີນນ້ອຍໆກ້ອນຫນຶ່ງ ຊຶ່ງມີໃຜຜູ້ຫນຶ່ງ ເກລ່ຈົ່ອດມາແຕ່ເທິງບົກ, ໄດ້ຕົກລົງເທິງ ຫນ້າແຜ່ນນ້ຳກ້າມ ພາໃຫ້ເກີດມີສຽງດັງກ້ອງຂຶ້ນ.

-ຈັ່ງແມ່ນປະຫລາດແທ້ໆ! -ຈະລາດິເມຍ ອີລຊ ທ້ວງຂຶ້ນຄ່ອຍໆ.

ພໍດີໃນເວລາດຽວກັນ, ພວກເພິ່ນກໍໄດ້ແນມເຫັນພວກເດັກນ້ອຍຊາຍແລະຍິງອາຍຸປະມານສິບປີ ຢືນຢູ່ໃກ້ໆກັບພຸ່ມໄມ້ບ່ອນຫນຶ່ງ. ແມ່ນເດັກນ້ອຍຜູ້ຊາຍນັ້ນແລ້ວທີ່ໄດ້ແກວ່ງກ້ອນຫີນລົງໃສ່ເທິງແຜ່ນຫີນນັ້ນ.

-ຄືກັບສຽງເພງນີ້ລະ! ທ່ອຫນອງກໍໄດ້ມີສຽງດັງກ້ອງຂຶ້ນເປັນສຽງຍາວໆ, -ນາງນ້ອຍເວົ້າຂຶ້ນ.

-ຕ້ອງສວຍໂອກາດເອົາມີທ່ນ້ຳໃນຫນອງເລີ່ມກ້າມນີ້ໂລດແລ້ວ, -ທ້າວນ້ອຍເວົ້າຕອບ. -ຄັນບໍ່ດັ່ງນັ້ນ ມັນຊິແຂງໂພດ, ຫລືບໍ່ກໍຖືກຫີນຕົກມາປົກຄຸມຫນາຂຶ້ນກ່ວາເກົ່າ ຕອນນັ້ນແລ້ວຫນອງກໍຈະບໍ່ມີສຽງເພງອີກ.

-ແກ່ວຕົ້ມອີກແມ, -ນາງນ້ອຍເວົ້າບ່ວວອນຂຶ້ນ. ຈາກນັ້ນ ຫີນນ້ອຍອີກກ້ອນຫນຶ່ງກໍເຈືອດໄປຕາມຫນ້າແຜ່ນນ້ຳກ້າມອີກ ແລະພ້ອມກັນນັ້ນກໍມີສຽງກ້ອງດັງເປັນບາດຍາວໆ ຈາກແຄມເບື້ອງນີ້ໄປຫາແຄມເບື້ອງນັ້ນ.

-ໂອຍ-ທັນໃດນັ້ນ ນາງນ້ອຍຮ້ອງຂຶ້ນ.

ພວກເດັກນ້ອຍແນມເຫັນພວກຜູ້ໃຫຍ່. ທ້າວນ້ອຍຟ້າວປົດຫມວກອອກຄຳນັບ.

-ສະບາຍດີພວກລຸງປ້າ.

-ສະບາຍດີພວກຫລານ. -ອະລາດີເມຍ ອີລີຊ ຄຳນັບຕອບ ພ້ອມທັງຍ່າງເຂົ້າໄປໃກ້ໆ.

-ພວກຫລານມາແຕ່ໃສ?

-ພວກຫລານແມ່ນຄົນທ້ອງຖິ່ນນີ້. ຢູ່ໃກ້ໆກັບບ່ອນນີ້, ຢູ່ກັບບ້ານ ກອກກີ ນີ້ແລ້ວ. -ທ້າວນ້ອຍຕອບພ້ອມທັງຊີ້ມືໄປທາງບ້ານ ກອກກີ, ຊຶ່ງຢືນຢູ່ທີ່ຫນອງນ້ຳພຸ ກໍສາມາດແນມເຫັນຄືກັນ. -ສ່ວນພວກລຸງປ້າຄືຊິມາແຕ່ ນິດສະກູ ແມ່ນບໍ?

-ເດົາຖືກແລ້ວລະ, -ອະລາດີເມຍ ອີລີຊ ຍິ້ມຫົວຂຶ້ນ.

-ແຜ່ນຫີນຂອງພວກຫລານຮ້ອງເພງໄດ້ມ່ວນຫລາຍ.

-ກະແມ່ນລະເບາະ! ຕ້ອງສວຍໂອກາດໃຫ້ມັນທັນກັບຍາມນີ້ໃດ, ແລະບໍ່ແມ່ນວ່າໃຜກໍຈະສາມາດເຮັດໄດ້, -ທ້າວນ້ອຍເວົ້າຂຶ້ນໃນລັກສະນະທີ່ອວດອ້າງ.

ເດັກນ້ອຍທັ້ງສອງ ເສືອດຕາແໜມເບິ່ງກັນ, ແລ້ວທ້າວນ້ອຍກໍປົດຫມວກຄໍານັບອີກ: "ລາກ່ອນ", -ຈາກນັ້ນ ບໍ່ຮູ້ວ່າ ພວກເຂົາພາກັນແລ່ນໄປທາງໃດ, ບາງທີພວກເຂົາອາດຈະກັບເມືອບ້ານ, ຫລືບໍ່ກໍອາດຈະໄປຊອກລ້ຽງຊອມເບິ່ງສົ່ມະຫັດສະຈັນ, ແລະສົ່ງລົກລັບຢູ່ຕາມປ່າໃນຍາມລະດູໃບໄມ້ຫລົ່ນນີ້ກໍເປັນໄດ້.

ສ່ວນ ອະລາດິເມຍ ອີລີຊ ພ້ອມກັບ ນາເດສະດາ ກົງສະດັງຕິນິບນາ ແລະ ມາຣິອາ ອີລີນິດນາ ນັ້ນໄດ້ພາກັນຍ່າງເລິກເຂົ້າໄປໃນປ່າຕື່ມອີກ, ຍ້ອນວ່າຫນອງນ້ອຍບ່ອນນີ້ບໍ່ໄກກັບເຮືອນພັກພໍປານໃດ, ອີກຢ່າງຫນຶ່ງ ມື້ນີ້ ອະລາດິເມຍ ອີລີຊ ເອງ ໄດ້ຊວນທັ້ງສອງຄົນນີ້ໄປຫລົ້ນບ່ອນໄກໆ.

ໂຄມໄຟທະເລ

ລຸກຂຶ້ນພ້ອງກັນທຸກຈົນຂອຍຂາເອຍ,
ລຸກຂຶ້ນຜູ້ກົກດິ່ນທ້ວງຫລາຍ.
ເພື່ອນເອີຍ ລຸກຂຶ້ນຕໍ່ສູ້, ຣົບລຸກຂຶ້ນ
ເຖິງເວລາແລ້ວ, ໂອກາດມາຮອດແລ້ວ.

ບົດເພງສາກົນກໍາມາຊິບ ໄດ້ດັງກ້ອງກັງວານຂຶ້ນ, ແລ້ວສະທ້ອນຕາມບານປະຕູປ່ອງຢ້ຽມຕ່າງໆ ຂອງຫໍປະຊຸມໃຫຍ່ທີ່ວ້າງ ແກຣມແລງ.

ເຮົາເອງຕໍ່ສູ້ຈົ່ງຍາດໄດ້ໄຊຊະນະ
ໄດ້ອິດສະຫລະ ເພື່ອປະຊາຊົນ.

ຜູ້ຄົນເປັນຈໍານວນຫລາຍຮ້ອຍພາກັນຮ້ອງເພງສາກົນກໍາມາຊິບ ຢູ່ໃນຫ້ອງປະຊຸມໃຫຍ່ ແກຣມແລງ, ດ້ວຍພາສາຕ່າງໆເປັນຈໍານວນຫ້າສິບພາສາ: ໃນນັ້ນມີທັ້ງພາສາຝະລັ່ງ, ເຢຍ

ລະມັນ, ອິຕາລີ, ແຟ່ງລັ່ງ, ຕວກກີ, ແອດສະໂຕ່ນີ, ແລດໂຕນີແລະ ອື່ນໆ...ແນ່ນອນແລ້ວ, ໃນນັ້ນກໍຕ້ອງມີທັ່ງພາສາລັດເຊຍນຳຄືກັນ.

ເລນິນ ກໍຮ້ອງຄືກັນ ບິດເພງສາກົນກຳມາຊີບ ຍາມໃດກໍໄດ້ເຮັດ ໃຫ້ເພິ່ນມີຄວາມຕື້ນຕັນໃຈ.

ແຕ່ມາຮອດດຽວນີ້, ໃນຕອນທ່ີ ບັນດານັກຄອມມຸຍນິດທ່ີມາຈາກ ຕ່າງປະເທດ ເປັນຈຳນວນຫລາຍຮ້ອຍຄົນ, ເພ່ືອເຂ້ົາຮ່ວມກອງປະຊຸມ ໃຫຍ່ຄ້ັງທ່ີ IV ຂອງພັກ ຄອມມຸຍນິດສາກົນຢູ່ໃນປະເທດເຮົາ, ຢູ່ໃນ ຜືນແຜ່ນດິນໂຊວຽດ, ໄດ້ພາກັນຮ້ອງເພງຢ່າງເສລີຢູ່ໃນວັງກະສັດລັດ ເຊຍຍ່ິງເຮັດໃຫ້ຈິດວິນຍານຂອງເພ່ິນ ເກີນວ່າມີຄວາມສຸກ.

ສ້ັ ສ້ັ ສ້ັ ເປັນຄ້ັງທ້າຍສຸດ
ສາມັກຄີພ້ອມກັນສ້າງ
ສາກົນກຳມາຊີບ
ຈະເປັນສັງຄົມ ແສນສຸກສະບາຍ.

ມີນັກປະຕິວັດຕ່າງປະເທດຫລາຍໆຄົນ ທ່ີ ຈະລາດ່ເມ່ຍ ອີລ ຊ ເຄ່ຍຮູ້ຈັກແຕ່ຕອນຢູ່ຕ່າງປະເທດພຸ້ນ ເປັນຕົ້ນ, ເພ່ິນຮູ້ຈັກ ຊ້ງໂຊເອ, ສະມາຊິກພັກຄອມມຸຍນິດຝະລ່ັ ຜູ້ທ່ີ່ມ່ຄວາມເກ່ັງກ້າສ່ າມາດ ທ້ັງເປັນ ຜູ້້ສ້າງຕ້ັ ງຫນ້ັ ງ ສ ພ່ິມ "ອຸຍມານ ິເຕ" ຊ ່ ເປັນຫນ້ັ ງ ສ ພ່ິມປະຕິວັດທ່ີ ່ ມ ຊ ່ ສ ງທ ່ ີ ່ ສ ດຢ ່ ູ ຝ ະລ ່ ັ . ແລະບັນດານັກ ນາກ ິ ດ ເຢຍລະມັນ ອ ິ ກ, ຄ ື ກ ະ ລ າ ຮ າ ເ ຊ ດ ກ ິ ນ, ໂ ຣ ຊ າ ລ ຸ ກ ຊ ັ ມ ບ ອ ກ, ກ າ ກ ລ ິ ບ ກ ະ ເ ນ ັ ກ ແ ລ ະ ກ ຳ ມ ະ ກ ອ ນ ຊ າ ວ ແ ຟ ່ ງ ລ ັ ່ ງ ອ ິ ກ ເ ປ ັ ນ ຈ ຳ ນ ວ ນ ຫ ລ ວ ງ ຫ ລ າ ຍ ເ ປ ັ ນ ຕ ົ ້ ນ ແ ມ ່ ນ ໂ ຣ ວ ິ ໂ ອ ຫ ິ ວ ຫ ້ ນ ້ າ ຕ ຳ ຫ ລ ວ ດ ຢ ່ ູ ແ ຮ ນ ຊ ິ ກ ິ , ຜ ້ ູ ທ ່ ີ ່ ເ ຄ ີ ຍ ໄ ດ ້ ລ ຸ ກ ເ ຊ ່ ື ອ ງ ຈ ະ

ລາດີເມຍ ອີລີຊໃຫ້ຫລຸດພົ້ນຈາກເງື້ອມມືຂອງພວກນັກສົບກະສັດລັດ ເຊຍ, ເຟີຣິດປລັດແຕນ ຄົນສະວິດ, ຜູ້ທີ່ເຄີຍຊິດຊ່ວຍ ອະລາດີເມຍ ອີລີຊ ພ້ອມດ້ວຍບັນດາສະຫາຍ ເພື່ອກັບຄືນສູ່ປະເທດຊາດ, ໃນຕອນ ທີ່ການປະຕິວັດຢູ່ປະເທດລັດເຊຍເລີ່ມລະເບີດຂຶ້ນນັ້ນ! ແລະຍັງມີນັກປະ ຕິວັດຕ່າງປະເທດຫລາຍໆຄົນອີກ ຊຶ່ງເປັນທັງກຳມະກອນແລະບໍ່ແມ່ນ ກຳມະກອນ ທີ່ ອະລາດີເມຍ ອີລີຊ ເຄີຍພົບແລະເຄີຍເປັນເພື່ອນ.

ມາຮອດດຽວນີ້, ຕອນທີ່ການປະຕິວັດເດືອນ ຕຸລາ ຂອງກຳມະ ກອນ ຢູ່ໃນປະເທດລັດເຊຍໄດ້ຮັບໄຊຊະນະແລ້ວນັ້ນ, ບັນດານັກ ນາກ ສິດ ທັງຫລາຍ ຕ່າງກໍໄດ້ສ້າງຕັ້ງບັນດາພັກຄອມມຸຍນິດຢູ່ພາຍໃນປະ ເທດຂອງຕົນຂຶ້ນ.

-ພວກເຮົາຈະສ້າງສຳພັນຕະພາບຕໍ່ກັນໃຫ້ມັນເປັນພັນຕະພາບເອກ ກະພາບອັນຫນຶ່ງອັນດຽວ, -ອະລາດີເມຍ ອີລີຊ ກ່າວ.

ບັນດາພັກຄອມມຸຍນິດ ໄດ້ສ້າງສຳພັນຕະພາບອັນຫນຶ່ງຂຶ້ນທີ່ເອີ້ນ ວ່າ ຄອມມຸຍນິດສາກົນ.

ອະລາດີເມຍ ອີລີຊ ສາມາດເຫັນຄວາມຮ້ອນໃຈຄອງຄອຍ ຂອງພວກເຂົາໂດຍຜ່ານທາງແວວຕາເຫລົ່ານັ້ນເຫມືອນກັນ. ເພິ່ນຈະ ເວົ້າຫຍັງແດ່ກັບບັນດານັກຄອມມຸຍນິດ ຊຶ່ງມາຈາກປະເທດຕ່າງໆນັ້ນ?

ອາດຈະເວົ້າກ່ຽວກັບຊີວິດການເປັນຢູ່ໃນສັງຄົມໂຊວຽດໃຫມ່ນັ້ນ ແລ້ວ.

ອະລາດີເມຍ ອີລີຊ ເລີ່ມລາຍງານສະພາບເສດຖະກິດຢູ່ໃນຜືນ ແຜ່ນດິນໂຊວຽດ: ພວກຂ້າພະເຈົ້າ ໄດ້ບັນລຸຫຍັງແດ່ໃນຫ້າປີຜ່ານມາ, ແລະຍັງມີຫຍັງແດ່ທີ່ຍັງເຮັດບໍ່ທັນໄດ້? ພວກຂ້າພະເຈົ້າໄດ້ຮັບໄຊຊະນະ ຈາກສົງຄາມແລະໄພອຶດຫິວ, ດຽວນີ້ ກຳລັງຟື້ນຟູສະພາບການເທ່ງ

ຄວາມອຸ້ນວາຍໃຫ້ຄືນສູ່ປົກກະຕິ. ກຳມະກອນແລະຊາວນາ ໄດ້ມີຊີວິດການເປັນຢູ່ດີຂຶ້ນ. ພວກຂ້າພະເຈົ້າ ກຳລັງກອດກອນບົດຮຽນກ່ຽວກັບວຽກງານການຄ້າ. ບັນດາເຄື່ອງຈັກເຄື່ອງລາງຂອງພວກຂ້າພະເຈົ້າ ຍັງຜະລິດບໍ່ທັນໄດ້ດີ, ແລະຍັງມີຈຳນວນນ້ອຍທີ່ສຸດອີກ, ຄວນຈະຕ້ອງໄດ້ຜະລິດເຄື່ອງຈັກໃຫ້ຫລາຍກ່ວານີ້ອີກ. ຖ້າບໍ່ມີເຄື່ອງຈັກແລ້ວ ກໍບໍ່ອາດທີ່ຈະສ້າງສັງຄົມຄອມມຸຍນິດໄດ້. ເປົ້າຫມາຍສະເພາະຫນ້າຂອງພວກຂ້າພະເຈົ້ານັ້ນ ແມ່ນການກໍ່ສ້າງສັງຄົມຄອມມຸຍນິດ. ສ່ວນເປົ້າຫມາຍສະເພາະຫນ້າຂອງບັນດາພວກສະຫາຍຕ່າງປະເທດທັງຫລາຍນັ້ນແມ່ນການປະຕິວັດ.

ນີ້ແມ່ນສິ່ງທີ່ ອະລາດີເມຍ ອີລີຊ ໄດ້ກ່າວເຖິງ. ເພິ່ນເວົ້າເປັນພາສາ ເຢຍລະມັນ, ເພາະວ່າໃນສະໄຫມນັ້ນ ພາສາລັດເຊຍສຳລັບຄົນຕ່າງປະເທດແລ້ວແມ່ນຮູ້ນ້ອຍທີ່ສຸດ, ຖ້າເວົ້າເປັນພາສາ ເຢຍລະມັນ ຜັດມີຫລາຍຄົນທີ່ເຂົ້າໃຈໄດ້ດີ.

"ເພິ່ນເວົ້າພາສາ ເຢຍລະມັນ ໄດ້ເກັ່ງທີ່ສຸດ", -ບັນດານັກຄອມມຸຍນິດ ເຢຍລະມັນ ພາກັນຍົກຍ້ອງຢູ່ໃນໃຈ.

ບົດລາຍງານໄດ້ສິ້ນສຸດລົງ.

ບັນດານັກຄອມມຸຍນິດທັງຫມົດໄດ້ພາກັນລຸກເພື່ອບຂຶ້ນ.

-ຊຶມເຊີຍ, ເລນິນ, ເລນິນ ຫມັ້ນຍືນ!

ສຽງຮ້ອງໂຮປານສຽງຟ້າຮ້ອງ ໄດ້ດັງຟົດຟື້ນຂຶ້ນຢູ່ໃນຫໍປະຊຸມ.

ທະເລແຫ່ງຄວາມຮັກອັນນັ້ນ ໄດ້ເຮັດໃຫ້ ອະລາດີເມຍ ອີລີຊ ມີຄວາມປະທັບໃຈຢ່າງເລິກເຊິ່ງ. ເມື່ອມີສຽງຮ້ອງຊຶມເຊີຍດັງເຮງຄືແນວນັ້ນ, ຜັດແຫ່ງເຮັດໃຫ້ເພິ່ນເກີດຄວາມຫົນຫວາຍຂຶ້ນ. ເພິ່ນຄິດວ່າຈະຫນີອອກຈາກຫ້ອງຫໍປະຊຸມນີ້ໃຫ້ໄວທີ່ສຸດ. ແຕ່ຈັກຊິໄປຈັ່ງໃດໄດ້! ຝູງຄົນເປັນຈຳນວນຫລວງຫລາຍ ໄດ້ພາກັນມາຫຸ້ມລ້ອມເພິ່ນເອົາໄວ້ແລ້ວ. ແຕ່ລະຄົນກໍລ້ວນແຕ່ຢາກເວົ້າຢາກລົມນຳເພິ່ນ, ເຖິງແມ່ນວ່າຈະເປັນພຽງແຕ່ຖາມຂ່າວຄາວເທົ່ານັ້ນກໍຕາມ.

-ສະບາຍດີ ສະຫາຍ ເລນິນ! - ໃຜຜູ້ຫນຶ່ງທີ່ມີຜົມກູດໆໄດ້ຫຍັບເຂົ້າມາໃກ້ໆເພິ່ນແລ້ວ

ເວົ້າເປັນພາສາຝະລັ່ງຂຶ້ນບັກດັງໆ. ດວງຕາດຳລອກແລກຂອງເຂົາເຫລື້ອມເປັນປະກາຍ, ເຂົາເວົ້າລົ້ມຄືນ, ດ້ວຍທ້ອຍທຳນອງທີ່ແສນຮັກແພງ: -ສະບາຍດີ ສະຫາຍ ເລນິນ! -ແລະ ຈາກນັ້ນ ເຂົາກໍໄດ້ເວົ້າເປັນພາສາລັດເຊຍດ້ວຍສຽງທີ່ຟ້າອອກຍາກວ່າ: -ທ່ານຜູ້ນຳ ເລນິນ!

ເລນິນ ຍິ້ມຫົວ:

-ສະຫາຍເປັນຄົນທ້ອງຖິ່ນໃດຂອງປະເທດຝະລັ່ງ?

-ຂ້ອຍແມ່ນຄົນ ອິຕາລີ. ແຕ່ວ່າສະຫາຍບໍ່ຮູ້ພາສາ ອິຕາລີຂອງພວກເຮົາເດ...

-ຮູ້ຫນ້ອຍຫນ້ຳ, -ອະລາດີເມຍ ອີລີຊ ເວົ້າຄັດຄ້ານດ້ວຍພາສາ ອິຕາລີ.

. -ໂອຍ, ສະຫາຍ ເລນິນ ນີ້ ຮູ້ສາລະພັດຢ່າງ! -ຄົນ ອິຕາລີ ຜູ້ທີ່ມີຜົມກຸດທ້ອງ ຂັ້ນ.

ຢູ່ທົ່ວທຸກບ່ອນ ໄດ້ຍິນແຕ່ສຽງເວົ້າເປັນພາສາ ອິຕາລີ, ເຢຍລະມັນ, ຝະລັ່ງ, ອັງກິດ:

-ເລນນ ຜູເປັນເພື່ອນ! ເລນນ ຜູນາຂອງບນດາພກຄອມມຸຍນດ! ເລນນ ຜູເປັນ ອາຈານ!

ຊ່າງຊຸດຄົ້ນບໍ່ແຮ່ຄົນຕ່າງປະເທດຜູ້ຫນ້ຳ ນຸ່ງເສື້ອສີຂາວຄ້ຳ ຫົມະ, ໃບຫນ້າຂອງເຂົາ ມີຈຸດດ່າງດຳຂອງຂີ້ກ່ານໄຟ, ເຂົາໄດ້ເອົາມືຂຶ້ນໂກບໃສ່ປາກເຮັດຄືທໍລະໂຄ່ງ, ແລ້ວຮ້ອງຂຶ້ນ ດ້ວຍນ້ຳສຽງທີ່ຊຶມຊຶ້ນດີໃຈວ່າ:

-ປະເທດຊາດໂຊວຽດ ແມ່ນໂດມໄຟທະເລຂອງພວກຫມູ່ເຮົາ ພວກຫມູ່ເຮົາຈົ່ງຫັນ ທິດນາທາງເບື້ອງໂດມໄຟອັນນັ້ນ.

ຄົນຕ້ອນຮັບປີໃຫມ່

ອະລາດີເມຍ ອີລີຊ ເກີດມີອາການບໍ່ສະບາຍ, ເພີ່ນປ່ວຍຫນັກແລະຢູ່ໃນຂັ້ນອັນ ຕະລາຍທີ່ສຸດ.

ມີບາງຄົນ ກໍເວົ້າວ່າ ພະຍາດຂອງເພີ່ນໄດ້ເກີດຂຶ້ນຢ່າງກະທັນຫັນ. ບໍ່ແມ່ນດອກ,

ພະຍາດອັນໂຫດຮ້າຍອັນນີ້ ມັນໄດ້ເກີດຂຶ້ນກັບເພິ່ນ ຕັ້ງແຕ່ດົນນານແລ້ວ. ມັນແມ່ນພະຍາດອຶດນອນນັ້ນເອງ. ມີບາງຄັ້ງ ເພິ່ນບໍ່ສາມາດພົບຕາລີງໄດ້ຈົນຕະຫລອດຄືນ. ອັນຫີວນັ້ນ ກໍຄືຈ່ຳວ່າຍາມໃດກໍເຈັບປວດຢູ່ພໍຊ່ຳນັ້ນ. ເຄາະຮ້າຍໄດ້ມາເຖິງແລ້ວ, ອະລາດີເມຍ ອີລີຊ ໄດ້ລົ້ມນອນຢູ່ເທິງຕ່ຳງ່ຳງພິກຄີງບໍ່ໄດ້.

ເພິ່ນນອນຢູ່ໃນຫ້ອງນ້ອຍໆໃນເຮືອນພັກສ່ວນຕົວທີ່ ເກອຣແລງ.

-ອະລາດີເມຍ ອີລີຊ ເຮັດວຽກຫລາຍໂພດ, ເຮັດຈົນເກີນແຮງຕົນເອງ! -ບັນດາມາຍແພດ ພາກັນເວົ້າຂົ່ມ. -ດັ່ງນັ້ນ ຕ້ອງໃຫ້ເພິ່ນໄດ້ພັກຜ່ອນ ເພື່ອບຳລຸງສຸກຂະພາບ.

ແຕ່ ອະລາດີເມຍ ອີລີຊ ບໍ່ອາດທີ່ຈະເຊົາເຮັດວຽກໄດ້ເດັດຂາດ! ການປ່ອຍຕົ້ນມືລັກສະນະອັນຕະລາຍທີ່ສຸດ, ດັ່ງນັ້ນ ຈ່ຳຄວນຣີບຟ້າວເປີດເຜີຍຄວາມນຶກຄິດທ້ຳຫມົດຂອງຕົນສູ່ບັນດາສະຫາຍຊາບໃຫ້ທັນການ.

ອະລາດີເມຍ ອີລີຊ ນອນ, ເອົາແຂນພາດໃສ່ເທິງຫມອນຢ່າງບໍ່ເຫນັງຕີງ. ແພຈຸ່ມນ້ຳເຢັນໄດ້ວາງໄວ້ເທິງຫນ້າຜາກຂອງເພິ່ນ ເພື່ອເຮັດໃຫ້ຄວາມເຄັ່ງຕຶງໃນຫົວຄ່ອນຄ່ອງ.

ໃນຕອນກາງຄືນ ມີໂຄມຕະກຽງທີ່ມີແສງສະຫວ່າງພໍມົວໆວາງໄວ້ເທິງໂຕະ. ບັນດາມາຍແພດທ້ຳຫລາຍໄດ້ ສັ່ງໃຫ້ ອະລາດີເມຍ ອີລີຊ ຕ້ອງພັກຜ່ອນພາຍຫລັງກິນເຂົ້າທ່ຽງແລ້ວ, ແຕ່ເພິ່ນກໍຍັງບໍ່ຍອມນອນຢູ່ອີກ.

ວານນີ້ ຢູ່ ທີ່ ນິດສະກູ ໄດ້ມີກອງປະຊຸມໃຫຍ່ຄັ້ງທີ ! ຂອງສະພາໂຊວຽດທ່ົວ ສະຫະພາບຂຶ້ນ. ວານນີ້ ແມ່ນວັນທີ ໒໐ ເດືອນທັນວາ ປີ ໑໙໔໔, ທີ່ກອງປະຊຸມໃຫຍ່ໄດ້ມີການຄົ້ນຄ້ວາຍັດຕິວ່າດ້ວຍການສ້າງຕັ້ງສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ.

ອະລາດີເມຍ ອີລີຊ ໄດ້ກະກຽມວຽກງານໃຫ້ເກ່ົຍັນເປັນປະຫວັດສາດນັ້ນ ມາຕັ້ງແຕ່ດົນນານແລ້ວ.

ບໍ່ແມ່ນວ່າຫມົດທຸກຄົນ ຈະມີຄວາມເຂົ້າໃຈໄດ້ພ້ອມບາດໂລດວ່າເປັນຫຍັງຈ່ຳຈ່ຳຕ້ອງສ້າງຕັ້ງສະຫະພາບໂຊວຽດຂຶ້ນ. ເປັນຫຍັງ ອະລາດີເມຍ ອີລີຊ ຈ່ຳພະຍາຍາມເຮັດໃຫ້ສົ່ງດັ່ງກ່າວບັນລຸ ດ້ວຍຄວາມເດັດດ່ຽວຄືແນວນັ້ນ.

ເລນິນ ປາກະຫນາ ຢາກໃຫ້ສະຫະພາບໂຊວຽດນີ້ກາຍເປັນຊາດໃຫມ່ອັນຫນຶ່ງ, ຊຶ່ງມີ ຄວາມແຕກຕ່າງກັບສະໄຫມກະສັດລັດເຊຍ. ຍ້ອນວ່າ ໃນສະໄຫມ ກະສັດລັດເຊຍນັ້ນ ມີ ພຽງແຕ່ປະເທດລັດເຊຍປະເທດດຽວເທົ່ານັ້ນ. ສ່ວນປະເທດ ອູແກຣນ, ເບໂລຣຸດຊີ, ອາກ ເມນີ, ອາເຊກບາຍຈັງ, ກຣູເຊຍ ຖືກຖືວ່າເປັນພາກສ່ວນຫນຶ່ງຂອງປະເທດລັດເຊຍເທົ່າ ນັ້ນ. ບັນດາຊົນຊາດເຫລົ່ານັ້ນ ແມ່ນບໍ່ມີສິດເສລີພາບພໍຫນ້ອຍ. ຢູ່ຕາມໂຮງຮຽນ ກໍບໍ່ໄດ້ຮັບ ອະນຸຍາດໃຫ້ສຶກສອນພວກເດັກນ້ອຍດ້ວຍພາສາຂອງຕົນເອງຈັ່ງ. ຍິ່ງໄປກ່ວານັ້ນ ຍັງມີ ຫລາຍໆຊົນຊາດ ບໍ່ມີຮອດຫນັງສືຂອງຕົນເອງ. ບັນດາຊົນຊາດສ່ວນນ້ອຍຂາດການເສີມຂະ ຫຍາຍ, ຖືກບີບຮັດຂົ່ມເຫັງຢ່າງອັບອາຍຂາຍຫນ້າ. ເລນິນ ສຸດທີ່ມີຄວາມຄຽດແຄ້ນຕໍ່ຄວາມ ບໍ່ເປັນເອກກະພາບອັນນັ້ນ.

ເພິ່ນໄດ້ຄົ້ນຄິດຢ່າງເລິກເຊິ່ງກ່ຽວກັບສິ່ງດັ່ງກ່າວ. ນາເດສະດາ ກົງສະຕັງຕິນົບນາ ຍ່າງ ມາຢຸດຢູ່ທີ່ປະຕູ, ເພື່ອຢາກຮູ້ວ່າເພິ່ນນອນແລ້ວຫລືຍັງ.

-ນາເດຍ, ອ້າຍຍັງບໍ່ທັນນອນເທື່ອ. ອ້າຍກຳລັງກຽມຈະເຮັດວຽກຢູ່.

ນາງຍ່າງເຂົ້າໄປໃນຫ້ອງຢ່າງຊົມໆ ແລ້ວກໍໄຕ້ໄຟຂຶ້ນ. ຈາກນັ້ນ ທົ່ວຫ້ອງກໍມີແສງສະ ຫວ່າງແຈ້ງອັນພາໃຫ້ສາມາດແນມເຫັນ ໃບຫນ້າອັນລ່າເຫລືອງ ທີ່ຫມູນຢູ່ເທິງຫມອນນັ້ນ.

ໃນຫ້ອຍຝາຢູ່ໃນຫ້ອງໄດ້ຕິສັນຍານຕິດຕໍ່ກັນເກືອຫົກຄັ້ງ. ຂະນະນັ້ນ ພະນັກງານນັ້ນ ຫົກວຽກງານ ຂອງ ອະລາດີເມຍ ອີລີຊ ທີ່ມີຊື່ວ່າ ໂວໂລດີເຈວາ ໄດ້ຍ່າງເຂົ້າມາ. ນາງຢູ່ ໃນໄວສາມສິບປີ; ນາງມີຮູບຮ່າງບອບບາງ, ເປັນຄົນທີ່ມີຄວາມສະຫລາດສະຫລວຍ, ນາງ ນັ່ງຢູ່ທາງຂ້າງໂຕະນ້ອຍທີ່ຕັ້ງຢູ່ຂ້າງຕຽງນອນ ແລະໃນມືກຳລັງໄວ້ຢ່າງກຽມພ້ອມ.

-ມັນຕ້ອງເປັນຈ້ຽນແລ້ວ, -ອະລາດີເມຍ ອີລີຊ ເວົ້າຂຶ້ນ.

ມັນ ຄະນະແພດ ໄດ້ອະນຸຍາດໃຫ້ເພິ່ນເວົ້າໃຫ້ຄົນອື່ນຈົດເປັນເວລາສິບນາທີ.

ສິບນາທີ-ກໍນັບວ່າເປັນເວລາຫລາຍສົມຄວນຢູ່ໃດ! ເພາະວ່າບົດເລື່ອງຕ່າງໆແມ່ນໄດ້ ກຽມພ້ອມຢູ່ໃນຫົວຂອງເພິ່ນພໍແຮງແລ້ວ.

ກ້າວ່າ ອະລາດີເມຍ ອີລີຊ ຫາກມີໂອກາດໄດ້ເຂົ້າຮ່ວມໃນກອງປະຊຸມໃຫຍ່ ເພິ່ນກໍຈະ

ໄດ້ເວົ້າຫມົດທຸກສິ່ງທຸກຢ່າງທີ່ເພິ່ນກຳລັງເວົ້າໃຫ້ຈົດຢູ່ໃນຂະນະນີ້ໆ. ມັນແມ່ນຄຳໂອວາດ ເພື່ອບັນດາສະຫາຍທັງຫລາຍ. ບັນດາສະຫາຍທັງຫລາຍຕ່າງກໍຮັບຟັງຄຳໂອວາດຂອງເລນິນ ຢ່າງເອົາໃຈໃສ່. ເພິ່ນເວົ້າວ່າຕ້ອງກໍ່ສ້າງແລະປັບປຸງສະຫະພາບໂຊວຽດຄືແນວໃດ. ບໍ່ຄວນປະ ປ່ອຍໃຫ້ບັນດາຊົນເຜົ່າຈຳນວນນ້ອຍທັງຫລາຍມີຄວາມທຸກຍາກລຳບາກ. ບໍ່ຄວນຂົ່ມຂູ່ຫນີບ ຮັດຕໍ່ບັນດາຊົນຊາດຊົນເຜົ່າ! ບັນດາປະເທດສາທາລະນະລັດສະຫະພາບໂຊວຽດຕ້ອງມີສິດສະ ເຫມີພາບ ມີຄວາມຮັກແພງຊື່ງກັນແລະກັນ. ສະຫະພາບໂຊວຽດຈະຕ້ອງກາຍເປັນຊາດຫນຶ່ງ ທີ່ມີຄວາມເຂັ້ມແຂງ ແລະຍຸຕິທຳ. ແລະບັນດາຊົນຊາດຊົນເຜົ່າທີ່ກຸກລັດທີ່ຈັກກະພັດກິດ ຂີ່ຢູ່ໃນໂລກຕ້ອງມີຄວາມຕື່ນຕົວ...

ນາເດສະດາ ກົງສະຕັງຕິນົບນາ ກຳລັງຟັງສຽງເວົ້າຂອງເພື່ອນຮ່ວມຊີວິດຢູ່ທີ່ຫ້ອງກົນ ເຂົ້າທາງຂ້າງນັ້ນເອງ. ນາງນັ່ງເອົາສອງມືຂຶ້ນຄ້ຳແກ້ມ, ໃບຫນ້າອັນຈ່ອຍຜອມຂອງນາງໄດ້ ສະແດງໃຫ້ເຫັນເຖິງຄວາມຮັກຊື່ງປະປົນກັບຄວາມເປັນຫ່ວງເປັນໄຍ.

ແຕ່ບາດນີ້ ເລນິນ ອ່ານຈົບແລ້ວ, ນາງພະນັກງານບັນທຶກວຽກງານກໍໄດ້ອອກຈາກ ຫ້ອງໄປ. ນາເດສະດາ ກົງສະຕັງຕິນົບນາ ກໍໄດ້ເຂົ້າມານັ່ງແທນບ່ອນທີ່ຂ້າງຕຽງຂອງຄົນ ເຈັບນັ້ນໂລດ. ຮອຍຍິ້ມຂອງນາງສຸດທີ່ອ່ອນຫວານ ຈົນເຮັດໃຫ້ ວະລາດີເມຍ ອີລີຊ ບໍ່ສາ ມາດແນະເຫັນຄວາມອຸກອັ່ງປະປົນກັບຄວາມຢ້ານກົວຢູ່ໃນສາຍຕາຂອງນາງໄດ້. ຄວາມທຸ່ນ ທ່ຽງຂອງ ນາເດສະດາ ກົງສະຕັງຕິນົບນາ ໄດ້ເຮັດໃຫ້ ວະລາດີເມຍ ອີລີຊ ອຸ່ນອ່ຽນຈິດໃຈ ທີ່ສຸດ.

-ນາເດຍ ເອີຍ, ນ້ອງຮູ້ບໍ່ວ່າອ້າຍກຳລັງຄຶດຫຍັງ? -ວະລາດີເມຍ ອີລີຊ ເວົ້າເປັນສຽງ ທຸ້ມຂຶ້ນ. -ອ້າຍກຳລັງຄຶດຮອດພໍ່, ຊຶ່ງເພິ່ນໄດ້ພະຍາຍາມເປີດໂຮງຮຽນຢູ່ທີ່ແຂວງ ຊິມບຽກ, ໄດ້ຈັດຕັ້ງ ໂຮງຮຽນສຳລັບພວກເດັກນ້ອຍຊົນຊາດຊາວ ຊູວັດ, ຊາວ ນອກວົນ, ແລະ ຕັກຕາ. ກ່ອນຫນ້ານັ້ນ, ແມ່ນບໍ່ເຄີຍມີເລື່ອງແບບນີ້ເກີດຂຶ້ນຢູ່ແຂວງ ຊິມບຽກ ຈັກເທື່ອ ເລີຍ.

-ພໍ່ເປັນຄົນທີ່ຫາຍາກທີ່ສຸດ, -ນາເດສະດາ ກົງສະຕັງຕິນົບນາ ຕອບ. -ພໍ່ໄດ້ເລີ່ມ

ຕົ້ນດ້ວຍສິ່ງເລັກໆນ້ອຍໆ, ຊຶ່ງມັນໄດ້ເປີດເສັ້ນທາງໄປສູ່ການປະຕິວັດອັນໃຫຍ່ຫລວງໃນປັດຈຸບັນ.

ຈາກນັ້ນນາງໄດ້ແນມເຫັນໃບຫນ້າຂອງ ອະລາດີເມຍ ອີລີຊ ທີ່ເຕັມໄປດ້ວຍຄວາມດີໃຈກ່ຽວກັບວຽກງານທີ່ໄດ້ເຮັດໃນມື້ນີ້. ດວງຕາທັງຄູ່ກໍຄືຈ້ຳວ່າໃສແຈວວາວຂຶ້ນເຫມືອນແຕ່ກ່ອນແລ້ວ. ເພິ່ນໄດ້ດຶງຜ້າແພທີ່ໂພະຢູ່ຫົວນັ້ນອອກ, ຫມາຍຄວາມວ່າຄວາມຮ້ອນໄດ້ລົດຜ່ອນລົງແລ້ວ. ບາງທີ ເພິ່ນອາດຈະລຸກໄດ້ກໍ່ບໍ່ຈັກ?

"ເປັນໄປໄດ້ບໍ? ໂອຍ, ເປັນຫຍັງຂ້ອຍຈຶ່ງຄຶດເນອນີ້? ຈັ່ງແມ່ນປະຫລາດແທ້ໆ?" - ນາເດສະດາ ກົງສະຕັງຕິນິບນາ ຕົກໃຈໃນແນວຄຶດຂອງຕົນເອງ. -"ມັນບໍ່ແມ່ນແຕ່ພຽງອາດຈະ, ແຕ່ມັນຕ້ອງແມ່ນອນທີ່ສຸດລະ! ເພາະວ່າຫວ່າງເຄິ່ງປີຂອງກ່ອນຫນ້ານີ້ ເພິ່ນກໍຍັງເປັນຄົນກັນກັບເທື່ອນີ້, ແລະ ອະລາດີເມຍ ອີລີຊ ກໍຍັງເຊົ່າໄຂ້ ແລະ ລຸກໄດ້ຫັ້ນເດ. ມາບາດນີ້ ກໍຄົງເປັນຄົນກັນກັບເທື່ອນັ້ນ.

ນາງຕົບແຕ່ງແປງແພທີ່ຫົ່ມໂຕຂອງ ອະລາດີເມຍ ອີລີຊ ຄືນອີກເທື່ອຫນຶ່ງ ດ້ວຍຄວາມຄ່ອງແຄ້ວ.

-ຄືນນີ້ ແມ່ນຄືນຄືບັ້ນສະຫລອງວັນປີໃຫມ່ແລ້ວເດ, ໂອໂລເດຍ ເອີຍ, -ນາເດສະດາ ກົງສະຕັງຕິນິບນາ ຊວດຄຶດພໍ້ແລ້ວເວົ້າຂຶ້ນ. -ບໍ່ແມ່ນບໍ່ມີຂໍ້ອ້າງອີ່ງອອກ, ເບິ່ງລາວ ກໍສິດຊື່ນແຈ່ມໃສດີຢູ່ນາ. -ນາງກົ້ມລົງຈູບ ອະລາດີເມຍ ອີລີຊ. -ແລ້ວກໍອວຍພອນປີໃຫມ່ໃຫ້ແກ່ ໂອໂລເດຍ.

ຕໍ່ສູ້ຢ່າງບໍ່ຢຸດຢັ້ງ

ຄະນະແພດຕ່າງກໍມີ ຄວາມເປັນຫ່ວງເປັນໄຍ: ຍ້ອນວ່າການທີ່ເວົ້າໃຫ້ຄົນອື່ນຈົດນັ້ນ ກໍສາມາດມີຜົນສະທ້ອນ ຕໍ່ຮ່າງກາຍຂອງ ອະລາດີເມຍ ອີລີຊ ເຊັ່ນກັນ. ຄວນພັກຜ່ອນສະຫມອງແດ່, ອະລາດີເມຍ ອີລີຊ ເອີຍ! ຢ່າໄປຄຶດແຕ່ນໍາຊາວບ້ານເມືອງຫລາຍ. ຄວນເຊົ່າ

ເວົ້າໃຫ້ຜູ້ອື່ນຈົດບົດເພື່ອລົງຫນັງສືພິມນັ້ນສາເຫາະ.

ແຕ່ວະລາດີເມຍ ອີລີຊ ປະຕິເສດຢ່າງເດັດຂາດ!

ແຕ່ຄົນຈະມາກົກກ່ຽງກັນດ້ວຍເຫດດ້ວຍຜົນກັບຄະນະແພດນີ້ ມັນກໍບໍ່ແມ່ນເລື່ອງງ່າຍ, ດັ່ງນັ້ນ ວະລາດີເມຍ ອີລີຊ ຈຶ່ງໄດ້ຫັນມາໃຊ້ກົນອຸບາຍເອົາ.

-ຂ້ອຍຈະບໍ່ເວົ້າກ່ຽວກັບບົດຂ່າວອີກດອກ, ແຕ່ຂ້ອຍຂໍເວົ້າກ່ຽວກັບບົດບັນທຶກ.

ເພິ່ນໃຊ້ກົນອຸບາຍກັບຄະນະແພດຄືແນວນັ້ນ. ດັ່ງນັ້ນ ພວກເຂົາຈຶ່ງຍິນຍອມ: ຄັນຊັ້ນກໍໄດ້! ແນ່ນອນທີ່ສຸດວ່າ, ບັນດາຄະນະແພດຕ່າງກໍຮູ້ດີຄັກວ່າ, ປຶ້ມບັນທຶກດັ່ງກ່າວນັ້ນກໍຈະບໍ່ໄດ້ເວົ້າເຖິງເລື່ອງດິນຟ້າອາກາດແຕ່ຢ່າງໃດ. ບໍ່ຫ່ອນວ່າຊິມາຫ້າມບໍ່ໃຫ້ ເລນິນ ພິວພັນນໍາຊາຕາກໍາຂອງຊາດ ຊຶ່ງແມ່ນເພິ່ນເອງເປັນຜູ້ກໍ່ຕັ້ງຂຶ້ນມານັ້ນໄດ້. ເມື່ອບໍ່ໄດ້ຮັບອະນຸຍາດໃຫ້ເວົ້າເພື່ອໃຫ້ຄົນອື່ນຈົດນັ້ນ, ມັນສະຫມອງຂອງ ວະລາດີເມຍ ອີລີຊ ກໍຮູ້ສຶກວ່າມັນເຄັ່ງຕຶງຂຶ້ນຫລາຍທີ່ສຸດ, ຈົນບໍ່ສາມາດທີ່ຈະນອນໄດ້. ບັນດາຄະນະແພດໄດ້ອະນຸຍາດໃຫ້ເພິ່ນເຮັດປະມານເຄິ່ງຊົ່ວໂມງ, ຫລືວ່າສິບນາທີຕໍ່ມື້. ແຕ່ບໍ່ໃຫ້ເກີນນັ້ນ.

ເມື່ອຮອດໂມງນັດຫມາຍ, ນາງພະນັກງານບັນທຶກກໍມາຮອດ. ນາງຈົດໄດ້ສິບຫ້າ, ສອງຫລືສາມຫນ້າ, ຊຶ່ງຢູ່ໃນຫນ້າເຈ້ຍດັ່ງກ່າວເຕັມໄປດ້ວຍແຜນການທາງສັງຄົມຂອງພວກເຮົາໃນຂັ້ນຕໍ່ໄປນັ້ນທັງຫມົດ. ອະລາດີເມຍ ອີລີຊ ໄດ້ຕໍາຫນິວິຈານກ່ຽວກັບຈຸດອ່ອນ, ແລະຕັກເຕືອນວ່າຄວນຈະເຮັດວິທີໃດ ເພື່ອຈັດຕັ້ງກິຈັກຂອງລັດໃຫ້ມີຄວາມສອດຄ່ອງເຫມາະສົມກ່ວາເກົ່າ, ຈົ່ງຮັກສາຄວາມເປັນເອກກະພາບ ແລະມິດຕະພາບຢູ່ໃນພັກຄອມມຸນິດນັ້ນໃຫ້ແຫນ້ນແຟ້ນ. ເລນິນ ຢ້ານທີ່ສຸດນັ້ນຄືຄວາມບໍ່ຖືກຕ້ອງ ຢູ່ພາຍໃນພັກ.

ນອນຢູ່ເທິງຕຽງຄົນເຈັບ, ວະລາດີເມຍ ອີລີຊ ໄດ້ຄິດໄລ່ ຊັ່ງຊາບໍາແຕ່ລະຄວາມຄິດເຫັນ, ຄວາມເວົ້າສໍາລັບບົດຂ່າວຂອງຕົນຢ່າງລອບຄອບຖ້ວນຖີ.

ບັນດາບົດຂ່າວຂອງ ເລນິນ ແມ່ນລ້ວນແຕ່ຖືກພິມລົງໃນຫນັງສືພິມ "ສັດຈະທໍາ" ທັງຫມົດ. ທັງນີ້ ກໍເພື່ອໃຫ້ບັນດາຊາວຜູ້ອອກແຮງງານອ່ານ, ແລະອະທິບາຍສູ່ກັນຟັງ:

-ອີລີຊ ນີ້ ເຂົ້າໃຈກ່ຽວກັບຊີວິດການເປັນຢູ່ຂອງພວກເຮົານີ້ຢ່າງຖືກຕ້ອງທີ່ສຸດ. ເພິ່ນ

ເຂົ້າໃຈເລິກຮອດຫລັກແຫລ່ງຮາກຖານພຸ້ນອີກ. ເພິ່ນເປັນຜູ້ຮູ້ເຫັນຫມົດທຸກສິ່ງທຸກຢ່າງ ແມ້ແຕ່ສິ່ງທີ່ພວກເຮົາຍັງບໍ່ທັນຮູ້ນັ້ນຊໍ້າ!

ແລະມີຄວາມປິຕິຊົມຊື່ນ:

-ຂໍໃຫ້ ອີລີຊ ຂອງພວກເຮົາ ຈົ່ງຫາຍວັນຫາຍຄືນເທາະ!

ບໍ່ພໍຄາວ...ມັຫນ້ຳຂອງເດືອນ ມີນາ. ດວງຕາເວັນຂອງລະດູບານໃຫມ່ ໄດ້ສາດແສງ ລົງມາດ້ວຍຄວາມປົ້ມປິຕິມ່ວນຊື່ນ. ຝູງນົກກະຈິບຕ່າງກໍພາກັນຮ້ອງຢ່າງມັນນອງຢູ່ຕາມ ກະຫນົນໃຫຍ່ຂອງຕົວເມືອງ ແລະຕາມສວນດອກໄມ້ຕ່າງໆ. ຍາມລະດູບານໃຫມ່ ຫິມະ ໄດ້ລະລາຍແລະໄຫລໄປ. ບັນດາສາຍນ້ຳທີ່ມີຝອດຈຳປອກໄດ້ໄຫລລ່ອງໄປຕາມຮ່ອງ ແຄມ ທາງລາດຢ່າງແລະໄຫລແຮງປານນ້ຳຫ້ວຍ. ຫມົດທຸກສິ່ງທຸກຢ່າງທີ່ມີຢູ່ໃນທຳມະຊາດຕ່າງກໍ ມີຊີວິດຊີວາ, ຊົ່ນຊົ້ນຂຶ້ນມາ. ແຕ່ໃນຕອນເຊົ້າຂອງມັ້ນ, ຊ່ຳແມ່ນມື້ວັນທີ ໑໔ ເດືອນ ມີນາ, ຕອນທີ່ຫມົດທຸກຄົນ ກຳລັງເປີດຫນັງສືພິມອອກມາເບິ່ງນັ້ນ, ພວກເຂົາຕ່າງກໍມີສ ຫນ້າໂສກເສົ້າຫ່ວມເຫງົາ. ຫມົດທຸກຄົນຕ່າງກໍພາກັນມາຢືນເຕົ້າໂຮມກັນຢູ່ຕາມແຄມທາງ ບ່ອນທີ່ມີຕູ້ແກ້ວຫ້ອຍຫນັງສືພິມ. ທົ່ວທຸກແຫ່ງໄດ້ຕິດແຜ່ນເຈ້ຍ "ປະກາດແຈ້ງການຂອງ ລັດກະບານ". ຖ້າວ່າມັນເປັນຂອງລັດກະບານແລ້ວ ຫມາຍຄວາມວ່າ ຕ້ອງມີຂ່າວສຳຄັນ ໂລດ. ເຫດຮ້າຍອັນໃດເກີດຂຶ້ນບໍ່?

"ປະກາດແຈ້ງການກ່ຽວກັບສຸກຂະພາບຂອງ ອະລາດີເມຍ ອີລີຊ.

ຫວ່າງບໍ່ເທົ່າໃດມື້ມານີ້ ສະພາບສຸກຂະພາບ ຂອງ ອະລາດີເມຍ ອີລີຊ ຊຸດໂຊມອ່ອນ ເພຍລົງຫລາຍ..."

ແກວຕົວຫນັງສືດຳໆນັ້ນ ເບິ່ງແລ້ວຄ້າຍກັບຢາກເວົ້າວ່າເຄາະຮ້າຍໄດ້ເກີດຂຶ້ນແລ້ວ...

"ຊຸດໂຊມລົງຫລາຍ". ອ່ານມາຮອດຕອນນີ້ ທຸກຄົນຕ່າງກໍຮູ້ສຶກມີຄວາມເປັນຫ່ວງ ຂຶ້ນມາທັນທີ ແລະໄດ້ກົ້ມຫນ້າຍ່າງອອກໄປ. ໃນມັ້ນ, ບັນດາກຳມະກອນຢູ່ຕາມໂຮງຈັກ ໂຮງງານ ຕ່າງກໍມີຄວາມໂສກເສົ້າຫ່ວມເຫງົາ.

-ອີລີຊ ຂອງພວກເຮົາ! -ລຸງກຳມະກອນເກົ່າຜູ້ຫນຶ່ງເວົ້າທ້າງທ້ານໃຈໃຫຍ່ຂຶ້ນ.

ບັນດາຊາວຫນຸ່ມ ບໍ່ເຊື່ອນຳສິ່ງທີ່ຫນ້າຫວາດຫວັ່ນຊຶ່ງກຳລັງຫຍັບເຂົ້າມາໃກ້ແຕ່ລະນາທີ ນັ້ນຈັກຄັ້ງ.

-ບໍ່ດອກ, ບໍ່ມີເຫດຜົນອັນໃດ ຈະມາປະກາດແຈ້ງການຄືແນວນີ້, -ພວກຜູ້ເກົ່າກໍມີຄວາມໂສກເສົ້າເຫງົ້າຫງອຍ. -ໂອຍ, ອີລີຊ!

ສະພາບສຸກຂະພາບຂອງ ອະລາດເມຍ ອີລີຊ ອ່ອນເພຍລົງຫລາຍທີ່ສຸດ. ພະຍາດຊ້ຳເຮື້ອໄດ້ລຸກລາມເພີ່ນຢ່າງບໍ່ປານີ. ອະລາດີເມຍ ອີລີຊ ປາກບໍ່ໄດ້ແລ້ວ. ມີອັນໃດທີ່ເຈັບປວດໄປກ່ວານີ້ອີກ! ເລີນ ເວົ້າບໍ່ໄດ້. ພວກເຮົາຈະບໍ່ສາມາດໄດ້ຟັງຄຳເວົ້າອັນມີຊີວິດຊີວາ, ທີ່ອອກມາຈາກປາຍລີ້ນອັນຄ່ອງແຄ້ວຂອງເພີ່ນອີກແລ້ວ.

ຕະຫລອດມື້ຕະຫລອດຄືນ ບັນດາແພດ ໄດ້ຈັດຕັ້ງກັນເວນຍາມຢູ່ໃນເຮືອນຂອງ ອະລາດີເມຍ ອີລີຊ ດ້ວຍ ຄວາມເອົາໃຈໃສ່. ບັນດາແພດໄດ້ນຳໃຊ້ ວິທະຍາສາດວິທະຍາການ, ຄວາມສາມາດ ແລະ ສິລະປະສາດທັງຫມົດ ເຂົ້າໃນບັ້ນຮົບອັນໃຫຍ່ຫລວງນີ້ ເພື່ອກອບກູ້ຊີວິດລ່ວຍເອົາຊີວິດຂອງເພີ່ນ. ປະຊາຊົນທົ່ວປະເທດກຳລັງຕິດຕາມອາການຂອງເພີ່ນດ້ວຍຄວາມຫວັ່ງເປັນຢ່າງຍິ່ງ. ຕອນເຊົ້າຂອງມື້ຕໍ່ມາ ທຸກຄົນຕ່າງກໍພ້ອມກັນອອກມາອ່ານເບິ່ງຫນັງສືພິມ, ແລະ ບົດປະກາດແຈ້ງການ.

ກະແສລົມຂອງລະດູບານໃຫມ່ ໄດ້ພັດຜ່ານເຮັດໃຫ້ຜືນທຸງສີແດງປົວສະບັດຢູ່ເທິງຫລັງຄາຕຶກສະພາລັດກະມິນຕິ. ຢູ່ທາງ ແກຣມແລງ ພຸ້ນຈະເປັນແນວໃດເດ?

ພໍຕົກເຖິງຕອນກາງຄືນ, ບັນດາຄວາມຫຍຸ້ງຍາກແລະຄວາມສິນລະວິນນຳອາການຂອງມື້ຫນ້ຳ ໄດ້ສິ້ນສຸດລົງແລ້ວ. ແຕ່ຫມາກຫົວໃຈຈຳນວນຫລວງຫລາຍກໍຍັງຄົງໂສກເສົ້າຫງ່ວມເຫງົາຢູ່: ຢູ່ທາງ ແກຣມແລງ ພຸ້ນ ຈະມີເລື່ອງຫຍັງເກີດຂຶ້ນເດເນາະ?

ພາຍໃນຫ້ອງຂອງ ອະລາດີເມຍ ອີລີຊ ປະກົດວ່າມີຄວາມງຽບສະຫງັດ. ມັນງຽບສະຫງັດ ຈົນວ່າໄດ້ຍິນສຽງຮອດສຽງກວາຍຂອງຫມາກໂຕ້ນໃນຢູ່ທາງຫ້ອງກິນເຂົ້າພຸ້ນດ້ງກ້ອງເຂົ້າມາ. ໃນທີ່ນັ້ນ ມີນາງພະຍາບານຜູ້ຫນຶ່ງກຳລັງນັ່ງເວນຍາມຢູ່. ນາເດສະດາ ກ້າສະຕ້ຳຕິ ນິບນາ ກໍໄດ້ນັ່ງຢູ່ທາງຂ້າງຕຽງນັ້ນຄືກັນ.

ວະລາດີເມຍ ອີລີຊ ຄ່ອຍໆໝຶນຕາຂຶ້ນດ້ວຍຄວາມຍາກລຳ. "ນາເດຍ, ນ້ອງຍັງຢູ່ບ່ອນນັ້ນຫລໍ?"

ນາເດສະດາ ກົງສະຕັງຕິນບນາ ສາມາດເຂົ້າໃຈໄດ້ຫມົດທຸກສິ່ງທຸກຢ່າງ ທີ່ເພິ່ນຢາກເວົ້າແລະຢ່າກກາມັ້ນ. ນາງເວົ້າກັບເພິ່ນ, ຄ້າຍກັບວ່າໄດ້ຍິນສຽງເວົ້າຂອງເພິ່ນ.

-ມັ້ນ ເປ່ົາອ້າຍຄິແຂງແຮງຂຶ້ນຫລາຍກ່ວາເກົ່າ, -ນາງເວົ້າດ້ວຍນ້ຳສຽງທີ່ເຕັມໄປດ້ວຍຄວາມເຊື່ອຫັ້ນ.

ສ່ວນ ວະລາດີເມຍ ອີລີຊ ກໍຮູ້ສຶກວ່າແຂງແຮງຂຶ້ນຫລາຍກ່ວາເກົ່າອີ່ຫລີ. ເພິ່ນໄດ້ໃຊ້ແສງຕາແທນຄຳຕອບທີ່ວ່າ: "ແມ່ນແລ້ວ".

-ອ້າຍຊິເຊົ່າແລ້ວລະ. ຄະນະແພດເວົ້າວ່າຕ້ອງເຮັດໃຈໃຫ້ເຂັ້ມແຂງ.

"ອ້າຍຈະພະຍາຍາມ", -ວະລາດີເມຍ ອີລີຊ ຕອບດ້ວຍສາຍຕາອີກ.

-ຕະຫລອດຊີວິດ ອ້າຍໄດ້ຕໍ່ສູ້ເພື່ອຄວາມຜາສຸກຂອງປະຊາຊົນ, ເພື່ອການປະຕິວັດ. ອ້າຍຈັ່ງນຳເອົາເຫື່ອແຮງທີ່ມີຢູ່ທັ້ງຫມົດອອກມາຕໍ່ສູ້ກັບພະຍາດໃນຄັ້ງນີ້!

ຈິດໃຈແຫ່ງຄວາມຮັກອັນສຸດຊຶ້ງ, ໄດ້ເຮັດໃຫ້ນາງມີຄວາມເຈັບປວດຂຶ້ນມາຢ່າງກະທັນຫັນ. ນ້ຳຕາໄດ້ໄຫລຂຶ້ນມາອັ້ນຢູ່ເທິງຄໍຫອຍ. ນາງມີຄວາມອ່ອນເພຍລົງເກືອບຈະຫມົດສະຕິໄປ, ແຕ່ນາງກໍສາມາດຕັ້ງໂຕໄວ້ໄດ້. ນາງໄດ້ກືນນ້ຳຕາຢູ່ໃນລຳຄໍນັ້ນລົງຈົນຫມົດ ແລະເວົ້າດ້ວຍນ້ຳສຽງທີ່ອ່ອນໂຍນວ່າ:

-ດຽວນີ້ ຮອດເວລາພັກຜ່ອນແລ້ວລະ. ອ້າຍນອນເອົາແຮງສະ ແລ້ວທຸກຢ່າງກໍຈະດຳເນີນໄປດ້ວຍດີເອງດອກ. ນອນສະ.

ລະດູໃບໄມ້ຫລົ່ນ ປີ ໑໙໔໘

ໃນເດືອນເມສາ, ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ຄອມມຸຍນິດລັດເຊຍໄດ້ເປີດຂຶ້ນ. ກອງປະຊຸມໃຫຍ່ ໄດ້ສົ່ງສານອວຍພອນໄປເຖິງ ວະລາດີເມຍ ອີລີຊ.

"ຕາງໜ້າພັກ, ລຶນຊັ້ນກຳມາລຶບ ແລະປະຊາລຶນຜູ້ອອກແຮງງານທັງປວງ, ກອງປະຊຸມໃຫຍ່ ຂໍສົ່ງສານອວຍພອນ ມາຍັງທ່ານຜູ້ນຳຂອງຕົນ, ຈົ່ງເປັນຜູ້ປີຊາສາມາດທາງດ້ານແນວຄິດກຳມາລຶບ ແລະການກະທຳປະຕິວັດ, ດ້ວຍຄວາມຈິງໃຈແລະດ້ວຍຄວາມຮັກແພງຢ່າງສຸດອົກສຸດໃຈ.

ບໍ່ວ່າຍາມໃດ, ພັກແມ່ນມີໜ້າທີ່ຮັບຜິດຊອບຕໍ່ລຶນຊັ້ນກຳມາລຶບແລະປະຫວັດສາດ, ບໍ່ວ່າຍາມໃດ, ພັກໄດ້ປາກະຫນາທີ່ຈະປະຕິບັດຕົນໃຫ້ສົມກຽດກັບພຶນທຸກແລະ ທ່ານຜູ້ນຳຂອງຕົນ..."

ອະລາດີເມຍ ອີລີຊ ບໍ່ໄດ້ຍອມຈຳນົນຕໍ່ພະຍາດນັ້ນແຕ່ຢ່າງໃດ. ຕົກມາຮອດກາງເດືອນພຶດສະພາ, ເພື່ນໄດ້ຍ້າຍມາຢູ່ທີ່ ກອກກີ, ທີ່ເຮືອນຮັບແຂກນັ້ນເອງ. ປະທານສະພາລັດກະນິນຕີ ໄດ້ເລືອກພັກຢູ່ຫ້ອງນ້ອຍທີ່ມີປ່ອງຢ້ຽມສູງຢູ່ທາງສົ້ນສຸດຂອງຕຶກດັ່ງກ່າວ. ເມື່ອແນມຜ່ານທາງປ່ອງຢ້ຽມ ກໍຈະສາມາດແນມເຫັນສວນຕົ້ນໄມ້. ຢູ່ຕາມຕົ້ນໄມ້ເຫລົ່ານັ້ນມີນົກຮ້ອງເປັນແຊ່ວໆ. ບັນດານົກກາສິດໍ ໄດ້ພາກັນຮ້ອງ ກູວາ, ກູວາ ຢູ່ເທິງງ່າໄມ້ແຕ່ລະງ່າດ້ວຍສຽງກ້ອງຢ່າງຫນ້າປິຕິລຶນຊຶ່ນ.

ຕົກກາງຄືນມາ ກໍໄດ້ຍິນສຽງນົກກະບາຮ້ອງ. ເສງສະຫວ່າງຂອງດວງດາວ ໄດ້ສ່ອງຜ່ານເຂົ້າມາທາງປ່ອງຢ້ຽມ, ອະລາດີເມຍ ອີລີຊ ໄດ້ສູບເອົາອາກາດອັນປອດປ່ຽນ. ສະພາບສຸກຂະພາບຂອງເພື່ນ ໄດ້ແຂງແຮງຂຶ້ນຫລາຍສົມຄວນ. ຂໍຂອບໃຈນຳ ກອກກີ. ບັນຍາກາດທຳມະຊາດ ທາງເຂດລຶນນະບົດນີ້ ໄດ້ເຮັດໃຫ້ ອະລາດີເມຍ ອີລີຊ ກົນແຊບນອນຫລັບ, ສຸກຂະພາບກໍ່ບັບມັບດີຂຶ້ນ.

ອາການໄຂ້ໄດ້ລົດລົງເທື່ອລະກ້າວໆ. ອະລາດີເມຍ ອີລີຊ ເລີ່ມຍ່າງ ໄປມາໂດຍໃຊ້ໄມ້ຄ້ອນເທົ້າ. ເພື່ນແອບຂຶ້ນຫນ້າສີ້ດ້ວຍມີ້ຊ້າຍ, ແລະຝຶກແອບເພື່ອຟື້ນຟູການປາກເວົ້າໄປນຳ.

ຜູ້ທີ່ເປັນຄູສອນຂອງເພື່ນກໍແມ່ນ ນາເດສະດາ ກົງສະຕັງຕິນບນາ ນັ້ນເອງ. ໃນໂມງຮຽນນັ້ນ ປະຕູຫ້ອງກໍຖືກອັດແຈບ, ພາຍໃນຫ້ອງມີແຕ່ພວກເພື່ນສອງຄົນເທົ່ານັ້ນ.

ພາຍໃນເຮືອນເລີ່ມມືດັນຍາກາດມ່ວນຊື່ນຂຶ້ນມາແລ້ວ. ຫນິດທຸກຄົນຕ່າງກໍມີຄວາມເບີກບານມ່ວນຊື່ນ ເມື່ອໄດ້ຍິນສຽງຫ້ວຂອງ ອະລາດີເນຍ ອີລີຊ ດັງກ້ອງຂຶ້ນ, ຍ້ອນວ່າເພິ່ນເປັນຜູ້ມີໄສພັກມ່ວນແລະພັກຫ້ວຢູ່ແລ້ວ, ນາບາດນີ້, ເມື່ອມີເຫ້ອເຮງຂຶ້ນກ່ວາເກົ່າແລ້ວ, ອະລາດີເນຍ ອີລີຊ ຈຶ່ງມີຄວາມພໍອົກພໍໃຈຕໍ່ຄໍາເວົ້າຍອກໄຍ ຫລື ຄໍາເວົ້າອັນສະຫລາດສະຫລວຍຂອງບັນດາເພື່ອນຝູງ ທີ່ມາຍ້ຽມຢາມແຕ່ ນິດສະກູ, ຕໍ່ປຶ້ມອ່ານຫ້ວໃຫມ່ໆ ກໍຄືຕໍ່ໃບໄມ້ທີ່ມີສີເຫລືອງຢູ່ໃນສວນ. ຂະນະນັ້ນ ແມ່ນເລີ່ມເຂົ້າສູ່ລະດູໃບໄມ້ຫລົ່ນປີ ຄ.ສ ແລ້ວ.

ມື້ຫນ້ຳຂອງເດືອນຕຸລາ, ອະລາດີເນຍ ອີລີຊ ໄດ້ສັກຄ້ອນເທົ້າໄປຫາບ່ອນໄວ້ລີດຢູ່ ກອກກີແລະທໍາທ່າຄືວ່າຢາກໄປ ນິດສະກູ:ເອົາລີດອອກ, ພວກເຮົາໄປກັນເທາະ! ນາເດສະດາ ກ້ງສະຕ້ງຕິນບນາ ແລະ ນາຣິອາ ອີລີນິດນາ ຕ່າງກໍພາກັນເປັນຫ່ວງນໍາ.

- ເຮັດແນວນີ້ໄດ້ບໍ?

ແລະບັນດາແພດ ກໍໄດ້ຄັດຄ້ານເຊັ່ນດຽວກັນ.

ແຕ່ ອະລາດີເນຍ ອີລີຊ ເປັນຄົນຫນັກແຫ້ນທີ່ສຸດ. ຄັນໄດ້ຕັດສິນໃຈເຮັດອັນໃດແລ້ວແມ່ນຕ້ອງເຮັດຈົນໄດ້.

ລົດ "ໂຮນສະຮອຍ" ສີດໍາ ໄດ້ແລ່ນອອກຈາກສວນສາທາລະນະທີ່ເຕັມໄປດ້ວຍໃບໄມ້ສີແດງ, ແລ້ວມຸ້ງຫນ້າໄປທາງນິດສະກູ. ລົດແລ່ນໄປຢ່າງຊ້າໆ, ເພາະຕ້ອງຄ່ອຍໆຫລີກເສັ້ນທາງທີ່ເປັນຂຸມເປັນບ່ອ. ນິດສະກູ ໄດ້ປະກົດຂຶ້ນຢູ່ກ້ຳຫນ້ານັ້ນແລ້ວ: ບັນດາຈອມຫລ້ງຄາກ້ມໆສີເຫລືອງຄໍາຂອງໂບດ, ແຜ່ນຝາກໍາແພງເຮັດດ້ວຍຫີນສີຂາວ, ຄົ້ນຄ້ວນ ທີ່ພຸ່ງພົ້ນຂຶ້ນຕາມເສົ້ຫ້ຄ້ວນຂອງໂຮງຈັກໂຮງງານ. ເມື່ອແນມເຫັນ ນິດສະກູ, ອະລາດີເນຍ ອີລີຊ ໄດ້ປົດຫມວກແຈບຂອງຕົນອອກມາ ກວັກຍາບໆຢູ່ເທິງຫ້ວ. ສະບາຍດີ ນິດສະກູ! ໃກ້ຈະຮອດ ເກຣມແລ້ວ!

ເມື່ອຍ່າງຜ່ານປາກປະຕູຫ້ອງປະຊຸມສະພາລັດກະນິນຕິປະຊາຊົນນັ້ນ, ຫມາກຫ້ວໃຈຂອງເພິ່ນຮູ້ສຶກວ່າມັນເຕັ້ນຕຶກໆຂຶ້ນບັກແຮງໆ. ຢູ່ບ່ອນນີ້ ສໍາລັບ ອະລາດີເນຍ ອີລີຊ ແລ້ວແມ່ນມີ

ຄວາມລ້ຳເກ່ອ່ນກັບຫມິດທຸກສິ່ງຢ່າງ; ເປັນຕົ້ນໂຕະຍາວປູດ້ວຍແພຂົນແກະສີຂຽວ, ຕັ່ງນວມ ຫວາຍທີ່ຕັ້ງຢູ່ທາງຫົວໂຕະ. ທຸກສິ່ງຢ່າງ ພາຍໃນຫ້ອງນີ້ ລ້ວນແຕ່ເປັນຫນ້າຄຶດເກີ!

ເພິ່ນແນມໄປເບິ່ງທາງເບື້ອງເຕົາຝີ ຊຶ່ງຕັ້ງຢູ່ທາງແຈຫ້ອງ ແລ້ວກໍຫົວຂຶ້ນພ້ອມບາດ, ເພາະເພິ່ນຍັງຈື່, ຕອນທີ່ພວກເຂົ້ານຍາພາກັນມາລີ້ຢູ່ທາງຫລັງເຕົາຝີຄືແນວໃດ. ພວກເຂົາ ພາກັນສູບຢາ, ແລ້ວພົ່ນຄ້ອນ ມັນເຂົ້າໄປໃນທໍ່ຄ້ອນໄຟນັ້ນເລີຍ. ອະລາດີເມຍ ອີລີຊ ຫ້ານ ບໍ່ໃຫ້ສູບຢາຢູ່ໃນຫ້ອງປະຊຸມ ສະພາລັດກະມົນຕີປະຊາຊົນນີ້ຢ່າງເດັດຂາດ, ແຕ່ກໍມີສະມາຊິກ ສະພາບາງຄົນຊຶ່ງອົດບໍ່ໄດ້ ກໍເລີຍແລ່ນເຂົ້າໄປລັກລີ້ສູບຢູ່ທາງເບື້ອງຫລັງເຕົາຝີ ໃນຂະນະທີ່ ປະທານກຳລັງຄຶດເຄື່ອງບໍ່ທັນມີເວລາປ້ຳສິ່ງໃສ່ໂຕະນັ້ນ.

ຈິດໃຈຂອງ ອະລາດີເມຍ ອີລີຊ ນັ້ນ ເຕັມໄປດ້ວຍຄວາມອ່ອນນ້ອມ. ເພິ່ນມີຄວາມ ຮັກແພງບັນດາສະຫາຍເຫລົ່ານັ້ນທີ່ສຸດ.

ອະລາດີເມຍ ອີລີຊ ຢືນຄຶດຢູ່ຄາວຫນຶ່ງ, ແລ້ວ ກໍຍ່າງເຂົ້າໄປໃນຫ້ອງເຮັດວຽກຂອງ ຕົນ. ເພິ່ນແນມເບິ່ງໄປທົ່ວໆຫ້ອງເຮັດວຽກ. ເມື່ອແນມໄປເບິ່ງຮູບແຜນທີ່ພູມສາດ, ແນມ ເບິ່ງຮູບກາກມາກ, ໂທລະສັບທີ່ຕັ້ງຢູ່ເທິງໂຕະ, ແນມເບິ່ງຕູ້ໃສ່ປຶ້ມແລ້ວ, ຄວາມຄຶດທຸກສິ່ງ ທຸກຢ່າງກໍໄດ້ໄຫລເຂົ້າມາໂຮມຄືນອີກ. ອະລາດີເມຍ ອີລີຊ ບໍ່ຢາກຈາກໄປແຕ່ຢ່າງໃດ. ເພິ່ນຢາກມີຊີວິດຢູ່ແລະກັບຄືນມາຢູ່ບ່ອນນີ້ອີກ.

ເພິ່ນລຸກຂຶ້ນຢືນຢູ່ຄາວຫນຶ່ງ, ໃຊ້ສາຍຕາແນມເບິ່ງຮອບໆ ແລ້ວກໍຍ່າງເຂົ້າມາໃກ້ໆ. ຕົ້ນ ລານໃຫຍ່ທີ່ມີໃບດົກຫນາ, ປູກໃສ່ກະຖັງໄມ້ຕັ້ງໄວ້ຢູ່ໃກ້ໆປ່ອງຢ້ຽມ. ບັນດາກິ່ງກ້ານຂອງມັນນັ້ນ ຄ້າຍຄືກັນກັບຄົນຮົ່ມພີແບອອກຢູ່ຕາມເຂດຮ້ອນ. ເຂົາເຈົ້າ ໄດ້ບີລະບັດມັນເປັນຢ່າງດີ ເພາະວ່າ ອະລາດີເມຍ ອີລີຊ ໄດ້ຮ້ອງຂໍໃຫ້ຮັກສາມັນເອົາໄວ້. ແຕ່ຄາວຍັງນ້ອຍ, ຢູ່ໃນເຮືອນ ຂອງພວກເພິ່ນ ທີ່ ຊຶມບຽກ ມີຕົ້ນດອກໄມ້ຢູ່ຫລາຍຊະນິດ, ພາຍໃນຫ້ອງກິນເຂົ້າກໍມີຕົ້ນ ລານຕົ້ນຫນຶ່ງທີ່ປູກໃສ່ໃນກັ່ງໄວ້, ງ່າໃບຂອງມັນກໍດົກຫນາແລະຂຽວງາມຄຶດຈອກັນນີ້.

ຈາກນັ້ນ ເພິ່ນກໍໄດ້ໄປທ່ຽວຊຶມຕົວເມືອງ ນິດສະກູ. ເພິ່ນໄດ້ໄປເບິ່ງການວາງສະແດງ ຮູບພາບກ່ຽວກັບກະສິກຳແລະຫັດຖະກຳ.

ນັ້ນແມ່ນການວາງສະແດງຄັ້ງທຳອິດຂອງໂຊວກ! ວະລະດີເມຍ ອີລີຊ ປາກະຫນາຍາກ ເຫັນການວາງສະແດງນີ້ຢ່າງຈິດຈໍ່ທີ່ສຸດ.

ການວາງສະແດງດັ່ງກ່າວໄດ້ຈັດຢູ່ແຄມແມ່ນ້ຳມິດສະກູ, ໃກ້ໆກັບສວນສາທາລະນະ ນັ້ນ ເອງ. ແຕ່ກ່ອນ, ບ່ອນນີ້ ກໍແມ່ນບ່ອນສຳລັບກຳຂີ້ເຫຍື້ອ. ມາບັດນີ້ ຂີ້ເຫຍື້ອດັ່ງກ່າວ ແມ່ນໄດ້ຖືກຍ້ອນຍັກໄປໄວ້ທີ່ອື່ນແລ່ວ, ເຂົາເຈົ້າໄດ້ປູກຕົ້ນໄມ້ຂຶ້ນແທນ, ພ້ອມທັງໄດ້ສ້າງ ເຮືອນສຳລັບໃຊ້ເປັນບ່ອນວາງສະແດງຂຶ້ນ, ຊຶ່ງເຮືອນດັ່ງກ່າວບໍ່ຕ່າງຫຍັງກັບຕິວເມືອງນ້ອຍໆ ແຫ່ງຫນຶ່ງ ທີ່ມີຄວາມງາມທີ່ສຸດ, ຄ້າຍດັ່ງທີ່ພາສາດຢູ່ໃນເທບນິຍາຍ ນັ້ນ.

ທຸກຄົນຍັງຈົດຈຳ ປາງສີງຄາມ, ໄພອຶດຫິວ ແລະໄພລະດູຫນາວນັ້ນໄດ້ດີ, ຊຶ່ງສ້າງ ຫມິດເຫລົ່ານັ້ນ ນັ້ນຫາກໍເກີດຂຶ້ນຫວ່າງບໍ່ດົນມານີ້ເອງ.

ຍ້ອນເຫດນັ້ນແລ້ວ ຈຶ່ງວ່າ ເຮືອນໄມ້ເຫລົ່ານີ້ ບໍ່ຕ່າງຫຍັງກັບເຮືອນໃນເທບນິຍາຍ.

ແຕ່ຍັງມີສິ່ງທີ່ພລາດໄປກ່ວາ ເລື່ອງເຮືອນຢູ່ໃນເທບນິຍາຍນັ້ນອີກ, ເປັນຕົ້ນຢູ່ໃນຫ້ອງ ວາງສະແດງນັ້ນ ມີນັ້ນດາກອງເຂົ້າບະເລເຫລືອງ ແລະ ເຂົ້າບະເລດຳ, ນັ້ນດາຜັກກາດຫິວ ໃຫຍ່ໆ, ນັ້ນດາກອງນັ້ນຝະລັ່ງສີເຫລືອງແດງ, ແລະນັ້ນດາຫມາກໂມຫມາກແຕງ -ສິ່ງທັ້ງ ຫມິດເຫລົ່ານັ້ນລ້ວນແຕ່ແມ່ນເຄື່ອງປູກຂອງຝັ່ງຢູ່ຕາມທົ່ງນາແລະຮົ້ວສວນທັ້ງນັ້ນ.

ເປັນອັນຈະແຈ້ງແລ້ວວ່າ, ຊີນນະບົດໄດ້ຮັບການຟື້ນຟູຂຶ້ນມາແລ້ວ.

ນັ້ນດາໂຮງຈັກໂຮງງານຕ່າງໆ ກໍໄດ້ສົ່ງຜະລິດຕະພັນຂອງຕົນໄປຍັງບ່ອນວາງສະແດງນັ້ນ ຄືກັນ, ຊຶ່ງນັ້ນໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງແລ້ວວ່າຕິວເມືອງໄດ້ຫລຸດພົ້ນຈາກສະພາບ ແຫ່ງຄວາມທຸກຍາກລຳບາກ ແລະສະພາບແຫ່ງຄວາມສັບສົນວຸ້ນວາຍແລ້ວ.

ອະລາດີເມຍ ອີລີຊ ໄດ້ກັບຈາກມິດສະກູ, ເຖິງວ່າຈະມີຄວາມອິດເມື່ອຍກໍຕາມ, ແຕ່ ເພິ່ນກໍຮູ້ສຶກວ່າ ເບີກບານໃຈແລະມີຊີວິດຊີວາເປັນຢ່າງຍິ່ງ.

ແລະຂະນະນັ້ນ ນາເດສະດາ ກົງສະຕັງຕິນິບນາ ໄດ້ຫວນຄິດເຖິງຕອນທີ່ ເລນິນ ໄດ້ ໄປປາໄສຢູ່ໂຮງມະໂຫລະສິບ ບອນຊອຍ, ໃນມື້ວັນທີ ๔๐ ເດືອນ ພະຈິກ ປີ ๑๙๔๔, ຊຶ່ງ ແມ່ນການກ່າວຄຳປາໄສຄັ້ງສຸດທ້າຍຂອງເພິ່ນ, ກ່ອນຫນ້າທີ່ຈະລົ້ມເຈັບ.

ໃນຄຳປາໄສນັ້ນ ເລນິນ ໄດ້ເວົ້າວ່າ: "ໂດຍປະຕິບັດຕາມແຜນການ ແນບ ນັ້ນ, ປະເທດລັດເຊຍ ຈະກາຍເປັນປະເທດສັງຄົມນິຍົມປະເທດຫນຶ່ງ".

ຮັກຊີວິດ

ລິດເລື່ອນ ໄດ້ແລ່ນບຸພ່າໄປຕາມເທິງຫນ້ານ້ຳກ້ອນ. ເມັດຫິມະໄດ້ຟົ້ງກະເດັນໄປຕາມບາດຕີນຂອງມ້າ. ບັນດາລໍ້ເລື່ອນທີ່ເຮັດດ້ວຍໄມ້ໄດ້ດັງອຶດໆອາດໆໄປຕາມທາງ. ຕາເວັນຕົກດິນແລ້ວ, ແຕ່ວ່າທາງຟາກຂອບຟ້າ ເບື້ອງຕາເວັນຕົກພຸ້ນ, ທ້ອງຟ້ຍັງມີແສງສະຫວ່າງສີທອງພຸ່ງກະຈາຍຢູ່. ເງົາແຫ່ງຄວາມມືດ ໄດ້ຄືບຄານເຂົ້າມາຢ່າງວ່ອງໄວ, ພູມພາບສີຂາວຊຶ່ງປົກຄຸມດ້ວຍຫິມະໄດ້ຄ່ອຍໆມືດຄ້ຳເຂົ້າເທື່ອລະກ້າວໆ. ຕົນປ່າ ຊຶ່ງຢູ່ໄກໆພຸ້ນໄດ້ມືດສະຫນິດແລ້ວ, ແລະມາບັດນີ້, ຢູ່ຕາມທ້ອງຟ້າ ໄດ້ມີຫມູ່ດວງດາວພຸ່ງແສງອອກມາຢ່າງງົບໆແລ້ວ.

ອະລາດີເມຍ ອີລີຊ ໄດ້ກັບມາຈາກລ່າເນື້ອ. ເພິ່ນຍັງບໍ່ທັນໄດ້ເທື່ອ, ເພິ່ນພຽງແຕ່ເປັນຜູ້ໄປເບິ່ງຄືນອື່ນເຂົາລ່າເທົ່ານັ້ນ. ແຕ່ນັ້ນ ມັນກໍໄດ້ນຳເອົາຄວາມມ່ວນຊື່ນມາສູ່ເພິ່ນຢ່າງລົ້ນເຫລືອແລ້ວ. ເພິ່ນມັກການລ່າເນື້ອນັ້ນ, ເພິ່ນໄດ້ໄປທ່ຽວຕາມປ່າ, ຕັ້ງໃຈຟັງສຽງແລະເອົາໃຈໃສ່ນຳສິ່ງທີ່ມີຊີວິດຢູ່ພາຍໃນປ່າ ພ້ອມທັງຕິດຕາມຮອຍຕີນຂອງບັນດາສັດຕ່າງໆ. ເພິ່ນມັກຍິງປືນທຸ້ສຸດອີກດ້ວຍ.

ແຕ່ມີຫລາຍຄັ້ງຊຶ່ງຢູ່ໃນລະຫວ່າງການລ່າເນື້ອນັ້ນ, ອະລາດີເມຍ ອີລີຊ ມີຫນ້າທີ່ຕ້ອງຍິງແຕ່ເພິ່ນຜັດບໍ່ຍິງ. ມີເທື່ອຫນຶ່ງ ແລະກໍຢູ່ໃນລະດູຫນາວຄືແນວນີ້ແລ້ວ, ພວກເພິ່ນໄດ້ພາກັນໄປລ່າຫມາຈອກດ້ວຍແຜ່ນຫຸ່ງ: ຄືພວກທີ່ໄປລ່າເນື້ອໄດ້ນຳເອົາຫຸ່ງແດງໄປປັກອ້ອມຢູ່ເຂດປ່າໃຫຍ່ແຫ່ງຫນຶ່ງ ຊຶ່ງຢູ່ແຫ່ງນັ້ນມັກມີຫມາຈອກ. ເມື່ອມັນເຫັນແຜ່ນຫຸ່ງແດງແລ້ວ, ກໍຈະເກີດມີຄວາມຢ້ານກົວ ຈາກນັ້ນກໍຈະຊອກຫາທາງອອກ. ພວກໄປລ່າເນື້ອໄດ້ຈ່ຽປ່ອງອອກໄວ້ບ່ອນຫນຶ່ງ. ພວກເຂົາຮ້ອງໂຮ ເພື່ອໄລ່ຫມາຈອກໃຫ້ແລ່ນມາທາງອອກນັ້ນ.

ອະລາດີເມຍ ອີລີຊ ກຳປັ່ນຢືນກ້າຢູ່ທາງອອກ. "ກ້າເບິ່ງ, ຫາກພົ້ນໜ້ານ້ຳແລ້ວຊິຍ້ຽງໃຫ້ເສັດກັບບ່ອນໂລດເທລະ!" ທັນໃດນັ້ນ -ຈັ່ງແມ່ນປະຫລາດແທ້ໆ! -ຫມາຈອກໂຕຫນຶ່ງໄດ້ແລ່ນກຸ່ນໆມາແຕ່ທາງຫລັງຕົ້ນແປກ ແລະ ແລ່ນກ້ຽວມາທາງເພິ້ນ. ແຕ່ ອະລາດີເມຍ ອີລີຊ ກັບຢືນງົມຢູ່ລ້ານ. ຫມາຈອກໂຕນີ້ເກີນວ່າງາມຫລາຍແທ້ໆ, ມັນມີຂົນສີເຫລືອງຫມາກກ້ວງສຸກ, ນິລິບແທລນ ແລະຫາງທີ່ຫຸ້ມຫໍ່ດ້ວຍເສັ້ນຂົນອັນງົດງາມ! ມັນແລ່ນເຂົ້າມາຫາປາຍປືນໃກ້ເຂົ້າຊັກໄຊ້, ແຕ່ ອະລາດີເມຍ ອີລີຊ ຜັດບ່ຍ້ຽ. ຍ້ອນວ່າຫມາຈອກໂຕນັ້ນ ງາມຫລາຍນັ້ນເອງ. ແລະອາກາດໃນນັ້ນກ້ຽດງາມທີ່ສຸດ, ແຈ່ມໃສແລະເຕັມໄປດ້ວຍຫິມະເຫລືອມຍິບຍາບຄັກນັກນັ້ນເອງ.

ຄົດເຫັນເລື່ອງທີ່ເກີດກັບ ຫມາຈອກໂຕດັ່ງກ່າວແລ້ວ, ອະລາດີເມຍ ອີລີຊ ກໍໄດ້ແຕ່ຍ້ືມອອກມາ.

ລໍ້ເລື່ອນໄມ້ທີ່ເລື່ອນໄປຕາມຫິມະໄດ້ສົ່ງສຽງດັງກ້ອງຂຶ້ນຄ້າຍດັ່ງສຽງລະຄັງດັງ. ຟ້າແລ້ວມ່ວນຫູແທ້ໆ! ຍາມຄ່ຳຄືນໄດ້ຫຍັບໃກ້ເຂົ້າມາແລ້ວ, ເສງສະຫວ່າງສີທອງຂອງຍາມຄ່ຳໄດ້ຈົດຈາງລົງເປັນໄລຍະໆ. ຢູ່ທາງເບື້ອງຫລັງປ່າພຸ້ນ ເດືອນເພັ້ງກໍໄດ້ຜຸດພົ້ນສູ່ທ້ອງຟ້າ.

ນາເດສະດາ ກົງສະຕັງຕິນິບນາ ໄດ້ເຫນເບິ່ງເດືອນເພັ້ງ ໂດຍຜ່ານທາງປ່ອງຢ້ຽມແລະເວົ້າກັບ ມາຣິອາ ອີລິນິດນາ ວ່າ:

-ນັ້ນ ຄ້າຍຄືກັບໝຸນນີ້ແລ້ວ. ເບິ່ງແມ, ເດືອນເພັ້ງໃນນັ້ນງາມທີ່ສຸດເລ່ຍ.

-ຈິດໃຈຂອງພວກເຮົາຮູ້ສຶກວ່າເບົາບາງລົງຫລາຍ, ຍ້ອນວ່າເຫັນ ອະລາດີເມຍ ອີລີຊ ມີ ສຸຂະພາບ ດີຂຶ້ນຫລາຍແລ້ວ. ເອ້ຍລອງຄົດເບິ່ງແມ, ລາວຈົນວ່າສາມາດໄປລ່າເນື້ອໄດ້ແລ້ວ, ເກີນວ່າລາວເກັ່ງ! -ມາຣິອາ ອີລິນິດນາ ຕອບ.

-ຊັ້ນນ້ອງຍັ້ງຈ່ ຕອນລາວຢືນຫ້ວໃນຫຸ້ບນປີໃຫມ່ນັ້ນຫລໍ່ບ, ຄ້າຍຄືກັນກັບສະໄຫມກ່ອນບ່ໍ່ມີຜິດ!

ທ້າງສອງຕ່າງກໍພາກັນຫວນຄົດເຖິງຕົ້ນແປກປີໃຫມ່ ໄດ້ຈັດຂຶ້ນທີ່ຫມູ່ບ້ານ ກອກກີ, ເພື່ອພວກລູກຫລານນ້ອງນຸ່ງກຳມະກອບນັ້ນ, ຄົດເຫັນເລື່ອງເຫລົ່ານັ້ນດ້ວຍຄວາມຈັບໃຈ.

ອະລາດີເມຍ ອີລີຊ ໄດ້ກັບມາຈາກໄປ ທ່ອງປ່າໃນຍາມລະດູຫນາວ, ແກ້ມທັ້ງສອງ ເບື້ອງເພິ່ນແດງຮຸ່ນໆ, ດວງຕາທັ້ງຄູ່ເປັນປະ ກາຍແວວວາວຢ່າງອັດສະຈັນ. ອາກາດອັນ ເຢືອກເຢັນ, ການໄປລ່າເນື້ອ ແລະການຂີ່ລົດ ເລື່ອນນີ້ ໄດ້ເຮັດໃຫ້ເພິ່ນມີເຫື່ອມີແຮງຄືນ ມາແລະເຮັດໃຫ້ຈິດໃຈຊື່ນບານຂຶ້ນ. ແຕ່ຕາມ ທຳນຽມແລ້ວ ກໍຕ້ອງນອນພັກຜ່ອນແດ່. ບັນ ດານາຍແພດແນ່ນບໍ່ໄດ້ລືດລະ ໃນການເບິ່ງ ແຍງ ອະລາດີເມຍ ອີລີຊ ຢູ່ຕະຫລອດເວລາ. ເພິ່ນຕ້ອງໄປນອນພັນຜ່ອນ!

ໃນເວລາ ທີ່ ອະລາດີເມຍ ອີລີຊ ພັກ ຜ່ອນ ນັ້ນ, ນາເດສະດາ ກົງສະຕັງຕິນົບນາ ແລະ ມາຣີອາ ອີລີນິດນາ ບໍ່ໄດ້ເວົ້າຈາຕໍ່ກັນ ແຕ່ຢ່າງໃດ, ນິແຕ່ຫ້າມກັນ, ດ້ວຍວິທີໃຊ້ນິ້ວ ມືຂຶ້ນອັດສົບ: ຊິດ! ເພື່ອເປັນສັນຍານບໍ່ໃຫ້ ເຮັດໃຫ້ເພິ່ນຕື່ນ.

ໃນໃຈຂອງທັ້ງສອງ ເຕັມປ່ຽມໄປດ້ວຍ ຄວາມຊື່ນຊົມຍິນດີ, ພວກເຂົາເຈົ້າໄດ້ພາກັນ ຄຶດຫາອະນາຄົດດ້ວຍຄວາມຫວັງ .ບັນດານາຍ ແພດ ກໍໄດ້ເຮັດໃຫ້ພວກເຂົາເຈົ້າມີຄວາມ ທຸ່ນທ່ຽງໃຈ. ແພດຜູ້ຫນຶ່ງໄດ້ເວົ້າວ່າ:

- ພວກເຮົາຈະປິ່ນປົວເພິ່ນໃຫ້ຫາຍເປັນ

ປົກກະຕິ ພາຍໃນລະດູບານໃຫມ່ນີ້ຢ່າງແນ່ນອນ.

ໃນຕອນກາງຄືນ ນາເດສະດາ ກົງສະຕັງຕິນິບນາ ມັກອ່ານຫນັງສືໃຫ້ ວະລາດິເມຍ ອີລິຊ ຟັງສະເຫມີ. ຕອນເພິ່ນເລີ່ມກັບຄືນສູ່ສຸຂະພາບປົກກະຕິນັ້ນ ນາເດສະດາ ກົງສະຕັງຕິນິບນາໄດ້ອ່ານຫນັງສືພິມ "ສັດຈະທຳ" ໃຫ້ເພິ່ນຟັງທຸກໆມື້. ແຕ່ວ່າມື້ນັ້ນ ນາເດສະດາ ກົງສະຕັງຕິນິບນາ ໄດ້ອ່ານເລື່ອງຂອງ ແຈກ ລອນດອນ ສູ່ເພິ່ນຟັງ.

ວະລາດິເມຍ ອີລິຊ ນັ່ງຢູ່ເທິງຕັ່ງນວມ, ຢູ່ນອກເຮືອນພຸ້ນມີສວນຕົ້ນໄມ້ທີ່ປົກຄຸມໄປດ້ວຍຫິມະ ແຕ່ຂະນະນີ້ເບົ່າຜ່ານປ່ອງຢ້ຽມບໍ່ສາມາດເຫັນຫຍັງໄດ້, ເພາະວ່າ ຫິມະ ໄດ້ທະຍອຍກັນຕົກລົງມາຕັນແກ້ວປ່ອງຢ້ຽມເອົາໄວ້. ເມັດຫິມະທີ່ເກາະຫ້ອຍຢູ່ຕາມແກ້ວປ່ອງຢ້ຽມໄດ້ກ້າມເປັນລວດລາຍງົດງາມຫລາຍເບົ່າຄົ້ງຮູບຕົ້ນຜັກກູດຫລືຮູບດອກໄມ້ອື່ເສດໃນເທບນິຍາຍ.

ປົ້ນອ່ານທີ່ພາດຫົວເລື່ອງວ່າ "ຮັກຊີວິດ": ຄົນຜູ້ຫນຶ່ງ ທີ່ກຳລັງອົດຫົວໄດ້ຍ່າງຜ່ານທະເລ ຫິມະ. ຄົນຜົ້ນນ້ອຍເພຍຫລາຍທີ່ສຸດຈົນຄາມືຂາ ແຕ່ເຂົາກໍອົດສາລືເລືອໄປຕາມຫິມະ. ມີຫມາໄນໂຕຫນຶ່ງຍ່າງລາກຂາຕິດຕາມເຂົ້າໄປ. ຫມາໄນດັ່ງກ່າວ ກຶກເຈັບແລະໃກ້ຈະຕາຍເຫມືອນກັນ! ໄດ້ມີການຕໍ່ສູ້ກັນຂຶ້ນລະຫວ່າງຫມາແລະຄົນ. ໃຜຈະເປັນຜູ້ຊະນະ? ຫມາບໍ? ບໍ່ແມ່ນ. ຄົນຕ້ອງເປັນຜູ້ຊະນະ. ຄວາມຮັກຊີວິດຢ່າງດຸດັ່ນ ໄດ້ສ້າງພະລັງໃຫ້ແກ່ຄົນ. ເພາະຄົນມີເປົ້າຫມາຍ - ເຮືອກຳປັ່ນແລ່ນທະເລ ໄດ້ມາປະກົດຕົວຢູ່ແຄມທະເລນັ້ນຢູ່ແລ້ວ. ຢູ່ບ່ອນນັ້ນຫມາຍເຖິງການຍັງມີຊີວິດ. ແລະຄົນໄດ້ພະຍາຍາມຄານຈົນໄປເຖິງທີ່ນັ້ນ.

ວະລາດິເມຍ ອີລິຊ ມັກນິຍາຍເລື່ອງນີ້ຫລາຍທີ່ສຸດ. ນາເດສະດາ ກົງສະຕັງຕິນິບນາ ໄດ້ເຂົ້າໃຈວ່າ ເພິ່ນເກີດມີຄວາມຕື່ນເຕັ້ນໃຈຍ້ອນຫຍັງ. ມັນໄດ້ສະແດງໃຫ້ເຫັນແນວຄິດຈິດໃຈຂອງຄົນທີ່ອົງອາດກ້າຫານ, ມີຄວາມເດັດດ່ຽວ ແລະ ມານະຈິດທີ່ຈະບຸກບືນຂຶ້ນໄປສູ່ການມີຊີວິດ ໂດຍບໍ່ຍອມຈຳນົນແຕ່ຢ່າງໃດ!

ວະລາດິເມຍ ອີລິຊ ກໍບໍ່ໄດ້ຍອມຈຳນົນແຕ່ຢ່າງໃດ. ຜ່ານການອ່ານເລື່ອງໃນມື້ນີ້ແລ້ວ, ນາເດສະດາ ກົງສະຕັງຕິນິບນາ ຈຶ່ງສາມາດເຂົ້າໃຈໄດ້ເຖິງແນວຄິດແລະຄວາມຮູ້ສຶກຂອງເພິ່ນ

ທີ່ໄດ້ສະແດງອອກມານັ້ນ. ທັງຫມົດນັ້ນ ລ້ວນແຕ່ແມ່ນການຕໍ່ສູ້ເພື່ອກັບຄືນໄປຫາຊີວິດ ແລະການອອກແຮງງານ.

ໃນຄ່ໍາຄືນມື້ນັ້ນຂອງເດືອນມັງກອນ, ນາເດສະດາ ກົງສະຕັງຕິນິບນາ ຄິດບໍ່ເຖິງດອກ ວ່າ ວະລາດີເມຍ ອີລີຊ ຈະມີຊີວິດລັ້ນເຖິງພຽງນັ້ນ.

ພະຍາດຄັ້ງໃຫມ່ ໄດ້ບຸກລຸກເຂົ້າມາຢ່າງກະທັນຫັນອີກເທື່ອຫນຶ່ງ, ແລະໂຫດຮ້າຍ ທ່ີສຸດ.

ໃນມື້ວັນທີ ๘๑ ເດືອນມັງກອນ ປີ ๑๙๘๔, ເວລາຫົກໂມງແລງຫ້າສິບນາທີ ທ່ີ ຫມູ່ບ້ານກອກກີ, ວະລາດີເມຍ ອີລີຊ ກໍໄດ້ຈາກໄປຊ່ົວນິລັນດອນ.

ลุกขึ้น, พวกสะหายเอ๊ย!

ບັນດານັກຮົບກອງທັບແດງ ແລະກອງຫລອນຕັ້ງແຕ່ສະໄຫມສົງຄາມກາງເມືອງ ຫລາ ຄົນຍັງຈື່ຈໍາຫົວລົດໄຟຫມາຍເລກ "ອູ ๑๘๓" ນັ້ນໄດ້ດີ. ເພາະຕະຫລອດ ໄລຍະ ສົງຄາມ ກໍແມ່ນລົດໄຟຄັນນ້ີແລ້ວ, ທ່ີໄດ້ຂົນສົ່ງບັນດານັກຮົບແລະອາວຸດອອກສູ່ສະຫນາມຮົບ ແລະ ທັງໄດ້ຂົນເອົາບັນດາຄົນເຈັບຈາກສະຫນາມຮົບກັບຄືນເມືອຫລັງ.

ລົດໄຟດັ່ງກ່າວ ເຮັດວຽກຢ່າງບໍ່ມີຄວາມອຶດເມື່ອຍ. ພວກທະຫານຂາວ ໄດ້ໃຊ້ລູກປືນ ພ້ອມຫາມາກແຕກສຸມເຂົ້າໃສ່ມັນຢ່າງປ່ວງບ້າ ຈົນເຮັດໃຫ້ມັນເປ່ເພ. ຕົກມາຮອດຕອນທ້າຍ ຂອງສົງຄາມ, ຫົວລົດໄຟດັ່ງກ່າວແມ່ນຖືກທຳລາຍຢ່າງສິ້ນເຊີງ ຈົນບໍ່ສາມາດໃຊ້ການໄດ້ອີກ ແລ້ວ.

ຕອນທີ່ປະຊາຊົນ ໂຊວຽດ ໄດ້ທຳການຟື້ນຟູພັດທະນາເສດຖະກິດພາຍໃນປະເທດນັ້ນ ເຂົາເຈົ້າກໍຍັງຈື່ຈຳມັນຢ່າງບໍ່ຫລົງລືມໄດ້. ໃນເວລານັ້ນ ເຂົາເຈົ້າ ກໍໄດ້ຄົ້ນພົບ "ອູ ໑໔" ຢູ່ທີ່ປ່າຊ້າຫົວລົດໄຟ ແລະໄດ້ຕິກລົງກັນວ່າ: ອ້າຍນ້ອງເອີຍ, ຈົ່ງສ້ອມແປງມັນຄືນ!

ພວກເຂົາໄດ້ພາກັນສ້ອມແປງ ຫົວລົດໄຟຫມາຍເລກ "ອູ ໑໔" ຄືນໃຫມ່. ບັນດາ ນາຍຊ່າງນັ້ນລ້ວນແຕ່ ແມ່ນມະຫາຊົນຊົ່ວບໍ່ໄດ້ສັງກັດພັກ, ແຕ່ພວກເຂົາກໍໄດ້ຕັດສິນໃຈສ້ອມ ແປງຫົວລົດໄຟນີ້ໃຫມ່ ເພື່ອມອບໃຫ້ແກ່ພັກຄອມມຸຍນິດ. ພິເສດແມ່ນພວກເຂົາໄດ້ສ້ອມ ແປງໃນເວລານອກໂມງ, ແລະໄດ້ແຕ່ງຕັ້ງໃຫ້ ອະລາດີເມຍ ອີລີຊ ເປັນຄົນຂັບກົດມະສັກ.

ໃນມື້ເສົ້າສະຫລົດໃຈ, ຕອນ ເລນິນ ເສຍຊີວິດນັ້ນ, ກໍຍັງແມ່ນຫົວລົດໄຟຄັນນີ້ທີ່ ໄດ້ຮັບມອບຫມາຍໃຫ້ເປັນລົດແກ່ຂະບວນໄວ້ອາໄລຕັ້ງແຕ່ຫມູ່ບ້ານ ກອກກີ ເຂົ້າມາຫາ ນິຄ ສະກູ.

ຕະຫລອດສອງຄືນກັບຫນຶ່ງມື້, ບັນດາຊາວນາຈາກຫມູ່ບ້ານໃກ້ໄກ ໄດ້ພາກັນຍ່າງມາທີ່

ຫມູ່ບ້ານ ກອກກີ ເພື່ອໄວ້ອາໄລແກ່ດວງວິນຍານຂອງທ່ານຜູ້ນຳ.

ອາກາດຫນາວເຢືອກເຢັນທີ່ສຸດ, ລົມຫນາວສະບັ້ນໄດ້ພັດມາເປັນຮູດໆ. ບັນດາຕົ້ນໄມ້ຢູ່ໃນສວນ ກອກກີ ຕ່າງກໍເອ່ນໂອນໄປຕາມກະແສລົມຕຳຕ້ອງເຂົ້າກັນດັ່ງເປັນສຽງຄວາກໆ. ຕາມກິກເສົາຂອງເຮືອນຕ້ອນຮັບແຂກຫລັງໃຫຍ່ໄມ້ກຸກຫຸ້ມຫໍ່ດ້ວຍແຜ່ນແພສີດຳແລະ ສີແດງ. ຕາມເສັ້ນທາງມີງ່ຳໄມ້ແປກປັກເປັນກັນແກວ. ຢູ່ເທິງຫນ້າຫີນສີຂາວກໍເຕັມໄປດ້ວຍດວງດອກໄມ້ຍາຍກອງກັນໄວ້ໃນລັກສະນະທີ່ໂສກເສົ້າຫ່ວງໃຫ້ງ.

ບັນດາກຳມະກອນ, ຊາວນາ, ບັນດານັກຄອມມຸຍນິດ, ບັນດາສະຫາຍ, ບັນດາສະມາຊິກໃນຄະນະລັດຖະບານໄດ້ພາກັນຫາມໂລງສົບອອກຈາກເຮືອນ, ເພື່ອໄປຍັງສະຖານີລົດໄຟ, ຊຶ່ງມີໄລຍະໄກປະມານສີ່ແວກ. ແລະກໍແມ່ນຫົວລົດໄຟຫມາຍເລກ "ອູ ເຕ" ນີ້ເອງທີ່ໄດ້ນຳເອົາຂະບວນອັນເສົ້າສະຫລົດໃຈ ເພື່ອໄປຍັງນິຄສະກູ.

ຄົນຂັບນັ້ນແມ່ນ ນາຄເວອີ ກູເຊີນິກ ລູຊິນ, ຊຶ່ງເຄີຍຂັບລົດໄຟມາໄດ້ຊາວເອັດປີແລ້ວ. ມາບັດນີ້ ເຂົາໄດ້ມາຂັບຫົວລົດໄຟຫມາຍເລກ "ອູ ເຕ" ໂດຍບໍ່ໄດ້ຈອດແວ່ຕາມສະຖານີໃດຫນຶ່ງ. ເຂົາຕ້ອງໄດ້ນຳເອົາໂລງສົບຂອງ ເລນິນ ໄປເຖິງ ນິຄສະກູ ກ່ອນເວລາຫນຶ່ງໂມງກ່ຽງ.

ຕະຫລອດເສັ້ນທາງລົດໄຟ, ບັນດາຊາວນາໄດ້ພາກັນມາຢືນແຫນ້ນອັ່ງອໍຕັນທາງເອົາໄວ້.

ເມື່ອ ລົດໄຟເຂົ້າໄປໃກ້ໆ, ມັນໄດ້ສົ່ງສຽງໂຫວດບາດຍາວໆຂຶ້ນ ເພື່ອສັນຍານໄຟ, ແຕ່ທຸກຄົນກໍຍັງຄົງຢືນບໍ່ເຫນັງບໍ່ຕີງຢູ່ຢ່າງງຽບໆ. ລົດໄຟໄປບໍ່ທັນເຖິງສະຖານີແຕ່ກໍຕ້ອງໄດ້ຢຸດ, ແລະທັ່ງອາຍ ສີດດ້ວຍທ່າທີທີ່ຫນັກຫນ່ວງ. ຄົນຂັບລົດໄຟໄດ້ຍ່າງອອກມາຈາກຫົວລົດໄຟ, ແລ້ວມາຢືນຢູ່ເທິງຂັ້ນໄດ.

- ພວກສະຫາຍທັ່ງຫລາຍ! - ຄົນຂັບລົດເວົ້າຂຶ້ນ. - ໃນລົດຄັນນີ້ມີ ອະລາດີເລຍ ອີລີຊ ຊຶ່ງແມ່ນຄົນຂັບກົດີມະສັກ ໄດ້ຮ່ວມເດີນທາງມານຳກັນກັບຂ້ອຍ. ຂ້ອຍໄດ້ສັນຍາກັບ ອະລາດີເມຍ ອີລີຊເອົາໄວ້ວ່າ ຈະບໍ່ໃຫ້ຊັກຊ້າເສຍເວລາແມ່ນແຕ່ນາທີດຽວ. ມັນ ຂ້ອຍໄດ້ຮັບ

ຄຳສັ່ງວ່າຕ້ອງໄປໃຫ້ເກີ່ງ ນິດສະກູ ໃນຕອນບ່າຍຫນໍ່ງໂມງ. ດັ່ງນັ້ນພີ່ນ້ອງທັ້ງຫລາຍ ຈົ່ງ ຊ່ວຍຂ້ອຍ ໃຫ້ໄດ້ປະຕິບັດຕາມຄຳສັນຍານັ້ນສາເທາະ. ຂ້ອຍໄດ້ສັນຍາກັບ ອີລີຊ ແລ້ວ...

ແລ້ວ ເຂົາກໍຮ້ອງໄຫ້ຂຶ້ນ. ທຸກຄົນຕ່າງກໍຮ້ອງໄຫ້ເຫມືອນກັນ, ແລະຫຍັບຫລີກອອກ ໄປຢູ່ສອງຟາກທາງ ເພື່ອເປີດທາງໃຫ້ຂະບວນລົດດັ່ງກ່າວ.

ທີ່ ນິດສະກູ ບັນດາສະຫາຍໄດ້ຕິບຕໍ່ຫາມໂລງສົບຂອງ ອີລີຊ ທີ່ເຄົາລົບຮັກອີກເທື່ອ ຫນໍ່ງໄປຕາມກະຫນົນເສັ້ນຕ່າງໆ, ຝູງຄົນເປັນຈຳນວນພັນໆໄດ້ຄ່ອຍຍ່າງມາທາງສຳນັກງານ ກຳມະບານຢ່າງງົມໆ.

ທັນໃດນັ້ນ, ສຽງເຮືອບິນກໍໄດ້ດັງກ້ອງໄປທົ່ວທ້ອງຟ້າ. ບັນດາເຮືອບິນໄດ້ບິນເວີ່ນວົງ ຕ່ຳໆຈົນເກືອບຈຸຫລັງຄາເຮືອນ, ພ້ອມກັນນັ້ນມັນກໍໄດ້ຫວ່ານເຈ້ຍນ້ອຍປົວໄປທົ່ວທຸກບ່ອນ, ເບິ່ງແລ້ວບໍ່ຕ່າງຫຍັງກັບຝູງຫມູ່ນົກກາງແກສີຂາວ. ທຸກຄົນຕ່າງກໍຈັບຂຶ້ນມາອ່ານ. ໃບປົວ ດັ່ງກ່າວໄດ້ເວົ້າກ່ຽວກັບ ເລນິນ.

ຢູ່ຕາມເສັ້ນທາງແລະຕາມແຕ່ລະສະຫນາມຫລວງໄດ້ມີການຕິດຕັ້ງຫໍຂ່າວ ເພື່ອສະ ເຫນີຊີວະປະຫວັດຫຍໍ້ຂອງ ເລນິນ. ຜ່ານມາຍ້ອນວ່າ ເລນິນ ເປັນຄົນທີ່ສະຫງ່ຳງາມຈົງຮັກ ຕິວທີ່ສຸດ, ເພິ່ນບໍ່ອະນຸຍາດໃຫ້ຂຽນສິ່ງໃດກ່ຽວກັບໂຕເພິ່ນເດັດຂາດ, ບໍ່ວ່າຈະຢູ່ໃນກໍລະນີ ໃດກໍຕາມ.

ມາບັດນີ້, ເພິ່ນບໍ່ໄດ້ມີຊີວິດຢູ່ອີກແລ້ວ, ປະຊາຊົນໄດ້ພາກັນຍືນຈຸ້ມກັນຢູ່ໃກ້ໆກັບແຜ່ນ ກະດານໄມ້ ເພື່ອອ່ານ ຊີວະປະຫວັດຫຍໍ້ ກ່ຽວກັບຊີວິດທີ່ຍິ່ງໃຫຍ່ຂອງ ເລນິນ.

ອາກາດຫນາວທີ່ສຸດ ຢູ່ຕາມເສັ້ນທາງທຸກແຫ່ງຂອງນະຄອນ ນິດສະກູ ໄດ້ມີການດັ່ງ ກອງໄຟຂຶ້ນ. ຜູ້ຄົນໄດ້ແຫ່ແຫນກັນໄປສູ່ສຳນັກງານກຳມະບານເປັນແຖວຍາວຍົດຈົນບໍ່ອາດ ຄັນຄືວ່ານັບໄດ້ ຕະຫລອດມື້ຕະຫລອດຄືນເລີຍ. ພວກເຂົາພາກັນຍຸດຝືງໄຟຢູ່ຕາມກອງ ໄຟແຕ່ລະບ່ອນຫນ້ອຍຫນໍ່ງ ແລ້ວກໍພາກັນຍ່າງຕໍ່, ຫລືວ່າບາງຄົນກໍຍືນຫົບຕີນເພື່ອບໍ່ໃຫ້ ເຢັນຕີນໂພດ, ທັງນີ້ກໍເພາະວ່າ ຝູງຄົນຫລາຍໂພດ, ດັ່ງນັ້ນຕ້ອງໄດ້ກ້າວຍ່າງຊ້າໆ.

ໃນນັ້ນມີທັງຄົນ ນິດສະກູ ເອງ ແລະຜູ້ຄົນທີ່ມາຈາກ ທົ່ວທຸກແຫ່ງພາຍໃນປະເທດ

ໂຊວຫ: ເປັນຕົ້ນມີທັງຄົນລັດເຊຍ ແລະ ອູເກຣນ, ອາກເມນີ ແລະ ຄາຊັກ, ເບໂລຸດ ຊີ ແລະກຣູເຊຍ...ບັນດາມັກຄອມມຸຍນິດ ແລະກຳມະກອນຈາກຕ່າງປະເທດກໍໄດ້ມາຮ່ວມ ເຊັ່ນດຽວກັນ.

ທີ່ ສຳນັກງານກຳມະບານ, ໂລງສົບຂອງ ເລນິນ ຕັ້ງຢູ່ທ່າມກາງທະເລດອກໄມ້, ມີສຽງ ດົນຕີບັນເລງຂຶ້ນຄ່ອຍໆ. ທຸກຄົນພາກັນຍ່າງໄປດ້ວຍບາດກ້າວຊ້າໆແລະມີຄຽງນ.

ພິທີປົງສົບຂອງ ອະລາດີເມຍ ອີລີຊ ໄດ້ມີຂຶ້ນໃນມື້ວັນອາທິດທີ ๔ๅ ເດືອນມັງກອນ, ເວລາສີ່ໂມງ, ຕາມໂມງມົດສະກູ.

ຢູ່ທີ່ສະຫນາມແດງ ເພິ່ນໄດ້ທຳການສ້າງສຸສານໄວ້ແລ້ວ ເປັນທີ່ຮຽບຮ້ອຍ. ສຸສານດັ່ງ ກ່າວ ກໍຖືກສ້າງຂຶ້ນໃນໄລຍະສາມມື້ສາມຄືນແລະກໍຢູ່ໃນລະຫວ່າງມື້ທີ່ມີອາກາດຫນາວເຢັນ ທີ່ສຸດ...ເຂົາເຈົ້າໄດ້ພາກັນຂຸດລະເບີດດິນ, ໄຊ້ໄຟລົນເພື່ອເຮັດໃຫ້ແຜ່ນຫີນແຂງໆສະ ຫລາຍຕິວ, ຈາກນັ້ນ ສຸສານອັນສວຍງາມແລະເດັ່ງຂຶ້ນກໍໄດ້ປະກົດເປັນຫລັງຂຶ້ນ. ໃນເວລາ ນັ້ນ ສຸສານດັ່ງກ່າວແມ່ນເຮັດດ້ວຍໄມ້, ຕໍ່ມາ ເພິ່ນໄດ້ດັດແປງສຸສານອັນໃຫຍ່ແຫ່ງນີ້ດ້ວຍ ຫີນອ່ອນ.

ໃນຕອນເຊົ້າຂອງວັນທີ ๔ๅ ເດືອນມັງກອນ ບັນດາຜູ້ຕາງຫນ້າຂອງແຕ່ລະໂຮງງານ ຢູ່ຕາມຕົວເມືອງຕ່າງໆ ແລະບັນດາຜູ້ຕາງຫນ້າປະເທດສາທາລະນະລັດ ໂຊວຫ, ຕະ ຫລອດທັງບັນດາພັກຄອມມຸຍນິດຕ່າງປະເທດກໍໄດ້ຫລັ່ງໄຫລມາທີ່ສະຫນາມແດງ. ຕັ້ງແຕ່ ເຊົ້າ, ພາຍໃຕ້ທ້ອງຟ້າອັນຫນາວເຢັນຂອງເດືອນມັງກອນນັ້ນ, ໂລງສົບ ຂອງ ອີລີຊ ໄດ້ຖືກວາງໄວ້ເທິງແທ່ນສູງຊຶ່ງປົກດ້ວຍຜືນທຸງສີແດງ.

ແຖວຫລົດຕີດົກຢືນນິ່ງບໍ່ເຫນັງຕີງ. ສະຫນາມແດງກໍມິດງຽບເຍືອກເຢັນຄືກັບເງື ຫລົນ. ທັນໃດນັ້ນ ທະຫານມ້າກອງຫນຶ່ງ ໄດ້ຫອບມ້າແລ່ນຜ່ານມາທາງໂລງສົບຂອງ ທ່ານຜູ້ບັນລຸການສູງສຸດຂອງການປະຕິວັດສັງຄົມນິຍົມ, ຜູ້ທຳອິດຢູ່ໃນໂລກດ້ວຍຄວາມໄວ. ບັນດາຂະບວນລົດປືນໃຫຍ່ ຊຶ່ງແກ່ດ້ວຍມ້າກໍໄດ້ແລ່ນຜ່ານເພື່ອຄຳນັບສົບ ເລນິນ ທີ່ ເຄົາ ລົບເຊັ່ນດຽວກັນ.

ບັນດາກັນເກວກຳມະກອນເມື່ອຍ່າງມາຮອດໃກ້ໆແທ່ນແລ້ວ ຕ່າງກໍປົດທຸງໄວ້ອາໄລ ລົງຈຸກັບພື້ນດິນ. ຮອດລື່ໂມງກົງ, ຢູ່ຕາມນະຄອນຫລວງແລະຕົວເມືອງນ້ອຍກໍໄດ້ມີການກະຈາຍສຽງທາງວິທະຍຸ ດ້ວຍຄຳເວົ້າດັ່ງຕໍ່ໄປນີ້:

"ຈົ່ງລຸກຂຶ້ນ, ພວກສະຫາຍ! ສົບຂອງ ອີລີຊ ພວມຖືກນຳເຂົ້າໄວ້ໃນສຸສານ".

ບັນດາເຄື່ອງຈັກເຄື່ອງລາງຕ່າງໆໄດ້ຢຸດສະຫງັກ, ບັນດາລົດໃຫຍ່ກໍໄດ້ຢຸດແລ່ນ. ທຸກຄົນໄດ້ຢືນກົ້ມຫົວຄຳນັບ. ບັນດາກຳມະກອນຢູ່ຕ່າງປະເທດຕ່າງກໍໄດ້ຢຸດທຳງານ, ເພື່ອໄວ້ອາໄລເປັນເວລາຫ້ານາທີເຕັມ. ສຽງໂຫວດຂອງແຕ່ລະໂຮງຈັກໂຮງງານ ໄດ້ດັງກ້ອງກ້ວານຂຶ້ນ. ບັນດາລົດໄຟຢູ່ຕາມແຕ່ລະເສັ້ນທາງ ກໍໄດ້ຢຸດແລ່ນ ແລ້ວປ່ອຍສຽງໂຫວດອອກເປັນສຽງຍາວໆ. ບັນດາເຮືອກຳປັ່ນຂອງສະຫະພາບໂຊວຽດ ຊຶ່ງຢູ່ຕາມແຕ່ລະທ້ອງທະເລ ກໍໄດ້ຢຸດແລ່ນເຊັ່ນກັນ. ດ້ວຍຄຳທີ່ເຕັມໄປດ້ວຍຄວາມເສົ້າສະຫລົດໃຈ ໄດ້ດັງກ້ອງແກ່ຍາວ, ໂດຍບໍ່ມີສິ່ງໃດທີ່ຈະທຸເລົາກັນເທົ່າໄດ້ນັ້ນ, ໄດ້ສົ່ງໄປທົ່ວທົ່ງໃຮ່ທົ່ງນາ, ບ້ານຊ່ອງ, ຕົວເມືອງ ແລະໃນທົ່ວພື້ນແຜ່ນດິນຂອງສະຫະພາບ.

ກະແສລົມຫນາວທີ່ພັດຜ່ານຢູ່ຕາມສະຫນາມແດງ ໄດ້ພັດເຂົ້າໃສ່ແຜ່ນແພໄວ້ອາໄລແລະຜືນທຸງສີແດງ ເຮັດໃຫ້ນ້ຳຕາຢູ່ເທິງໃບຫນ້າກາຍເປັນເມັດນ້ຳແຂງ.

ສຽງປືນຄຳນັບສົບ ໄດ້ດັງກ້ອງຂຶ້ນຫນຶ່ງນັດ.

ໂລງສົບຂອງ ເລນິນ ໄດ້ຖືກນຳໄປວາງໄວ້ຢູ່ໃນສຸສານຈົນຕະຫລອດການ.

ທ້ອງຟ້າເລີ່ມມືດເຂົ້າແລ້ວ ແຕ່ແກວຄົນຍັງຫລັ່ງໄຫລກັນມາຍັງສະຫນາມແດງແລະຍ່ານຜ່ານສຸສານດັ່ງກ່າວຢູ່ຢ່າງບໍ່ຂາດສາຍ.

ຕົ້ນດອກຄາຍກຳລັງແຕກດອກ

ລະດູບານໃຫມ່ໄດ້ມາເຖິງແລ້ວ. ພວກຫມູ່ການ້ອງຫລາຍຕ່າງກໍພາກັນບິນເຈີດມາຍັງຫມູ່ບ້ານ ກອກກີ. ພວກມັນພາກັນບິນກັບຄືນສູ່ບ້ານເກີດເມືອງນອນ, ແລະຊອກເຮັດຮັງ

ດ້ວຍຄວາມກະຕືລືລົ້ນ, ເພື່ອກໍ່ສ້າງຊີວິດໃຫມ່. ສຽງຮ້ອງອັນມ່ວນຊື່ນຂອງພວກມັນນັ້ນໄດ້ເນື່ອງມັນໄປທົ່ວບໍລິເວນເຂດອ້ອມແອ້ມແຫ່ງນັ້ນ. ພວກນົກແຕ້ມປູນກໍໄດ້ພາກັນບິນກັບມາເຊັ່ນດຽວກັນ. ສຽງຮ້ອງອັນບໍ່ເປັນພາສາຂອງນົກພວກນີ້ ໄດ້ດັງກ້ອງລົງມາຕັ້ງແຕ່ເທິງທ້ອງຟ້າສີຄາມອັນກວ້າງໄກ້ພຸ້ນ. ພວກແມງນ້ຳນວກ ທີ່ມີປີກເຫລື້ອມ ກໍໄດ້ພາກັນບິນເວີ້ນຢູ່ເທິງຫນ້າຫນອງນ້ຳນ້ອຍພາຍໃຕ້ແສງແດດ.

ນາເດສະດາ ກົງສະດັງຕົນບນາ ກຳລັງຢືນຢູ່ແຄມຫນອງນ້ຳນ້ອຍດັ່ງກ່າວ. ຢູ່ໃນສວນສາທາລະນະ ທີ່ກອກກິ, ນາເດສະດາ ກົງສະດັງຕົນບນາ ສາມາດ ຈ່ໄດ້ທ່ອທຸກບ່ອນໂດຍສະເພາະແມ່ນທຸກໆເສັ້ນທາງນ້ອຍຊ່ຳ ອະລາດິເມຍ ອີລີຊ ມັກມາຍ່າງຫລິ້ນນັ້ນ.

ແຕ່ຍັງມີແຈ້ນ້ອຍອີກແຈຫນຶ່ງ ທີ່ ອະລາດິເມຍ ອີລີຊ ຍັງບໍ່ທັນໄດ້ເຫັນ, ປະຈຸບັນນີ້ ນາເດສະດາ ກົງສະດັງຕົນບນາ ໄດ້ໄປຍັງບ່ອນນັ້ນ. ແລະໄດ້ນັ່ງລົງເທິງຕົ່ງຍາວ. ນາເດສະດາ ກົງສະດັງຕົນບນາ ກຳລັງຄິດ, ເພິ່ນໄດ້ເອົາຝ່າມືທັງສອງເບື້ອງທີ່ຫົດຫູ່ແລະມີເສັ້ນເອັນຂຶ້ນເປັນເສັ້ນສາຍນັ້ນ, ວາງໄວ້ເທິງຫົວເຂົ່າ.

ຢູ່ເທ່ານີ້, ຕົ້ນດອກຄາຍໄດ້ແຕກດອກອອກມາແລ້ວ. ຕົ້ນດອກຄາຍທີ່ມີລຳຕົ້ນຈ່ອຍຮຽວ ແລະອ່ອນນ້ອຍ, ມີງ່າອ່ອນໆເປັນສີແດງເຂັ້ມ ຄ້າຍດັ່ງຖືກທາດ້ວຍສີ.

ຕົ້ນດອກຫມາກຄາຍ ໄດ້ອອກດອກເປັນຄັ້ງທຳອິດ, ອະລາດິເມຍ ອີລີຊ ບໍ່ທັນໄດ້ມີໂອກາດແນມເຫັນສີສັນຂອງມັນຊ່ຳ. ຍາມລະດູໃບໄມ້ຫລົ່ນປີກ່ອນນີ້, ບັນດາກຳມະກອນຈາກໂຮງງານ ກະລູໂຄບ ໄດ້ມາຢາມ ອະລາດິເມຍ ອີລີຊ ທີ່ຫມູ່ບ້ານ ກອກກິ ຄະນະຫນຶ່ງ. ພວກເຂົາໄດ້ນຳເອົາຈົດຫມາຍ ແລະ ຂອງຂວັນມາມອບໃຫ້. ນັ້ນຄື ເບ້ຍຕົ້ນດອກຄາຍຈາກສວນຂອງໂຮງງານນັ້ນເອງ.

ອະລາດິເມຍ ອີລີຊ ໄດ້ຕ້ອນຮັບຄະນະກຳມະກອນດ້ວຍຄວາມຊື່ນຊົມ! ດວງຕາທັງຄູ່ເປັນປະກາຍດ້ວຍຄວາມພໍອົກພໍໃຈ...

ກ່ອນຈາກໄປ, ກຳມະກອນເກົ່າຜູ້ຫນຶ່ງໄດ້ເວົ້າວ່າ:

-ອະລາດິເມຍ ອີລີຊ, ຂ້ອຍແມ່ນກຳມະກອນຕີເຫລັກ. ພວກຂ້ອຍຈະຕີທຸກສິ່ງທຸກ

ຢ່າງ ຊ່ຳແມ່ນສະຫາຍເປັນຜູ້ວາງແຜນການອອກນັ້ນ.

ຈາກນັ້ນ ລາວກໍກອດຈູບ ອະລາດີເມຍ ອີລີຊ ດ້ວຍຄວາມຮັກແພງທີ່ສຸດ. ທັງສອງຢືນກອດກັນຢ່າງແໜ້ນສະໜິດຢູ່ດາວໜຶ່ງ. ໂດຍຜ່ານນາຍຊ່າງຕີເຫລັກເກົ່າຜູ້ນີ້, ຄ້າຍຄືກັບວ່າ ອະລາດີເມຍ ອີລີຊ ໄດ້ສົ່ງພອນອັນອົບອຸ່ນທີ່ສຸດມາຍັງບັນດາກຳມະກອນທັງປວງ ແລະບັນດາກຳມະກອນກໍໄດ້ໃຫ້ຄຳສັນຍາກັບ ເລນິນ.

"ພວກເຮົາ ຂໍໃຫ້ຄຳຫມັ້ນສັນຍາຕໍ່ ອີລີຊ, ອີລີຊ ທີ່ຮັກຂອງພວກເຮົາເອີຍ!" - ນາ ເດສະດາ ກົງສະຕັງຕິນິບນາ ໄດ້ຫວນຄິດເຖິງຄຳສາບານ ຂອງບັນດາກຳມະກອນເຫລົ່ານັ້ນ.

ພວກແມ່ງເຜົ້ງ ໄດ້ພາກັນບິນໄຕ່ຕອມຢູ່ຕາມຕົ້ນດອກຄາຍ...

ນັບຕັ້ງແຕ່ສະໄຫມນັ້ນເປັນຕົ້ນມາ, ລະດູບານໃຫມ່ ໄດ້ຜ່ານພົ້ນໄປຫລາຍລະດູແລ້ວ. ຕົ້ນດອກຄາຍຢູ່ໃນສວນ ກອກກີ ກໍໄດ້ໃຫຍ່ສູງຂຶ້ນແລ້ວ.

ລັດ ຊ່ຳແມ່ນ ເລນິນ ເປັນຜູ້ກໍ່ຕັ້ງກໍໄດ້ເຕີບໃຫຍ່ຂະຫຍາຍໂຕຂຶ້ນມາເຊັ່ນກັນ. ພັກ ຊ່ຳແມ່ນ ເລນິນເປັນຜູ້ສ້າງຕັ້ງກໍໄດ້ມີຄວາມເຂັ້ມແຂງແຮງກ້າຂຶ້ນຢູ່ໃນທ່າມກາງວັນເດືອນປີ ທີ່ຫຍຸ້ງຍາກລຳບາກ ແລະຫນັກຫນ່ວງນັ້ນຄືກັນ. ປະເທດຊາດ ຕ້ອງໄດ້ຜ່ານຜ່າການທົດສອບເຫລົ່ານັ້ນ. ມາບັດນີ້ສະຫະພາບ ໂຊວຽດ ໄດ້ມີຄວາມເຂັ້ມແຂງແຮງກ້າແລະສະຫງ່າງາມຂຶ້ນຕື່ມ. "ດອກໄຟຟ້າຂອງ ອີລີຊ" ກຳລັງເຍືອງແສງສະຫວ່າງອັນຮຸ່ງເຈ້ຍຢູ່ຕາມເຂດໄກສຸດຂອງປະເທດ. ຄຽງຄູ່ກັນນັ້ນ ກໍໄດ້ມີໂຮງງານໄຟຟ້າ, ໂຮງຈັກໂຮງງານ, ເດີ່ນບິນ ອາວະກາດ, ສະຫະກອນກະເສດ, ນິຄົມລັດວິສະຫະກິດ, ຕົວເມືອງໃຫມ່ໆ, ໂຮງຮຽນ, ສະໂມສອນ, ໂຮງມະໂຫລະສົບແລະອື່ນໆເກີດຂຶ້ນ.

ສົມມຸດວ່າ ອະລາດີເມຍ ອີລີຊ ຫາກມີໂອກາດ ໄດ້ແນມເຫັນສິ່ງເຫລົ່ານັ້ນ!

ເລນິນ ກໍຄົງຈະເວົ້າວ່າ:

"ບໍ່ແມ່ນວ່າຈະຢຸດຕິທຸກສິ່ງຢ່າງໄວ້ພຽງເທົ່ານີ້. ເປົ້າຫມາຍຂອງພວກເຮົານັ້ນຄືລັດທິ ຄອມມຸຍນິດ".

ລັດທິຄອມມຸຍນິດ ຄືຄວາມສະເຫມີພາບແລະສັດຈະທໍາ, ຄືການອອກແຮງງານຮວມ ຫມູ່ເພື່ອຜົນປະໂຫຍດຂອງຫມິດທຸກຄົນ, ຄືການກ້າວເດີນໄປຫນ້າດ້ວຍຄວາມອົງອາດກ້າ ຫານ, ເພື່ອຊອກຮູ້ສິ່ງໃຫມ່ໆເລື້ອຍໆ. ນັ້ນແມ່ນ ຄວາມໃຝ່ຝັນຂອງພວກເຮົາ ເພື່ອກ້າວ ໄປສູ່ຄວາມຢູ່ດີກິນດີ, ມີຊີວິດຊັນຈິບງາມ, ແລະສູງສົ່ງ.

ເລນິນ ໄດ້ຊີ້ບອກເສັ້ນທາງ ເພື່ອໃຫ້ພວກເຮົາກ້າວໄປເທິງທໍ່ນັ້ນ.



ສາລະບານ

ຄຳນຳ 3

ຄວາມຊຶ່ນຊົມ. 7

ໃນຄ່ຳຄືນລະດູຫນາວ. 9

ລະດູຮ້ອນ 13

ເທິງເຮືອກຳປັ່ນ 17

ນກຮ້ອງນມດທະຍມ 20

ຄວາມເປັນຫ່ວງເປັນໃຍ 23

ພໍ່ 30

ວັນທີ່ຫນ້ງເດືອນສາມ. 33

ການອຳລາຈາກ ຊີມບນກ! 38

ກອງປະຊຸມທີ່ ກາຊານ. 41

ເສັ້ນທາງເລືອກຕະຫລອດການ. 44

ທີ່ຊານເມືອງ ເນບສະກີ 48

ປັ໊ມຫົວທຳອິດ. 52

ໃບປືວສີ່ແຜ່ນ 53

"ມີໂນກາ" 55

ພາລະກິດທີ່ບໍ່ອາດຈະດັບສູນ. 59

ຫ້ອງຂ້ງເບ ເດມ 62

ດະກຸງສີຂຸງ 66
"ວະລາດີເມຍ ອີວີຊ ຊ່ວຍເຮົາແດ່" 7o
ເຫດເກີດຂຶ້ນໃນເດືອນຫ້າ 74
ຂ້າງຕຸງຄົນປ່ວຍ ວາເຍແອບ. 79
ການປ່ອຍໂຕໃຫ້ເປັນອິດສະຫລະ 82
ຈາກຫມັດໄຟກາຍເປັນແປວໄຟ 85
ເລນິນ 9o
ພັກ ໂບນເຊວິກ 99
ການປະຫັດປະຫານກັນ 1o4
ແຜ່ນທຸງສີແດງພວມປິວສະບັດຢູ່ເທິງທະເລ 11o
ການພົບປະກັນໂດຍທາງລັບ 12o
ຫລົບຫນີໄປຢູ່ຕ່າງປະເທດອີກ 127
ພົບກັນທີ່ ສະໂຕກໂຮມ 133
ຫມູ່ບ້ານ ລີງຈຸຍໂມ 138
ດ້ານສົງຄາມ. 143
ຄືນສູ່ປະເທດຊາດຕະຫລອດການ. 147
ຄຸ້ມ ຣາສະດັນນາຍາ 154
ມອບອຳນາດທັງຫມົດໃຫ້ແກ່ສະພາໂຊວຽດ 158
ຫ້ອງເຮັດວຽກຢູ່ໃນປ່າ 164
ນາຍຊ່າງດັ່ງເດີມຢູ່ຫົວລິດໄຟຫມາຍເລກ ๔ ແລະ ๕ 169
ບ່ອນລີ້ຊ່ອນທີ່ຫນ້າງຶດ 176
ບ່ອນເຄື່ອນໄຫວປິດລັບອີກແຫ່ງຫນຶ່ງ 182
ກ່ອນການປະຕິວັດ 186
ທີ່ ສະໂມນນີ 19o
ເລີ່ມຕົ້ນ 195

ຍຶດວ້ຳລະດູຫນາວ 199
ດຳລັດທຳອິດ 206
ຫ້ອງຂາວ 209
ພວກເຂົາເຈົ້າມີຊີວິດຢູ່ຄືແນວນັ້ນ. 214
ບໍ່ຮູ້ຈັກອາຣມ 219
ນິດຮງນອັນຫນັກຫນ່ວງ. 223
ມິດສະກູ, ມິດສະກູ... 228
ບາດກ້າວເດີນຂອງການປະຕິວັດ 234
ລົງສູ່ຊົນນະບົດ 236
ການຮຸກຮານ 241
ລູກປືນຕ່ຳຊ້ຳສາມລູກ. 247
ຊຸມປີທີ່ຫຍຸ້ງຍາກ 253
ເຫດເກີດຂຶ້ນທີ່ ໂຊໂກນນິກິ. 258
ການສູນເສຍທີ່ເຈັບແສບ. 263
"ຂ້ອຍແມ່ນລູກຫລານຂອງປະຊາຊົນຜູ້ອອກແຮງງານ..." 268
ຊັບສົມບັດຂອງຊາດ 272
"ວັນມ່ວນຊື່ນເດືອນພຶດສະພາໄດ້ມາເຖິງແລ້ວ..." 276
ບັນດາສະມາຊິກຊາວຫນຸ່ມ ຄອມມຸຍນິດ 282
ຄວາມຫວັງແລະຄວາມເປັນຈິງ 288
ປີ ໑໙໘໑ ທີ່ໂຫດຫ້ຽມ 293
ແນບ ແມ່ນຫຍັງ? 299
ເມື່ອສຽງເພງຈາກນ້ຳຕ້ານ 302
ໂຄມໄຟທະເລ 309
ຄືນຕ້ອນຮັບປີໃຫມ່ 313
ຕໍ່ສູ້ຢ່າງບໍ່ຢຸດຢັ້ງ 317

ລະດູໃບໄມ້ຫລົ່ນປີ ໑໙໘໕ 321
ຮັກຊີວິດ 326
ລຸກຂຶ້ນ, ພວກສະຫາຍເອີຍ! 33o
ດົນດອກຄາຍກຳລັງແຕກດອກ 335

ເກີ່ງບັນດາທ່ານຜູ້ອ່ານ

ສຳນັກພິມ "ຣາດຸກາ" ມີຈຸດປະສົງຢາກຮູ້ຄວາມຄິດເຫັນຂອງທ່ານ ກ່ຽວກັບປຶ້ມຫົວນີ້, ກ່ຽວກັບການແປ, ການຮຽບຮຽງ ແລະ ຕ້ອງການຢາກຮູ້ຂໍ້ສະເໜີແນະ ຂອງບັນດາຜູ້ອ່ານ ກ່ຽວກັບການພິມຈຳໜ່າຍໃນອະນາຄົດ.

ຂໍໃຫ້ສົ່ງຄວາມຄິດເຫັນຂອງທ່ານໄປທີ່: Raduga Publishers. 17, Zubovsky Boulevard, Moscow, USSR, 119859

Мария Прилежаева. Жизнь Ленина.
на лаосск. яз.
Перевод сделан по книге: М. Прилежаева.
Жизнь Ленина.
М. «Детская литература», 1970 г.
Редактор — В. А. Близненкова
Для среднего и старшего школьного возраста.

ИБ № 1765 Редактор русского текста *В. А. Близненкова*. Контрольный редактор *[illegible]. Нарижный*. Художник *О. Г. Верейский*. Художественный редактор *А. [illegible]. Алтунин*. Технический редактор *Н. Н. Должикова*. Сдано в набор 18.09.85. Подписано в печать 18.11.86. Формат 84x108|16. Бумага офсетная. Гарнитура лаосская. Печать офсет. Условн. печ. л. 36,12. Усл. кр.-от. 217,98. Уч.-изд. л. 24,65. Тираж 20280 экз. Заказ № 1829. Цена 3 р. 36 к. Изд. № 1630. Издательство „Радуга" Государственного комитета СССР по делам издательств, полиграфии и книжной торговли. Москва, 119859, Зубовский бульвар, 17. Отпечатано на Ленинградской фабрике офсетной печати № 1 Союзполиграфпрома при Государственном комитете СССР по делам издательств, полиграфии и книжной торговли. Ленинград, 197101, ул.Мира, 3.